ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກອງທຶນຫລຸດຜ່ອນຄວາມທຸກຍາກ

ໄລຍະທີ່ II

# ປື້ມຄູ່ມືການຈັດຕັ້ງປະຕິບັດໂຄງການ

ມີນາ 2013

# ສາລະບານ


ລາຍການຂອງຊື່ຫຍໍ້ ........ 7

1 ຄໍານໍາ ........ 10

2 ບົດສະເໜີ ແລະ ສະຖານະການທົ່ວໄປ ........ 11

**2.1 ຄວາມທຸກຍາກໃນ ສປປ ລາວ ........ 11**

2.1.1 ຄວາມເປັນມາ ຂອງ ທລຍ ໃນ ສປປ ລາວ ........ 12

2.1.2 ໄລຍະເວລາ, ຂອບເຂດພູມີສາດ ແລະ ດ້ານການເງິນ ຂອງ ທລຍ II ........ 13

2.1.3 ເປົ້າໝາຍຂອງໂຄງການ ........ 14

**2.2 ຫລັກການ ຂອງ ທລຍ ........ 15**

ຫລັກການ 1: ຄວາມງ່າຍດາຍ ........ 15

ຫລັກການ 2: ການມີສ່ວນຮ່ວມຂອງຊຸມຊົນ ແລະ ຄວາມຍືນຍົງ ........ 16

ຫລັກການ 3: ຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບ ........ 17

ຫລັກການ 4: ການລົງທຶນທີ່ຄຸ້ມຄ່າ ........ 17

ຫລັກການ 5: ການເຂົ້າຮ່ວມຈາກທຸກພາກສ່ວນໃນຊຸມຊົນ ແລະ ຄວາມສະເໝີພາບຍິງ-ຊາຍ ........ 18

ຫລັກການ 6: ຢູ່ຄຽງຂ້າງຜູ້ທຸກຍາກ ........ 19

3 ການຈັດຕັ້ງ ແລະ ໂຄງປະກອບການຈັດຕັ້ງແຕ່ລະຂັ້ນ ........ 21

**3.1 ການຈັດຕັ້ງຂອງກອງທຶນຫລຸດຜ່ອນຄວາມທຸກຍາກ ........ 21**

3.1.1 ສະພາບໍລິຫານ ທລຍ ........ 21

3.1.2 ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ ........ 22

**3.2 ສາຍພົວພັນຫລັກ ທາງດ້ານຄວາມຮັບຜິດຊອບ ........ 26**

**3.3 ກອງປະຊຸມປະຈໍາປີກັບຜູ້ໃຫ້ທຶນ ........ 27**

**3.4 ການປະສານງານກັບລັດຖະບານ ສປປ ລາວ ........ 28**

**3.5 ການກະກຽມກວດກາ ແລະ ປະສານງານ ກັບ ຄພທສ ........ 28**

**3.6 ການກະກຽມການປະສານງານກັບກະຊວງທີ່ກ່ຽວຂ້ອງ ........ 30**

3.3.1 ສະພາບໍລິຫານ ທລຍ ........ 31

**3.7 ລະດັບ ທລຍ ສູນກາງ ........ 31**

**3.8 ທລຍ ລະດັບແຂວງ ........ 33**

**3.9 ຫ້ອງການ ທລຍ ຂັ້ນເມືອງ ........ 33**

**3.10 ຜູ້ປະສານງານກຸ່ມບ້ານ ທລຍ ........ 34**

4 ການຄັດເລືອກເປົ້າໝາຍໂຄງການ, ການຈັດສັນງົບປະມານ ແລະ ການຄັດເລືອກໂຄງການຍ່ອຍ ........ 37

**4.1 ຫຼັກການຄັດເລືອກເປົ້າໝາຍໂຄງການ ........ 37**

4.1.1 ການຄັດເລືອກເຂດເປົ້າໝາຍສໍາລັບ ທລຍ ໄລຍະ II ........ 37

**4.2 ການວາງແຜນພັດທະນາກຸ່ມບ້ານ ແລະ ແຜນການລົງທຶນຂອງ ທລຍ ........ 39**

4.2.1 ການຈັດສັນງົບປະມານ ... 39
4.2.2 ຄໍາແນະນໍາໃນການຈັດສັນງົບປະມານ ... 41

**4.3 ທຶນປະກອບສ່ວນຂອງຊຸມຊົນ ແລະ ແຫຼ່ງທຶນອື່ນໆ ... 42**

**4.4 ປະພດ ແລະ ຂະໜາດຂອງໂຄງການຍ່ອຍ ... 43**

**4.5 ຍຸດທະສາດເພື່ອຮັບມືກັບໄພພິບັດ ແລະ ການຫລຸດຜ່ອນໄພພິບັດທາງທໍາມະຊາດ ... 45**

**4.6 ກິດຈະກໍາຝຶກອົບຮົມທີ່ຕິດພັນກັບໂຄງການຍ່ອຍ. ... 46**

**4.7 ປະເພດໂຄງການ/ກິດຈະກໍາທີ່ ທລຍ ບໍ່ໃຫ້ການສະໜັບສະໜຸນ (“ລາຍການທີ່ບໍ່ໃຫ້ການສະໜັບສະໜູນ”) ... 49**

5 ຮອບວຽນຈັດຕັ້ງປະຕິບັດໂຄງການ ... 51

**5.1 ການກະກຽມໂຄງການ ... 53**
5.1.1 ຂັ້ນຕອນການແນະນໍາໂຄງການ ... 53

**5.2 ກອງປະຊຸມແນະນໍາໂຄງການຂັ້ນແຂວງ ... 54**

**5.3 ກອງປະຊຸມແນະນໍາໂຄງການຂັ້ນເມືອງ ແລະ ກຸ່ມບ້ານ ... 56**

**5.4 ການສ້າງແຜນການ ... 58**
5.4.1 ການຄັດເລືອກຜູ້ປະສານງານກຸ່ມບ້ານ ... 58
5.4.2 ຝຶກອົບຮົມຜູ້ປະສານງານກຸ່ມບ້ານ ... 61
5.4.3 ກອງປະຊຸມແນະນ◌ໍາໂຄງການຂັ້ນບ້ານ ... 62

**5.5 ກອງປະຊຸມວາງແຜນພັດທະນາບ້ານ ... 65**
5.5.1 ຝຶກອົບຮົມໃຫ້ແກ່ຕົວແທນບ້ານ ... 68

**5.6 ກອງປະຊຸມວາງແຜນພັດທະນາກຸ່ມບ້ານ ... 69**
5.6.1 ພາກສະເໜີ ກ່ຽວກັບກອງປະຊຸມວາງແຜນພັດທະນາກຸ່ມບ້ານ ... 69
5.6.2 ກອງປະຊຸມວາງແຜນພັດທະນາກຸ່ມບ້ານ ... 69
5.6.3 ການຮັບຮອງຜູ້ປະສານງານກຸ່ມບ້ານ ... 75

**5.7 ກອງປະຊຸມປະສານງານ ການວາງແຜນຂັ້ນເມືອງ ... 75**

**5.8 ກອງປະຊຸມລາຍງານຄືນ ແລະ ຮັບຮອງເອົາແຜນການພັດທະນາກຸ່ມບ້ານ ... 78**

**5.9 ສໍາຫລວດ ແລະ ອອກແບບໂຄງການຍ່ອຍ ... 80**

**5.10 ກອງປະຊຸມຮັບຮອງການອອກແບບຂັ້ນບ້ານ/ກຸ່ມບ້ານ & ສ້າງຕັ້ງທີມງານຂັ້ນກຸ່ມບ້ານ ... 83**

**5.11 ການຄັດເລືອກທີມງານຂັ້ນກຸ່ມບ້ານ ... 84**

6 ໄລຍະການຈັດຕັ້ງປະຕິບັດ ... 86

**6.1 ການຝຶກອົບຮົມທີມງານການເງິນບ້ານ ແລະ ຜູ້ປະສານງານຂັ້ນກຸ່ມບ້ານ/ບ້ານ ... 86**

**6.2 ກອງປະຊຸມເລີ່ມຕົ້ນໂຄງການຍ່ອຍ ... 88**

**6.3 ຝຶກອົບຮົມທີມງານຈັດຕັ້ງປະຕິບັດ ແລະ ບໍາລຸງຮັກສາຂັ້ນບ້ານ ... 90**

**6.4 ກອງປະຊຸມປະສານງານໂຄງການຍ່ອຍ ... 91**

**6.5 ກອງປະຊຸມສະຫຼູບບັນຊີ/ການເງິນຂັ້ນກຸ່ມບ້ານ/ບ້ານ ... 93**

6.6 ການຢ້ຽມແລກປ່ຽນບົດຮຽນລະຫ່ວາງກຸ່ມບ້ານ/ບ້ານ ..... 95

6.7 ທີມງານຄວບຄຸມຄຸນນະພາບໂຄງການຍ່ອຍໃນເວລາກວກກາພາກສະໜາມ ..... 96

6.8 ຝຶກອົບຮົມການຄຸ້ມຄອງ ແລະ ບຳລຸງຮັກສາ ..... 97

6.8.1 ກອງປະຊຸມສະຫຼູບການເງິນກຸ່ມບ້ານ/ບ້ານຄັ້ງສຸດທ້າຍ ..... 98

6.9 ບັນດາກິດຈະກຳຕ້ອງໄດ້ປະຕິບັດພາຍຫຼັງສຳເລັດການກໍ່ສ້າງໂຄງການຍ່ອຍ ..... 101

6.9.1 ກອງປະຊຸມປະເມີນຜົນຂັ້ນເມືອງ ..... 101

6.9.2 ຮອບວຽນໂຄງການຍ່ອຍ ໃນປີຕໍ່ໆໄປ (ປີທີ 2, 3 ແລະ 4) ..... 103

6.10 ມາດຕະການລົງໂທດ ໃນກໍລະນີຜິດຕໍ່ລະບຽບ ..... 104

7 ຝຶກອົບຮົມ ແລະ ການສ້າງຄວາມເຂັ້ມແຂງ ..... 106

ການສ້ງຄວາມເຂັ້ມແຂງ ..... 106

7.1 ຫລັກການໃນການສ້າງຄວາມເຂັ້ມແຂງ ..... 106

7.2 ກິດຈະກຳສ້າງຄວາມເຂັ້ມແຂງຕ່າງໆ: ..... 108

7.3 ກິດຈະກຳຝຶກອົບຮົມຕ່າງໆ ..... 113

7.3.1 ຝຶກອົບຮົມຄູຝຶກຫລັກແຫລ່ງ (MOT) ..... 113

7.3.2 ຝຶກອົບຮົມ ການເປັນຄູຝຶກ (TOT) ..... 114

7.3.3 ການຝຶກອົບຮົມສະເພາະ ໃຫ້ແກ່ພະນັກງານຕິດຕາມ ແລະ ປະເມີນຜົນຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ກ່ຽວກັບວຽກງານຕິດຕາມ ແລະ ປະເມີນຜົນ ..... 115

7.3.4 ການຝຶກອົບຮົມໃຫ້ແກ່ທີມງານຂັ້ນກຸ່ມບ້ານ ..... 115

7.3.5 ການຝຶກອົບຮົມຢູ່ຂັ້ນບ້ານ ..... 116

7.3.6 ກອງປະຊຸມ ແລະ ຝຶກອົບຮົມປະຈຳເດືອນ ໃຫ້ແກ່ຜູ້ປະສານງານກຸ່ມບ້ານ ..... 116

7.4 ການຝຶກອົບຮົມອື່ນໆ ..... 117

8 ການຕິດຕາມ ແລະ ປະເມີນຜົນ (M&E) ..... 119

8.1 ຈຸດປະສົງລວມຂອງ ລະບົບຕິດຕາມ ແລະ ປະເມີນຜົນ ..... 119

8.2 ຕົວຊີ້ວັດການຈັດຕັ້ງປະຕິບັດ ..... 120

8.3 ການຕິດຕາມ ແລະ ລະບົບການລາຍງານ ..... 126

8.3.1 ການຕິດຕາມ ..... 126

8.4 ການປະເມີນຜົນ ແລະ ກໍລະນີສຶກສາຕ່າງໆ ..... 130

9 ການຄຸ້ມຄອງບໍລິຫານການເງິນ ..... 134

9.1 ໂຄງຮ່າງການຈັດຕັ້ງສຳລັບພະແນກບໍລິຫານການເງິນ ..... 134

9.2 ງົບປະມານ ..... 134

9.3 ການໄຫລວຽນຂອງທຶນ ..... 134

9.4 ລະບຽບການເບີກຈ່າຍ ..... 135

9.5 ການຈັດວາງເອກກະສານ, ບັນທຶກ ແລະ ເອກກະສານການເບີກຈ່າຍ: ..... 136

9.6 ການລາຍງານ ..... 137

9.7 ການກວດສອບ ..... 138

9.8 ການກວດສອບພາຍໃນ: ..... 139

10 ການປະມູນຈັດຊື້ ແລະ ການເຊັນສັນຍາ ໂຄງການຍ່ອຍ ..... 140

10.1 ຫລັກການທີ່ສຳຄັນຂອງການປະມູນຈັດຊື້ ..... 140

10.2 ຄວາມຮັບຜິດຊອບ ກ່ຽວກັບວຽກງານຈັດຊື້-ຈັດຈ້າງ ຂອງ ທລຍ ..... 141

10.3 ໜ້າທີ່ຮັບຜິດຊອບ ຂອງທີມງານຊຸມຊົນ/ທີມງານຈັດຕັ້ງປະຕິບັດຂັ້ນບ້ານ (ທີມງານກຸ່ມບ້ານ, ຖ້າມີ), ..... 143

10.4 ການຝຶກອົບຮົມ ກ່ຽວກັບການຈັດຊື້-ຈັດຈ້າງ ..... 147

10.5 ປະເພດຂອງການຈັດຊື້-ຈັດຈ້າງ ..... 147

10.6 ວິທີການຈັດຊື້-ຈັດຈ້າງ ..... 148

10.7 ໃຜສາມາດເປັນຜູ້ຮັບເໝົາ ຫລື ຜູ້ສະໜອງສິນຄ້າ ຫລື ຊ່າງຊານ? ..... 151

ກ). ໃຜສາມາດເປັນຜູ້ຮັບເໝົາ? ..... 151

ຂ). ໃຜສາມາດເປັນຜູ້ສະໜອງສິນຄ້າ? ..... 151

ຄ). ໃຜສາມາດເປັນຊ່ຽວຊານທີ່ປຶກສາ? ..... 151

10.8 ຂັ້ນຕອນການດຳເນີນການປະມູນຈັດຊື້ ..... 152

10.9 ແຜນຈັດຊື້ໂຄງການຍ່ອຍ ແລະ ກວດກາຄືນ ..... 155

10.10 ການກະກຽມເອກະສານປະມູນ ..... 156

10.11 ບົດລາຍງານການປະເມີນຜົນການປະມູນ ..... 162

10.12 ການເຊັນສັນຍາ ..... 162

10.13 ການກວດກາ ແລະ ການຄຸ້ມຄອງສັນຍາ ..... 163

10.14 ການເກັບມ້ຽນເອກະສານປະມູນ ..... 163

11 ການປ້ອງກັນດ້ານສັງຄົມ ແລະ ສິ່ງແວດລ້ອມ ..... 165

11.1 ຈຸດປະສົງ ແລະ ກອບທາງກົດໝາຍ ..... 165

11.2 ກອບການຄຸ້ມຄອງດ້ານສັງຄົມ ແລະ ສິ່ງແວດລ້ອມ (ESMF) ..... 165

11.3 ກອບການຄຸ້ມຄອງສະພາບແວດລ້ອມ (EMF) ..... 166

11.4 ກອບນະໂຍບາຍ ກ່ຽວກັບການທົດແທນຄືນ ແລະ ການຍົກຍ້າຍຖິ່ນຖານ (CRPF) ..... 170

11.5 ກອບການຍົກຍ້າຍຖິ່ນຖານ ແລະ ຈັດຫາທີ່ດິນ ຫລື ສັບສິນ (FRALA) ..... 171

11.6 ຫລັກການໃນການປຶກສາຫາລື. ..... 173

11.7 ການກະກຽມເຮັດບົດລາຍງານ ກ່ຽວກັບການຈັດຫາທີ່ດິນ ແລະ ການຍົກຍ້າຍຈັດສັນ ..... 174

11.8 ສິດທິໃນການສະເໜີຄຳຄິດເຫັນ ແລະ ປະຕິບັດຕາມຂັ້ນຕອນກົດໝາຍ ..... 175

11.9 ລະບຽບການກວດສອບ ..... 175

11.10 ການກັ່ນຕອງທາງດ້ານສັງຄົມ ........ 175

11.11 ການທົດແທນຄືນ ແລະ ການກຳນົດປະເພດຜົນກະທົບ ........ 176

11.12 ການຕິດຕາມ ແລະ ເປີດເຜີຍຂໍ້ມູນຂ່າວສານ ........ 176

11.13 ກອບການພັດທະນາຊົນເຜົ່າທີ່ດ້ອຍໂອກາດ ........ 179

11.14 ກອບນະໂຍບາຍສຳລັບການດຳລົງຊີວິດແລະກິດຈະກຳເພື່ອປັບປຸງການເປັນຢູ່ໃຫ້ດີຂື້ນ ........ 180

12 ກົນໄກສະແດງຄຳຄິດເຫັນ ແລະ ແກ້ໄຂບັນຫາ (ກສກ) ........ 182

12.1 ຫລັກການຂອງລະບົບ ........ 182

12.2 ແຫລ່ງຂໍ້ມູນຂອງກົນໄກສະແດງຄຳຄິດເຫັນ ........ 183

12.3 ຂອງການສະແດງຄຳຄິດເຫັນ ........ 183

12.4 ຊ່ອງທາງຂອງການສະແດງຄຳຄິດເຫັນ ........ 184

12.5 ການຈັດລຳດັບ ແລະ ການປະເມີນຜົນ ........ 186

12.6 ການຕອບຮັບຄຳຄິດເຫັນ ແລະ ການຕິດຕາມ ........ 188

12.1 ການຮັບຮອງ ແລະ ການປະຕິບັດ ........ 191

12.1 ຕິດຕາມ ແລະ ການປະເມີນຜົນ ........ 193

12.1 ການຕອບສະໜອງ ........ 194

12.2 ໂຄງຮ່າງການຈັດຕັ້ງ ........ 194

# ລາຍການຂອງຊື່ຫຍໍ້

| | |
|---|---|
| AusAID | ອົງການພັດທະນາສາກົນຂອງອົດສະຕຣາລີ |
| BCC | ການສື່ສານການປ່ຽນແປງພຶດຕິກໍາ |
| BoL | ທະນາຄານແຫ່ງ ສປປ ລາວ |
| BoQ | ລາຍການໜ້າວຽກ |
| CD | ການພັດທະນາຊຸມຊົນ |
| CDD | ການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ |
| CDE | ສູນພັດທະນາ ແລະ ສິ່ງແວດລ້ອມ |
| CP | ສ່ວນຮ່ວມຂອງຊຸມຊົນ |
| CRC | ຄະນະກໍາມະການໄກ່ເກ່ຍຄໍາຟ້ອງຮ້ອງ |
| CRPF | ໂຄງຮ່າງນະໂຍບາຍການຍົກຍ້າຍຈັດສັນ ແລະ ຄ່າທົດແທນ |
| CTPC | ຄົມມະນາຄົມ, ຂົນສົ່ງ, ໄປສະນີ ແລະ ກໍ່ສ້າງ |
| DDF | ກອງທຶນພັດທະນາເມືອງ |
| DDM | ກອງປະຊຸມຕັດສິນຂັ້ນເມືອງ |
| DEF | ກົມການເງິນພາຍນອກ |
| DoS | ກົມສະຖິຕິ |
| DPI | ກົມແຜນການ ແລະ ການລົງທຶນ |
| DPM | ກອງປະຊຸມຈັດລຽງບູລິມາສິດຂັ້ນເມືອງ |
| DRM | ການຄຸ້ມຄອງຄວາມສ່ຽງໄພພິບັດ |
| EA | ການປະເມີນຜົນດ້ານສິ່ງແວດລ້ອມ |
| EC | ຄະນະກໍາມະການປະເມີນຜົນ |
| ECOP | ກົດລະບຽບການປະຕິບັດດ້ານສິ່ງແວດລ້ອມ |
| ED | ຜູ້ອໍານວຍການບໍລິຫານ |
| EDL | ລັດວິສະຫະກິດໄຟຟ້າລາວ |
| EG | ຊົນເຜົ່າ |
| EGPF | ໂຄງຮ່າງນະໂຍບາຍສໍາລັບຊົນເຜົ່າ |
| ESMF | ໂຄງຮ່າງການຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ |
| EOI | ການສະແດງຄວາມສົນໃຈ |
| FA | ການເງິນ ແລະ ບໍລິຫານ |
| FCRM | ກົນໄກການແກ້ໄຂດ້ານຄໍາຄິດຄໍາເຫັນ ແລະ ຂໍ້ຂັດແຍ້ງ |
| FRM | ກົນໄກການແກ້ໄຂດ້ານຄໍາຄິດຄໍາເຫັນ |
| FMR | ບົດລາຍງານຕິດຕາມກວດກາດ້ານການເງິນ |
| JSDF | ກອງທຶນພັດທະນາສັງຄົມຂອງຍີ່ປຸ່ນ |
| GDP | ລວມຍອດຜະລິດຕະພັນພາຍໃນ |

| | |
|---|---|
| GFDRR | ກອງທຶນສາກົນເພື່ອການຟື້ນຟູຄວາມສ່ຽງດ້ານໄພພິບັດ |
| GoL | ລັດຖະບານ ແຫ່ງ ສປປ ລາວ |
| IDA | ສະມາຄົມພັດທະນາສາກົນ (ທະນາຄານໂລກ) |
| IEC | ຂ່າວສານ, ການສຶກສາ ແລະ ການສື່ສານ |
| IP | ຄົນທ້ອງຖິ່ນ |
| IPDP | ແຜນການພັດທະນາຄົນທ້ອງຖິ່ນ |
| KB | ກຸ່ມບ້ານ/ກຸ່ມບ້ານພັດທະນາ |
| Lao PDR | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| LDC | ປະເທດດ້ອຍພັດທະນາ |
| LECS | ການສຳຫລວດດ້ານການໃຊ້ຈ່າຍ ແລະ ການບໍລິໂພກຂອງລາວ |
| LONG | ໂອກາດດ້ານການຫາລ້ຽງຊີບ ແລະ ຜົນປະໂຫຍດທາງດ້ານໂພຊະນາການ |
| LUFSIP | ໂຄງການປັບປຸງຄ້ຳປະກັນສະບຽງອາຫານ ຢູ່ເຂດເນີນສູງ ຂອງ ສປປ ລາວ |
| LWU | ສະຫະພັນແມ່ຍິງລາວ |
| M&E | ໜ່ວຍງານຕິດຕາມກວດກາ ແລະ ປະເມີນຜົນ |
| MAF | ກະຊວງກະສິກຳແລະປ່າໄມ້ |
| MBO | ອົງການຈັດຕັ້ງມະຫາຊົນ |
| MIS | ລະບົບຄວບຄຸມຂໍ້ມູນຂ່າວສານ |
| MOF | ກະຊວງການເງິນ |
| MPI | ກະຊວງແຜນການ ແລະ ການລົງທຶນ |
| NCCR | ສູນແຫ່ງຊາດຂອງຄວາມຊຳນານໃນການຄົ້ນຄວ້າ |
| NESDP | ແຜນການພັດທະນາເສດຖະກິດ ແລະ ສັງຄົມ ແຫ່ງຊາດ |
| NGO | ໂອງການຈັດຕັ້ງທີ່ບໍ່ຂື້ນກັບລັດຖະບານ |
| NGPES | ຍຸດທະສາດການຈະເລີນເຕີບໂຕ ແລະ ລົບລ້າງຄວາມທຸກຍາກ ແຫ່ງຊາດ |
| NT2 | ນ້ຳເທີນ 2 |
| NCRDPE | ຄະນະກຳມະການແຫ່ງຊາດ ສຳລັບການພັດທະນາຊົນນະບົດ ແລະ ຫລຸດຜ່ອນຄວາມທຸກຍາກ |
| NTFP | ຜະລິດຕະພັນປ່າໄມ້ ທີ່ບໍ່ແມ່ນໄມ້ |
| O&M | ການດຳເນີນງານ ແລະ ການບຳລຸງຮັກສາ |
| ORAF | ໂຄງຮ່າງການປະເມີນຄວາມສ່ຽງດ້ານການດຳເນີນງານ |
| PDO | ຈຸດປະສົງການພັດທະນາຂອງໂຄງການ |
| PM | ນາຍົກລັດຖະມົນຕີ |
| PMT | ທີມງານບໍລິຫານໂຄງການ ຂອງ ທລຍ |
| PMP | ແຜນການຄວບຄຸມສັດຕູພືດ |
| PRA | ການປະເມີນຄ່າດ້ານສ່ວນຮ່ວມຂອງຊົນນະບົດ |
| PRF | ກອງທຶນຫລຸດຜ່ອນຄວາມທຸກຍາກ |

| | |
|---|---|
| PWT | ວຽກງານສາທາລະນະ ແລະ ການຂົນສົ່ງ |
| SESG | ແນວທາງການປ້ອງກັນສັງຄົມ ແລະ ສິ່ງແວດລ້ອມ |
| SDC | ອົງການສະວິດເພື່ອການພັດທະນາ ແລະ ການຮ່ວມມື |
| SoE | ບົດລາຍງານການເບີກຈ່າຍ |
| SPIM | ການປັບປຸງປະຈໍາເດືອນ ກ່ຽວກັບການປະຕິບັດໂຄງການຍ່ອຍ |
| SPPF | ແບບຟອມການສະເໜີໂຄງການຍ່ອຍ |
| TA | ທີ່ປຶກສານດ້ານເຕັກນິກ |
| ToR | ພາລະບົດບາດ |
| TOT | ການຝຶກອົບຮົມ ເພື່ອການເປັນຄູຝຶກ |
| UNDP | ໂຄງການພັດທະນາສະຫະປະຊາຊາດ |
| USD | ສະກຸນເງິນໂດລາ ຂອງສະຫະລັດອາເມລິກາ |
| UXO | ລູກລະເບີດທີ່ຍັງບໍ່ທັນແຕກ |
| UXO Lao | ໂຄງການເກັບກູ້ລູກລະເບີດທີ່ຍັງບໍ່ທັນແຕກ ແຫ່ງຊາດ ລາວ |
| VNPA | ການປະເມີນການຈັດລໍາດັບຄວາມຕ້ອງການຂອງໝູ່ບ້ານ |
| VP | ລາຍລະອຽດຂອງໝູ່ບ້ານ |
| WB | ທະນາຄານໂລກ |

# 1 ຄຳນຳ

ປື້ມຄູ່ມືການຈັດຕັ້ງປະຕິບັດໂຄງການ ທລຍ II ແມ່ນເອກະສານທາງລັດຖະການ. ປື້ມຄູ່ມືສະບັບນີ້ ຈະຖືກພິຈາລະນາ, ແກ້ໄຂ ແລະ ປັບປຸງ ຢ່າງຕໍ່ເນື່ອງ ເພື່ອໃຫ້ແທດເໝາະກັບສະພາບການປ່ຽນແປງຕົວຈິງໃນແຕ່ລະໄລຍະ ຂອງການຈັດຕັ້ງປະຕິບັດໂຄງການ. **ຈຸດປະສົງຕົ້ນຕໍ ໃນການນຳໃຊ້ປື້ມຄູ່ມືສະບັບນີ້ ແມ່ນເລັ່ງໃສ່ພະນັກງານ ທລຍ, ເພື່ອເປັນຄຳແນະນຳທາງດ້ານນະໂຍບາຍ ແລະ ຂັ້ນຕອນການຈັດຕັ້ງປະຕິບັດຕ່າງໆຢ່າງຈະແຈ້ງ ສຳລັບທຸກພາກສ່ວນ ພາຍໃນ ທລຍ.**

ການປ່ຽນແປງເລັກໆນ້ອຍໆ (ການເພີ່ມແບບຟອມ ຫລື ການດັດແປງແກ້ໄຂວັກໃດວັກໜຶ່ງ ຊຶ່ງບໍ່ມີຄວາມສຳຄັນທາງດ້ານຍຸດທະສາດ) ແມ່ນສາມາດດັດແປງ ແລະ ແກ້ໄຂໄດ້ ໂດຍບໍ່ຈຳເປັນຕ້ອງໄດ້ຂໍອະນຸມັດຢ່າງເປັນທາງການ. ແຕ່ທຸກການສະເໜີເພື່ອຂໍປັບປຸງທີ່ສຳຄັນໃດໆກໍ່ຕາມ ຈະຕ້ອງໄດ້ຍື່ນສະເໜີໄປຫາຄະນະກຳມະການບໍລິຫານ ຂອງ ທລຍ ແລະ ຜູ້ໃຫ້ທຶນທີ່ກ່ຽວຂ້ອງ ເພື່ອພິຈາລະນາ ແລະ ເຊັນຮັບຮອງການດັດແປງດັ່ງກ່າວກ່ອນ ຈຶ່ງມີຜົນສາມາດນຳໃຊ້ໄດ້, ແລະ ແຈ້ງໄປຍັງພະນັກງານຂອງ ທລຍ ຢູ່ພາກສະໜາມ ແລະ/ຫລື ລົງປະກາດຢູ່ເວັບໄຊ ຂອງ ທລຍ. ການດັດແປງໃດໆກໍ່ຕາມ ໃນປື້ມຄູ່ມືສະບັບນີ້, ຊຶ່ງຈະເປັນການດັດແປງເລັກນ້ອຍໆ ຫລື ການດັດແປງທີ່ສຳຄັນ ແມ່ນຈະໄດ້ຜ່ານການເຊັນອະນຸມັດໃນກອງປະຊຸມປະຈຳປີ ຂອງຄະນະຜູ້ບໍລິຫານ ຂອງ ທລຍ ແລະ ຜູ້ໃຫ້ທຶນ.

ປື້ມຄູ່ມືສະບັບນີ້ ຈະປະກອບມີ ລາຍລະອຽດເຄື່ອງມືຝຶກອົບຮົມ ສຳລັບການຝຶກອົບຮົມຕ່າງໆ ແລະ ກຳນົດລາຍການ ການເສີມສ້າງຄວາມເຂັ້ມແຂງ ກ່ຽວກັບຫົວຂໍ້ຕ່າງໆ, ອີງຕາມຄວາມຕ້ອງການຂອງແຕ່ລະກຸ່ມເປົ້າໝາຍໃນແຕ່ລະການຝຶກອົບຮົມ. ບໍ່ຈຳເປັນຕ້ອງອ່ານປື້ມຄູ່ມືສະບັບນີ້ ເລີ່ມແຕ່ຕົ້ນຈົນຈົບກ່ອນທີ່ຈະເລີ້ມຕົ້ນນຳໃຊ້ພາກສ່ວນໃດໜຶ່ງເຂົ້າໃນການຈັດຕັ້ງປະຕິບັດຕົວຈິງ. ແຕ່ປື້ມຄູ່ມືສະບັບນີ້ໄດ້ຖືກອອກແບບມາເພື່ອເປັນສິ່ງທີ່ອ້າງອີງ ແລະ ແຕ່ລະພາກແມ່ນສາມາດອ່ານສຶກສາໄດ້ ໂດຍບໍ່ກ່ຽວຂ້ອງກັບພາກອື່ນ.

# 2 ບົດສະເໜີ ແລະ ສະຖານະການທົ່ວໄປ

## 2.1 ຄວາມທຸກຍາກໃນ ສປປ ລາວ

**ເຖິງແມ່ນວ່າ ຈະມີຊັບພະຍາກອນທຳມະຊາດຢ່າງອຸດົມສົມບູນ, ແຕ່ຄວາມທຸກຍາກ ຍັງເປັນບັນຫາອັນຄົງຄ້າງ ຢູ່ໃນ ສປປ ລາວ.** ການຫລຸດຜ່ອນຄວາມທຸກຍາກ ໄດ້ມີການດຳເນີນຢ່າງຕໍ່ເນື່ອງ ນັບຕັ້ງແຕ່ການເລີ້ມຕົ້ນການປະຕິຮູບດ້ານເສດຖະກິດການຕະຫລາດທີ່ຮັດກຸມ ໃນໄລຍະຊຸມປີ 1980 ເປັນຕົ້ນມາ, ຊຶ່ງເຮັດໃຫ້ຈຳນວນຜູ້ທຸກຍາກຫລຸດລົງຢ່າງຕໍ່ເນື່ອງ ຈາກ 46 ເປີເຊັນ ເຫລືອພຽງແຕ່ 28 ເປີເຊັນ ໃນໄລຍະ 15 ປີ ທີ່ຜ່ານມາ. ຄວາມສາມາດເຂົ້າເຖິງການບໍລິການດ້ານສາທາລະນະຂັ້ນພື້ນຖານ ໄດ້ຮັບການປັບປຸງໃຫ້ດີຂຶ້ນເຊັ່ນດຽວກັນ ມີປະມານໜຶ່ງສ່ວນສາມ ຂອງປະຊາກອນ ສາມາດນຳໃຊ້ນໍ້າທີ່ດີຂື້ນ ແລະ ໄດ້ຮັບການບໍລິການດ້ານສຸຂາພິບານ. ຈຳນວນປະຊາກອນທີ່ສາມາດນຳໃຊ້ໄຟຟ້າ ໄດ້ເພີ້ມຂື້ນ ຈາກ 16 ເປີເຊັນ ໃນປີ 1995 ມາເປັນ 71 ເປີເຊັນ ໃນປີ 2010. ນອກຈາກນີ້, ຍັງໄດ້ມີການດຳເນີນການປັບປຸງໃນການເຂົ້າເຖິງການບໍລິການດ້ານການສຶກສາ ແລະ ສຸຂະພາບ ອີກດ້ວຍ.

**ເຖິງແມ່ນວ່າ ມີສະພາບຄວາມຄືບໜ້າທີ່ດີຂື້ນເຊັ່ນນີ້, ສປປ ລາວ ຍັງຄົງເປັນໜຶ່ງໃນປະເທດ ທີ່ທຸກຍາກທີ່ສຸດໃນພາກພື້ນນີ້.** ລາຍຮັບຄາດຄະເນສະເລ່ຍຕໍ່ຫົວ ຢູ່ທີ່ 1,130 ໂດລາສະຫະລັດ ໃນປີ 2011, ແຕ່ ສປປ ລາວ ຍັງຖືກຈັດໃຫ້ເປັນປະເທດທີ່ດ້ອຍພັດທະນາທີ່ສຸດ ໂດຍສະຫະປະຊາຊາດ. ອັດຕາຄວາມທຸກຍາກ ຢູ່ໃນເຂດພູມີພາກທີ່ຕ່າງກັນ ແລະ ກຸ່ມຊົນເຜົ່າທີ່ຕ່າງກັນ ແມ່ນມີຄວາມແຕກຕ່າງກັນຢ່າງຫລວງຫຼາຍ. ສາມ ກຸ່ມໃຫຍ່ ທີ່ບໍ່ແມ່ນກຸ່ມ ລາວ-ໄຕ, ຊຶ່ງລວມກັນເປັນ 65 ເປີເຊັນ ຂອງຈຳນວນປະຊາກອນ ມີອັດຕາຄວາມທຸກຍາກ ຢູ່ປະມານ 42 ເປີເຊັນ ເມື່ອປຽບທຽບໃສ່ກຸ່ມ ລາວ-ໄຕ ຊຶ່ງມີຢູ່ປະມານ 25 ເປີເຊັນ. ຮູບແບບຂອງຄວາມທຸກຍາກ ຍັງຂຶ້ນກັບລັກສະນະຂອງພູມສາດ, ເຂດທີ່ຕັ້ງຂອງຕົວເມືອງ ແລະ ເມືອງທີ່ຕັ້ງຢູ່ຕິດກັບຊາຍແດນໄທ ແມ່ນມີອັດຕາຄວາມຈະເລີນເຕີບໂຕ ແລະ ຫລຸດຜ່ອນຄວາມທຸກຍາກໄດ້ຢ່າງວ່ອງໄວ. ຄວາມທຸກຍາກໃນເຂດຊົນນະບົດ (32 ເປີເຊັນ) ແມ່ນມີເກືອບສອງເທົ່າ ສົມທຽບໃສ່ເຂດຕົວເມືອງ (17 ເປີເຊັນ).

**ເຖິງແມ່ນວ່າ ຈະມີສິ່ງທ້າທາຍເຫລົ່ານີ້, ລັດຖະບານ ມີເປົ້າໝາຍທີ່ຈະຫລຸດອອກຈາກກຸ່ມຂອງປະເທດທີ່ດ້ອຍພັດທະນາທີ່ສຸດ ພາຍໃນປີ 2020 ແລະ ລົບລ້າງຄວາມທຸກຍາກ ພາຍໃນປີ 2015.** ແຜນຍຸດທະສາດ ການຈະເລີນເຕີບໂຕ ແລະ ລົບລ້າງຄວາມທຸກຍາກ ແຫ່ງຊາດ (NGPES) ຈະເປັນໂຄງຮ່າງລະອຽດ ໃນການດຳເນີນການ. ບັນດາໂຄງການທີ່ໄດ້ຮັບທຶນສະໜັບສະໜູນ ຈາກລັດຖະບານ ແລະ ຜູ້ໃຫ້ທຶນ ແມ່ນມີຈຸດປະສົງເພື່ອໃຫ້ສອດຄ່ອງກັບແຜນຍຸດທະສາດດັ່ງກ່າວ. NGPES ເນັ້ນໜັກດ້ານການສົ່ງເສີມ ການຂະຫຍາຍຕົວແບບຍືນຍົງ, ຄຽງຄູ່ກັນກັບຄວາມຄືບໜ້າຂອງສັງຄົມຢ່າງຕໍ່ເນື່ອງ ແລະ ເທົ່າທຽມກັນ. ດ້ວຍວິທີການນີ້, ສະພາບ ແລະ ຄຸນນະພາບຊີວິດຂອງປະຊາກອນຂອງບັນດາຊົນຊາດຊົນເຜົ່າຈະດີຂື້ນ ແລະ ຄວາມທຸກຍາກຂັ້ນພື້ນຖານ ແມ່ນສາມາດຖືກລົບລ້າງໄດ້, ໂດຍສະເພາະ ໃນ 47 ເມືອງສຳຄັນທີ່ທຸກຍາກທີ່ສຸດ ແລະ ໃນ 72 ເມືອງທີ່ທຸກຍາກ ຈາກຈຳນວນ 141 ເມືອງ ຂອງ ສປປ ລາວ.

### 2.1.1 ຄວາມເປັນມາ ຂອງ ທລຍ ໃນ ສປປ ລາວ

**ຕໍ່ກັບສິ່ງທ້າທາຍດ້ານຄວາມທຸກຍາກນີ້, ລັດຖະບານແຫ່ງ ສປປ ລາວ ໄດ້ກໍ່ຕັ້ງກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ) ຂຶ້ນໃນເດືອນ ພຶດສະພາ 2002.** ໃນເບື້ອງຕົ້ນ, ທລຍ ໄດ້ຮັບເງິນກູ້ຢືມຈາກທະນາຄານໂລກໃນຈຳນວນ 20 ລ້ານ ໂດລາສະຫະລັດ, ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 73. ສະບັບປັບປຸງ ປີ 2006 (ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 222/ນຍ), ທລຍ ໄດ້ຖືກສ້າງຕັ້ງຂຶ້ນຕາມກົດໝາຍ ເປັນອົງການຈັດຕັ້ງເອກະລາດ ທີ່ຕັ້ງຢູ່ໃນຫ້ອງວ່າການລັດຖະບານ ແລະ ຢູ່ພາຍໃຕ້ການຊີ້ນຳຂອງຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ (ຄພທສ - ເຊິ່ງຕໍ່ໄປນີ້ເອີ້ນວ່າ "ຄະນະກຳມະການແຫ່ງຊາດ" ໃນປຶ້ມຄູ່ມືສະບັບນີ້). ຄະນະກຳມະການແຫ່ງຊາດ ປະກອບດ້ວຍບັນດາຕົວແທນຈາກກະຊວງຕ່າງໆ ທີ່ເຮັດວຽກຢູ່ໃນລະດັບຮາກຖານ ໂດຍອີງຕາມດຳລັດຂອງນາຍົກລັດຖະມົນຕີສະບັບເລກທີ 031/PM, ລົງວັນທີ 5 ກຸມພາ 2009. ເຊິ່ງເປັນສ່ວນໜຶ່ງຂອງການປ່ຽນແປງໃນໂຄງການ ທລຍ II, ດ້ວຍເຫດນີ້, ດຳລັດຂອງ ທລຍ II ໄດ້ຮັບການທົບທວນຄືນຕາມຄວາມເໝາະສົມ ແລະ ໄດ້ຄັດຕິດເປັນເອກະສານຊ້ອນທ້າຍ 1 ໃນປຶ້ມຄູ່ມືສະບັບນີ້ (ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ: 10/ນຍ).

**ທລຍ ໄດ້ຖືກສ້າງຕັ້ງຂຶ້ນ ໂດຍມີເປົ້າໝາຍສະເພາະ ເພື່ອປັບປຸງການເຂົ້າເຖິງການບໍລິການດ້ານສາທາລະນະທີ່ສຳຄັນ, ໂດຍການກໍ່ສ້າງໂຄງສ້າງພື້ນຖານດ້ານສັງຄົມ ແລະ ເສດຖະກິດ ຢູ່ຂັ້ນບ້ານ ພາຍໃນເມືອງທີ່ທຸກຍາກທີ່ສຸດ ຂອງປະເທດ.** ຮູບແບບຂອງໂຄງການ ທລຍ ແມ່ນອີງໃສ່ຮູບແບບການພັດທະນາແບບມີສ່ວນຮ່ວມຂອງຊຸມຊົນ ທີ່ໄດ້ຮັບຜົນສຳເລັດມາແລ້ວ ພາຍໃນຂົງເຂດອາຊີຕາເວັນອອກສ່ຽງເໜືອ.

**ບົນພື້ນຖານຜົນງານທີ່ປະສົບຄວາມສຳເລັດ ໃນໄລຍະຜ່ານມາ, ທລຍ ຈຶ່ງໄດ້ຮັບການສະໜັບສະໜູນທຶນເພີ່ມເຕີມ ໃນປີ 2008.** ການສະຫນັບສະຫນູນທຶນເພີ່ມເຕີມດັ່ງກ່າວ ແມ່ນໄດ້ຈາກທະນາຄານໂລກ (15 ລ້ານ ໂດລາສະຫະລັດ) ແລະ ອົງການສະວິດເພື່ອການພັດທະນາ ແລະ ການຮ່ວມມື (ປະມານ 7 ລ້ານໂດລາສະຫະລັດ). ໃນປີ 2010, ທລຍ ຍັງໄດ້ຮັບທຶນເພີ່ມເຕີມອີກ (410,000 ໂດລາສະຫະລັດ) ຈາກອົງການ AusAID ຜ່ານກອງທຶນໂລກ ສຳລັບການຫລຸດຜ່ອນຄວາມສ່ຽງດ້ານໄພພິບັດ, ເຊິ່ງຄຸ້ມຄອງໂດຍທະນາຄານໂລກ, ໃນການກໍ່ສ້າງຄືນໃໝ່ ບັນດາໂຄງລ່າງພື້ນຖານ ທີ່ໄດ້ຖືກທຳລາຍໂດຍພະຍຸໄຕ້ຝຸ່ນເກດສະໜາ ທີ່ ທລຍ ໃຫ້ການສະຫນັບສະຫນູນທຶນ. ທລຍ ໄດ້ຮັບການສະໜັບສະໜູນທຶນທັງໝົດໃນມູນຄ່າ 42 ລ້ານ ໂດລາສະຫະລັດ, ເຮັດໃຫ້ ທລຍ ກາຍເປັນໂຄງການໜຶ່ງໃນຫລາຍຂະແໜງການທີ່ໃຫຍ່ທີ່ສຸດ ໃນບັນດາໂຄງການການຫລຸດຜ່ອນຄວາມທຸກຍາກໃນຊົນນະບົດ ໃນທົ່ວປະເທດ. ນອກຈາກນີ້, ຍັງໄດ້ມີການຄາດຄະເນໄວ້ວ່າ ຊຸມຊົນໄດ້ມີການປະກອບສ່ວນເພີ່ມເຕີມ ປະມານ 6.5 ລ້ານໂດລາສະຫະລັດ ເຂົ້າໃນການຈັດຕັ້ງປະຕິບັດໂຄງການ ຂອງ ທລຍ I, ສ່ວນໃຫຍ່ແມ່ນຢູ່ໃນຮູບແບບການປະກອບສ່ວນດ້ານແຮງງານອາສາສະໝັກ ແລະ ວັດສະດຸການກໍ່ສ້າງທີ່ມີຢູ່ໃນທ້ອງຖິ່ນ.

**ຂໍ້ມູນການກວດກາ ແລະ ຕິດຕາມ ທີ່ໄດ້ຮັບຈາກ ທລຍ I ໄດ້ສະແດງໃຫ້ເຫັນວ່າ ໂຄງການໄດ້ຊ່ວຍໃຫ້ຫລຸດຜ່ອນອອກຈາກຄວາມທຸກຍາກ ໃນເຂດພື້ນທີ່ຫ່າງໄກສອກຫລີກ ໄດ້ຢ່າງວ່ອງໄວ ແລະ ເປັນການນຳໃຊ້ທຶນທີ່ມີປະສິດທິຜົນ.** ໃນໄລຍະ 8 ປີ ທີ່ຜ່ານມານີ້, ທລຍ I ໄດ້ມີການສະໜັບສະໜູນທຶນຊ່ວຍເຫລືອໃຫ້ແກ່ 2,185 ໝູ່ບ້ານ ໃນ 8 ແຂວງ ຈາກຈຳນວນ 17 ແຂວງ, ເຊິ່ງກວມເອົາ 30 ເມືອງຈາກ ຈຳນວນ 144 ເມືອງ, ລວມທັງ 23 ເມືອງ ທຸກຍາກທີ່ເປັນເປົ້າໝາຍສຳຄັນຂອງລັດຖະບານ. ຈຳນວນ 3,179 ໂຄງການຍ່ອຍ ໄດ້ຖືກຈັດຕັ້ງປະຕິບັດສຳເລັດ, ລວມທັງການກໍ່ສ້າງຂົວ ຈຳນວນ 86 ແຫ່ງ, ສຸກສາລາ 65 ຫລັງ, ລະບົບນ້ຳ 669 ແຫ່ງ, ແລະ ໂຄງການຊົນລະປະທານ 156 ແຫ່ງ. ທລຍໄດ້ປັບປຸງຖະໜົນຫົນທາງຢູ່ເຂດຊົນນະບົດ 428 ເສັ້ນ, ຍາວ 3,000 ກິໂລແມັດ, ແລະ ກໍ່ສ້າງ ຫລື ຍົກລະດັບໂຮງຮຽນ ຈຳນວນ 616 ຫລັງ. ຂໍ້ມູນຍັງສະແດງໃຫ້ເຫັນວ່າ ຄຸນນະພາບການກໍ່ສ້າງໂດຍທົ່ວໄປຂອງ ທລຍ ແມ່ນເປັນທີ່ເພິ່ງພໍໃຈບໍ່ວ່າທາງດ້ານວິຊາການ ແລະ ການລົງທຶນ ທີ່ສາມາດເຂົ້າຮອດບ້ານທີ່ທຸກຍາກ ເພື່ອປັບປຸງການບໍລິການທີ່ສຳຄັນ ໂດຍສະເພາະແມ່ນຂະແໜງການດ້ານສຸຂະພາບ, ດ້ານກະສິກຳ, ແລະ ດ້ານການສຶກສາ.

### 2.1.2 ໄລຍະເວລາ, ຂອບເຂດພູມີສາດ ແລະ ດ້ານການເງິນ ຂອງ ທລຍ II

**ດ້ວຍຜົນສຳເລັດ ຂອງການຈັດຕັ້ງປະຕິບັດໂຄງການ ຂອງ ທລຍ ທີ່ຜ່ານມາ, ລັດຖະບານ ຈຶ່ງໄດ້ຕັດສິນໃຈ ທີ່ຈະສືບຕໍ່ຜັນຂະຫຍາຍຜົນສຳເລັດດັ່ງກ່າວ ໂດຍການຂະຫຍາຍໂຄງການໄລຍະທີສອງ ເລີ່ມຕົ້ນໃນກາງປີ 2011 ແລະ ຈະສິ້ນສຸດ ໃນປີ 2016.** ໂດຍການສະຫນັບສະຫນູນອັນເຂັ້ມແຂງທີ່ໄດ້ມາຈາກທັງລັດຖະບານ ສປປ ລາວ ແລະ ອົງການຈັດຕັ້ງຜູ້ໃຫ້ທຶນຕ່າງໆ ຈະຊ່ວຍໃຫ້ສາມາດຂະຫຍາຍພູມີພາກ ແລະ ປັບປຸງເປົ້າໝາຍຂອງຄວາມທຸກຍາກ ໃນໄລຍະໂຄງການ ທລຍ II. ພາບລວມຂອງການສະໜອງທຶນ ສຳລັບໂຄງການ ທລຍ II ໄດ້ຖືກນຳສະເໜີ ໃນຕາຕະລາງ 1 ຂ້າງລຸ່ມນີ້.

**ຕາຕະລາງ 1: ການສະໜອງທຶນ ສຳລັບ ທລຍ II**

| **ແຫລ່ງທຶນ** | **(ລ້ານໂດລາສະຫະລັດ)** |
|---|---:|
| ທຶນສົມທົບລັດຖະບານ ສປປ ລາວ* | 10.0 |
| ສະມາຄົມພັດທະນາສາກົນ (IDA) | 25.0 |
| ອົງການສະວິດ ເພື່ອການພັດທະນາ ແລະ ການຮ່ວມມື (SDC) | 13.2 |
| ທຶນສົມທົບຈາກ ອົສເຕັສ ປະເທດ ອົສຕາລີ (MDTF) ** | 17.5 |
| **ລວມທັງໝົດ:** | **65.7** |

ໝາຍເຫດ:

* ບໍ່ລວມມູນຄ່າປະກອບສ່ວນຂອງຊຸມຊົນ.

** ບໍ່ລວມມູນຄ່າ AUD 2.5 ລ້ານ ສຳລັບກິດຈະກຳການທະນາຄານ, ປະຕິບັດ ແລະ ຄ່າທຳນຽມການບໍລິຫານ MDTF. ທຶນຊ່ວຍເຫລືອຂອງກອງທຶນນີ້ ຈາກອົງການພັດທະນາສາກົນຂອງອົດສະຕຣາລີ ແມ່ນຕ້ອງໄດ້ສະເໜີຂໍອະນຸມັດ.

**ທຶນການຊ່ວຍເຫລືອທີ່ເພີ່ມຂຶ້ນນີ້ ຈະຊ່ວຍໃຫ້ໂຄງການ ທລຍ II ສາມາດຂະຫຍາຍອອກໄປໄດ້ເຖິງ 10 ແຂວງ ຈາກຈຳນວນ 17 ແຂວງ ຂອງ ສປປ ລາວ.** ຂອບເຂດທີ່ກວມເອົາທັງໝົດເພີ່ມຂຶ້ນປະມານ 25%, ເຊິ່ງລວມເອົາປະມານ 274 ກຸ່ມບ້ານຊົນນະບົດ (ກຸ່ມບ້ານ ຫລື ເມືອງຍ່ອຍ) ຈາກຈຳນວນ 220 ກຸ່ມບ້ານໃນໄລຍະທີ່ຫນຶ່ງ ຂອງ ທລຍ, ທີ່ກວມເອົາ 38 ເມືອງ ທີ່ທຸກຍາກທີ່ສຸດຂອງປະເທດ, ຕາມການຈັດລຽງໂດຍລັດຖະບານ ອີງຕາມຂໍ້ມູນດ້ານຄວາມທຸກຍາກ.

ບັນດາແຂວງທີ່ໄດ້ຮັບທຶນສະໜັບສະໜູນ ຈາກໂຄງການ ທລຍ II, ຕາມການສະເໜີໂດຍກອງເລຂາຂອງ ທລຍ ແລະ ຢັ້ງຢືນຮັບຮອງເອົາໂດຍຄະນະກຳມະການສະພາບໍລິຫານ ທລຍ ລວມມີແຂວງ: ສະຫວັນນະເຂດ, ສາລະວັນ, ຫົວພັນ, ຫລວງນ້ຳທາ, ເຊກອງ, ຊຽງຂວາງ, ຜົ້ງສາລີ, ອຸດົມໄຊ, ຫລວງພະບາງ ແລະ ອັດຕະປື.

ດ້ວຍແຫລ່ງທຶນທີ່ເພີ່ມຂື້ນ (8,7 ລ້ານ ໂດລາສະຫະລັດ), ໄດ້ມີການຕົກລົງວ່າຈະປະຕິບັດຕາມຍຸດທະສາດຂອງ ທລຍ I ແລະ ຂະຫຍາຍແຂວງເປົ້າໝາຍ ຂອງ ທລຍ ອອກເພີ່ມເຕີມ, ເພື່ອສືບຕໍ່ການສົ່ງເສີມຕົວແບບການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນໃຫ້ກວ້າງຂວາງ ແລະ ປະຕິບັດຕາມເປົ້າໝາຍຂອງລັດຖະ ບານ ທີ່ຈະຫັນປ່ຽນໂຄງການ ທລຍ ໃຫ້ເປັນໂຄງການລະດັບຊາດ. ການສະເຫນີຂອງລັດຖະບານ ແມ່ນໃຫ້ໂຄງການ ທລຍ ຂະຫຍາຍເພີ້ມເຕີມ 10 ກຸ່ມບ້ານ ໃນ 3 ເມືອງ (ເມືອງ ຂວາ ແຂວງ ຜົ້ງສາລີ ແລະ ເມືອງ ໄຊຍະບູລີ ກັບ ເມືອງ ທົ່ງສາ ໃນແຂວງ ໄຊຍະບູລີ). ການຂະຫຍາຍໄປເມືອງ ຂວາ ໄດ້ຮັບການອະນຸມັດ ສຳລັບ 3 ກຸ່ມບ້ານ (31 ໝູ່ບ້ານ), ເລີ່ມແຕ່ຮອບວຽນທີ່ X ໄປຕົ້ນໄປ. ການຂະຫຍາຍແຂວງເປົ້າໝາຍ ຂອງ ທລຍ ເຂົ້າແຂວງ ໄຊຍະບູລີ ຕ້ອງໄດ້ຮັບການປຶກສາຫາລືເພີ່ມເຕີມອີກ ເພາະວ່າມີໂຄງການພັດທະນາຂະໜາດໃຫຍ່ຫລາຍໆໂຄງການທີ່ກຳລັງດຳເນີນການຢູ່ ແລະ ມີແຜນທີ່ຈະດຳເນີນການ ເຊິ່ງເປັນສິ່ງທີ່ທ້າທາຍ ເພາະວ່າດ້ານຫລັກການໜຶ່ງທີ່ຈຳເປັນທີ່ຈະນຳໃຊ້ ແມ່ນການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ ທີ່ໄດ້ປະສົບຜົນສຳເລັດມາແລ້ວ ເພື່ອເຮັດໃຫ້ຊຸມຊົນໄດ້ຢູ່ໃນສະພາບແວດລ້ອມທີ່ໝັ້ນຄົງ. ອີກທາງເລືອກໜຶ່ງ ແມ່ນສະເໜີໃຫ້ມີການສະໜັບສະໜູນເມືອງເພີ່ມເຕີມອີກ ໃນແຂວງ ອຸດົມໄຊ.

### 2.1.3 ເປົ້າໝາຍຂອງໂຄງການ

**ເປົ້າໝາຍການພັດທະນາໂຄງການແມ່ນ ເພື່ອປັບປຸງການເຂົ້າເຖິງ ແລະ ການນຳໃຊ້ໂຄງລ່າງພື້ນຖານ ແລະ ການບໍລິການຕ່າງໆ ສຳລັບຊຸມຊົນທີ່ທຸກຍາກ ທີ່ນອນຢູ່ໃນເປົ້າໝາຍຂອງໂຄງການ ໃນລັກສະນະແບບຍືນຍົງ ໂດຍຜ່ານຂະບວນການພັດທະນາຊຸມຊົນ ແລະ ທ້ອງຖິ່ນ**[1]. ໂຄງການດັ່ງກ່າວ ມີຈຸດປະສົງທີ່

[1] ສຳລັບເປົ້າໝາຍ ຂອງ ທລຍ II, ຄວາມຍືນຍົງ ຈະຖືກປະເມີນຜ່ານດ້ານຕ່າງໆດັ່ງຕໍ່ໄປນີ້: (i) ການພັດທະນາຕົວແບບການເຮັດວຽກຕົວຈິງແລະ ທົບທວນຄືນ ໃຫ້ກັບລັດຖະບານ ກ່ຽວກັບການວາງແຜນຂອງຊຸມຊົນ ແລະ ການສະໜອງທຶນ; (ii) ເພີ່ມຂີດບາດຂອງອຳນາດການປົກຄອງທ້ອງຖິ່ນ ໃນດ້ານການປະສານງານ ແລະ ການສະໜັບສະໜູນຊ່ວຍເຫລືອໂຄງການ; (iii) ເສີມສ້າງຂີດຄວາມເຂັ້ມແຂງ ໃຫ້ແກ່ຊຸມຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ ໃນການວາງແຜນ ແລະ ການດຳເນີນກິດຈະກຳການພັດທະນາຂອງທ້ອງຖິ່ນ, ແລະ (iv)

ຈະສະໜອງຊັບພະຍາກອນໃນຮູບແບບການຝຶກອົບຮົມດ້ານວິຊາການ ແລະ ການຊ່ວຍສະໜັບສະໜູນທຶນຊ່ວຍເຫລືອໂຄງການຍ່ອຍ ໃຫ້ແກ່ບ້ານ ແລະ ກຸ່ມບ້ານທີ່ທຸກຍາກ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ. ທລຍ ນຳໃຊ້ຫລັກການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ (CDD), ທີ່ຊຸມຊົນເປັນເຈົ້າການໃນການສິນໃຈ ກ່ຽວກັບການຈັດສັນທຶນ, ຄຸ້ມຄອງທຶນ, ແລະ ຈັດຕັ້ງປະຕິບັດໂຄງການຍ່ອຍ. ການອຳນວຍສະດວກ ແລະ ການຝຶກອົບຮົມ ແມ່ນຈະໄດ້ສະໜອງໃຫ້ຢ່າງກວ້າງຂວາງ ຕະຫລອດໄລຍະເວລາຂອງໂຄງການນີ້ ເພື່ອຮັບປະກັນວ່າ ສະມາຊິກທຸກຄົນພາຍໃນຊຸມຊົນ ລວມທັງແມ່ຍິງ ແລະ ກຸ່ມຊົນເຜົ່າຕ່າງໆ ມີສ່ວນຮ່ວມໃນຂະບວນການຕັດສິນໃຈ ແລະ ໄດ້ຮັບຜົນປະໂຫຍດຈາກໂຄງການນີ້. ໂຄງການນີ້ໄດ້ສ້າງຄວາມເຂັ້ມ ແຂງໃຫ້ທ້ອງຖິ່ນ ໂດຍການສະໜັບສະໜູນດ້ານວິຊາການ ໃຫ້ແກ່ຊຸມຊົນ ເປັນໄລຍະເວລາຫລາຍປີຜ່ານ ເພື່ອຊ່ວຍແກ້ໄຂບັນຫາ ແລະ ຂໍ້ຂັດແຍ່ງຕ່າງໆ. ນອກຈາກນີ້ ຍັງມີເປົ້າໝາຍທີ່ຈະສ້າງການເຊື່ອມໂຍງທີ່ເຂັ້ມແຂງ ລະຫວ່າງ ອຳນາດການປົກຄອງທ້ອງຖິ່ນ ແລະ ຊຸມຊົນ. ພະນັກງານ ທລຍ ຂັ້ນເມືອງ, ແຂວງ, ແລະ ສູນກາງ ຈະເປັນຜູ້ຊ່ວຍໃນການປະສານງານ ແລະ ໃຫ້ຄວາມສະດວກໃນການເຊື່ອມໂຍງດັ່ງກ່າວ.

## 2.2 ຫລັກການ ຂອງ ທລຍ

ທລຍ ມີ 6 ຫັລກການສຳຄັນ ເພື່ອເປັນພື້ນຖານໃຫ້ແກ່ການຈັດຕັ້ງປະຕິບັດໂຄງການ ເຊັ່ນດຽວກັນກັບການຕິດຕາມກວດກາ ແລະ ການປະເມີນຜົນ:

1) ຄວາມງ່າຍດາຍ;
2) ການມີສ່ວນຮ່ວມຂອງຊຸມຊົນແລະ ຄວາມຍືນຍົງ;
3) ຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບ;
4) ການລົງທຶນທີ່ຄຸ້ມຄ່າ;
5) ການເຂົ້າຮ່ວມຈາກທຸກພາກສ່ວນໃນຊຸມຊົນ ແລະ ຄວາມສະເໝີພາບຍິງ-ຊາຍ;
6) ຢູ່ຄຽງຂ້າງຜູ້ທຸກຍາກ.

**<u>ຫລັກການ 1</u>: ຄວາມງ່າຍດາຍ**

**ຄວາມງ່າຍດາຍ ທີ່ຮັບປະກັນຄວາມໂປ່ງໃສ ແລະ ການເປັນເຈົ້າຂອງໂຄງການຂອງທ້ອງຖິ່ນຫລາຍຂຶ້ນ.** ການອອກແບບ, ກົດລະບຽບ, ແລະ ຂໍ້ກຳນົດ ຂອງໂຄງການ ໄດ້ຖືກອອກແບບມາ ເພື່ອໃຫ້ປະຕິບັດ ແລະ ເຂົ້າໃຈງ່າຍ. ບົດສະເໜີໂຄງການ, ເຄື່ອງອຸປະກອນທີ່ນຳໃຊ້, ແລະ ວິທີການທີ່ນຳໃຊ້ໂດຍໂຄງການ ແມ່ນໄດ້ຖືກກວດສອບຄວາມຖືກຕ້ອງຈາກຊຸມຊົນ ເພື່ອຮັບປະກັນວ່າ ຊຸມຊົນມີຄວາມເຂົ້າໃຈຢ່າງຖືກຕ້ອງ ແລະ ມີຄວາມເໝາະສົມ.[2]

---

ປັບປຸງໂດຍທົ່ວໄປ ຄຸນນະພາບດ້ານການອອກແບບ ແລະ ການດຳເນີນງານ ແລະ ການບຳລຸງຮັກສາ ໂຄງການຍ່ອຍ ດ້ານພື້ນຖານໂຄງລ່າງ, ລວມທັງການອອກແບບທີ່ພົວພັນກັບການຫລຸດຜ່ອນຕໍ່ຄວາມສ່ຽງໄພພິບັດເຂົ້າໃນບັນດາໂຄງການຍ່ອຍທີ່ກ່ຽວຂ້ອງ.

[2] ບັນດາບົດສະເໜີໂຄງການ ແລະ ແຜນວຽກ ຄວນກຳນົດໃຫ້ລະອຽດ ແຕ່ບໍ່ໃຫ້ສັບສົນຫລາຍເກີນໄປ. ມັນເປັນສິ່ງສຳຄັນທີ່ສຸດ ທີ່ຈະຕ້ອງ ປະຕິບັດຕາມຫລັກການຄວາມງ່າຍດາຍ ເພື່ອບໍ່ໃຫ້ຂະບວນການດຳເນີນໂຄງການຄ້າງຄາ ໃນການກຳນົດບົດສະເໜີຂອງໂຄງການ

ຫລັກການ 2:    **ການມີສ່ວນຮ່ວມຂອງຊຸມຊົນ ແລະ ຄວາມຍືນຍົງ**

**ທລຍ ພະຍາຍາມໃຫ້ຊຸມຊົນມີສ່ວນຮ່ວມຫລາຍທີ່ສຸດ ໃນການວາງແຜນ ແລະ ການຈັດຕັ້ງປະຕິບັດໂຄງການຍ່ອຍ.**

- ຢ່າງໜ້ອຍ 50%[3] ຂອງຜູ້ໃຫຍ່ທັງໝົດໃນໝູ່ບ້ານ (ທັງຍິງ ແລະ ຊາຍ) ຕ້ອງເຂົ້າຮ່ວມໃນກອງປະຊຸມລະດັບບ້ານໃນເບື້ອງຕົ້ນ ເພື່ອດຳເນີນຂັ້ນຕອນການວາງແຜນ;
- ການຕັດສິນໃຈ ຕ້ອງແມ່ນຊຸມຊົນທັງໝົດມີສ່ວນຮ່ວມ. ສະມາຊິກຊຸມຊົນທັງໝົດ ແມ່ນລວມເຖິງກຸ່ມຄົນທີ່ຖືກກີດກັນຕາມປະເພນີ, ມີສິດທີ່ຈະໃຫ້ຄຳແນະນຳ ກ່ຽວກັບວິທີການນຳໃຊ້ທຶນຊ່ວຍເຫລືອລ້າ ແລະ ອອກຄຳຄິດຄຳເຫັນ ໃນເວລາຈັດລຽງບູລິມະສິດຄວາມສຳຄັນດ້ານຄວາມຕ້ອງການ ແລະ ກຳນົດກິດຈະກຳຕ່າງໆ ຂອງໂຄງການຍ່ອຍ;
- ຊຸມຊົນເປັນຜູ້ຈັດລຽງລຳດັບຄວາມສຳຄັນຂໍ້ສະເໜີຂອງເຂົາເຈົ້າເອງ ໃຫ້ສອດຄ່ອງກັບລາຍການທາງເລືອກທີ່ຫລາກຫລາຍ ສຳລັບພື້ນຖານໂຄງລ່າງ ຂອງບ້ານ ແລະ ກິດຈະກຳການຝຶກອົບຮົມທີ່ກ່ຽວຂ້ອງ ພ້ອມທັງແຫລ່ງທຶນສະໜັບສະໜູນທີ່ໄດ້ຮັບ ໂດຍຜ່ານກົນໄກເງິນຊ່ວຍເຫລືອລ້າ ສຳລັບການພັດທະນາຊຸມຊົນ. ພະນັກງານ ທລຍ ໂດຍການປະສານສົມທົບກັບອຳນາດການປົກຄອງທ້ອງຖິ່ນ ຈະສະໜອງຂໍ້ມູນທີ່ຕ້ອງການໃຫ້ກັບຊາວບ້ານ ເພື່ອຄັດເລືອກເອົາ;
- ເພື່ອຮັບປະກັນ ໃຫ້ຊຸມຊົນຮັບຮູ້ວ່າກິດຈະກຳ ຂອງ ທລຍ ເປັນກິດຈະກຳການພັດທະນາທີ່ຕ້ອງຊ່ວຍຕົນເອງ, ດ້ວຍເຫດນີ້ ຊຸມຊົນຕ້ອງສະໝັກໃຈປະກອບສ່ວນເຂົ້າໃນກິດຈະກຳຂອງໂຄງການຍ່ອຍ ເພື່ອຍັ້ງຢືນ ແລະ ສະແດງການເປັນເຈົ້າຂອງກິດຈະກຳດັ່ງກ່າວ. ຊາວບ້ານສາມາດຕັດສິນໃຈດ້ວຍຕົນເອງ ວ່າຈະປະກອບສ່ວນໃນຮູບແບບເງິນສົດ, ວັດຖຸ ຫລື ແຮງງານ. ລາຍລະອຽດກ່ຽວກັບແຜນການເຮັດວຽກ ແລະ ແຜນການບຳລຸງຮັກສາ ກໍ່ຈະຕ້ອງປະກອບຢູ່ໃນບົດສະເໜີໂຄງ ການ, ແລະ ຊາວບ້ານ ຕ້ອງສະໝັກໃຈ ແລະ ສາມາດດຳເນີນການກໍ່ສ້າງ ແລະ ບຳລຸງຮັກສາ ໂຄງລ່າງພື້ນຖານໃດໜຶ່ງ ທີ່ຈະໄດ້ມີການດຳເນີນການກໍ່ສ້າງ. ທີມງານຈັດຕັ້ງປະຕິບັດ ແລະ ບຳລຸງຮັກສາ ຈະຕ້ອງໄດ້ຖືກແຕ່ງຕັ້ງຂຶ້ນມາກ່ອນຈະມີການເບີກຈ່າຍເງິນ.

**ຈຸດປະສົງຂອງຄວາມຍືນຍົງ ປະກອບມີຄວາມພະຍາຍາມ ເພື່ອຮັບປະກັນໃຫ້ມີການພັດທະນາຢ່າງຕໍ່ເນື່ອງ ໃນໄລຍະຍາວ ຕາມຮູບແບບ ຂອງ ທລຍ.** ຄວາມພະຍາຍາມຈະໄດ້ຮັບການເອົາໃຈໃສ່ ເພື່ອຮັບປະກັນໃຫ້ມີຄວາມຍືນຍົງໃນມະຫາພາກໄດ້ຮັບການພັດທະນາ ໃນໄລຍະທີ່ສອງ ຂອງ ທລຍ ໂດຍ:

- ພັດທະນາຮູບແບບທີ່ສາມາດປະຕິບັດ ແລະ ແບບຈຳລອງ ໃຫ້ລັດຖະບານ ແຫ່ງ ສປປ ລາວ ກ່ຽວກັບດ້ານການວາງແຜນ ແລະ ການໃຫ້ທຶນສຳລັບຊຸມຊົນ;

---

ເນື່ອງມາຈາກລະດັບການສຶກສາຕໍ່າຂອງຊາວບ້ານ. ຄວນສະໜອງການຊ່ວຍເຫລືອ ແລະ ການຝຶກອົບຮົມທີ່ເໝາະສົມ ໃຫ້ແກ່ຊຸມຊົນ ໃນທ້ອງ ຖິ່ນ ເພື່ອສ້າງຂີດຄວາມອາດສາມາດໃຫ້ແກ່ເຂົາເຈົ້າໃຫ້ມີເຂັ້ມແຂງຂຶ້ນ.

[3] ໃນບັນດາແຂວງ ແລະ ເມືອງ ທີ່ ທລຍ ເອົາເຂົ້າໃໝ່, ໃນໄລຍະສອງ ປີທຳອິດ ຂອງແຜນການລົງທຶນ ຂອງ ທລຍ, ການມີສ່ວນຮ່ວມແມ່ນຢູ່ໃນລະດັບຕໍ່າ ແຕ່ສາມາດຍອມຮັບໄດ້ (ປະມານ 40% ແລະ 45%) ຍ້ອນວ່າຂະບວນການມີສ່ວນຮ່ວມ ຍັງອາດເປັນແນວຄວາມຄິດອັນ ໃໝ່ສຳລັບຊຸມຊົນ.

- ເພີ່ມທະວີບົດບາດຂອງອຳນາດການປົກຄອງທ້ອງຖິ່ນ ໃນດ້ານການປະສານງານ ແລະ ດ້ານການສະໜັບສະໜູນຊ່ວຍເຫລືອໂຄງການ;
- ເສີມສ້າງຄວາມສາມາດຂອງຊຸມຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ ໃນການວາງແຜນ ແລະ ດຳເນີນກິດຈະກຳການພັດທະນາທ້ອງຖິ່ນ; ແລະ
- ປັບປຸງຄຸນນະພາບຂອງການອອກແບບໂດຍລວມ ແລະ ການຈັດຕັ້ງປະຕິບັດ ແລະ ບຳລຸງຮັກສາໂຄງລ່າງພື້ນຖານຂອງໂຄງການຍ່ອຍ, ລວມເຖິງການອອກແບບເພື່ອຫລຸດຜ່ອນຄວາມສ່ຽງຕໍ່ໄພພິບັດເຂົ້າໃນໂຄງການຍ່ອຍ.

ດ້ວຍປະສົບການທີ່ຜ່ານມາ ໃນການຈັດສັນບ້ານ ແລະ ການລວມບ້ານເຂົ້າກັນ ຈາກນະໂຍບາຍຂອງລັດຖະບານ ແລະ ບັນດາໂຄງການພັດທະນາອື່ນໆ, ຂໍ້ກຳນົດດັ່ງຕໍ່ໄປນີ້ຈະຖືກນຳໃຊ້ກັບໂຄງການ ທລຍ II ເພື່ອຮັບປະກັນຄວາມຍືນຍົງຂອງການລົງທຶນ ຂອງ ທລຍ. ຖ້າຫາກວ່າ, ເປັນຜົນມາຈາກການພັດທະນາ ໂຄງການ, ນະໂຍບາຍການຍົກຍ້າຍຈັດສັນ ຫລື ກິດຈະກຳອື່ນໆທີ່ກ່ຽວຂ້ອງ, ປະຊາຊົນພາຍໃນທ້ອງຖິ່ນຖືກບັງຄັບໃຫ້ຍົກຍ້າຍອອກຈາກໝູ່ບ້ານ ທີ່ ທລຍ ໃຫ້ການສະຫນັບສະຫນູນໂຄງການຍ່ອຍທີ່ໄດ້ຮັບການ ຈັດຕັ້ງປະຕິບັດຢູ່ ແລະ ກາຍເປັນບໍ່ສາມາດທີ່ຈະສືບຕໍ່ການເຂົ້າເຖິງ ຫລື ໄດ້ຮັບຜົນປະໂຫຍດຈາກການລົງທຶນຂອງໂຄງການ ຂອງລັດຖະບານ ແລະ/ຫລື ຜູ້ພັດທະນາໂຄງການອື່ນໆ ຈະຕ້ອງຮັບປະກັນໃຫ້ປະຊາຊົນທີ່ຖືກຍົກຍ້າຍ ສາມາດສືບຕໍ່ຮັບການຊ່ວຍເຫລືອໃນລະດັບ ແລະ ປະເພດດຽວກັນ, ອາດຈະເປັນດ້ານການເງິນ ຫລື ການຊົດເຊີຍດ້ານວັດຖຸ.

<u>ຫລັກການ 3</u>: **ຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບ**

**ຄວາມໂປ່ງໃສທີ່ສົມບູນແບບ ແລະ ຄວາມຮັບຜິດຊອບຂອງທ້ອງຖິ່ນ ເປັນສິ່ງສຳຄັນ ແລະ ຈຳເປັນ.** ກອງປະຊຸມທັງໝົດທີ່ຈັດຂຶ້ນພາຍໃຕ້ໂຄງການ ຂອງ ທລຍ ແມ່ນເປີດກວ້າງຕໍ່ສາທາລະນະ. ສະມາຊິກທຸກຄົນພາຍໃນຊຸມຊົນ ຕ້ອງໄດ້ຮັບຄວາມພໍໃຈ ວ່າທຶນທີ່ໄດ້ຮັບຖືກນຳໃຊ້ຢ່າງຖືກຕ້ອງ ແລະ ພວກເຂົາເຈົ້າມີສິດທີ່ຈະສອບຖາມທຸກໆດ້ານ ກ່ຽວກັບການວາງແຜນໂຄງການຍ່ອຍ ຫລື ການຈັດຕັ້ງປະຕິບັດໃດນຶ່ງ ໃນໄລຍະກອງປະຊຸມປະຈຳ ຫລື ຜ່ານລະບົບກົນໄກການສະແດງຄຳຄິດຄຳເຫັນທີ່ໄດ້ຖືກສ້າງຂຶ້ນເພື່ອການແກ້ໄຂບັນຫາຂອງຊຸມຊົນ. ທຸກຄຳຄິດຄຳເຫັນທີ່ໄດ້ຮັບ ຕ້ອງໄດ້ຮັບການພິຈາລະນາຢ່າງເອົາຈິງເອົາຈັງ ແລະ ກວດສອບໂດຍພະນັກງານ ທລຍ ຜູ້ທີ່ໄດ້ຖືກມອບໝາຍ. ໃນເວລາດຽວກັນ, ຜູ້ທີ່ຖືກຄັດເລືອກ ຕາງໜ້າບ້ານ ແລະ ກຸ່ມບ້ານ ມີໜ້າທີ່ຮັບຜິດຊອບ ຕ້ອງສະໜອງຢ່າງເຕັມທີ່ ແລະ ຈະແຈ້ງ ກ່ຽວກັບການນຳໃຊ້ທຶນໂຄງ ການຍ່ອຍທີ່ໄດ້ຮັບດັ່ງກ່າວ.

<u>ຫລັກການ 4</u>: **ການລົງທຶນທີ່ຄຸ້ມຄ່າ**

**ຈະຕ້ອງມີຄວາມພະຍາຍາມ ເພື່ອໃຫ້ໄດ້ນຳໃຊ້ຊັບພະຍາກອນທີ່ເໝາະສົມ ຂອງ ທລຍ ເພື່ອຮັບປະກັນໃຫ້ສາມາດກວມເອົາສິ່ງທີ່ເປັນໄປໄດ້ຢ່າງກວ້າງຂວາງ.** ຊັບພະຍາກອນ ຂອງ ທລຍ ສ່ວນຫລາຍໂດຍລວມ ຕ້ອງນຳໃຊ້ເຂົ້າໃນການລົງທຶນ ຢູ່ຂັ້ນກຸ່ມບ້ານ ແລະ ຂັ້ນບ້ານ.

**ການດຳເນີນການແຂ່ງຂັນການປະມູນຈັດຊື້ ຕ້ອງຮັບປະກັນໃຫ້ໄດ້ລາຄາທີ່ດີທີ່ສຸດ ສຳລັບວັດສະດຸ.** ດ້ານມາດຕະຖານການອອກແບບ ແລະ ການຄິດໄລ່ມູນຄ່າ ຕ້ອງຮັບປະກັນຕໍ່ຄວາມທົນທານຂອງໂຄງສ້າງດ້ານໂຄງລ່າງພື້ນຖານ ປັດສະຈາກຜົນກະທົບຕໍ່ຄຸນນະພາບທາງດ້ານເຕັກນິກ. ຄ່າໃຊ້ຈ່າຍໃນການຄຸ້ມຄອງ ແລະ ການບໍລິຫານ ຂອງ ທລຍ ທັງໝົດ ຈະຕ້ອງບໍ່ສູງ ເພື່ອຮັບປະກັນໃຫ້ທຶນສ່ວນໃຫ່ຍຂອງໂຄງການ ຖືກເບີກຈ່າຍລົງຫາກຸ່ມບ້ານ ແລະ ບ້ານ.

ເພື່ອຮັບປະກັນໃຫ້ຄ່າໃຊ້ຈ່າຍສຳລັບໂຄງການຍ່ອຍ ມີປະສິດທິຜົນ ແລະ ຊຸມຊົນໄດ້ຮັບສິດຢ່າງເຕັມທີ່ໃນການຄວບຄຸມຄ່າໃຊ້ຈ່າຍນັ້ນ, ທລຍ ໄດ້ສົ່ງເສີມວິທີການປະມູນຈັດຊື້ ນຳໃຊ້ຮູບແບບບໍລິຫານການເງິນໂດຍຊຸມຊົນ ຢູ່ທຸກບ່ອນທີ່ເປັນໄປໄດ້.

## <u>ຫລັກການ 5</u>: ການເຂົ້າຮ່ວມຈາກທຸກພາກສ່ວນໃນຊຸມຊົນ ແລະ ຄວາມສະເໝີພາບຍິງ-ຊາຍ

**ສະມາຊິກທຸກຄົນ ພາຍໃນຊຸມຊົນ ຕ້ອງໄດ້ເຂົ້າຮ່ວມໃນກິດຈະກຳ ຂອງ ທລຍ ໂດຍບໍ່ຈຳແນກເພດ ຫລື ຊົນເຜົ່າ, ຄົນພິການ, ຫລື ຜູ້ອາຍຸສູງ.** ຄວາມພະຍາຍາມສະເພາະ ຈະໄດ້ຮັບການເອົາໃຈໃສ່ ເພື່ອໄປເຖິງກຸ່ມສ່ຽງທີ່ສຸດຂອງຊຸມຊົນ (ລວມທັງຄົວເຮືອນທີ່ມີຜູ້ດຽວ, ກຸ່ມຊົນເຜົ່າ, ຄົວເຮືອນທີ່ມີຄົນພິການ, ຄົວເຮືອນທີ່ບໍ່ມີດິນເປັນຂອງຕົນເອງ, ແລະ ເດັກໄວໜຸ່ມ). ມາດຕະການທີ່ຕັ້ງໜ້າ, ລວມທັງລະບົບກົນໄກການປະຕິບັດ ເປັນການຍືນຍັນ ຖືກນຳມາປະຕິບັດ ເພື່ອແກ້ໄຂອຸປະສັກດ້ານພາສາ, ດ້ານຄວາມແຕກຕ່າງກັນທາງດ້ານບົດບາດຍິງ-ຊາຍ ແລະ ສິ່ງກີດຂວາງດ້ານເສດຖະກິດວັດທະນະທຳອື່ນໆ. ຊົນເຜົ່າສ່ວນນ້ອຍ, ກຸ່ມສ່ຽງ, ຜູ້ພິການ, ແລະ ແມ່ຍິງ ແມ່ນສົ່ງເສີມໂດຍສະເພາະ ໃຫ້ເຂົ້າຮ່ວມໃນກອງປະຊຸມ ແລະ ກິດຈະກຳຕ່າງໆ ຂອງ ທລຍ (ລາຍລະອຽດ ຂອງຫລັກການສຳຄັນການປະຕິບັດບົດບາດຍິງ-ຊາຍ ແມ່ນຄັດຕິດຢູ່ໃນເອກະສານຊ້ອນທ້າຍ 2).

**ທລຍ ໃຫ້ຄຳໝັ້ນສັນຍາຮັບປະກັນວ່າ ແມ່ຍິງ ແມ່ນມີສ່ວນຮ່ວມຢ່າງເຕັມທີ່ ແລະ ເປັນຜູ້ທີ່ໄດ້ຮັບປະໂຫຍດໃນໂຄງການ.** ຄວາມພະຍາຍາມສະເພາະ ຕ້ອງໄດ້ປະຕິບັດຢູ່ໃນໄລຍະຂັ້ນຕອນການວາງແຜນ ແລະ ການຈັດຕັ້ງປະຕິບັດ ເພື່ອສາມາດໃຫ້ໄດ້ສຽງຂອງແມ່ຍິງ ເຂົ້າໃນການສະເໜີ, ຈັດລຽງບູລິມະສິດ ແລະ ຈັດຕັ້ງປະຕິບັດບັນດາໂຄງການຍ່ອຍ.

**ທລຍ ສົ່ງເສີມ ແລະ ເຮັດໃຫ້ມີການເຂົ້າຮ່ວມການເຄື່ອນໄຫວ ແລະ ການປະກອບສ່ວນ ໂດຍປະຊາຊົນຜູ້ທີ່ພິການ ໃນທຸກຮອບວຽນ ຂອງໂຄງການ.** ໂຄງການຮັບປະກັນວ່າ ຄວາມຄິດເຫັນ ແລະ ຄວາມຕ້ອງການ ທີ່ກ່ຽວຂ້ອງກັບປະຊາຊົນຜູ້ທີ່ພິການ ແມ່ນໄດ້ເອົາລວມເຂົ້າໄວ້ໃນແຜນ ແລະ ການອອກແບບໂຄງການຍ່ອຍ ຂອງ ທລຍ ແລະ ໂຄງການຍ່ອຍດັ່ງກ່າວນັ້ນ ແມ່ນມີຜົນປະໂຫຍດເທົ່າທຽມກັນ ແລະ ສາມາດເຂົ້າເຖິງສະມາຊິກທຸກຄົນ ພາຍໃນຊຸມຊົນ.

**ຜົນປະໂຫຍດຂອງເດັກນ້ອຍ ແລະ ຄວາມຄາດຫວັງທີ່ຈະໄດ້ການຍອມຮັບ ໃນໄລຍະການວາງແຜນ, ການອອກແບບ, ແລະ ການຈັດຕັ້ງປະຕິບັດໂຄງການຍ່ອຍ.** ໂຄງການສົ່ງເສີມຄວາມຮັບຜິດຊອບຮ່ວມກັນ ສໍາລັບການປົກປ້ອງເດັກ ໃນການຄຸ້ມຄອງ ແລະ ການຫລຸດຜ່ອນຄວາມສ່ຽງຕໍ່ກັບການທາລຸນເດັກນ້ອຍ ທີ່ກ່ຽວຂ້ອງກັບກິດຈະກໍາ ຂອງ ທລຍ ແລະ ຮຽກຮ້ອງໃຫ້ມີການສະຫນັບສະຫນູນໃນການເຄື່ອນໄຫວ ແລະ ການຮ່ວມມືຂອງຜູ້ຮັບເໝົາ ແລະ ພາກສ່ວນກ່ຽວຂ້ອງທີ່ຈັດຕັ້ງປະຕິບັດກິດຈະກໍາຂອງໂຄງການ. ຜູ້ຮັບເໝົາ ຕ້ອງຕອບສະໜອງຕາມເງື່ອນໄຂ ຂອງນະໂຍບາຍການປົກປ້ອງເດັກ ແລະ ຈະຕ້ອງໄດ້ຮັບຜິດຊອບ ໂດຍຜ່ານການເຮັດສັນຍາ ແລະ ການກວດກາ, ສໍາລັບການດໍາເນີນຕາມເງື່ອນໄຂດັ່ງກ່າວ[4].

## <u>ຫລັກການ 6</u>: **ຢູ່ຄຽງຂ້າງຜູ້ທຸກຍາກ**

ກອງທຶນຫລຸດຜ່ອນຄວາມທຸກຍາກ, ພະນັກງານຂອງ ທລຍ ແລະ ຜູ້ອໍານວຍຄວາມສະດວກທຸກຄົນ ແມ່ນເປົ້າໝາຍເພື່ອຜູ້ທຸກຍາກທີ່ສຸດ. ດັ່ງນັ້ນ, ສໍາລັບການວາງແຜນ ແລະ ການຈັດຕັ້ງປະຕິບັດກິດຈະກໍາ ໃນແຕ່ລະຂະບວນການ ແລະ ໃນທຸກຂັ້ນຕອນ ແມ່ນມອບບູລິມະສິດໃນການຕັດສິນໃຫ້ແກ່ປະຊາຊົນຜູ້ທີ່ທຸກຍາກພາຍໃນຊຸມຊົນ. ໃນໄລຍະການກະກຽມຮ່າງແຜນການພັດທະນາກຸ່ມບ້ານ, ພະນັກງານ ທລຍ ທີ່ເຂົ້າຮ່ວມຂະບວນການ ຕ້ອງຮັບປະກັນວ່າ ຢ່າງຫນ້ອຍ 66% ຂອງໂຄງການຍ່ອຍ ຕ້ອງຕັ້ງຢູ່ໃນບ້ານທີ່ທຸກຍາກທີ່ສຸດ ພາຍໃນກຸ່ມບ້ານ. ຜູ້ອໍານວຍຄວາມສະດວກ ແລະ ຊ່ຽວຊານທີ່ປຶກສາ ແມ່ນຕີລາຄາບົນພື້ນຖານຫລັກການ: ເງື່ອນໄຂຂໍ້ກໍານົດຂອງເຂົາເຈົ້າຢູ່ເຂດຊົນນະບົດທີ່ທຸກຍາກ.

[4] ຕາມສົນທິສັນຍາ ຂອງ ສປຊ ວ່າດ້ວຍສິດທິຂອງເດັກນ້ອຍ, 'ເດັກນ້ອຍ' ຫມາຍຄວາມວ່າ ມະນຸດທຸກຄົນທີ່ມີອາຍຸຕໍ່າກວ່າ 18 ປີ ເວັ້ນເສຍແຕ່ກົດຫມາຍທີ່ນໍາໃຊ້ບັງຄັບແກ່ເດັກນ້ອຍ ສ່ວນໃຫ່ຍຈະລະບຸກ່ອນໜ້ານີ້.

## ຕາຕະລາງສະແດງວົງຈອນ 1:   6 ຫລັກການ ຂອງ ທລຍ

**6 ຫລັກການ ຂອງ ທລຍ**

1) ຄວາມງ່າຍດາຍ;
2) ການມີສ່ວນຮ່ວມຂອງຊຸມຊົນ ແລະ ຄວາມຍືນຍົງ;
3) ຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບ;
4) ການລົງທຶນທີ່ຄຸ້ມຄ່າ;
5) ການເຂົ້າຮ່ວມຈາກທຸກພາກສ່ວນໃນຊຸມຊົນ ແລະ ຄວາມສະເໝີພາບຍິງ-ຊາຍ;
6) ຢູ່ຄຽງຂ້າງຜູ້ທຸກຍາກ.



# 3 ການຈັດຕັ້ງ ແລະ ໂຄງປະກອບການຈັດຕັ້ງແຕ່ລະຂັ້ນ

## 3.1 ການຈັດຕັ້ງຂອງກອງທຶນຫລຸດຜ່ອນຄວາມທຸກຍາກ

**ຮູບແບບການຈັດຕັ້ງຂອງ ທລຍ ແມ່ນການແບ່ງຄວາມຮັບຜິດຊອບ ແລະ ມອບສິດຢ່າງກວ້າງຂວາງ ແລະ ທົ່ວເຖິງໃຫ້ແກ່ຂັ້ນທ້ອງຖິ່ນ ນັບແຕ່ຂັ້ນບ້ານ ຈົນເຖິງຂັ້ນສູນກາງ ຊຶ່ງວຽກສ່ວນໃຫຍ່ຈະຖືກຈັດຕັ້ງປະຕິບັດຢູ່ຂັ້ນບ້ານ ແລະ ກຸ່ມບ້ານ.** ໂດຍໄດ້ຮັບການຊີ້ນຳນຳພາ ແລະ ຕິດຕາມຈາກທີມງານຂັ້ນສູນກາງ ແລະ ແຂວງ ເພື່ອລາຍງາຍຫາຜູ້ອຳນວຍການບໍລິຫານ. ການຈັດຕັ້ງແບບກະຈາຍບົດບາດ, ສິດ ແລະ ໜ້າທີ່ຂອງ ທລຍ ກໍ່ແມ່ນເພື່ອຊ່ວຍເຫລືອຊຸມຊົນໃຫ້ເຂົາເຈົ້າສາມາດວາງແຜນ ແລະ ຈັດຕັ້ງປະຕບັດກິດຈະກຳຂອງເຂົາເຈົ້າເອງໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

### 3.1.1 ສະພາບໍລິຫານ ທລຍ

ສະພາບໍລິຫານ ຂອງ ທລຍ ປະກອບມີ ລັດຖະມົນຕີ, ລັດຖະມົນຕີຊ່ວຍ ແລະ ຜູ້ຕາງໜ້າຈາກພາກສ່ວນຕ່າງໆ ດັ່ງລຸມນີ້:

- ລັດຖະມົນຕີປະຈຳຫ້ອງວ່າການລັດຖະບານ, ຫົວໜ້າຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ ເປັນປະທານ;
- ລັດຖະມົນຕີຊ່ວຍວ່າການກະຊວງການເງິນ ເປັນຮອງປະທານ;
- ລັດຖະມົນຕີຊ່ວຍວ່າການກະຊວງແຜນການ ແລະ ການລົງທຶນ ເປັນຮອງປະທານ;
- ຜູ້ຕາງໜ້າຈາກທະນາຄານແຫ່ງ ສປປ ລາວ ເປັນກຳມະການ;
- ຜູ້ຕາງໜ້າຈາກສູນກາງແນວລາວສ້າງຊາດ ເປັນກຳມະການ;
- ຜູ້ຕາງໜ້າຈາກສະຫະພັນແມ່ຍິງລາວ ເປັນກຳມະການ;
- ຜູ້ຕາງໜ້າຈາກສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເປັນກຳມະການ;
- ຜູ້ຊົງຄຸນວຸດທິ ເປັນກຳມະການ;
- ຮອງເຈົ້າແຂວງ ແຂວງທີ່ ທລຍ ຈັດຕັ້ງປະຕິບັດໂຄງການ ເປັນກຳມະການ;
- ຜູ້ຕາງໜ້າກະຊວງກະສິກຳ ແລະ ປ່າໄມ້ ເປັນກຳມະການ;
- ຜູ້ຕາງໜ້າກະຊວງສຶກສາທິການ ແລະ ກິລາ ເປັນກຳມະການ;
- ຜູ້ຕາງໜ້າກະຊວງສາທາລະນະສຸກ ເປັນກຳມະການ;
- ຜູ້ຕາງໜ້າກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນກຳມະການ;
- ຜູ້ຕາງໜ້າກະຊວງໂຍທາທິການ ແລະ ຂົນສົ່ງ ເປັນກຳມະການ;
- ຜູ້ຕາງໜ້າກະຊວງການຕ່າງປະເທດ ເປັນກຳມະການ;
- ຜູ້ຕາງໜ້າກະຊວງອຸດສາຫະກຳ ແລະ ການຄ້າ ເປັນກຳມະການ;
- ຜູ້ຕາງໜ້າກະຊວງພະລັງງານ ແລະ ບໍ່ແຮ່ ເປັນກຳມະການ;
- ຜູ້ຕາງໜ້າອົງການຈັດຕັ້ງສັງຄົມ ເປັນກຳມະການ.

ສະພາບໍລິຫານ ທລຍ ມີໜ້າທີ່ຈັດຕັ້ງປະຕິບັດວຽກງານທີ່ສຳຄັນຕ່າງໆ ດັ່ງລຸ່ມນີ້:

- ພິຈາລະນາ ແລະ ຮັບຮອງເອົາລະບຽບ ແລະ ນະໂຍບາຍ ລວມທັງຄູ່ມືຈັດຕັ້ງປະຕິບັດໂຄງການ;
- ຮັບຮອງເອົາ, ຕິດຕາມ ແລະ ປະເມີນແຜນວຽກ, ບົດລາຍງານການທາງດ້ານການເງິນ ແລະ ຄວາມຄືບໜ້າຂອງໂຄງການ;
- ຊີ້ນຳທີມງານບໍລິຫານໂຄງການ ທລຍ ເພື່ອຮັບປະກັນຄວາມຖືກຕ້ອງ ແລະ ສອດຄ່ອງກັນ ລະຫວ່າງດຳລັດຕ່າງໆຂອງລັດຖະບານ ແລະ ຄູ່ມືຈັດຕັ້ງປະຕິບັດໂຄງການ;
- ລະດົມທຶນ ເພື່ອປະກອບສ່ວນເຂົ້າໃນວຽກງານ ຂອງ ທລຍ.

### 3.1.2 ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ.

ກຳມະການຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ (ຄພທສ) ປະກອບມີດັ່ງນີ້:

- ຮອງນາຍົກລັດຖະມົນຕີ, ຜູ້ປະຈຳການລັດຖະບານ ເປັນຜູ້ຊີ້ນຳລວມວຽກງານຂອງຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ;
- ລັດຖະມົນຕີປະຈຳຫ້ອງວ່າການລັດຖະບານ ເປັນຫົວໜ້າຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ;
- ລັດຖະມົນຕີຊ່ວຍ, ຮອງຫົວໜ້າຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ;
- ລັດຖະມົນຕີຊ່ວຍວ່າການກະຊວງແຜນການ ແລະ ການລົງທຶນ;
- ລັດຖະມົນຕີຊ່ວຍວ່າການກະຊວງກະສິກຳ ແລະ ປ່າໄມ້;
- ລັດຖະມົນຕີຊ່ວຍວ່າການກະຊວງສຶກສາທິການ;
- ລັດຖະມົນຕີຊ່ວຍວ່າການກະຊວງສາທາລະນະສຸກ;
- ລັດຖະມົນຕີຊ່ວຍວ່າການກະຊວງໂຍທາທິການ ແລະ ຂົນສົ່ງ;
- ລັດຖະມົນຕີຊ່ວຍວ່າການກະຊວງອຸດສາຫະກຳ ແລະ ການຄ້າ;
- ລັດຖະມົນຕີຊ່ວຍວ່າການກະຊວງພະລັງງານ ແລະ ບໍ່ແຮ່;
- ລັດຖະມົນຕີຊ່ວຍວ່າການກະຊວງການເງິນ;
- ລັດຖະມົນຕີຊ່ວຍວ່າການກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
- ລັດຖະມົນຕີຊ່ວຍວ່າການກະຊວງຖະແຫລງຂ່າວ ແລະ ວັດທະນະທຳ;
- ຮອງຫົວໜ້າທະນາຄານແຫ່ງ ສປປ ລາວ;
- ຮອງປະທານແນວລາວສ້າງຊາດ;
- ຮອງປະທານສະຫະພັນແມ່ຍິງລາວ;
- ຮອງປະທານສະຫະພັນກຳມະບານລາວ;
- ຮອງເລຂາທິການຊາວໜຸ່ມປະຊາຊົນປະຕິວັດລາວ;

- ຮອງປະທານອົງການຄຸ້ມຄອງທີ່ດິນແຫ່ງຊາດ;
- ຮອງປະທານອົງການບໍລິຫານລັດ ແລະ ບໍລິການພົນລະເມືອງ;
- ຮອງປະທານກຳມະການຄວບຄຸມ ແລະ ປາບປາມຢາເສບຕິດແຫ່ງຊາດ;
- ຮອງຫົວໜ້າອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ.

ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ມີໜ້າທີ່ຈັດຕັ້ງປະຕິບັດວຽກງານສຳຄັນຕ່າງໆ ດັ່ງລຸ່ມນີ້:

- ເປັນເສນາທິການຊ່ວຍລັດຖະບານ ໃນການປະສານງານກັບບັນດາກະຊວງ ແລະ ແຂວງທີ່ກ່ຽວຂ້ອງ ແລະ ຊີ້ນຳນຳພາກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຢູ່ທົ່ວປະເທດ;
- ກຳນົດແນວທາງນະໂຍບາຍ, ແຜນຍຸດທະສາດ ແລະ ໂຄງການພັດທະນາ ແລະ ສົ່ງຫາກະຊວງແຜນການ ແລະ ການລົງທຶນ ເພື່ອພິຈາລະນາ ແລະ ເອົາເຂົ້າໃນແຜນລວມຂອງຂອບເຂດທົ່ວປະເທດ;
- ອຳນວຍຄວາມສະດວກ, ຕິດຕາມ ແລະ ປະເມີນບັນດາໂຄງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ໃນຂອບເຂດທົ່ວປະເທດ;
- ປະສານງານກັບອົງການຈັດຕັ້ງສາກົນ, ສະຖາບັນການເງິນ ແລະ ອົງການບໍ່ສັງກັດລັດຖະບານ ເພື່ອຕິດຕາມການລະດົມທຶນຊ່ວຍເຫລືອ ແລະ ດ້ານເຕັກນິກວິຊາການ ສຳລັບວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ແລະ ວຽກງານອື່ນໆຢູ່ຂົງເຂດຊົນນະບົດ;
- ກະກຽມຮ່າງນະໂຍບາຍທີ່ເປັນໄປໄດ້ ເພື່ອກະຕຸກຊຸກຍູ້ ແລະ ດຶງດູດທຶນຊ່ວຍເຫລືອຈາກພາຍໃນ ແລະ ຕ່າງປະເທດ ເພື່ອສົ່ງເສີມວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ແລະ ໂຄງການອື່ນໆທີ່ຢູ່ເຂດຫ່າງໄກສອກຫລີກ;
- ຕິດຕາມບັນດາໂຄງການພັດທະນາຊົນນະບົດ ເຊັ່ນ: ໂຄງການຢຸດຕິການເຮັດໄຮ່ແບບເລື່ອນລອຍ, ໂຄງການຫລຸດຜ່ອນຄວາມທຸກຍາກ ແລະ ອື່ນໆ;
- ສະໜອງການຝຶກອົບຮົມໃຫ້ແກ່ພະນັກງານພັດທະນາຊົນນະບົດ ໃນຂອບເຂດທົ່ວປະເທດ ເພື່ອເສີມສ້າງຄວາມເຂັ້ມແຂງໃຫ້ເຂົາເຈົ້າ ກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ;
- ລາຍງານທານາຍົກລັດຖະມົນຕີ ກ່ຽວກັບຄວາມຄືບໜ້າຂອງວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ໃນຂອບເຂດທົ່ວປະເທດ ເປັນແຕ່ລະໄລຍະ.

ບັນດາຄູ່ຮ່ວມມືພາກລັດຖະບານ ຢູ່ແຕ່ລະຂັ້ນ ຂອງໂຄງສ້າງ ທລຍ ໄດ້ສະແດງຢູ່ຕາຕະລາງທີ 2.

## ຕາຕະລາງ 2: ຄູ່ຮ່ວມມືພາກລັດຖະບານ ຂອງ ທລຍ

**ສະພາບໍລິຫານ ທລຍ**

**ທລຍ ຂັ້ນສູນກາງ ລັດຖະບານ**

| ທລຍ | ລັດຖະບານ |
|---|---|
| - ອຳນວຍການບໍລິຫານ**<br>- ຮອງອຳນວຍການ**<br>- ພະແນກບໍລິຫານ-ການເງິນ**<br>- ພະແນກວິສະວະກຳ**<br>- ພະແນກພັດທະນາຊຸມຊົນ**<br>- ພະແນກຕິດຕາມ-ປະເມີນຜົນ**<br>- ໜ່ວຍງານຈັດຕັ້ງ**<br>- ໜ່ວຍງານກວດກາພາຍໃນ** | - ຄພທສ<br>- ກະຊວງແຜນການ ແລະ ການລົງທຶນ<br>- ກະຊວງການເງິນ<br>- ກະຊວງສຶກສາທິການ<br>- ກະຊວງໂຍທາທິການ ແລະ ຂົນສົ່ງ<br>- ກະຊວງກະສິກຳ ແລະ ປ່າໄມ້<br>- ກະຊວງສາທາລະນະສຸກ<br>- ອົງການຈັດຕັ້ງສັງຄົມ (ແມ່ຍິງ, ແນວລາວສ້າງຊາດ, ຊາວໜຸ່ມ) |

**ທລຍ ຂັ້ນແຂວງ ລັດຖະບານ**

| ທລຍ | ລັດຖະບານ |
|---|---|
| - ປະສານງານແຂວງ**<br>- ບໍລິຫານ-ການເງິນ**<br>- ຈັດຊື້-ຈັດຈ້າງ**<br>- ວິສະວະກຳ**<br>- ພັດທະນາຊຸມຊົນ**<br>- ຕິດຕາມ-ປະເມີນຜົນ**<br>- ເລຂານຸການ/ຄັງເງິນສົດ** | - ເຈົ້າແຂວງ ຫລື ຮອງເຈົ້າແຂວງ<br>- ຕາງໜ້າຈາກ ຄພທສ<br>- ຕາງໜ້າຈາກແຂວງ<br>- ພະແນກການກ່ຽວຂ້ອງອື່ນໆ<br>- ອົງການຈັດຕັ້ງສັງຄົມ (ແມ່ຍິງ, ແນວລາວສ້າງຊາດ, ຊາວໜຸ່ມ) |

**ທລຍ ຂັ້ນເມືອງ ລັດຖະບານ**

| ທລຍ | ລັດຖະບານ |
|---|---|
| - ບໍລິຫານ-ການເງິນ**<br>- ວິສະວະກຳ**<br>- ພັດທະນາຊຸມຊົນ** | - ປະສານງານຂັ້ນເມືອງ<br>- ເຈົ້າເມືອງ ຫລື ຮອງເຈົ້າເມືອງ<br>- ຕາງໜ້າຈາກ ຄພທສ<br>- ຕາງໜ້າຈາກເມືອງ<br>- ຂະແໜງການກ່ຽວຂ້ອງອື່ນໆ<br>- ອົງການຈັດຕັ້ງສັງຄົມ (ແມ່ຍິງ, ແນວລາວສ້າງຊາດ, ຊາວໜຸ່ມ) |

| ທລຍ | ຂັ້ນກຸ່ມບ້ານ | ລັດຖະບານ |
| --- | --- | --- |

- ປະສານງານກຸ່ມບ້ານ
- ຕົວແທນກຸ່ມບ້ານ***
- ທີມງານຮັບການສະແດງຄຳຄິດເຫັນ***

- ຄະນະກຳມະການຂັ້ນກຸ່ມ

| ທລຍ | ຂັ້ນບ້ານ | ລັດຖະບານ |
| --- | --- | --- |

- ຕົວແທນບ້ານ***
- ປະສານງານຈັດຕັ້ງປະຕິບັດ***
- ປະສານງານການເງິນ***
- ປະສານງານຈັດຊື້-ຈັດຈ້າງ***
- ທີມງານຮັບການສະແດງຄຳຄິດເຫັນ***

- ນາຍບ້ານ
- ຫົວໜ້າໜ່ວຍບ້ານ
- ອົງການຈັດຕັ້ງສັງຄົມ (ແມ່ຍິງ, ແນວລາວສ້າງຊາດ, ຊາວໜຸ່ມ)

*ພະນັກງານລັດ, **ພະນັກງານ ທລຍ, ***ອາສາສະໝັກ

### 3.2 ສາຍພົວພັນຫລັກ ທາງດ້ານຄວາມຮັບຜິດຊອບ



**ໂດຍຜ່ານການປຶກສາຫາລືກັບກັບຜູ້ໃຫ້ທຶນ, ສະພາບໍລິຫານ ທລຍ ເປັນຜູ້ຄັດເລືອກ ແລະ ແຕ່ງຕັ້ງຜູ້ອຳນວຍການບໍລິຫານ ທລຍ.** ຜູ້ອຳນວຍການມີໜ້າທີ່ຮັບຜິດຊອບວຽກບໍລິຫານໂຄງການໂດຍລວມ, ການຈັດຕັ້ງປະຕິບັດໂຄງການ ແລະ ພະນັກງານ ລວມທັງຫ້ອງການ ຂອງ ທລຍ ຢູ່ແຕ່ລະຂັ້ນ. ຜູ້ອຳນວຍການຮັບຜິດຊອບໃນການລາຍງານການດຳເນີນວຽກ ຂອງ ທລຍ ໃຫ້ລັດຖະບານ ກໍ່ຄືສະພາບໍລິຫານ ທລຍ ແລະ ບັນດາອົງການໃຫ້ທຶນຕ່າງໆ ເປັນແຕ່ລະໄລຍະ, ຊຶ່ງວຽກຕ່າງໆຂອງຜູ້ອຳນວຍການນັ້ນ ຈະມີຮອງຜູ້ອຳນວຍການເປັນຜູ້ຊ່ວຍວຽກຕາມຄວາມເໝາະສົມ.

**ພະນັກງານຈັດຕັ້ງປະຕິບັດໂຄງການ ທລຍ ທີ່ປະຈຳຢູ່ຫ້ອງການສູນກາງ, ແຂວງ ແລະ ເມືອງ ແມ່ນເປັນພະນັກງານທີ່ເຮັດວຽກເຕັມເວລາ ຊຶ່ງໄດ້ຮັບການວ່າຈ້າງ ແລະ ຢູ່ພາຍໃຕ້ການຄຸ້ມຄອງບໍລິຫານຂອງຜູ້ອຳນວຍການ.** ພະນັກງານ ທລຍ ມີໜ້າທີ່ໃນການຄຸ້ມຄອງບໍລິຫານວຽກ, ຈັດຕັ້ງປະຕິບັດໂຄງການຍ່ອຍ ແລະ ດຳເນີນວຽກງານອື່ນໆຂອງໂຄງການຢ່າງມີຄຸນນະພາບ. ພະນັກງານຢູ່ຂັ້ນສູນກາງ, ແຂວງ ແລະ ເມືອງ ມີໜ້າທີ່ລາຍງານຫາຫົວໜ້າສາຍການຈັດຕັ້ງໂດຍກົງຂອງເຂົາເຈົ້າທັນທີ (ເອກະສານຊ້ອນທ້າຍ 3) ແລະ ພ້ອມດຽວກັນກໍ່ມີການລາຍງານຫາຜູ້ອຳນວຍການຕາມລຳດັບ. ຜູ້ອຳນວຍການບໍລິຫານ ອາດຈະວ່າຈ້າງທີ່ປຶກສາແບບເຕັມເວລາ ຫລື ບໍ່ເຕັມເວລາ ເພື່ອປະຕິບັດວຽກງານເພີ້ມເຕີມອື່ນໆເຊັ່ນ: ການຝຶກອົບຮົມ, ການສຶກສາເຕັກນິກວິຊາການສະເພາະດ້ານ ແລະ ກວດກາແບບເອກະລາດຕາມຄວາມຮຽກຮ້ອງຕ້ອງການ.

**ຕົວແທນຂັ້ນບ້ານເຮັດວຽກຢ່າງໃກ້ຊິດກັບພະນັກງານ ທລຍ ແຕ່ເຂົາເຈົ້າບໍ່ຖືວ່າແມ່ນພະນັກງານ ຫລື ທີ່ປຶກສາຂອງ ທລຍ.** ຕົວແທນບ້ານຈະບໍ່ໄດ້ມີການລາຍງານ ຫລື ກວດກາວຽກຢ່າງເປັນທາງການກັບພະນັກງານຈັດຕັ້ງປະຕິບັດໂຄງການ ທລຍ.

### 3.3 ກອງປະຊຸມປະຈຳປີກັບຜູ້ໃຫ້ທຶນ

**ຕາມປົກກະຕິແລ້ວ ກອງປະຊຸມສະພາບໍລິຫານ ທລຍ ຈະຈັດຂື້ນລະຫວ່າງເດືອນ ມີນາ ຂອງແຕ່ລະປີ.** ຊຶ່ງກ່ອນຈະຮອດກອງປະຊຸມດັ່ງກ່າວ ປະທານສະພາບໍລິຫານ ທລຍ ເປັນຜູ້ຮັບຜິດຊອບຈັດຕັ້ງກອງປະຊຸມ ລະຫວ່າງຜູ້ຕາງໜ້າສະພາບໍລິຫານ ທລຍ, ຜູ້ອຳນວຍການບໍລິຫານ, ແລະ ຜູ້ຕາງໜ້າໂຄງການ ທລຍ, ຜູ້ໃຫ້ທຶນ ແລະ ຜູ້ຕາງໜ້າຈາກບັນດາກະຊວງກ່ຽວຂ້ອງ. ຈຸດປະສົງຂອງກອງປະຊຸມ ແມ່ນເພື່ອເປີດໂອກາດໃຫ້ຜູ້ເຂົ້າຮ່ວມໄດ້ມີການແລກປ່ຽນຄວາມຄິດເຫັນ ກ່ຽວກັບຍຸດທະສາດ ແລະ ນະໂຍບາຍຂອງ ທລຍ, ບັນຫາການຈັດຕັ້ງປະຕິບັດ ແລະ ນະໂຍບາຍການລຶບລ້າງຄວາມທຸກຍາກ ຢູ່ໃນ ສປປ ລາວ ກ່ອນຈະມີການຕັດສິນໃຈ ແລະ ກຳນົດທິດທາງຍຸດທະສາດຢູ່ໃນກອງປະຊຸມສະພາບໍລິຫານປະຈຳປີ ພ້ອມດຽວກັນ ກໍ່ຍັງມີການປຶກສາຫາລືກ່ຽວກັບຜົນສຳເລັດ ແລະ ບັນຫາທີ່ພົບພໍ້ໃນປີຜ່ານມາ ແລະ ຄາດໝາຍໃນປີຕໍ່ໜ້າ. ບັນດາຜູ້ໃຫ້ທຶນຍັງສາມາດປຶກສາຫາລືເພີ້ມເຕີມ ກ່ຽວກັບນະໂຍບາຍຕ່າງໆຮ່ວມກັບປະທານ ແລະ ກຳມະການສະພາບໍລິຫານ ທລຍ ຕາມຄວາມຈຳເປັນ.

## 3.4 ການປະສານງານກັບລັດຖະບານ ສປປ ລາວ

**ເນື່ອງຈາກວ່າ ທລຍ ເປັນໂຄງການຮ່ວມມືຂອງຫລາຍພາກສ່ວນ ທີ່ຈັດຕັ້ງປະຕິບັດວຽກຢູ່ພື້ນທີ່ທຸກຍາກທີ່ສຸດໃນຂອບເຂດທົ່ວປະເທດ, ຈຶ່ງເປັນສິ່ງສຳຄັນສຳລັບ ທລຍ ທີ່ຈະຕ້ອງໄດ້ປະສານສົມທົບ ແລະ ຮ່ວມມືກັບບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງຂອງພາກລັດ.** ແລະໃນທາງດຽວກັນ ເມື່ອ ທລຍ ຈັດຕັ້ງປະຕິບັດຍຸດທະສາດການພັດທະນາ ແລະ ຫລຸດຜ່ອນຄວາມທຸກຍາກຢ່າງມີຜົນສຳເລັດ ກໍ່ຈະເປັນການສົ່ງເສີມນະໂຍບາຍ ແລະ ແລກປ່ຽນບົດຮຽນ ແລະ ວິທີການຈັດຕັ້ງປະຕິບັດທີ່ດີຂອງລັດຖະບານ.

**ອຳນາດການປົກຄອງຂອງລັດ ເປັນຕົ້ນແມ່ນຢູ່ຂັ້ນແຂວງ ແລະ ເມືອງ ມີໜ້າທີ່ຮັບປະກັນການປະສານງານຂອງກິດຈະກຳ ທລຍ ກັບ ພາກສ່ວນກ່ຽວຂ້ອງທັງໝົດຂອງລັດ.** ພະນັກງານ ທລຍ ຈະເປັນຜູ້ແຈ້ງ ແລະ ປຶກສາຫາລືກັບອຳນາດການປົກຄອງຂອງລັດເປັນແຕ່ລະໄລຍະ ຫລື ເມື່ອເວລາທີ່ມີກິດຈະກຳອື່ນໆທີ່ກ່ຽວຂ້ອງ ຂອງ ທລຍ. ທັງນີ້ກໍ່ເພື່ອຫລີກເວັ້ນ ການຊ້ຳຊ້ອນກັນໃນວຽກງານຫລຸດຜ່ອນຄວາມທຸກຍາກ ເພື່ອນຳໃຊ້ຊັບພະຍາກອນໃຫ້ເກີດປະໂຫຍດສູງສຸດ ແລະ ຮັບປະກັນຜົນກະທົບຂອງໂຄງການຍ່ອຍໃຫ້ມີຄວາມຍືນຍົງຫລາຍທີ່ສຸດ.

**ຄວາມຄາດຫວັງຂອງໂຄງການ ແມ່ນເພື່ອປະກອບສ່ວນເຂົ້າໃນການພັດທະນາຂະບວນການວາງແຜນໃນຮູບແບບດຽວກັນ ໂດຍການລວມເອົາການວາງແຜນແບບມີສ່ວນຮ່ວມຂອງ ທລຍ ເຂົ້າຢູ່ໃນການວາງແຜນລວມຂອງລັດຖະບານ.** ຊຶ່ງເມື່ອເຮັດໄດ້ຄືແນວນັ້ນ ລັດຖະບານ ສປປ ລາວ ຈະໝັ້ນໃຈໄດ້ໃນຂະບວນການວາງແຜນຮູບແບບດຽວກັນທີ່ເປັນອັນສຸດທ້າຍ ທີ່ຢູ່ຂັ້ນບ້ານ, ກຸ່ມບ້ານ ແລະ ເມືອງ ສຳລັບວຽກງານຫລຸດຜ່ອນຄວາມທຸກຍາກ (ລວມມີການສະໜອງການບໍລິການ ຂອງສາຍການຈັດຕັ້ງກະຊວງກ່ຽວຂ້ອງ, ບັນດາໂຄງການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ ແລະ ການຊ່ວຍເຫລືອກ່ຽວຂ້ອງອື່ນໆ ຈາກພາກສ່ວນສາກົນ)

ໃນຂະນະທີ່ ທລຍ ບໍ່ມີນະໂຍບາຍຈ່າຍເງິນເດືອນໃຫ້ແກ່ພະນັກງານລັດ ແຕ່ພັດມີຄວາມຈຳເປັນຕ້ອງໄດ້ຊຸກຍູ້ໃຫ້ພະນັກງານລັດ (ລວມທັງອົງການຈັດຕັ້ງສິ່ມວນຊົນ) ເຂົ້າມາມີສ່ວນຮ່ວມຢ່າງເຂັ້ມແຂງ ໂດຍສະເພາະແມ່ນກ່ຽວຂ້ອງກັບວຽກງານກວດກາ ແລະ ໃຫ້ຄຳແນະນຳ ດ້ານວິຊາການ ໃນໄລຍະການວາງແຜນ ແລະ ຈັດຕັ້ງປະຕິບັດໂຄງການຍ່ອຍ. ເພື່ອເຮັດໃຫ້ບັນລຸຕາມເປົ້າໝາຍດັ່ງກ່າວ ໂຄງການສາມາດຈ່າຍຄ່າເດີນທາງ ແລະ/ຫລື ຄ່າເບ້ຍລ້ຽງ ໃຫ້ພະນັກງານລັດ ເພື່ອເອື້ອອຳນວຍໃຫ້ເຂົາເຈົ້າເຂົ້າໄດ້ຮ່ວມໃນວຽກງານກວດກາ ຫລື ແນະນຳທີ່ກ່ຽວຂ້ອງກັບໂຄງການ ລວມໄປເຖິງການຝຶກອົບຮົມຕ່າງໆ.

## 3.5 ການກະກຽມກວດກາ ແລະ ປະສານງານ ກັບ ຄພທລ

ລັດຖະບານ ສປປ ລາວ ຕົກລົງເຫັນດີ ກ່ຽວກັບການກະກຽມການກວດກາ ແລະ ປະສານງານ ສຳລັບໂຄງການ ທລຍ II ແລະ ໄດ້ນຳສະເໜີໃນແຜນວາດລຸ່ມນີ້ (ຮູບທີ 4):

**ຮູບທີ 2: ການກະກຽມກວດກາສຳລັບ ທລຍ II (2011-2015)**




- ສາຍການຄຸ້ມຄອງ (blue solid line)
- ການເຮັດວຽກ/ໜ້າທີ່ (dashed line)
- ການປຶກສາ/ປະສານງານ (blue dash-dot line)
- ພາຍໃຕ້ການຄຸ້ມຄອງໂດຍກົງຂອງ/ແລະ ອ້າງອີງໂດຍກົງຫາ (arrow)

<u>ໝາຍເຫດ</u>:

- ທີ່ຕັ້ງຂັ້ນສູນກາງ ຂອງ ທລຍ ຢູ່ໃນແຜນວາດນີ້ ບໍ່ໄດ້ສະທ້ອນໃຫ້ເຫັນຕຳແໜ່ງການພົວພັນໃດໆ ຢູ່ພາຍໃນ ຄພທສ, ແຕ່ອຳນວຍຄວາມສະດວກທີ່ງ່າຍດາຍ ໃນການພົວພັນປະສານງານ / ໜ້າທີ່ອື່ນໆ, ຄວາມສຳຄັນຂອງການພົວພັນຂອງແຕ່ລະຄົນ ແມ່ນຂື້ນກັບຄວາມເຂັ້ມຂອງເສັ້ນແຜນວາດ.
- ການພົວພັນກັບບັນດາພະແນກ ແມ່ນບູລິມະສິດ ຂອງ ຄພທສ; ຊຶ່ງ ທລຍ ບໍ່ມີສິດທີ່ຈະເຮັດໜ້າທີ່ປ່ຽນແທນແຕ່ຢ່າງໃດ ແຕ່ວ່າມີໜ້າທີ່ໃຫ້ການຊ່ວຍເຫລືອແບບງ່າຍດາຍ ໃນດ້ານເນື້ອໃນ ແລະສົ່ງເສີມການສ້າງຄວາມອາດສາມາດ.
- ແຜນວາດຍັງສະແດງໃຫ້ຮູ້ວ່າ ຍ້ອນຫຍັງການກະກຽມດ້ານການປະສານງານ ລະຫວ່າງ ທລຍ ແລະພາກສ່ວນອື່ນໆ ຈະບັນລຸໄດ້ກໍ່ຕໍ່ເມື່ອຢູ່ພາຍໃຕ້ການປະສານສົມທົບ ຂອງ ຄພທສ ເປັນພື້ນຖານ.

**ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ ໄດ້ເພີ້ມທະວີບົດບາດໃນການພົວພັນປະສານງານກັບ ທລຍ II ຫລາຍຂື້ນກວ່າເກົ່າ ໂດຍສະເພາະແມ່ນຢູ່ຂັ້ນສູນກາງ** ຊຶ່ງສະແດງອອກໃນການສະໜອງບົດລາຍງານເປັນແຕ່ລະໄລຍະ ໃຫ້ແກ່ບັນດາກະຊວງທີ່ກ່ຽວຂ້ອງ, ກອງປະຊຸມເພື່ອປຶກສາຫາລືກ່ຽວກັບຂົງເຂດວຽກງານທີ່ມີກ່ຽວພົວພັນກັນຢ່າງເປັນປົກະຕິ ຂອງລະດັບຫົວໜ້າຫ້ອງການ, ການແລກປ່ຽນຂໍ້ມູນ-ຂ່າວສານ ໃນການວາງແຜນ ແລະ ການລົງຕິດຕາມວຽກຢູ່ພາກສະໜາມຮ່ວມກັນ.

**ເພື່ອເຮັດໃຫ້ຂົງເຂດວຽກງານພັດທະນາແຫ່ງຊາດ ມີຄວາມຈະເລີນເຕີບໂຕ ແລະ ເພີ້ມການປະສານສົມທົບທີ່ເຂັ້ມແຂງ ຂອງພະນັກງານ ຄພທສ ແລະ ກະຊວງທີ່ກ່ຽວຂ້ອງ, ທລຍ ລວມໄປເຖິງລະດັບຫ້ອງການ ຄພທສ ໃຫ້ດີຂື້ນກວ່າເກົ່າ ຈຶ່ງຮຽກຮ້ອງໃຫ້ມີການສ້າງກົນໄກໃນການປະສານງານ ທີ່ຊັດເຈນໃນການລາຍງານ, ປຶກສາຫາລື ແລະ ການພົວພັນຮ່ວມມື.** ສາຍການພົວພັນຕ່າງໆ (ການຄຸ້ມຄອງແຕ່ລະລະດັບ, ໜ້າທີ່ຮັບຜິດຊອບ, ການປະສານງານ) ຊຶ່ງຈະເຫັນໄດ້ລາຍລະອຽດ ແລະ ຄວາມຊັດເຈນ ໃນການຮ່ວມມືກັບ ຄພທສ ແລະ ການປຶກສາຫາລືກັບບັນດາກະຊວງທີ່ກ່ຽວຂ້ອງ. ການພົວພັນຕ່າງໆເຫລົ່ານີ້ ຈະລະບຸໄວ້ໃນຖະແຫລງການໃນການຮ່ວມມືກັນ ແລະ ຢູ່ໃນປື້ມຄູ່ມືຈັດຕັ້ງປະຕິບັດໂຄງການ.

**ທລຍ ໂດຍການຮ່ວມມືກັບຫ້ອງການ ຄພທສ ຈະຈັດຕັ້ງວຽກງານເສີມສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ ຄພທສ ເພື່ອຮັບປະກັນຄວາມເຂົ້າໃຈ ແລະ ການຮຽນຮູ້ຂອງເຂົາເຈົ້າ ກ່ຽວກັບວິທີການ, ຫລັກການ ແລະ ການຈັດຕັ້ງປະຕິບັດໂຄງການຂອງ ທລຍ.** ຊຶ່ງໃນວຽກງານດັ່ງກ່າວ ອາດຈະລວມເອົາທັງຜູ້ທີ່ບໍ່ແມ່ນພະນັກງານລັດ ເພື່ອໃຫ້ເຂົາເຈົ້າຮຽນຮູ້ກ່ຽວກັບວຽກງານ ທລຍ (ເອກະສານຊ້ອນທ້າຍ 4: ລາຍລະອຽດການກະກຽມດ້ານການຮ່ວມມື).

### 3.6 ການກະກຽມການປະສານງານກັບກະຊວງທີ່ກ່ຽວຂ້ອງ

**ຖະແຫລງການຂອບການຮ່ວມມື.** (ເອກະສານຊ້ອນທ້າຍ 5: ຂໍ້ຕົກລົງການຮ່ວມມືກັບພາກສ່ວນຕ່າງໆ) ພາຍໃຕ້ການຄຸ້ມຄອງ ຂອງຫົວໜ້າ ຄພທສ ແລະ ຮັບຮອງໂດຍພາກສ່ວນຕ່າງໆ ດັ່ງລຸ່ມນີ້:

- ກະຊວງສຶກສາທິການ;
- ກະຊວງສາທາລະນະສຸກ;
- ກະຊວງກະສິກຳ ແລະ ປ່າໄມ້;
- ກະຊວງພະລັງງານ ແລະ ບໍ່ແຮ່;
- ກະຊວງໂຍທາທິການ ແລະ ຂົນສົ່ງ;
- ກະຊວງອຸດສາຫະກຳ ແລະ ການຄ້າ.

**ຂໍ້ຕົກລົງຂອງການຮ່ວມມືກັບພາກສ່ວນຕ່າງໆ ໄດ້ຂະຫຍາຍອອກຢູ່ໃນ 6 ວິທີການໃນການປະສານງານຊຶ່ງໄດ້ສະເໜີໂດຍ ທລຍ.** (ລວມມີການວາງແຜນ, ມາດຕະຖານດ້ານນິກເຕັກ, ການຂົນສົ່ງ, ການຈັດຕັ້ງປະຕິບັດ, ການຕິດຕາມ, ການປະເມີນຜົນ ແລະ ການປະຕິບັດ+ບຳລຸງຮັກສາ ແລະ ລວມໄປເຖິງການຮ່ວມມືກັບທຸກໆພາກສ່ວນກ່ຽວຂ້ອງທີ່ຢູ່ຂັ້ນທ້ອງຖິ່ນ). ຮູບແບບການປະສານງານດັ່ງກ່າວນີ້ ຈະປະກອບ

ເປັນເຄື່ອງມືທີ່ເຂັ້ມແຂງ ສໍາລັບ ທລຍ ຊຶ່ງເປັນພາກສ່ວນໜຶ່ງຂອງໂຄງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ. ທລຍ ຈະເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆທີ່ເກີດຂຶ້ນ ຊຶ່ງຢູ່ນອກເໜືອກິດຈະກໍາ ຫລື ວຽກປົກກະຕິຂອງພາກສ່ວນກ່ຽວຂ້ອງຕ່າງໆ ສໍາລັບການອໍານວຍຄວາມສະດວກໃຫ້ແກ່ ທລຍ.

**ທລຍ ມີສິດ ແລະ ໜ້າທີ່ຮັບຜິດຊອບໃນການຮັກສາສາຍພົວພັນການເຮັດວຽກ ແລະ ການປະສານງານກັບພາກສ່ວນກ່ຽວຂ້ອງຕ່າງໆ.** ຊຶ່ງຢູ່ໃນໂຄງປະກອບຂອງຂໍ້ຕົກລົງ ວ່າດ້ວຍການປະສານງານກັບພາກສ່ວນຕ່າງໆ ແລະ ການຮ່ວມມືຢ່າງໃກ້ຊິດກັບຫ້ອງການ ຄພທສ ໂດຍສະເພາະຢູ່ຂັ້ນທ້ອງຖິ່ນ. ເພື່ອເປັນການສົ່ງເສີມດ້ານວຽກການປະສານງານ ຈຶ່ງຈະຈັດກອງປະຊຸມດ້ານວິຊາການປະຈໍາໄຕມາດ ລະຫວ່າງ ທີມງານ ທລຍ, ບັນດາກະຊວງກ່ຽວຂ້ອງ ແລະ ຄູ່ຮ່ວມມືດ້ານພັດທະນາ ໃນຕົ້ນສົກປີງົບປະມານ 2012-2013.

ທລຍ ຍັງຈະສົ່ງເສີມການສ້າງຄວາມອາດສາມາດໃຫ້ແກ່ພາກສ່ວນກ່ຽວຂ້ອງຕ່າງໆ ຢູ່ຂັ້ນເມືອງ ຊຶ່ງຢູ່ຂອບເຂດພື້ນທີ່ຂອງກຸ່ມບ້ານທີ່ ທລຍ ຈັດຕັ້ງປະຕິບັດກິດຈະກໍາ,

### 3.6.1 ສະພາບໍລິຫານ ທລຍ

**ຢູ່ໃນດໍາລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການສ້າງຕັ້ງ ທລຍ ຊຶ່ງຖືກຕ້ອງຕາມກົດໝາຍ ຍັງໄດ້ມີຂໍ້ກໍານົດສໍາລັບສະພາບໍລິຫານ.**

**ໄດ້ມີການກໍານົດໄວ້ວ່າ ການຕັດສິນໃຈໃດໆກໍ່ຕາມ ຂອງສະພາບໍລິຫານ ທລຍ ທີ່ອາດຈະມີຜົນກະທົບຕໍ່ແນວທາງຍຸດທະສາດຂອງໂຄງການ ຈະຕ້ອງໄດ້ຜ່ານການປຶກສາຫາລືກັນກ່ອນ ກັບບັນດາຜູ້ໃຫ້ທຶນ ແລະ ອົງການຂອງລັດຖະບານທີ່ກ່ຽວຂ້ອງ ທີ່ອາດຈະໄດ້ຮັບຜົນກະທົບຈາກການຕັດສິນດັ່ງກ່າວ.** ຊຶ່ງໃນນີ້ ກໍ່ເຫັນໄດ້ຊັດເຈນວ່າ ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ ໄດ້ເພີ້ມທະວີບົດບາດໃນການຕິດຕາມ ແລະ ປະສານງານກັບ ທລຍ II ໂດຍສະເພາະຢູ່ຂັ້ນສູນກາງ. ດໍາລັດ ຂອງ ທລຍ ໄດ້ມີການປັບປຸງໃໝ່ (ສະບັບເລກທີ 10/ນຍ) ຊຶ່ງຢູ່ໃນເອກະສານຊ້ອນທ້າຍ 1.

## 3.7 ລະດັບ ທລຍ ສູນກາງ

(ໂຄງຮ່າງການຈັດຕັ້ງ ຂອງ ທລຍ ໄດ້ຄັດຕິດໃນເອກະສານຊ້ອນທ້າຍ 3). ຜູ້ອໍານວຍການບໍລິຫານ, ຮອງອໍານວຍການບໍລິຫານ, ຊ່ຽວຊານທີ່ປຶກສາ ແລະ 4 ຫົວໜ້າພະແນກ (ຕິດຕາມ-ປະເມີນຜົນ,ວິສະວະກໍາ, ພັດທະນາຊຸມຊົນ ແລະ ບໍລິຫານ-ການເງິນ) ແມ່ນປະກອບເປັນທີມງານບໍລິຫານໂຄງການ.

**ການຈັດຕັ້ງຂັ້ນສູນກາງມີໜ້າທີ່ຮັບຜິດຊອບ:**

- ຮັບຜິດຊອບກ່ຽວກັບການຄຸ້ມຄອງທຶນ, ການຈັດຕັ້ງປະຕິບັດໂຄງການ ແລະ ຜົນໄດ້ຮັບຕ່າງໆ ຂອງ ທລຍ ທັງໝົດ;
- ກະກຽມບົດລາຍງານຄວາມຄືບໜ້າຢ່າງເປັນປົກກະຕິ, ແລະ ຕິດຕໍ່ພົວພັນກັບລັດຖະບານ ແລະ ຜູ້ໃຫ້ທຶນຢ່າງເປັນປະຈຳ; ຮັບຜິດຊອບໃນການກວດກາການຈັດຕັ້ງປະຕິບັດ ແລະ ປັບປຸງລະບຽບການ ແລະ ນະໂຍບາຍ ຂອງ ທລຍ;
- ປັບປຸງແຜນງົບປະມານ ແລະ ແຜນເຮັດວຽກປະຈຳປີ, ແຜນຝຶກອົບຮົມ, ແຜນງົບປະມານ ແລະ ແຜນວຽກຂອງແຂວງ ແລະ ພັດທະນາເຄື່ອງມືການສ້າງແຜນຕ່າງໆ;
- ຈັດກອງປະຊຸມປະຈຳໄຕມາດກັບຜູ້ປະສານງານແຂວງ ເພື່ອທົບທວນຄວາມຄືບໜ້າການຈັດຕັ້ງປະຕິບັດກິດຈະກຳ ແລະ ຊ່ວຍແກ້ໄຂບັນຫາຕ່າງໆທີ່ເກີດຂື້ນໃນການປະຕິບັດວຽກ;
- ໃຫ້ທິດທາງ ແລະ ນຳພາພະນັກງານຢູ່ທຸກໆຂັ້ນໃນການຈັດຕັ້ງປະຕິບັດໂຄງການ ເພື່ອເຮັດໃຫ້ບັນລຸຕາມຈຸດປະສົງທັງໝົດ ແລະ ແຜນວຽກຂອງໂຄງການ ແລະ ຮັບປະກັນການຈັດຕັ້ງປະຕິບັດກິດຈະກຳຢູ່ພາກສະໜາມ ມີຄວາມຖືກຕ້ອງສອດຄ່ອງກັບຄູ່ມືຈັດຕັ້ງປະຕິບັດໂຄງການ;
- ປະເມີນການເຮັດວຽກຂອງພະນັກງານ ແລະ ສະໜອງການຝຶກອົບຮົມທີ່ກ່ຽວຂ້ອງ ໃຫ້ເຂົາເຈົ້າເພື່ອພັດທະນາການເຮັດວຽກ ແລະ ວິຊາສະເພາະຂອງພະນັກງານໃຫ້ສູງຂື້ນ;
- ພັດທະນາຍຸດທະສາດການສ້າງຄວາມເຂັ້ມແຂງຂອງໂຄງການ ແລະ ຈັດຕັ້ງປະຕິບັດວຽກງານສ້າງຄວາມເຂັ້ມແຂງ ໃຫ້ແກ່ໂຄງການອື່ນໆທີ່ມີການຮ່ວມມືກັນ;
- ປະສານງານກັບ ຄພທສ ແລະ ບັນດາກະຊວງອື່ນໆ ໃນການຈັດຕັ້ງປະຕິບັດໂຄງການ;
- ຮັບຜິດຊອບໃນການຄັດເລືອກພະນັກງານ ທລຍ ຢູ່ຂັ້ນສູນກາງ, ແຂວງ ແລະ ເມືອງ;
- ຈັດຕັ້ງປະຕິບັດການກວດກາພາຍໃນຢ່າງເປັນປົກກະຕິ;
- ຮັບຜິດຊອບໃນການບຳລຸງຮັກສາ ແລະ ພັດທະນາຄູ່ມືຈັດຕັ້ງປະຕິບັດໂຄງການ ແລະ ສົ່ງໃຫ້ສະພາບໍລິຫານ ແລະ ຜູ້ໃຫ້ທຶນເປັນຜູ້ອະນຸມັດ;
- ຮັບປະກັນລະບົບການຄຸ້ມຄອງຂໍ້ມູນ-ຂ່າວສານ ໄດ້ຄອບຄຸມ ແລະ ສາມາດຕິດຕາມໄດ້ທຸກໆວຽກງານຂອງໂຄງການ;
- ຮັບປະກັນການກວດກາຂອງທຸກພາກສ່ວນ ເປັນໄປຕາມລະບຽບການຄຸ້ມຄອງບໍລິຫານໂຄງການ;
- ເກັບກຳຂໍ້ມູນລົງທະບຽນຕ່າງໆຂອງພະນັກງານ (ເງິນເດືອນ, ລະດັບ, ທີ່ຕັ້ງ, ປີການ) ແລະ ປັບປຸງການລົງທະບຽນຊັບສົມບັດຂອງໂຄງການ (ວັນທີຊື້, ມູນຄ່າ, ທີ່ຕັ້ງ, ເລກໝາຍປະຈຳຂອງສິນຄ້າ, ວຽກທີ່ມອບໝາຍໃຫ້ພະນັກງານ, ການນຳໃຊ້ທີ່ກ່ຽວຂ້ອງອື່ນໆ ແລະ ຂໍ້ມູນການບຳລຸງຮັກສາ).

## 3.8 ທລຍ ລະດັບແຂວງ

ທີມງານ ທລຍ ແຂວງ ແມ່ນປະຈຳຢູ່ຫ້ອງການ ຂອງແຕ່ລະແຂວງເປົ້າໝາຍ ທລຍ, ຊຶ່ງມີໜ້າທີ່ຮັບຜິດຊອບຕົ້ນຕໍດັ່ງນີ້:

- ກວດກາ ແລະ ປະສານງານກ່ຽວກັບວຽກງານ ທລຍ ທັງໝົດຢູ່ຂັ້ນແຂວງ (ການຄຸ້ມຄອງບໍລິຫານດ້ານການເງິນ, ຈັດຊື້-ຈັດຈ້າງ, ການຄັດເລືອກໂຄງການຍ່ອຍ, ແລະ ອື່ນໆ);
- ຊຸກຍູ້ອຳນາດການປົກຄອງແຂວງ ແລະ ພະແນກການກ່ຽວຂ້ອງ ລວມທັງຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ເພື່ອເຂົ້າມາຊ່ວຍໃນການຈັດຕັ້ງປະຕິບັດໂຄງການ;
- ສັງລວມຂໍ້ມູນຕິດຕາມ-ປະເມີນຜົນ ແລະ ສົ່ງໃຫ້ ທລຍ ຂັ້ນສູນກາງ ຢ່າງເປັນປົກກະຕິ;
- ໃຫ້ການຊ່ວຍເຫລືອແກ່ທີມງານທລຍຂັ້ນເມືອງ;
- ຮັບປະກັນໃຫ້ທຸກໆຂະບວນການ ແລະ ຫລັກການ ຂອງ ທລຍ ມີຄວາມສອດຄ່ອງກັນ;
- ເຂົ້າຮ່ວມການສຳຫລວດກວດກາ ແລະ ແກ້ໄຂຂໍ້ຂັດແຍ່ງ ແລະ ກະກຽມບົດລາຍງານກົນໄກປະຈຳເດືອນ ກ່ຽວກັບກົນໄກສະແດງຄຳຄິດຄຳເຫັນ.

**ທີມງານ ທລຍ ແຂວງ ແມ່ນໃຊ້ເວລາຢ່າງໜ້ອຍ 65% ຂອງເວລາທັງໝົດ ເພື່ອເຮັດວຽກຢູ່ຂັ້ນເມືອງ, ກຸ່ມບ້ານ ແລະ ບ້ານເປົ້າໝາຍ ຂອງ ທລຍ.** ຊຶ່ງໃນນີ້ແມ່ນລວມທັງການເຂົ້າຮ່ວມກອງປະຊຸມປະຈຳເດືອນ ແລະ ການຝຶກອົບຮົມວຽກຕົວຈິງຕ່າງໆຢ່າງເປັນປົກກະຕິ ກັບພະແນກການທີ່ກ່ຽວຂ້ອງ ແລະ ທີມງານ ທລຍ ຂັ້ນເມືອງ. ສຳລັບພາຫະນະການເດີນທາງແມ່ນໂຄງການເປັນຜູ້ສະໜອງໃຫ້ ໃນເວລາເດີນທາງໄປເຮັດວຽກຢູ່ທ້ອງຖິ່ນ ຊຶ່ງລວມທັງການລົງໄປຕິດຕາມກວດກາວຽກ ຂອງຜູ້ປະສານງານຂັ້ນເມືອງ.

ທີມງານ ທລຍ ແຂວງ ປະຊຸມກັບຜູ້ປະສານງານຂັ້ນເມືອງ ເປັນປະຈຳ ໃນແຕ່ລະເດືອນ ເພື່ອເກັບກຳບົດລາຍງານ, ປຶກສາຫາລືກ່ຽວກັບຄວາມຄືບໜ້າ ແລະ ບັນຫາຂອງໂຄງການ ພ້ອມດຽວກັນກໍ່ໃຫ້ການຝຶກອົບຮົມວຽກຕົວຈິງໄປພ້ອມ. ການພົບກັນລະຫວ່າງທີມງານ ທລຍ ແຂວງ ແລະ ເມືອງ ດັ່ງກ່າວ ຍັງເປັນການປະເມີນການຈັດຕັ້ງປະຕິບັດວຽກຂອງທີມງານ ແລະ ໃຫ້ຄຳແນະນຳແກ່ເຂົາເຈົ້າ.

ທີມງານ ທລຍ ແຂວງ ໄດ້ຮັບການຊີ້ນຳ, ນຳພາ ຈາກຜູ້ປະສານງານແຂວງ ຊຶ່ງເປັນຜູ້ລາຍງານຫາຜູ້ອຳນວຍການບໍລິຫານ.

## 3.9 ຫ້ອງການ ທລຍ ຂັ້ນເມືອງ

ທີມງານ ທລຍ ຂັ້ນເມືອງ ມີບົດບາດສຳຄັນຕໍ່ໂຄງການ ເພາະວ່າເຂົາເຈົ້າເປັນຫລັກໃນການເຊື່ອມຕໍ່ລະຫວ່າງ ຊຸມຊົນ ແລະ ວຽກງານທັງໝົດ ຂອງ ທລຍ ແລະ ຊ່ວຍເຫລືອຊຸມຊົນໃນການກະກຽມແຜນພັດທະນາກຸ່ມບ້ານ (ແຜນ 5 ປີ) ແລະ ຈັດຕັ້ງປະຕິບັດແຜນການລົງທຶນ ຂອງ ທລຍ (ແຜນ 4 ປີ) ແລະ ໂຄງການຍ່ອຍຕ່າງໆທີ່ກ່ຽວຂ້ອງ. ໜ້າທີ່ຕົ້ນຕໍຂອງທີມງານ ທລຍ ຂັ້ນເມືອງ ມີດັ່ງນີ້:

- ຊ່ວຍເຫລືອກຸ່ມບ້ານເປົ້າໝາຍ ແລະ ຊຸມຊົນ ກ່ຽວກັບການຈັດຕັ້ງປະຕິບັດທຸກໆວຽກງານ ຂອງ ທລຍ;
- ຝຶກອົບຮົມ, ຊ່ວຍເຫລືອ ແລະ ຊີ້ນຳຜູ້ອຳນວຍຄວາມສະດວກກຸ່ມບ້ານ, ຕົວແທນຂັ້ນບ້ານ ແລະ ຜູ້ປະສານງານຂັ້ນບ້ານ;
- ຊີ້ນຳ ນຳພາ ແລະ ຕິດຕາມວຽກງານ ທລຍ ທັງໝົດ ຢູ່ຂັ້ນກຸ່ມບ້ານ ແລະ ຂັ້ນບ້ານ (ການຄຸ້ມຄອງການເງິນ, ການຈັດຊື້-ຈັດຈ້າງ, ການຄັດເລືອກໂຄງການຍ່ອຍ ແລະ ອື່ນໆ);
- ສົ່ງບົດລາຍງານຄວາມຄືບໜ້າ ແລະ ບັນຫາທີ່ພົບພໍ້ກ່ຽວກັບໂຄງການ ໃຫ້ແກ່ຜູ້ປະສານງານ ທລຍ ແຂວງ ຢ່າງເປັນປົກກະຕິ;
- ຊຸກຍູ້ອຳນາດການປົກຄອງ ແລະ ຫ້ອງການທີ່ກ່ຽວຂ້ອງ ຊຶ່ງລວມທັງຫ້ອງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ;
- ຮັບປະກັນຄວາມສອດຄ່ອງກັນ ລະຫວ່າງ ທຸກລະບຽບຫລັກການຂອງ ທລຍ ກັບຂັ້ນຕອນການຈັດຕັ້ງປະຕິບັດ;
- ເຂົ້າຮ່ວມໃນການສືບສວນ ແລະ ແກ້ໄຂຂໍ້ຂັດແຍ່ງ ພ້ອມທັງກະກຽມບົດລາຍງານປະຈຳເດືອນກ່ຽວກັບການສະແດງຄຳຄິດເຫັນ ແລະ ແກ້ໄຂຂໍ້ຂັດແຍ່ງ ຂັ້ນບ້ານ;

**ທີມງານ ທລຍ ຂັ້ນເມືອງ ປະຊຸມກັບຜູ້ປະສານງານກຸ່ມບ້ານ ຢ່າງເປັນປະຈຳ ເພື່ອເກັບກຳບົດລາຍງານ, ປຶກສາຫາລື ກ່ຽວກັບຄວາມຄືບໜ້າ ແລະ ບັນຫາຂອງໂຄງການ ພ້ອມທັງໃຫ້ການຝຶກອົບຮົມວຽກຕົວຈິງ.** ການພົບກັນລະຫວ່າງທີມງານ ທລຍ ເມືອງ ແລະ ກຸ່ມບ້ານ ດັ່ງກ່າວ ຍັງເປັນການປະເມີນການຈັດຕັ້ງປະຕິບັດວຽກຂອງທີມງານ ແລະ ໃຫ້ຄຳແນະນຳແກ່ເຂົາເຈົ້າ. ນອກຈາກນັ້ນ ເຂົາເຈົ້າຍັງມີການພົວພັນກັນໃນໂອກາດອື່ນໆ ເພື່ອຊຸກຍູ້ ແລະ ຕິດຕາມການຈັດຕັ້ງປະຕິບັດໂຄງການຍ່ອຍ.

**ທີມງານຂັ້ນເມືອງ ຈະຕ້ອງສາມາດເວົ້າພາສາທີ່ນຳໃຊ້ທົ່ວໄປຢູ່ໃນເມືອງດັ່ງກ່າວ.** ເຂົາເຈົ້າປະຈຳການຢູ່ໃນເມືອງ ຫລື ໃກ້ກັບເທດສະບານເມືອງດັ່ງກ່າວ, ແລະເຂົາເຈົ້າໄດ້ຮັບພາຫະນະທີ່ເໝາະສົມ ຫລື ຄ່າເດີນທາງທີ່ພຽງພໍ ເພື່ອເຮັດວຽກຢູ່ກຸ່ມບ້ານ ຢ່າງໜ້ອຍ 65% ຂອງເວລາເຮັດວຽກທັງໝົດ.

ທີມງານຂັ້ນເມືອງ ລາຍງານຫາຜູ້ປະສານງານ ທລຍ ຂັ້ນເມືອງ ຊຶ່ງເປັນຜູ້ລາຍງານຫາຜູ້ປະສານງານ ທລຍ ແຂວງ.

### 3.10 ຜູ້ປະສານງານກຸ່ມບ້ານ ທລຍ

ຜູ້ປະສານງານກຸ່ມບ້ານ ທລຍ ມີໜ້າທີ່ສຳຄັນຢູ່ຂັ້ນຮາກຖານ ເພື່ອເຮັດໃຫ້ ທລຍ ແລະ ຊຸມຊົນ ສາມາດຕິດຈອດເຂົ້າກັນ. **ຜູ້ປະສານງານກຸ່ມບ້ານ ຈະຮັບຜິດຊອບໃນການຊ່ວຍເຫລືອທຸກໆວຽກງານ ຂອງ ທລຍ ຢູ່ຂັ້ນກຸ່ມບ້ານ ແລະ ບ້ານ** ຊຶ່ງລວມມີ ຂັ້ນຕອນການວາງແຜນແບບມີສ່ວນຮ່ວມ (ການກຳນົດທິດທາງ ແລະ ວາງແຜນພັດທະນາຂັ້ນບ້ານ ແລະ ກຸ່ມບ້ານ) ແລະ ເຊັ່ນດຽວກັບການຈັດຕັ້ງປະຕິບັດໂຄງການ

ຍ່ອຍຕ່າງໆ. ທີມງານກຸ່ມບ້ານເປັນຜູ້ທີ່ສາມາດເຮັດໃຫ້ວິທີການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ ມີປະສິດທິຜົນຍິ່ງຂື້ນ ຖ້າຫາກເຂົາເຈົ້າໄດ້ຮັບການຄັດເລືອກ ແລະ ຝຶກອົບຮົມທີ່ເໝາະສົມ.

**ຜູ້ປະສານງານກຸ່ມບ້ານ ແມ່ນຖືວ່າເຮັດວຽກໃຫ້ກັບ ທລຍ**, ເຖິງແມ່ນວ່າ ຄວາມຮຽກຮ້ອງຕ້ອງການ ທາງດ້ານເວລາ ເພື່ອເຮັດໜ້າທີ່ຂອງເຂົາເຈົ້າ ຈະມີການປ່ຽນແປງໃນຊ່ວງປີໜຶ່ງໆ. ພວກເຂົາຈະໄດ້ຮັບເບ້ຍລ້ຽງ ເພື່ອເປັນຄ່າເດີນທາງ ແລະ ອາຫານ ເວລາເຂົາເຈົ້າເຮັດວຽກໃຫ້ ທລຍ.

**ແຕ່ລະຄົນທີ່ຮັບໜ້າທີ່ເປັນຜູ້ປະສານງານກຸ່ມບ້ານສູງສຸດບໍ່ເກີນ4 ປີ**, ຫລັງຈາກນັ້ນ ເຂົ້າເຈົ້າຈະຕ້ອງມີຜູ້ອື່ນທີ່ຢູ່ພາຍໃນກຸ່ມບ້ານມາປ່ຽນແທນ. ການຈັດຕັ້ງປະຕິບັດວຽກຂອງຜູ້ປະສານງານກຸ່ມບ້ານ ແມ່ນຖືກປະເມີນເປັນແຕ່ລະໄລຍະ ໂດຍຊຸມຊົນ ແລະ ພວກເຂົາອາດຈະຖືກປ່ຽນແທນ, ຖ້າຫາກວ່າ ຊຸມຊົນບໍ່ພໍໃຈ. ຊຸມຊົນຈະມີໂອກາດສະເໜີຄັດເລືອກຜູ້ປະສານງານກຸ່ມບ້ານໃໝ່ ຢູ່ໃນກອງປະຊຸມການວາງແຜນພັດທະນາກຸ່ມບ້ານປະຈຳປີ ແລະ ກອງປະຊຸມສະຫລຸບການໃຊ້ຈ່າຍງົບປະມານງວດສຸດທ້າຍຂັ້ນບ້ານ.

**ບົດບາດຂອງຜູ້ປະສານງານກຸ່ມບ້ານ ແມ່ນຊ່ວຍເຫລືອທີມງານ ທລຍ ຂັ້ນເມືອງ ໃນການຈັດຕັ້ງທຸກໆກິດຈະກຳຂອງໂຄງການ ຢູ່ຂັ້ນບ້ານ ແລະ ກຸ່ມບ້ານ ແລະ ຊ່ວຍວາງແຜນ ແລະ ຈັດຕັ້ງປະຕິບັດໂຄງການຍ່ອຍ.** ໜ້າທີ່ຕົ້ນຕໍປະກອບມີດັ່ງນີ້:

- ຊ່ວຍຈັດຕັ້ງກອງປະຊຸມຕ່າງໆຢູ່ຂັ້ນບ້ານ ຫລື ກຸ່ມບ້ານ (ກອງປະຊຸມວາງແຜນພັດທະນາບ້ານ, ກອງປະຊຸມວາງແຜນພັດທະນາກຸ່ມບ້ານ, ແລະ ອື່ນໆ;
- ຊ່ວຍເຮັດໃຫ້ປະຊາຊົນຮັບຮູ້ ກ່ຽວກັບ ທລຍ ແລະ ຊຸກຍູ້ໃຫ້ເຂົາເຈົ້າໄດ້ເຂົ້າຮ່ວມກອງປະຊຸມ ແລະ ທຸກວຽກງານຂອງ ທລຍ. ຜູ້ປະສານງານກຸ່ມບ້ານ ຈະຊຸກຍູ້ ໂດຍສະເພາະການມີສ່ວນຮ່ວມຂອງຊົນເຜົ່າ, ກຸ່ມຜູ້ດ້ອຍໂອກາດ ແລະ ແມ່ຍິງ ຢູ່ໃນກອງປະຊຸມຕ່າງໆ ຂອງ ທລຍ;
- ຊ່ວຍເຫລືອພະນັກງານ ທລຍ ເພື່ອອຳນວຍຄວາມສະດວກ ໃນການວາງແຜນ ແລະ ຈັດຕັ້ງປະຕິບັດກິດຈະກຳຕ່າງໆ ຂອງ ທລຍ ຢູ່ກຸ່ມບ້ານ;
- ຊ່ວຍເຫລືອບ້ານໃຫ້ເຂົ້າໃຈ ກ່ຽວກັບຄວາມຕ້ອງການໃນການປະກອບສ່ວນຂອງຊຸມຊົນ ເຂົ້າໃນໂຄງການຍ່ອຍ ແລະ ຮັບປະກັນວ່າການປະກອບສ່ວນດັ່ງກ່າວເປັນທີ່ຊາບຊຶ້ງ;
- ຊ່ວຍເຫລືອທີມງານ ທລຍ ໃຫ້ໄດ້ຮັບການແຈ້ງຂໍ້ມູນ ກ່ຽວກັບແຜນພັດທະນາ ແລະ ກິດຈະກຳອື່ນໆທີ່ເກີດຂື້ນຢູ່ກຸ່ມບ້ານ ເພື່ອເພີ້ມທະວີຄວາມພະຍາຍາມໃຫ້ຫລາຍຂື້ນ ແລະ ຫລີກເວັ້ນຄວາມຊ້ຳຊ້ອນກັນ;
- ຊ່ວຍຮັບປະກັນວ່າ ວິທີການວັດແທກຕ່າງໆໄດ້ຖືກນຳໃຊ້ ເພື່ອຮວມເອົາກຸ່ມຜູ້ດ້ອຍໂອກາດເຂົ້າຢູ່ໃນຂະບວນການປຶກສາຫາລື (ລວມມີການຈັດຕັ້ງກອງປະຊຸມແບບແບ່ງກຸ່ມກັບກຸ່ມດັ່ງກ່າວ ຖ້າມີຄວາມຈຳເປັນ);
- ຕິດປະກາດ ແລະ ເຜີຍແຜ່ຂໍ້ມູນຂ່າວສານ ຂອງ ທລຍ ຢ່າງເປັນປະຈຳຢູ່ກະດານຂ່າວ ຂອງບ້ານ ແລະ ກຸ່ມບ້ານ;

- ລາຍງານປະຈຳເດືອນຫາຜູ້ປະສານງານ ທລຍ ໂດຍການນຳໃຊ້ຮູບແບບການລາຍງານທີ່ງ່າຍດາຍ ເພື່ອບັນທຶກຄວາມຄືບໜ້າໃນການກໍ່ສ້າງ ແລະ ການນຳໃຊ້ທຶນໂຄງການຍ່ອຍຂອງ ທລຍ;
- ລາຍງານບັນຫາຕ່າງໆທີ່ກ່ຽວຂ້ອງກັບໂຄງການ ໃຫ້ແກ່ທີມງານ ທລຍ, ອຳນາດການປົກຄອງ ແລະ ພາກສ່ວນກ່ຽວຂ້ອງອື່ນໆ;
- ຊ່ວຍບັນທຶກ ແລະ ກວດກາຕາມຄວາມຈຳເປັນ ກ່ຽວກັບບັນຫາທີ່ຍົກຂື້ນ ໂດຍຜ່ານກົນໄກການຮັບຄຳຄິດເຫັນ ແລະ ແກ້ໄຂຂໍ້ຂັດແຍ້ງ (ຊຶ່ງເປັນພາກສ່ວນຂອງທີມງານຮັບຄຳຄິດເຫັນ ແລະ ແກ້ໄຂຂໍ້ຂັດແຍ້ງຢູ່ຂັ້ນກຸ່ມບ້ານ);
- ແປພາສາທ້ອງຖິ່ນ ຢູ່ໃນລະຫວ່າງກອງປະຊຸມ, ຝຶກອົບຮົມ, ການຢ້ຽມຢາມແລກປ່ຽນບົດຮຽນ ແລະ ອື່ນໆ;
- ແຈ້ງໃຫ້ທີມງານ ທລຍ ຊາບກ່ຽວກັບເລື້ອງຕ່າງໆ ຫລື ບັນຫາທີ່ອາດເກີດຂື້ນ ກ່ຽວກັບການປົກປັກຮັກສາສະພາບແວດລ້ອມ ແລະ ສັງຄົມ.

**ຕາມປົກກະຕິແລ້ວ ຜູ້ປະສານງານກຸ່ມບ້ານ ຈະມີການແບ່ງວຽກກັນ ໂດຍອີງຕາມຈຳນວນຂອງບ້ານ, ໄລຍະທາງຫາບ້ານ ແລະ ຂະໜາດຂອງບ້ານທີ່ຢູ່ໃນກຸ່ມບ້ານ,** ຜູ້ປະສານງານກຸ່ມບ້ານແຕ່ລະຄົນ ເຮັດໜ້າທີ່ອຳນວຍຄວາມສະດວກ ໃນຈຳນວນບ້ານທີ່ເທົ່າກັນ (ອີງຕາມການເຂົ້າເຖິງ, ຂະໜາດຂອງບ້ານ ແລະ ເງື່ອນໄຂອື່ນໆທີ່ກ່ຽວຂ້ອງ).

# 4 ການຄັດເລືອກເປົ້າໝາຍໂຄງການ, ການຈັດສັນງົບປະມານ ແລະ ການຄັດເລືອກໂຄງການຍ່ອຍ

ຫົວຂໍ້ນີ້ໄດ້ຊີ້ໃຫ້ເຫັນພາບລວມທີ່ສຳຄັນບາງສ່ວນ ຂອງ ທລຍ ໄລຍະ II. ເຊິ່ງນີ້ຈະລວມເອົາບັນດາຫົວຂໍ້ຍ່ອຍໆ ດັ່ງນີ້:

- ການກຳນົດລະດັບຄວາມທຸກຍາກ ແລະ ການຄັດເລືອກເປົ້າໝາຍຈັດຕັ້ງປະຕິບັດໂຄງການ;
- ການຈັດສັນງົບປະມານ;
- ການວາງແຜນພັດທະນາກຸ່ມບ້ານ;
- ການຄັດເລືອກໂຄງການຍ່ອຍ.

## 4.1 ຫຼັກການຄັດເລືອກເປົ້າໝາຍໂຄງການ

**ການຈັດຕັ້ງປະຕິບັດວຽກງານ ທລຍ ແມ່ນເປັນການສະໜັບສະໜູນຈຸດປະສົງຂອງລັດຖະບານໃນການຫລຸດຜ່ອນຄວາມທຸກຍາກ**. ການກຳນົດເປົ້າໝາຍໃນຂອບເຂດຊຸມຊົນ ແລະ ປະຊາຊົນຜູ້ທຸກຍາກ ຈຶ່ງຖືວ່າເປັນເລື່ອງສຳຄັນທີ່ຕ້ອງໄດ້ເອົາໃຈໃສ່. ການກຳນົດເປົ້າໝາຍໃສ່ເຂດຊຸມຊົນທີ່ທຸກຍາກກໍ່ຍັງເປັນບັນຫາຫຍຸ້ງຍາກ ເຖິງແມ່ນວ່າຈະມີຂໍ້ມູນດ້ານເສດຖະກິດ-ສັງຄົມທີ່ສະທ້ອນໃຫ້ເຫັນລັກສະນະທົ່ວໄປ ຂອງຄວາມທຸກຍາກໃນຫຼາຍຮູບແບບ ໂດຍສະເພາະແມ່ນເຂດຊົນນະບົດຫ່າງໄກສອກຫລີກ.

**ວິທີການທີ່ ທລຍ ນຳເອົາມາໃຊ້ໃນການຄັດເລືອກເຂດພື້ນທີ່ເປົ້າໝາຍ ແລະ ການຈັດສັນຊັບພະຍາກອນເພື່ອຈັດຕັ້ງປະຕິບັດວຽກງານໂຄງການນັ້ນ ຕ້ອງເປັນໄປຕາມຈຸດປະສົງ ແລະ ມີຄວາມໂປ່ງໃສຕໍ່ທຸກພາກສ່ວນທີ່ກ່ຽວຂ້ອງ**. ທລຍ ຈະຕ້ອງໄດ້ລາຍງານ ກ່ຽວກັບການຕັດສິນໃຈໃນການກຳນົດເຂດພື້ນທີ່ເປົ້າໝາຍໃໝ່ ແລະ ການຈັດສັນງົບປະມານໃຫ້ສັງຄົມໄດ້ຮັບຊາບເຖິງວິທີການ ແລະ ຂະບວນການຕ່າງໆຢ່າງຊັດເຈນ.

**ຫຼັກການໃນການຄັດເລືອກເປົ້າໝາຍຜູ້ທຸກຍາກໃນການຈັດຕັ້ງປະຕິບັດວຽກງານ ທລຍ ນັ້ນແມ່ນໄດ້ຮັບການຮັບຮອງຈາກສະພາບໍລິຫານ ທລຍ ແລະ ບັນດາຜູ້ໃຫ້ທຶນ**. ໂດຍອີງໃສ່ຂໍ້ສະເໜີຫຼືຄຳຄິດຄຳເຫັນຂອງຜູ້ອຳນວຍການບໍລິຫານ ທລຍ ເປັນຫຼັກ. ຫາກມີການປ່ຽນແປງຫຼັກການດັ່ງກ່າວພາຍຫລັງແມ່ນຈະຕ້ອງໄດ້ຮັບການຮັບຮອງຈາກປະທານຈາກສະພາບໍລິຫານ ທລຍ ແລະ ບັນດາຜູ້ໃຫ້ທຶນເສຍກ່ອນ.

### 4.1.1 ການຄັດເລືອກເຂດເປົ້າໝາຍສຳລັບ ທລຍ ໄລຍະ II

**ໃນປີ 2008, ລັດຖະບານ ສປປ ລາວ ໄດ້ສ້າງຕັ້ງຫົວໜ່ວຍບໍລິຫານຂັ້ນທ້ອງຖິ່ນຂຶ້ນມາອີກຂັ້ນໜຶ່ງ ເຊິ່ງເອີ້ນວ່າ "ກຸ່ມບ້ານ"** ກຸ່ມບ້ານແມ່ນຫົວໜ່ວຍຍ່ອຍຂອງເມືອງ ເຊິ່ງປະກອບມີບ້ານທີ່ຢູ່ລວມກັນເປັນກຸ່ມທາງ

ດ້ານພູມສາດ ເຊິ່ງໂດຍສະເລ່ຍແລ້ວ ກຸ່ມບ້ານໜຶ່ງຈະປະກອບມີ 6-10 ບ້ານ, ເຖິງແມ່ນວ່າຈຳນວນບ້ານທີ່ຂຶ້ນກັບຈະມີຈຳນວນທີ່ແຕກຕ່າງກັນຢ່າງເຫັນໄດ້ຊັດກໍ່ຕາມ.

**ມາໃນປີ 2009 ລັດຖະບານລາວ ໄດ້ມີການທົບທວນຄືນການກຳນົດລະດັບຄວາມທຸກຍາກ ຈາກຂັ້ນເມືອງ ລົງມາສຸມໃສ່ລະດັບກຸ່ມບ້ານ ແລະ ລະດັບຄົວເຮືອນ.** ຊຶ່ງນະໂຍບາຍດັ່ງກ່າວນີ້ແມ່ນໄດ້ກຳນົດໄວ້ໃນດຳລັດເລກທີ່ 285/ນຍ ວ່າດ້ວຍມາດຖານຄວາມທຸກຍາກ ແລະ ມາດຖານການພັດທະນາ (2010 - 2015) ລົງວັນທີ 13 ເດືອນຕຸລາ 2009. ສະນັ້ນ, ປັດຈຸບັນການວາງແຜນການລົງທຶນ, ການຈັດລຽງບູລິມະສິດໂຄງການຍ່ອຍ ແລະ ການຕັດສິນໃຈ ຂອງ ທລຍ ແມ່ນຈະໄດ້ດຳເນີນການຢູ່ໃນຂັ້ນກຸ່ມບ້ານ ຊຶ່ງຈະຖືກຮັບການກວດກາຈາກອຳນາດການປົກຄອງຂັ້ນເມືອງ.

**ຂະບວນການສ້າງແຜນພັດທະນາແບບມີສ່ວນຮ່ວມຢູ່ໃນ ທລຍ ໄລຍະທີ່ I ນັ້ນແມ່ນໄດ້ດຳເນີນຢູ່ໃນຂັ້ນບ້ານ ແຕ່ ທລຍ ໄລຍະທີ່ II ຈະດຳເນີນການວາງແຜນຢູ່ໃນຂັ້ນກຸ່ມບ້ານ.** ການປ່ຽນແປງດັ່ງກ່າວນີ້ແມ່ນສອດຄ່ອງກັບການກຳນົດລະດັບຄວາມທຸກຍາກ ຂອງລັດຖະບານ ເພື່ອປັບປຸງການວາງແຜນໃຫ້ມີປະສິດທິພາບສູງຂື້ນກວ່າເກົ່າ ທັງເປັນການຊ່ວຍໃຫ້ການວາງແຜນຈັດຕັ້ງປະຕິບັດໂຄງການ ທລຍ ສອດຄ່ອງກັບແຜນການ ຂອງບັນດາກະຊວງ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງຕ່າງໆໄດ້ເປັນຢ່າງດີ.

ໂຄງການໄດ້ກຳນົດເອົາຜູ້ໄດ້ຮັບຜົນປະໂຫຍດຂັ້ນກຸ່ມບ້ານ ສຳລັບ ທລຍ ໄລຍະ II ແມ່ນອີງໃສ່ມາດຖານດັ່ງຕໍ່ໄປນີ້:

- ມາດຖານຄວາມທຸກຍາກ ທີ່ໄດ້ລະບຸຢູ່ໃນດຳລັດເລກທີ່ 285/ນຍ. ມາດຖານເຫລົ່ານັ້ນກ່ຽວພັນກັບຄວາມທຸກຍາກ, ການເຂົ້າເຖິງເສັ້ນທາງຄົມມະນາຄົມ, ການເຂົ້າເຖິງແຫຼ່ງນໍ້າ, ການເຂົ້າເຖິງການບໍລິການດ້ານການສຶກສາ ແລະ ການເຂົ້າເຖິງດ້ານການບໍລິການສາທາລະນະສຸກຂັ້ນພື້ນຖານ;
- ທີ່ຕັ້ງທາງດ້ານພູມສາດ ໃນແງ່ຂອງການເຂົ້າເຖິງການດຳເນີນງານ ແລະ ຄວາມຄຸ້ມຄ່າໃນການລົງທຶນ;
- ການປະກົດຕົວຂອງໂຄງການອື່ນທີ່ມີຄວາມຄ້າຍຄືກັນໃນກຸ່ມບ້ານເຫຼົ່ານັ້ນ; ແລະ
- ທລຍ ຈະບໍ່ສະໜັບສະໜຸນ ຫຼື ຈັດຕັ້ງປະຕິບັດກິດຈະກຳໃດໆຢູ່ໃນບ້ານທີ່ມີການຍົກຍ້າຍ-ຈັດສັນກ່ອນໜ້ານີ້ 4 ປີ ຫຼື ມີແຜນຍົກຍ້າຍ-ຈັດສັນ ໃນອີກ 4 ປີຕໍ່ໜ້າ.

**ຈາກການນຳໃຊ້ມາດຖານດັ່ງກ່າວມາຂ້າງເທິງນີ້ ແລະ ໄດ້ອີງໃສ່ຜົນການສຳຫຼວດຄົວເຮືອນ ແລະ ພົນລະເມືອງໃນປີ 2005 ແລະ ການສຳຫຼວດການບໍລິໂພກ ແລະ ຄ່າໃຊ້ຈ່າຍ ຄັ້ງທີ່ 3 (LECIII) ໃນປີ 2002/2003. ຫ້ອງການ ທລຍ ຂັ້ນສູນກາງໄດ້ກະກຽມລາຍຊື່ກຸ່ມບ້ານທຸກຍາກ ເພື່ອກຳນົດເປັນພື້ນທີ່ເປົ້າໝາຍໂດຍແມ່ນອີງໃສ່ລະດັບຄວາມທຸກຍາກເປັນຫຼັກ.** ລາຍຊື່ແຂວງ, ເມືອງ ແລະ ກຸ່ມບ້ານທີ່ໄດ້ມີການຈັດສັນງົບປະມານໃນແຕ່ລະປີ ແມ່ນຢູ່ໃນເອກະສານຊ້ອຍທ້າຍລຳດັບທີ່ 6. ລາຍຊື່ກຸ່ມບ້ານ ແລະ ການຈັດສັນງົບປະມານເຂົ້າໃນແຕ່ລະກຸ່ມບ້ານແມ່ນຕ້ອງໄດ້ຮັບຢັ້ງຢືນ ຈາກປະທານສະພາບໍລິຫານ ຂອງ ທລຍ ແລະ ມີການອະນຸມັດ ຈາກລັດຖະບານລາວ ແລະ ບັນດາຜູ້ໃຫ້ທຶນໃນແຕ່ລະປີ.

## 4.2 ການວາງແຜນພັດທະນາກຸ່ມບ້ານ ແລະ ແຜນການລົງທຶນຂອງ ທລຍ

**ການມີສ່ວນຮ່ວມຂອງຊຸມຊົນເປັນການເຮັດວຽກຮ່ວມກັນ ເພື່ອຄົ້ນຫາສາເຫດຕົ້ນຕໍຂອງຄວາມທຸກຍາກ ແລະ ຊອກຫາຊ່ອງທາງທີ່ເໝາະສົມທີ່ສຸດ ເພື່ອນໍາມາໃຊ້ເຂົ້າໃນການແກ້ໄຂຄວາມທຸກຍາກ.** ໂດຍຜ່ານຂະບວນການຈັດກອງປະຊຸມຕ່າງໆຢູ່ຂັ້ນບ້ານ ແລະ ຂັ້ນກຸ່ມບ້ານ ຊຶ່ງຜູ້ອໍານວຍຄວາມສະດວກຊຸມຊົນທີ່ໄດ້ຜ່ານການຝຶກອົບຮົມ ຈາກ ທລຍ ຈະເປັນຜູ້ຈັດຕັ້ງປະຕິບັດ.

**ໃນລະຫວ່າງກອງປະຊຸມຕ່າງໆ (ໄດ້ອະທິບາຍລະອຽດໃນຫົວຂໍ້ທີ່ 5) ນັ້ນໄດ້ມີການຄັດເລືອກເອົາຕົວແທນກຸ່ມບ້ານຢ່າງມີປະຊາທິປະໄຕ ຈາກແຕ່ລະບ້ານຢູ່ໃນກຸ່ມບ້ານໜຶ່ງໆ ເພື່ອເຮັດໜ້າທີ່ໃນການວາງແຜນພັດທະນາກຸ່ມບ້ານ ແລະ ແຜນການລົງທຶນເຂົ້າໃນແຕ່ລະກິດຈະກໍາຍ່ອຍຂອງ ທລຍ.** ແຜນພັດທະນາກຸ່ມບ້ານແມ່ນການວາງວິໄສທັດທາງຍຸດທະສາດການພັດທະນາຂອງກຸ່ມບ້ານ, ແມ່ນການວາງແຜນພັດທະນາກຸ່ມບ້ານ ໄລຍະ 5 ປີ ແລະ ເປັນການກໍານົດເອົາບຸລິມະສິດຄວາມຕ້ອງການໃນການພັດທະນາ ຂອງພວກເຂົາ. ການລົງທຶນ ຂອງ ທລຍ ແມ່ນອີງໃສ່ແຜນພັດທະນາຂອງແຕ່ລະກຸ່ມບ້ານ ແລະ ມີການກໍານົດໄວ້ແລ້ວຕະຫຼອດໄລຍະ 4 ປີ. ແຜນພັດທະນາກຸ່ມບ້ານທີ່ຈະໄດ້ຮັບການສະໜັບສະໜຸນ ຈາກ ທລຍ ນັ້ນຈະຕ້ອງແມ່ນກິດຈະກໍາທີ່ ທລຍ ໃຫ້ການສະໜັບສະໜຸນເທົ່ານັ້ນ ແລະ ຕ້ອງຢູ່ພາຍໃນກອບເພດານງົບປະມານຂອງແຕ່ລະກຸ່ມບ້ານທີ່ໄດ້ມີການຈັດສັນເອົາໄວ້ເບື້ອງຕົ້ນນັ້ນ (ເບິ່ງຕາຕະລາງຊ້ອນທ້າຍ2)

**ແຜນພັດທະນາກຸ່ມບ້ານແມ່ນເຄື່ອງມືການວາງແຜນທີ່ສໍາຄັນຂອງ ທລຍ ແລະ ຈະຖືກນໍາໃຊ້ ເພື່ອເປັນແນວທາງໃນການລົງທຶນ ຂອງ ທລຍ ແລະ ແລກປ່ຽນກັບໜ່ວຍງານຕ່າງໆຂອງລັດ ແລະ ອົງການຜູ້ໃຫ້ທຶນອື່ນໆ ເພື່ອເປັນພື້ນການໃນການສະໜັບສະໜຸນ/ຊ່ວຍເຫຼືອທຶນຮອນເຂົ້າໃນບັນດາກິດຈະກໍາຍ່ອຍທີ່ ທລຍ ບໍ່ສາມາດໃຫ້ການສະໜັບສະໜູນໄດ້.**

### 4.2.1 ການຈັດສັນງົບປະມານ

**ການລົງທຶນແບບຍືນຍົງ:** ແມ່ນນໍາໃຊ້ແຜນພັດທະນາກຸ່ມບ້ານເປັນບ່ອນອີງ ໃນການຈັດຕັ້ງປະຕິບັດ, ຊຶ່ງ ທລຍ ຈະມີຮອບວຽນການລົງທຶນໃສ່ບັນດາໂຄງການຍ່ອຍຢູ່ແຕ່ລະກຸ່ມເປັນໄລຍະເວລາ 4 ປີ. ການສະໜັບສະໜຸນດັ່ງກ່າວ ແມ່ນມີຄາດຫວັງວ່າ:

(a) ສຸມທຶນຮອນ ເພື່ອຊ່ວຍໃຫ້ບັນດາກຸ່ມບ້ານທີ່ໄດ້ຮັບຜົນປະໂຫຍດ ໄດ້ຫລຸດພົ້ນອອກຈາກສະຖານພາບຄວາມທຸກຍາກ; ແລະ

(b) ສົ່ງເສີມ ແລະ ມອບສິດອໍານາດໃຫ້ແກ່ຊຸມຊົນ ຜ່ານຂະບວນການເຮັດໄປນໍາ, ຮຽນໄປນໍາ ແລະ ເພີ່ມຄວາມເອົາໃຈໃສ່ໃນການຕັ້ງປະຕິບັດ, ບົວລະບັດປົກປັກຮັກສາ ແລະ ຄຸ້ມຄອງໂຄງການຍ່ອຍຕ່າງໆໄດ້ດ້ວຍຕົນເອງ.

**ບັນດາກຸ່ມບ້ານທີ່ຖືກຄັດເລືອກເປັນເຂດເປົ້າໝາຍໂຄງການ ທລຍ ແມ່ນອີງໃສ່ມາດຖານຄວາມທຸກຍາກ** (ດັ່ງໄດ້ກ່າວມາແລ້ວຂ້າງເທິງນັ້ນ). ສະນັ້ນ, ການຈັດສັນງົບປະມານໃຫ້ແຕ່ລະກຸ່ມບ້ານ ແມ່ນອີງໃສ່ຈຳນວນພົນລະເມືອງຄາດຄະເນຂອງແຕ່ລະກຸ່ມບ້ານເປັນຫລັກ ຊຶ່ງມີມາດຖານການຄິດໄລ່ດັ່ງຕາຕະລາງລຸ່ມນີ້:

<u>ຕາຕະລາງ 2: ການຈັດສັນງົບປະມານຂອງກຸ່ມບ້ານ</u>

| ຈຳນວນພົນລະເມືອງ ຂອງກຸ່ມບ້ານ | ຈ/ນ ງົບປະມານທີ່ຈັດສັນ ໃຫ້ແຕ່ລະກຸ່ມໃນແຕ່ລະຮອບວຽນ | ລວມ ຈ/ນ ງົບປະມານ ຂອງແຕ່ລະກຸ່ມບ້ານໃນ 4 ປີ |
|---|---|---|
| <2,000 ຄົນ | $30,000 (240,000,000 ກີບ) | $120,000 (960,000,000 ກີບ) |
| 2,000 ຫາ 4,000 ຄົນ | $40,000 (320,000,000 ກີບ) | $160,000 (1,280,000,000ກີບ) |
| >4,000 ຄົນຂຶ້ນໄປ | $50,000 (400,000,000 ກີບ) | $200,000 (1,600,000,000ກີບ) |

**"ຈຳນວນງົບປະມານລວມ ຂອງແຕ່ລະກຸ່ມບ້ານ ແມ່ນກວາມເອົາໄລຍະ 4 ປີ, ງົບປະມານດັ່ງກ່າວແມ່ນໄດ້ຈັດສັນເພື່ອນຳໃຊ້ໃນແຕ່ລະປີ".** *ງົບປະມານຂອງກຸ່ມບ້ານຕໍ່ປີແມ່ນບໍ່ສາມາດນຳໃຊ້ເກີນເພດານທີ່ໄດ້ຈັດສັນໄວ້ແລ້ວນັ້ນ, ຊຶ່ງ ທລຍ ຈະບໍ່ສະໜອງງົບປະມານເພີ່ມເຕີມໃດໆໃຫ້ກຸ່ມບ້ານທີ່ໃຊ້ເກີນເພດານງົບປະມານປະຈຳປີຂອງຕົນ ແລະ ບໍ່ສະໜັບສະໜູນໂຄງການຍ່ອຍທີ່ມີມູນຄ່າເກີນເພດານງົບປະມານຂອງກຸ່ມບ້ານ".*

ສຳລັບງົບປະມານຂອງກຸ່ມບ້ານໃນແຕ່ລະປີທີ່ໃຊ້ເຫຼືອນັ້ນ ແມ່ນສາມາດເກັບໄປໃຊ້ໃນຮອບວຽນອື່ນໄດ້ (ຍົກເວັ້ນ ຫາກບໍ່ມີຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ ທີ່ໄດ້ຖືກຄັດເລືອກເອົາກ່ອນໜ້ານັ້ນ) ແລະ ສາມາດນຳໄປໃຊ້ເພື່ອຈັດຕັ້ງປະຕິບັດໂຄງການຍ່ອຍເພີ່ມ (ໂຄງການກໍ່ສ້າງ ຫຼື ໂຄງການຝຶກອົບຮົມ) ທີ່ນອນຢູ່ໃນແຜນພັດທະນາກຸ່ມບ້ານໃນຮອບວຽນຜ່ານມາກໍ່ໄດ້. ໃນກໍລະນີດັ່ງກ່າວ, ໂຄງການຍ່ອຍທີ່ສະເໜີເພີ່ມໃໝ່ນັ້ນ ຕ້ອງມີເຫດຜົນທີ່ເໝາະສົມ ໂດຍສະເພາະແມ່ນໃຫ້ອີງໃສ່ຄວາມອາດສາມາດຂອງທີມງານກຸ່ມບ້ານ ຫຼື ຜູ້ໄດ້ຮັບຜົນປະໂຫຍດໃນການຈັດຕັ້ງປະຕິບັດໂຄງການຍ່ອຍ ທີ່ເພີ່ມເຂົ້າມາໃໝ່ນັ້ນ ແລະ ຕ້ອງໄດ້ຮັບການອະນຸມັດຈາກຜູ້ອຳນວຍການບໍລິຫານ ທລຍ ຂັ້ນສູນກາງເສຍກ່ອນ.

ງົບປະມານຂອງກຸ່ມບ້ານທີ່ນຳໃຊ້ບໍ່ໝົດໃນໄລຍະ 4 ປີດັ່ງກ່າວ ແມ່ນຈະຕ້ອງໄດ້ສົ່ງຄືນໃຫ້ຫ້ອງການ ທລຍ ເພື່ອນຳໃຊ້ໃນການດຳເນີນໂຄງການ ຫຼື ສົ່ງຄືນຜູ້ໃຫ້ທຶນ.

ນັບແຕ່ຮອບວຽນ IX ເປັນຕົ້ນໄປ, ການຈັດສັນງົບປະມານຂອງອົງການຜູ້ໃຫ້ທຶນຕ່າງໆ ແມ່ນຈະມີການຈັດສັນເປັນເມືອງ ຍົກເວັ້ນທຶນປະກອບສ່ວນຂອງອົງການຮ່ວມມືເພື່ອການພັດທະນາຂອງປະເທດສະວິດເຊີແລນ (SDC) ທີ່ສະໜັບສະໜູນບັນດາໂຄງການຍ່ອຍທີ່ກ່ຽວກັບນ້ຳ. ໃນແຕ່ລະຮອບວຽນນັ້ນ, ລາຍຊື່ບັນດາໂຄງການຍ່ອຍ ຕ້ອງໄດ້ສົ່ງໃຫ້ອົງການຜູ້ໃຫ້ທຶນ ເພື່ອພິຈາລະນາກ່ອນ ຈະມີການສະເໜີຂໍເບີກຈ່າຍງົບປະມານ. ເຖິງແນວໃດກໍ່ຕາມ, ລາຍການໂຄງການຍ່ອຍເຫຼົ່ານັ້ນ ແມ່ນສາມາດປ່ຽນແປງໄດ້ອີງໃສ່ພາກ

ປະຕິບັດຕົວຈິງ. ໃນກໍລະນີນີ້, ລາຍຊື່ໂຄງການຍ່ອຍທີ່ໄດ້ມີການທົບທວນຄືນ ຕ້ອງໄດ້ສົ່ງໃຫ້ຜູ້ໃຫ້ທຶນ ເພື່ອເປັນຮັບຊາບ ແລະ ບັນທຶກໄວ້.

### 4.2.2 ຄໍາແນະນໍາໃນການຈັດສັນງົບປະມານ

ການຈັດສັນໂຄງການຍ່ອຍ ແມ່ນໃຫ້ປະຕິບັດຕາມຂໍ້ຄວນພິຈາລະນາ ແລະ ຄໍາແນະນໍາດັ່ງຕໍ່ໄປນີ້:

- ກ່ອນຈະມີເລີ່ມວົງຈອນການວາງແຜນພັດທະນາກຸ່ມບ້ານ ແລະ ຂະບວນການພັດທະນາກຸ່ມບ້ານ ແລະ ການລົງທຶນຂອງ ທລຍ ນັ້ນ, ແຕ່ລະກຸ່ມຈະໄດ້ຮັບການແຈ້ງໃຫ້ຊາບຢ່າງເປັນລາຍລັກອັກສອນກ່ຽວການຈັດສັນງົບປະມານ ແລະ ເພດານງົບປະມານຂອງແຕ່ລະກຸ່ມບ້ານລວມທັງແຜນການເບີກຈ່າຍໃນຕະຫຼອດໄລຍະ 4 ປີ ຂອງແຜນພັດທະນາກຸ່ມບ້ານຕ່າງໆ.
- ໃນກໍລະນີທີ່ງົບປະມານປະຈໍາປີ ຂອງກຸ່ມບ້ານຫຼາຍກວ່າເຄິ່ງໜຶ່ງບໍ່ໄດ້ຖືກນໍາໃຊ້ ຫຼື ການຈັດຕັ້ງປະຕິບັດໂຄງການຍ່ອຍມີຄວາມລ້າຊ້າຫຼາຍ (ຕົວຢ່າງ: ຈັດຕັ້ງປະຕິບັດໂຄງການຍ່ອຍສໍາເລັດໜ້ອຍກວ່າເຄິ່ງໜຶ່ງ ພາຍຫຼັງຂໍເບີກຈ່າຍງົບປະມານໄປແລ້ວ) ຜູ້ປະສານງານໂຄງການຂັ້ນແຂວງຕ້ອງໄດ້ສົ່ງເລື່ອງຫາຜູ້ອໍານວຍການບໍລິຫານ ທລຍ ຂັ້ນສູນກາງ ເພື່ອຂໍເລື່ອນການເບີກຈ່າຍງົບປະມານຂອງປີຖັດໄປ ຫຼື ຍົກເລີກ ຫຼື ກໍລະນີມີການລະເມີດກົດລະບຽບ ຂອງ ທລຍ ອາດຈະມີການເພີກຖອນກຸ່ມບ້ານອອກຈາກການຊ່ວຍເຫຼືອ.
- ທີມງານຈັດຕັ້ງປະຕິບັດໂຄງການຂັ້ນບ້ານ ຫຼື ຂັ້ນກຸ່ມບ້ານມີສິດນໍາໃຊ້ງົບປະມານພຽງ 5% ຂອງງົບປະມານປະຈໍາປີຂອງກຸ່ມຕົນເອງເທົ່ານັ້ນ ເພື່ອນໍາໃຊ້ເຂົ້າໃນການບໍລິຫານ ແລະ ຕິດຕາມກວດກາໂຄງການຍ່ອຍ 5 ຊຶ່ງ ທລຍ ຈະເປັນຜູ້ຈັດສັນ ແລະ ທີມງານຈັດຕັ້ງປະຕິບັດຂັ້ນບ້ານ / ກຸ່ມບ້ານເປັນຜູ້ຄຸ້ມຄອງເອງ.
- ຖ້າຫາກມີສອງກຸ່ມບ້ານຫຼືຫຼາຍກວ່ານັ້ນ ປຶກສາຫາລື ແລະ ຕັດສິນໃຈທີ່ຈະຂໍນໍາໃຊ້ງົບປະມານກຸ່ມບ້ານ ເພື່ອເຮັດໂຄງການໃດໜຶ່ງຮ່ວມກັນ, ເພດານງົບປະມານປະກອບສ່ວນ ຈາກ ທລຍ ແມ່ນບໍ່ເກີນ 60,000. ໂດລາສະຫະລັດ.

**ສໍາລັບໂຄງການຍ່ອຍທີ່ໄດ້ອະນຸມັດໃຫ້ຈັດຕັ້ງປະຕິບັດໄປແລ້ວ, ທລຍ ຈະປະກອບທຶນໃຫ້ໄດ້ສະເພາະກິດຈະກໍາດັ່ງລຸ່ມນີ້:**

- ອີງຕາມການລົງທຶນຕົວຈິງ (ວຽກກໍ່ສ້າງ ແລະ ອູປະກອນ[6]);
- ຄ່າໃຊ້ຈ່າຍໃນການຝຶກອົບຮົມເພີ່ມເຕີມ (ລະບຸໃນຕາຕະລາງ 3, ຫົວຂໍ້ 4.6 ກິດຈະກໍາຝຶກອົບຮົມເສີມ);
- ຝຶກອົບຮົມກ່ຽວກັບການບົວລະບັດ ແລະ ປົກປັກຮັກສາໂຄງການຍ່ອຍ; ແລະ

---

[5] 3% ແມ່ນຄ່າໂສຫຸ້ຍ ແລະ 2% ນໍາໃຊ້ເຂົ້າໃນການຕິດຕາມກວດກາໂຄງການຍ່ອຍ

[6] ອຸປະກອນການຮຽນ (ປຶ້ມ, ກະດານດໍາ), ອຸປະກອນດ້ານສຸຂະພາບ (ຊຸດອຸປະກອນການແພດສຸກສາລາ, ກອງທຶນຢາເບື້ອງຕົ້ນ, ກອງທຶນຢາປະຈໍາບ້ານ)

- ຄ່າເສຍຫຸ້ຍ/ຄ່າໃຊ້ຈ່າຍໃນການຕິດຕາມກວດກາໂຄງການຍ່ອຍ ຂອງທີມງານຂັ້ນບ້ານ/ກຸ່ມບ້ານ (3% ຂອງງົບປະມານກຸ່ມບ້ານ)
- ຄ່າເສຍຫຸ້ຍ/ຄ່າໃຊ້ຈ່າຍໃນການຕິດຕາມ-ກວດກາໂຄງການຍ່ອຍ ຂອງຂະແໜງການຂັ້ນເມືອງ ອີງຕາມແຜນວຽກຕົວຈິງ (2%ຂອງງົບປະມານກຸ່ມບ້ານ).

**ຫາກມີຄວາມຮຽກຮ້ອງຕ້ອງການ, ແລະເພື່ອຮັບປະກັນດ້ານປະສິດຜົນໃນການຈັດຕັ້ງປະຕິບັດວຽກງານ ແລະ ເຮັດໃຫ້ການມອບໂອນຄວາມຮັບຜິດຊອບໃນການຄຸ້ມຄອງ ແລະ ປົກປັກຮັກສາໃຫ້ແກ່ອົນາດການ ປົກຄອງເມືອງເປັນໄປຢ່າງນຸ້ມນວນ. ທລຍ ອາດຈະໃຫ້ທຶນພິເສດຊົ່ວຄາວ ເພື່ອຈ່າຍເປັນເບ້ຍລ້ຽງແກ່ ພະນັກງານສັນຍາຈ້າງ (ຄູ ແລະ ແພດ/ໝໍ)**. ຄ່າໃຊ້ຈ່າຍເຫຼົ່ານີ້ ແມ່ນມີຄວາມຈຳເປັນຕ້ອງໄດ້ມີການຈັດແບ່ງຢ່າງຊັດເຈນ ແລະ ຕ້ອງສອດຄ່ອງກັບຂໍ້ຈຳກັດຂອງລາຍການທີ່ບໍ່ໃຫ້ການສະໜັບສະໜຸນ (ປະ ເພດກິດຈະກຳທີ່ ທລຍ ບໍ່ໃຫ້ການສະໜັບສະໜຸນ). ຕົວແທນຈາກໜ່ວຍງານຂອງລັດ ຫຼື ຊຸມຊົນຕ້ອງໄດ້ເຫັນດີທີ່ຈະສືບຕໍ່ຮັບພາລະຄ່າໃຊ້ຈ່າຍ ເມື່ອ ທລຍ ສິ້ນສຸດລົງ ຫຼື ສຳເລັດການປະຕິບັດໂຄງການ (ຫຼາຍສຸດແມ່ນ 2 ປີ ພາຍຫຼັງທີ່ ທລຍ ໄດ້ມີການມອບໂອນໂຄງການຍ່ອຍໃຫ້ແກ່ຊຸມຊົນ ແລະ ຕ້ອງແມ່ນນອນຢູ່ໃນຊ່ວງໄລຍະທີ່ໂຄງການຍັງດຳເນີນກິດຈະກຳຢູ່). ດ້ວຍແນວຄິດດັ່ງກ່າວ, ການຊ່ວຍເຫຼືອຈາກ ທລຍ ຄ່ອຍໆມີການຫລຸດຜ່ອນການຊ່ວຍເຫຼືອລົງໃນລະຫວ່າງທີ່ ທລຍ ຍັງໃຫ້ການສະໜັບສະໜຸນຢູ່)

### 4.3 ທຶນປະກອບສ່ວນຂອງຊຸມຊົນ ແລະ ແຫຼ່ງທຶນອື່ນໆ

ເຖິງແມ່ນວ່າ ທລຍ ຈະເປັນຜູ້ສະໜອງງົບປະມານສ່ວນໃຫຍ່ເຂົ້າໃນການຈັດຕັ້ງປະຕິບັດບັນດາໂຄງການຍ່ອຍຕ່າງໆທີ່ໄດ້ນອນຢູ່ໃນແຜນພັດທະນາຂອງກຸ່ມບ້ານເປົ້າໝາຍ ແຕ່ມັນກໍ່ບໍ່ແມ່ນແຫຼ່ງທຶນດຽວທີ່ສະໜັບສະໜຸນ.

ຊຸມຊົນເອງກໍ່ມີພັນທະໃນການປະກອບສ່ວນສະໜັບສະໜຸນເຂົ້າໃນແຕ່ລະໂຄງການຍ່ອຍ. **ຊຸມຊົນຕ້ອງປະກອບສ່ວນສະໜັບສະໜຸນເຂົ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍຕ່ຳສຸດ ບໍ່ໃຫ້ຫລຸດ 10% ຂອງມູນຄ່າໂຄງການ, ຖ້າມີຂໍ້ຍົກເວັ້ນແມ່ນຕ້ອງໄດ້ຮັບການອະນຸມັດຈາກຫ້ອງການ ທລຍ ຂັ້ນແຂວງ.** ການປະກອບສ່ວນຂອງຊຸມແມ່ນສາມາດປະກອບສ່ວນໄດ້ໃນຮູບຂອງເງິນສົດ, ແຮງງານ, ວັດຖຸ ຫຼື ທີ່ດິນປຸກສ້າງໂຄງການຍ່ອຍ.

ການປະກອບສ່ວນຂອງຊຸມຊົນ ຈະຖືກກຳນົດໃນລັກສະນະມາດຕະຖານ ໂດຍຜ່ານຂະບວນການ ແລະ ວິທີການ ດັ່ງລຸ່ມນີ້:

***ທີມງານບໍລິຫານ ທລຍ ຂັ້ນສູນກາງປະກອບເພີ່ມເຕີມ,*** *ຕົວຢ່າງ: ຕ້ອງຍັ້ງຢືນອັດຕາຄ່າຈ້າງແຮງງານສຳລັບແຮງງານບໍ່ມີຝີມື (ມາດຕະຖານຄ່າແຮງງານຂັ້ນຕ່ຳພາຍໃນປະເທດ), ຈະມີວິທີການຄຳນວນການນຳເຂົ້າແຮງງານມີຝີມື, ການຄິດໄລ່ມູນຄ່າການປະກອບສ່ວນເປັນວັດຖຸຈະມີວິທີການແນວໃດ, ໃຜຈະເປັນຜູ້ຮັບຜິດຊອບລາຍງານ ແລະ ຜູ້ຕິດຕາມ/ພິສູດຂໍ້ມູນເຫຼົ່ານັ້ນ (ຕົວຢ່າງເຊັ່ນ: ແຮງງານ).* ທລຍ ສາມາດຈ່າຍຄ່າແຮງງານໃຫ້ແກ່ແຮງງານຜູ້ມີຝີມື (ຄ່າຈ້າງວິຊາການຊຸມຊົນ) ແລະ ຜູ້ມີຝີມືຕ່ຳ. ອັດຕາທີ່ນຳໃຊ້

ເຂົ້າໃນການຄິດໄລ່ ແມ່ນອີງໃສ່ມູນຄ່າຫົວໜ່ວຍທີ່ໄດ້ກຳນົດໄວ້ໃນຖານຂໍ້ມູນ ທລຍ ຊຶ່ງໄດ້ກຳນົດຄ່າຈ້າງແຮງງານມີຝີມືໂດຍສະເລ່ຍເອົາໄວ້, ຄິດໄລ່ເປັນແຕ່ລະເມືອງ ໂດຍອີງໃສ່ອັດຕາຄ່າຕ້າງທົ່ວໄປຢູ່ໃນເມືອງນັ້ນໆ. ສຳລັບຄ່າຈ້າງແຮງງານຜູ້ມີຝີມືຕ່ຳ ແມ່ນອີງໃສ່ຄ່າຈ້າງຂັ້ນຕ່ຳທີ່ລະບຸໃນກົດໝາຍແຮງງານຂອງ ສປປ ລາວ.

ການປະກອບສ່ວນທີ່ດິນປູກສ້າງໂຄງການຍ່ອຍ ແມ່ນໄດ້ພິຈາລະນາລວມຢູ່ໃນເງື່ອນໄຂການປະກອບສ່ວນຂອງຊຸມຊົນໄດ້ເຊັ່ນດຽວກັນ. ການປະກອບສ່ວນທີ່ດິນ ແມ່ນຈະໄດ້ຖືກກຳນົດໂດຍຕົວແທນຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຢູ່ໃນຂັ້ນເມືອງ. ຂັ້ນຕອນການປຶກສາຫາລືແມ່ນປະກອບມີບັນດາຄົວເຮືອນທີ່ໄດ້ຮັບຜົນກະທົບ, ຫ້ອງການພັດທະນາຊົນນະບົດ, ສະຫະພັນແມ່ຍິງ (ໃນນາມຕາງໜ້າອົງການຈັດຕັ້ງມະຫາຊົນ), ຮອງເຈົ້າເມືອງ, ຫົວໜ້າກຸ່ມບ້ານ ແລະ ພະນັກງານ ທລຍ. ການປະກອບສ່ວນທີ່ດິນຈະຕ້ອງໄດ້ມີການລາຍງານ ແລະ ປະກອບເອກະສານໃນແບບຟອມການປະກອບສ່ວນຊຸມຊົນ ແລະ ການຊົດເຊີຍ. ການປະກອບສ່ວນທີ່ດິນເກີນກວ່າ 5% ຂອງຜູ້ເປັນເຈົ້າຂອງທີ່ດິນແມ່ນຈະຕ້ອງໄດ້ຮັບການຊົດເຊີຍ. ການກໍ່ສ້າງໂຄງການຍ່ອຍທີ່ມີຜົນກະທົບຕໍ່ປະຊາຊົນຫຼາຍກວ່າ 100 ຄົນ ຫຼື ຫຼາຍກວ່າ 10% ຂອງເນື້ອທີ່ດິນຂອງຄົວເຮືອນໃດໜຶ່ງທີ່ໄດ້ຮັບຜົນກະທົບ ຫຼື ຖືກເຮືອນບຸກຄົນ ຫຼື ໂຄງສ້າງມີການຈັດສັນໃໝ່ ຫຼື ຍົກຍ້າຍ ນັ້ນຕ້ອງໄດ້ເຮັດບົດລາຍງານການຖືຄອງທີ່ດິນ ຫຼື ການຍົກຍ້ານຈັດສັນ ຊຶ່ງຈະຕ້ອງໄດ້ສົ່ງໃຫ້ຫ້ອງການ ທລຍ ຂັ້ນສູນກາງພິຈາລະນາ ແລະ ອະນຸມັດໂດຍຜູ້ອຳນວຍການບໍລິຫານ ທລຍ.

ນອກຈາກການປະກອບສ່ວນຂອງຊຸມຊົນ, ບັນດາກຸ່ມບ້ານສາມາດຊອກຫາການທຶນຊ່ວຍເຫຼືອເພີ່ມເຕີມຈາກອຳນາດການປົກຄອງທ້ອງຖິ່ນ ບໍ່ວ່າຈະເປັນການປະກອບສ່ວນເປັນເງິນສົດ ຫຼື ການຊ່ວຍເຫຼືອດ້ານວິຊາການ, ຄ່າໃຊ້ຈ່າຍອື່ນໆທີ່ອາດຈະເກີດຂຶ້ນ (ເຊັ່ນ: ຄ່າຈ້າງຄູ ຫຼື ແພດອາສາ) ແລະ ການສະໜັບສະໜູນການປົກປັກຮັກສາໄລຍະຍາວ, ເຊັ່ນດຽວກັນ ບັນດາກຸ່ມບ້ານຕ່າງໆກໍ່ສາມາດຊອກຫາທຶນ ຫຼື ການຊ່ວຍເຫຼືອດ້ານວິຊາການຈາກຜູ້ໃຫ້ທຶນ ຫຼື ອົງການຈັດຕັ້ງສາກົນອື່ນໆມາສົມທົບໄດ້ ໂດຍສະເພາະໂຄງການທີ່ບໍ່ນອນຢູ່ໃນລາຍການທີ່ ທລຍ ໃຫ້ການສະໜັບສະໜູນ. ນອກຈາກນີ້, ແຜນພັດທະນາກຸ່ມບ້ານຂອງ ທລຍ ເປັນການສະທ້ອນໃຫ້ຂະແໜງການຂອງລັດ ແລະ ຜູ້ໃຫ້ທຶນມອງເຫັນບຸລິມະສິດແຜນການພັດທະນາຂອງແຕ່ລະພື້ນທີ່. ການປະກອບສ່ວນເພີ່ມເຕີມເຫຼົ່ານີ້ ແມ່ນຈະຕ້ອງໄດ້ລະບຸຢູ່ໃນບົດລາຍງານຂອງໂຄງການ ແລະ ບັນທຶກໄວ້ຢູ່ໃນລະບົບຖານຂໍ້ມູນ ຂອງ ທລຍ, ບົດລາຍງາຍງານປະຈຳປີ ແລະ ບົດລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການຍ່ອຍແຕ່ລະປີ.

### 4.4 ປະເພດ ແລະ ຂະໜາດຂອງໂຄງການຍ່ອຍ

**ການຊ່ວຍເຫຼືອ ຂອງ ທລຍ ມີຈຸດປະສົງເພື່ອຫລຸດຜ່ອນຄວາມທຸກຍາກ ແລະ ປັບປຸງຊີວິດຄວາມເປັນຢູ່ຂອງຊຸມຊົນ.** ທຶນຊ່ວຍເຫຼືອລ້າ ຂອງ ທລຍ ໂດຍປົກກະຕິແມ່ນນຳໃຊ້ເຂົ້າໃນການກໍ່ສ້າງໂຄງການຂະໜາດນ້ອຍຢູ່ໃນລະດັບຊຸມຊົນ (ອີງໃສ່ແຕ່ລະໂຄງການ). ໂຄງການເຫຼົ່ານີ້ ແມ່ນການຕັດສິນໃຈ ແລະ ຈັດຕັ້ງປະຕິບັດໂດຍຊຸມຊົນ ອີງຕາມຂໍ້ມູນທາງດ້ານວິຊາການ, ການອອກແບບ ແລະ ການກະກຽມງົບປະ

ມານແມ່ນໄດ້ຮັບການຊ່ວຍຈາກທີມງານ ທລຍ ແລະ ຂະແໜງການຂອງລັດ ໂດຍອີງໃສ່ກອບເພດານງົບປະມານຂອງແຕ່ລະກຸ່ມບ້ານເປັນຫຼັກ.

**ທລຍ ສາມາດສະໜັບສະໜູນໂຄງການໂດຍທົ່ວໄປ.** ບັນດາໂຄງການຕ່າງໆຕ້ອງເນັ້ນໃສ່ປັບປຸງເຮັດໃຫ້ຊຸມຊົນສາມາດເຂົ້າເຖິງເສັ້ນທາງຄົມມະນາຄົມ ແລະ ການບໍລິການຂອງລັດ (ຕົວຢ່າງ: ປັບປຸງການເຂົ້າເຖິງ ແລະ ການນຳໃຊ້ເສັ້ນທາງ; ອັດຕາການເຂົ້າໂຮງຮຽນເພີ່ມຂຶ້ນ, ການເຂົ້າໃຊ້ບໍລິການສາທາລະນະສຸກຂັ້ນພື້ນຖານ, ການເຂົ້າເຖິງນ້ຳສະອາດ, ປັບປຸງລະບົບສຸຂະອະນາໄມ ແລະ ອື່ນໆ). ໂຄງການຍ່ອຍຕ້ອງເປັນໂຄງການທີ່ຊຸມຊົນສາມາດເຮັດເອງໄດ້ ຫຼື ຊຸມຊົນສາມາດຈ້າງຜູ້ຮັບເໝົາຕາມທ້ອງຖິ່ນໄດ້. ໂຄງການຍ່ອຍຕ່າງໆສາມາດປະກອບມີກິດຈະກຳຝຶກອົບຮົມເສີມ ທີ່ເປັນການເສີມຂະຫຍາຍການເຂົ້າເຖິງ ຫຼື ການຊົມໃຊ້ (ເຊັ່ນ: ການຝຶກອົບຮົມແພດ ຫຼື ຄູ ພາຍຫຼັງສຳເລັດການກໍ່ສ້າງສຸກສາລາ ຫຼື ໂຮງຮຽນ)

**"ແບບເປີດທາງເລືອກ"** ໂດຍທົ່ວໄປແລ້ວ ທລຍ ນຳໃຊ້ຮູບແບບການ "ເປີດທາງເລືອກ" ໃນການໃຫ້ຊຸມຊົນສາມາດເລືອກໂຄງການຍ່ອຍໄດ້ຕາມໃຈ, ຊຶ່ງໝາຍຄວາມວ່າ ຊຸມຊົນໃນເຂດເປົ້າໝາຍໄດ້ຮັບການອະນຸຍາດໃຫ້ສະເໜີເອົາໂຄງການພື້ນຖານໂຄງລ່າງດ້ານສັງຄົມ ຫຼື ດ້ານການຜະລິດທີ່ສາມາດຫລຸດຜ່ອນຄວາມທຸກຍາກຂອງປະຊາຊົນບັນດາເຜົ່າໄດ້ ເພື່ອເປັນການເຕີມເຕັມຊ່ອງວ່າງການບໍລິການທາງສັງຄົມຢູ່ໃນລະດັບກຸ່ມບ້ານ ແລະ ລະດັບບ້ານ.

**ທຸກໆໂຄງການຍ່ອຍທີ່ມີເງື່ອນໄຂແມ່ນຈະໄດ້ຮັບການກັ່ນຕອງ ແລະ ຜ່ານຂະບວນການປະເມີນທາງດ້ານເຕັກນິກວິຊາການເສຍກ່ອນ.** ຂັ້ນຕອນນີ້ ຖືວ່າມີຄວາມສຳຄັນຫຼາຍ ໃນການຄັດເລືອກໂຄງການຍ່ອຍ ຊຶ່ງມັນອາດຈະມີສ່ວນກໍ່ໃຫ້ເກີດໄພພິບັດທຳມະຊາດ ລວມທັງຜົນກະທົບຕໍ່ສະພາບອາດກາດ. ພາຍຫລັງການກັ່ນຕອງ ແລະ ການປະເມີນທາງດ້ານວິຊາການແລ້ວ, ທີມງານ ທລຍ ຈະຊ່ວຍຊຸມຊົນໃນການອອກແບບລາຍລະອຽດໂຄງການຍ່ອຍ ພ້ອມທັງຄິດໄລ່ງົບປະມານ, ຈາກນັ້ນຈະນຳໄປປຶກສາຫາລື ແລະ ຮັບຮອງຢູ່ໃນກອງປະຊຸມປະສານງານ ແລະ ວາງແຜນຂັ້ນເມືອງ ໃນຂັ້ນຕອນຕໍ່ໄປ.

- ບົດສະເໜີໂຄງການຍ່ອຍ ແມ່ນການລົງທຶນ ສຳລັບບ້ານໃດບ້ານໜຶ່ງ ຫຼື ລວມຫຼາຍໆບ້ານເຂົ້າດ້ວຍກັນ ແລະ ຍື່ນເປັນບົດສະເໜີໂຄງການຍ່ອຍລະດັບກຸ່ມບ້ານຊຶ່ງປະກອບມີຫຼາຍບ້ານ.
- ມັນເປັນສິ່ງສຳຄັນທີ່ຈະຕ້ອງໄດ້ເອົາໃຈໃສ່, ເພື່ອເຮັດໃຫ້ບັນລຸຈຸດປະສົງຂອງ ທລຍ ໃນການຫລຸດຜ່ອນຄວາມທຸກຍາກ, ຢ່າງນ້ອຍ 66% ຂອງໂຄງການຍ່ອຍຈະຕ້ອງຕັ້ງຢູ່ບ້ານທຸກຍາກ ໃນກຸ່ມບ້ານ (ເບິ່ງພາກທີ 4.1.1. ການຄັດເລືອກເປົ້າໝາຍ ທລຍ ໄລຍະ 2. ອະທິບາຍກ່ຽວກັບວິທີການກຳນົດບ້ານທຸກຍາກ)
- ທລຍ ໃຫ້ການສະໜັບສະໜູນ/ລົງທຶນ ໃນໂຄງການທີ່ເປັນຂອງສ່ວນລວມ, ທລຍ ຈະບໍ່ສະໜັບສະໜູນ ຫຼື ໃຫ້ທຶນເຮັດກິດຈະກຳຍ່ອຍທີ່ເປັນຜົນປະໂຫຍດສະເພາະຂອງບຸກຄົນ ຫຼື ຄົວເຮືອນໃດໜຶ່ງ ລວມທັງບໍ່ໃຫ້ເງິນ/ທຶນສິນເຊື່ອ ເພື່ອເຮັດທຸລະກິດຂະໜາດນ້ອຍ.

ມີຂໍ້ຍົກເວັ້ນ 2-3 ປະການ (ໂດຍສະເພາະການເຂົ້າເຖິງທີ່ຕິດພັນກັບໂຄງການຍ່ອຍດ້ານພື້ນຖານໂຄງລ່າງ ຊຶ່ງອາດຈະໃຊ້ເຕັກໂນໂລຢີ ແລະ ຄ່າໃຊ້ຈ່າຍສູງເກີນໄປໃນການປົກປັກຮັກສາຢູ່ໃນເຂດຊຸມຊົນ ຫຼື ອາດຈະກໍ່ໃຫ້ເກີດອັນຕະລາຍ/ຄຸກຄາມຕໍ່ສະພາບແວດລ້ອມ ຫຼື ສັງຄົມໄດ້) ການເລືອກເອົາໂຄງການຍ່ອຍແມ່ນຂຶ້ນຢູ່ກັບຊຸມຊົນເປັນຜູ້ເລືອກເອງ, ງົບປະມານທີ່ໄດ້ຈັດສັນໃຫ້ແມ່ນແທດເໝາະກັບການຈັດສັນຊັບພະຍາກອນໂດຍທົ່ວໄປຂອງກຸ່ມບ້ານ ແລະ ບໍ່ເໝາະສົມສຳລັບອຳນາດການປົກຄອງຂັ້ນທ້ອງຖິ່ນ.

ຕາຕະລາງ 3 ອະທິບາຍເຖິງປະເພດ ແລະ ການຈັດລຳດັບໂຄງການຍ່ອຍ ທີ່ ທລຍ ໃຫ້ທຶນພາຍໃຕ້ທຶນສະໜັບສະໜູນ ຈາກ ທລຍ ແລະ ບາງກິດຈະຍ່ອຍທີ່ໂດຍປົກກະຕິແລ້ວ ທລຍ ຈະບໍ່ໃຫ້ການສະໜັບສະໜູນທຶນ.

### 4.5 ຍຸດທະສາດເພື່ອຮັບມືກັບໄພພິບັດ ແລະ ການຫລຸດຜ່ອນໄພພິບັດທາງທຳມະຊາດ

**ທລຍ ໄລຍະ 2 ຈະໃຫ້ການຊ່ວຍເຫຼືອ ແລະ ແກ້ໄຂບັນດາໂຄງການດ້ານພື້ນຖານໂຄງລ່າງທີ່ຖືກຜົນກະທົບຈາກໄພພິບັດ ແລະ ການປ່ຽນແປງດ້ານສະພາບອາກາດ ແລະ ເຫດການອື່ນໆທີ່ຈະເກີດຂຶ້ນ.** ສິ່ງເຫຼົ່ານີ້ ຈະບັນລຸຜົນສຳເລັດໄດ້ ໂດຍຜ່ານມາດຕະການດັ່ງຕໍ່ໄປນີ້:

- ຕ້ອງມີການດຳເນີນການທົບທວນຢ່າງລະອຽດ ກ່ຽວກັບມາດຕະຖານການອອກແບບຂອງພະແນກວິສະວະກຳ ວ່າມາດຕະການ ການພິສູດດ້ານໄພພິບັດ ສາມາດນຳມາລວມກັນໄດ້;
- ການແນະນຳລາຍລະອຽດການປະເມີນຄວາມສ່ຽງ ແລະ ໄພພິບັດ ແລະ ແບບຟອມສຳຫຼວດເພື່ອນຳໃຊ້ໄລຍະຕົ້ນຂອງການອອກແບບໂຄງການຍ່ອຍໃນແຕ່ລະຮອບວຽນ;
- ຕົ້ນທຶນການຈ້າງງານ/ຜົນປະໂຫຍດ ແລະ ມາດຕະການໃນການປະເມີນຊັບພະຍາກອນຕໍ່ຂະບວນການຄັດເລືອກໂຄງການຍ່ອຍ; ແລະ
- ການຈັດຝຶກອົບຮົມໃຫ້ແກ່ພະນັກງານຂອງພະແນກວິສະວະກຳ ກ່ຽວກັບການອອກແບບ ເພື່ອຫລຸດຜ່ອນຄວາມສ່ຽງໄພພິບັດ ແລະ ເຕັກນິກການກໍ່ສ້າງ.

**ທລຍ ໄລຍະ 2 ແມ່ນສາມາດເຮັດໜ້າທີ່ເປັນໜ່ວຍງານຫຼັກໃນການຮັບມື ພາຍຫຼັງເກີດໄພພິບັດທຳມະຊາດ ໃນຂັ້ນທ້ອງຖິ່ນ ແລະ ທົ່ວປະເທດ.** ທລຍ 2 ຈະຍັງຄົງຮັກສາຂອດການປະສານສົມທົບກັບບັນດາກະຊວງຕ່າງໆທີ່ກ່ຽວຂ້ອງທີ່ເຮັດວຽກຢູ່ເຂດຊົນນະບົດ ພາຍໃນປະເທດ ແລະ ມີບົດບາດໃນການເຮັດໜ້າທີ່ໃນການສຳຫຼວດ-ອອກແບບ ຫຼື ຈັດຕັ້ງປະຕິບັດໃນຄວາມພະຍາຍາມໃຫ້ການຊ່ວຍເຫຼືອ ພາຍຫຼັງເກີດໄພພິບັດທີ່ເກີດຈາກທຳມະຊາດ ຫຼື ຈາກຝີມືມະນຸດ. ການໃຫ້ທຶນເພື່ອຕອບສະໜອງຕໍ່ສະຖານນະການສຸກເສີນນີ້ ແມ່ນຈະມີການໂອນເງິນຜ່ານພາຍໃນ ຫຼື ລະຫວ່າງປະເທດ ໂດຍອີງໃສ່ສະຖານະການຕົວຈິງ. ດັ່ງທີ່ຄາດຫວັງໄວ້ວ່າ ຄວາມສຳພັນທີ່ມີຢູ່ລະຫວ່າງ ທລຍ ໄລຍະ2 ກັບກະຊວງການເງິນ ແລະ ກະຊວງຕ່າງໆທີ່ກ່ຽວຂ້ອງທີ່ເຮັດວຽກໃນຂົງເຂດຊົນນະບົດ ໃນ ສປປ ລາວ ຈະຕອບສະໜອງຕໍ່ຄວາມພະຍາຍາມໃນການແກ້ໄຂບັນຫາໄພພິບັດສຸກເສີນໃນລັກສະນະທີ່ສົມເຫດສົມຜົນ.

**ບັນດາກິດຈະກໍາໃນການຄຸ້ມຄອງຄວາມສ່ຽງໄພພິບັດທໍາມະຊາດ, ທລຍ ແມ່ນໄດ້ຮັບຄວາມຄາດຫວັງໃຫ້ນໍາເອົາບັນຫາເລື່ອງບົດບາດຍິງ-ຊາຍ ມາພິຈາລະນາເປັນກໍລະນີພິເສດ ເຊັ່ນດຽວກັບຄວາມຕ້ອງການຂອງກຸ່ມສ່ຽງຕ່າງໆ.** ຕົວຢ່າງເຊັ່ນ: ບັນຫາບົດບາດຍິງ-ຊາຍໃນຊຸມຊົນ ກ່ຽວກັບການຄຸ້ມຄອງຄວາມສ່ຽງທາງໄພພິບັດ ມີແນວໂນ້ມທີ່ຈະໃຫ້ຄວາມສໍາຄັນຫຼາຍຂື້ນຢ່າງໄວວາຂອງຜູ້ຍິງຢ່າງຕໍ່ເນື່ອງ ໃນການມີສ່ວນຮ່ວມ ໃນການວາງແຜນ ແລະ ຂະບວນການມີສ່ວນຮ່ວມທີ່ເປັນການປະກອບສ່ວນກະກຽມຄວາມພ້ອມຂອງຊຸມຊົນໃນຊ່ວງເກີດໄພພິບັດ.

**ແມ່ຍິງສາມາດມີສ່ວນຮ່ວມຢ່າງແຂງແຮງໃນການຮັບ ແລະ ເຜີຍແຜ່ຄໍາເຕືອນກ່ຽວກັບນໍ້າຖ້ວມ ແລະ ໄພພິບັດທີ່ກ່ຽວຂ້ອງໄປຍັງຄົວເຮືອນ ແລະ ຊາວກະສິກອນໃນເຂດທໍາການຜະລິດຂອງຊຸມຊົນ.** ກຸ່ມບໍລິສັດເມືອງໄຟກໍ່ສ້າງຊົນລະປະທານຕ້ອງໄດ້ຮັບການແຈ້ງເຕືອນໄວທີ່ສຸດເທົ່າທີ່ເປັນໄປໄດ້ ເພື່ອໃຫ້ພວກເຂົາເຂົ້າໄປເຂດທ້ອງຖິ່ນເພື່ອກວດກາເບິ່ງຊົນລະປະທານ, ຝາຍ ແລະ ໂຄງສ້າງອາຄານ ແລະ ກະກຽມເພື່ອຮັບມືກັບໄພນໍ້າຖ້ວມທີ່ຈະເກີດຂື້ນ. ນີ້ເປັນຂັ້ນຕອນທີ່ກ່ຽວຂ້ອງໃນການຍົກຍ້າຍຝາກັ້ນນໍ້າຂອງຝາຍ ແລະ ເປີດປະຕູລະບາຍນໍ້າ. ໂດຍສ່ວນຫຼາຍຊາວກະສິກອນຈະພັກອາໄສຢູ່ບ່ອນທໍາການຜະລິດໃນຊ່ວງລະດູການປູກຝັງ ແລະ ລະດູເກັບກ່ຽວຜົນຜະລິດ. ດັ່ງນັ້ນແມ່ຍິງທີ່ຢູ່ໃນບ້ານຈະເປັນຜູ້ມີບົດບາດສໍາຄັນໃນການຮັບ ແລະ ຖ່າຍທອດການແຈ້ງເຕືອນພະຍຸ ແລະ ໄພພິບັດອື່ນໆທີ່ອາດຈະເກີດຂື້ນ.

ທລຍ ຄວນເອົາໃຈໃສ່ໃນການອໍານວຍຄວາມສະດວກໃຫ້ແກ່ໜ່ວຍງານປ້ອງກັນໄພພິບັດຂັ້ນ ແຂວງ ແລະ ຂັ້ນເມືອງໃນການສື່ສານຂໍ້ມູນຂ່າວສານກັບບັນດາບ້ານ ແລະ ກຸ່ມບ້ານຕ່າງໆ. ແມ່ຍິງຄວນໄດ້ຮັບການສະໜັບສະໜຸນໃຫ້ເຂົ້າມາມີບົດບາດສໍາຄັນໃນການເຮັດໜ້າທີ່ດັ່ງກ່າວນີ້ (ເບິ່ງລາຍລະອຽດຂໍ້ ແນະນໍາກ່ຽວກັບແຜນການສົ່ງເສີມບົດບາດຍິງ-ຊາຍ ແລະ ການຄຸ້ມຄອງຄວາມສ່ຽງທາງໄພພິບັດ)

## 4.6 ກິດຈະກໍາຝຶກອົບຮົມທີ່ຕິດພັນກັບໂຄງການຍ່ອຍ.

**ບັນດາຊຸມຊົນຕ່າງໆຍັງມີທາງເລືອກໃນການເຮັດກິດຈະກໍາຝຶກອົບຮົມ (ພາຍໃຕ້ງົບປະມານໂຄງການຍ່ອຍ) ຊຶ່ງກ່ຽວຂ້ອງໂດຍກົງກັບໂຄງການພື້ນຖານໂຄງລ່າງທີ່ຊຸມຊົນໄດ້ຮັບການສະໜັບສະໜຸນທຶນ ຈາກ ທລຍ.** ບັນດາກິດຈະກໍາຝຶກອົບຮົມເລົ່ານັ້ນ ແມ່ນມີຈຸດປະສົງເພື່ອປັບປຸງການນໍາໃຊ້ຖະໜົນ, ເພີ່ມຄວາມເປັນເຈົ້າການໃນການຄຸ້ມຄອງໂຄງການຍ່ອຍ ຫຼື ສົ່ງເສີມໃຫ້ໄດ້ຮັບຜົນປະໂຫຍດຈາກໂຄງການຍ່ອຍ ໂດຍສະເພາະແມ່ນປະຊາຊົນທີ່ທຸກຍາກໃນຊຸມຊົນ ລາຍລະອຽດກິດຈະຝຶກອົບຮົມ[7] ໄດ້ລະບຸໄວ້ໃນຕາຕະລາງ 3.

ການອະນຸມັດກິດຈະກໍາຝຶກອົບຮົມເພີ່ມເຕີມ ແມ່ນຂື້ນກັບຄວາມສົນໃຈຂອງຊຸມຊົນ ແລະ ຄວາມອາດສາມາດຂອງພວກເຂົາ (ໂດຍມີການຊ່ວຍເຫຼືອຈາກພະນັກງານ ທລຍ) ໃນການຄັດເລືອກເອົາຜູ້ສະໜອງການຝຶກອົບຮົມທີ່ເໝາະສົມ.

---

[7] ນີ້ແມ່ນລາຍການຕົວຢ່າງເທົ່ານັ້ນ, ມັນຍັງມີລາຍການຝຶກອົບຮົມອື່ນໆ ທີ່ຍັງບໍ່ໄດ້ລວມເອົາມາສະແດງໃຫ້ເຫັນໃນທີ່ນີ້.

## ຕາຕະລາງ 3: ລຳດັບໂຄງການຍ່ອຍ ແລະ ຕົວຢ່າງກິດຈະກຳຝຶກອົບຮົມທີ່ກ່ຽວຂ້ອງ

| ປະເພດໂຄງການ | ຕົວຢ່າງໂຄງການ | ຕົວຢ່າງ ຝອຮ ທີ່ກ່ຽວຂ້ອງ | ໂຄງການທີ່ບໍ່ໃຫ້ ການສະໜັບສະໜຸນ |
|---|---|---|---|
| ການເຂົ້າເຖິງດ້ານຄົມມະນາຄົມ | ຂົວຂະໜາດນ້ອຍ, ທາງຍ່າງ, ທາງມ້າ, ທໍ່ລະບາຍນໍ້າ, ທາງລາດ, ກຳແພງກັ້ນນໍ້າ, ສ້ອມແປງຖະໜົນ ແລະ ຍົກລະດັບເສັ້ນທາງ, ຕັດຜັງບ້ານ | ເຕັກນິກການປ້ອງກັນດິນເຈື່ອນ, ການສ້າງຕັ້ງ/ການດຳເນີນການຂອງກຸ່ມຜູ້ໃຊ້ເສັ້ນທາງ, ການກໍ່ສ້າງ/ບຳລຸງຮັກສາທໍ່ລະບາຍນໍ້າແບບງ່າຍດາຍ, ການຄຸ້ມຄອງຊັບພະຍາ ກອນທຳມະຊາດ, ການປ້ອງກັນພະຍາດຕິດຕໍ່ທາງເພດສຳພັນ, ການຄ້າມະນຸດ, ການປ້ອງກັນຄວາມປອດໄພທີ່ກຽວຂ້ອງກັບການໃຊ້ຖະໜົນຫົນທາງ. | ກໍ່ສ້າງເສັ້ນທາງໃໝ່, ປູໜ້າທາງ/ເຮັດທາງເຂົ້າໄປຫາທີ່ຢູ່ອາໄສໃນປ່າ ຫຼື ເຂດພື້ນທີ່ປ່າສະຫງວນ |
| ການສະໜອງໄຟຟ້າແກ່ຊຸມຊົນ | ເຄື່ອງປັ່ນໄຟຟ້ານໍ້າຕົກຂະໜາດນ້ອຍ, ສາຍໄຟ, ຂະຫຍາຍຕາຂ່າຍ, ສາຍສົ່ງໄຟຟ້າ | ປຸກລະດົມການຊົມໃຊ້ຜະລິດຕະພັນໄຟຟ້າ. | ເຄື່ອງປັ່ນໄຟທີ່ໃຊ້ນໍ້າມັນກະຊວນ ຫຼື ແອັດຊັງ |
| ສິ່ງອຳນວຍຄວາມສະດວກດ້ານສາທາລະນະສຸກຂັ້ນພື້ນຖານ. | ສຸກສາລາ (ອາຄານ, ເຟີນີເຈີ, ຫ້ອງນໍ້າ, ອຸປະກອບຮັບໃຊ້, ຢາ, ເບ້ຍລ້ຽງສຳລັບແພດ/ໝໍຕຳແຍສັນຍາຈ້າງ[8] ເປັນເງິນຫຼືວັດຖຸ, ຕູ້ຢາປະຈຳບ້ານ, ຝອຮ; ທຶນຮຽນແພດ, ອຸປະກອນການແພດ, ຈັກປັ່ນໄຟຟ້າ. | ໂຄສະນາການສັກຢາປ້ອງກັນພະຍາດ (ວັກຊີນ), ການໂຄສະນາປຸກຈິດສຳນຶກການປ້ອງກັນ ແລະ ການຮັກສາສຸຂະພາບ ຢູ່ໃນຊຸມຊົນ, ຝຶກອົບຮົມອາສາສະມັກສາທາລະນະສຸກຂັ້ນບ້ານ ແລະ ໂພຊະນາການ | |

[8] ທລຍ ອາດຈະສະໜັບສະໜຸນທຶນພິເສດທີ່ເກີດຂຶ້ນຊົ່ວຄາວ ລວມທັງສະໜອງເບ້ຍລ້ຽງຊົ່ວຄາວ ໃຫ້ແກ່ພະນັກງານສັນຍາຈ້າງ (ແພດ, ຄູ) ຄ່າໃຊ້ຈ່າຍດັ່ງກ່າວຕ້ອງໄດ້ມີການຈັດສັນຢ່າງຊັດເຈນ ແລະ ເປັນໄປຕາມຂໍ້ຈຳກັດຂອງລາຍຊື່ໂຄງການ ທີ່ ທລຍ ບໍ່ໃຫ້ການສະໜັບສະໜຸນ, ການຈ່າຍຄ່າເບ້ຍລ້ຽງຊົ່ວຄາວແມ່ນບໍ່ເກີນ 2 ປີ ເຖິງແມ່ນວ່າຈະມີບາງຂໍ້ຍົກເວັ້ນ ຊຶ່ງຈະຕ້ອງໄດ້ມີການຈັດສັນໃຫ້ເປັນໄປຕາມປົກກະຕິ ແລະ ຕ້ອງໄດ້ຮັບການກວດກາຈາກຜູ້ອຳນວຍການ ທລຍ.

| ປະເພດໂຄງການ | ຕົວຢ່າງໂຄງການ | ຕົວຢ່າງ ຝອຣ ທີ່ກ່ຽວຂ້ອງ | ໂຄງການທີ່ບໍ່ໃຫ້ການສະໜັບສະໜູນ |
|---|---|---|---|
| ລະບົບນ້ຳພາຍໃນຊຸມຊົນ | ນ້ຳສ້າງ, ນ້ຳລິນ, ວິດຖ່າຍ, ອື່ນໆ. | ການປົກປ້ອງປ່າແຫຼ່ງນ້ຳ, ຄອງລະບາຍນ້ຳ ເພື່ອສຸຂະອະນາໄມຄົວເຮືອນ/ບ້ານ | ຕໍ່ທໍ່ນ້ຳເຂົ້າຄົວເຮືອນ |
| ດ້ານການສຶກສາ | ໂຮງຮຽນ & ສະຖານລ້ຽງເດັກ(ອາຄານ, ຫ້ອງນ້ຳ, ເງິນເດືອນຊົ່ວຄາວສຳລັບຄູສັນຍາຈ້າງ[6], ເຄື່ອງໃຊ້, ອຸປະກອນ, ເຟີນີເຈີ, ຝຶກອົບຮົມ, ທຶນການສຶກສາ, ປື້ມແບບຮຽນ, ເຄື່ອງດົນຕີ). | ຝຶກອົບຮົມຍົກລະດັບຄູ, ອຸປະກອນສົ່ງເສີມການສຶກສາ (ປື້ມ, ອຸປະກອນຊ່ວຍສອນ, ກະດານດຳ), ການສ້າງຕັ້ງ/ການດຳເນີນງານຂອງຄູ/ພໍ່ແມ່ນັກຮຽນ, ການເຜີຍແຜ່ຂໍ້ມູນຂ່າວສານເພື່ອກະຕຸ້ນການເຂົ້າຮຽນຂອງເດັກນັກຮຽນ. | ການສະໜອງ ຈາກລັດຖະບານ |
| ພື້ນຖານໂຄງລ່າງດ້ານກະສິກຳ | ຝາຍນ້ຳລົ້ນ, ໜອງປາ, ຄອງເໝືອງ, ທຳນົບ, ປະຕູນ້ຳ, ຄັນປ້ອງນ້ຳລົ້ນ, ສິ່ງອຳນວຍຄວາມສະດວກໃນການລ້ຽງສັດ, ສາງເກັບແນວພັນພືດ, ຮົ້ວອ້ອມສະຖານທີ່ລ້ຽງສັດ, ສວນກ້າວເບ້ຍໄມ້ ແລະ ໂຄງການກໍ່ສ້າງອື່ນໆ[9] | ການປູກພືດຜັກສວນຄົວ, ຄວາມພະຍາຍາມຊອກຫາຊ່ອງທາງການຕະຫຼາດຜົນຜະລິດກະສິກຳ, ການລ້ຽງສັດ/ຄວາມຕ້ອງການດ້ານສັດຕະວະແພດ, ວິທີການຍົກສະມັດຕະພາບຜົນຜະລິດທີ່ເປັນມິດກັບສິ່ງແວດລ້ອມ, ໂພສະນາການຄົວເຮືອນ | |
| ພື້ນຖານໂຄງລ່າງທາງສັງຄົມ | ຕະຫຼາດ (ອາຄານ, ຮ່ອງລະບາຍນ້ຳ, ນ້ຳສ້າງ ແລະ ເຟີນີເຈີຕ່າງໆ | | ສະໂມສອນຊຸມຊົນ |

[9] ໂຄງການພື້ນຖານໂຄງລ່າງດ້ານກະສິກຳ ຈະໄດ້ຮັບການລົງທຶນ ກໍ່ຕໍ່ເມື່ອມີການສະໜອງວັດສະດຸ, ແລະ ມີຜູ້ໄດ້ຮັບຜົນປະ ໂຫຍດຢ່າງໜ້ອຍ 75% ຫຼື ຫຼາຍກວ່ານັ້ນຈາກບ້ານທີ່ໂຄງການຕັ້ງຢູ່.

## 4.7 ປະເພດໂຄງການ/ກິດຈະກຳທີ່ ທລຍ ບໍ່ໃຫ້ການສະໜັບສະໜູນ ("ລາຍການທີ່ບໍ່ໃຫ້ການສະໜັບສະໜູນ")

ເພື່ອຫຼີກລ້ຽງຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ, ຈຳນວນກິດຈະກຳທີ່ບໍ່ໄດ້ລວມຢູ່ໃນລາຍການໂຄງການຍ່ອຍ ທີ່ ທລຍ ໃຫ້ທຶນສະໜັບສະໜຸນ, ດ້ວຍເຫດຜົນດັ່ງກ່າວ, ທລຍ ຈຶ່ງບໍ່ໃຫ້ທຶນສະໜັບສະໜຸນ:

- ການກໍ່ສ້າງເສັ້ນທາງໃໝ່ ເພື່ອໃຫ້ສອດຄ່ອງກັບມາດຕະຖານການຈັດລະດັບປະເພດເສັ້ນທາງໃໝ່ຂອງກະຊວງໂຍທາທິການ ແລະ ຂົນສົ່ງ;

  **ຂໍ້ຄວນຈື່**: ການຍົກລະດັບ ຫຼື ການປັບປຸງເສັ້ນທາງຍ່າງ ຫຼື ທາງລົດລາງ ໃຫ້ເປັນທາງລົດຕາມມາດຕະຖານທົ່ວໄປ ແມ່ນບໍ່ໄດ້ຮັບການຍົກເວັ້ນ, ຕ້ອງປະຕິບັດໃຫ້ສອດຄ່ອງກັບງົບປະມານຂອງ ທລຍ, ການຮັບປະກັນຄວາມຍືນຍົງ, ມາດຖານທາງດ້ານເສດຖະກິດ-ສັງຄົມ ແລະ ສະພາບແວດລ້ອມ;
- ການກໍ່ສ້າງເຂື່ອນ;
- ການກໍ່ສ້າງສະໂມສອນຊຸມຊົນ;
- ເລື່ອຍ/ຈັກຕັດໄມ້, ຢາປາບສັດຕູພືດ, ຢາຂ້າແມງໄມ້, ສານເຄມີກຳຈັດວັດສະພືດ, ໄຍຫີນ ຫຼື ການລົງທຶນອື່ນທີ່ເປັນອັນຕະລາຍຕໍ່ສະພາບແສດລ້ອມ;
- ກິດຈະກຳທີ່ເປັນຜົນປະໂຫຍດສະເພາະບຸກຄົນ ລວມທັງທຶນຊ່ວຍເຫຼືອລ້າ, ສິນເຊື່ອ, ເງິນກູ້, ອຸປະກອນ ແລະ ການລົງທຶນເຂົ້າໃນຄົວເຮືອນ;
- ຕໍ່ທໍ່ນ້ຳເຂົ້າຄົວເຮືອນສ່ວນບຸກຄົນ;
- ການສະໜອງວັດຖຸ ຫຼື ອຸປະກອນທີ່ຮັບໃຊ້ຜົນປະໂຫຍດພຽງບາງຄອບຄົວ;
- ການກໍ່ສ້າງອາຄານ ຫຼື ຫ້ອງການ ເພື່ອຈຸດປະສົງນຳໃຊ້ເຂົ້າໃນວຽກງານຂອງລັດ;
- ການຈ່າຍເງິນເດືອນໃຫ້ແກ່ພະນັກງານລັດຖະກອນ ຫຼື ເງິນເດືອນແກ່ພະນັກງານທີ່ສັງກັດອົງການຈັດຕັ້ງຂອງລັດທີ່ໄດ້ຮັບທຶນສະໜັບສະໜຸນຈາກລັດຖະບານແລ້ວ;
- ການຕັ້ງທີ່ຢູ່ອາໄສໃໝ່ ຫຼື ການຂະຫຍາຍທີ່ຢູ່ອາໄສເດີມໃນເຂດທີ່ຢູ່ອາໄສສຳຄັນ, ເຂດພື້ນທີ່ປ້ອງກັນ ຫຼື ເປັນເຂດພື້ນທີ່ສະເໜີເພື່ອສະຫງວນໄວ້;

  **ຂໍ້ຄວນຈື່**: ການຕັ້ງຖິ່ນທີ່ຢູ່ອາໄສທີ່ມີຢູ່ກ່ອນແລ້ວນັ້ນ, ການສະເໜີເພື່ອຂໍທຶນສະໜັບສະໜຸນ/ຊ່ວຍເຫຼືອນັ້ນ ຕ້ອງປະຕິບັດຕາມກົດລະບຽບ ຫຼື ຂໍ້ກຳນົດຂອງແຕ່ທ້ອງຖິ່ນ ກ່ຽວກັບການຄຸ້ມຄອງທີ່ດິນ ແລະ ບົດບັນຍັດອື່ນໆຂອງແຜນການຄຸ້ມຄອງເຂດພື້ນທີ່ສະຫງວນ;
- ໂຄງການຍ່ອຍ ຫຼື ກິດຈະກຳຕ່າງໆທີ່ກ່ຽວຂ້ອງ ຫຼື ນຳໄປສູ່ການສະແຫວງຫາປະໂຫຍດຈາກການໃຊ້ແຮງງານເດັກນ້ອຍ ຫຼື ການທຳຮ້າຍເດັກນ້ອຍ ຫຼື ການຄ້າມະນຸດ;
- ການກໍ່ສ້າງຫົນທາງ ຫຼື ການບູລະນະພື້ນຟູທຸກປະເພດຖືກທີ່ຢູ່ອາໄສ ແລະ ສິ່ງທີ່ມີຢູ່ ຫຼື ເປັນເຂດພື້ນທີ່ສະເໜີ ເພື່ອສະຫງວນເອົາໄວ້;
- ອາຄານ ຫຼື ສິ່ງອຳນວຍຄວາມສະດວກທີ່ໃຊ້ເພື່ອຈຸດປະສົງທາງສາສະໜາ;

- ການບຸກລຸກທີ່ດິນ ແລະ ການຍົກຍ້າຍຈັດສັນທີ່ບໍ່ສະໝັກໃຈ[10]; ແລະ
- ການແຊກແຊງແນວຄິດ ແລະ/ຫຼື ການປຸ່ງນແປງບູລິມະສິດທີ່ກຳນົດໂດຍຊຸມຊົນ ແລະ ໄດ້ຖືກຮັບຮອງເອົາຢູ່ໃນກອງປະຊຸມຂັ້ນກຸ່ມບ້ານ ໂດຍປາສະຈາກການປຶກສາຫາລືກັບຊຸມຊົນ, ການທົບທວນບູລິມະສິດ ແລະ ການລຶບລ້າງ ໂດຍທີມງານບໍລິຫານໂຄງການ.

**ໂຄງການ ທລຍ ຈະບໍ່ສະໜັບສະໜູນ ກ່ຽວກັບການຍົກຍ້າຍຈັດສັນທີ່ຢູ່ອາໄສ ແລະ/ຫຼື ການເຕົ້າໂຮມບ້ານຂອງລັດຖະບານ ທີ່ບໍ່ສອດຄ່ອງກັບນະໂຍບາຍຂອງທະນາຄານໂລກ.**

**ກິດຈະກຳຍ່ອຍໃດໜຶ່ງ ທີ່ບໍ່ເປັນທີ່ຍອມຮັບຂອງປະຊາຊົນບັນດາເຜົ່າ ຢູ່ໃນບ້ານທີ່ມີຫຼາກຫຼາຍຊົນເຜົ່າທີ່ດຳລົງຊີວິດຢູ່ຮ່ວມກັນ ແມ່ນບໍ່ສາມາດໄດ້ຮັບການສະໜັບສະໜູນທຶນ ໂດຍບໍ່ຕ້ອງມີການທົບທວນຄືນອີກ.** ບັນດາກິດຈະກຳຍ່ອຍທີ່ມີຜົນກະທົບຮ້າຍແຮງຕໍ່ປະຊາຊົນບັນດາເຜົ່າທີ່ມີຄວາມສ່ຽງໃນບ້ານ ແລະ ບ້ານໃກ້ຄຽງ ແມ່ນບໍ່ຈະບໍ່ໄດ້ຮັບການສະໜັບສະໜູນ.

**ຍຸດທະສາດການຜ່ອນຜັນ ແລະ ຂະບວນການທີ່ຈະຫລີກລ້ຽງ ຫຼື ຈຳກັດຜົນກະທົບທາງສັງຄົມ ແລະ ສິ່ງແວດລ້ອມ ແມ່ນມີລາຍລະອຽດໃນແຜນການຈັດການທາງສັງຄົມ ແລະ ສິ່ງແວດລ້ອມດັ່ງລຸ່ມນີ້**:

- ແຜນນະໂຍບາຍການຍົກຍ້າຍຈັດສັນ ແລະ ການທົດແທນຄືນ;
- ແຜນນະໂຍບາຍການປ້ອງກັນທາງສັງຄົມ ແລະ ສິ່ງແວດລ້ອມ;
- ແຜນນະໂຍບາຍດ້ານຊົນເຜົ່າ; ແລະ
- ແຜນການຈັດການ-ການນຳໃຊ້ຢາປາບສັດຕູພືດ.

ລັດຖະບານ ແລະ ຜູ້ໃຫ້ທຶນ ຈະທຳການທົບທວນລາຍການໂຄງການຍ່ອຍເປັນປະຈຳທຸກໆປີ.

[10] ພາຍໃຕ້ບາງສະຖານະການ, ບາງຂໍ້ຍົກເວັ້ນທີ່ສາມາດເກີດຂຶ້ນໄດ້ ຫາກເມື່ອມີການຍົກຍ້ານຈັດສັນ ຫຼື ການບຸກລຸກທີ່ດິນເກີດຂຶ້ນບົນພື້ນຖານຄວາມສະໝັກໃຈທີ່ເຄັ່ງຕຶງ ຫຼື ມີການຈ່າຍຄ່າທົດແທນໂດຍທຶນຊາວບ້ານເອງທີ່ເປັນສ່ວນໜຶ່ງຂອງບົດສະ ເໜີໂຄງການຍ່ອຍ. ໂຄງການຍ່ອຍເຫຼົ່ານີ້ ຈະຕ້ອງໄດ້ຮັບການທົບທວນຄືນ ຈາກຜູ້ອຳນວຍຄວາມສະດວກ ຫຼື ມີການເຄື່ອນ ໄຫວທີ່ເປັນການສະໝັກໃຈ ຫຼື ຍົກຍ້ານຈັດສັນຫຼາຍກວ່າ 5 ຄົວເຮືອນຂຶ້ນໄປ ແມ່ນຈະຕ້ອງໄດ້ຮັບການອະນຸມັດຈາກຫ້ອງການບໍລິຫານຂັ້ນສູນກາງ ແລະ ຖືເປັນບຸລິມະສິດທີ່ຕ້ອງໄດ້ນຳໄປປຶກສາຫາລືກັນຢູ່ໃນກອງປະຊຸມຂັ້ນເມືອງ.

# 5 ຮອບວຽນຈັດຕັ້ງປະຕິບັດໂຄງການ

ໃນພາກນີ້ ຈະໄດ້ອະທິບາຍລະອຽດ ກ່ຽວກັບແຕ່ລະຂັ້ນຕອນຂອງຮອບວຽນການຈັດຕັ້ງປະຕິບັດໂຄງການ, ຊຶ່ງມີດັ່ງຕໍ່ໄປນີ້:

- ຂັ້ນຕອນກະກຽມໂຄງການ;
- ຂັ້ນຕອນແນະນໍາໂຄງການ;
- ຂັ້ນຕອນສ້າງແຜນການ;
- ຂັ້ນຕອນຈັດຕັ້ງປະຕິບັດໂຄງການຍ່ອຍ;
- ຂັ້ນຕອນການຄຸ້ມຄອງນໍາໃຊ້ ແລະ ບູລະນະໂຄງການຍ່ອຍ.

ທີມງານບໍລິຫານ ຈະໄດ້ກະກຽມແຜນການເຄື່ອນໄຫວວຽກງານປະຈໍາປີ ໃນນັ້ນລວມທັງແຜນກິດຈະກໍາ ແລະ ແຜນງົບປະມານ ຍື່ນສະເໜີຕໍ່ສະພາບໍລິຫານ ທລຍ ເພື່ອມີຄໍາເຫັນ ແລະ ຂໍການຮັບຮອງເອົາ ແລະ ນໍາສະເໜີຕໍ່ຜູ້ໃຫ້ທຶນ ເພື່ອຂໍອະນຸມັດໃນການຈັດຕັ້ງປະຕິບັດ. ໂດຍສະເພາະແຜນການຈັດຕັ້ງປະຕິບັດໂຄງການຍ່ອຍຂອງແຕ່ລະຮອບວຽນ ທີ່ໄດ້ຮັບຮອງເອົາຢູ່ກອງປະຊຸມຮັບຮອງການອອກແບບໂຄງການຍ່ອຍຂັ້ນບ້ານ/ກຸ່ມບ້ານ. ການຍື່ນສະເໜີຕໍ່ສະພາບໍລິຫານ ທລຍ ແລະ ຜູ້ໃຫ້ທຶນນັ້ນ ບໍ່ໃຫ້ກາຍເດືອນ 4 (ເມສາ) ຂອງທຸກໆປີ. ການສ້າງແຜນການໃນແຕ່ລະປີ ຕ້ອງລວມເອົາທັງແຜນໜ້າວຽກ ແລະ ແຜນງົບປະມານໄປພ້ອມໆກັນ. ໂດຍອີງຕາມແຜນການເຄື່ອນໄຫວປະຈໍາປີນັ້ນ ທີມງານບໍລິຫານ ທລຍ ຈະຕ້ອງໄດ້ນໍາສະເໜີແຜນການຈັດຊື້-ຈັດຈ້າງ ສົ່ງໃຫ້ທະນາຄານໂລກ ເພື່ອຂໍອະນຸມັດຈັດຕັ້ງປະຕິບັດ.

## ຮູບທີ 5: ຮອບວຽນຂອງແຜນງານ

**OR 1- ກອງປະຊຸມແນະນຳໂຄງການຂັ້ນແຂວງ**
ນຳສະເໜີກ່ຽວກັບຈຸດປະສົງ, ຫລັກການ ແລະ ຂັ້ນຕອນການເຮັດວຽກຂອງ ທລຍ, ສ້າງຕັ້ງ ແລະ ຝຶກອົບຮົມ ຄະນະກຳມະການ ກສກຂັ້ນແຂວງ,

**OR 2-ກອງປະຊຸມແນະນຳໂຄງການຂັ້ນເມືອງແລະ ຂັ້ນກຸ່ມບ້ານ**ນຳສະເໜີກ່ຽວກັບຈຸດປະສົງ, ຫລັກການ ແລະ ຂັ້ນຕອນການເຮັດວຽກຂອງ ທລຍ, ສ້າງຕັ້ງ ແລະ ຝຶກອົບຮົມ ຄະນະກຳມະການ ກສກຂັ້ນເມືອງ, ພາລະ

**PL 1- ຝຶກອົບຮົມ ຜູ້ປະສານງານກຸ່ມບ້ານຈຸດປະສົງຂອງ ທລຍ ແລະຂັ້ນຕອນການເຮັດວຽກ**, ຝຶກອົບຮົມທາງດ້ານວິຊາການ, ການເງິນ, ຈັດຊື້ຈັດ-ຈ້າງ, ການປ້ອງກັນຜົນກະທົບດ້ານຕ່າງໆ, ກສກ, ເຕັກນິກການມີສ່ວນຮ່ວມ

**OR 3-ກອງປະຊຸມແນະນຳໂຄງການຂັ້ນບ້ານ** ນຳສະເໜີກ່ຽວກັບຈຸດປະສົງ, ຫລັກການ ແລະ ຂັ້ນຕອນການເຮັດວຽກຂອງ ທລຍ, ສ້າງຕັ້ງ ຫຼື ຮັບຮອງຄະນະກຳມະການແກ້ໄຂຂໍ້ຂັດແຍ້ງຂັ້ນບ້ານ, ກະກຽມກອງປະຊຸມວາງແຜນພັດທະນາຂັ້ນບ້ານ

**PL 2- ກອງປະຊຸມວາງແຜນພັດທະນາຂັ້ນບ້ານ**
ນຳສະເໜີກ່ຽວກັບຈຸດປະສົງ ແລະ ພື້ນຖານຂອງຂັ້ນຕອນການເຮັດວຽກຂອງ ທລຍ, ດຳເນີນການກຳນົດວິໄສທັດ ສຳລັບຄວາມຫວັງ ແລະ ເປົ້າໝາຍຂອງບ້ານ ສຳລັບ 5 ປີຕໍ່ໜ້າ, ຄັດເລືອກ ແລະ ຝຶກອົບຮົມ ຕົວແທນບ້ານ, ຝຶກອົບຮົມຄະນະ ກສກ, ຮັບຮອງເອົາຜູ້ປະສານງານກຸ່ມບ້ານ

**PL 3- ກອງປະຊຸມວາງແຜນພັດທະນາກຸ່ມບ້ານ**
ສ້າງແຜນພັດທະນາກຸ່ມບ້ານ )5 ປີ (,ສ້າງແຜນການລົງທຶນຂອງ ທລຍ ໄລຍະ 4 ປີ ໂດຍການກຳນົດບຸລິມະສິດດ້ານພື້ນຖານໂຄງລ່າງ, ການຝຶກອົບຮົມທີ່ຕິດພັນ, ຄັດເລືອກຕົວແທນບ້ານ ແລະ ຝຶກອົບຮົມໃຫ້ແກ່ ຄະນະ ກສກ ກຸ່ມງານປະສານຜູ້ເລືອກຄັດ) (ມອົບຣົຝຶກແລະບ້ານ

**PL 4- ກອງປະຊຸມປະສານງານການວາງແຜນຂັ້ນເມືອງ** ນາ
ສະເໜີ ແລະ ປຶກສາຫາລື ກ່ຽວກັບແຜນພັດທະນາກຸ່ມບ້ານໂດຍລວມ, ທົບທວນແຜນການລົງທຶນຂອງ ທລຍ, ຄັດເລືອກບັນດາໂຄງການທີ່ຈະດຳເນີນການສຳຫລວດອອກແບບ, ທົບທວນ ກສກ, ປະສານງານນຳຫ້ອງການທີ່ກ່ຽວຂ້ອງ ແລະ ພາກສ່ວນພັດທະນາອື່ນໆ

**PL 5- ກອງປະຊຸມລາຍງານຄືນ ແລະ ຮັບຮອງເອົາແຜນຂັ້ນກຸ່ມບ້ານ**
ແຈ້ງກ່ຽວກັບແຜນພັດທະນາກຸ່ມບ້ານ ແລະ ຂໍ້ຕົກລົງ ຂອງກອງປະຊຸມປະສານງານການວາງແຜນຂັ້ນເມືອງ, ໂຄງການຍ່ອຍທີ່ຈະສຳຫລວດ ແລະ ຂໍ້ມູນກ່ຽວກັບຂັ້ນຕອນການຈັດຕັ້ງປະຕິບັດໂຄງການຍ່ອຍ ລວມທັງທີມງານຕ່າງຂັ້ນກຸ່ມບ້ານ

**PL 6- ການອອກແບບໂຄງການຍ່ອຍ** ສຳຫລວດ ແລະ ຕັດສິນເອົາ ທີ່ຕັ້ງ ແລະ ກຳນົດເວລາ ທີ່ເໝາະສົມ ສຳລັບການຈັດຕັ້ງປະຕິບັດໂຄງການຍ່ອຍ, ສຳເລັດການອອກແບບໂຄງການຍ່ອຍ ແລະ ຄັດເລືອກທີມງານຈັດຕັ້ງປະຕິບັດຂັ້ນບ້ານ

**PL 7- ກອງປະຊຸມຮັບຮອງແບບໂຄງການຍ່ອຍ ແລະ ສ້າງຕັ້ງທີມງານຂັ້ນບ້ານ** ທົບທວນ ແລະ ຮັບຮອງເອົາແບບ ແລະ ຂະໜາດຂອງໂຄງການຍ່ອຍ ແລະ ຮັບຮອງແຜນການຄຸ້ມຄອງນຳໃຊ້ໂຄງການຍ່ອຍ, ຮັບຮອງເອົາຈຳນວນໂຄງການຍ່ອຍ ແລະ ສ້າງຕັ້ງທີມງານຂັ້ນກຸ່ມບ້ານ

**IM 1- ຝຶກອົບຮົມ ທີມງານການເງິນ, ຈັດຊື້ງານປະສານແລະ ຜູ້ຈ້າງ ຈັດ-ບ້ານກຸ່ມ**
ກ່ຽວກັບ ການຄຸ້ມຄອງດ້ານການເງິນ ແລະ ວິທີການຈັດຊື້ຈ້າງຈັດ-

**IM 2- ກອງປະຊຸມກະກຽມຈັດຕັ້ງປະຕິບັດໂຄງການຍ່ອຍຂັ້ນກຸ່ມບ້ານ**
ລິເລີ່ມຈັດຕັ້ງປະຕິບັດໂຄງການຍ່ອຍ, ປຸກລະດົມການປະກອບສ່ວນແຮງງານ ແລະ ອື່ນໆຂອງຊຸມຊົນ, ເຊັນຂໍ້ຕົກລົງ ລະຫວ່າງ ທີມງານຈັດຕັ້ງປະຕິບັດຂັ້ນບ້ານ ແລະ ທລຍ , ປະກາດກ່ຽວວິທີການຈັດຊື້ຈ້າງຈັດ-ຍ່ອຍໂຄງການ

**IM 3- ຝຶກອົບຮົມ ທີມງານຈັດຕັ້ງປະຕິບັດຂັ້ນບ້ານ ແລະ ຂັ້ນກຸ່ມບ້ານ )1)**
ທົບທວນຄືນແບບ, ເຕັກນິກໃນການກໍ່ສ້າງ, ວິທີການຕິດຕາມການກໍ່ສ້າງ, ຫົວ ໜ່ວຍລາຄາ, ການຄຸ້ມຄອງສັນຍາການກໍ່ສ້າງໂຄງການຍ່ອຍ

**IM 4- ກອງປະຊຸມ ປະສານງານການຈັດຕັ້ງປະຕິບັດໂຄງການຍ່ອຍ**
ທົບທວນຄືນຈຳນວນ ແລະ ທີ່ຕັ້ງຂອງໂຄງການຍ່ອຍ, ສ້າງແຜນການຈັດຕັ້ງປະຕິບັດ ແລະ ການໄປຕິດຕາມກວດກາໂຄງການຍ່ອຍ ໂດຍສອດຄ່ອງກັບງົບປະມານ ແລະ ການປະສານງານທີ່ໄດ້ກະກຽມເອົາໄວ້

**IM 5- ກອງປະຊຸມສະຫລຸບການໃຊ້ຈ່າຍປະຈຳງວດ**
ຢັ້ງຢືນຄວາມຄືບໜ້າຂອງໂຄງການຍ່ອຍ, ເປີດເຜີຍຕໍ່ປະຊາຊົນພາຍໃນບ້ານ ກ່ຽວກັບການໃຊ້ຈ່າຍປະຈຳງວດ, ຄວາມຄືບໜ້າໃນການຈັດຊື້-ຈັດຈ້າງ ແລະ ການທົດແທນຄືນ ທີ່ຊາວບ້ານໄດ້ຮັບ, ລາຍງານກ່ຽວກັບ ຄຳຄິດຄຳເຫັນ ທີ່ໄດ້ຮັບ.

**IM 6- ການຢ້ຽມຢາມລະຫວ່າງກຸ່ມບ້ານ**. ຢ້ຽມຢາມໂຄງການຍ່ອຍແລະແລກປ່ຽນປະສົບການ, ທົບທວນບົດລາຍງານ, ນຳສະເໜີ ແລະປຶກສາຫາລື ການຕິດຕາມກວດກາໂຄງການຍ່ອຍ

**IM 7- ກວດກາໂຄງການຍ່ອຍເທື່ອສຸດທ້າຍ**
ຢ້ຽມຢາມສະຖານທີ່ກໍ່ສ້າງໂຄງການຍ່ອຍ ແລະ ກວດກາເທື່ອສຸດທ້າຍທາງດ້ານເຕັກນິກວິຊາການ

**IM 8-ຝຶກອົບຮົມ ທີມງານຈັດຕັ້ງປະຕິບັດ ແລະ ຄຸ້ມຄອງໂຄງການຍ່ອຍຂັ້ນບ້ານ )2)**
ການຄຸ້ມຄອງ ແລະ ບູລະນະສ້ອມແປງ ທຸກໆໂຄງການຍ່ອຍ, ສ້າງຕັ້ງກອງທຶນບູລະນະສ້ອມແປງໂຄງການຍ່ອຍ

**IM 9- ກອງປະຊຸມສະຫລຸບການໃຊ້ຈ່າຍປະຈຳງວດສຸດທ້າຍຂັ້ນກຸ່ມບ້ານ**
ຢັ້ງຢືນຄວາມຄືບໜ້າຂອງໂຄງການຍ່ອຍ, ເປີດເຜີຍຕໍ່ປະຊາຊົນພາຍໃນບ້ານ ກ່ຽວກັບການໃຊ້ຈ່າຍ ແລະ ກວດກາໂຄງການຍ່ອຍເທື່ອສຸດທ້າຍ, ຮັບຮອງເທື່ອສຸດທ້າຍ ກ່ຽວກັບແຜນການຄຸ້ມຄອງນຳໃຊ້, ຄິດຄຳຄຳເຫັນທີ່ໄດ້ຮັບທັງໝົດ ແລະ ການແກ້ໄຂ, ຄັດເລືອກ ແລະ ຮັບຮອງເອົາຜູ້ປະສານງານກຸ່ມບ້ານ

**PI 1- ກອງປະຊຸມປະເມີນຜົນຂັ້ນເມືອງ**
ນຳສະເໜີ ບົດລາຍງານຂັ້ນເມືອງ, ມອບຍ່ອຍໂຄງການຮັບ-, ນຳສະເໜີຄຳຄິດຄຳເຫັນທີ່ໄດ້ຮັບ ແລະ ວິທີການແກ້ໄຂ

## 5.1 ການກະກຽມໂຄງການ

ຂັ້ນຕອນການກະກຽມ ຂອງ ທລຍ 2 ປະກອບດ້ວຍ 4 ກິດຈະກໍາ ດັ່ງຕໍ່ໄປນີ້:

- ຝຶກອົບຮົມໃຫ້ແກ່ພະນັກງານ ທລຍ ຂັ້ນສູນກາງ;
- ກໍ່ສ້າງສ້ອມແປງຕັ້ງຫ້ອງການ ທລຍ ສໍາລັບຢູ່ແຂວງ ແລະ ເມືອງໃໝ່;
- ບັນຈຸພະນັກງານ ສໍາລັບຢູ່ແຂວງ ແລະ ເມືອງໃໝ່;
- ຈັດກອງປະຊຸມສໍາມະນາ ແລະ ຝຶກອົບຮົມ ໃຫ້ແກ່ພະນັກງານ ສໍາລັບຢູ່ແຂວງ ແລະ ເມືອງໃໝ່.

### 5.1.1 ຂັ້ນຕອນການແນະນໍາໂຄງການ

**ກອງປະຊຸມແນະນໍາໂຄງການທີ່ຈະໄດ້ອະທິບາຍຕໍ່ໄປນີ້ ແມ່ນການຈັດຂຶ້ນກ່ອນທີ່ຈະດໍາເນີນໂຄງການ ໃນໄລຍະ 4 ປີ ຢູ່ບັນດາແຂວງ ແລະ ເມືອງໃໝ່ ທີ່ ທລຍ ຍັງບໍ່ໄດ້ໃຫ້ການຊ່ວຍເຫລືອມາກ່ອນ.**

**ກອງປະຊຸມແນະນໍາໂຄງການ ໂດຍປົກກະຕິ ຈະຈັດຂຶ້ນຢູ່ໃນລະຫວ່າງ ເດືອນ ຕຸລາ.** ຈຸດປະສົງຂອງກອງປະຊຸມດັ່ງກ່າວນີ້ມີຄື:

- ເພື່ອແນະນໍາ ແລະ ໂຄສະນາເຜີຍແຜ່ ກ່ຽວກັບຫລັກການ, ຂັ້ນຕອນ ແລະ ບາດກ້າວໃນການຈັດຕັ້ງປະຕິບັດໂຄງການໃຫ້ແກ່ພໍ່ແມ່ປະຊາຊົນ ຕະລອດທັງພະນັກງານ ທລຍ, ຜູ້ອໍານວຍຄວາມສະດວກ ແລະ ພະນັກງານລັດ; ແລະ,
- ເພື່ອຮັບປະກັນວ່າທຸກໆພາກສ່ວນທີ່ກ່ຽວຂ້ອງ ໄດ້ຮັບຂໍ້ມູນ-ຂ່າວສານ ແລະ ມີຄວາມເຂົ້າໃຈກ່ຽວກັບໂຄງການຢ່າງເປັນອັນນຶ່ງອັນດຽວກັນ ແລະ ເພື່ອຮັບປະກັນ ວ່າຊຸມຊົນມີຄວາມເຂົ້າໃຈຢ່າງເລິກເຊິ່ງເຖິງຖອງ ກ່ຽວກັບພາລະບົດບາດ ແລະ ຄວາມຮັບຜິດຊອບຂອງເຂົາເຈົ້າເອງ ທີ່ມີຕໍ່ການຈັດຕັ້ງປະຕິບັດໂຄງການ.

**ສໍາລັບພື້ນທີ່ເປົ້າໝາຍເກົ່າ ຂອງ ທລຍ:**

**ຢູ່ແຂວງ ແລະ ເມືອງ ທີ່ໄດ້ຮັບການຊ່ວຍເຫລືອ ຈາກ ທລຍ ມາກ່ອນແລ້ວຢ່າງໜ້ອຍ 1 ປີ, ຈະຕ້ອງໄດ້ຈັດກອງປະຊຸມແນະນໍາໂຄງການຂັ້ນແຂວງຄືນ "ກອງປະຊຸມທົບທວນຄືນ". ກອງປະຊຸມນີ້ ອາດຈະໃຊ້ເວລາສັ້ນກວ່າ, ແຕ່ເປົ້າໝາຍຜູ້ເຂົ້າຮ່ວມແມ່ນຄືກັນ ລາຍລະອຽດລະບຸໄວ້ຢູ່ຂ້າງລຸ່ມນີ້,** ສໍາລັບຈຸດປະສົງຂອງກອງປະຊຸມແມ່ນລວມເອົາການລາຍງານຄືນຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການ ທລຍ ໃນໄລຍະຜ່ານມາ (ການກໍ່ສ້າງພື້ນຖານໂຄງລ່າງ, ການນໍາໃຊ້ງົບປະມານ, ແຜນການຄຸ້ມຄອງໂຄງການຍ່ອຍ, ບັນຫາຕ່າງໆທີ່ເກີດຂຶ້ນ) ແລະ ປຶກສາຫາລືກ່ຽວກັບຈຸດທີ່ມີການປ່ຽນແປງ, ປັບປຸງໃໝ່ຢູ່ໃນວຽກງານ ທລຍ 2 ໂດຍສະເພາະລະບຽບຫລັກການ ແລະ ຂັ້ນຕອນໃນການຈັດຕັ້ງປະຕິບັດໂຄງການ.

## 5.2 ກອງປະຊຸມແນະນຳໂຄງການຂັ້ນແຂວງ

ກ່ອນຈະດຳເນີນກອງປະຊຸມແນະນຳໂຄງການ, ຜູ້ປະສານງານ ທລຍ ຂັ້ນແຂວງ ຕ້ອງຮັບປະກັນວ່າພາກສ່ວນກ່ຽວຂ້ອງທີ່ສຳຄັນຕ່າງໆ ຈະຕ້ອງໄດ້ຮັບການແນະນຳໂດຍຫຍໍ້ ແລະ ໄດ້ຮັບເອກະສານຂອງກອງປະຊຸມກ່ອນ ໂດຍຄວນສົ່ງໃຫ້ຢ່າງໜ້ອຍ 3 ມື້ ກ່ອນມື້ເປີດກອງປະຊຸມ.

<u>ສະຖານທີ່</u>:

ຫ້ອງປະຊຸມຂອງແຂວງ

<u>ປະທານກອງປະຊຸມ</u>:

ເຈົ້າແຂວງ ຫຼື ຮອງເຈົ້າແຂວງ (ກຳມະການສະພາບໍລິຫານ ທລຍ)

<u>ຜູ້ເຂົ້າຮ່ວມກອງປະຊຸມ</u>:

ພະແນກການຕ່າງໆຂອງແຂວງ, ຜູ້ຕາງໜ້າອົງການຈັດຕັ້ງມະຫາຊົນຕ່າງໆ, ຜູ້ຕາງໜ້າໂຄງການພັດທະນາຕ່າງໆ.

<u>ກຳນົດເວລາ</u>:

1-3 ມື້ (ຂຶ້ນກັບວ່າແມ່ນພື້ນທີ່ເປົ້າໝາຍເກົ່າ ຫຼື ໃໝ່)

<u>ຈຸດປະສົງຂອງກອງປະຊຸມ</u>:

- ນຳສະເໜີຈຸດປະສົງ, ຫລັກການ, ລະບຽບການພັດທະນາ ແລະ ຂັ້ນຕອນການເຮັດວຽກຂອງໂຄງການ;
- ຮັບຮອງເອົາ ຫຼື ຄັດເລືອກຄະນະກຳມະການສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ (ກສກ);
- ຝຶກອົບຮົມ ໃຫ້ແກ່ຄະນະກຳມະການ ກສກ;
- ອະທິບາຍ ກ່ຽວກັບພາລະບົດບາດ ແລະ ວິທີການຄັດເລືອກຜູ້ປະສານງານກຸ່ມບ້ານ;
- ແລກປ່ຽນປະສົບການ ແລະ ປຶກສາຫາລືກ່ຽວກັບແຜນການເຕົ້າໂຮມບ້ານ ຫຼື ແຜນການຍົກຍ້າຍຈັດສັນ.

<u>ຄາດໝາຍ ທີ່ຈະໄດ້ຮັບ</u>:

- ຜູ້ເຂົ້າຮ່ວມທັງໝົດ ມີຄວາມເຂົ້າໃຈກ່ຽວຈຸດປະສົງ, ຫລັກການ, ລະບຽບການພັດທະນາ ແລະ ຂັ້ນຕອນການເຮັດວຽກຂອງໂຄງການ (ລວມທັງສິດໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຊາວບ້ານ);
- ຄະນະກຳມະການ ກສກ ຂັ້ນແຂວງ ໄດ້ຖືກຄັດເລືອກຂຶ້ນ ແລະ ໄດ້ຮັບການຝຶກອົບຮົມ;

- ຜູ້ເຂົ້າຮ່ວມ ມີຄວາມເຂົ້າໃຈ ກ່ຽວກັບພາລະບົດບາດ ແລະ ວິທີການຄັດເລືອກຜູ້ປະສານງານກຸ່ມບ້ານ;
- ຂະແໜງການທີ່ກ່ຽວຂ້ອງ, ອົງການຈັດຕັ້ງມະຫາຊົນ, ໂຄງການພັດທະນາຕ່າງໆ (ລວມທັງພາກສ່ວນເອກະຊົນ) ໄດ້ມີການປະສານງານ ແລະ ມີຄວາມເຂົ້າໃຈຫລາຍຂຶ້ນ ກ່ຽວກັບກິດຈະກຳ ແລະ ບຸລິມະສິດການເຮັດວຽກ ຂອງ ທລຍ;
- ລາຍການກຸ່ມບ້ານ ແລະ ບ້ານເປົ້າໝາຍ ໄດ້ຮັບການທົບທວນຄືນ ແລະ ຮັບຮອງເອົາ (ທລຍ ຈະບໍ່ເຮັດວຽກຢູ່ບ້ານທີ່ມີການຍົກຍ້າຍມາບໍ່ຮອດ 4 ປີ ແລະ ຈະບໍ່ເຮັດວຽກຢູ່ບ້ານທີ່ມີແຜນ ຈະຍົກຍ້າຍໃນອີກ 4 ປີຕໍ່ໜ້າ).

<u>ເນື້ອໃນຕົ້ນຕໍຂອງກອງປະຊຸມ</u>

*ນຳສະເໜີ ໂດຍທີມງານບໍລິຫານໂຄງການຂັ້ນສູນກາງ:*

- ປະຫວັດຄວາມເປັນມາກ່ຽວກັບນະໂຍບາຍຕ່າງໆ ລວມທັງຄວາມເປັນມາ ກ່ຽວກັບຍຸດທະສາດເພື່ອການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ, ຍຸດທະສາດໃນການພັດທະນາເສດຖະກິດ-ສັງຄົມ, ຍຸດທະສາດການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ;
- ປະຫວັດຄວາມເປັນມາ ຂອງ ທລຍ;
- ໂຄງຮ່າງການຈັດຕັ້ງ ຂອງ ທລຍ;
- ຈຸດປະສົງ ແລະ ຫລັກການ ຂອງ ທລຍ;
- ການຈັດສັນງົບປະມານໃຫ້ແກ່ກຸ່ມບ້ານ;
- ພາບລວມຂອງຮອບວຽນການຈັດຕັ້ງປະຕິບັດໂຄງການຍ່ອຍ (ຂັ້ນຕອນການແນະນຳໂຄງການ, ການສ້າງແຜນ ແລະ ຈັດຕັ້ງປະຕິບັດ);
- ບັນຫາສຳຄັນພື້ນຖານ ຂອງການປະສານງານໃນການສ້າງແຜນ;
- ລາຍການກິດຈະກຳທີ່ສະໜັບສະໜູນໂດຍ ທລຍ (ລວມທັງກິດຈະກຳທີ່ບໍ່ສາມາດສະໜັບສະໜູນ);
- ຄວາມເປັນເຈົ້າການ, ການມອບສິດໃຫ້ແກ່ຊຸມຊົນ, ການວາງແຜນແບບມີສ່ວນຮ່ວມ (ການດຳເນີນການຈັດຊື້-ຈັດຈ້າງ ແລະ ການຄຸ້ມຄອງດ້ານການເງິນໂດຍກົງ ຂອງຊຸມຊົນເອງ);
- ອະທິບາຍກ່ຽວກັບຄວາມແຕກຕ່າງ ລະຫວ່າງ ທລຍ 1 ແລະ ທລຍ 2 ໂດຍເນັ້ນໃສ່ການສ້າງແຜນການລົງທຶນ ຂອງ ທລຍ ໃນໄລຍະ 4 ປີ ແລະ ການສ້າງແຜນພັດທະນາພັດທະນາກຸ່ມບ້ານໄລຍະຍາວ ລວມທັງການສ້າງແຜນພັດທະນາບ້ານ);
- ການກວດສອບໄດ້ ແລະ ຄວາມໂປ່ງໃສ (ລວມທັງພາບລວມ ກ່ຽວກັບກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ);
- ຂໍ້ແນະນຳການປ້ອງກັນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ລວມທັງນະໂຍບາຍການຍົກຍ້າຍຈັດສັນ, ການທົດແທນຄືນ/ຫລັກການໃນການປະກອບສ່ວນແບບສະໝັກໃຈ (ອີງໃສ່ດຳລັດເລກທີ່ 192/ນຍ), ການກວດສອບຜົນກະທົບທາງດ້ານວັດທະນາທຳ ແລະ ການເຂົ້າຮ່ວມຂອງຊົນເຜົ່າ ແລະ ຜູ້ດ້ອຍໂອກາດ;

- ການສົ່ງເສີມບົດບາດຍິງ-ຊາຍ;
- ນະໂຍບາຍດ້ານຊົນເຜົ່າ;
- ກຸ່ມຜູ້ດ້ອຍໂອກາດເຊັ່ນ: ຜູ້ພິການ, ແມ່ຮ້າງນາງໝ້າຍ...
- ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ ຂອງອຳນາດການປົກຄອງທ້ອງຖິ່ນ ຕໍ່ກັບວຽກງານຂອງ ທລຍ (ລວມທັງການຄຸ້ມຄອງນຳໃຊ້ ແລະ ບູລະນະສ້ອມແປງໂຄງການຍ່ອຍ);
- ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ ແລະ ຂັ້ນຕອນໃນການຄັດເລືອກຜູ້ປະສານງານກຸ່ມບ້ານ;
- ໜ້າວຽກໃນຕໍ່ໜ້າ ທີ່ນອນຢູ່ໃນຂັ້ນຕອນການວາງແຜນ (ລວມທັງໃຫ້ມີການຖາມ ແລະ ຕອບ);
- ນຳສະເໜີ ຫຼື ສົນທະນາ ກ່ຽວກັບກຳນົດເວລາໃນການຈັດກອງປະຊຸມແນະນຳໂຄງການຂັ້ນເມືອງ ແລະ ຂັ້ນກຸ່ມບ້ານ;
- ຝຶກອົບຮົມໃຫ້ແກ່ຄະນະກຳມະການ ກສກ ຂັ້ນແຂວງ.

<u>ການຕິດຕາມ</u>:

ຜູ້ປະສານງານ ທລຍ ແຂວງ ຕ້ອງຮັບປະກັນວ່າໄດ້ມີການຕິດຕາມຢ່າງໃກ້ຊິດ ກັບພາກສ່ວນກ່ຽວຂ້ອງທີ່ສຳຄັນຕ່າງໆ. ບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ທລຍ ກັບ ຂະແໜງການຕ່າງໆ ຕ້ອງໄດ້ປຶກສາຫາລືນຳພະແນກທີ່ກ່ຽວຂ້ອງຂັ້ນແຂວງ.

## 5.3 ກອງປະຊຸມແນະນຳໂຄງການຂັ້ນເມືອງ ແລະ ກຸ່ມບ້ານ

ກ່ອນຈະດຳເນີນກອງປະຊຸມແນະນຳໂຄງການ, ຜູ້ປະສານງານ ທລຍ ເມືອງ ຕ້ອງຮັບປະກັນວ່າພາກສ່ວນກ່ຽວຂ້ອງທີ່ສຳຄັນຕ່າງໆ ຈະຕ້ອງໄດ້ຮັບການແນະນຳໂດຍຫຍໍ້ ແລະ ໄດ້ຮັບເອກະສານຂອງກອງປະຊຸມກ່ອນ ໂດຍຄວນສົ່ງໃຫ້ຢ່າງໜ້ອຍ 3 ມື້ ກ່ອນມື້ເປີດກອງປະຊຸມ.

<u>ສະຖານທີ່</u>:

ຫ້ອງປະຊຸມຂອງເມືອງ

<u>ປະທານກອງປະຊຸມ</u>:

ສຳລັບແຂວງໃໝ່ ເຈົ້າແຂວງ ຫຼື ຮອງເຈົ້າແຂວງ (ກຳມະການສະພາບໍລິຫານ ທລຍ) ເປັນປະທານໂດຍທ່ານເຈົ້າເມືອງເປັນຜູ້ຊ່ວຍ.

<u>ຜູ້ເຂົ້າຮ່ວມກອງປະຊຸມ</u>:

ຫ້ອງການຕ່າງໆຂອງເມືອງ, ຜູ້ຕາງໜ້າອົງການຈັດຕັ້ງມະຫາຊົນຕ່າງໆ, ຜູ້ຕາງໜ້າໂຄງການພັດທະນາຕ່າງໆ, ຄະນະກຸ່ມບ້ານພັດທະນາ, ພະນັກງານ ທລຍ ເມືອງ ແລະ ທລຍ ແຂວງ.

ກຳນົດເວລາ:

1-3 ມື້ (ຂຶ້ນກັບວ່າເປັນພື້ນທີ່ເປົ້າໝາຍເກົ່າ ຫຼື ໃໝ່)

ຈຸດປະສົງຂອງກອງປະຊຸມ:

- ນຳສະເໜີຈຸດປະສົງ, ຫລັກການ, ລະບຽບການພັດທະນາ ແລະ ຂັ້ນຕອນການເຮັດວຽກຂອງໂຄງການ;
- ຄັດເລືອກອົາຜູ້ປະສານງານກຸ່ມບ້ານຊົ່ວຄາວ;
- ຮັບຮອງເອົາ ຫຼື ຄັດເລືອກຄະນະກຳມະການສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ (ກສກ);
- ຝຶກອົບຮົມ ໃຫ້ແກ່ຄະນະກຳມະການ ກສກ;
- ແລກປ່ຽນປະສົບການ ແລະ ປຶກສາຫາລືກ່ຽວກັບແຜນການເຕົ້າໂຮມບ້ານ ຫຼື ແຜນການຍົກຍ້າຍຈັດສັນ.

ຄາດໝາຍ ທີ່ຈະໄດ້ຮັບ:

- ຜູ້ເຂົ້າຮ່ວມທັງໝົດ ຈາກຂັ້ນເມືອງ ແລະ ກຸ່ມບ້ານ ມີຄວາມເຂົ້າໃຈ ກ່ຽວກັບຈຸດປະສົງ, ຫລັກການ, ລະບຽບການພັດທະນາ ແລະ ຂັ້ນຕອນການເຮັດວຽກຂອງໂຄງການ (ລວມທັງສິດໜ້າທີ່ ແລະ ຄວາມຮັບຜິດຊອບຂອງຊາວບ້ານ);
- ຜູ້ເຂົ້າຮ່ວມມີຄວາມເຂົ້າໃຈ ກ່ຽວກັບພາລະບົດບາດ ແລະ ວິທີການຄັດເລືອກຜູ້ປະສານງານກຸ່ມບ້ານ;
- ຄະນະກຳມະການ ກສກ ຂັ້ນເມືອງ ໄດ້ຖືກການຄັດເລືອກຂຶ້ນ ແລະ ໄດ້ຮັບການຝຶກອົບຮົມ;
- ຜູ້ປະສານງານກຸ່ມບ້ານຊົ່ວຄາວ ໄດ້ຖືກຄັດເລືອກຂຶ້ນ,
- ຂະແໜງການທີ່ກ່ຽວຂ້ອງ, ອົງການຈັດຕັ້ງມະຫາຊົນ, ໂຄງການພັດທະນາຕ່າງໆ (ລວມທັງພາກສ່ວນເອກະຊົນ) ໄດ້ມີການປະສານງານ ແລະ ມີຄວາມເຂົ້າໃຈກ່ຽວກັບວຽກງານ ທລຍ ຫລາຍຂຶ້ນ;
- ລາຍການກຸ່ມບ້ານ ແລະ ບ້ານເປົ້າໝາຍ ໄດ້ຮັບການທົບທວນຄືນ ແລະ ຮັບຮອງເອົາ (ທລຍຈະບໍ່ເຮັດວຽກຢູ່ບ້ານ ທີ່ມີການຍົກຍ້າຍມາບໍ່ຮອດ 4 ປີ ແລະ ຈະບໍ່ເຮັດວຽກຢູ່ບ້ານທີ່ມີແຜນ ຈະຍົກຍ້າຍໃນອີກ 4 ປີຕໍ່ໜ້າ).
- ແຜນການຈັດກອງປະຊຸມວາງແຜນພັດທະນາຂັ້ນບ້ານ ໄດ້ຮັບການປຶກສາຫາລື ແລະ ຮັບຮອງເອົາ;
- ລາຍການກຸ່ມບ້ານ ແລະ ບ້ານເປົ້າໝາຍ ໄດ້ຮັບການທົບທວນຄືນ ແລະ ຮັບຮອງເອົາ (ທລຍຈະບໍ່ເຮັດວຽກຢູ່ບ້ານ ທີ່ມີການຍົກຍ້າຍມາບໍ່ຮອດ 4 ປີ ແລະ ຈະບໍ່ເຮັດວຽກຢູ່ບ້ານທີ່ມີແຜນຈະຍົກຍ້າຍໃນອີກ 4 ປີຕໍ່ໜ້າ).

ກິດຈະກຳ ແລະ ຄວາມຮັບຜິດຊອບ:

ລະບຽບວາລະຂອງກອງປະຊຸມແນະນຳໂຄງການຂັ້ນເມືອງ ຄືກັບກອງປະຊຸມຢູ່ຂັ້ນແຂວງ (ເບິ່ງຂໍ້ 5.2. ກອງປະຊຸມແນະນຳໂຄງການຂັ້ນແຂວງ), ລວມທັງແຜນການ ແລະ ຕາຕະລາງຈັດກອງປະຊຸມວາງແຜນພັດທະນາຂັ້ນບ້ານ.

ກຳນົດເວລາ:

1-3 ມື້ (ຂຶ້ນກັບວ່າເປັນພື້ນທີ່ເປົ້າໝາຍເກົ່າ ຫຼື ໃໝ່)

ການຕິດຕາມ:

ຜູ້ປະສານງານ ທລຍ ເມືອງ ຕ້ອງຮັບປະກັນ ວ່າໄດ້ມີການຕິດຕາມຢ່າງໃກ້ຊິດກັບພາກສ່ວນສຳຄັນຕ່າງໆທີ່ກ່ຽວຂ້ອງ. ບົດບັນທຶກຄວາມເຂົ້າໃຈ ກ່ຽວກັບລະຫວ່າງ ທລຍ ກັບຂະແໜງການຕ່າງໆ ຕ້ອງໄດ້ປຶກສາຫາລື ນຳຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ.

## 5.4 ການສ້າງແຜນການ

### 5.4.1 ການຄັດເລືອກຜູ້ປະສານງານກຸ່ມບ້ານ

ຂໍ້ມູນພື້ນຖານ, ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງຜູ້ປະສານງານກຸ່ມບ້ານ ແມ່ນໄດ້ອະທິບາຍຢູ່ຂໍ້ 3.9. ຜູ້ປະສານງານກຸ່ມບ້ານ.

**ຜູ້ປະສານງານກຸ່ມບ້ານ ແມ່ນຈະໄດ້ຖືກຄັດເລືອກໄວເທົ່າທີ່ຈະໄວໄດ້ ຫລັງຈາກຮູ້ວ່າ ທລຍ ຈະເຂົ້າໄປເຮັດວຽກຢູ່ກຸ່ມບ້ານດັ່ງກ່າວ ຊຶ່ງໃຫ້ເອີ້ນວ່າເປັນຜູ້ປະສານງານກຸ່ມບ້ານຊົ່ວຄາວ**, ຜູ້ປະສານງານກຸ່ມບ້ານຊົ່ວຄາວນີ້ ຈະເປັນຜູ້ກະກຽມ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການຈັດກອງປະຊຸມແນະນຳໂຄງການຂັ້ນບ້ານ, ກອງປະຊຸມວາງແຜນພັດທະນາຂັ້ນບ້ານ ແລະ ກອງປະຊຸມວາງແຜນພັດທະນາຂັ້ນກຸ່ມບ້ານ.

ການຄັດເລືອກຜູ້ປະສານງານກຸ່ມບ້ານຊົ່ວຄາວ ຈະໄດ້ດຳເນີນໂດຍທີມງານ ທລຍ ເມືອງ ແລະ ອຳນາດການປົກຄອງຂອງເມືອງ ໂດຍພື້ນຖານແມ່ນອີງໃສ່ເງື່ອນໄຂການຄັດເລືອກດັ່ງຕໍ່ໄປນີ້:

- ຄວນເປັນຜູ້ທີ່ມີຄວາມສົນໃຈໃນການຊ່ວຍເຫລືອຜູ້ອື່ນ, ໂດຍສະເພາະເຫັນອົກເຫັນໃຈຜູ້ທຸກຍາກທີ່ສຸດ;
- ຄວນເປັນຜູ້ທີ່ຫ້າວຫັນ, ມີຄວາມອົດທົນ ແລະ ມີຄວາມມັກໃນການລົງໄປເຮັດວຽກຢູ່ບ້ານທຸກຍາກ;
- ຄວນເປັນຜູ້ທີ່ມີຄວາມສົນໃຈຢາກຮຽນຮູ້ ແລະ ນຳໃຊ້ລະບຽບຫລັກການ ແລະ ວິທີການເຮັດວຽກແບບມີສ່ວນຮ່ວມຕາມຮູບແບບ ຂອງ ທລຍ;

- ຄວນເປັນຜູ້ທີ່ມີຄວາມສາມາດ ໃນການໂອ້ລົມຕໍ່ພໍ່ແມ່ປະຊາຊົນ (ສໍາລັບທັກສະໃນການເປັນຜູ້ອໍານວຍຄວາມສະດວກນັ້ນ ທລຍ ຈະໄດ້ຝຶກອົບຮົມໃຫ້ຕື່ມຕາມພາຍຫລັງ)
- ຄວນເປັນຜູ້ທີ່ມີເວລາເຮັດວຽກນໍາ ທລຍ ຢ່າງເຕັມສ່ວນ (ຍົກເວັ້ນຜູ້ທີ່ເປັນພະນັກງານລັດ, ນາຍບ້ານ ແລະ ອໍານາດການປົກຄອງກຸ່ມບ້ານ... ເພາະເພິ່ນອາດຈະມີວຽກຫລາຍຢູ່ແລ້ວ);
- ຄວນເປັນຜູ້ທີ່ມີຄວາມນັບຖື ແລະ ມີຄວາມເຊື່ອໝັ້ນ ຈາກຊາວບ້ານ;
- ຄວນເປັນຜູ້ທີ່ມາຈາກບ້ານທີ່ທຸກຍາກ (ອີງໃສ່ຂໍ້ມູນຄວາມທຸກຍາກຈາກເມືອງ) ຫຼື ຄັດເລືອກມາຈາກບ້ານທີ່ຈະໄດ້ຮັບໂຄງການຍ່ອຍ ຈາກ ທລຍ ໃນໄລຍະ 4 ປີຕໍ່ໜ້າ (ຍົກເວັ້ນການຄັດເລືອກມາຈາກບ້ານບໍ່ທຸກ);
- ຄວນເປັນຊົນເຜົ່າ (ກໍລະນີເລືອກເອົາຜູ້ທີ່ເປັນຊົນເຜົ່າບໍ່ໄດ້, ໃຫ້ຄັດເລືອກມາຈາກຄອບຄົວທີ່ທຸກຍາກ);
- ເປັນຜູ້ມີຄວາມສາມາດອ່ານ ແລະ ຂຽນພາສາລາວໄດ້, ຢ່າງໜ້ອຍຜູ້ທີ່ຮຽນຈົບຊັ້ນປະຖົມສົມບູນ;
- ມີອາຍຸ ລະຫວ່າງ 25 ຫາ 45 ປີ;
- ຖ້າເປັນຜູ້ຍິງຈະໄດ້ຮັບພິຈາລະນາເປັນພິເສດ;
- ເປັນຜູ້ທີ່ມີປະສົບການ ໃນການເຮັດວຽກກັບອົງການພັດທະນາອື່ນໆມາກ່ອນ ຍິ່ງເປັນການດີ.

ຕ້ອງໄດ້ຄັດເລືອກກ່ອນກອງປະຊຸມແນະນໍາໂຄງການ ທລຍ ຂັ້ນເມືອງ ແລະ ຂັ້ນກຸ່ມບ້ານ ປະມານ 2-3 ອາທິດ. ທີມງານ ທລຍ ອະທິບາຍກ່ຽວກັບພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງຜູ້ປະສານງານກຸ່ມບ້ານ ພ້ອມທັງເງື່ອນໄຂການຄັດເລືອກ ໃຫ້ແກ່ອໍານາດການປົກຄອງເມືອງ ແລະ ຄະນະກຸ່ມບ້ານພັດທະນາ. ຈາກນັ້ນຢູ່ກອງປະຊຸມດັ່ງກ່າວນີ້ ອໍານາດການປົກຄອງເມືອງ ຈະເປັນຜູ້ສະເໜີລາຍຊື່ຜູ້ທີ່ເຫັນວ່າມີຄວາມເໝາະສົມ ເພື່ອເຂົ້າຄັດເລືອກ, ຂັ້ນຕອນຕໍ່ໄປຄະນະກຸ່ມບ້ານພັດທະນາ ແລະ ທີມງານ ທລຍ ຈະໄດ້ຄັດເລືອກເອົາຜູ້ທີ່ມີຄວາມເໝາະສົມທີ່ສຸດ ເປັນປະສານງານກຸ່ມບ້ານຊົ່ວຄາວ.

ຢູ່ໃນກອງປະຊຸມແນະນໍາໂຄງການຂັ້ນບ້ານ, ຈະໄດ້ມີການແນະນໍາຜູ້ປະສານງານກຸ່ມບ້ານຊົ່ວຄາວ ແລະ ອະທິບາຍກ່ຽວກັບເງື່ອນໄຂການຄັດເລືອກໃຫ້ແກ່ຊາວບ້ານ. ຊາວບ້ານຈະເປັນຜູ້ສະເໜີຂຶ້ນ ໃນກໍລະນີທີ່ເຂົາເຈົ້າບໍ່ມີຄວາມເພິ່ງພໍໃຈຜູ້ປະສານງານກຸ່ມບ້ານຊົ່ວຄາວຄົນໃດຄົນນຶ່ງ. ຊຶ່ງຈະເປັນໂອກາດໃນການຄັດເລືອກຜູ້ປະສານງານກຸ່ມບ້ານຄືນໃໝ່ ໂດຍອາດຈະຄັດເລືອກມາຈາກຕົວແທນບ້ານ 6 ຄົນ ແລະ ຈະໄດ້ຄັດເລືອກຢູ່ໃນກອງປະຊຸມວາງແຜນພັດທະນາກຸ່ມບ້ານ ທີ່ຈະຖືກຈັດຂຶ້ນໃນຕໍ່ໜ້ານີ້.

ຫລັງຈາກຕົວແທນບ້ານ ສໍາເລັດໃນການສ້າງແຜນພັດທະນາກຸ່ມບ້ານ ແລະ ຮູ້ຈັກບ້ານທີ່ຈະໄດ້ຮັບໂຄງການຍ່ອຍ ຈາກການຊ່ວຍເຫລືອ ຂອງ ທລຍ ແລ້ວ. ສະນັ້ນຈຶ່ງສະເໜີເງື່ອນໄຂໃນການຄັດເລືອກຜູ້ປະສານງານກຸ່ມບ້ານເພີ່ມຕື່ມ ຈາກນັ້ນຈຶ່ງສາມາດຮັບຮອງຜູ້ປະສານງານກຸ່ມບ້ານຊົ່ວຄາວ ຫຼື ຜູ້ປະສານງານກຸ່ມບ້ານທີ່ຄັດເລືອກໃໝ່: ເງື່ອນເພີ່ມຕື່ມມີດັ່ງນີ້:

- ຜູ້ປະສານງານກຸ່ມບ້ານ ຕ້ອງມາຈາກບ້ານທີ່ຖືກຈັດເປັນບ້ານທຸກ ຫຼື ທຸກຍາກທີ່ສຸດ ຢູ່ພາຍໃນກຸ່ມບ້ານ ຈາກນັ້ນຄັດເລືອກມາຈາກຕົວແທນບ້ານດັ່ງກ່າວ (ບ້ານທີ່ບໍ່ທຸກແມ່ນໃຫ້ຍົກເວັ້ນ);

- ບ້ານຂອງຜູ້ປະສານງານກຸ່ມບ້ານ ຄວນບໍ່ໄກຈາກບ້ານທີ່ຈະໄດ້ຮັບໂຄງການຍ່ອຍທີ່ ທລຍ ຈະຊ່ວຍເຫລືອ.

ຜູ້ປະສານງານກຸ່ມບ້ານໄດ້ຖືກຮັບຮອງເອົາ (ຫຼື ຜູ້ປະສານງານກຸ່ມບ້ານ ໄດ້ຖືກຄັດເລືອກໃໝ່) ໂດຍຕົວແທນແຕ່ລະບ້ານ ຢູ່ໃນກອງປະຊຸມວາງແຜນພັດທະນາກຸ່ມບ້ານ. ຢູ່ໃນໄລຍະດຳເນີນການຄັດເລືອກຜູ້ປະສານງານກຸ່ມບ້ານ ບໍ່ຄວນມີການກຳນົດລ່ວງກ່ອນວ່າຈະເອົາຜູ້ໃດເປັນຜູ້ປະສານງານກຸ່ມບ້ານ. ຜູ້ປະສານງານກຸ່ມບ້ານນີ້ ອາດແມ່ນຜູ້ຍິງ 1 ຄົນ ຫຼື ອາດແມ່ນຍິງ 1 ຄົນ ແລະ ຊາຍ 1 ຄົນ ຫຼື ອາດແມ່ນຜູ້ຍິງ 2 ຄົນກໍໄດ້.

ຈຳນວນຜູ້ປະສານງານກຸ່ມບ້ານ ໃນແຕ່ລະກຸ່ມບ້ານ ແມ່ນມີຄວາມແຕກຕ່າງກັນ ທັງນີ້ຂຶ້ນກັບຈຳນວນບ້ານທີ່ໄດ້ຮັບໂຄງການຍ່ອຍ, ຈຳນວນຊົນເຜົ່າຢູ່ໃນບ້ານດັ່ງກ່າວ ລວມທັງຂຶ້ນກັບໄລຍະຫ່າງ ລະຫວ່າງບ້ານທີ່ໄດ້ຮັບໂຄງການຍ່ອຍ. ຫລັກການໂດຍລວມໃນການຄັດເລືອກເອົາຜູ້ປະສານງານກຸ່ມບ້ານນີ້ ຫາສອງຄົນນັ້ນ ຂຶ້ນກັບສະພາບຂອງແຕ່ລະກຸ່ມບ້ານ (ໄລຍະຫ່າງຂອງບ້ານ, ເຂດຫ່າງໄກສອກຫລີກ, ອື່ນໆ).

ຢູ່ໃນກຸ່ມບ້ານທີ່ມີຫລາຍຊົນເຜົ່າ ສະນັ້ນຜູ້ປະສານງານກຸ່ມບ້ານ ກໍຄວນໃຫ້ມີຜູ້ຕາງໜ້າຊົນເຜົ່ານຳ.

**ຢູ່ໃນເມືອງທີ່ມີການຈັດຕັ້ງປະຕິບັດວຽກງານ ທລຍ ເປັນປີທຳອິດ, ການຄັດເລືອກຜູ້ປະສານງານກຸ່ມບ້ານຊົ່ວຄາວນັ້ນ ແມ່ນຂັ້ນຕອນນຶ່ງຂອງການຄັດເລືອກພະນັກງານທີ່ປຶກສາ ທີ່ຈະມາເຮັດວຽກນຳໂຄງການ ແລະ ແມ່ນການຄັດເລືອກຮ່ວມກັນ ລະຫວ່າງ ທີມງານ ທລຍ ແລະ ຄະນະກຸ່ມບ້ານພັດທະນາ ເພື່ອໃຫ້ຊ່ວຍໃນການກະກຽມໃນການຈັດກອງປະຊຸມແນະນຳໂຄງການ ແລະ ກອງປະຊຸມວາງແຜນພັດທະນາບ້ານ.**

ໃນຫລັກການແລ້ວ ຊຸມຊົນເປັນຜູ້ສຸດທ້າຍ ເພື່ອຮັບຮອງເອົາການຄັດເລືອກຜູ້ປະສານງານກຸ່ມບ້ານ. ເຖິງແນວໃດກໍຕາມ ສຳລັບເພື່ອມາຊ່ວຍໃນຂັ້ນຕອນການສ້າງແຜນເທື່ອທຳອິດນີ້. ຜູ້ປະສານງານກຸ່ມບ້ານຈະໄດ້ຄັດເລືອກໂດຍທີມງານ ທລຍ ຂັ້ນເມືອງ ແລະ ຂັ້ນແຂວງ ໂດຍການມີສ່ວນຮ່ວມຈາກອຳນາດການປົກຄອງເມືອງ ແລະ ຄະນະກຸ່ມບ້ານພັດທະນາ. ຢູ່ກຸ່ມບ້ານໃດ ທີ່ ທລຍ ໄດ້ເຮັດວຽກມາກ່ອນແລ້ວນັ້ນ ຜູ້ປະສານງານກຸ່ມບ້ານ ຈະຕ້ອງໄດ້ມີການທົບທວນຄືນ. ບໍ່ວ່າໃນກໍລະນີໃດກໍຕາມ ການຄັດເລືອກຜູ້ປະສານງານກຸ່ມບ້ານ ຈະຕ້ອງໄດ້ມີການຮັບຮອງເອົາ - ຫຼື ຜູ້ປະສານງານກຸ່ມບ້ານ ຈະຕ້ອງມີການປ່ຽນແທນ - ຢູ່ກອງປະຊຸມວາງແຜນພັດທະນາກຸ່ມບ້ານ (ເບິ່ງ ຂໍ້ 5.6 ກອງປະຊຸມວາງແຜນພັດທະນາກຸ່ມບ້ານ).

ຢູ່ໃນໄລຍະກອງປະຊຸມສະຫລຸບການໃຊ້ຈ່າຍງວດສຸດທ້າຍ (ເບິ່ງຂໍ້ 6.8.1. ກອງປະຊຸມສະຫລຸບການໃຊ້ຈ່າຍງວດສຸດທ້າຍ) ຊາວບ້ານຈະໄດ້ຖາມຜູ້ປະສານງານກຸ່ມບ້ານ ເພື່ອເປັນການຮັບຮອງຄືນ ຫຼື ມີການສະ

ເໜີຊື່ຜູ້ໃໝ່ ມາຈາກຕົວແທນບ້ານ ເພື່ອສະເໜີໃຫ້ຄັດເລືອກຢູ່ໃນຮອບວຽນຕໍ່ໄປ ຫຼື ສະເໜີປ່ຽນແທນ ທັງນີ້ແມ່ນຂຶ້ນກັບການປະເມີນຜົນ ວ່າການເຮັດວຽກຂອງຜູ້ປະສານງານກຸ່ມບ້ານໃນປີຜ່ານມາເປັນແນວໃດ.

### 5.4.2 ຝຶກອົບຮົມຜູ້ປະສານງານກຸ່ມບ້ານ

ປະສານງານທຸກບ້ານຊົ່ວຄາວທຸກໆຄົນ ທີ່ເຂົ້າຮ່ວມກອງປະຊຸມແນະນຳໂຄງການຂັ້ນເມືອງ ຈະໄດ້ຮັບການຝຶກອົບຮົມ. ການຝຶກອົບຮົມຈະໄດ້ຈັດຂຶ້ນ ແລະ ຝຶກໃຫ້ໂດຍພະນັກງານ ທລຍ ແຂວງ ແລະ ທລຍ ເມືອງ.

ການຝຶກອົບຮົມ ຈະໄດ້ດຳເນີນເປັນເວລາ 5 ມື້ ແລະ ຈະໄດ້ຈັດຂຶ້ນຫລັງຈາກກອງປະຊຸມແນະນຳໂຄງການຂັ້ນເມືອງ ແລະ ຂັ້ນກຸ່ມບ້ານ.

ການຝຶກອົບຮົມໃຫ້ແກ່ຜູ້ປະສານງານກຸ່ມບ້ານ ຈະໄດ້ຝຶກກ່ຽວກັບພາບລວມໂດຍຫຍໍ້ ຂອງຈຸດທີ່ສຳຄັນຕ່າງໆ ຂອງ ທລຍ ແລະ ໂດຍສະເພາະຈະໄດ້ເນັ້ນໜັກໃສ່ຝຶກເຕັກນິກການມີສ່ວນຮ່ວມ ຊຶ່ງຈະໄດ້ນຳໄປນຳໃຊ້ຢູ່ກອງປະຊຸມຂັ້ນບ້ານ ແລະ ຂັ້ນກຸ່ມບ້ານ ທີ່ຈະຈັດຂຶ້ນໃນຕໍ່ໜ້ານີ້. ການຝຶກອົບຮົມດັ່ງກ່າວນີ້ ຈະໄດ້ລວມເອົາການຮຽນຮູ້ວິທີການຈັດກອງປະຊຸມ ແລະ ວິທີການເປັນຜູ້ອຳນວຍຄວາມສະດວກ ຢູ່ໃນກອງປະຊຸມ ແລະ ວິທີການເວົ້າຢູ່ໃນເວທີສາທາລະນະ. ການຝຶກອົບຮົມດັ່ງກ່າວນີ້ ຍັງຈະໄດ້ມີການກະກຽມ ແລະ ກຳນົດຕາຕະລາງຈັດກອງປະຊຸມແນະນຳໂຄງການຂັ້ນບ້ານ ແລະ ກອງປະຊຸມວາງແຜນພັດທະນາບ້ານນຳຕື່ມອີກ.

<u>ສະຖານທີ່</u>:

ຫ້ອງປະຊຸມຂອງເມືອງ

<u>ຄູຝຶກ</u>:

ທີມງານ ທລຍ ຂັ້ນແຂວງ (ຄູຝຶກຫລັກແຫລ່ງ) ແລະ ທີມງານ ທລຍ ເມືອງ (ຄູຝຶກ)

<u>ເນື້ອໃນການຝຶກອົບຮົມ</u>

*ເນື້ອໃນກ່ຽວກັບພາບລວມ ຂອງ ທລຍ:*

- ຈຸດປະສົງຂອງ ທລຍ ແລະ ຂັ້ນຕອນການຈັດຕັ້ງປະຕິບັດໂຄງການ;
- ເຕັກນິກໃນການຝຶກອົບຮົມ;
- ການຄຸ້ມຄອງບໍລິຫານດ້ານການເງິນ;
- ການຈັດຊື້-ຈັດຈ້າງ;
- ມາດຕະການໃນການປ້ອງກັນຜົນກະທົບ;

- ກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ;

*ເນື້ອໃນທີ່ຈະຕ້ອງໄດ້ເນັ້ນໜັກໃສ່:*

- ຝຶກອົບຮົມ ກ່ຽວກັບເຕັກນິກການມີສ່ວນຮ່ວມ ແລະ ການເຜີຍແຜ່ຂໍ້ມູນ-ຂ່າວສານ ພ້ອມທັງໃຫ້ມີການຝຶກຫັດຕົວຈິງ (ຕົວຢ່າງ: ວິທີການສື່ສານເຮັດແນວໃດ? ແລະ ການສື່ສານນຳແຕ່ລະກຸ່ມເປົ້າໝາຍທີ່ແຕກຕ່າງກັນ, ວິທີການເວົ້າຢູ່ເວທີສາທາລະນະ);
- ວິທີການກະກຽມ ແລະ ການອຳນວຍຄວາມສະດວກ ຢູ່ໃນແກ່ກອງປະຊຸມວາງແຜນພັດທະນາບ້ານ;
- ວິທີການກະກຽມ ແລະ ການອຳນວຍຄວາມສະດວກ ຢູ່ໃນແກ່ກອງປະຊຸມວາງແຜນພັດທະນາບ້ານ;

<u>ກຳນົດເວລາ</u>:

5 ມື້

### 5.4.3 ກອງປະຊຸມແນະນຳໂຄງການຂັ້ນບ້ານ

*<u>ສິ່ງທີ່ຕ້ອງການອັນຈຳເປັນຂອງກອງປະຊຸມ</u>*

ກອງປະຊຸມແນະນຳໂຄງການຂັ້ນບ້ານ ຈະໄດ້ຈັດຂຶ້ນຢູ່ແຕ່ລະບ້ານ ພາຍໃນກຸ່ມບ້ານເປົ້າໝາຍ ຂອງໂຄງການ, ໂດຍປົກກະຕິຈະໄດ້ຈັດຂຶ້ນໃນອາທິດຕໍ່ໄປ ຫລັງຈາກກອງປະຊຸມແນະນຳໂຄງການຂັ້ນເມືອງ ແລະ ຂັ້ນກຸ່ມບ້ານສຳເລັດລົງ. ຢູ່ພື້ນທີ່ເປົ້າໝາຍເກົ່າຂອງໂຄງການ ຜູ້ທີ່ຈະດຳເນີນກອງປະຊຸມ ແມ່ນຜູ້ປະສານງານກຸ່ມບ້ານ ຊຶ່ງເປັນຜູ້ມີປະສົບການມາກ່ອນແລ້ວ, ສ່ວນຢູ່ໃນພື້ນທີ່ເປົ້າໝາຍໃໝ່ ຜູ້ທີ່ດຳເນີນກອງປະຊຸມ ກໍແມ່ນຜູ້ປະສານງານກຸ່ມບ້ານໃໝ່ ແຕ່ເຂົາເຈົ້າຈະຕ້ອງໄດ້ຮັບການຊ່ວຍເຫລືອ ຈາກທີມງານ ທລຍ ຂັ້ນເມືອງ ແລະ ຂັ້ນແຂວງ ຫຼື ຜູ້ປະສານງານກຸ່ມບ້ານ ທີ່ມາຈາກກຸ່ມບ້ານເກົ່າທີ່ມີປະສົບການມາກ່ອນແລ້ວ.

ຕ້ອງໄດ້ໃຊ້ທຸກຄວາມພະຍາຍາມ ເພື່ອແຈ້ງໃຫ້ຊາວບ້ານຮັບຮູ້ກ່ອນ ກ່ຽວກັບການທີ່ຈະຈັດກອງປະຊຸມແນະນຳໂຄງການຂັ້ນບ້ານ ເຊັ່ນ: ວັນເວລາ, ສະຖານທີ່ ແລະ ຊຸກຍູ້ໃຫ້ຊາວບ້ານເຂົ້າຮ່ວມໃຫ້ໄດ້ຕາມລະດັບຄາດໝາຍ. ອີງໃສ່ປະສົບການຜ່ານມາເຫັນວ່າ ວິທີທີ່ໄດ້ຮັບຜົນແມ່ນນາຍບ້ານ, ຮອງນາຍບ້ານ ແລະ ຜູ້ຕາງໜ້າອົງການຈັດຕັ້ງມະຫາຊົນ ເປັນຜູ້ໄປປະກາດ ຫຼື ປ່າວຂ່າວໃຫ້ແຕ່ລະຄອບຄົວ ພ້ອມດຽວກັນ ກໍຕ້ອງໄດ້ປະກາດແຈ້ງຢູ່ກະດານຂ່າວຂອງບ້ານ ແລະ ປະກາດຢູ່ໂຮງຮຽນ, ຢູ່ວັດ ແລະ ບ່ອນອື່ນໆ.

ຢ່າງໜ້ອຍຜູ້ປະສານງານກຸ່ມບ້ານ ຄວນໄປພົບກັບອຳນາດການປົກຄອງ ແລະ ພໍ່ແມ່ປະຊາຊົນຂອງບ້ານທີ່ຈະຈັດກອງປະຊຸມດັ່ງກ່າວນີ້ກ່ອນ 1 ອາທິດ, ທັງນີ້ເພື່ອເປັນການຢັ້ງຢືນວ່າສະຖານທີ່ກອງປະຊຸມຈະຈັດ

ຢູ່ໃສ? (ປົກກະຕິຈະແມ່ນຈັດຢູ່ວັດ, ໂຮງຮຽນ, ຕະຫລາດຊຸມຊົນ ຫຼື ສະຖານທີ່ອື່ນໆ ຕາມຄວາມເໝາະສົມ ໂດຍໃຫ້ສາມາດຮັບຜູ້ທີ່ຈະເຂົ້າຮ່ວມຈຳນວນຫລວງຫລາຍໄດ້).

**ຢ່າງໜ້ອຍ 50% ຂອງຈຳນວນຜູ້ໃຫ່ຍຜູ້ຊາຍ ແລະ 50% ຂອງຈຳນວນຜູ້ໃຫ່ຍຜູ້ຍິງ ພາຍໃນບ້ານ (ທີ່ມີອາຍຸ 14 ປີຂຶ້ນໄປ) ຕ້ອງໄດ້ເຂົ້າຮ່ວມກອງປະຊຸມແນະນຳໂຄງການ, ຖ້າຫາກຜູ້ເຂົ້າຮ່ວມ ບໍ່ຄົບຕາມຈຳນວນທີ່ກຳນົດໄວ້ ສະເໜີໃຫ້ເລື່ອນກອງປະຊຸມດັ່ງກ່າວອອກໄປມື້ໃໝ່**[11]. ສະນັ້ນ, ຜູ້ປະສານງານກຸ່ມບ້ານ ຈະຕ້ອງໄດ້ໃຊ້ທຸກວິທີທາງ ເພື່ອຮັບປະກັນວ່າທຸກພາກສ່ວນພາຍໃນບ້ານ (ເຊັ່ນ: ຊົນເຜົ່າ, ຜູ້ເສັຍອົງຄະ, ຜູ້ທຸກຍາກ, ຜູ້ເປັນຕົວແທນໃຫ້ແກ່ກຸ່ມເດັກນ້ອຍ ແລະ ຜູ້ອາວຸໂສ ຕ້ອງໄດ້ຂົ້າຮ່ວມກອງປະຊຸມດັ່ງກ່າວນີ້ຢ່າງພ້ອມພຽງ).

<u>ສະຖານທີ່</u>:

ໂຮງຮຽນ ຫຼື ສະໂມສອນຂອງບ້ານ ຫຼື ບ່ອນອື່ນໆ

<u>ປະທານກອງປະຊຸມ</u>:

ນາຍບ້ານ

<u>ຜູ້ເຂົ້າຮ່ວມ</u>:

ພໍ່ແມ່ປະຊາຊົນທັງໝົດ, ຜູ້ຕາງໜ້າຫ້ອງການພັດທະນາຊົນນະບົດເມືອງ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ, ໂຄງການພັດທະນາອື່ນໆ (ຖ້າຫາກມີ).

<u>ຈຸດປະສົງ</u>:

ແນະນຳໃຫ້ແກ່ຊາວບ້ານ ກ່ຽວກັບຈຸດປະສົງ, ວິໄສທັດ, ຫລັກການ, ລະບຽບພັດທະນາຊຸມຊົນ ແລະ ຂັ້ນຕອນວິທີການເຮັດວຽກ ຂອງ ທລຍ.

*<u>ເນື້ອໃນກອງປະຊຸມ</u>*

ແຈກຢາຍຊຸດເອກະສານ ສຳລັບເຜີຍແຜ່ຂໍ້ມູນ-ຂ່າວສານ (IEC) ຂອງກອງປະຊຸມແນະນຳໂຄງການ.

ຫົວຂໍ້ທີ່ຈະນຳສະເນີມີດັ່ງນີ້:

- ໂຄງຮ່າງການຈັດຕັ້ງ ຂອງ ທລຍ ຂັ້ນເມືອງ, ກຸ່ມບ້ານ ແລະ ບ້ານ;

---

[11] ກອງປະຊຸມດັ່ງກ່າວນີ້ ເປັນກອງປະຊຸມທີ່ຈັດຂຶ້ນເປັນເທື່ອທຳອິດຢູ່ຂັ້ນບ້ານ, ສະນັ້ນ ຖ້າຫາກຜູ້ເຂົ້າຮ່ວມ ຕ່ຳກວ່າ 50% ກໍອາດຍອມຮັບໄດ້ ເພາະວ່າເລື່ອງການມີສ່ວນຮ່ວມ ອາດຈະເປັນເລື່ອງໃໝ່ ສຳລັບຊາວບ້ານ ແລະ ຄວາມສາມາດຂອງພະນັກງານ ທລຍ ເຂົາເຈົ້າກໍຍັງບໍ່ທັນມີປະສົບການ.

- ຈຸດປະສົງ, ຫລັກການ ແລະ ຂັ້ນຕອນທີ່ສຳຄັນ ຂອງ ທລຍ;
- ການສ້າງແຜນພັດທະນາກຸ່ມບ້ານ ແລະ ແຜນການລົງທຶນ ຂອງ ທລຍ ໃນໄລຍະ 4 ປີ;
- ການຈັດສັນງົບປະມານໃຫ້ແກ່ກຸ່ມບ້ານ;
- ອະທິບາຍກ່ຽວກັບຄວາມຕ້ອງການ ສຳລັບ 66% ຂອງຈຳນວນໂຄງການຍ່ອຍທັງໝົດ ຕ້ອງຈັດສັນໄປຫາບ້ານທຸກຍາກທີ່ສຸດໃນກຸ່ມບ້ານ;
- ລາຍການກິດຈະກຳທີ່ສະໜັບສະໜູນໂດຍ ທລຍ (ລວມທັງກິດຈະກຳທີ່ບໍ່ສາມາດສະໜັບສະໜູນ);
- ສິດ ແລະ ໜ້າທີ່ຮັບຜິດຊອບຂອງທີມງານຂັ້ນບ້ານ (ຊຸມຊົນເປັນຜູ້ດຳເນີນການຈັດຊື້-ຈັດຈ້າງ ແລະ ຄຸ້ມຄອງດ້ານການເງິນເອງ);
- ກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ;
- ອະທິບາຍໂດຍລວມ ກ່ຽວກັບຂໍ້ແນະນຳການປ້ອງກັນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມລວມທັງນະໂຍບາຍການຍົກຍ້າຍຈັດສັນ, ການທົດແທນຄືນ/ຫລັກການໃນ ການປະກອບສ່ວນແບບສະໝັກໃຈ (ອີງໃສ່ດຳລັດເລກທີ່ 192/ນຍ), ການກວດສອບກ່ຽວກັບຜົນກະທົບທາງດ້ານວັດທະນາທຳ ແລະ ການເຂົ້າຮ່ວມຂອງຊົນເຜົ່າ ແລະ ຜູ້ດ້ອຍໂອກາດ;
- ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ ຂອງອຳນາດການປົກຄອງທ້ອງຖິ່ນ ຕໍ່ກັບວຽກງານຂອງ ທລຍ (ລວມທັງການຄຸ້ມຄອງນຳໃຊ້ ແລະ ບູລະນະສ້ອມແປງໂຄງການຍ່ອຍ);
- ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ ແລະ ຂັ້ນຕອນໃນການຄັດເລືອກຜູ້ປະສານງານກຸ່ມບ້ານ;
- ແນະນຳຄະນະໄກ່ເກັ່ຍຂັ້ນບ້ານ ແລະ ນຳສະເໜີພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງເຂົາເຈົ້າ;
- ປຶກສາຫາລື ແລະ ສົນທະນາແລກປ່ຽນ ກ່ຽວກັບແຜນການຍົກຍ້າຍ ຫຼື ເຕົ້າໂຮມບ້ານ ຢູ່ພາຍໃນກຸ່ມບ້ານ.

*ເປີດການສົນທະນາຖາມ-ຕອບ*

ເປີດກວ້າງການສົນທະນາ ກ່ຽວກັບຫລັກການ, ສິດ, ໜ້າທີ່ຮັບຜິດຊອບ ແລະ ຄວາມຄາດຫວັງທີ່ຈະໄດ້ຮັບຂອງຊຸມຊົນ (ສິດລວມທັງການເຂົ້າຮ່ວມ ຂອງຜູ້ຍິງ ແລະ ຊົນເຜົ່າ, ຜົນປະໂຫຍດທີ່ຈະໄດ້ຮັບຂອງຜູ້ທຸກຍາກ, ການປະກອບສ່ວນຂອງຊຸມຊົນ, ການລົງທຶນທີ່ມີປະສິດທິຜົນ ແລະ ອື່ນໆ (ໃຊ້ເວລາປະມານ 2 ຊົ່ວໂມງ) .

ຄາດໝາຍທີ່ຈະໄດ້ຮັບ:

- ຊາວບ້ານທັງໝົດ ມີຄວາມເຂົ້າໃຈ ກ່ຽວກັບຈຸດປະສົງ, ຫລັກການ, ລະບຽບການພັດທະນາ ແລະ ຂັ້ນຕອນການເຮັດວຽກຂອງໂຄງການ (ລວມທັງສິດໜ້າທີ່ ແລະ ຄວາມຮັບຜິດຊອບຂອງຊາວບ້ານ);

- ຜູ້ເຂົ້າຮ່ວມ ມີຄວາມເຂົ້າໃຈ ກ່ຽວກັບພາລະບົດບາດ ແລະ ວິທີການຄັດເລືອກຜູ້ປະສານງານກຸ່ມບ້ານ;
- ຄະນະໄກ່ເກັ່ຽຂັ້ນບ້ານ ໄດ້ຮັບການທົບທວນຄືນ ແລະ ໄດ້ຮັບການຝຶກອົບຮົມ;
- ແຜນຈັດກອງປະຊຸມວາງແຜນພັດທະນາບ້ານ ແລະ ວັນເວລາທີ່ຈະຈັດກອງປະຊຸມໄດ້ຖືກຮັບຮອງ.

<u>ກຳນົດເວລາ</u>:

1-3 ມື້

ດັ່ງທີ່ຮັບຮູ້ແລ້ວນັ້ນ ທຸກໆບ້ານຕ້ອງໄດ້ເຂົ້າຮ່ວມໃນການກະກຽມແຜນພັດທະນາກຸ່ມບ້ານ. ຈຶ່ງມີຄວາມຈຳເປັນ ທີ່ຈະຕ້ອງໄດ້ແຈ້ງໃຫ້ແຕ່ລະບ້ານພາຍໃນກຸ່ມບ້ານໄດ້ຮັບຊາບ ວ່າທຶນຮອນ ຂອງ ທລຍ ມີຈຳກັດ ແລະ ຈະໄດ້ສຸມໃສ່ຊ່ວຍເຫລືອບ້ານທຸກຍາກທີ່ສຸດ. ເພາະສະນັ້ນ, ບາງບ້ານພາຍໃນກຸ່ມບ້ານ ອາດຈະບໍ່ໄດ້ຮັບການຊ່ວຍເຫລືອ ຈາກ ທລຍ. ຢ່າງໃດກໍຕາມ, ເຂົາເຈົ້າຕ້ອງໄດ້ຮັບການແຈ້ງ ວ່າແຜນພັດທະນາກຸ່ມບ້ານທີ່ຈະຖືກສ້າງຂຶ້ນມານັ້ນ ຈະໄດ້ນຳສົ່ງຫາອຳນາດການປົກຄອງເມືອງ, ຫ້ອງການທີ່ກ່ຽວຂ້ອງ ແລະ ໂຄງການພັດທະນາອື່ນໆເພື່ອພິຈາລະນາຊ່ວຍເຊັ່ນກັນ.

ການຕິດຕາມ: ຜູ້ປະສານງານກຸ່ມບ້ານ ຈະຕ້ອງຮັບປະກັນວ່າ ຊາວບ້ານມີຄວາມເຂົ້າໃຈກ່ຽວກັບວັນເວລາທີ່ຈະຈັດກອງປະຊຸມວາງແຜນພັດທະນາບ້ານ ແລະ ຊຸກຍູ້ພໍ່ແມ່ປະຊາຊົນພາຍໃນບ້ານ ເພື່ອໃຫ້ມີການເຂົ້າຮ່ວມໃຫ້ຫລາຍເທົ່າທີ່ຈະຫລາຍໄດ້. ຜູ້ປະສານງານກຸ່ມບ້ານ ຈະໄດ້ສືບຕໍ່ໃນການປະສານສົມທົບນຳຊາວບ້ານ ວ່າຈະມີການແບ່ງເປັນຈັກກຸ່ມປຶກສາຫາລື ຢູ່ກອງປະຊຸມວາງແຜນພັດທະນາບ້ານ, ຖ້າຫາກຍັງບໍ່ທັນໄດ້ປຶກສາຫາລື ແລະ ຕົກລົງຢູ່ກອງປະຊຸມແນະນຳໂຄງການຂັ້ນບ້ານ ທີ່ຈັດຂຶ້ນໃນໄລຍະຜ່ານມາ.

## 5.5 ກອງປະຊຸມວາງແຜນພັດທະນາບ້ານ

ກອງປະຊຸມວາງແຜນພັດທະນາບ້ານ ຫຼື ກອງປະຊຸມກຳນົດທິດທາງພັດທະນາບ້ານຄັ້ງນີ້ ຄວນຈັດຂຶ້ນຢູ່ໃນ 1-3 ອາທິດ ຫລັງຈາກກອງປະຊຸມແນະນຳໂຄງການຂັ້ນບ້ານສຳເລັດລົງ. ຄວາມຕ້ອງການຂອງກອງປະຊຸມ ແມ່ນຄືກັນກັບກອງປະຊຸມແນະນຳໂຄງການຂັ້ນບ້ານ ດັ່ງທີ່ໄດ້ອະທິບາຍມາຂ້າງເທິງນັ້ນແລ້ວ.

ຫລັງຈາກກອງປະຊຸມແນະນຳໂຄງການຂັ້ນບ້ານ ແລະ ໄດ້ມີການກະກຽມກອງປະຊຸມວາງແຜນພັດທະນາບ້ານແລ້ວ, ຜູ້ປະສານງານກຸ່ມບ້ານ ຈະຕ້ອງໄດ້ຈັດກອງປະຊຸມກະກຽມຂຶ້ນຕື່ມອີກ ກັບອຳນາດການປົກຄອງບ້ານ ແລະ ຮັບປະກັນວ່າກຸ່ມເປົ້າໝາຍຕ່າງໆ ຈະຕ້ອງໄດ້ເຂົ້າຮ່ວມກອງປະຊຸມດັ່ງກ່າວນີ້. **ຜູ້ປະສານງານກຸ່ມບ້ານ ຄວນຈັດເປັນກຸ່ມຍ່ອຍ ເພື່ອປຶກສາຫາລື (ຕົວຢ່າງ: ກຸ່ມຜູ້ຍິງທີ່ເປັນຫົວໜ້າຄອບຄົວ, ກຸ່ມຜູ້ພິການ ແລະ ກຸ່ມຜູ້ຕາງໜ້າໃຫ້ແກ່ເດັກນ້ອຍ) ແລະ ຜູ້ປະສານງານກຸ່ມບ້ານ ຄວນ**

**ອະທິບາຍໃຫ້ແຕ່ລະກຸ່ມປຶກສາຫາລື.** ຜູ້ປະສານງານກຸ່ມບ້ານ ຈະຕ້ອງໄດ້ນຳສະເໜີຄືນຄວາມຕ້ອງການຂອງກຸ່ມຍ່ອຍຕ່າງໆ ໃຫ້ແກ່ກອງປະຊຸມໃຫ່ຍຮັບຊາບ.

<u>ສະຖານທີ່</u>:

ໂຮງຮຽນ ຫຼື ສະໂມສອນຂອງບ້ານ ຫຼື ບ່ອນອື່ນໆ.

<u>ປະທານກອງປະຊຸມ</u>:

ນາຍບ້ານ

*<u>ຈຸດປະສົງຂອງກອງປະຊຸມ</u>:*

- ທົບທວນຄືນອີກ ກ່ຽວກັບຈຸດປະສົງຫລັກ ແລະ ຂັ້ນຕອນການດຳເນີນວຽກງານ ຂອງ ທລຍ;
- ການຈັດກອງປະຊຸມວາງແຜນພັດທະນາບ້ານ ແມ່ນເພື່ອໃຫ້ຊຸມຊົນມີຄວາມເຂົ້າໃນເພີ່ມຂຶ້ນ ກ່ຽວກັບຮາກເຫງົ້າ ທີ່ເປັນສາຍເຫດຂອງຄວາມທຸກຍາກຢູ່ບ້ານ ຂອງເຂົາເຈົ້າ ແລະ ການສະແດງໃຫ້ເຫັນເຖິງຄວາມມຸ່ງໝາດປາຖະໜາ ແລະ ເປົ້າໝາຍ ສຳລັບການພັດທະນາໃນຕໍ່ໜ້າ ລວມທັງການເອົາໃຈໃສ່ເປັນພິເສດ ໃນການລວມເອົາຄວາມຕ້ອງການຂອງກຸ່ມຜູ້ດ້ອຍໂອກາດເຂົ້າໃນແຜນພັດທະນາຂອງບ້ານ;
- ມີຄວາມເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບຄວາມຕ້ອງການ ແລະ ຄວາມສາມາດປະກອບຂອງຊຸມຊົນ
- ເພື່ອສັງລວມເອົາຄຳຄິດຄຳເຫັນຂອງກຸ່ມດ້ອຍໂອກາດຕ່າງໆ ທີ່ໄດ້ຜ່ານການໂອ້ລົມ ແລະ ປຶກສາຫາລືເປັນກຸ່ມຍ່ອຍ ຢູ່ກອງປະຊຸມວາງແຜນພັດທະນາບ້ານ ເຂົ້າເປັນອັນນື່ງອັນດຽວກັນ;
- ຄັດເລືອກຕົວແທນບ້ານ ເພື່ອໄປເຂົ້າຮ່ວມກອງປະຊຸມການວາງແຜນພັດທະນາກຸ່ມບ້ານ;
- ແນະນຳໃຫ້ຕົວແທນບ້ານທີ່ໄດ້ຖືກຄັດເລືອກ ໃຫ້ມີຄວາມເຂົ້າໃຈກ່ຽວກັບວິທີການຈັດກອງປະຊຸມວາງແຜນພັດທະນາກຸ່ມບ້ານ;
- ເພື່ອທົບທວນຄືນ ແລະ ຝຶກອົບຮົມໃຫ້ແກ່ຄະນະໄກ່ເກັ່ຽຂັ້ນບ້ານ;

*<u>ຜົນໄດ້ຮັບຂອງກອງປະຊຸມ</u>:*

- ໄດ້ສະແດງ ໃຫ້ເຫັນຄວາມມຸ່ງໝາດປາຖະໜາ ແລະ ເປົ້າໝາຍໃນການພັດທະນາ ຂອງຊາວບ້ານ, ບຸລິມະສິດຄວາມຕ້ອງການຖືກກຳນົດຂຶ້ນ ແລະ ປຶ້ມແຜນພັດທະນາບ້ານ ໃນໄລຍະ 5 ປີ ຖືກສ້າງຂຶ້ນ;
- ຄະນະໄກ່ເກັ່ຽຂັ້ນບ້ານ ໄດ້ຮັບການທົບທວນຄືນ ແລະ ໄດ້ຮັບການຝຶກອົບຮົມ;
- ຕົວແທນບ້ານ ໄດ້ຮັບການຄັດເລືອກ ແລະ ໄດ້ຮັບການຝຶກອົບຮົມ.

*<u>ຕາຕະລາງ ຂອງກອງປະຊຸມ</u>:*

ກອງປະຊຸມນີ້ ອາດຈະຈັດຂຶ້ນເປັນເວລາ 2-3 ມື້..

*ເນື້ອໃນຂອງກອງປະຊຸມ:*

- ແນະນຳ ແລະ ອະທິບາຍ ກ່ຽວກັບກອງປະຊຸມວາງແຜນພັດທະນາບ້ານ;
  * ທິດທາງພັດທະນາບ້ານ - "ທ່ານຕ້ອງການໃຫ້ບ້ານ ແລະ ກຸ່ມບ້ານຂອງທ່ານເປັນຄືແນວໃດໃນອີກ 5 ປີຕໍ່ໜ້າ?" ນຳໃຊ້ວິທີການສອບຖາມບັນຫາສຳຄັນ ໂດຍແບ່ງເປັນກຸ່ມຍ່ອຍ ເພື່ອປຶກສາຫາລື, ຢ່າງໜ້ອຍແບ່ງອອກເປັນກຸ່ມຜູ້ຍິງ ແລະ ກຸ່ມຜູ້ຊາຍ. ສາມາດແບ່ງເປັນກຸ່ມຍ່ອຍອື່ນໆຕື່ມອີກ ເຊັ່ນ: ກຸ່ມຊົນເຜົ່າ, ຖ້າຫາກມີຄວາມເໝາະສົມ;
- "ການກ້າວໄປຫາເປົ້າໝາຍຂອງພວກເຮົາ" - ກຸ່ມຍ່ອຍ ປຶກສາຫາລື ວ່າຊັບພະຍາກອນອັນໃດທີ່ມີແລ້ວຢູ່ໃນບ້ານ/ກຸ່ມບ້ານ ແລະ ກິດຈະກຳອັນໃດ ທີ່ກຸ່ມສະເໜີຂຶ້ນມາ ເພື່ອບັນລຸເປົ້າໝາຍ/ວິໄສທັດ ຂອງເຂົາເຈົ້າ;
- ການຈັດພາເຂົ້າສາມັກຄີ (ທລຍ ຈະໄດ້ສະໜອງງົບປະມານຈຳນວນນ້ອຍນຶ່ງໃຫ້ແກ່ບ້ານ ເພື່ອຈັດພາເຂົ້າສາມັກຄີຮ່ວມກັນ ລະຫວ່າງ ຜູ້ເຂົ້າຮ່ວມກອງປະຊຸມວາງແຜນພັດທະນາບ້ານ;
- "ເອົາໃຈໃສ່ບ້ານອື່ນ ພາຍໃນກຸ່ມບ້ານ ຂອງພວກເຮົາ" - ການສົນທະນາ ກ່ຽວກັບຄວາມທຸກຍາກ ແລະ ຄວາມຕ້ອງການພື້ນຖານໂຄງລ່າງຂອງບ້ານອື່ນ ຢູ່ພາຍໃນກຸ່ມບ້ານ;
- ພາລະບົດບາດ, ໜ້າທີ່ຮັບຜິດຊອບ ແລະ ຄຸນສົມບັດຂອງຕົວແທນບ້ານ ເພື່ອເຂົ້າຮ່ວມກອງປະຊຸມວາງແຜນພັດທະນາກຸ່ມບ້ານ;
- ສະເໜີຜູ້ສະໝັກ ແລະ ຄັດເລືອກເອົາຕົວແທນບ້ານ.

*<u>ໝາຍເຫດ</u>: ຢູ່ໃນປີທຳອິດ ຂອງ ທລຍ 2 ນັ້ນ ແມ່ນມີຄວາມສຳຄັນຫລາຍ ໃນການຈັດກອງປະຊຸມວາງແຜນພັດທະນາບ້ານຢູ່ທຸກໆບ້ານເປົ້າໝາຍ ຂອງ ທລຍ 1 ຜ່ານມາ. ນອກຈາກນີ້ມັນມີຄວາມສຳຄັນທີ່ສຸດເຊັ່ນກັນ ໃນການເນັ້ນໜັກໃສ່ຈຸດແຕກຕ່າງ ລະຫວ່າງ ທລຍ 1 ແລະ ທລຍ 2 ດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ.*

** ບົດສະເໜີໂຄງການຍ່ອຍ ຈະໄດ້ຈັດລຽງ ແລະ ຈະໄດ້ສ້າງຂຶ້ນ ຢູ່ຂັ້ນກຸ່ມບ້ານ;*

** ແຜນການລົງທຶນ ຂອງ ທລຍ ເປັນແຜນໄລຍະຍາວ (ໄລຍະ 4 ປີ) ແທນທີ່ຈະແມ່ນເປັນການສ້າງແຜນປະຈຳປີຄືແຕ່ກ່ອນ, ເຖິງແນວໃດກໍຕາມ ໂຄງການຍ່ອຍດ້ານພື້ນຖານໂຄງລ່າງ ຈະໄດ້ມີການກໍ່ສ້າງໃນແຕ່ລະປີ;*

** ການສະເໜີກິດຈະກຳການສ້າງລາຍຮັບ ແລະ ຝຶກອົບຮົມທາງດ້ານປັບປຸງຊີວິດການເປັນຢູ່ ຈະບໍ່ໄດ້ຖືກອະນຸມັດ, ຍົກເວັ້ນແຕ່ວ່າກິດຈະກຳເຫລົ່ານີ້ຕິດພັນໂດຍກົງ ກັບໂຄງການຍ່ອຍທາງດ້ານພື້ນຖານໂຄງລ່າງ ທີ່ໄດ້ສະເໜີຂຶ້ນມານັ້ນ.*

*<u>ການຄັດເລືອກ ແລະ ພາລະບົດບາດ ຂອງຕົວແທນບ້ານ</u>*

ແຕ່ລະບ້ານຈະໄດ້ຄັດເລືອກຕົວແທນບ້ານ ເພື່ອເປັນຕົວແທນໃຫ້ແກ່ບ້ານຂອງຕົນ ໃນການເຂົ້າຮ່ວມກອງປະຊຸມທີ່ຈະຈັດຂຶ້ນຢູ່ຂັ້ນກຸ່ມບ້ານ ໂດຍສະເພາະກອງປະຊຸມວາງແຜນພັດທະນາຂັ້ນກຸ່ມບ້ານ ຊຶ່ງກອງປະ

ຊຸມດັ່ງກ່າວ ຈະໄດ້ກຳນົດ ແລະ ຈັດລຽງບຸລິມະສິດໂຄງການຍ່ອຍຂອງກຸ່ມບ້ານ ພ້ອມດຽວກັນ ເຂົາເຈົ້າຍັງຈະໄດ້ເຂົ້າຮ່ວມກອງປະຊຸມລາຍງານຄືນ ແລະ ຮັບຮອງເອົາແຜນພັດທະນາກຸ່ມບ້ານ ທີ່ຈະຈັດຂຶ້ນຢູ່ບ້ານຂອງຕົນ. ເຫັນວ່າຕົວແທນບ້ານມີຄວາມສຳຄັນຫລາຍ, ເພາະສະນັ້ນ ຜູ້ທີ່ຈະຖືກຄັດເລືອກໃຫ້ເປັນຕົວແທນບ້ານ ຄວນເປັນຜູ້ທີ່ມີຄວາມຊື່ສັດ, ເປັນຄົນດຸໝັ່ນຂະຫຍັນພຽນ, ເປັນຜູ້ທີ່ມີຄວາມໄວ້ເນື້ອເຊື່ອໃຈ ແລະ ເປັນຜູ້ທີ່ມີຄວາມນັບຖືຈາກຊາວບ້ານ. ນອກຈາກນີ້ ຕົວແທນບ້ານ ຄວນເປັນຜູ້ທີ່ມີຄວາມກ້າຫານໃນການເວົ້າຢູ່ໃນກອງປະຊຸມ ຫຼື ເວົ້າຢູ່ໃນເວລາສາທາລະນະຕ່າງໆ ທັງນີ້ເພື່ອຈະໄດ້ນຳສະເໜີບຸລິມະສິດຄວາມຕ້ອງການຂອງບ້ານຢູ່ໃນກອງປະຊຸມຂັ້ນກຸ່ມບ້ານ ດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ. ການຄັດເລືອກຕົວແທນບ້ານ ແມ່ນຈະໄດ້ເຮັດແບບເປີດເຜີຍ ໂດຍຈະໄດ້ໃຊ້ເວລາຂຽນໃສ່ເຈັ້ຍ ເພື່ອປ່ອນເອົາ ຫຼື ດ້ວຍວິທີຍົກມືເອົາກໍໄດ້ ແລະ ການຄັດເລືອກດັ່ງກ່າວນີ້ ຈະໄດ້ດຳເນີນຢູ່ໃນຕອນທ້າຍຂອງກອງປະຊຸມວາງແຜນພັດທະນາບ້ານ.

ສ່ວນຫລາຍແຕ່ລະບ້ານ ຈະໄດ້ມີການຄັດເລືອກຕົວແທນບ້ານຈຳນວນ 6 ຄົນ, ແຕ່ໃນນັ້ນ ຢ່າງໜ້ອຍ 50% ຫຼື ຫລາຍກວ່ານັ້ນ ຕ້ອງແມ່ນຜູ້ຍິງ. ຢູ່ບ້ານທີ່ມີຫລາຍຊົນເຜົ່າ ຈະໄດ້ມີການຄັດເລືອກເອົາຜູ້ຕາງໜ້າຊົນເຜົ່າເຂົ້າມາເປັນຕົວແທນບ້ານ (ໝາຍເຫດ: ຢູ່ກຸ່ມບ້ານໃດມີບ້ານ ຫລາຍກວ່າ 10 ບ້ານຂື້ນໄປນັ້ນ ໃນກໍລະນີດັ່ງກ່າວ ຈະໄດ້ຄັດເລືອກເອົາຕົວແທນບ້ານ ຈຳນວນ 5 ຄົນ ຕໍ່ບ້ານ, ໃນນັ້ນຢ່າງໜ້ອຍຕ້ອງແມ່ນຜູ້ຍິງ 2 ຄົນ).

### 5.5.1 ຝຶກອົບຮົມໃຫ້ແກ່ຕົວແທນບ້ານ

ການຝຶກອົບຮົມ ຈະໄດ້ຈັດຂຶ້ນໃນທັນທີທັນໃດ ຫລັງຈາກກອງປະຊຸມວາງແຜນພັດທະນາບ້ານສຳເລັດລົງ, ຜູ້ປະສານງານກຸ່ມບ້ານ ແລະ ພະນັກງານ ທລຍ ຈະເປັນຜູ້ດຳເນີນການຝຶກອົບຮົມໃນຄັ້ງນີ້, ຫົວຂໍ້ພື້ນຖານຂອງການຝຶກອົບຮົມ ຈະລວມເອົາພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງຕົວແທນບ້ານ, ເຕັກນິກພື້ນຖານໃນການສື່ສານ, ວິທີການ ແລະ ຂັ້ນຕອນດຳເນີນກອງປະຊຸມວາງແຜນພັດທະນາກຸ່ມບ້ານ.

ການຝຶກອົບຮົມໃຫ້ແກ່ຕົວແທນບ້ານ ຈະໄດ້ກວາມເອົາຫົວຂໍ້ດັ່ງຕໍ່ໄປນີ້: ວິທີການນຳສະເໜີແຜນພັດທະນາບ້ານຢູ່ກອງປະຊຸມວາງແຜນພັດທະນາກຸ່ມບ້ານ, ວິທີການເຈລະນາຕໍ່ລອງ ແລະ ວິທີການຈັດກອງປະຊຸມວາງແຜນພັດທະນາກຸ່ມບ້ານ ພ້ອມທັງບົດບາດຂອງເຂົາເຈົ້າຢູ່ກອງປະຊຸມດັ່ງກ່າວ.

ຄູຝຶກ:

ພະນັກງານ ທລຍ ເມືອງ ແລະ ຜູ້ປະສານງານກຸ່ມບ້ານ

ກຳນົດເວລາ:

1-3 ຊົ່ວໂມງ

## 5.6 ກອງປະຊຸມວາງແຜນພັດທະນາກຸ່ມບ້ານ

### 5.6.1 ພາກສະເໜີ ກ່ຽວກັບກອງປະຊຸມວາງແຜນພັດທະນາກຸ່ມບ້ານ

ຜ່ານຂັ້ນຕອນການດຳເນີນກອງປະຊຸມຂັ້ນບ້ານ ແລະ ຂັ້ນກຸ່ມບ້ານ ຊຶ່ງຈັດໂດຍຜູ້ປະສານງານກຸ່ມບ້ານທີ່ໄດ້ຮັບການຝຶກອົບຮົມໃຫ້ໂດຍພະນັກງານ ທລຍ, ໂດຍການເຂົ້າຮ່ວມຢ່າງພ້ອມພຽງຂອງຊຸມຊົນ ເພື່ອກຳນົດສາເຫດຕົ້ນຕໍຂອງຄວາມທຸກຍາກຢູ່ກຸ່ມບ້ານ ແລະ ໄດ້ມີການຄັດເລືອກເອົາວິທີທາງທີ່ດີທີ່ສຸດ ໃນການແກ້ໄຂສາເຫດຂອງຄວາມທຸກຍາກ.

ຢູ່ໃນໄລຍະກອງປະຊຸມການວາງແຜນຄັ້ງນີ້ ການຄັດເລືອກຕົວແທນກຸ່ມບ້ານ ໂດຍການຄັດເລືອກມາຈາກຕົວແທນບ້ານແຕ່ລະບ້ານ ຈະໄດ້ດຳເນີນໄປຢ່າງເປີດເຜີຍ ແລະ ມີປະຊາທິປະໄຊ ເພື່ອເປັນຜູ້ໄປນຳສະເໜີແຜນພັດທະນາກຸ່ມບ້ານຂອງຕົນຢູ່ກອງປະຊຸມຂັ້ນເມືອງ. ແຜນພັດທະນາກຸ່ມບ້ານ ເປັນແຜນໄລຍະ 5 ປີ. **ແຜນພັດທະນາກຸ່ມບ້ານ ແມ່ນເຄື່ອງມືທີ່ນຳຄັນໃນການວາງແຜນ ຂອງ ທລຍ.**

ແຜນພັດທະນາກຸ່ມບ້ານ ຈະໄດ້ອະທິບາຍ ວິໃສທັດໄລຍະຍາວຂອງຊຸມຊົນ ສຳລັບການພັດທະນາກຸ່ມບ້ານຂອງເຂົາເຈົ້າ. ແຜນພັດທະນາກຸ່ມບ້ານ ຍັງຈະໄດ້ນຳສະເໜີ ແລະ ຈັດລຽງລຳດັບບຸລິມະສິດ ບັນດາໂຄງການຍ່ອຍທີ່ເປັນເປົ້າໝາຍ ເພື່ອຫລຸດຜ່ອນຄວາມທຸກຍາກ. ການສຳຫລວດຄວາມເປັນໄປໄດ້ ໃນການຈັດຕັ້ງປະຕິບັດໂຄງການຍ່ອຍ ຈະໄດ້ດຳເນີນຫລັງຈາກກອງປະຊຸມວາງແຜນພັດທະນາກຸ່ມບ້ານສຳເລັດລົງ (ຕົວຢ່າງ: ຈຳນວນໂຄງການຍ່ອຍທີ່ເປັນບຸລິມະສິດທຳອິດ ຢູ່ໃນປີທີ່ 1 ໂດຍອີງຕາມງົບປະມານທີ່ຈັດສັນໃຫ້ແຕ່ລະກຸ່ມໃນປີນີ້ໆ, ຈາກນັ້ນບັນດາໂຄງການຍ່ອຍອື່ນໆ ຈະໄດ້ຈັດຕັ້ງປະຕິບັດຢູ່ແຕ່ລະປີໃນອີກ 3 ປີຕໍ່ໜ້າ).

ຢູ່ໃນໄລຍະ 4 ປີ, ທລຍ ຈະໄດ້ສະໜອງງົບປະມານໃນຮູບແບບເປັນລາຍປີ. ໃນເບື້ອງຂອງຊຸມຊົນນັ້ນຈະໄດ້ມີການປະກອບສ່ວນ (ເປັນເງິນ ຫຼື ເປັນວັດຖຸ) ເຂົ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍບຸລິມະສິດທີ່ນອນຢູ່ໃນແຜນພັດທະນາກຸ່ມບ້ານ. ຢ່າງໜ້ອຍ 66% ຂອງຈຳນວນໂຄງການຍ່ອຍທັງໝົດ ຕ້ອງໄດ້ໄປຫາບ້ານທີ່ທຸກຍາກທີ່ສຸດຢູ່ໃນກຸ່ມບ້ານ.

ທິດທາງການສ້າງແຜນພັດທະນາກຸ່ມບ້ານ ແມ່ນສອດຄ່ອງກັບຫລັກການນື່ງ ຂອງ ທລຍ ຄື **"ຄວາມງ່າຍດາຍ"**. ແຜນພັດທະນາກຸ່ມບ້ານ ແມ່ນການສ້າງຂຶ້ນໂດຍຕົວແທນແຕ່ລະບ້ານ ພາຍໃນກຸ່ມບ້ານ. ແຜນພັດທະນາກຸ່ມບ້ານນີ້ ສະແດງໃຫ້ເຫັນເປົ້າໝາຍຍຸດທະສາດໄລຍະຍາວຂອງກຸ່ມບ້ານ ໃນການຫລຸດຜ່ອນຄວາມທຸກຍາກ ຊຶ່ງເປັນແຜນພັດທະນາໂດຍລວມ ແລະ ສະແດງໃຫ້ເຫັນແຜນການທີ່ ທລຍ ຈະໃຫ້ການສະໜັບສະໜູນ. ຮ່າງແຜນພັດທະນາກຸ່ມບ້ານ ແມ່ນໄດ້ນອນຢູ່ໃນເອກະສານແນບທ້າຍ 7.

### 5.6.2 ກອງປະຊຸມວາງແຜນພັດທະນາກຸ່ມບ້ານ

สะຖານທີ່:

ໂຮງຮຽນ ຫຼື ສະໂມສອນຂອງກຸ່ມບ້ານ ຫຼື ສະຖານທີ່ອື່ນໆ.

ປະທານກອງປະຊຸມ:

ຫົວໜ້າກຸ່ມບ້ານພັດທະນາ.

ຜູ້ເຂົ້າຮ່ວມ:

ຕົວແທນບ້ານ, ຜູ້ປະສານງານກຸ່ມບ້ານ, ຄະນະກຸ່ມບ້ານພັດທະນາ, ຜູ້ຕາງໜ້າຫ້ອງການພັດທະນາຊົນນະບົດເມືອງ, ພະນັກງານ ທລຍ (ຂັ້ນສູນກາງ ແລະ ຂັ້ນແຂວງ, ຖ້າຫາກສາມາດເຂົ້າຮ່ວມໄດ້).

ຈຸດປະສົງຂອງກອງປະຊຸມ:

ກອງປະຊຸມດັ່ງກ່າວນີ້ ແມ່ນຂັ້ນຕອນທີ່ມີຄວາມສຳຄັນກວ່າໝູ່ໝົດໃນຂະບວນການວາງແຜນ ຂອງ ທລຍ, ກອງປະຊຸມດັ່ງກ່າວນີ້ ບໍ່ພຽງແຕ່ເປັນການກຳນົດບຸລິມະສິດຄວາມຕ້ອງການໃນການລົງທຶນ ໃນໄລຍະ 4 ປີເທົ່ານັ້ນ, ແຕ່ມັນຍັງເປັນການກຳນົດວິທີທາງ ຫຼື ຈັດລຽງບຸລິມະສິດຄວາມຕ້ອງການ ໃນການພັດທະນາໃຫ້ແກ່ລັດຖະບານ ຫຼື ໂຄງການພັດທະນາອື່ນໆ ເພື່ອນຳໃຊ້ໃນຕໍ່ໜ້າ. ກອງປະຊຸມດັ່ງກ່າວນີ້ ຕາມປົກກະຕິຈະຈັດຂຶ້ນຢູ່ໃນ 2 ຫາ 4 ອາທິດ ຫລັງຈາກກອງປະຊຸມວາງແຜນພັດທະນາຂັ້ນບ້ານສຳເລັດລົງ.

ຈຸດປະສົງຫລັກມີດັ່ງນີ້:

- ເພື່ອສ້າງແຜນໄລຍະຍາວ (ພັດທະນາກຸ່ມບ້ານ ໃນໄລຍະ 5 ປີ) ອອກແບບເພື່ອແກ້ໄຂຄວາມທຸກຍາກຢູ່ພາຍໃນກຸ່ມບ້ານ;
- ເພື່ອສ້າງແຜນການລົງທຶນ ຂອງ ທລຍ ໃນໄລຍະ 4 ປີ ເພື່ອສະໜັບສະໜູນແຜນພັດທະນາກຸ່ມບ້ານ, ໂດຍການຄັດເລືອກເອົາບັນດາໂຄງການ ຕາມລຳດັບບຸລິມະສິດທີ່ນອນໃນແຜນພັດທະນາກຸ່ມບ້ານ;
- ເພື່ອຈັດລຽງບຸລິມະສິດຄວາມຕ້ອງການດ້ານພື້ນຖານໂຄງລ່າງ ທີ່ມີຄວາມສຳຄັນຕໍ່ການພັດທະນາເສດຖະກິດ ແລະ ສັງຄົມ ພ້ອມກັບການຝຶກອົບຮົມທັກສະນະ ກ່ຽວກັບການປັບປຸງຊີວິດການເປັນຢູ່ ທີ່ຕິດພັນກັບໂຄງການຍ່ອຍດ້ານພື້ນຖານໂຄງລ່າງ;
- ເພື່ອສະເໜີ ຕໍ່ຕົວແທນບ້ານຂອງແຕ່ລະບ້ານ ແລະ ຜູ້ເຂົ້າຮ່ວມຈາກພາກສ່ວນອື່ນໆ ກ່ຽວກັບງົບປະມານການລົງທຶນ ຂອງ ທລຍ ໃນໄລຍະ 4 ປີ ໃຫ້ແກ່ກຸ່ມບ້ານ;
- ເພື່ອອອກແບບປະເພດ ແລະ ສະຖານທີ່ຕັ້ງຂອງໂຄງການຍ່ອຍດ້ານພື້ນຖານໂຄງລ່າງທີ່ເປັນບຸລິມະສິດ ພາຍໃຕ້ການສະໜັບສະໜູນ ຂອງ ທລຍ ແລະ ໂດຍອີງໃສ່ຫລັກການ ຂອງ ທລຍ ທລຍ ຄື (66% ຂອງຈຳນວນໂຄງການຍ່ອຍທັງໝົດ ຕ້ອງໄປຫາບ້ານທຸກຍາກທີ່ສຸດ ຢູ່ພາຍໃນກຸ່ມບ້ານ)

- ເພື່ອຕັດສິນໃຈ ກ່ຽວກັບຄວາມເປັນໄປໄດ້ໃນການຝຶກອົບຮົມ ທີ່ຕິດພັນກັບໂຄງການຍ່ອຍພື້ນຖານໂຄງລ່າງ ທັງນີ້ເພື່ອເປັນການສົ່ງເສີມການນຳໃຊ້ໃຫ້ມີຄວາມຍືນຍົງ;
- ເພື່ອທຳຄວາມເຂົ້າໃຈຢ່າງເລິກເຊິ່ງ ຕໍ່ກັບຄວາມຕ້ອງການປະກອບສ່ວນຂອງຊຸມຊົນ ແລະ ແຜນສ້າງຕັ້ງທີມງານຈັດຕັ້ງປະຕິບັດຂັ້ນບ້ານ ສຳລັບແຕ່ລະໂຄງການຍ່ອຍ;
- ເພື່ອຄັດເລືອກຕົວແທນກຸ່ມບ້ານ ຈຳນວນ 4 ທ່ານ ຈາກຕົວແທນຂອງແຕ່ລະບ້ານ ເພື່ອເປັນຜູ້ໄປນຳສະເໜີແຜນພັດທະນາກຸ່ມບ້ານຂອງຕົນ ຢູ່ກອງປະຊຸມປະສານງານການວາງແຜນຂັ້ນເມືອງ.

<u>ລະດັບຄາດໝາຍທີ່ຈະໄດ້ຮັບ</u>

ໃນໄລຍະທ້າຍຂອງກອງປະຊຸມ ທີ່ໄດ້ດຳເນີນເປັນ 2 ມື້ ຕົວແທນແຕ່ລະບ້ານຕອ້ງໄດ້ສຳເລັດ ຫຼື ເຫັນດີບັນຫາດັ່ງຕໍ່ໄປນີ້:

- ສຳເລັດການສ້າງພັດທະນາກຸ່ມບ້ານ ໄລຍະຍາວ, ລາຍການລຳດັບບຸລິມະສິດ ແລະ ເປົ້າໝາຍຍຸດທະສາດຂອງການພັດທະນາ ຊຶ່ງທຸກໆບ້ານພາຍໃນກຸ່ມບ້ານ ຈະໄດ້ຕໍ່ສູ້ເພື່ອແກ້ໄຂຄວາມທຸກຍາກ (ຮູບແບບການສ້າງແຜນພັດທະນາກຸ່ມບ້ານ ແມ່ນຢູ່ໃນເອກະສານແນບທ້າຍ 6);
- ແຫລ່ງງົບປະມານ ທີ່ຈະນຳໃຊ້ເຂົ້າໃນການລົງທຶນ ບັນດາໂຄງການທີ່ນອນຢູ່ໃນລາຍການບຸລິມະສິດນັ້ນ ອາດຈະມາຈາກຫລາຍແຫ່ລງ ຊຶ່ງລວມມີທັງມາຈາກເບື້ອງລັດ ແລະ ມາຈາກ ທລຍ;
- ແຜນການລົງທຶນ ຂອງ ທລຍ ທີ່ມີຄວາມຈະແຈ້ງ ໄດ້ສະແດງໃຫ້ເຫັນຈຳນວນໂຄງການຍ່ອຍທີ່ຄາດຄະເນວ່າຈະຈັດຕັ້ງປະຕິບັດ (ຄວາມຕ້ອງການທາງດ້ານວິຊາການ ກໍຈະໄດ້ພິຈາລະນາ ເພື່ອສະໜັບສະໜູນການເຂົ້າເຖິງ ແລະ ການນຳໃຊ້ໂຄງການຍ່ອຍ ຫຼື ມີຄວາມຈຳເປັນຕ້ອງໄດ້ດຳເນີນເຮັດການປະເມີນຜົນຄວາມສ່ຽງຕ່າງຫາກ). ຢູ່ໃນແຜນການລົງທຶນ ຂອງ ທລຍ ໃນໄລ 4 ປີ ຈະໄດ້ມີການຄາດຄະເນງົບປະມານ ແລະ ເປົ້າໝາຍການປະກອບສ່ວນຂອງຊຸມຊົນ ຕາມທ່າແຮງຂອງເຂົາເຈົ້າ;
- ລາຍການກິດຈະກຳຝຶກອົບຮົມເພີ່ມຕື່ມນັ້ນ ຈະເປັນການສົ່ງເສີມການເຂົ້າເຖິງ ແລະ ການນຳໃຊ້ໂຄງການຍ່ອຍດ້ານພື້ນຖານໂຄງລ່າງ ທີ່ ທລຍ ໃຫ້ການສະໜັບສະໜູນ (ເບິ່ງຕາຕະລາງທີ່ 3 ໃນພາກ 4.6 ກິດຈະກຳຝຶກອົບຮົມທີ່ສາມາດເພີ່ມຕື່ມໄດ້);
- ຕົວແທນກຸ່ມບ້ານທີ່ໄດ້ຄັດເລືອກຈະໄດ້ເຂົ້າຮ່ວມກອງປະຊຸມປະສານງານການວາງແຜນຂັ້ນເມືອງ;
- ຜູ້ປະສານງານກຸ່ມບ້ານ ໄດ້ຖືກຮັບຮອງ ຫຼື ໄດ້ຮັບການຄັດເລືອກໃໝ່.

<u>ຕາຕະລາງກອງປະຊຸມ</u>

ກອງປະຊຸມວາງແຜນພັດທະນາກຸ່ມບ້ານ ມີຂັ້ນຕອນທີ່ສຳຄັນ ດັ່ງຕໍ່ໄປນີ້:

- ທົບທວນຄືນໂດຍຫຍໍ້ ຫລັກການ ແລະ ຂັ້ນຕອນການດຳເນີນວຽກງານ ທລຍ;
- ການນຳສະເໜີ ຜົນໄດ້ຮັບຂອງກອງປະຊຸມວາງແຜນພັດທະນາບ້ານ;
- ສ້າງຕາຕະລາງວິເຄາະ, ຈຸດແຂງ, ຈຸດອ່ອນ, ກາລະໂອກາດ ແລະ ຄວາມມຸ່ງໝາດປາດຖະໜາ;

- ສ້າງແຜນວາດຊັບພະຍາກອນຂອງບ້ານ;
- ສ້າງແຜນພັດທະນາກຸ່ມບ້ານ (ແຜນໄລຍະ 5 ປີ);
- ສ້າງແຜນການລົງທຶນ ຂອງ ທລຍ ໃນໄລຍະ 4 ປີ ພ້ອມກັບບຸລິມະສິດໂຄງການຍ່ອຍດ້ານພື້ນຖານໂຄງລ່າງ ແລະ ກິດຈະກຳຝຶກອົບຮົມເພີ່ມຕື່ມ.

ຂັ້ນຕອນການສ້າງແຜນແບບມີສ່ວນຮ່ວມ ແລະ ເຄື່ອງມືທີ່ຈະນຳໃຊ້ ໄດ້ລະບຸໄວ້ຢູ່ໃນປື້ມຄູ່ມືຝຶກອົບຮົມ ຂອງ ທລຍ ທັງນີ້ເພື່ອຮັບປະກັນ ວ່າໂຄງການຍ່ອຍທີ່ຄັດເລືອກເປັນເທື່ອສຸດທ້າຍນັ້ນ ໄດ້ຕິດພັນກັບບຸລິມະສິດຄວາມຕ້ອງການຂອງຫລາຍໆບ້ານ. ຈະຕ້ອງໄດ້ເອົາໃຈໃສ່ເປັນພິເສດເພື່ອຮັບປະກັນໃຫ້ສຽງຂອງຜູ້ດ້ອຍໂອກາດ ທີ່ໄດ້ເຂົ້າຮ່ວມຂະບວນການວາງແຜນໄດ້ຮັບການພິຈາລະນາ ແລະ ຕ້ອງໄດ້ຄັດເລືອກເຄື່ອງມື ແລະ ຮູບແບບຂອງກອງປະຊຸມທີ່ເໝາະສົມ ສຳລັບຈັດລຽງລຳດັບ ແລະ ຄັດເລືອກບັນດາໂຄງການຍ່ອຍເທື່ອສຸດທ້າຍ. ລາຍລະອຽດຂອງຕາຕະລາງດຳເນີນກອງປະຊຸມວາງແຜນພັດທະນາກຸ່ມບ້ານສາມາດເບິ່ງຕື່ມອີກໄດ້ຢູ່ປື້ມຄູ່ການວາງແຜນ ທີ່ໄດ້ກະກຽມໄວ້ຕ່າງຫາກ.

ຢູ່ທຸກໆບ້ານພາຍໃນກຸ່ມບ້ານເປົ້າໝາຍ ຈະຕ້ອງໄດ້ເຂົ້າຮ່ວມໃນວຽກງານ ຂອງ ທລຍ, ງົບປະມານສ່ວນຫລວງຫລາຍ ຈະໄດ້ຈັດສັນໄປຫາບ້ານທຸກຍາກທີ່ສຸດຂອງກຸ່ມບ້ານ. ຊຶ່ງມັນແມ່ນເປົ້າໝາຍ ຂອງ ທລຍ ທີ່ຈະໄດ້ເອົາໃຈໃສ່.

ເພື່ອກຳນົດ ວ່າບ້ານໃດຈະໄດ້ງົບປະມານຫລາຍກວ່າໝູ່ນັ້ນ, ຜູ້ເຂົ້າຮ່ວມຈະເປັນຜູ້ຮັບຮອງເອົາໃນເວລາແຕ້ມແຜນວາດທາງດ້ານສັງຄົມ ແລະ ຄວາມທຸກຍາກຂອງກຸ່ມບ້ານ ຊຶ່ງເວລາແຕ້ມແຜນວາດດັ່ງກ່າວ ຈະຮູ້ວ່າຄວາມທຸກຍາກມີຢູ່ໃສແດ່ຫລາຍກວ່າໝູ່ຢູ່ໃນກຸ່ມບ້ານ. ຄວາມທຸກຍາກສາມາດ ກຳນົດໄດ້ຈາກຫລາຍໆດ້ານ ເຊັ່ນມາຈາກຊຸມຊົນເປັນຜູ້ຕັດສິນ ວ່າພື້ນທີ່ໃດຂອງກຸ່ມບ້ານເປັນບ່ອນທີ່ທຸກຍາກທີ່ສຸດ. ເງື່ອນໄຂໃນການກຳນົດວ່າຈະໄດ້ການສະໜັບສະໜູນ ຂອງ ທລຍ ມີດັ່ງນີ້:

- ຂາດການເຂົ້າເຖິງໃນດ້ານຕ່າງໆ ເຊັ່ນ: ທົນທາງເຂົ້າບ້ານ, ສຶກສາ ແລະ ສິ່ງອຳນວຍຄວາມສະດວກໃນດ້ານສາທາລະນະສຸກ, ນ້ຳສະອາດ, ສຸກຂະສຶກສາ, ໄຟຟ້າ, ອື່ນໆ
- ບ້ານບໍ່ມີແຜນການຍົກຍ້າຍຈັດສັນ (ແມ່ນຂໍ້ກຳນົດ ຂອງ ທລຍ);
- ບໍ່ມີໂຄງການທີ່ຄ້າຍຄືກັນກັບ ທລຍ ທີ່ຈະມາຊ່ວຍເຫລືອຢູ່ບ້ານດັ່ງກ່າວ.

**ບັນຫາສຳຄັນ ໃນດ້ານການຈັດສັນງົບປະມານ ຢູ່ໃນແຜນພັດທະນາກຸ່ມບ້ານນັ້ນ ແມ່ນຢ່າງໜ້ອຍ 66% ຂອງຈຳນວນໂຄງການຍ່ອຍ ແລະ ຢ່າງໜ້ອຍ 60% ຂອງຈຳນວນງົບປະມານທັງໝົດ ຕ້ອງໄປຫາບ້ານທີ່ທຸກຍາກທີ່ສຸດໂດຍກົງ.**

ຢູ່ຂັ້ນບ້ານ, ໄດ້ວາງເປົ້າໝາຍໄວ້ວ່າ ທລຍ ໄດ້ເອົາໃຈໃສ່ຫລາຍ ຕໍ່ຂະບວນການຕັດສິນແບບມີສວ່ນຮ່ວມ ໂດຍໃຫ້ທຸກໆພາກສ່ວນຢູ່ໃນບ້ານ ລວມທັງແມ່ຍິງ ມີສິດມີສຽງ ແລະ ມີຄວາມຮັບຜິດຊອບ ຕໍ່ການຕັດສິນໃຈດັ່ງກ່າວ. ວິທີການອັນນີ້ຈະເປັນການສ້າງໂອກາດໃຫ້ແກ່ຜູ້ທຸກຍາກທີ່ສຸດຢູ່ໃນບ້ານ ໄດ້ນຳ

ສະເໜີແນວຄິດຂອງເຂົາເຈົ້າຜ່ານກອງປະຊຸມ ແລະ ໄດ້ມີການປຶກສາຫາລືນຳເຂົາເຈົ້າກ່ອນວ່າໂຄງການຍ່ອຍດັ່ງກ່າວນັ້ນ ຈະຕ້ອງນຳເອົາຜົນປະໂຫຍດມາສູ່ເຂົາເຈົ້າ.

**<u>ໝາຍເຫດ</u>**<u>: ສຳລັບກອງປະຊຸມວາງແຜນພັດທະນາກຸ່ມບ້ານ</u>:

- ຍຸດທະສາດເປົ້າໝາຍຂອງແຜນພັດທະນາບ້ານ ຄວນເຊື່ອມສານເຂົ້າກັບການວິເຄາະວິໄສທັດໃນເບື້ອງຕົ້ນຂອງບ້ານ;
- ບຸລິມະສິດທີ່ຕ້ອງການໃນການລົງທຶນ ຄວນໃຫ້ເປັນລາຍການລຳດັບບຸລິມະສິດທີ່ແນ່ນອນ. ຢູ່ໃນນີ້ມັນອາດຈະລວມເອົາທັງໂຄງການໃຫ່ຍໆ ຊຶ່ງເກີນຂອບເຂດ ແລະ ງົບປະມານ ຂອງ ທລຍ (ໃນກໍລະນີດັ່ງກ່າວນີ້ ອາດສະເໜີນຳໃຊ້ທຶນຂອງລັດ ຫຼື ຜູ້ໃຫ້ທຶນອື່ນໆ). ພ້ອມດຽວກັນ ກໍອາດຈະລວມເອົາກິດຈະກຳຝຶກອົບຮົມທາງດ້ານປັບປຸງຊີວິດການເປັນຢູ່ ຫຼື ສ້າງທັກສະດ້ານຕ່າງໆ ທີ່ບໍ່ສາມາດສະໜັບສະໜູນໂດຍ ທລຍ;
- ໂຄງການຍ່ອຍ ທີ່ ທລຍ ຈະໃຫ້ການສະໜັບສະໜູນ ຄວນສ້າງເປັນລາຍການບຸລິມະສິດ ແລະ ມີຄວາມເປັນໄປໄດ້ໃນການຈັດຕັ້ງປະຕິບັດໃນແຕ່ລະປີ. ມີຄວາມຈຳເປັນຢ່າງໜ້ອຍ ໃນປີນຶ່ງໆ ຕ້ອງໄດ້ຈັດຕັ້ງປະຕິບັດ 1 ໂຄງການຍ່ອຍ. ພ້ອມກັນນັ້ນຈຳນວນໂຄງການທີ່ຈະຈັດຕັ້ງປະຕິບັດຢູ່ໃນຮອບວຽນນຶ່ງໆ ຈະຕ້ອງຂຶ້ນກັບເພດານງົບປະມານປະຈຳປີທີ່ຈັດສັນໃຫ້ແຕ່ລະກຸ່ມບ້ານ ແລະ ຂຶ້ນກັບຄວາມສາມາດຂອງຊຸມຊົນ ໃນການຄຸ້ມຄອງບໍລິຫານການຈັດຕັ້ງປະຕິບັດໂຄງການຍ່ອຍ;
- ຢູ່ໃນຂັ້ນຕອນໃນການສ້າງແຜນການ ຄວນເນັ້ນໜັກໃສ່ການຄຸ້ມຄອງນຳໃຊ້ໂຄງການຍ່ອຍ. ເຊັ່ນຕົວຢ່າງ: ຖ້າຊຸມຊົນຈະກໍ່ສ້າງໂຮງຮຽນ ເຂົາເຈົ້າຕ້ອງຮັບປະກັນວ່າເດັກນ້ອຍຈະໄປເຂົ້າໂຮງຮຽນ ແລະ ຫ້ອງການທີ່ກ່ຽວຂ້ອງ ຕ້ອງຮັບປະກັນວ່າສະໜອງຄູໃຫ້. ເຊັ່ນດຽວກັນ ຖ້າຫາກມີການສ້າງສຸກສາລາ ຫ້ອງການທີ່ກ່ຽວຂ້ອງ ຕ້ອງຮັບປະກັນວ່າຈະມີແພດໄປປະຈຳຢູ່ສຸກສາລາ ແລະ ຮັບປະກັນວ່າພໍ່ແມ່ປະຊາຊົນ ຈະໄປນຳໃຊ້ສຸກສາລາແຫ່ງດັ່ງກ່າວ. ຊຶ່ງໝາຍຄວາມວ່າ ບໍ່ສະເພາະແຕ່ການກໍ່ສ້າງຂຶ້ນມາເທົ່ານັ້ນ, ແຕ່ຕ້ອງຮັບປະກັນວ່າຊຸມຊົນຈະຊົມໃຊ້ສິ່ງກໍ່ສ້າງເຫລົ່ານັ້ນ;
- ແຈ້ງງົບປະມານຄາດຄະເນຂອງໂຄງການຍ່ອຍ ຊຶ່ງສະໜອງໃຫ້ໂດຍພະແນກວິສະວະກຳ ໂດຍອີງໃສ່ຫົວໜ່ວຍລາຄາໃນຖານຂໍ້ມູນ. ທຸກໆໂຄງການຍ່ອຍຈະຕ້ອງຈັດຕັ້ງປະຕິບັດໃຫ້ສຳເລັດຢູ່ໃນປີດຽວກັນ (ຊຶ່ງໃນນີ້ບໍ່ໄດ້ລວມເອົາຂັ້ນຕອນການສຶກສາຄວາມເປັນໄປໄດ້ ຫຼື ຂັ້ນຕອນການວາງແຜນ ຕົວຢ່າງ: ໂຄງການປະເພດທາງ..);
- ງົບປະມານປະຈຳປີທີ່ຈັດສັນໃຫ້ແຕ່ລະກຸ່ມບ້ານ **ບໍ່ສາມາດເກີນເພດານທີ່ກຳນົດໄວ້.** ທລຍ ຈະບໍ່ສາມາດເພີ່ມງົບປະມານໃຫ້ກຸ່ມບ້ານ ເກີນກວ່າເພດານທີ່ຈັດສັນໃນແຕ່ລະປີ ແລະ ບໍ່ສາມາດສະໜັບສະໜູນງົບປະມານເພີ່ມຕື່ມ ເພື່ອເຮັດໃຫ້ໂຄງການຍ່ອຍຖືກຈັດຕັ້ງປະຕິບັດສຳເລັດ ໃນກໍລະນີເຮັດໃຫ້ງົບປະມານຂອງໂຄງການຍ່ອຍເກີນກວ່າງົບປະມານທີ່ຈັດສັນໃຫ້ແກ່ກຸ່ມ. ງົບປະມານທີ່ຍັງເຫລືອໃນແຕ່ລະຮອບວຽນ ສາມາດເກັບຮັກສາໄວ້ໃນຮອບວຽນຕໍ່ໆໄປ. (ຍົກເວັ້ນ ຖ້າຫາກໂຄງການຍ່ອຍມີການຈັດຕັ້ງປະຕິບັດຊັກຊ້າ) ແລະ ນຳໃຊ້ເພື່ອສະໜັບສະໜູນໂຄງການຍ່ອຍ (ດ້ານພື້ນຖານໂຄງລ່າງ ຫຼື ດ້ານຝຶກອົບຮົມ) ທີ່ເອົາມາຈາກແຜນພັດທະນາກຸ່ມບ້ານ. ໃນກໍລະນີດັ່ງກ່າວນີ້, ໂຄງການຍ່ອຍທີ່ເພີ່ມເຂົ້າມານັ້ນ ຈະຕ້ອງມີເຫດຜົນທີ່ເໝາະສົມ, ໂດຍສະເພາະຕ້ອງເບິ່ງ

ຄວາມສາມາດຂອງຊຸມຊົນ ໃນການຄຸ້ມຄອງບໍລິຫານການຈັດຕັ້ງປະຕິບັດໂຄງການຍ່ອຍທີ່ເພີ່ມຕື່ມນີ້ ແລະ ຕ້ອງໄດ້ຮັບການອະນຸມັດໂດຍຜູ້ອຳນວຍການບໍລິຫານ ທລຍ ກ່ອນ;

- ງົບປະມານຂອງກຸ່ມບ້ານທີ່ເຫລືອ ແລະ ບໍ່ໄດ້ນຳໃຊ້ຢູ່ໃນປີທີ່ 4 ຫຼື ປີສຸດທ້າຍ ແມ່ນຈະຕ້ອງໄດ້ສົ່ງຄືນໃຫ້ ທລຍ;
- ຊາວບ້ານຈະຖືກຊຸກຍູ້ໃຫ້ສຳເລັດການຈັດຕັ້ງປະຕິບັດໂຄງການຍ່ອຍ ຢູ່ໃນຮອບວຽນໃດຮອບວຽນນັ້ນ ຂອງ ທລຍ. ແນວໃດກໍຕາມ, ຖ້າໂຄງການຍ່ອຍໃດ ຕ້ອງການເວລາຫລາຍໃນການສຶກສາຄວາມເປັນໄປໄດ້ ເພາະສະນັ້ນ ຈະເຮັດໃຫ້ສຳເລັດການຈັດຕັ້ງປະຕິບັດໃນປີນັ້ນໆ, ໃນກໍລະນີນີ້ຊາວບ້ານສາມາດສືບຕໍ່ຈັດຕັ້ງປະຕິບັດໃນປີຕໍ່ໄປ, ຫລັງຈາກທີ່ໄດ້ຮັບຮອງຈາກຜູ້ອຳນວຍການບໍລິຫານ ທລຍ ແລະ ໂດຍມີເຫດຜົນທີ່ເໝາະສົມ. ເຖິງແນວໃດກໍ່ຕາມ ການສຶກສາຄວາມເປັນໄປໄດ້, ການສຳຫລວດ, ຈັດຕັ້ງປະຕິບັດຕ້ອງໄດ້ສຳເລັດຢູ່ໃນໄລຍະດຳເນີນໂຄງການ ທລຍ;
- ສຳລັບກຸ່ມບ້ານເປົ້າໝາຍໃໝ່ ຂອງ ທລຍ. ພະນັກງານ ທລຍ ແລະ ຜູ້ປະສານງານກຸ່ມບ້ານ ຈະຕ້ອງໄດ້ເອົາໃຈໃສ່ແນະນຳຊຸມຊົນ ໃນການກຳນົດບຸລິມະສິດຄວາມຕ້ອງການຂອງເຂົາເຈົ້າ ໂດຍສະເພາະເອົາໃຈໃສ່ຕໍ່ໂຄງການທີ່ມີຄວາມສະຫລັບຊັບຊ້ອນ ໃນດ້ານການສຳຫລວດ, ຈັດຕັ້ງປະຕິບັດ ແລະ ບູລະນະສ້ອມແປງ ໂດຍຍົກໃຫ້ເຫັນພາບ ແລະ ບົດຮຽນຜ່ານມາ, ສຳລັບຮອບວຽນທຳອິດ ຊຸມຊົນຄວນເລືອກເອົາໂຄງການທີ່ມີລັກສະນະງ່າຍດາຍໃນການວາງແຜນ, ຈັດຕັ້ງປະຕິບັດ ແລະ ປົກປັກຮັກສາກ່ອນ;
- ມີພຽງແຕ່ກິດຈະກຳຝຶກອົບຮົມ ທີ່ກ່ຽວຂ້ອງໂດຍກົງກັບໂຄງການຍ່ອຍພື້ນຖານໂຄງລ່າງ ແລະ ມີເປົ້າໝາຍເພື່ອສົ່ງເສີມການເຂົ້າເຖິງ ຫຼື ການນຳໃຊ້ໂຄງການຍ່ອຍພື້ນຖານໂຄງລ່າງ ດັ່ງກ່າວເທົ່ານັ້ນທີ່ອະນຸຍາດ. ທຸກໆຄ່າໃຊ້ຈ່າຍຂອງການຝຶກອົບຮົມຕ້ອງລວມຢູ່ໃນ “ແຜນງົບປະມານຄາດຄະເນ” ຂອງໂຄງການຍ່ອຍນັ້ນ;
- ການພິຈາລະນາ ກ່ຽວກັບ**ການຄຸ້ມຄອງນຳໃຊ້ ແລະ ບູລະນະສ້ອມແປງໂຄງການຍ່ອຍ** (ກະລຸນາເບິ່ງພາກການຄຸ້ມຄອງນຳໃຊ້ ແລະ ບູລະນະສ້ອມແປງໂຄງການຍ່ອຍ) ຈຳຕ້ອງໄດ້ມີການທົບທວນຄືນ ແລະ ປຶກສາຫາລືຢູ່ໃນກອງປະຊຸມ. ຖ້າຫາກເຫັນວ່າ ທິດທາງການຄຸ້ມຄອງນຳໃຊ້ ແລະ ບູລະນະສ້ອມແປງໂຄງການຍ່ອຍ ເພື່ອໃຫ້ໂຄງການຍ່ອຍມີຄວາມຍືນຍົງນັ້ນ ມີຄວາມເປັນໄປໄດ້ນ້ອຍທີ່ສຸດ, ສະນັ້ນ ຄວນໂຈະໂຄງການຍ່ອຍດັ່ງກ່າວນັ້ນ;
- ກອງປະຊຸມນີ້ ຄວນດຳເນີນເປັນ**ພາສາທ້ອງຖິ່ນ** ຫຼື ພາສາທີ່ໃຊ້ຢູ່ບ້ານນັ້ນ. ຖ້າຫາກບ້ານດັ່ງກ່າວນຳໃຊ້ຫລາຍພາສາຊົນເຜົ່າ ທລຍ ຄວນກະກຽມຜູ້ມາແປພາສາໃຫ້;
- ແຜນພັດທະນາກຸ່ມບ້ານ ຈະໄດ້ເກັບຮັກສາໄວ້ຢູ່ຂັ້ນກຸ່ມບ້ານ, ຂັ້ນເມືອງ, ຂັ້ນແຂວງ ແລະ ຈະໄດ້ເອົາລົງໃນເວັບໄຊ ຂອງ ທລຍ;
- ຈະເປັນໂອກາດອັນດີ ເພື່ອປັບປຸງ ແລະ ດັດປັບຄືນ ແຜນການລົງທຶນ ຂອງ ທລຍ ໂດຍພື້ນຖານແມ່ນອີງໃສ່ແຜນການປະຈຳປີເປັນຫລັກ.

<u>ກຳນົດເວລາ</u>:

2 ມື້.

### 5.6.3 ການຮັບຮອງຜູ້ປະສານງານກຸ່ມບ້ານ

ຢູ່ໃນຕອນທ້າຍຂອງກອງປະຊຸມ, ຕົວແທນບ້ານ ຈະໄດ້ມີການຄັດເລືອກເອົາຜູ້ປະສານງານກຸ່ມບ້ານ ໂດຍວິທີການປ່ອນບັດເອົາ (ຫຼື ນຳໃຊ້ວິທີການຄັດເລືອກອື່ນໆທີ່ເໝາະສົມ ທີ່ໄດ້ເຫັນດີຢູ່ກອງປະຊຸມ ແລະ ໄດ້ຮັບຮອງເອົາໂດຍພະນັກງານ ທລຍ ເມືອງ). ກະລຸນາເບິ່ງຂໍ້ 3.10 ຂ້າງເທິງ ສຳລັບຂັ້ນຕອນການຄັດເລືອກ.

## 5.7 ກອງປະຊຸມປະສານງານ ການວາງແຜນຂັ້ນເມືອງ

<u>ສະຖານທີ່ຈັດກອງປະຊຸມ</u>:

ຫ້ອງປະຊຸມ ຂອງຫ້ອງວ່າການປົກຄອງເມືອງ.

<u>ປະທານກອງປະຊຸມ</u>:

ທ່ານເຈົ້າເມືອງ ຫລື ທ່ານຮອງເຈົ້າເມືອງ.

<u>ຜູ້ດຳເນີນກອງປະຊຸມ</u>:

ພະນັກງານ ທລຍ ຂັ້ນເມືອງ ແລະ ຜູ້ປະສານງານກຸ່ມບ້ານ.

<u>ຜູ້ເຂົ້າຮ່ວມ</u>:

ຕົວແທນກຸ່ມບ້ານ ແລະ ຜູ້ປະສານງານກຸ່ມບ້ານ, ຜູ້ຕາງໜ້າຈາກຫ້ອງການກໍ່ສ້າງຮາກຖານຂັ້ນເມືອງ, ຕາງໜ້າພະແນກ ແລະ ຫ້ອງການຈາກຂະແໜງການຕ່າງໆທີ່ກ່ຽວຂ້ອງຂັ້ນເມືອງ, ອົງການຈັດຕັ້ງສາກົນ ຫຼື ໂຄງການພັດທະນາອື່ນໆ ທີ່ກຳລັງເຮັດວຽກຢູ່ໃນເມືອງດັ່ງກ່າວ, ພາກສ່ວນເອກະຊົນ ແລະ ພະນັກງານ ທລຍ ທຸກໆຂັ້ນ.

<u>ຈຸດປະສົງຂອງກອງປະຊຸມ</u>:

- ນຳສະເໜີ ແລະ ສົນທະນາ ກ່ຽວກັບແຜນພັດທະນາກຸ່ມບ້ານໃນໄລຍະຍາວ ໂດຍຕົວແທນແຕ່ລະກຸ່ມບ້ານ;
- ນຳສະເໜີ ແລະ ສົນທະນານຳຫ້ອງການວິຊາການທີ່ກ່ຽວຂ້ອງຂັ້ນເມືອງ ກ່ຽວກັບການບໍລິການຕ່າງໆທີ່ຈະສະໜັບສະໜູນໃຫ້ແກ່ກຸ່ມບ້ານ;
- ທົບທວນແຜນການລົງທຶນ ຂອງ ທລຍ, ໂດຍສະເພາະສຸມໃສ່ໂຄງການຍ່ອຍທີ່ຈະຈັດຕັ້ງປະຕິບັດຢູ່ຮອບວຽນທີ່ຈະມາເຖິງນີ້;
- ສົນທະນາຮ່ວມກັບຫ້ອງການວິຊາການທີ່ກ່ຽວຂ້ອງຂັ້ນເມືອງ ກ່ຽວກັບຄວາມສາມາດ ແລະ ຄວາມເປັນໄປໄດ້ ໃນການສະໜັບສະໜູນການຄຸ້ມຄອງນຳໃຊ້ໂຄງການຍ່ອຍໃນໄລຍະຍາວ;

- ຕົກລົງ ກ່ຽວກັບຈຳນວນໂຄງການຍ່ອຍ ທີ່ຈະໄດ້ດຳເນີນການອອກແບບ (ສຳຫຼວດ ແລະ ຂຽນລາຍລະອຽດ ບົດສະເໜີໂຄງການຍ່ອຍ);
- ຕົກລົງ ກ່ຽວກັບຄວາມເປັນໄປໄດ້ ໃນການເຮັດໂຄງການຮ່ວມກັນ (ເຊັ່ນ: ໂຄງການຮ່ວມກັນລະຫວ່າງບ້ານ ຫຼື ລະຫວ່າງກຸ່ມບ້ານ ທີ່ເຫັນວ່າຈະເປັນການປະຢັດ ຫຼື ມີການຄຸ້ມຄ່າກວ່າ);
- ມີຄວາມຄິດຄວາມເຫັນໃດແດ່ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ທລຍ ໃນຮອບວຽນຜ່ານມາທີ່ໄດ້ຮັບ ຜ່ານກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ.

<u>ລະດັບຄາດໝາຍ ທີ່ຈະໄດ້ຮັບ</u>:

- ມີການຕົກລົງ ກ່ຽວກັບການລວມເອົາແຜນການລົງທຶນ ຂອງ ທລຍ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ຂອງເມືອງ;
- ມີການຕົກລົງ ກ່ຽວກັບການສຳຫລວດ-ອອກແບບ ບັນດາໂຄງການຍ່ອຍທີ່ຄັດເລືອກວ່າຈະຈັດຕັ້ງປະຕິບັດຢູ່ໃນປຮອບວຽນນີ້, ພ້ອມທັງການຮັບຮອງເອົາການຊ່ວຍເຫລືອທາງດ້ານວິຊາການຕ່າງໆ;
- ມີການໃຫ້ຄຳໝັ້ນສັນຍາໃນຫຼັກການຂອງຫ້ອງການວິຊາການຂັ້ນເມືອງ ແລະ ຂະແໜງການທີ່ກ່ຽວຂ້ອງ ໃນການສະໜັບສະໜູນການບໍລິການໂຄງການຍ່ອຍ (ຕົວຢ່າງ: ການສະໜອງຄູສອນ ຫຼື ພະນັກງານແພດ ທີ່ຈະໄປປະຈຳຢູ່ໂຮງຮຽນ ຫຼື ສຸກສາລາ ທີ່ຈະກໍ່ສ້າງໂດຍ ທລຍ);
- ມີການໃຫ້ຄຳໝັ້ນສັນຍາໃນຫຼັກການຂອງຫ້ອງການວິຊາການຂັ້ນເມືອງ ແລະ ຂະແໜງການທີ່ກ່ຽວຂ້ອງ ຕໍ່ກັບຄວາມຍືນຍົງຂອງໂຄງການ.

<u>ໜ້າວຽກ ແລະ ຄວາມຮັບຜິດຊອບ</u>:

- ຢັ້ງຢືນຄືນ ກ່ຽວກັບຂັ້ນຕອນການເຮັດວຽກ ຂອງ ທລຍ ເຊັ່ນ: ລະບຽບຫລັກການ, ຮອບວຽນຂອງໂຄງການ, ງົບປະມານທີ່ຈັດສັນໃຫ້ແຕ່ລະກຸ່ມ ແລະ ຂໍ້ຈຳກັດອື່ນໆ, ກິດຈະກຳທີ່ ທລຍ ໃຫ້ການສະໜັບສະໜູນ ແລະ ບໍ່ສະໜັບສະໜູນ, ຂໍ້ແນະນຳທາງດ້ານສັງຄົມ ແລະ ສິ່ງແວດລ້ອມ (ກອບການຍົກຍ້າຍຈັດສັນ, ລະບົບການທົດແທນຄືນ, ການຮັກສາແຫລ່ງຮີດຄອງວັດທະນາທຳ, ການເຂົ້າຮ່ວມຂອງຊົນເຜົ່າ ແລະ ກຸ່ມຜູ້ດ້ອຍໂອກາດ);
- ນຳສະເໜີແຜນພັດທະນາກຸ່ມບ້ານ;
- ທົບທວນຄືນ ງົບປະມານທີ່ຄາດຄະເນ ສຳລັບການລົງທຶນ ຂອງ ທລຍ ທີ່ນອນຢູ່ໃນພັດທະນາກຸ່ມບ້ານ;
- ອຳນາດການປົກຄອງຂັ້ນເມືອງ (ແລະ ໂຄງການພັດທະນາອື່ນໆ, ຖ້າຫາກມີ) ໃຫ້ຄຳແນະນຳຖ້າຫາກວ່າມີໂຄງການທີ່ຊໍ້າຊ້ອນກັນ ຫລື ມີແຜນທີ່ຈະດຳເນີນ ຫລື ຖ້າມີແຫລ່ງທຶນອື່ນ ທີ່ຈະສະໜັບສະໜູນແຜນພັດທະນາກຸ່ມບ້ານ;
- ຢືນຢັນວ່າໂຄງການຍ່ອຍ ຂອງ ທລຍ ໃນຮອບວຽນທີ່ຈະມາເຖິງນີ້ ທີ່ຈະດຳເນີນການອອກແບບກໍ່ຈະຕ້ອງໄດ້ຮັບຮອງສຸດທ້າຍອີກ ກ່ຽວກັບການສະໜັບສະໜູນດ້ານວິຊາການ.

ໝາຍເຫດ:

- ກ່ອນຈັດກອງປະຊຸມ, ພະແນກວິຊາການ ຈະຕ້ອງໄດ້ຢັ້ງຢືນຕົວເລກງົບປະມານ ທີ່ຄາດຄະເນໃສ່ແຜນພັດທະນາກຸ່ມບ້ານ (ນຳໃຊ້ຂໍ້ມູນລາຄາຫົວໜ່ວຍໃນຖານຂໍ້ມູນ);
- ກ່ອນຈັດກອງປະຊຸມ, ພະນັກງານ ທລຍ ຂັ້ນເມືອງ ຈະຕ້ອງໄດ້ຢືນຢັນວ່າ ໂຄງການຍ່ອຍໃນຮອບວຽນທີ່ຈະມາເຖິງນີ້ ສອດຄ່ອງກັບເງື່ອນໄຂໃນການຄັດເລືອກ (ເຊັ່ນ: 66% ຂອງຈຳນວນໂຄງການຍ່ອຍ ຕ້ອງຕົກໃສ່ບ້ານທີ່ທຸກຍາກທີ່ສຸດ);
- ໂຄງການຍ່ອຍທີ່ກຳນົດໄວ້ຢູ່ໃນແຜນພັດທະນາກຸ່ມບ້ານ ຈະຕ້ອງໄດ້ພິຈາລະນາ ແລະ ຮັບຮອງວ່າໂຄງການດັ່ງກ່າວ ບໍ່ມີການຊັບຊ້ອນກັບແຜນພັດທະນາຢູ່ເມືອງ, ໂຄງການດັ່ງກ່າວ ມີຄວາມເປັນໄປໄດ້, ສະນັ້ນ, ອຳນາດການປົກຄອງຂັ້ນເມືອງ ຕ້ອງໃຫ້ການຮັບຮອງເອົາແຜນການດັ່ງກ່າວ;
- ໃນກໍລະນີ ທີ່ໂຄງການຍ່ອຍທີ່ສະເໜີ ຖືກໂຈະດ້ວຍເຫດຜົນໃດກໍຕາມ ຢູ່ໃນກອງປະຊຸມ (ຕົວຢ່າງ: ລັດຖະບານ ຫລື ຜູ້ໃຫ້ທຶນອື່ນໆ ມີແຜນການລົງທຶນແລ້ວ) ຕົວແທນກຸ່ມບ້ານ ອາດຈະສະເໜີບຸລິມະສິດຂອງຮອບວຽນຕໍ່ໄປ ທີ່ນອນຢູ່ໃນແຜນການລົງທຶນ ຂອງ ທລຍ ເພື່ອພິຈາລະນາ. ບາງໂຄງການຍ່ອຍ ສາມາດຮວມເຂົ້າເປັນໂຄງການດຽວກັນໄດ້ ຖ້າຫາກ ບ້ານອື່ນ ຫຼື ກຸ່ມບ້ານອື່ນ ສະເໜີໂຄງການຍ່ອຍທີ່ຄ້າຍຄືກັນ, ແນວໃດກໍ່ຕາມຈຳນວນງົບປະມານໂຄງການຍ່ອຍນີ້ງໆ ບໍ່ອະນຸຍາດໃຫ້ເກີນ 60,000 ໂດລາ. ເຖິງຢ່າງໃດກໍ່ຕາມ ແນວຄວາມຄິດໃນການສະເໜີໂຄງການຍ່ອຍໃໝ່ ກໍ່ບໍ່ສາມາດເກີດຂື້ນຢູ່ໃນກອງປະຊຸມນີ້;
- ຕົວແທນບ້ານ ແລະ ຜູ້ປະສານງານກຸ່ມບ້ານ ຈະມີຄວາມຮັບຜິດຊອບ ໃນການເຜີຍແຜ່ຜົນຂອງກອງປະຊຸມຄັ້ງນີ້ ໃຫ້ທຸກໆບ້ານໄດ້ຮັບຮູ້ (ເບິ່ງໃນພາກຕໍ່ໄປ) ແລະ ໂດຍການຕິດຂ່າວ ຜົນຂອງກອງປະຊຸມລົງໃສ່ໃນກະດານຂ່າວ ທລຍ ປະຈຳກຸ່ມບ້ານ;
- ພິຈາລະນາກ່ຽວກັບການຄຸ້ມຄອງນຳໃຊ້ ແລະ ບູລະນະສ້ອມແປງ ໂດຍຈະຕ້ອງມີການທົບທວນ ແລະ ສົນທະນາກັນຢູ່ໃນກອງປະຊຸມດັ່ງກ່າວນີ້. ຖ້າຄິດວ່າຄວາມຍືນຍົງຂອງໂຄງການຍ່ອຍດັ່ງກ່າວມີຄວາມຈຳກັດຫລາຍ, ຕົວແທນກຸ່ມບ້ານຄວນໂຈະໂຄງການດັ່ງກ່າວໄວ້. ຢູ່ໃນໄລຍະກອງປະຊຸມດັ່ງກ່າວນີ້ ຕົວແທນກຸ່ມບ້ານຄວນທົບທວນຄືນກັບຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບແຜນການຄຸ້ມຄອງນຳໃຊ້ໃນໄລຍະຍາວ ໂດຍສະເພາະໃນດ້ານພະນັກງານ ທີ່ຈະໃຫ້ບໍລິການ (ຄູສອນ, ແພດປະຈຳສຸກສາລາ) ແລະ ງົບປະມານທີ່ຈະນຳໃຊ້ (ເງິນເດືອນພະນັກງານ, ອຸປະກອນຮັບໃຊ້ ແລະ ຄ່າສິ້ນເປືອງອື່ນໆ ເຊັ່ນ: ຢາປົວພະຍາດຕ່າງໆ).

ກຳນົດເວລາຈັດກອງປະຊຸມ:

1 ມື້, ຈັດຂຶ້ນຫລັງກຈາກກອງປະຊຸມປະສານງານການວາງແຜນພັດທະນາກຸ່ມບ້ານສຳເລັດແລ້ວ 2 ອາທິດ.

## 5.8 ກອງປະຊຸມລາຍງານຄືນ ແລະ ຮັບຮອງເອົາແຜນການພັດທະນາກຸ່ມບ້ານ

<u>ສະຖານທີ່</u>:

ໂຮງຮຽນ ຫຼື ສະໂມສອນຂອງບ້ານ.

<u>ປະທານກອງປະຊຸມ</u>:

ນາຍບ້ານ ໂດຍການຊ່ວຍເຫລືອຈາກຜູ້ປະສານງານກຸ່ມບ້ານ.

<u>ຜູ້ເຂົ້າຮ່ວມ</u>:

ປະຊາຊົນໝົດທຸກຄົນພາຍໃນບ້ານ (ອາຍຸ 14 ປີຂຶ້ນໄປ).

<u>ຈຸດປະສົງ</u>:

- ເພື່ອຮັບປະກັນວ່າ ພໍ່ແມ່ປະຊາຊົນແຕ່ລະບ້ານ ຮັບຮູ້ກ່ຽວກັບແຜນການພັດທະນາກຸ່ມບ້ານຂອງເຂົາເຈົ້າ;
- ເພື່ອຮັບປະກັນວ່າ ພໍ່ແມ່ປະຊາຊົນແຕ່ລະບ້ານ ຮັບຮູ້ກ່ຽວກັບຜົນໄດ້ຮັບຂອງກອງປະຊຸມປະສານງານການວາງແຜນພັດທະນາກຸ່ມບ້ານທີ່ຈັດຂຶ້ນຢູ່ຂັ້ນເມືອງຜ່ານມາ;
- ເພື່ອໃຫ້ໂອກາດແກ່ຊຸມຊົນ ໃນການຮັບຮອງເອົາຢ່າງເປັນທາງການ (ຫຼື ຍົກເລີກ) ແຜນພັດທະນາກຸ່ມບ້ານ ແລະ ແຜນການລົງທຶນ ຂອງ ທລຍ (ເພາະວ່າ ຢູ່ໃນກອງປະຊຸມປະສານງານການວາງແຜນຂັ້ນເມືອງ ອາດຈະມີການປ່ຽນແປງແຜນດັ່ງກ່າວ);
- ເພື່ອເລີ່ມຕົ້ນການກຽມໃນການຈັດຕັ້ງປະຕບັດໂຄງການຍ່ອຍ ຂອງຮອບວຽນທີ່ຈະມາເຖິງນີ້.

<u>ຄາດໝາຍທີ່ຈະໄດ້ຮັບ</u>:

- ແຜນພັດທະນາກຸ່ມບ້ານ ແລະ ແຜນການລົງທຶນ ຂອງ ທລຍ ແມ່ນໄດ້ຮັບການຢືນຢັນ ແລະ ຮັບຮອງເອົາຈາກບ້ານໃນຈຳນວນຫລາຍຢູ່ພາຍໃນກຸ່ມບ້ານ;
- ຊຸມຊົນມີຄວາມເຂົ້າໃຈ ວ່າໂຄງການຍ່ອຍໃດຈະໄດ້ດຳເນີນຢູ່ໃນຮອບວຽນນີ້, ການນຳສະເໜີກ່ຽວກັບສະຖານທີ່ຕັ້ງໂຄງການຍ່ອຍ ແລະ ງົບປະມານທີ່ຈະນຳໃຊ້ແຕ່ລະໂຄງການຍ່ອຍ (ລວມທັງຄວາມສາມາດໃນການປະກອບສ່ວນຂອງຊຸມຊົນ);
- ການກຽມໃນການຈັດຕັ້ງປະຕບັດໂຄງການຍ່ອຍ ຂອງຮອບວຽນທີ່ຈະມາເຖິງນີ້ ໄດ້ເລີ່ມຕົ້ນຂຶ້ນແລ້ວ ລວມທັງການສ້າງຕັ້ງທີມງານຈັດຕັ້ງປະຕິບັດຂັ້ນບ້ານ ແລະ ການລະດົມການປະກອບສ່ວນຂອງຊຸມຊົນ;
- ແຜນພັດທະນາກຸ່ມບ້ານ ແລະ ແຜນການລົງທຶນ ຂອງ ທລຍ ແມ່ນໄດ້ຮັບຮອງເອົາເປັນເທື່ອສຸດທ້າຍ. ປື້ມແຜນການດັ່ງກ່າວ ສະບັບຕົ້ນຈະຖືກເກັບຮັກສາໄວ້ຢູ່ຫ້ອງການ ທລຍ ຂອງເມືອງ,

ພ້ອມກັນນັ້ນຈະໄດ້ສຳເນົາ ເພື່ອສົ່ງໃຫ້ຫ້ອງການແຜນການ ແລະ ການລົງທຶນຂອງເມືອງ ແລະ ຫ້ອງການ ທລຍ ສູນກາງ.

**<u>ໝາຍເຫດ</u>**: ຄືກັນກັບກອງປະຊຸມວາງແຜນພັດທະນາບ້ານ, ຢ່າງໜ້ອຍ 50% ຂອງຈຳນວນຜູ້ໃຫ່ຍຜູ້ຊາຍ ແລະ 50% ຂອງຈຳນວນຜູ້ໃຫ່ຍຜູ້ຍິງ ພາຍໃນບ້ານ ຕ້ອງໄດ້ເຂົ້າຮ່ວມກອງປະຊຸມດັ່ງກ່າວນີ້. ຖ້າບໍ່ດັ່ງນັ້ນ ໃຫ້ເລື່ອນກອງປະຊຸມດັ່ງກ່າວນີ້ອອກໄປ. ສຳລັບແຂວງ ແລະ ເມືອງເປົ້າໝາຍໃໝ່ນັ້ນ ໃນສອງຮອບວຽນທຳອິດຂອງແຜນການລົງທຶນໄລຍະ 4 ປີ ຂອງ ທລຍ ຖ້າຜູ້ເຂົ້າຮ່ວມກອງປະຊຸມດັ່ງກ່າວນີ້ຈຳນວນເລັກນ້ອຍກວ່າ ແມ່ນສາມາດຍອມຮັບໄດ້ (ເຊັ່ນ: 40% ແລະ 45% ຕາມລຳດັບ) ຊຶ່ງອັນນີ້ແມ່ນຂັ້ນຕອນການມີສ່ວນຮ່ວມຂອງຊຸມຊົນ. ມີຄວາມຈຳຕ້ອງໄດ້ມີການຊຸກຍູ້ ແລະ ອຳນວຍຄວາມສະດວກໃຫ້ແກ່ຜູ້ທີ່ພິການ ແລະ ຜູ້ຕາງໜ້າໃຫ້ແກ່ເດັກນ້ອຍເຂົ້າຮ່ວມກອງປະຊຸມດັ່ງກ່າວນີ້.

ຖ້າຫາກບ້ານໃນຈຳນວນຫລວງຫລາຍຢູ່ພາຍໃນກຸ່ມບ້ານ ບໍ່ຢັ້ງຢືນເອົາແຜນພັດທະນາກຸ່ມບ້ານ ຫຼື ແຜນການລົງທຶນ ຂອງ ທລຍ, ຄະນະຮັບຜິດຊອບກົນໄກສະແດງຄຳຄິດຄຳເຫັນຂັ້ນກຸ່ມບ້ານ ຈະຕ້ອງໄດ້ດຳເນີນການກວດສອບ ວ່າຍ້ອນສາເຫດອັນໃດເຂົາເຈົ້າຈຶ່ງບໍ່ມີຄວາມເພິ່ງພໍໃຈ ແລະ ບໍ່ຢັ້ງຢືນຮັບຮອງເອົາ. ໂດຍຈະຕ້ອງໄດ້ມີການປຶກສາຫາລືນຳທີມງານບໍລິຫານ ທລຍ ຂັ້ນສູນກາງ ໃນການຕັດສິນໃຈ ວ່າເມື່ອໃດ ຈະຈັດກອງປະຊຸມວາງແຜນພັດທະນາກຸ່ມບ້ານ ຢູ່ກຸ່ມບ້ານດັ່ງກ່າວນັ້ນຄືນໃໝ່.

ທີມງານບໍລິຫານຂັ້ນສູນກາງ ຈະຕ້ອງໄດ້ຖືເອົາການຈັດກອງປະຊຸມວາງແຜນພັດທະນາກຸ່ມບ້ານຄືນ ເປັນວຽກງານບຸລິມະສິດ, ຖ້າຫາກວ່າກຸ່ມບ້ານມີການປ່ຽນແປງແຜນ. ພ້ອມດຽວກັນ ຈະຕ້ອງໄດ້ໃຊ້ເວລາໃດນຶ່ງໃນການແກ້ໄຂບັນຫາທີ່ກ່ຽວຂ້ອງກັບການປ່ຽນແປງແຜນ ແລະ ຕ້ອງໄດ້ມີການຕົກລົງເຫັນດີນຳກັນ.

<u>ກິດຈະກຳ ແລະ ໜ້າທີ່ຮັບຜິດຊອບ</u>:

ຜູ້ປະສານງານກຸ່ມບ້ານ ແລະ ຕົວແທນບ້ານ ຈະໄດ້ຈັດກອງປະຊຸມດັ່ງກ່າວນີ້ຢູ່ແຕ່ລະບ້ານ. ຕົວແທນບ້ານ ໂດຍການຊ່ວຍເຫລືອຂອງຜູ້ປະສານງານກຸ່ມບ້ານ ຈະໄດ້ນຳສະເໜີແຜນພັດທະນາກຸ່ມບ້ານ ຕໍ່ພໍ່ແມ່ປະຊາຊົນພາຍໃນບ້ານ.

ຕົວແທນບ້ານຜູ້ໃດ ທີ່ໄດ້ເຂົ້າຮ່ວມກອງປະຊຸມປະສານງານການວາງແຜນຂັ້ນເມືອງ ຈະເປັນຜູ້ນຳສະເໜີຜົນໄດ້ຮັບຂອງກອງປະຊຸມ, ໂດຍສະເພາະໂຄງການຍ່ອຍໃດ ໄດ້ມີການຮັບຮອງເອົາແລ້ວ ຊຶ່ງຈະໄດ້ດຳເນີນການສຳຫລວດ-ອອກແບບ.

ໃນເວລາຈັດກອງປະຊຸມດັ່ງກ່າວນີ້ ອາດຈະຕາມມາດ້ວຍຄຳຖາມ, ຄຳຕອບ ແລະ ການສົນທະນາ ກ່ຽວກັບແຜນພັດທະນາກຸ່ມບ້ານ ແລະ ຜົນຂອງກອງປະຊຸມປະສານງານການວາງແຜນຂັ້ນເມືອງ. ຜູ້ເຂົ້າຮ່ວມທຸກຄົນຈະໄດ້ຖືກຖາມ ເພື່ອລົງຄະແນນສຽງຮັບຮອງເອົາແຜນພັດທະນາກຸ່ມບ້ານ ດ້ວຍວິທີການຍົກມືເອົາ, ປ່ອນບັດເອົາ ຫຼື ໃຊ້ວິທີການອື່ນໆ ເພື່ອເປັນການຮັບເອົາ ຫຼື ບໍ່ຮັບຮອງເອົາແຜນພັດທະນາກຸ່ມບ້ານ.

ຖ້າຫາກວ່າ ມີການຮັບຮອງເອົາ, ທຸກໆຄໍາເຫັນກ່ຽວກັບແຜນພັດທະນາກຸ່ມບ້ານຈະຕ້ອງໄດ້ບັນທຶກໄວ້ ຊຶ່ງເທົ່າກັບວ່າເປັນການປັບປຸງແຜນການດັ່ງກ່າວປະຈໍາປີໄປໃນຕົວເລີຍ.

ສໍາລັບໂຄງການຍ່ອຍໃດທີ່ຖືກຮັບຮອງເອົາ ໃຫ້ດໍາເນີນການສໍາຫລວດ-ອອກແບບແລ້ວ, ຜູ້ປະສານງານກຸ່ມບ້ານ ຈະໄດ້ອະທິບາຍໂດຍຫຍໍ້ໃຫ້ແກ່ຊຸມຊົນ ກ່ຽວກັບຂອດການປະສານງານໃນການຈັດຕັ້ງປະຕິບັດ ລວມທັງອະທິບາຍ ກ່ຽວກັບໜ້າທີ່ຮັບຜິດຊອບຂອງເຂົາເຈົ້າ.

ຂັ້ນຕອນສຸດທ້າຍ, ຜູ້ເຂົ້າຮ່ວມ ໄດ້ຮັບການແຈ້ງໃຫ້ຊາບ ກ່ຽວກັບຕາຕະລາງ ສໍາລັບການມາສໍາຫລວດ-ອອກແບບໂຄງການຍ່ອຍ ແລະ ກໍານົດເວລາການຈັດກອງປະຊຸມຮັບຮອງການອອກແບບໂຄງການຍ່ອຍ (ກະນຸນາເບິ່ງພາກຕໍ່ໄປ). ຕອນທ້າຍຂອງກອງປະຊຸມ ຕົວແທນບ້ານຄວນຈື່ໄວ້ວ່າ ເຂົາເຈົ້າຈະຕ້ອງໄດ້ເຂົ້າຮ່ວມກອງປະຊຸມຮັບຮອງການອອກແບບໂຄງການຍ່ອຍ.

<u>ກໍານົດເວລາ</u>:

3-4 ຊົ່ວໂມງ; ຈະຕ້ອງໄດ້ຈັດຂຶ້ນໄວເທົ່າທີ່ຈະໄວໄດ້ ຫລັງຈາກກອງປະຊຸມປະສານງານການວາງແຜນຂັ້ນເມືອງສໍາເລັດລົງ.

### 5.9 ສໍາຫລວດ ແລະ ອອກແບບໂຄງການຍ່ອຍ

<u>ສະຖານທີ່</u>:

ບ້ານທີ່ໄດ້ຮັບໂຄງການຍ່ອຍ.

<u>ຜູ້ເຂົ້າຮ່ວມ</u>:

ຫ້ອງການທີ່ກ່ຽວຂ້ອງ, ຜູ້ປະສານງານກຸ່ມບ້ານ, ຕົວແທນບ້ານ, ພະນັກງານ ທລຍ ເມືອງ. ພະນັກງານ ທລຍ ແຂວງ ໃນກໍລະນີທີ່ມີຄວາມຈໍາເປັນ.

<u>ຈຸດປະສົງ</u>:

- ຊາວບ້ານຕັດສິນໃຈ ໃນການຄັດເລືອກທີ່ຕັ້ງຂອງໂຄງການຍ່ອຍ ທີ່ເຫັນວ່າມີຄວາມເໝາະສົມທີ່ສຸດ ຢູ່ໃນບ້ານຂອງເຂົາເຈົ້າ ໂດຍຮັບປະກັນວ່າທຸກໆຄົນພາຍໃນບ້ານ ຈະສາມາດເຂົ້າເຖິງໃນການນໍາໃຊ້ ໂດຍສະເພາະຊົນເຜົ່າ ແລະ ຜູ້ດ້ອຍໂອກາດ ລວມທັງຜູ້ພິການເສັຍອົງຄະ ແລະ ອົງການຈັດຕັ້ງຊາວໜຸ່ມຂອງບ້ານ;
- ຊາວບ້ານກໍານົດເວລາທີ່ເໝາະສົມທີ່ສຸດ ສໍາລັບການຈັດຕັ້ງປະຕິບັດໂຄງການຍ່ອຍ, ໂດຍຄໍານຶງເຖິງເວລາຫວ່າງຂອງຊາວບ້ານ ເພາະວ່າ ຊາວບ້ານຈະຕ້ອງໄດ້ປະກອບສ່ວນແຮງງານ ເຂົ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ;

- ປຶກສາຫາລື ແລະ ຮັບຮອງ ກ່ຽວກັບການປະກອບສ່ວນທີ່ດິນ ແລະ ກະກຽມການທົດແທນຄືນ, ຖ້າຫາກມີ;
- ແບບໂຄງການຍ່ອຍທີ່ສຳເລັດສົມບູນ. ແມ່ນການອອກແບບ ຕ້ອງສອດຄ່ອງກັບຄວາມຕ້ອງການ ແລະ ກຳນົດໂດຍຊາວບ້ານ ເຊິ່ງລວມມີທັງຜູ້ເສັຽອົງຄະ ແລະ ອົງການຈັດຕັ້ງຊາວໜຸ່ມຂອງບ້ານ. ມີຄວາມສາມາດເປັນໄປໄດ້ທາງດ້ານວິຊາການ, ມູນຄ່າຢູ່ໃນຂອບເຂດງົບປະມານທີ່ໄດ້ຈັດສັນໄວ້ ແລະ ຢູ່ໃນກອບຂອງຂໍ້ແນະນຳໃນການປ້ອງກັນຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ;
- ຄັດເລືອກທີມງານຈັດຕັ້ງປະຕິບັດຂັ້ນບ້ານ.

<u>ຄາດໝາຍທີ່ຈະໄດ້ຮັບ</u>:

- ຊາວບ້ານໄດ້ຕົກລົງເອົາຈຸດທີ່ຕັ້ງ ແລະ ກຳນົດເວລາໃນການຈັດຕັ້ງປະຕິບັດໂຄງການຍ່ອຍ ໂດຍຊ້ອງໜ້າພະນັກງານ ທລຍ ຂັ້ນເມືອງ;
- ໄດ້ດຳເນີນການສຳຫລວດ ແລະ ບົດສະເໜີໂຄງການຍ່ອຍ ໄດ້ຖືກຮ່າງຂື້ນ;
- ຖ້າຫາກ ມີການທົດແທນຄືນ, ການຕົກລົງກ່ຽວກັບການທົດແທນຄືນດັ່ງກ່າວ ໄດ້ເຮັດກັບທີ່ ແລະ ໄດ້ຕື່ມຂໍ້ມູນ ພ້ອມທັງເຊັນຢັ້ງຢືນ ຢູ່ໃນແບບຟອມການປະກອບສ່ວນແບບສະໝັກໃຈ ແລະ ກຳນົດແທນຄືນ (CC_ Form);
- ທີມງານຈັດຕັ້ງປະຕິບັດຂັ້ນບ້ານ ໄດ້ຖືກສ້າງຕັ້ງຂື້ນ ແລະ ກຽມພ້ອມທີ່ຈັດຕັ້ງປະຕິບັດໂຄງການ.

<u>ກິດຈະກຳ ແລະ ໜ້າທີ່ຮັບຜິດຊອບ</u>:

- ຜູ້ປະສານງານກຸ່ມບ້ານ ແລະ ຕົວແທນບ້ານ ຈັດກອງປະຊຸມບ້ານຂື້ນ ເພື່ອກຳນົດທີ່ຕັ້ງຂອງໂຄງການຍ່ອຍ;
- ດຳເນີນການສຳຫລວດ (ພະນັກງານ ທລຍ ແລະ ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ, ໂດຍການນຳພາຂອງທີມງານຈັດຕັ້ງປະຕິບັດຂັ້ນບ້ານ ທີ່ຫາກໍຄັດເລືອກຂື້ນມາໃໝ່);
- ດຳເນີນ ເຮັດການປະເມີນຜົນແບບງ່າຍດາຍ ທາງດ້ານສິ່ງແວດລ້ອມ ແລະ/ຫຼື ດ້ານຮີດຄອງປະເພນີວັດທະນາທຳ (ໃນເມື່ອມີຄວາມຕ້ອງການ) ລວມທັງການພິຈະລະນາເບິ່ງບັນຫາໄພພິບັດທາງທຳມະຊາດ;
- ຮ່າງບົດສະເໜີໂຄງການຍ່ອຍ (ເບິ່ງແບບຟອມ ຢູ່ໃນເອກະສານແນບທ້າຍທີ່ 6) ລາຍລະອຽດລວມມີ:
    - ລາຍລະອຽດຂອງແບບ;
    - ງົບປະມານ (ທຶນ ທລຍ ແລະ ການປະກອບສ່ວນຂອງຊຸມຊົນ) ລວມທັງເຄື່ອງມື ສຳລັບບູລະນະສ້ອມແປງໂຄງການຍ່ອຍ;
    - ການກະກຽມການຈັດຊື້-ຈັດຈ້າງ;
    - ແຜນການຄຸ້ມຄອງ ແລະ ບູລະນະສ້ອມແປງໂຄງການຍ່ອຍ ໄລຍະຍາວ;
    - ກວດກາທາງດ້ານສິ່ງແວດລ້ອມ;

- ກວດກາສະຖານທີ່ທາງດ້ານຮີດຄອງປະເພນີວັດທະນາ (ປ່າຊ້າ/ປ່າສັກສິດ/ປ່າມະເຫສັກ ທຳ, ວັດ);
- ບັນດາເອກະສານ (ແບບຟອມການປະກອບສ່ວນແບບສະໝັກໃຈ ແລະ ການທົດແທນ ຄືນ) ຂອງການຍົກຍ້າຍຈັດສັນ, ການໄດ້ມາເຊິ່ງທີ່ດິນ ແລະ ການປະກອບສ່ວນແບບສະ ໝັກໃຈອື່ນໆ (ຖ້າຫາກມີ) ແລະ ການຄິດໄລ່ການທົດແທນຄືນ ໂດຍຊຸມຊົນເອງ;

ໝາຍເຫດ

- ວິຊາການຈາກຫ້ອງການກ່ຽວຂ້ອງຂັ້ນເມືອງ ຕ້ອງໄດ້ເຂົ້າຮ່ວມໃນຂັ້ນຕອນການສຳຫລວດ ແລະ ອອກແບບໂຄງການຍ່ອຍ;
- ເອົາໃຈໃສ່ກ່ຽວກັບການປະກອບສ່ວນຊຸມຊົນ ໂດຍບໍ່ໃຫ້ເກີນກວ່າຄວາມສາມາດຂອງເຂົາເຈົ້າ;
- ທລຍ ສາມາດຈ່າຍສຳລັບຄ່ານາຍຊ່າງ (ການຈ້າງວິຊາການ ແມ່ນໂດຍຊຸມຊົນ) ແລະ ແຮງງານ ທົ່ວໄປ. ອັດຕາຄິດໄລ່ສຳລັບນາຍຊ່າງ ຈະໄດ້ນຳໃຊ້ຫົວໜ່ວຍລາຄາ ໃນຖານຂໍ້ມູນ ຂອງ ທລຍ ເຊິ່ງໄດ້ຄິດໄລ່ເປັນຄ່າສະເລັ່ຽຢູ່ແຕ່ລະເມືອງ. ສຳລັບຄ່າແຮງງານທົ່ວໄປ ແມ່ນຄິດໄລ່ຕາມອັດຕາ ຄ່າແຮງງານຕ່ຳສຸດໂດຍທົ່ວໄປ ຢູ່ໃນ ສປປ ລາວ;
- ຊາວບ້ານ ອາດຈະເລືອກເອົາການປະກອບສ່ວນໃນດ້ານແຮງງານ ເພື່ອເປັນການປະຢັດມູນຄ່າ ຂອງໂຄງການ ແລະ ເພື່ອເປັນການລົງທຶນພັດທະນາຊຸມຊົນຂອງເຂົາເຈົ້າຫລາຍກວ່າ.

| |
|---|
| ໃນກໍລະນີ ການປະກອບສ່ວນແບບສະໝັກໃຈ ບໍ່ວ່າຈະເປັນທີ່ດິນ ຫຼື ເງິນສົດ ແມ່ນມີຄວາມຈຳເປັນເຂົ້າໃນຈັດຕັ້ງປະຕິບັດໂຄງການຍ່ອຍ, ແຕ່ຈະຕ້ອງໄດ້ຈັດກອງປະຊຸມສະເພາະກັບຜູ້ທີ່ໄດ້ຮັບຜົນກະທົບ ແລະ ຕ້ອງໄດ້ມີເອກະສານເກັບຮັກສາໄວ້ "ແບບຟອມການປະກອບສ່ວນ ແລະ ການທົດແທນຄືນ";<br><br>ຖ້າຫາກ ແມ່ນການປະກອບສ່ວນແບບສະໝັກໃຈ ເຊັ່ນ: ການປະກອບສ່ວນທີ່ດິນ ແຕ່ເກີນ 5% ຂອງທີ່ດິນທີ່ຜູ້ກ່ຽວໄດ້ຄອບຄອງຢູ່ ເຂົາເຈົ້າຕ້ອງໄດ້ຮັບການທົດແທນຄືນ (ເປັນການທົດແທນຄືນທີ່ດິນ ຫຼື ທົດແທນດ້ວຍອື່ນໆ ທີ່ເປັນການຍອມຮັບຂອງຜູ້ກ່ຽວ)<br><br>ໂຄງການຍ່ອຍໃດທີ່ມີຫລາຍກວ່າ 100 ຄົນ ໄດ້ຮັບຜົນກະທົບ ຫຼື 10% ຂອງທີ່ດິນທີ່ບຸກຄົນໃດນື່ງໄດ້ຄອບຄອງຢູ່ໄດ້ຮັບຜົນເສັຽຫາຍ ຫຼື ໄດ້ເຮັດໃຫ້ບ້ານເຮືອນຂອງປະຊາຊົນຖືກຍົກຍ້າຍນັ້ນ, ຕ້ອງໄດ້ມີການສ້າງບົດລາຍງານສະເພາະຂຶ້ນຕ່າງຫາກ ພ້ອມຕ້ອງໄດ້ມີການທົບທວນຄືນ ແລະ ອະນຸມັດຈາກຜູ້ອຳນວຍການບໍລິຫານ ທລຍ. |

ກຳນົດເວລາ:

3-7 ມື້

## 5.10 ກອງປະຊຸມຮັບຮອງການອອກແບບຂັ້ນບ້ານ/ກຸ່ມບ້ານ & ສ້າງຕັ້ງທີມງານຂັ້ນກຸ່ມບ້ານ

<u>ສະຖານທີ່</u>:

ໂຮງຮຽນກຸ່ມບ້ານ ຫຼື ຫ້ອງປະຊຸມກຸ່ມບ້ານ, ຖ້າມີ

<u>ປະທານກອງປະຊຸມ</u>:

ຫົວໜ້າກຸ່ມບ້ານພັດທະນາ

<u>ຜູ້ເຂົ້າຮ່ວມ</u>:

ຜູ້ເຂົ້າຮ່ວມກອງປະຊຸມດັ່ງກ່າວນີ້ ລວມມີ: ຕົວແທນບ້ານ, ທີມງານຈັດຕັ້ງປະຕິບັດຂັ້ນບ້ານ, ພະນັກງານ ທລຍ ເມືອງ, ຫ້ອງການວິຊາການທີ່ກ່ຽວຂ້ອງ, ຫ້ອງການພັດທະນາຊົນນະບົດເມືອງ, ຜູ້ປະສານງານກຸ່ມບ້ານ, ທີມງານຂັ້ນກຸ່ມບ້ານ (ກໍລະນີມີແລ້ວ), ຄະນະກຸ່ມບ້ານພັດທະນາ, ນາຍບ້ານ.

<u>ຈຸດປະສົງ</u>:

- ຮັບຮອງເທື່ອສຸດທ້າຍ ໂຄງການຍ່ອຍທີ່ຈະຈັດຕັ້ງປະຕິບັດ ໂດຍພື້ນຖານແມ່ນອີງໃສ່ຄວາມເປັນໄປໄດ້ທາງດ້ານວິຊາການ;
- ທົບທວນຄືນ ແລະ ຮັບຮອງ ເອົາແບບຂອງໂຄງການຍ່ອຍ, ງົບປະມານ ແລະ ແຜນການຄຸ້ມຄອງນຳໃຊ້ ແລະ ບູລະນະສ້ອມແປງໂຄງການຍ່ອຍ;
- ຈັດຕັ້ງທີມງານຂັ້ນກຸ່ມບ້ານ;
- ຮັບປະກັນ ໃຫ້ມີຄວາມເຂົ້າໃຈຢ່າງຈະແຈ້ງ ກ່ຽວກັບວິທີການດຳເນີນການຈັດຊື້-ຈັດຈ້າງ.

<u>ຄາດໝາຍທີ່ຈະໄດ້ຮັບ</u>:

- ຂະໜາດໂຄງການຍ່ອຍ, ສະຖານທີ່ຕັ້ງ, ງົບປະມານ ແລະ ແຜນການຈັດຕັ້ງປະຕິບັດ ໄດ້ຖືກຮັບຮອງເອົາ ແລະ ພາກສ່ວນຕ່າງໆທີ່ເຂົ້າຮ່ວມ ມີຄວາມເຂົ້າໃຈຢ່າງເລິກເຊິ່ງ;
- ທີມງານຂັ້ນກຸ່ມບ້ານ ໄດ້ຖືກສ້າງຕັ້ງຂຶ້ນ;
- ການມອບໝາຍໜ້າທີ່ເປັນການສະເພາະ (ລວມມີ ສິດໃນການຄຸ້ມຄອງປື້ມບັນຊີທະນາຄານ ຂອງກຸ່ມບ້ານ) ໂດຍທີມງານກຸ່ມບ້ານແຕ່ລະຄົນ ມີຄວາມເຂົ້າໃຈຕໍ່ກັບໜ້າທີ່ພາລະບົດບາດໜ້າທີ່ຂອງຕົນ.

**ໝາຍເຫດ:** ໂຄງການຍ່ອຍ ບໍ່ສາມາດຮັບຮອງເອົາໄດ້ ຖ້າຫາກ ບົດສະເໜີໂຄງການຍ່ອຍ ຫຼື ການປະເມີນຜົນທາງດ້ານເຕັກນິກຕ່າງໆທີ່ຕ້ອງການ ຍັງບໍ່ທັນສຳເລັດ.

ກິດຈະກຳ ແລະ ໜ້າທີ່ຮັບຜິດຊອບ

*ໂຄງການຍ່ອຍ:*

- ນຳສະເໜີລາຍຊື່ໂຄງການຍ່ອຍໂດຍພື້ນຖານ ອີງໃສ່ຄວາມເປັນໄປໄດ້ທາງດ້ານວິຊາການ;
- ນຳສະເໜີແບບໂຄງການຍ່ອຍ: ງົບປະມານ, ການປະກອບສ່ວນຂອງຊຸມຊົນ, ການທົດແທນຄືນ, ບົດລາຍງານການໄດ້ມີທີ່ດິນ ແລະ ການຍົກຍ້າຍຈັດສັນ (ຖ້າຫາກມີ), ທາງເລືອກໃນການດຳເນີນການຈັດຊື້-ຈັດຈ້າງ, ແຜນການເບີກຈ່າຍເງິນໂຄງການຍ່ອຍ, ແຜນການຄຸ້ມຄອງນຳໃຊ້ ແລະ ບູລະນະສ້ອມແປງໂຄງການຍ່ອຍ, ກວດກາຄືນທາງດ້ານສິ່ງແວດລ້ອມ ແລະ ສັງຄົມ (ລາຍລະອຽດຂອງການປະເມີນຜົນ, ຖ້າຫາກມີ);
- ຮັບຮອງກ່ຽວກັບກິດຈະກຳຝຶກອົບຮົມຕ່າງໆ ເພື່ອສົ່ງເສີມການນຳໃຊ້ໂຄງການຍ່ອຍດັ່ງກ່າວ, ສ່ວນງົບປະມານ ສຳລັບຝຶກອົບຮົມ ກໍແມ່ນພາກສ່ວນນຶ່ງຂອງງົບປະມານ ຂອງໂຄງການຍ່ອຍດັ່ງກ່າວນີ້.

ກຳນົດເວລາ:

ປະມານ 1 ມື້, ໂດຍຈະຈັດຂຶ້ນ ຫລັງຈາກສຳເລັດການອອກແບບແລ້ວ 2 ອາທິດ.

## 5.11 ການຄັດເລືອກທີມງານຂັ້ນກຸ່ມບ້ານ

ໃນກອງປະຊຸມ. ຕົວແທນບ້ານ ຄັດເລືອກເອົາທີມງານຂັ້ນກຸ່ມບ້ານ. ທີມງານເຫລົ່ານີ້ ປະກອບມີ 2 ທີມງານຍ່ອຍ, ໂດຍປະກອບມີດັ່ງລຸ່ມນີ້:

- **ທີມງານການເງິນຂັ້ນກຸ່ມບ້ານ** (4 ຄົນ), ໃນນີ້ 2 ຄົນ ຄວນແມ່ນຜູ້ຍິງ ແລະ ຄວນແມ່ນຜູ້ຕາງໜ້າຊົນເຜົ່າ ຢູ່ພາຍໃນກຸ່ມບ້ານ.

  ໜ້າທີ່ຮັບຜິດຊອບ ຂອງແຕ່ລະຄົນມີດັ່ງນີ້:

  - 1 ຮັບຜິດຊອບງົບປະມານ ແລະ ປະສານງານການວາງແຜນ;
  - 1 ຊ່ວຍຜູ້ຮັບຜິດຊອບງົບປະມານ ແລະ ປະສານງານການວາງແຜນ;
  - 1 ຮັບຜິດຊອບບັນຊີກຸ່ມບ້ານ;
  - 1 ຮັບຜິດຊອບເງິນສົດຂອງກຸ່ມບ້ານ.

- **ທີມງານຈັດຊື້-ຈັດຈ້າງ** (3 ຄົນ), ເຊິ່ງຈະເປັນຜູ້ຕາງໜ້າໃຫ້ແກ່ຊາວບ້ານ ໃນການດຳເນີນການຈັດຊື້-ຈັດຈ້າງໂຄງການຍ່ອນ. ຢ່າງໜ້ອຍ 1 ໃນ 3 ຄົນນັ້ນ ຕ້ອງແມ່ນຜູ້ຍິງ. ຫລຍ ສະໜັບສະໜູນໃນການຄັດເລືອກຜູ້ຕາງໜ້າຊົນເຜົ່າ ເພື່ອປະກອບເປັນທີມງານດັ່ງກ່າວນີ້ ຖ້າຫາກວ່າເຂົາເຈົ້າເຫລົ່ານັ້ນ ມີລະດັບການສຶກສາທີ່ເໝາະສົມ.

ໜ້າທີ່ຮັບຜິດຊອບ ຂອງແຕ່ລະຄົນມີດັ່ງນີ້:

- 1 ຜູ້ບໍລິຫານການຈັດຊື້-ຈັດຈ້າງ;
- 1 ເລຂາ ໂດຍຮັບຜິດຊອບທຸກໆເອກະສານຈັດຊື້-ຈັດຈ້າງ;
- 1 ຜູ້ປະສານງານໃນການປະມູນ.

ນຶ່ງໃນທີ່ງານຈັດຊື້-ຈັດຈ້າງ ແມ່ນຈະຖືກຄັດເລືອກ ໃຫ້ເປັນຫົວໜ້າທີມຈັດຊື້-ຈັດຈ້າງ.

# 6 ໄລຍະການຈັດຕັ້ງປະຕິບັດ

ໃນພາກນີ້ຂອງປື້ມຄູ່ມືຈັດຕັ້ງປະຕິບັດ ໄດ້ອະທິບາຍຂັ້ນຕອນ ໃນການຈັດຕັ້ງປະຕິບັດໂຄງການຍ່ອຍທີ່ໄດ້ອະນຸມັດ.

## 6.1 ການຝຶກອົບຮົມທີມງານການເງິນບ້ານ ແລະ ຜູ້ປະສານງານຂັ້ນກຸ່ມບ້ານ/ບ້ານ

ການຝຶກອົບຮົມດັ່ງກ່າວນີ້ ແມ່ນໄດ້ຖືກກຳນົດຂື້ນ ເພື່ອຮັບປະກັນວ່າ ຜູ້ປະສານງານ ແລະ ສະມາຊິກທີ່ກ່ຽວຂ້ອງຂອງກຸ່ມບ້ານ/ບ້ານ ມີຄວາມເຂົ້າໃຈແຈ້ງຕໍ່ກັບພາລະບົດບາດ, ກົດລະບຽບ ແລະ ຄູ່ມືແນະ ນຳທີ່ກ່ຽວຂ້ອງກັບການບໍລິຫານວຽກງານຈັດຊື້-ຈັດຈ້າງ ແລະ ວຽກງານການຄຸ້ມຄອງການເງິນ ພ້ອມນັ້ນຍັງສາມາດດຳເນີນວຽກງານທີ່ກ່ຽວຂ້ອງກັບໜ້າທີ່ຂອງຕົນເອງ ໃນຊ່ວງໄລຍະການຈັດຕັ້ງປະຕິບັດໂຄງ ການໄດ້.

<u>ສະຖານທີ່</u>:

ໂຮງຮຽນ ຫຼື ຫໍປະຊຸມບ້ານ, ຖ້າມີ ໃນກຸ່ມບ້ານ/ບ້ານ

<u>ຜູ້ເຂົ້າຮ່ວມກອງປະຊຸມ</u>

*ຜູ້ເຂົ້າຝຶກ*: ທີມງານຈັດຊື້-ຈັດຈ້າງ ແລະ ການເງິນກຸ່ມບ້ານ/ບ້ານ;

*ຄູຝຶກ*: ພະນັກງານຈັດຊື້-ຈັດຈ້າງ ຂອງ ທລຍ ແຂວງ, ພະນັກງານການເງິນ ທລຍ ແຂວງ ແລະ ເມືອງ;

*ຜູ້ສັງເກດການ*: ພະນັກງານການເງິນເມືອງ ຈາກພາກລັດ ແລະ ຕາງໜ້າຈາກຄະນະພັດທະນາຊົນນະບົດ ແລະ ພະນັກງານ ທລຍ ສູນກາງ (ຖ້າສາມາດເຂົ້າຮ່ວມໄດ້).

<u>ເນື້ອໃນ/ຫົວຂໍ້ຝຶກ</u>

ຂັ້ນຕອນຈັດຕັ້ງປະຕິບັດ ຂອງ ທລຍ:

- ບົດບາດ ແລະ ຄວາມຮັບຜິດຊອບ (ທລຍ, ພະນັກງານວິຊາການເມືອງ, ທີມງານຈັດຕັ້ງປະຕິບັດຂັ້ນກຸ່ມບ້ານ/ບ້ານ);
- ໂຄງຮ່າງການຈັດຕັ້ງ ທລຍ ຂັ້ນເມືອງ, ຂັ້ນກຸ່ມບ້ານ/ບ້ານ;
- ຮອບວຽນຂອງການຈັດຕັ້ງປະຕິບັດໂຄງການ;
- ລາຍການກິດຈະກຳທີ່ເລືອກໄດ້ (ໃຫ້ການສະໜັບສະໜູນ) ແລະ ປະເພດຂອງກິດຈະກຳທີ່ບໍ່ສະໜັບສະໜູນ (ກິດຈະກຳທີ່ຫ້າມ);

- ຄູ່ມືແນະນຳທາງດ້ານສັງຄົມ ແລະ ສະພາບແວດລ້ອມ (ຂໍແນະນຳໃນການຍົກຍ້າຍຖິ່ນຖານ ແລະ ການຍຶດຄອງທີ່ດິນ, ກົດລະບຽບວ່າດ້ວຍການທົດແທນຄືນ/ການສະມັກໃຈປະກອບສ່ວນ, ແຫຼ່ງວັດຖຸບູຮານ, ກຸ່ມຜູ້ດ້ອຍໂອກາດ;
- ຄວາມໂປ່ງໄສ;
- ການຈັດກອງປະຊຸມສະຫຼູບການເງິນໂຄງການ ແລະ ກອງປະຊຸມແລກປ່ຽນບົດຮຽນ ລະຫວ່າງກຸ່ມບ້ານ/ບ້ານ.

*ການຝຶກອົບຮົມທາງດ້ານວິຊາການ*

ການຄຸ້ມຄອງທາງດ້ານການເງິນ:

- ຄວາມໂປ່ງໄສ ແລະ ຄວາມເປັນເຈົ້າການ ຂອງຊຸມຊົນ;
- ການໂອນເງິນ ຈາກສູນກາງ ເຂົ້າຫາບັນຊີກຸ່ມບ້ານ ຢູ່ໃນຂັ້ນເມືອງ;
- ຮອບວຽນການໂອນງົບປະມານໂຄງການຍ່ອຍ;
- ວິທີການປະກອບແບບຟອມ ເພື່ອຂໍໂອນເງິນ ແລະ ຂໍຢັ້ງຢືນ ເພື່ອອະນຸມັດໃນແຕ່ລະຂັ້ນ;
- ການຖອນເງິນ ຈາກທະນາຄານ ຢູ່ໃນຂັ້ນເມືອງ;
- ຂັ້ນຕອນການເບີກຈ່າຍ ແລະ ການນຳໃຊ້ງົບປະມານຕິດຕາມດ້ານເຕັກນິກ ແລະ ບໍລິຫານໂຄງການຍ່ອຍ (5% ຂອງງົບປະມານໂຄງການຍ່ອຍທັງໝົດ);
- ບັນທຶກ ແລະ ການລົງບັນຊີ (ລາຍຮັບ-ລາຍຈ່າຍ);
- ລາຍງານການໃຊ້ຈ່າຍ ສຳລັບໂຄງການຍ່ອຍ (ສົມທຽບໃສ່ກັບແຜນງົບປະມານ) ແລະ ເອກະສານ ເພື່ອຢັ້ງຢືນຕ່າງໆ;
- ວິທີການສົ່ງເອກະສານຂໍໂອນງົບປະມານງວດຕໍ່ໄປນຳຫ້ອງການທລຍ;
- ສະຫຼຸບຍໍ້ກ່ຽວກັບກອງປະຊຸມສະຫຼູບບັນຊີຂອງກຸ່ມບ້ານ/ບ້ານ.

ການຈັດຊື້-ຈັດຈ້າງ:

- ອາທິບາຍຊີ້ແຈງ ກ່ຽວກັບບາງບັນຫາສຳຄັນທີ່ຕ້ອງເອົາໃຈໃສ່ເຊັ່ນ: ການສົມຮູ້ຮ່ວມຄິດ, ການສໍ້ໂກງ, ຄວາມໂປ່ງໃສ່ ແລະ ການສະຫຼູບບັນຊີ;
- ວິທີການຈັດຊື້-ຈັດຈ້າງ ສຳລັບໂຄງການຍ່ອຍ, ຈັດຊື້ວັດສະດຸ ແລະ ໂຄງການທີ່ຊຸມຊົນເຮັດເອງ.
- ນະໂຍບາຍຂອງທລຍ ກ່ຽວກັບການຮັບຊ່ຽວຊານທີ່ມີຄວາມສຳນານທາງດ້ານວິຊາການສະເພາະ;
- ການກວດກາໂຄງການຍ່ອຍ ແລະ ການກວດກາວັດສະດຸກ່ອນການຈ່າຍເງິນໃຫ້ຜູ້ຮັບເໝົາ/ຜູ້ສະໜອງສິນຄ້າ.

ກິດຈະກຳອື່ນໆ:

- ປຶກສາຫາລື ແລະ ກະກຽມເປີດປື້ມບັນຊີທະນາຄານທີ່ມີລາຍເຊັນຈາກຕົວແທນກຸ່ມບ້ານ/ບ້ານ 4 ທ່ານ ເພື່ອຖອນເງິນລ່ວງໜ້າ;

- ປຶກສາຫາລື ກ່ຽວກັບວິທີການຈັດຊື້-ຈັດຈ້າງ ແລະ ແຕ່ງຕັ້ງຜູ້ຮັບຜິດຊອບວຽກງານຈັດຊື້-ຈັດຈ້າງ ສະເພາະໃຫ້ສະມາຊິກຂອງກຸ່ມບ້ານ/ບ້ານ.

ໝາຍເຫດ:

- ການຝຶກອົບຮົມດັ່ງກ່າວນີ້ ແມ່ນຈັດຂື້ນພາຍຫຼັງທີ່ປະຊຸມຮັບຮອງໂຄງການຍ່ອຍຂອງກຸ່ມບ້ານ/ບ້ານ ສຳເລັດ (ເຮັດໄວເທົ່າທີ່ຈະເຮັດໄດ້ ຫຼັງຈາກກອງປະຊຸມດັ່ງກ່າວນັ້ນ);
- ຖ້າມີການແຈ້ງ ຫຼື ບົດລາຍງານ ກ່ຽວກັບການທົດແທນທີ່ດິນ ແລະ ມີການຍົກຍ້າຍຈັດສັນທີ່ຢູ່ ໃນທີ່ຕັ້ງໂຄງການຍ່ອຍ, ງົບປະມານໂຄງການຍ່ອຍເຫຼົ່ານັ້ນສາມາດນຳໃຊ້ໄດ້ ເມື່ອໄດ້ຮັບການ ອະນຸມັດຈາກຜູ້ອຳນວຍການທລຍ.

ໄລຍະເວລາ:

4 ວັນ.

### 6.2 ກອງປະຊຸມເລີ່ມຕົ້ນໂຄງການຍ່ອຍ

ສະຖານທີ່ຈັດກອງປະຊຸມ:

ໂຮງຮຽນ ຫຼື ຫໍປະຊຸມບ້ານຖ້າມີໃນກຸ່ມບ້ານ/ບ້ານ

ປະທານກອງປະຊຸມ:

ຫົວໜ້າກຸ່ມບ້ານ/ນາຍບ້ານ

ຜູ້ເຂົ້າຮ່ວມ ແລະ ແຂກທີ່ຖືກຮັບເຊີນ ຈາກພາຍນອກ

ກອງປະຊຸມດັ່ງກ່າວ ເປັນກອງປະຊຸມພາຍໃນບ້ານ ຊຶ່ງທຸກຄົນສາມາດເຂົ້າຮ່ວມໄດ້, ແຕ່ບຸກຄົນດັ່ງຕໍ່ໄປນີ້ ແມ່ນຕ້ອງໄດ້ເຊີນເຂົ້າຮ່ວມສະເພາະ:

- ພະນັກງານ ທລຍ ຂັ້ນເມືອງ ແລະ ປະສານງານກຸ່ມບ້ານ/ບ້ານ;
- ທີມງານກຸ່ມບ້ານ/ບ້ານ (ສະມາຊິກໝົດທຸກຄົນ);
- ທີມງານຈັດຕັ້ງປະຕິບັດ ແລະ ບຳລຸງຮັກສາຂັ້ນບ້ານ, ຕົວແທນຈາກບ້ານ ແລະ ນາຍບ້ານ (ສະເພາະບ້ານທີ່ໄດ້ຮັບໂຄງການ);
- ຕາງໜ້າຈາກຫ້ອງການພັດທະນາຊົນນະບົດຂັ້ນເມືອງ;
- ຫົວໜ້າກຸ່ມບ້ານ/ບ້ານ ແລະ ຄະນະກຳມະການ;
- ພະນັກງານວິຊາການກ່ຽວຂ້ອງ ຈາກພາກລັດຂັ້ນເມືອງ;
- ນັກຂ່າວພາຍໃນເມືອງ.

ຈຸດປະສົງ:

- ເພື່ອເປັນການເລີ່ມຕົ້ນຂັ້ນຕອນຂອງການດຳເນີນງານຢ່າງເປັນທາງການ;
- ເຊັນສັນຍາຮັບຮອງເອົາໂຄງການຍ່ອຍຂອງປະຊາຊົນຢ່າງເປັນທາງການ ແລະ ເພື່ອໂອນງົບປະມານງວດທຳອິດໃຫ້ແກ່ທີມງານບໍລິຫານການເງິນກຸ່ມບ້ານ/ບ້ານ;
- ວາງແຜນເພື່ອຮັບປະກັນການປະກອບສ່ວນຂອງຊຸມຊົນຄົບຕາມຈຳນວນທີ່ຕ້ອງການ, ຊຶ່ງອາດຈະລວມທັງການປະກອບສ່ວນເປັນເງິນສົດ ແລະ ການລະດົມແຮງງານຊຸມຊົນ;

ຄາດໝາຍຜົນທີ່ຈະໄດ້ຮັບ:

- ຂໍ້ຕົກລົງເຊັນລະຫວ່າງ ທລຍ ແລະ ທີມງານການເງິນກຸ່ມບ້ານ/ບ້ານ;
- ງົບປະມານງວດທຳອິດໄດ້ໂອນເຂົ້າບັນຊີຂອງກຸ່ມບ້ານ/ບ້ານ ນັ້ນສະແດງໃຫ້ເຫັນເຖິງການເລີ່ມຕົ້ນຈັດຕັ້ງປະຕິບັດໂຄງການຢ່າງເປັນທາງການ;
- ແຜນລາຍລະອຽດ ກ່ຽວກັບການປະກອບສ່ວນຂອງຊຸມຊົນ ແມ່ນຕ້ອງເຮັດໃຫ້ອອກມາພ້ອມກັນ.

ກິດຈະກຳ ແລະ ຄວາມຮັບຜິດຊອບ:

- ກວດຄືນເນື້ອໃນ ແລະ ລາຍລະອຽດຂອງແບບຟອມບົດສະເໜີໂຄງການຍ່ອຍລ້າສຸດ ແລະ ແຈ້ງໃຫ້ຕົວແທນຈາກບ້ານທີ່ກ່ຽວຂ້ອງ;
- ກະກຽມການຈັດຊື້-ຈັດຈ້າງ ຂອງແຕ່ລະໂຄງການ;
- ເຊັນສັນຍາຮ່ວມກັນ ລະຫວ່າງ ພະນັກງານ ທລຍ ກັບທີມງານບໍລິຫານການເງິນຂອງກຸ່ມບ້ານ/ບ້ານ;
- ວາງແຜນລະອຽດ ກ່ຽວກັບການລະດົມແຮງງານ, ຮູບຍັ້ງຢືນຄືນກ່ຽວກັບການປະກອບສ່ວນວັດສະດຸທ້ອງຖິ່ນ ແລະ ກະກຽມສະຖານທີ່ກໍ່ສ້າງ ແລະ ອານາໄມ.

ໄລຍະເວລາ:

3 - 5 ວັນ

ພາຍຫຼັງກອງປະຊຸມດັ່ງກ່າວນີ້ສຳເລັດ ວຽກງານຈັດຊື້-ຈັດຈ້າງ ແມ່ນຈະໄດ້ຈັດຂຶ້ນ (ເບິ່ງໃນພາກທີ 10, ການຈັດຊື້-ຈັດຈ້າງ ແລະ ການເຮັດສັນຍາກໍ່ສ້າງໂຄງການຍ່ອຍ).

ຜູ້ເຂົ້າຮ່ວມ:

ຕາງໜ້າຈາກອຳນາດການປົກຄອງຂັ້ນເມືອງ (ເປັນຜູ້ສັງເກດການ); ປະສານງານຂັ້ນກຸ່ມບ້ານ/ບ້ານ, ທີມງານຈັດຊື້-ຈັດແຈ້ງ ແລະ ຄະນະກຳມະການຂັ້ນກຸ່ມບ້ານ/ບ້ານ.

จุดປະສົງ:

- ເພື່ອເປີດຊອງປະມູນ;
- ກວດຄືນເອກະສານປະມູນ ແລະ ປະເມີນລາຄາປະມູນ;
- ແຈ້ງຜູ້ຊະນະການປະມູນ.

ຄາດຫວັງຜົນໄດ້ຮັບ:

ຄັດເລືອກຜູ້ຊະນະການປະມູນທີ່ດີສຸດ.

ໄລຍະເວລາ:

1-3 ວັນ

## 6.3 ຝຶກອົບຮົມທີມງານຈັດຕັ້ງປະຕິບັດ ແລະ ບຳລຸງຮັກສາຂັ້ນບ້ານ

ຫຼັກສູດຝຶກອົບຮົມດັ່ງກ່າວ ໄດ້ອອກແບບ ເພື່ອຮັບປະກັນໃຫ້ສະມະຊິກຂອງທີມງານຈັດຕັ້ງປະຕິບັດ ແລະ ບຳລຸງຮັກສາ ສາມາດປະຕິບັດໜ້າທີ່ຂອງເຂົາໄດ້ຢ່າງເຕັມທີ່.

*ຜູ້ເຂົ້າຮ່ວມໃນການຝຶກອົບຮົມ:*

- *ນັກສຳມະນາກອນ*: ຜູ້ປະສານງານຂອງກຸ່ມບ້ານ/ບ້ານ, ສະມາຊິກຂອງທີມງານຈັດຕັ້ງປະຕິບັດ ແລະ ບຳລຸງຮັກສາກຸ່ມບ້ານ/ບ້ານ ແລະ ຊາວບ້ານຜູ້ທີ່ຍາກ ມີສ່ວນຮ່ວມໃນການກໍ່ສ້າງໂຄງການຍ່ອຍ ຖ້າພວກເຂົາມີເວລາໃນການເຂົ້າຮ່ວມຝຶກອົບຮົມໄດ້;
- *ຄູຝຶກ*: ວິຊາການ ທລຍ ແຂວງ ແລະ ເມືອງ;
- *ຜູ້ສັງເກດການ*: ພະນັກງານ ທລຍ ຂັ້ນເມືອງ, ວິຊາການຈາກຂະແໜງການອ້ອມຂ້າງເມືອງ ແລະ ຕາງໜ້າຈາກຫ້ອງການພັດທະນາຊົນນະບົດເມືອງ.

ເນື້ອໃນ/ຫົວຂໍ້ຝຶກ

*ຂັ້ນຕອນຈັດຕັ້ງປະຕິບັດຂອງ ທລຍ:*

- ການຄຸ້ມຄອງດ້ານເອກສານ: ສັງລວມຂັ້ນຕອນຂອງການຈັດຕັ້ງປະຕິບັດໂຄງການຍ່ອຍ, ຕັ້ງແຕ່ຂັ້ນຕອນໂຄງການຖືກຄັດເລືອກ ຈົນຮອດຂັ້ນຕອນໂຄງການຍ່ອຍກໍ່ສ້າງສຳເລັດ;
- ວາງແຜນ ແລະ ດຳເນີນງານກໍ່ສ້າງໂຄງລ່າງທີ່ຖືກຄັດເລືອກ;
- ການຕິດຕາມ ແລະ ປະເມີນຜົນ;
- ການນຳໃຊ້ແບບຟອມຕິດຕາມການກໍ່ສ້າງໂຄງການຍ່ອຍ (SPIM).

*ການຝຶກອົບຮົມທາງດ້ານວິຊາການ:*

- ກະກຽມການຈັດຕັ້ງປະຕິບັດ ແລະ ຄວບຄຸມຄຸນນະພາບ;
- ການກວດຄືນແບບແຕ້ມ ແລະ ບໍລິມາດຂອງໂຄງການທີ່ຖືກຄັດເລືອກ;
- ການເກັບກຳຂໍ້ມູນຫົວໜ່ວຍລາຄາ;
- ເຕັກນິກການກໍ່ສ້າງ;
- ຄວບຄຸມການກໍ່ສ້າງ;
- ຄຸ້ມຄອງສັນຍາການກໍ່ສ້າງ, ກອງປະຊຸມສະຫຼຸບບັນຊີ ແລະ ວາງແຜນ ເພື່ອຂໍໂອນເງິນງວດຕໍ່ໄປ.

<u>ໝາຍເຫດ</u>:

- ການຝຶກອົບຮົມ ຈະລົງເລິກສະເພາະໃສ່ແຕ່ລະປະເພດຂອງໂຄງການຍ່ອຍ. ເມື່ອມີການກໍ່ສ້າງໂຄງການຍ່ອຍທີ່ຄືກັນຢູ່ພາຍໃນເມືອງ ແລະ ກຸ່ມບ້ານ/ບ້ານ ທີ່ບໍ່ຫ່າງໄກກັນ, ການຝຶກອົບຮົມສາມາດຈັດຮ່ວມກັນໄດ້;
- ການຝຶກອົບຮົມຈະຈັດຂຶ້ນຢູ່ໃນບ້ານທີ່ມີການກໍ່ສ້າງໂຄງການຍ່ອຍ;
- ສະມາຊິກຂອງທີມງານຈັດຕັ້ງປະຕິບັດ ແລະ ບຳລຸງຮັກສາຈາກບ້ານທີ່ໄດ້ຮັບໂຄງການ ແລະ ໄດ້ປະສົບຜົນສຳເລັດໃນການກໍ່ສ້າງໂຄງການຜ່ານມາ ຈະຖືກເຊີນເຂົ້າຮ່ວມ ເພື່ອຊ່ວຍເຫຼືອຢູ່ໃນການຝຶກອົບຮົມ. ໂອກາດນີ້ຈະຊ່ວຍໃຫ້ເຂົາເຈົ້າແລກປ່ຽນ ແລະ ຖອດຖອນບົດຮຽນເຊິ່ງກັນ ແລະ ກັນໃຫ້ກັບທີມງານບ້ານທີ່ໂຄງການກຳລັງຈັດຕັ້ງປະຕິບັດຢູ່ເປັນຄັ້ງທຳອິດ.

<u>ໄລຍະເວລາ</u>:

2 ວັນ ຕໍ່ ບ້ານ

## 6.4 ກອງປະຊຸມປະສານງານໂຄງການຍ່ອຍ

<u>ສະຖານທີ່ປະຊຸມ</u>:

ຫ້ອງປະຊຸມສະໂມສອນຂອງເມືອງ

<u>ປະທານກອງປະຊຸມ</u>:

ເຈົ້າເມືອງ ຫຼື ຮອງເຈົ້າເມືອງ

<u>ຜູ້ເຂົ້າຮ່ວມ ແລະ ແຂກທີ່ຖືກຮັບເຊີນ</u>:

- ຮອງເຈົ້າເມືອງ;
- ຕາງໜ້າຈາກຫ້ອງການພັດທະນາຊົນນະບົດເມືອງ;
- ພະນັກງານວິຊາການພາກລັດທີ່ກ່ຽວຂ້ອງຂອງເມືອງ;

- ທີມງານວິຊາການ ທລຍ ຂອງເມືອງ ແລະ ທີມງານປະສານງານຂອງກຸ່ມບ້ານ/ບ້ານ;
- ຄະນະກຳມະການກຸ່ມບ້ານ/ບ້ານ;
- ທີມງານຈັດຕັ້ງປະຕິບັດ ແລະ ບຳລຸງຮັກສາ ຂອງບ້ານ, ຕາງໜ້າຈາກອຳນາດການປົກຄອງບ້ານ ແລະ ນາຍບ້ານ (ສຳລັບບ້ານທີ່ໂຄງການຍ່ອຍໄດ້ຮັບການຄັດເລືອກ);
- ບໍລິສັດທີ່ໄດ້ຮັບການຄັດເລືອກ ເພື່ອກໍ່ສ້າງໂຄງການຍ່ອຍທີ່ໄດ້ຖືກຄັດເລືອກ.

<u>ຈຸດປະສົງ</u>:

- ແຈ້ງຄວາມຮັບຜິດຊອບ ແລະ ມອບໝາຍໜ້າວຽກສະເພາະ ໃຫ້ກັບແຕ່ລະຄົນທີ່ມີບົດບາດໃນການດຳເນີນງານກໍ່ສ້າງໂຄງການຍ່ອຍ ຈາກຂະແໜງການຂອງລັດຂັ້ນເມືອງ, ຈາກພາກສ່ວນເອກະຊົນ (ຜູ້ຮັບເໝົາ) ແລະ ອຳນາດການປົກຄອງຂອງບ້ານ;
- ກະກຽມລາຍການແຜນວຽກທັງໝົດຂອງກຸ່ມບ້ານ/ບ້ານ ແລະ ງົບປະມານທີ່ກ່ຽວຂ້ອງ (ສຳລັບການດຳເນີນການກໍ່ສ້າງ ແລະ ການຄວບຄຸມການກໍ່ສ້າງໂຄງການຍ່ອຍ).

<u>ຄາດໝາຍຜົນໄດ້ຮັບ</u>:

- ກະກຽມການປະສານງານ ແລະ ພາລະບົດບາດ ຂອງຜູ້ໄດ້ຮັບຜົນປະໂຫຍດທັງໝົດ ໃຫ້ເຂົ້າໃຈ;
- ການກະກຽມແຜນວຽກ ແລະ ງົບປະມານທີ່ກ່ຽວຂ້ອງກັບການດຳເນີນໂຄງການ.

<u>ກິດຈະກຳ ແລະ ຄວາມຮັບຜິດຊອບ</u>:

- ກວດຄືນລາຍການຂອງການຄັດເລືອກໂຄງການຍ່ອຍ ແລະ ທີ່ຕັ້ງຂອງໂຄງການ;
- ແນະນຳ ແລະ ສະເໜີຜູ້ຮັບເໝົາເຂົ້າໃຈການກໍ່ສ້າງ;
- ການນຳສະເໜີ ແລະ ອະນຸມັດແຜນວຽກໃນການກໍ່ສ້າງໂຄງການຍ່ອຍ;
- ສະເໜີແຜນ ແລະ ຕາລາງຕິດຕາມການກໍ່ສ້າງໂຄງການຍ່ອຍ ຂອງຂະແໜງການກ່ຽວຂ້ອງຂັ້ນເມືອງ ແລະ ແຜນຂອງທີມງານຈັດຕັ້ງປະຕິບັດຂັ້ນກຸ່ມບ້ານ/ບ້ານ ທີ່ກ່ຽວຂ້ອງກັບການນຳໃຊ້ງົບປະມານ;
- ການຢັ້ງຢືນກ່ຽວກັບບົດບາດ ແລະ ໜ້າທີ່ຮັບຜິດຊອບ ຂອງບຸກຄົນທີ່ມີບົດບາດໃນການດຳເນີນໂຄງການ ໃນໄລຍະຂອງການດຳເນີນງານກໍ່ສ້າງໂຄງການ;
- ຂໍ້ຕົກລົງ ກ່ຽວກັບການປະສານງານ;
- ກຳນົດເວລາຈັດກອງປະຊຸມກວດສອບຄວາມໂປ່ງໃສ.

<u>ໄລຍະເວລາ</u>:

1 ວັນ

## 6.5 ກອງປະຊຸມສະຫຼູບບັນຊີ/ການເງິນຂັ້ນກຸ່ມບ້ານ/ບ້ານ

ກອງປະຊຸມສະຫຼູບບັນຊີ ແມ່ນຈັດຂື້ນເປັນປະຈຳ ຫຼັງຈາກການເບີກຈ່າຍເງິນແຕ່ລະງວດສຳເລັດ, ແຕ່ຕ້ອງເຮັດກ່ອນການໂອນເງິນງວດຕໍ່ໄປ. ເປົ້າໝາຍຂອງກອງປະຊຸມ ເພື່ອຮັບປະກັນຄວາມພ້ອມໃນແຕ່ລະຂັ້ນຕອນຂອງການດຳເນີນໂຄງການ; ແລະ ເພື່ອຊ່ວຍໃນການແກ້ໄຂບັນຫາ ແລະ ບັນຫາທີ່ພົບພໍ້ໃນການກໍ່ສ້າງໂຄງການຍ່ອຍ. ພ້ອມທັງຮັບປະກັນຄວາມໂປ່ງໃສສູງສຸດພາຍໃນຊຸມຊົນອີກດ້ວຍ.

<u>ສະຖານທີ່ປະຊຸມ</u>:

ໂຮງຮຽນ ຫຼື ສະໂມສອນກຸ່ມບ້ານ/ບ້ານ ຫຼື ບ້ານທີ່ໄດ້ຮັບໂຄງການ ຖ້າຫາກການໄປມາສະດວກ.

<u>ປະທານກອງປະຊຸມ</u>:

ຫົວໜ້າກຸມບ້ານ/ບ້ານ

<u>ຜູ້ເຂົ້າຮ່ວມ ແລະ ແຂກທີ່ຖືກຮັບເຊີນ</u>

ກອງປະຊຸມດັ່ງກ່າວ ເປັນກອງປະຊຸມເປີດເພີຍຢູ່ພາຍໃນບ້ານ, ປະຊາຊົນຜູ້ທີ່ສົນໃຈສາມາດເຂົ້າຮ່ວມໄດ້. ສຳລັບແຂກທີ່ຕ້ອງໄດ້ເຊີນໃຫ້ເຂົ້າຮ່ວມສະເພາະ ມີດັ່ງຕໍ່ໄປນີ້:

- ພະນັກງານ ທລຍ ຂັ້ນເມືອງ ແລະ ປະສານງານກຸ່ມບ້ານ/ບ້ານ;
- ພະນັກງານ ທລຍ ຂັ້ນແຂວງ ແລະ ຂັ້ນສູນກາງ (ຖ້າສາມາດເຂົ້າຮ່ວມໄດ້);
- ທີມງານກຸ່ມບ້ານ/ບ້ານ (ຊະມາສິໝົດທຸກຄົນ);
- ທີມງານຈັດຕັ້ງປະຕິບັດ ແລະ ບຳລຸງຮັກສາຂັ້ນບ້ານ;
- ຕາງໜ້າຈາກຫ້ອງການພັດທະນາຊົນນະບົດເມືອງ;
- ວິຊາການພາກລັດຂັ້ນເມືອງ;
- ເຖົ້າແກ່ແນວໂຮມ ແລະ ຜູ້ທີ່ປະຊາຊົນນັບຖືໃນກຸ່ມບ້ານ/ບ້ານ;
- ອຳນາດການປົກຄອງຂັ້ນບ້ານ (ຈາກບ້ານທີ່ມີການກໍ່ສ້າງໂຄງການຍ່ອຍ);
- ຕາງໜ້າຈາກບັນດາອົງການຈັດຕັ້ງທີ່ບໍ່ຂື້ນກັບລັດທະບານ ຫຼື ໂຄງການພັດທະນາທີເຮັດວຽກຢູ່ພາຍໃນເມືອງ (ຖ້າສາມາດເຂົ້າຮ່ວມໄດ້);
- ຜູ້ຊົງຄຸນວຸດທິຢູ່ໃນກຸ່ມບ້ານ/ບ້ານ;
- ຜູ້ຄົນອື່ນໆທີ່ສົນໃຈ (ລວມເຖິງພາກເອກະຊົນ);
- ຕາງໜ້າຈາກກຸ່ມບ້ານ/ບ້ານໄກ້ຄຽງ(ເມື່ອກຸ່ມບ້ານ/ບ້ານທີ່ມາຢ້ຽມຢາມມີການຈັດກອງປະຊຸມໃນຊ່ວງເວລາດຽວກັນ).

<u>ຈຸດປະສົງ</u>:

- ເພື່ອຮັບຮອງຄວາມຄືບໜ້າຂອງໂຄງການ ແລະ ການຈ່າຍງົບປະມານໂຄງການ;

- ເພື່ອທົບທວນຄືນ ກ່ຽວກັບການໃຊ້ຈ່າຍງົບປະມານໂຄງການ ແລະ ການປະກອບສ່ວນຂອງຊຸມຊົນ.

ຄາດຫວັງຜົນໄດ້ຮັບ:

- ທົບທວນການຈັດຕັ້ງປະຕິບັດ ແລະ ຄວາມຄືບໜ້າໂຄງການ ໃນທີ່ສາທາລະນະ;
- ໝົດທຸກຄົນໄດ້ທົບທວນການໃຊ້ຈ່າຍງົບປະມານໂຄງການນຳກັນ ໃນທີ່ສາທາລະນະ;
- ກວດກາລາຍລະອຽດຂອງການສະເໜີງົບປະມານງວດຕໍ່ໄປ.

ກິດຈະກຳ ແລະ ຄວາມຮັບຜິດຊອບ:

- ລາຍງານຄວາມຄືບໜ້າຂອງໂຄງການຍ່ອຍ ແຕ່ລະໂຄງການ ແລະ ບັນຫາທີ່ພົບພໍ້ ໂດຍທີມງານຈັດຕັ້ງປະບັດ ແລະ ບຳລຸງຮັກສາຂັ້ນກຸ່ມບ້ານ/ບ້ານ;
- ລາຍງານການໃຊ້ຈ່າຍງົບປະມານໂຄງການຮອດປັດຈຸບັນ ໂດຍທີມງານບໍການເງິນກຸ່ມບ້ານ/ບ້ານ;
- ລາຍງານແຜນການຈັດຊື້-ຈັດຈ້າງ ແລະ ການຕັດສິນຄັດເລືອກເອົາຜູ້ຮັບເໝົາ ແລະ ຜູ້ສະໜອງວັດສະດຸ ໂດຍທີມງານຈັດຊື້-ຈັດຈ້າງກຸ່ມບ້ານ/ບ້ານ ພ້ອມທັງອະທິບາຍຂະບານການຕັດສິນດັ່ງກ່າວ;
- ລາຍງານການປະກອບສ່ວນຂອງຊຸມຊົນຕົວຈິງ;
- ລາຍງານການນຳໃຊ້ງົບປະມານໃນການຄຸ້ມຄອງໂຄງການຍ່ອຍ ແລະ ຄອບຄຸມເຕັກນິກການກໍ່ສ້າງ;
- ສົນທະນາປະກອບຄຳຄິດເຫັນ ກ່ຽວກັບແຜນວຽກຕໍ່ໜ້າ, ແລະ ແຜນການຈ່າຍເງິນ ແລະ ການຢັ້ງຢືນແຜນການດຳເນີນງານ ພ້ອມກະກຽມຂໍງົບປະມານໂຄງການໃນງວດຕໍ່ໄປ;
- ລາຍງານກ່ຽວກັບການແກ້ໄຂຂໍ້ຂັດແຍ່ງ ນຳສະເໜີບັນຫາທີພົບພໍ້ໃນໄລຍະຂອງການດຳເນີນງານ ແລະ ການແກ້ບັນຫາຂອງຄະນະກຳມະການແກ້ໄຂບັນຫາ ໂດຍກຸ່ມບ້ານ/ບ້ານ.

ໝາຍເຫດ:

- ກອງປະຊຸມສະຫຼູບການເງິນ ແມ່ນຈັດຂື້ນຫຼັງຈາກການຈ່າຍເງິນໂຄງການຍ່ອຍງວດທຳອິດ ແລະ ກ່ອນໜ້າຈະຂໍອະນຸມັດງວດຕໍ່ໄປ.
- ຖ້າມີພຽງແຕ່ໂຄງການດຽວ ຖືກຈັດຕັ້ງປະຕິບັດໃນກຸ່ມບ້ານ/ບ້ານໃນຮອບວຽນດັ່ງກ່າວ ກອງປະຊຸມ ຕ້ອງໄດ້ຈັດຂື້ນຢູ່ບ້ານທີ່ໄດ້ຮັບໂຄງການ ຫຼື ບ້ານທີ່ໂຄງການຕັ້ງຢູ່, ຖ້າມີຫຼາຍໂຄງການ ໃຫ້ຈັດກອງປະຊຸມຢູ່ບ້ານທີ່ເປັນສູນກາງຂອງກຸ່ມບ້ານ.

ໄລຍະເວລາ:

1 ວັນ

## 6.6 ການຢ້ຽມຢາມແລກປ່ຽນບົດຮຽນລະຫ່ວາງກຸ່ມບ້ານ/ບ້ານ

<u>ສະຖານທີ</u>:

ກຸ່ມບ້ານ/ບ້ານທີ່ມີໂຄງການຍ່ອຍຕັ້ງຢູ່

<u>ຜູ້ເຂົ້າຮ່ວມ ແລະ ແຂກທີ່ຖືກຮັບເຊີນ</u>:

- *ຜູ້ປະສານງານ*: ພະນັກງານ ທລຍ ຂັ້ນເມືອງ, ຕາງໜ້າຫ້ອງການພັດທະນາຊົນນະບົດເມືອງ ແລະ ຜູ້ປະສານງານກຸ່ມບ້ານ/ບ້ານ;
- *ແຂກທີ່ຖືກເຊີນ*: ທີມງານກຸ່ມບ້ານ, ອຳນາດການປົກຄອງບ້ານ ແລະ ອົງການຈັດຕັ້ງມະຫາຊົນ ຖືກຄັດເລືອກເຂົ້າຮ່ວມວຽກງານ ຂອງ ທລຍ ຄັ້ງທຳອິດ;
- *ເຈົ້າພາບໃນການຈັດກອງປະຊຸມ*: ຕົວແທນກຸ່ມບ້ານ/ບ້ານ, ທີມງານກຸ່ມບ້ານ/ບ້ານ, ຕົວແທນບ້ານ ແລະ ທີມງານຈັດຕັ້ງປະຕິບັດ ແລະ ບົວລະບັດຮັກສາ ທີ່ໄດ້ຈັດຕັ້ງປະຕິບັດສຳເລັດໃນຮອບວຽນທີ່ຜ່ານມາ ແລະ ຄະນະກຳມະການກຸ່ມບ້ານ ແລະ ອຳນາດການປົກຄອງບ້ານ.

<u>ຈຸດປະສົງ</u>:

ເພື່ອສະແດງໃຫ້ຊຸມຊົນທີ່ເຂົ້າຮ່ວມ ທລຍ ເປັນຄັ້ງທຳອິດ ເຫັນເຖິງປະສົບການໃນການຈັດຕັ້ງປະຕິບັດໂຄງການຂອງຊຸມຊົນທີ່ເຄີຍໄດ້ຮັບໂຄງການ ຈາກ ທລຍ ໃນຮອບວຽນຜ່ານມາ (ຫຼື ການພົບພໍ້ບັນຫາຍຸ່ງຍາກ ແລະ ຄວາມລ່າຊ້າໃນການພະຍາຍາມຂອງພວກເຂົາຕໍ່ການຈັດຕັ້ງປະຕິບັດໂຄງການຍ່ອຍ ໃນຮອບວຽນຜ່ານມາ), ການຮຽນຮູ້ຈາກຊຸມຊົນທີ່ຮັບໂຄງການມາກ່ອນນັ້ນ ຖືວ່າເປັນປະສົບການອັນດີຕໍ່ກັບການກຳນົດບັນຫາ ແລະ ແກ້ໄຂບັນຫາ ທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດ ແລະ ການບຳລຸງຮັກສາໂຄງການ ຂອງທີມງານໃໝ່.

<u>ຄາດຫວັງຜົນໄດ້ຮັບ</u>:

- ໄດ້ຝຶກຮຽນຮູ້ປະສົບການຮ່ວມກັນ;
- ບົດຮຽນທີ່ໄດ້ຮັບຈາກຄວາມພະຍາມໃນການແກ້ໄຂບັນຫາ.

<u>ກິດຈະກຳ ແລະ ຄວາມຮັບຜິດຊອບ</u>:

- ການຢ້ຽມຢາມໂຄງການຍ່ອຍທີ່ປະສົບຜົນສຳເລັດ;
- ການປະຊຸມພົບປະກັບທີມງານຈັດຕັ້ງປະຕິບັດກຸ່ມບ້ານ/ບ້ານ;
- ໄດ້ເຫັນບົດລາຍງານການຈັດຕັ້ງປະຕິບັດໂຄງການ ແລະ ການບັນທຶກລາຍງານດ້ານການເງິນ.

ໝາຍເຫດ:

- ການຢ້ຽມຢາມ ລະຫວ່າງກຸ່ມບ້ານ/ບ້ານ ແມ່ນໃຫ້ຈັດພ້ອມກັບກອງປະຊຸມຄະນະຮັບຜິດຊອບ;
- ສ່ວນລາຍລະອຽດເພີ່ມເຕີມ ກ່ຽວກັບການຢ້ຽມຢາມ ລະຫວ່າງກຸ່ມບ້ານ/ບ້ານ; ຈຸດປະສົງ; ວິທີການຕິດຕາມ ແມ່ນໄດ້ລະບຸໄວ້ໃນພາກຂອງການສ້າງຄວາມເຂັ້ມແຂງ.

ໄລຍະເວລາ:

1-2 ວັນ

## 6.7 ທີມງານຄວບຄຸມຄຸນນະພາບໂຄງການຍ່ອຍໃນເວລາກວກກາພາກສະໜາມ

ສະຖານທີ:

ບ້ານທີ່ຕັ້ງຂອງໂຄງການຍ່ອຍ

ຜູ້ນໍາ:

ຫ້ອງການທີ່ກ່ຽວຂັ້ນເມືອງ.

ຈຸດປະສົງ:

ເພີ່ມຮັບປະກັນຄວາມພ້ອມໃນການຄວບຄຸມຄຸນນະພາບ, ໂຄງການຍ່ອຍທັງໝົດ ຈະມີການຕິດຕາມຄຸນນະພາບຢູ່ເປັນປະຈໍາ (ແລະ ໃນບາງກໍລະນີ, ຈະມີການສຸມກວດ) ຈາກຊ່ຽວຊານດ້ານເຕັກນິດການກໍ່ສ້າງ (ຈາກ ທລຍ ແລະ ກະຊວງ/ຂະແໜງການກ່ຽວຂ້ອງຂອງລັດ).

ຜູ້ເຂົ້າຮ່ວມ ແລະ ແຂກທີ່ຖືກຮັບເຊີນ

*ທີມງານຄອບຄຸມຄຸນນະພາບຂັ້ນເມືອງ:*

- ທີມງານ ທລຍ ເມືອງ;
- ຕາງໜ້າຈາກຫ້ອງການທີ່ກ່ຽວຂ້ອງ.

ໝາຍເຫດ: ຄວນມີ 1 ທີມ ຕໍ່ 1 ປະເພດໂຄງລ່າງ.

*ທີມງານຄອບຄຸມຄຸນນະພາບຂັ້ນແຂວງ:*

- ທີມງານ ທລຍ ແຂວງ;
- ຕາງໜ້າຈາກຂະແໜງການທີ່ກ່ຽວຂ້ອງ

ໝາຍເຫດ: ຄວນມີ 1 ທີມ ຕໍ່ 1 ປະເພດໂຄງລ່າງ.

ກວດກາຕາມຈຳນວນໂຄງການທີ່ໄດ້ສຸມເອົາ.

*ທີມງານຄອບຄຸມຄຸນນະພາບຂັ້ນສູນກາງ:*

- ທີມງານທລຍສູນກາງ;
- ຕາງໜ້າຈາກກະຊວງທີ່ກ່ຽວຂ້ອງ

<u>ໝາຍເຫດ</u>: ຄວນມີ1 ທີມ ຕໍ່ 1 ປະເພດໂຄງລ່າງ.

ກວດກາຕາມຈຳນວນໂຄງການທີ່ໄດ້ສຸມເອົາ.

*ກິດຈະກຳ ແລະ ຄວາມຮັບຜິດຊອບ:*

- ລົງກວດກາພາກສະໜາມ;
- ກວດກາເຕັກນິກການກໍ່ສ້າງ;
- ແບບຟອມລາຍງານຜົນສຳເລັດຄັ້ງສຸດທ້າຍ ຂອງການກໍ່ສ້າງ.

<u>ໄລຍະເວລາ</u>:

1/2 - 1 ວັນ ຕໍ່ໂຄງການນຶ່ງ.

### 6.8 ຝຶກອົບຮົມການຄຸ້ມຄອງ ແລະ ບຳລຸງຮັກສາ

<u>ສະຖານທີ່</u>:

ບ້ານທີ່ຕັ້ງໂຄງການ

<u>ຈຸປະສົງ</u>:

ການຝຶກອົບຮົມດັ່ງກ່າວນີ້ ແມ່ນໄດ້ຖືກກຳນົດຂື້ນ ເພື່ອຮັບປະກັນວ່າ ຜູ້ປະສານງານ ແລະ ສະມາຊິກ ທີ່ກ່ຽວຂ້ອງ ຂອງກຸ່ມບ້ານ/ບ້ານ ມີຄວາມເຂົ້າໃຈແຈ້ງຕໍ່ກັບພາລະບົດບາດ, ກົດລະບຽບ ແລະ ຄູ່ມືແນະ ນຳທີ່ກ່ຽວຂ້ອງກັບການບໍລິຫານວຽກງານຈັດຊື້-ຈັດຈ້າງ ແລະ ວຽກງານການຄຸ້ມຄອງການເງິນ ພ້ອມນັ້ນຍັງສາມາດດຳເນີນວຽກງານທີ່ກ່ຽວຂ້ອງກັບໜ້າທີ່ຂອງຕົນເອງ ໃນຊ່ວງໄລຍະການຈັດຕັ້ງປະຕິບັດໂຄງ ການໄດ້.

<u>ຜູ້ເຂົ້າຮ່ວມ</u>:

*ນັກສຳມະນາກອນ*: ທີມງານຈັດຕັ້ງປະຕິບັດ ແລະ ບຳລຸງຮັກສາກຸ່ມບ້ານ/ບ້ານ ແລະ ປະສານງານກຸ່ມບ້ານ/ບ້ານ;

*ຄູຝຶກ.* ວິຊາການຊີ້ນຳດ້ານເຕັກນິກການກໍ່ສ້າງ ທລຍ ແລະ ພະນັກງານທີ່ປຶກສາວິຊາການ ທລຍ ເມືອງ ແລະ ພະນັກງານພັດທະນາຊຸມຊົນ ທລຍ ເມືອງ, ຜູ້ຮັບເໝົາ (ຖ້າເຫັນວ່າເໝາະສົມ), ແລະ ວິຊາການຫ້ອງການທີ່ກ່ຽວຂ້ອງເມືອງ.

<u>ເນື້ອໃນ/ຫົວຂໍ້ຝຶກ</u>

*ຂັ້ນຕອນຈັດຕັ້ງປະຕິບັດ ຂອງ ທລຍ:*

- ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງຊຸມຊົນ, ຂອງສະມາຊິກຂອງທີມງານຈັດຕັ້ງປະຕິບັດ ແລະ ບຳລຸງຮັກສາ ແລະ ຂອງວິຊາການຂັ້ນເມືອງ;
- ສິດ ແລະ ໜ້າທີ່ຂອງຊຸມຊົນທີ່ກ່ຽວຂ້ອງກັບການຊຸກຍູ້ສະໜັບສະໜູນການຈັດຕັ້ງປະຕິບັດໂຄງລ່າງ;
- ລະບຽບ ແລະ ຫລັກການທີ່ພົວພັນໂດຍກົງຕໍ່ກັບແຕ່ລະປະເພດໂຄງການໂຄງລ່າງ;
- ການຈັດຕັ້ງກອງທຶນບຳລຸງຮັກສາ.

*ການຝຶກອົບຮົມທົ່ວໄປ ແລະ ການເພີ່ມຄວາມຮູ້:*

- ຄວາມເປັນເຈົ້າການ ແລະ ໃຫ້ສິດອຳນາດແກ່ຊຸມຊົນ.

*ດ້ານເຕັກນິກ:*

- ກິດຈະກຳການດຳເນີນໂຄງການ ແລະ ການບຳລຸງຮັກສາໂຄງການໃນໄລຍະຍາວ;
- ການກວດກາຂັ້ນຕອນການກວດກາຄັ້ງສຸດທ້າຍ.

<u>ໝາຍເຫດ</u>:

ສະຖານທີ່ຝຶກອົບຮົມການດຳເນີນ ແລະ ການບຳລຸງຮັກສາໂຄງການ ຈະຈັດຂຶ້ນຢູ່ໃນບ້ານທີ່ຕັ້ງໂຄງການ.

<u>ໄລຍະເວລາ</u>:

2 ວັນ.

### 6.8.1 ກອງປະຊຸມສະຫຼູບການເງິນກຸ່ມບ້ານ/ບ້ານຄັ້ງສຸດທ້າຍ

ກອງປະຊຸມດັ່ງກ່າວນີ້ ແມ່ນເປີດໂອກາດໃຫ້ຕົວແທນ ຈາກກຸ່ມບ້ານ/ບ້ານ ປະເມີນຜົນສຳເລັດ ແລະ ສິ່ງທີ່ຂາດຕົກບົກພ່ອງ ຂອງ ທລຍ ໃນການຈັດຕັ້ງປະຕິບັດໂຄງການ ໃນລະດັບກຸ່ມບ້ານ/ບ້ານ ໃນຮອບວຽນທີ່

ຜ່ານມາ. ນອກນັ້ນ, ມັນຍັງຊ່ວຍໃຫ້ຜູ້ເຂົ້າຮ່ວມສົນທະນາ ແລະ ພັດທະນາວິທີທາງອັນໃໝ່ໆເພື່ອແກ້ໄຂບັນຫາອື່ນໆ ທີ່ອາດຈະເປັນຜົນກະທົບຕໍ່ຄວາມສຳເລັດ ຂອງ ທລຍ.

<u>ສະຖານທີ່ຕັ້ງ</u>:

ໂຮງຮານ ຫຼືຫໍປະຊຸມກຸ່ມບ້ານ/ບ້ານ (ຖ້າມີ)

<u>ປະທານກອງປະຊຸມ</u>:

ຫົວໜ້າກຸ່ມບ້ານ/ບ້ານ, ໂດຍການຊ່ວຍເຫຼືອຂອງພະນັກງານ ທລຍ ເມືອງ.

<u>ຜູ້ເຂົ້າຮ່ວມ ແລະ ແຂກທີ່ຖືກຮັບເຊີນ</u>

ກອງປະຊຸມ ເປັນການເປີດກ້ວາງ. ບັນດາແຂກ ຫຼື ບຸກຄົນດັ່ງຕໍ່ໄປນີ້ຕ້ອງໄດ້ເຊີນໃຫ້ເຂົ້າຮ່ວມ:

- ພະນັກງານ ທລຍ ເມືອງ ແລະ ປະສານງານກຸ່ມບ້ານ/ບ້ານ;
- ພະນັກງານ ທລຍ ແຂວງ ແລະ ສູນກາງ (ຖ້າສາມາດເຂົ້າຮ່ວມໄດ້);
- ທີມງານກຸ່ມບ້ານ/ບ້ານ;
- ອຳນາດການປົກຄອງເມືອງ; ຫ້ອງການພັດທະນາຊົນນະບົດເມືອງ ແລະ ວິຊາການທີ່ກ່ຽວຂ້ອງຂອງເມືອງ (ຖ້າສາມາດເຂົ້າຮ່ວມໄດ້);
- ຕາງໜ້າຈາກບ້ານ (ຈາກບ້ານທີ່ມີການກໍ່ສ້າງໂຄງການ);
- ຫົວໜ້າ ແລະ ຄະນະກຳມະການກຸ່ມບ້ານ/ບ້ານ;
- ອຳນາດການປົກຄອງບ້ານ (ຈາກບ້ານທີ່ມີການກໍ່ສ້າງໂຄງການ);
- ຕາງໜ້າຈາກສົມອນຊົນຕ່າງໆໃນມືອງ;
- ຕາງໜ້າຈາກອົງການຈັດຕັ້ງມະຫາຊົນ (ຂັ້ນເມືອງ);
- ເຖົ້າແກ່ແນວໂຮມ ແລະ ຜູ້ທີ່ຖືກນັບຖືຈາກກຸ່ມບ້ານ/ບ້ານ;
- ພາກສ່ວນອື່ນໆ (ລວມເຖິງພາກເອກະຊົນ);
- ຕົວແທນຈາກກຸ່ມບ້ານ/ບ້ານອ້ອມຂ້າງ (ຖ້າບ້ານໃກ້ຄຽງມີການຈັດຕັ້ງໃນເວລາດຽວກັນ).

<u>ຈຸດປະສົງ</u>:

- ເພື່ອຮັບຮອງຜົນລຳເລັດຂອງການກໍ່ສ້າງໂຄງການ;
- ເປີດກອງປະຊຸມສະຫຼູບການໃຊ້ຈ່າຍ ແລະ ການປະກອບສ່ວນຂອງຊຸມຊົນ;
- ປື້ມບັນທຶກການກວດສອບໂຄງການຄັ້ງສຸດທ້າຍ;
- ກວດຄືນ ແລະ ປະເມີນຜົນ ຂອງການຈັດຕັ້ງບັນດາກິດຈະກຳ ຂອງ ທລຍ ຢູ່ຂັ້ນກຸ່ມບ້ານ/ບ້ານໃນໄລຍະຂອງການໃຫ້ທຶນຮອບວຽນທີ່ຜ່ານມາ;
- ລາຍງານ ແລະ ເຜີຍແຜ່ຜົນໄດ້ຮັບ ຂອງການໃຫ້ທຶນ ໃນຮອບວຽນທີ່ຜ່ານມາ;

- ສະເໜີຂອງຄະນະກໍາມະການແກ້ໄຂບັນຫາ ແລະ ໄກ່ເກຍບັນຫາ ກ່ຽວກັບຄໍາຄິດເຫັນ/ຂໍ້ຂ້ອງໃຈທີ່ມີຂື້ນໃນລະຫວ່າງຮອບວຽນດັ່ງກ່າວ, ໃນກໍລະນີທີ່ໄດ້ແກ້ໄຂແລ້ວ; ກໍລະນີທີ່ຍັງຄ້າງຢູ່ ແລະ ສືບທະນາ.

<u>ຄາດຫວັງຜົນໄດ້ຮັບ</u>:

- ຈັດຕັ້ງປະຕິບັດໂຄງການໄດ້ຖືກເປີດເຜີຍ ແລະ ກວດຄືນໃນທີ່ປະຊຸມ;
- ເປີດກອງປະຊຸມການໃຊ້ຈ່າຍງົບປະມານ ແລະ ການນໍາໃຊ້ທຶນໃນທີ່ສາທາລະນະ;
- ໃບຢັ້ງຢືນປື້ມບັນຊີໃນທະນາຄານ;
- ວາງແຜນຈັດຕັ້ງປະຕິບັດກໍມີຂໍ້ສະເໜີ;
- ຄວາມຍຸ້ງຍາກທີ່ພົບ ແລະ ບົດຮຽນທີ່ໄດ້ຮັບໃນການຈັດຕັ້ງປະຕິບັດ ໃນຮອບວຽນຜ່ານມາ ແມ່ນໄດ້ສືບທະນາ ແລະ ແລກປ່ຽນໃນທີ່ປະຊຸມ;
- ຈຸດທີ່ເຫັນວ່າຕ້ອງໄດ້ມີການປັບປຸງ ແລະ ຈະຕ້ອງໄດ້ແຈ້ງໃຫ້ ທລຍ ເພື່ອການພິຈາລະນາ ແລະ ປຶກສາຫາລືໃນຕໍ່ໄປ.

<u>ກິດຈະກໍາ ແລະ ຄວາມຮັບຜິດຊອບ</u>:

- ສະເໜີກ່ຽວກັບຄວາມຄືບໜ້າ ຂອງແຕ່ລະໂຄງການ ໂດຍຕາງໜ້າຈາກທີມງານບ້ານ, ໂດຍເໜັ້ນໜັກໃສ່ຄວາມຄືບໜ້າທີ່ໄດ້ຮັບ, ບັນຫາທີ່ໄດ້ພົບພໍ້ ແລະ ທາງອອກທີ່ໄດ້ເຫັນ;
- ສໍາລັບໂຄງການຍ່ອຍທີ່ມີການກໍ່ສ້າງ ແຕ່ຍັງບໍ່ທັນສໍາເລັດ ການລາຍງານຕ້ອງມີການແຈ້ງເຫດຜົນສໍາລັບການບໍ່ສໍາເລັດ. ຖ້າບັນຫາເນື່ອງຈາກງົບປະມານບໍ່ພຽງພໍ, ຊຸມຊົນຕ້ອງໄດ້ຈັດສັນງົບປະມານໃສ່ໃນບົດສະເໜີໂຄງການໃນຮອບວຽນຕໍ່ໄປ. ຖ້າບັນຫາຍ້ອນຄວາມຫຼ້າຊ້າ ແລະ ແກ່ຍາວໃນດ້ານເຕັກນິກ/ການກໍ່ສ້າງ, ຊຸມຊົນຕ້ອງໄດ້ກະກຽມແຜນທີ່ມີຄວາມເໝາະສົມ ແລະ ເປັນທີ່ຍອມຮັບ ໃຫ້ກັບພະນັກງານ ທລຍ ເມືອງ, ພະນັກງານຫ້ອງການພັດທະນາຊົນນະບົດເມືອງ ແລະ ພະນັກງານຫ້ອງການພາກລັດທີ່ກ່ຽວຂ້ອງ ເພື່ອຂໍອະນຸຍາດດໍາເນີນການກໍ່ສ້າງໂຄງການໃຫ້ສໍາເລັດ. ການນໍາສະເໜີແຜນຈັດຊື້-ຈັດຈ້າງ ແລະ ການຕັກສິນໃຈຕ່າງໆ ແມ່ນເຮັດໂດຍທີມງານຈັດຊື້-ຈັດຈ້າງ, ລວມທັງບັນຫາທີ່ພົບ, ສະຖານະພາບຂອງຊ່າງ ການຈ່າຍເງິນເກັບຮັກສາ/ຄໍ້າປະກັນ ແລະ ການນໍາສະເໜີບົດລາຍງານການຕິດຕາມໂຄງການຄັ້ງສຸດທ້າຍ.
- ການນໍາສະເໜີ ກ່ຽວກັບການປະກອບສ່ວນຕົວຈິງຂອງຊຸມຊົນ ແລະ ຫຼັກຖານຢັ້ງຢືນ ກ່ຽວກັບການໄດ້ຮັບຄ່າຊົດເຊີຍ (ຖ້າກ່ຽວຂ້ອງ);
- ລາຍງານການນໍາໃຊ້ງົບປະມານຂອງການຄຸ້ມຄອງ ແລະ ຕິດຕາມການກໍ່ສ້າງໂຄງການຍ່ອຍ, ແຜນການກວດຄືນ ແລະ ການກວດສອບຄວາມຖືກຕ້ອງຂອງການຄຸ້ມຄອງ ແລະ ບໍາລຸງຮັກສາຄັ້ງສຸດທ້າຍ;
- ການນໍາສະເໜີ ກ່ຽວກັບບັນຫາທີ່ເກີດຂື້ນ ແລະ ການແກ້ໄຂບັນຫາ ໃນໄລຍະຜ່ານມາ ໂດຍຄະນະກໍາມະການຮັບຟັງຄໍາຄິດເຫັນ ແລະ ໄກ່ເກຍບັນຫາ;

- ເບິ່ງຄືນກ່ຽວກັບການປະຕິບັດວຽກງານ ຂອງທີມງານປະສານງານກຸ່ມບ້ານ/ບ້ານ ແລະ ຮັບຮອງເອົາການຄັດເລືອກເອົາຜູ້ປະສານງານກຸ່ມບ້ານ/ບ້ານຄົນໃໝ່ ເມື່ອເຫັນວ່າການປະຕິບັດວຽກງານຂອງຜູ້ປະສານງານຄົນເກົ່າບໍ່ເປັນທີ່ພໍໃຈ.

ໄລຍະເວລາ:

1-2 ວັນ

## 6.9 ບັນດາກິດຈະກຳຕ້ອງໄດ້ປະຕິບັດພາຍຫຼັງສຳເລັດການກໍ່ສ້າງໂຄງການຍ່ອຍ

ພາຍຫຼັງສຳເລັດກອງປະຊຸມສະຫຼູບການເງິນຄັ້ງສຸດທ້າຍ, ກິດຈະກຳທີ່ຈະໄດ້ເຮັດກ່ອນທີ່ຈະເລີ່ມຕົ້ນຊ່ວງກອງປະຊຸມແນະນຳ ແລະ ວາງແຜນໂຄງການ ສຳລັບປີທີສອງ ຂອງ ທລຍ ໄລຍະສອງ. ບັນດາກິດຈະກຳດັ່ງໄດ້ອະທິບາຍດັ່ງຕໍ່ໄປນີ້:

### 6.9.1 ກອງປະຊຸມປະເມີນຜົນຂັ້ນເມືອງ

ກອງປະຊຸມດັ່ງກ່າວນີ້ ຈັດຂຶ້ນເພື່ອເປີດໂອກາດໃຫ້ພາກສ່ວນທີ່ກ່ຽວຂ້ອງທັງໝົດ, ໂດຍສະເພາະອຳນາດການປົກຄອງເມືອງ, ຫ້ອງການພັດທະນາຊົນນະບົດເມືອງ ແລະ ທລຍ ເພື່ອແລກປ່ຽນກັນ ກ່ຽວກັບບັນຫາ ແລະ ຂໍ້ຫຍຸ້ງຍາກ ແລະ ບົດຮຽນທີ່ຖອດຖອນໄດ້ ໃນລະຫວ່າງການດຳເນີນໂຄງການ ໃນຮອບວຽນຜ່ານມາ. ພ້ອມທັງໃຫ້ຜູ້ເຂົ້າຮ່ວມໄດ້ສົນທະນາ ແລະ ພັດທະນາແນວທາງອັນໃໝ່ ເພື່ອເປັນເຄື່ອງມືໃນການແກ້ໄຂບັນຫາຜ່ານຜ່າ ເພື່ອບໍ່ໃຫ້ມີຜົນກະທົບຕໍ່ຄວາມສຳເລັດ ຂອງ ທລຍ. ໃນລະຫ່ວາງກອງປະຊຸມດັ່ງກ່າວນີ້, ປະສານງານກຸ່ມບ້ານ/ບ້ານ ຈະໄດ້ນຳສະເໜີຜົນໄດ້ຮັບຂອງກອງປະຊຸມສະຫຼູບການເງິນໂປ່ງໃສ່ຄັ້ງສຸດທ້າຍອີກດ້ວຍ.

ສະຖານທີ່:

ສະໂມສອນຂອງເມືອງ.

ປະທານກອງປະຊຸມ:

ເຈົ້າເມືອງ ຫຼື ຮອງເຈົ້າເມືອງ.

ຜູ້ເຂົ້າຮ່ວມ ແລະ ແຂກທີ່ຖືກຮັບເຊີນ:

- ທີມງານ ທລຍ ແຂວງ ແລະ ເມືອງ ແລະ ປະສານງານກຸ່ມບ້ານ/ບ້ານ;
- ພະນັກງານ ທລຍ ສູນກາງ (ຖ້າສາມາດເຂົ້າຮ່ວມໄດ້);
- ຕາງໜ້າກຸ່ມບ້ານ/ບ້ານ;
- ຜູ້ປະສານງານພາກລັດຂັ້ນເມືອງ ແລະ ແຂວງ;

- ເຈົ້າເມືອງ ແລະ/ຫຼື ຮອງເຈົ້າເມືອງ;
- ຕາງໜ້າຈາກຫ້ອງການພັດທະນາຊົນນະບົດເມືອງ ແລະ ແຂວງ;
- ຕາງໜ້າຈາກຫ້ອງການພາກລັດໃນຂະແໜງການກ່ຽວຂ້ອງທັງໝົດຂອງເມືອງ;
- ຕາງໜ້າຈາກຄະນະກຳມະການກຸ່ມບ້ານ/ບ້ານ;
- ບັນດາໂຄງການພັດທະນາທີ່ບໍ່ຂື້ນກັບລັດທະບານທີ່ກ່ຽວຂ້ອງ ແລະ ໂຄງການອື່ນໆ ທີ່ເຮັດວຽກຢູ່ພາຍເມືອງ;
- ຕາງໜ້າຈາກສີມວນຊົນຕ່າງໆພາຍໃນເມືອງ;
- ຕາງໜ້າຈາກອົງການຈັດຕັ້ງມະຫາຊົນ (ຂັ້ນເມືອງ);
- ຜູ້ອາວຸໂສ ແລະ ຊົງຄຸນວຸດທິຂອງເມືອງ.

<u>ຈຸດປະສົງ</u>:

- ເພື່ອກວດ ແລະ ປະເມີນກິດຈະກຳທັງໝົດ ຂອງ ທລຍ ທີ່ໄດ້ຈັດຕັ້ງປະຕິບັດຢູ່ພາຍໃນເມືອງ ໃນໄລຍະຂອງການດຳເນີນໂຄງການ ໃນຮອບວຽນຜ່ານມາຄືນ;
- ລາຍງານ ແລະ ສະແດງຜົນໄດ້ຮັບຂອງການໃຫ້ທຶນໃນຮອບວຽນຜ່ານມາ;
- ການມອບຮັບໂຄງການທີ່ສຳເລັດໃຫ້ກັບກຸ່ມບ້ານ/ບ້ານຢ່າງເປັນທາງການ.

<u>ຄາດຫວັງຜົນໄດ້ຮັບ</u>:

- ໄດ້ແລກປ່ຽນຂໍ້ມູນສຳຄັນ ຂອງ ທລຍ ຢູ່ໃນທີ່ປະຊຸມ;
- ໄດ້ນຳສະເໜີບົດລາຍງານປະຈຳປີ ຂອງເມືອງ ແລະ ຮັບຮອງໂດຍພາກສ່ວນກ່ຽວຂ້ອງທັງໝົດ;
- ການມອບຮັບໂຄງການຍ່ອຍທີ່ກໍ່ສ້າງສຳເລັດ ແລະ ໃບຮັບຮອງຄວາມສຳເລັດ ໃຫ້ກັບຊຸມຊົນຢ່າງເປັນທາງການ.

<u>ກິດຈະກຳ ແລະ ຄວາມຮັບຜິດຊອບ</u>:

- ສະເໜີກ່ຽວກັບບົດສະຫຼຸບສັງລວມກິດຈະກຳຕ່າງໆ, ການນຳໃຊ້ທຶນ ແລະ ບົດຮຽນທີ່ຖອດຖອນໄດ້ ໂດຍແຕ່ລະທີມງານກຸ່ມບ້ານ/ບ້ານ;
- ສະເໜີບົດລາຍງານການເງິນປະຈຳປີ (ກະກຽມໂດຍຜູ້ປະສານງານທລຍເມືອງ) ໃຫ້ພາກສ່ວນກ່ຽວຂ້ອງທັງໝົດຮັບຊາບ ລວມທັງການປະກອບສ່ວນຂອງຊຸມຊົນ ແລະ ການນຳໃຊ້ງົບປະມານບໍລິຫານ ແລະ ຕິດຕາມການກໍ່ສ້າງໂຄງການ (5% ຂອງງົບປະມານໂຄງການທັງໝົດ);
- ການສົນທະນາປຶກສາຫາລື ກ່ຽວກັບການດຳເນີນໂຄງການໂດຍລວມ (ລວມທັງການຍອມຮັບເອົາບາງຕົວຊີ້ວັດການພັດທະນາທີ່ສຳຄັນ) ແລະ ກ່ຽວກັບບັນດາໂຄງການຍ່ອຍທີ່ບໍ່ສຳເລັດ (ເຫດຜົນ ແລະ ບົດຮຽນທີຖອດຖອນໄດ້);
- ສະເໜີບັນຫານທີ່ເກີດຂື້ນ ແລະ ແກ້ໄຂບັນຫາທີ່ຜ່ານມາໂດຍຄະນະກຳມະການຮັບຟັງຄຳເຫັນ ແລະ ໄກ່ເກ່ຍບັນຫາ;

- ການນໍາສະເໜີບົດສະຫຼຸບຂອງການວິໄຈ ກ່ຽວກັບການປະເມີນຜູ້ໄດ້ຮັບຜົນປະໂຫຍດ ແລະ ການປະເມີນທາງດ້ານວິຊາການທີ່ເກີດຂື້ນໃນຮອບວຽນຜ່ານມາ (ບົດສະຫຼຸບຫຍໍ້ ກ່ຽວກັບລາຍງານພາຍໃນ ແລະ ທລຍ ການສະເພາະຂອງການວິໄຈ ເມື່ອທີມງານປະເມີນລົງຕິດຕາມຢູ່ເມືອງ);
- ສົນທະນາປຶກສາຫາລື ແລະ ໃຫ້ຄໍາຕອບ ຕໍ່ຄໍາຖາມທັງໝົດທີ່ມີໂດຍພາກສ່ວນທີ່ກ່ຽວຂ້ອງ;
- ຊົມເຊີຍທີມງານກຸ່ມບ້ານ/ບ້ານ ທີ່ດໍາເນີນໂຄງການສໍາເລັດ ໂດຍການມອບຮັບໂຄງການ ແລະ ໃຫ້ໃບຢັ້ງຢືນຜົນສໍາເລັດຢ່າງເປັນທາງການ;
- ການຮັບຮອງເອົາບົດລາຍງານ.

<u>ໄລຍະເວລາ</u>:

1-2 ວັນ.

<u>ໝາຍເຫດ</u>:

ກອງປະຊຸມປະເມີນຜົນຂັ້ນເມືອງ ຈະໄດ້ຖືກຈັດຕັ້ງຂື້ນຢ່າງໜ້ອຍນຶ່ງເດືອນ ພາຍຫຼັງທີ່ກອງປະຊູມໃສລໍາເລັດ. ການເລີ່ມຮອບວຽນຕໍ່ໄປ ບໍ່ຄວນໃຫ້ເລີ່ມກ່ອນກອງປະຊຸມດັ່ງກ່າວນີ້ສໍາເລັດ. ບົດລາຍງານຈະຕ້ອງໄດ້ສົ່ງໃຫ້ກັບພາກສ່ວນກ່ຽວຂ້ອງໃນທ້ອງຖິ່ນ ແລະ ຜູ້ໃຫ້ທຶນ ແລະ ວາງສະແດງໃນກະດານຂ່າວຂອງທຸກໆກຸ່ມບ້ານ/ບ້ານ.

### 6.9.2 ຮອບວຽນໂຄງການຍ່ອຍ ໃນປີຕໍ່ໆໄປ (ປີທີ 2, 3 ແລະ 4)

ໃນເດືອນຕຸລາ (ເດືອນ10) ຂອງແຕ່ລະປີ, ຮອບວຽນໂຄງການຂອງປີຕໍ່ໄປ ຂອງ ທລຍ II ຈະເລີ່ມຈັດຕັ້ງປະຕິບັດ. ຕັ້ງແຕ່ແຜນພັດທະນາກຸ່ມບ້ານ/ບ້ານ ແລະ ແຜນການລົງທຶນ ຂອງ ທລຍ ທີ່ໄດ້ກໍານົດໄວ້ໃນປີທີ 1, ແຜນໃນຮອບວຽນບາງຄັ້ງມີການແກ້ໄຂ. ປັດໃຈການແກ້ໄຂຄື:

- ຊຸມຊົນຈະຈັດກອງປະຊຸມຂື້ນ ເພື່ອຢັ້ງຢືນຕົວບ້ານ ຫຼື ທີ່ໄດ້ຄັດເລືອກໃໝ່ຂື້ນ ແລະ ປຶກສາຫາລືສະເໜີຂໍ້ແນະນໍາຕ່າງໆ ເພື່ອດັດແກ້ແຜນພັດທະນາກຸ່ມບ້ານ/ບ້ານ ແລະ ແຜນການລົງທຶນຂອງທລຍ.
- ກອງປະຊຸມວາງແຜນພັດທະນາກຸ່ມບ້ານ/ບ້ານ ເພື່ອກວດຄືນ ແລະ ປັງປຸງແຜນຕາມຄວາມຈໍາເປັນ, ລວມທັງພາກການລົງທຶນ. ສາມາດແຕ່ງຕັ້ງຜູ້ປະສານງານກຸ່ມບ້ານ/ບ້ານ ຄືນໃໝ່ໄດ້(ຫຼືແຕ່ງຕັ້ງຜູ້ປະສານງານກຸ່ມບ້ານ/ບ້ານ ທີ່ມີຢູ່ຄືນ) ໃນກອງປະຊຸມນີ້.
- ໂດຍທົ່ວໄປແລ້ວ, ສ່ວນທີ່ເຫຼືອຢູ່ໃນຮອບວຽນແມ່ນຄືກັນ.

ເນື່ອງຈາກໃນຮອບທີ 9 ເປັນຮອບວຽນທີ່ຊ່ວງໄລຍະຂອງການຈັດຕັ້ງປະຕິບັດທີ່ມີຄວາມຍຸ່ງຍາກທີ່ສຸດ ໃນການດໍາເນີນໂຄງ ຂອງ ທລຍ II (ການດໍາເນີນໂຄງການ ໃນຮອບວຽນ 8 ຍັງບໍ່ທັນສໍາເລັດທັງໝົດ, ແຜນການລົງທຶນ 4 ປີ ຂອງ ທລຍ ໄດ້ປັບປຸງຢູ່ບັນດາແຂວງ ແລະ ເມືອງ ຂອງ ທລຍ I ແລະ ກໍາລັງເລີ້ມຢູ່ໃນ 3 ແຂວງໃໝ່) ກຸ່ມບ້ານ/ບ້ານ ທີ່ແຜນພັດທະນາລວມຂອງກຸ່ມບ້ານ/ບ້ານ ສໍາເລັດແລ້ວ ແລະ

ສຳເລັດແຜນການນຳໃຊ້ທຶນ ຂອງ ທລຍ 4 ປີ, ກຸ່ມບ້ານ/ບ້ານດັ່ງກ່າວ ຈະມີວຽກທີ່ເບົາລົງ ພຽງແຕ່ລົງເລິກໃນແຜນການລົງທຶນ 4 ປີ ຂອງ ທລຍ. ສຳລັບຮອບວຽນທີ 10 ກຸ່ມບ້ານ/ບ້ານເຫຼົ່ານີ້ ຈະໄດ້ປັບປຸງແຜນພັດທະນາກຸ່ມບ້ານ/ບ້ານ ແລະ ແຜນການລົງທຶນ ຂອງ ທລຍ 4 ປີ ຄືນ.

## 6.10 ມາດຕະການລົງໂທດ ໃນກໍລະນີຜິດຕໍ່ລະບຽບ

ມັນມີຄວາມສຳຄັນທີ່ຜູ້ດຳເນີນໂຄງການ ຈະຕ້ອງຮູ້ວ່າມາດຕະການຂອງການລົງໂທດ ສາມາດຖືກນຳມາໃຊ້ ເມື່ອການດຳເນີນໂຄງການບໍ່ຖືກຕ້ອງຕາມຈຸດປະສົງ ຂອງ ທລຍ ຫຼື ໃນກໍລະນີ ທີ່ຜູ້ດຳເນີນໂຄງການຝ່າຝືນລະບຽບ ແລະ ຫລັກການໃນການຈັດຕັ້ງປະຕິບັດໂຄງການ ຂອງ ທລຍ ທີ່ວາງອອກ. ນອກຈາກນັ້ນມາດຕະການ ການລົງໂທດ ຍັງສາມາດດຳເນີນໃນກໍລະນີທີ່ໂຄງການທີ່ສະເໜີມາບໍ່ມີຜົນປະໂຫຍດແກ່ຊຸມຊົນຜູ້ທຸກຍາກ ໃນກຸ່ມບ້ານ/ບ້ານ ທີ ທລຍ ດຳເນີນໂຄງການຢູ່ອີກດ້ວຍ. ມາດຕະການການລົງໂທດມີຈຸດປະສົງ ເພື່ອຮັບປະກັນຄວາມໂປ່ງໃສ ຂອງຜູ້ທີ່ມີສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດບັນດາກິດຈະກຳຂອງການດຳເນີນໂຄງການຂອງທລຍ.

ຮູບແບບຂອງມາດຕະການການລົງໂທດ ສາມາດກຳນົດຂື້ນໄດ້:

- ມາດຕະການການລົງໂທດຢູ່ໃນຂັ້ນຊຸມຊົນ: ຊຸມຊົນຈະກຳນົດຂໍ້ຕົກລົງໃນການໃຊ້ມາດຕະການລົງໂທດຕໍ່ຜູ້ທີ່ມີຄວາມຜິດຕໍ່ລະບຽບການດຳເນີນໂຄງການໃນກອງປະຊຸມກຸ່ມບັນ/ບ້ານ;
- ມາດຕະການການລົງໂທດ ຢູ່ໃນກົດໝາຍຂອງລັດ: ໃນກໍລະນີ ທີ່ຜູ້ດຳເນີນໂຄງການຝ່າຝືນຕໍ່ກົດໝາຍລັດວາງອອກ, ການລົງໂທດໂດຍກົດໝາຍຂອງລັດ ສາມາດນຳມາໃຊ້ຕໍ່ພະນັດງານລັດ, ພະນັກງານ ຂອງ ທລຍ ແລະ ທີ່ປຶກສາໂຄງການ ຫຼື ຊຸມຊົນຕາມກົດໝາຍບ້ານເມືອງ.
- ມາດຕະການການລົງໂທດຂອງ ທລຍ: ໃນກໍລະນີທີ່ຝ່າຝືນຕໍ່ຂໍ້ຫ້າມ ແລະ ລະບຽບຫຼັກການ ຂອງ ທລຍ, ເງິນທຶນ ຫຼື ອຳນາດ ບໍ່ໄດ້ໃຊ້ໄປຕາມຮູບການ ຂອງ ທລຍ ຫຼື ມີການບິດເບືອນຈາກຮູບການ ຂອງ ທລຍ, ເມືອງ, ກຸ່ມບ້ານ ຫຼື ບ້ານ ສາມາດຖືກລົງໂທດໄດ້ໃນຮູບແບບຂອງການຢຸດການຊ່ວຍເຫຼືອ ໃນຊ່ວງໄລຍະໄດ້ນຶ່ງ ຫຼື ຖາວອນ ໃນການໄດ້ຮັບທຶນຈາກ ທລຍ. ທຸກໆການລົງໂທດຕ້ອງ ໄດ້ຮັບການເຫັນດີຈາກຜູ້ອຳນວຍການບໍລິຫານ ຂອງ ທລຍ ກ່ອນ, ກ່ອນທີ່ຈະມີການໃສ່ໂທດຕໍ່ຜູ້ທີ່ມີຄວາມຜິດເຫຼົ່ານັ້ນ.

ມາດຕະການການລົງໂທດທີ່ໄດ້ຮັບຮອງທັງໝົດ ຕ້ອງມີການອະທິບາຍຢ່າງຈະແຈ້ງຕໍ່ຜູ້ຄົນ/ພາກສ່ວນ ທີ່ກ່ຽວຂ້ອງທັງໝົດ (ລວມທັງຜູ້ໃຫ້ທຶນ ກັບ ທລຍ), ແລະ ມາດຕະການດັ່ງກ່າວ ຕ້ອງໄດ້ບັນທຶກເປັນລາຍລັກອັກສອນ ເປັນເອກະສານຢັ້ງຢືນທາງການໃນກອງປະຊຸມທີ່ກ່ຽວຂ້ອງ, ກ່ອນທີ່ຈະມີຜົນນຳໃຊ້. ໃຫ້ຮັບຮູ້ວ່າ ມາດຕະການການລົງໂທດ ຕ້ອງໄດ້ສະແດງໃຫ້ຊຸມຊົນເຫັນ ໂດຍການຕິດປະກາດຕາມກະດານຂ່າວຂອງກຸ່ມບ້ານ/ບ້ານ ທີ່ມີການໃຊ້ມາດກະການລົງໂທດ.

ທີ່ປຶກສາ ຫຼື ພະນັກງານ ຂອງ ທລຍ ຈະບໍ່ໄດ້ຮັບອະນຸຍາດຮັບເອົາເງິນໂຄງການ ຈາກກຸ່ມບ້ານ/ບ້ານທີ່ໄດ້ຮັບທຶນ. ພະນັກງານທີ່ບໍ່ໄດ້ປະຈຳການຢູ່ເມືອງທີ່ຕົນເອງຮັບຜິດຊອບ ຫຼື ຂາດການ ໂດຍບໍ່ໄດ້ຮັບ

ອະນຸຍາດກ່ອນ, ຈະຖືກຍົກເລີກສັນຍາ. ທີ່ປຶກສາ ພາຍຫຼັງທີ່ໄດ້ປະເມີນ ແລະ ພິຈາລະນາຈາກຊຸມຊົນ, ໂດຍສະເພາະຊຸມຊົນຜູ້ທຸກຍາກ ກ່ຽວກັບການບໍລິການດ້ານຕ່າງໆຕໍ່ຊຸມຊົນເປັນວ່າບໍ່ເປັນທີ່ພໍໃຈ ແມ່ນຈະຖືກຍົກເລີກສັນຍາ. ຄໍາເຫັນຂອງກຸ່ມບ້ານ/ບ້ານ ຈະຖືກນໍາໄປພິຈາລະນາໃນການຕັດສິນດັ່ງກ່າວ. ການກະທໍາໃດໆຂອງທີ່ປຶກສາ ຫຼື ຜູ້ປະສານງານກຸ່ມບ້ານ/ບ້ານ ທີ່ເປັນການສໍ້ໂກງ ຫຼື ກິນສິນບົນ ແມ່ນຈະຖືກລົງໂທດ. ນີ້ລວມທັງຄວາມບົກພ່ອງ ໃນການຟ້ອງຮ້ອງໃນກໍລະນີທີ່ມີລາຍງານເຖິງການຮ່ວມຫົວກັນ, ການສົມຮູ້ຮ່ວມຄິດ, ການສໍ້ໂກງ ຫຼື ກິນສິນບົນ ຂອງຕິດຕາມ ຫຼື ພະນັກງານ, ຕົວຢ່າງມີການລາຍງານຂອງຊາວບ້ານວ່າມີການຮ່ວມຫົວກັນ, ການສົມຮູ້ຮ່ວມຄິດ, ການສໍ້ໂກງ ຫຼື ກິນສິນບົນ. ທີ່ປຶກສາ ແລະ ພະນັກງານ ທີ່ບໍ່ລາຍງານໃນກໍລະນີສົງໃສ ກ່ຽວກັບການກິນສິນບົນ ແລະ ຄົ້ນພົບວ່າການສໍ້ໂກງ ເກີດຂຶ້ນຈິງ ແລະ ຈະພິຈາລະນາວ່າຜູ້ກ່ຽວມີສ່ວນຮ່ວມໃນການກະທໍາດັ່ງກ່າວ.

ໃນກໍລະນີ ບໍ່ປະຕິບັດຕາມຫຼັກການຄຸ້ມຄອງທາງການເງິນ ແລະ ຂັ້ນຕອນຂອງການຈັດຊື້-ຈັດຈ້າງ ທີ່ໄດ້ລະບຸໄວ້ໃນສັນຍາການໃຫ້ທຶນຊ່ວຍເຫລືອ ແລະ ສັນຍາໂຄງການ ລະຫວ່າງ ທະນາຄານໂລກ ແລະ ລັດຖະບານລາວ, ທະນາຄານໂລກ ຈະໃສ່ມາດຕະການລົງໂທດ ປະກອບມີ: ປະກາດເປັນໂຄງການທີ່ບໍ່ປະຕິບັດຕາມຂັ້ນຕອນການປະມູນຈັດຊື້, ແລະ ຢຸດຕິຊົ່ວຄາວ ແລະ/ຫລື ຍົກເລີກການໃຫ້ທຶນຊ່ວຍເຫລືອໃຫ້ແກ່ໂຄງການດັ່ງກ່າວ,

# 7 ຝຶກອົບຮົມ ແລະ ການສ້າງຄວາມເຂັ້ມແຂງ

## ການສ້ງຄວາມເຂັ້ມແຂງ

ການສ້າງຄວາມເຂັ້ມແຂງ ຂອງ ທລຍ ແມ່ນພະຍາຍາມເນັ້ນໃສ່ການສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ ທລຍ ຢູ່ທຸກໆຂັ້ນ ເພື່ອໃຫ້ການຈັດຕັ້ງປະຕິບັດທຸກໆກິດຈະກໍາ ຂອງ ທລຍ ມີປະສິດທິຜົນດີຂຶ້ນ. ການມີຄວາມສາມາດຂອງເຂົາເຈົ້າ ແມ່ນມີຄວາມສໍາຄັນ ເພາະວ່າເຂົາເຈົ້າຈະໄດ້ສະໜັບສະໜູນທາງດ້ານວິຊາການໃຫ້ແກ່ຊາວບ້ານຕະລອດໄລຍະດໍາເນີນໂຄງການ, ທລຍ ມີຄວາມພະຍາຍາມມອບຄວາມຮັບຜິດຊອບໃຫ້ແກ່ຊຸມຊົນເໝືອນກັນ ດ້ວຍການຈັດຝຶກອົບຮົມໃຫ້ແກ່ເຂົາເຈົ້າ ກ່ຽວກັບວິທີການປະເມີນຄວາມຕ້ອງຂອງເຂົາເຈົ້າເອງ, ວິທີການປຶກສາຫາລື ກັບອໍານາດການປົກຄອງເມືອງ ແລະ ວິທີການຈັດຕັ້ງປະຕິບັດໂຄງການຍ່ອຍ ພ້ອມທັງວິທີການກວດສອບການກໍ່ສ້າງພື້ນຖານໂຄງລ່າງຕ່າງໆ. ໃນຫລັກການແລ້ວ, ທລຍ ຈະສະໜັບສະໜູນໃຫ້ມີການແປພາສາທ້ອງຖິ່ນ ໃນເວລາດໍາເນີນການຝຶກອົບຮົມ ແລະ ຢູ່ໃນກອງປະຊຸມຕ່າງໆ ແລະ ໃນເວລາໃດທີ່ເຫັນວ່າມີຄວາມຈໍາເປັນ, ນອກຈາກນັ້ນ ການແປເອກະສານຕ່າງໆເປັນພາສາຊົນເຜົ່າ (ຕົວຢ່າງ: ພາສາມົ້ງ, ພາສາກຶມມຸ, ພາສາອື່ນໆ...). ກິດຈະກໍາການສ້າງຄວາມເຂັ້ມແຂງໃນດ້ານຕ່າງໆ ຂອງ ທລຍ ນັ້ນ ຍັງເປັນການສະໜັບສະໜູນ ຈຸດປະສົງຂອງລັດຖະບານ ໃນດ້ານຂອດການປະສານງານ ລະຫວ່າງ ບັນດາກະຊວງ ແລະ ອົງການຈັດຕັ້ງອື່ນໆ ທີ່ກ່ຽວຂ້ອງກັບການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງພໍ່ແມ່ປະຊາຊົນຢູ່ຂັ້ນທ້ອງຖິ່ນ..

ການສ້າງຄວາມເຂັ້ມແຂງ ຫຼື ການຝຶກອົບຮົມໃນແຕ່ລະດ້ານ ຈະປະກອບມີຄູ່ມືຝຶກອົບຮົມ ແລະ ເຄື່ອງມືສື່ສານຕ່າງໆ ຊຶ່ງຈະໄດ້ອອກແບບຢູ່ໃນໄລຍະ 6 ເດືອນທໍາອິດຂອງໂຄງການ ແລະ ຈະໄດ້ມີການທົບທວນ ແລະ ປັບປຸງຄືນ ຫລັງຈາກການຈັດຕັ້ງປະຕິບັດໂຄງການປີທໍາອິດສໍາເລັດລົງ. ສໍາລັບໃນປີທໍາອິດຂອງໂຄງການ ຈະໄດ້ສຸມໃສ່ຝຶກອົບຮົມໃຫ້ແກ່ຜູ້ທີ່ຈະເປັນຄູຝຶກຫລັກຢູ່ໃນໂຄງການ ແລະ ຝຶກອົບຮົມການເປັນຄູຝຶກ.

ຢູ່ໃນພາກນີ້ ຂອງຄູ່ມືການຈັດຕັ້ງປະຕິບັດໂຄງການ ໄດ້ອະທິບາຍເຖິງຈຸດສໍາຄັນຕ່າງໆ ທີ່ຕິດພັນກັບກິດຈະກໍາສ້າງຄວາມເຂັ້ມແຂງ.

## 7.1 ຫລັກການໃນການສ້າງຄວາມເຂັ້ມແຂງ

ທີມງານ ທລຍ ເຫັນດີວ່າ ຈຸດປະສົງ, ກິດຈະກໍາການສ້າງຄວາມເຂັ້ມແຂງ ຫຼື ຝຶກອົບຮົມນັ້ນ ຄວນຈະປະກອບດ້ວຍ:

- ການມີສ່ວນຮ່ວມ ແລະ ການມີປະຕິກິລິຍາໂຕ້ຕອບເຊິ່ງກັນ ແລະ ກັນ (ບໍ່ແມ່ນຮັບຟັງພຽງຢ່າງດຽວ ຫຼື ບໍ່ແມ່ນຮູບແບບການບັນຍາຍ);

- ປະສົບການ ແລະ ການນຳພາເຮັດຜ່ານມາ (ການໃຫ້ຜູ້ເຂົ້າຮ່ວມມີໂອກາດໄດ້ຮຽນ ໂດຍການໄດ້ເຮັດຕົວຈິງ, ໂດຍສະເພາະຮຽນຢູ່ພາກສະໜາມ ຫລາຍກວ່າຮຽນຢູ່ຫ້ອງຮຽນ, ນຳໃຊ້ວິທີການຮຽນແບບກຸ່ມເປົ້າໝາຍດຽວກັນ (peer learning) ຫຼື ຮູບແບບ ຊາວນາ ກັບ ຊາວນາ;
- ການຝຶກປະຕິບັດຕົວຈິງ (ສ່ວນທິດສະດີ ແມ່ນນຳໃຊ້ສະເພາະ ເມື່ອມີຄວາມຕ້ອງການ ເພື່ອສະໜັບສະໜູນ ຫຼື ອະທິບາຍ ສຳລັບການຈັດຕັ້ງປະຕິບັດຕົວຈິງເທົ່ານັ້ນ);
- ວຽກງານສົ່ງເສີມບົດບາດຍິງ-ຊາຍ ແລະ ຊົນເຜົ່າ ເປັນວຽກລະອຽດອ່ອນ (ຊຸກຍູ້ໃຫ້ແມ່ຍິງ ແລະ ຊົນເຜົ່າ ໃຫ້ໄດ້ເຂົ້າຮ່ວມຢ່າງເຕັມສ່ວນ);
- ການປະເມີນຜົນ (ປະກອບດ້ວຍ ການສ້າງຄວາມເຂັ້ມແຂງໃຫ້ຜູ້ເຂົ້າຮ່ວມ ຮູ້ຈັກການວິທີການປະເມີນ ໂດຍຜ່ານການຕັ້ງຄຳຖາມ ແລະ ການສຳຫລວດເບິ່ງຕົວຈິງ);
- ຄວາມຄືບໜ້າ (ເນື້ອໃນຂອງການຝຶກອົບຮົມ ຈະຕ້ອງໄດ້ມີການທົບທວນຄືນ ໃນແຕ່ລະປີ ທັງນີ້ຂຶ້ນກັບການປະເມີນຜົນຄວາມຕ້ອງການສົ່ງເສີມຄວາມເຂັ້ມແຂງຂອງຜູ້ເຂົ້າຮ່ວມ).

ເຄື່ອງມືຝຶກອົບຮົມ ຈະຕ້ອງໄດ້ສ້າງຂຶ້ນ ສຳລັບການດຳເນີນກິດຈະກຳການສ້າງຄວາມເຂັ້ມແຂງແຕ່ລະຄັ້ງ. ເຄື່ອງມືດັ່ງກ່າວນີ້ ຕ້ອງໄດ້ອອກແບບໃຫ້ມີຄວາມສອດຄ່ອງກັບຄວາມຕ້ອງການທີ່ແຕກຕ່າງກັນ ແລະ ສອດຄ່ອງກັບພາລະບົດບາດໜ້າທີ່ຂອງຜູ້ເຂົ້າຮ່ວມ. ເຄື່ອງມືຝຶກອົບຮົມ ຈະຕ້ອງກວາມເອົາວຽກງານສົ່ງເສີມບົດບາດຍິງ-ຊາຍ ແລະ ວິທີການເຮັດວຽກກັບແຕ່ລະຊົນເຜົ່າຄືແນວໃດ.

"ວິທີການຝຶກແບບນ້ຳໄຫລ" ຈະໄດ້ຖືກນຳໃຊ້ຢູ່ ທລຍ 2, ໂດຍເລີ່ມຈາກຝຶກອົບຮົມການເປັນຄູຝຶກໃຫ້ແກ່ພະນັກງານຫລັກແຫລ່ງ, ຈາກນັ້ນໄປຝຶກອົບຮົມການເປັນຄູຝຶກ, ຜູ້ປະສານງານກຸ່ມບ້ານ ແລະ ທີມ ງານຂັ້ນບ້ານ ຕາມລຳດັບ.

## 7.2 ກິດຈະກຳສ້າງຄວາມເຂັ້ມແຂງຕ່າງໆ:

ຕາຕະລາງ 4: ສັງລວມກິດຈະກຳສ້າງຄວາມເຂັ້ມແຂງ ຂອງ ທລຍ

| ກິດຈະກຳສ້າງຄວາມເຂັ້ມແຂງ | ຜູ້ເຂົ້າຮ່ວມ | ໂຕຊີ້ວັດ ໄລຍະດຳເນີນກິດຈະກຳ | ໂຕຊີ້ວັດ ໃນດ້ານເວລາ | ຄາດໝາຍທີ່ຈະໄດ້ຮັບ |
|---|---|---|---|---|
| **ຝຶກອົບຮົມພະນັກງານຫລັກແຫລ່ງ** (ຝຶກໂດຍຊ່ຽວຊານ ຈາກພາຍນອກ) | | | | |
| ຝຶກອົບຮົມຄູຝຶກຫລັກແຫລ່ງ ກ່ຽວກັບການສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ | 10-15 ຄົນ ຈາກສູນກາງ, ແຂວງ, ເມືອງ ແລະ ຄພທສ | 15 ມື້ ໃນ 3 ຊຸດ (ລວມທັງຢູ່ພາກສະໜາມ 2 ຊຸດ) | ຊຸດທຳອິດຈັດຂຶ້ນກ່ອນກອງປະຊຸມແນະນຳໂຄງການ 2 ເດືອນ, ຊຸດຕໍ່ໄປຈັດຂຶ້ນພ້ອມກັບການຝຶກອົບຮົມໃຫ້ຜູ້ປະສານງານກຸ່ມບ້ານ, ກອງປະຊຸມວາງແຜນພັດທະນາບ້ານ, ກອງປະຊຸມສະຫລຸບເງິນປະຈຳງວດຂັ້ນບ້ານ | ຄູຝຶກຫລັກແຫລ່ງ ມີຄວາມເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບຮູບແບບການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງ ຂອງ ທລຍ, ວິທີການສຶກສາຊຸມຊົນ, ການມີສ່ວນຮ່ວມ, ບົດບາດຍິງຊາຍ, ຫລັກການປ້ອງກັນຜົນກະທົບທາງສັງຄົມ, ກົນໄກສະແດງຄຳຄິດຄຳເຫັນ. |
| ຝຶກອົບຮົມຄູຝຶກຫລັກແຫລ່ງ ກ່ຽວກັບການກະກຽມ, ຈັດຕັ້ງປະຕິບັດ ແລະ ການຄຸ້ມຄອງໂຄງການຍ່ອຍ | 10-15 ຄົນ ຈາກສູນກາງ, ແຂວງ ລວມທັງທີ່ປຶກສາດ້ານວິຊາການຂັ້ນແຂວງ | 15 ມື້ ໃນ 3 ຊຸດ (ລວມທັງຢູ່ພາກສະໜາມ 2 ຊຸດ) | ຊຸດທຳອິດຈັດຂຶ້ນກ່ອນກອງປະຊຸມວາງແຜນພັດທະນາກຸ່ມບ້ານ 2 ເດືອນ, ຊຸດຕໍ່ໄປຈັດພ້ອມກັນກັບການອອກແບບໂຄງການຍ່ອຍ, ຈັດຕັ້ງປະຕິບັດ ແລະ ການຄຸ້ມຄອງໂຄງການຍ່ອຍ. | ຄູຝຶກຫລັກແຫລ່ງ ມີຄວາມເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບຮູບແບບການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງ ຂອງ ທລຍ, ແລະ ວິທີການອອກແບບທີ່ເໝາະສົມ ແລະ ການກະກຽມໂດຍຊຸມຊົນເອງ, ຈັດຕັ້ງປະຕິບັດ, ບູລະນະສ້ອມແປງໂຄງການຍ່ອຍພື້ນຖານໂຄງລ່າງຂະໜາດນ້ອຍ, ຂໍ້ກຳນົດດ້ານວິຊາການ, ຫລັກການປ້ອງກັນຜົນກະທົບທາງສິ່ງແວດລ້ອມ ແລະ ໄພພິບັດທາງທຳມະຊາດ |

| | | | | |
|---|---|---|---|---|
| ຝຶກອົບຮົມຄູຝຶກຫລັກແຫລ່ງ ກ່ຽວກັບການຄຸ້ມຄອງບໍລິຫານການເງິນ ແລະ ການຈັດຊື້-ຈັດຈ້າງໂຄງການຍ່ອຍ | 10-15 ຄົນ ຈາກສູນກາງ, ແຂວງ ແລະ ເມືອງ | 15 ມື້ ໃນ 3 ຊຸດ (ລວມທັງຢູ່ພາກສະໜາມ 2 ຊຸດ) | ຊຸດທຳອິດຈັດຂຶ້ນກ່ອນກອງປະຊຸມແນະນຳໂຄງການ 2 ເດືອນ, ຊຸດຕໍ່ໄປຈັດຂຶ້ນພ້ອມກັບການຝຶກອົບຮົມໃຫ້ຜູ້ປະສານງານກຸ່ມບ້ານ, ຝຶກອົບຮົມທີມງານການເງິນ ແລະ ຈັດຊື້-ຈັດຈ້າງຂັ້ນບ້ານ, ກອງປະຊຸມສະຫລຸບເງິປະຈຳງວດຂັ້ນບ້ານ. | ຄູຝຶກຫລັກແຫລ່ງ ມີຄວາມເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບຮູບແບບການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງ ຂອງ ທລຍ, ການຄຸ້ມຄອງດ້ານການເງິນ ແລະ ຈັດຊື້-ຈັດຈ້າງໂດຍຊຸມຊົນເອງ. |
| ຝຶກອົບຮົມສະເພາະພະນັກງານຕິດຕາມ ແລະ ປະເມີນຜົນ | ພະນັງກງານຕິດຕາມ ແລະ ປະເມີນຜົນຂັ້ນສູນກາງ ແລະ ຂັ້ນແຂວງ ແລະ ນັກສຶກສາຈົບໃໝ່ | 15 ມື້ | ຊຸດທຳອິດ ເລີ່ມກ່ອນທີ່ຈະຈັດກອງປະຊຸມແນະນຳໂຄງການຂັ້ນບ້ານ | ພະນັງກງານຕິດຕາມ ແລະ ປະເມີນຜົນ ມີຄວາມສາມາດທີ່ເຂັ້ມແຂງຂື້ນ |
| **ຝຶກອົບຮົມການເປັນຄູຝຶກ** (ຝຶກໂດຍຄູຝຶກຫລັກແຫລ່ງ) | | | | |
| ຝຶກອົບຮົມການເປັນຄູຝຶກ ກ່ຽວກັບການສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ | ຜູ້ປະສານງານ ທລຍ ເມືອງ, ພັດທະນາຊຸມຊົນເມືອງ ແລະ ຜູ້ຕາງໜ້າຫ້ອງການທີ່ກ່ຽວຂ້ອງຂອງເມືອງ | 20-25 ມື້ (ໃນ 4-5 ຊຸດ) | ຊຸດທຳອິດ ເລີ່ມກ່ອນທີ່ຈະຈັດກອງປະຊຸມແນະນຳໂຄງການ, ສ່ວນຊຸດຕໍ່ໆໄປ ຈັດພ້ອມດຽວກັບການຝຶກອົບຮົມຜູ້ປະສານງານກຸ່ມບ້ານ, ກອງປະຊຸມວາງແຜນພັດທະນາບ້ານ, ກອງປະຊຸມສະຫລຸບປະຈຳງວດຂັ້ນບ້ານ | ທີມງານຄູຝຶກ ມີຄວາມເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບຮູບແບບການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງ, ການສຶກສາຊຸມຊົນ, ການສ້າງແຜນພັດທະນາແບບມີສ່ວນຮ່ວມ, ບົດບາດຍິງ-ຊາຍ, ຫລັກການປ້ອງກັນຜົນກະທົບທາງສັງຄົມ, ກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ. |
| ຝຶກອົບຮົມການເປັນຄູຝຶກ ກ່ຽວກັບການກະກຽມ, ຈັດຕັ້ງປະຕິບັດ ແລະ ການຄຸ້ມຄອງໂຄງການຍ່ອຍ | ພະນັກງານວິຊາການ ທລຍ ຂັ້ນເມືອງ ແລະ ຜູ້ຕາງໜ້າຈາກຫ້ອງການວິຊາການທີ່ກ່ຽວຂ້ອງຂັ້ນເມືອງ | 20-25 ມື້ (ໃນ 4-5 ຊຸດ) | ຊຸດທຳອິດ ຈັດຂື້ນກ່ອນກອງປະຊຸມການວາງແຜນພັດທະນາກຸ່ມ 1 ເດືອນ ສ່ວນຊຸດຕໍ່ໆໄປ ຈັດພ້ອມດຽວກັບການສຳຫລວດ-ອອກແບບໂຄງການຍ່ອຍ, ການຈັດຕັ້ງປະຕິບັດໂຄງການ ແລະ | ທີມງານຄູຝຶກ ມີຄວາມເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບຮູບແບບການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງ ຂອງ ທລຍ, ແລະ ວິທີການອອກແບບທີ່ເໝາະສົມ ການກະກຽມໂດຍຊຸມຊົນເອງ, ຈັດຕັ້ງປະຕິບັດ, ບູລະນະ |

| | | | | |
|---|---|---|---|---|
| | | | ການຄຸ້ມຄອງບູລະນະສ້ອມແປງ ໂຄງການຍ່ອຍ | ສ້ອມແປງໂຄງການຍ່ອຍພື້ນຖານໂຄງລ່າງ ຂະໜາດນ້ອຍ, ຂໍ້ກຳນົດດ້ານວິຊາການ, ຫລັກການປ້ອງກັນຜົນກະທົບທາງສິ່ງແວດລ້ອມ ແລະ ໄພພິບັດທາງທຳມະຊາດ. |
| ຝຶກອົບຮົມການເປັນຄູຝຶກ ກ່ຽວກັບການຄຸ້ມຄອງບໍລິຫານການເງິນ ແລະ ການຈັດຊື້-ຈັດຈ້າງ | ພະນັກງານການເງິນ ແລະ ຈັດຊື້-ຈັດຈ້າງ ຂັ້ນເມືອງ | 20-25 ມື້ (ໃນ 4-5 ຊຸດ) | ຊຸດທຳອິດຈັດຂຶ້ນ ກ່ອນຈະກອງປະຊຸມແນະນຳໂຄງການ 2 ເດືອນ, ຊຸດຕໍ່ໄປຈັດຂຶ້ນພ້ອມກັບການຝຶກອົບຮົມ ໃຫ້ຜູ້ປະສານງານກຸ່ມບ້ານ, ຝຶກອົບຮົມໃຫ້ແກ່ທີມງານການເງິນ ແລະ ຈັດຊື້-ຈັດຈ້າງຂັ້ນກຸ່ມບ້ານ, ກອງປະຊຸມສະຫລຸບເງິປະຈຳງວດຂັ້ນບ້ານ. | ຄູຝຶກ ມີຄວາມເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບຮູບແບບການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງ ຂອງ ທລຍ, ການຄຸ້ມຄອງດ້ານການເງິນ ແລະ ຈັດຊື້ນຈັດຈ້າງ ໂດຍຊຸມຊົນເອງ. |
| **ຝຶກອົບຮົມ ທີມງານຕ່າງໆຂັ້ນກຸ່ມບ້ານ** (ຝຶກໂດຍຄູຝຶກ ທລຍ, ໂດຍການຊ່ວຍເຫລືອຈາກຄູຝຶກຫລັກແຫລ່ງ ຖ້າມີຄວາມຕ້ອງການ) | | | | |
| ຝຶກອົບຮົມທີມງານຕ່າງໆຂັ້ນກຸ່ມບ້ານ | ຫົວໜ້າທີມງານກຸ່ມບ້ານ, ຄະນະກຸ່ມບ້ານພັດທະນາ 2-3 ຄົນ | 30-35 ມື້ (ໃນ 5-6 ຊຸດ) | ຊຸດທຳອິດ ຈັດຂຶ້ນກ່ອນຈະຈັດກອງປະຊຸມວາງແຜນພັດທະນາກຸ່ມບ້ານ | ຜູ້ປະສານງານກຸ່ມບ້ານ, ຫົວໜ້າທີມງານຂັ້ນກຸ່ມບ້ານ, ຄະນະກຸ່ມບ້ານພັດທະນາ ມີຄວາມເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບວິທີການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງ, ວິທີການສຶກສາຊຸມຊົນ, ການວາງແຜນພັດທະນາແບບມີສ່ວນຮ່ວມ, ການສົ່ງເສີມບົດບາດຍິງ-ຊາຍ, ຫລັກການການປ້ອງກັນຜົນກະທົບທາງສັງຄົມ, ກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ. |
| | ທີມງານຈັດຊື້-ຈັດຈ້າງຂັ້ນກຸ່ມບ້ານ | 10 ມື້ (ໃນ 2 ຊຸດ) | ຊຸດທຳອິດ ຈັດຂຶ້ນກ່ອນຈະຈັດກອງປະຊຸມກະກຽມຈັດຕັ້ງປະຕິບັດໂຄງການຍ່ອຍ | ທີມງານຈັດຊື້-ຈັດຈ້າງຂັ້ນກຸ່ມບ້ານ ມີຄວາມເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບວິທີການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງ, ວິທີ |

| | | | | |
|---|---|---|---|---|
| | | | | ການຈັດຊື້-ຈັດຈ້າງໂຄງການຍ່ອຍ ໂດຍຊຸມຊົນເອງ |
| | ທີມງານການເງິນ ຂັ້ນກຸ່ມບ້ານ | 10 ມື້ (ໃນ 2 ຊຸດ) | ຊຸດທໍາອິດ ຈັດຂຶ້ນກ່ອນຈະຈັດກອງປະຊຸມກະກຽມຈັດຕັ້ງປະຕິບັດໂຄງການຍ່ອຍ | ທີມງານການເງິນຂັ້ນກຸ່ມ ມີຄວາມເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບວິທີການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງ, ພື້ນຖານການຄຸ້ມຄອງບໍລິຫານການເງິນ ຂອງໂຄງການຍ່ອຍ |
| | ທີມງານຈັດຕັ້ງປະຕິບັດ ແລະ ຄຸ້ມຄອງໂຄງການຍ່ອຍ | 30-35 ມື້ (ໃນ 5-6 ຊຸດ ທຸກໆ 2 ເດືອນ) | ຊຸດທໍາອິດ ຈັດຂຶ້ນກ່ອນຈະຈັດຕັ້ງປະຕິບັດໂຄງການຍ່ອຍ ແລະ ກອງປະຊຸມກະກຽມ. | ທີມງານຈັດຕັ້ງປະຕິບັດ ແລະ ຄຸ້ມຄອງໂຄງການຍ່ອຍ ມີຄວາມເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບວິທີການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງ, ວິທີການຈັດຊື້-ຈັດຈ້າງໂຄງການຍ່ອຍ ໂດຍຊຸມຊົນເອງ, ການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງໂຄງການຍ່ອຍພື້ນຖານໂຄງລ່າງຂະໜາດນ້ອຍ, ຂໍ້ກໍານົດທາງດ້ານວິຊາການ, ຫລັກການປ້ອງກັນຜົນກະທົບທາງສິ່ງແວດລ້ອມ ແລະ ໄພພິບັດທາງທໍາມະຊາດ. |
| **ຝຶກອົບຮົມ ຕົວແທນບ້ານ** (ໂດຍຄູຝຶກ, ຮ່ວມກັບຜູ້ປະສານງານກຸ່ມບ້ານ) | | | | |
| ຝຶກອົບຮົມໃຫ້ແກ່ຕົວແທນບ້ານ | ຕົວແທນບ້ານ 6 ຄົນ (ຍິງ 3 , ຊາຍ 3) | 3 ມື້ (ໃນ 1 ຊຸດ) | ຈັດຂຶ້ນພ້ອມກັນກັບ ກອງປະຊຸມວາງແຜນພັດທະນາບ້ານ | ຕົວແທນບ້ານ ມີຄວາມເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບວິທີການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງ, ວິທີການຈັດຊື້-ຈັດຈ້າງໂຄງການຍ່ອຍ ໂດຍຊຸມຊົນເອງ, ສາມາດເວົ້າແທນບ້ານຂອງເຂົາເຈົ້າ, ສາມາດຊ່ວຍຜູ້ປະສານງານກຸ່ມບ້ານ (ແລະ ນາຍບ້ານ) |

| | | | | |
|---|---|---|---|---|
| | | | | ໃນການປຸກລະດົມຊາວບ້ານ ເຂົ້າຮ່ວມກອງປະຊຸມຕ່າງໆ ຂອງ ທລຍ (ໂດຍສະເພາະຄອບຄົວຜູ້ດ້ອຍໂອກາດ), ແລະ ການນຳໃຊ້ກະດານຂ່າວ ຂອງ ທລຍ. |
| ຝຶກອົບຮົມ ທີມງານຈັດຕັ້ງປະຕິບັດ ແລະ ບູລະນະສ້ອມແປງໂຄງການຍ່ອຍ. | ທີມງານຈັດຕັ້ງປະຕິບັດ ແລະ ບູລະນະສ້ອມແປງໂຄງການຍ່ອຍ ຢູ່ບ້ານທີ່ໄດ້ຮັບໂຄງການຍ່ອຍ ຈາກ ທລຍ 3 ຄົນ | 30-35 ມື້ (ໃນ 5-6 ຊຸດ) | ຈັດຂຶ້ນພ້ອມກັນກັບກອງປະຊຸມກະກຽມຈັດຕັ້ງປະຕິບັດໂຄງການຍ່ອຍ | ຢູ່ບ້ານທີ່ໄດ້ຮັບໂຄງການຍ່ອຍ ຈາກ ທລຍ ໄດ້ເພີ່ມຄວາມສາມາດໃນການກະກຽມ, ຈັດຕັ້ງປະຕິບັດ ແລະ ບູລະນະສ້ອມແປງໂຄງການຍ່ອຍ. |
| ຝຶກອົບຮົມ ຄະນະກຳມະການແກ້ໄຂຂໍ້ຂັດແຍ້ງຂັ້ນບ້ານ (ໂດຍພະນັກງານພັດທະນາຊຸມຊົນເມືອງ ແລະ ຜູ້ປະສານງານກຸ່ມບ້ານ) | ແນວໂຮມບ້ານ, ນາຍບ້ານ, ສະຫະພັນແມ່ຍິງ, ຊາວໜຸ່ມ, ປກສ, ກອງຫລອນ ແລະ ຕົວແທນບ້ານ ທລຍ | ເຄິ່ງມື້ | ຈັດຂຶ້ນພ້ອມກັນກັບກອງປະຊຸມ ລາຍງານ ແລະ ຮັບຮອງເອົາແຜນພັດທະນາບ້ານ | ຄະນະໄກ່ເກັ່ຽ ແຕ່ລະບ້ານ ມີຄວາມເຂົ້າໃຈໜ້າທີ່ຮັບຜິດຊອບຂອງຕົນເພີ່ມຂຶ້ນ. |

## 7.3 ກິດຈະກຳຝຶກອົບຮົມຕ່າງໆ

### 7.3.1 ຝຶກອົບຮົມຄູຝຶກຫລັກແຫລ່ງ (MOT)

ຝຶກອົບຮົມຄູຝຶກຫລັກແຫລ່ງ ແມ່ນຈະຈັດຂຶ້ນຢູ່ໃນ 3 ຂົງເຂດຄື:

- ຝຶກອົບຮົມຄູຝຶກຫລັກແຫລ່ງ ກ່ຽວກັບການສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ;
- ຝຶກອົບຮົມຄູຝຶກຫລັກແຫລ່ງ ກ່ຽວກັບການກະກຽມ, ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງໂຄງການຍ່ອຍ; ແລະ
- ຝຶກອົບຮົມຄູຝຶກຫລັກແຫລ່ງ ກ່ຽວກັບດ້ານການຄຸ້ມຄອງການເງິນ ແລະ ຈັດຊື້-ຈັດຈ້າງໂຄງການຍ່ອຍ

ການຝຶກອົບຮົມຄູຝຶກຫລັກແຫລ່ງ ຄວນຝຶກອົບຮົມໃຫ້ຜູ້ທີ່ມີຄວາມກະຕືລືລົ້ນ ຈາກຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ, ແລະ ຄວນແມ່ນຜູ້ທີ່ມີອຸດົມການໃນການຊ່ວຍເຫລືອຜູ້ທຸກຍາກ. ການຝຶກອົບຮົມຄູຝຶກຫລັກແຫລ່ງ ຈະໄດ້ທຳການຝຶກໂດຍຊ່ຽວຊານຈາກຕ່າງປະເທດ. ຄູ່ມືລວມທັງເຄື່ອງມືຝຶກອົບຮົມຕ່າງໆຈະຕ້ອງໄດ້ສ້າງຂື້ນ ເພື່ອຮັບໃຊ້ໃຫ້ແກ່ການຝຶກອົບຮົມຄູຝຶກຫລັກແຫລ່ງດັ່ງກ່າວ. ຊຸດຝຶກອົບຮົມທຳອິດຈະໄດ້ຈັດຂຶ້ນຢູ່ຂັ້ນສູນກາງ ຈາກນັ້ນຈຶ່ງຈັດຝຶກອົບຮົມອື່ນໆ (ລວມທັງການຝຶກອົບຮົມກັບທີ່) ຢູ່ຂັ້ນແຂວງ ແລະ ຂັ້ນເມືອງ.

ຫົວຂໍ້ຝຶກອົບຮົມ ທີ່ຈະສະໜອງໃຫ້ພະນັກງານ ທລຍ ຂຶ້ນກັບໜ້າທີ່ ແລະ ຄວາມຮັບຜິດຊອບຂອງເຂົາເຈົ້າ ແລະ ລວມມີຫົວຂໍ້ຝຶກອົບຮົມດັ່ງຕໍ່ໄປນີ້:

- ຫລັກການ ຂອງ ທລຍ, ຂັ້ນຕອນດຳເນີນໂຄງການ, ລະບຽບການພັດທະນາຊຸມຊົນ, ໂຄງຮ່າງການຈັດຕັ້ງ, ກິດຈະກຳທີ່ສະໜັບສະໜູນ ແລະ ບໍ່ສະໜັບສະໜູນ ໂດຍ ທລຍ ແລະ ອື່ນໆ;
- ຄວາມແຕກຕ່າງທີ່ສຳຄັນ ລະຫວ່າງ ການຈັດຕັ້ງປະຕິບັດໂຄງການ ທລຍ 1 ແລະ ທລຍ 2;
- ກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ;
- ການປ້ອງກັນຜົນກະທົບທາງສິ່ງແວດລ້ອມ ແລະ ສັງຄົມ;
- ການສົ່ງເສີມບົດບາດຍິງ-ຊາຍ;
- ລາຍລະອຽດໂດຍກົງ ກ່ຽວກັບວິທີການຝຶກອົບຮົມໃຫ້ແກ່ຜູ້ປະສານງານກຸ່ມບ້ານ ແລະ ທີມງານຕ່າງໆຂັ້ນບ້ານ ຊຶ່ງລວມມີ: ການນຳສະເໜີກ່ຽວກັບອຸປະກອນສຳລັບຝຶກອົບຮົມ, ການກະກຽມ, ເຕັກນິກການຝຶກ ແລະ ຫລັກສູດການຝຶກອົບຮົມ;
- ເຕັກນິກໃນການເປັນຜູ້ອຳນວຍຄວາມສະດວກ ຊຶ່ງລວມມີ: ການນຳໃຊ້ເຄື່ອງມື ເຜີຍແຜ່ຂໍ້ມູນຂ່າວສານ (ເຄື່ອງມື IEC), ຫລັກການ ແລະ ເຕັກນິກທີ່ໄດ້ຮັບຜົນສຳເລັດໃນການສອນຜູ້ໃຫ່ຍ (ລວມທັງເຕັກນິກ ສຳລັບສອນຜູ້ໃຫ່ຍທີ່ບໍ່ຮູ້ໜັງສື) ລວມທັງບັນຫາທາງດ້ານບົດບາດຍິງຊາຍ, ວັດທະນາທຳ ແລະ ຊົນເຜົ່ານຳອີກ;

- ການພັດທະນາຊົນນະບົດຮອບດ້ານ ແລະ ຍຸດທະສາດໃນການແກ້ໄຂຄວາມທຸກຍາກ, ໂດຍສະເພາະເນັ້ນໜັກໃສ່ການວາງແຜນແບບມີສ່ວນຮ່ວມ ແຕ່ລຸ່ມຂຶ້ນເທິງ, ແລະ ການມອບສິດໃຫ້ແກ່ຊຸມຊົນ;
- ການບໍລິຫານເງິນໂຄງການຍ່ອຍ, ການຈົດບັນທຶກ, ການບັນຊີ ແລະ ການຄຸ້ມຄອງສັນຍາໂຄງການຍ່ອຍ. ເຕັກນິກໃນການເຮັດບັນຊີ ສຳລັບຊຸມຊົນຜູ້ບໍ່ຮູ້ໜັງສື ກໍຄວນລວມເປັນຫົວຂໍ້ຝຶກອົບຮົມ, ຄວາມໂປ່ງໃສອັນເປັນຫລັກການພື້ນຖານຂອງໂຄງການ;
- ວິສະວະກຳ ແລະ ເຄື່ອງມືວິຊາການ ລວມມີການສຳຫລວດ, ການອອກແບບ, ການຄິດໄລ່ງົບປະມານ, ຈັດຊື້-ຈັດຈ້າງ, ການກວດການກໍ່ສ້າງ ແລະ ການຄຸ້ມຄອງບູລະນະສ້ອມແປງສຳລັບຊຸມຊົນຊົນນະບົດ, ຈາກຊຸມຊົນຊົນນະບົດ ແລະ ໂດຍຊຸມຊົນຊົນນະບົດ. ຫົວຂໍ້ຝຶກອົບຮົມ ຍັງຈະຕ້ອງຂຶ້ນກັບ ແລະ ສະເພາະເຈາະຈົງໃສ່ໂຄງການຍ່ອຍຂອງແຕ່ລະບ້ານ.

### 7.3.2 ຝຶກອົບຮົມ ການເປັນຄູຝຶກ (TOT)

ຫລັງຈາກການຝຶກອົບຮົມຄູຝຶກຫລັກແຫລ່ງ, ທລຍ ມີເປົ້າໝາຍວ່າຄູຝຶກຫລັກແຫລ່ງ ຈະສືບຕໍ່ເປັນຜູ້ສະໜອງການຝຶກອົບຮົມການເປັນຄູຝຶກ (TOT) ໃຫ້ແກ່ພະນັກງານ ທລຍ ທີ່ຮັບຜິດຊອບປະຕິບັດໜ້າທີ່ຢູ່ຂັ້ນແຂວງ ແລະ ຂັ້ນເມືອງ (ລວມທັງພະນັກງານທີ່ບັນຈຸເຂົ້າຢູ່ໃນແຂວງໃໝ່ ແລະ ຢູ່ເມືອງໃໝ່).

ຝຶກອົບຮົມການເປັນຄູຝຶກ ຈະໄດ້ຈັດຂຶ້ນ ຢູ່ໃນ 3 ຂົງເຂດດັ່ງນີ້:

- ຝຶກອົບຮົມການເປັນຄູຝຶກ ກ່ຽວກັບການສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ;
- ຝຶກອົບຮົມການເປັນຄູຝຶກ ກ່ຽວກັບການກະກຽມ, ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງໂຄງການຍ່ອຍ; ແລະ
- ຝຶກອົບຮົມການເປັນຄູຝຶກ ກ່ຽວກັບດ້ານການຄຸ້ມຄອງການເງິນ ແລະ ຈັດຊື້-ຈັດຈ້າງໂຄງການຍ່ອຍ

ຜູ້ທີ່ຈະເປັນຄູຝຶກ ຄວນແມ່ນພະນັກງານ ທລຍ ຂັ້ນເມືອງ ແລະ ຄູ່ຮ່ວມງານຈາກຂະແໜງການຕ່າງໆຂັ້ນເມືອງ ເໝືອນກັນ. ຄູ່ມື ແລະ ເຄື່ອງມືຝຶກອົບຮົມຕ່າງໆ ຈະຕ້ອງໄດ້ສ້າງຂຶ້ນ ເພື່ອຮັບໃຊ້ໃຫ້ແກ່ການຝຶກອົບຮົມເປັນຄູຝຶກໃນສາມຂົງເຂດດັ່ງກ່າວ. ຊຸດຝຶກອົບຮົມທຳອິດຈະໄດ້ຈັດຂຶ້ນຢູ່ຂັ້ນເມືອງ ຈາກນັ້ນ ຈິ່ງຈັດຝຶກອົບຮົມອື່ນໆ (ລວມທັງການຝຶກອົບຮົມກັບທີ່) ຢູ່ຂັ້ນເມືອງ, ຂັ້ນກຸ່ມບ້ານ ແລະ ຂັ້ນບ້ານ.

ຫົວຂໍ້ຝຶກອົບຮົມ ທີ່ຈະສະໜອງໃຫ້ພະນັກງານ ທລຍ ຈະຕ້ອງຄືກັນກັບການຝຶກອົບຮົມຄູຝຶກຫລັກແຫລ່ງ.

### 7.3.3 ການຝຶກອົບຮົມສະເພາະ ໃຫ້ແກ່ພະນັກງານຕິດຕາມ ແລະ ປະເມີນຜົນຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ກ່ຽວກັບວຽກງານຕິດຕາມ ແລະ ປະເມີນຜົນ

ການຝຶກອົບຮົມສະເພາະ ໃຫ້ແກ່ພະນັກງານຕິດຕາມ ແລະ ປະເມີນຜົນ ຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ຈະໄດ້ຈັດຖືກຂຶ້ນ. ຫົວຂໍ້ຝຶກອົບຮົມພື້ນຖານ ແມ່ນອີງໃສ່ສິ່ງທີ່ໄດ້ພົບເຫັນຈາກການປະເມີນຜົນຄວາມເຂັ້ມແຂງຂອງພະນັກງານ ວ່າຈະຕ້ອງປັບປຸງຢູ່ໃນປີທີ່ 1 ຜ່ານມາ.

### 7.3.4 ການຝຶກອົບຮົມໃຫ້ແກ່ທີມງານຂັ້ນກຸ່ມບ້ານ

ຄູຝຶກ ໂດຍການຊ່ວຍຂອງຄູຝຶກຫລັກແຫລ່ງ ຈະໄດ້ຮັບຜິດຊອບໃນການຝຶກອົບຮົມ ໃຫ້ແກ່ທີມງານຕ່າງໆ ຂັ້ນກຸ່ມບ້ານ ເຊັ່ນ:

- ຜູ້ປະສານງານກຸ່ມບ້ານ;
- ທີມງານຈັດຊື້-ຈັດຈ້າງ;
- ທີມງານການເງິນ.

ອຸປະກອນ ສຳລັບຊຸດຝຶກອົບຮົມດັ່ງກ່າວ ຈະໄດ້ກະກຽມຢູ່ຫ້ອງການ ທລຍ ວຽງຈັນ, ແຕ່ໃຫ້ສອດຄ່ອງກັບຄວາມຕ້ອງການ ແລະ ໜ້າຮັບຜິດຊອບຂອງທີມງານຕ່າງຂັ້ນກຸ່ມບ້ານ. ຢູ່ໃນໄລຍະຈັດຕັ້ງປະຕິບັດໂຄງການຍ່ອຍ ເຂົາເຈົ້າຈະໄດ້ຮັບການຝຶກອົບຮົມດັ່ງນີ້:

- *ຢູ່ໃນຂັ້ນຕອນການວາງແຜນ*

*ຜູ້ປະສານງານກຸ່ມບ້ານ ແລະ ຫົວໜ້າທີມງານກຸ່ມບ້ານ* ຈະໄດ້ຮັບການຝຶກອົບຮົມ ກ່ຽວກັບຫລັກການຂອງ ທລຍ, ຂັ້ນຕອນດຳເນີນໂຄງການ, ລະບຽບການພັດທະນາຊຸມຊົນ, ວິທີການລາຍງານຕ່າງໆ, ລວມທັງຂໍ້ແນະນຳໃນການປ້ອງກັນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ, ກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ, ການນຳໃຊ້ເຄື່ອງມືເຜີຍແຜ່ຂໍ້ມູນ-ຂ່າວສານ ແລະ ຫົວຂໍ້ຝຶກອົບຮົມກ່ຽວກັບການພັດທະນາຊຸມຊົນ ໂດຍລວມມີວິທີການວາງແຜນແບບມີສ່ວນຮ່ວມ, ບົດບາດຍິງ-ຊາຍ ແລະ ຊົນເຜົ່າ.

- *ຢູ່ໃນຂັ້ນຕອນການຈັດຕັ້ງປະຕິບັດ*

*ຜູ້ປະສານງານກຸ່ມບ້ານ, ທີມງານຈັດຊື້-ຈັດຈ້າງກຸ່ມບ້ານ, ທີມງານການເງິນກຸ່ມບ້ານ,* ຈະໄດ້ຮັບການຝຶກອົບຮົມ ກ່ຽວກັບວິທີການການຄຸ້ມຄອງດ້ານເງິນ ແລະ ວິທີການດຳເນີນການຈັດຊື້-ຈັດຈ້າງ ລວມທັງຂັ້ນຕອນການຈັດຕັ້ງປະຕິບັດ ທລຍ, ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ, ໂຄງຮ່າງການຈັດຕັ້ງ, ກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ,ຂໍ້ແນະນຳໃນການປ້ອງກັນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ (ກອບໃນການຄຸ້ມຄອງທາງດ້ານສິ່ງແວດລ້ອມ ແລະ ສັງຄົມ, ກອບນະໂຍບາຍການທົດແທນຄືນ ແລະ ການຍົກຍ້າຍຈັດສັນ ແລະ ແຜນການຄວບຄຸມຢາປາບສັດຕູພືດ), ການຝຶກອົບຮົມດ້ານວິຊາການອື່ນໆ.

### 7.3.5 ການຝຶກອົບຮົມຢູ່ຂັ້ນບ້ານ

ໃນໄລຍະດຳເນີນກອງປະຊຸມວາງແຜນພັດທະນາບ້ານ, ທີມງານຈະຕ້ອງໄດ້ຝຶກອົບຮົມໃຫ້ແກ່ຕົວແທນແຕ່ລະບ້ານ ກ່ຽວກັບວິທີພື້ນຖານ ໃນການສື່ສານ ແລະ ການປຶກສາຫາລື. ທັງນີ້ເພື່ອໃຫ້ຮັບປະກັນວ່າຕົວແທນບ້ານແຕ່ລະບ້ານ ໂດຍສະເພາະຕົວແທນບ້ານຜູ້ທີ່ເປັນຊົນເຜົ່າ, ຜູ້ຍິງ ແລະ ຜູ້ດ້ອຍໂອກາດ ມີຄວາມເຂົ້າໃຈ ແລະ ໄດ້ເຂົ້າຮ່ວມ. ພະນັກງານ ທລຍ ຈະຕ້ອງຮັບປະກັນວ່າຜູ້ປະສານງານກຸ່ມບ້ານ ເປັນຜູ້ແປພາສາທ້ອງຖິ່ນ. ສຳລັບບ້ານທີ່ນຳໃຊ້ສອງ ຫຼື ຫລາຍພາສາ ພະນັກ ງານ ທລຍ ຈະຕ້ອງຈັດໃຫ້ມີການແປພາສາຊົນເຜົ່ານັ້ນໆ. ອຸປະກອນທີ່ຮັບໃຊ້ການຝຶກອົບຮົມ ຈະຕ້ອງມີລັກສະນະງ່າຍດາຍ ເພື່ອໃຫ້ມີຄວາມເໝາະສົມກັບຄວາມຕ້ອງການຂອງຊາວບ້ານ. (ຕົວຢ່າງ: ຄູ່ມືຝຶກອົບຮົມ ຄວນໃຊ້ຮູບພາບຕ່າງໆເພື່ອອະທິບາຍ - ເບິ່ງຄູ່ມືກະຈາຍຂໍ້ມູນ-ຂ່າວສານ).

ການຝຶກອົບຮົມ ໃຫ້ແກ່ທີມງານຈັດຕັ້ງປະຕິບັດຂັ້ນບ້ານ ຈະເຮັດໃຫ້ທີມງານດັ່ງກ່າວ ມີຄວາມສາ ມາດໃນການດູແລ ແລະ ກວດກາໂຄງການກໍ່ສ້າງ (ໂຄງການຍ່ອຍ ທີ່ດຳເນີນໂດຍຜູ້ຮັບເໝົາ) ຫຼື ໂຄງການກໍ່ສ້າງທີ່ດຳເນີນໂດຍຊຸມຊົນເອງ. ການຝຶກອົບຮົມ ຈະໄດ້ສຸມໃສ່ກ່ຽວກັບຂັ້ນຕອນການເຮັດວຽກ ຂອງ ທລຍ, ຄວາມເປັນເຈົ້າການຂອງຊຸມຊົນ ແລະ ການມອບສິດໃຫ້ແກ່ຂອງຊຸມຊົນ ລວມທັງເຕັກນິກວິທີການໃນການຄຸ້ມຄອງໂຄງການຍ່ອຍໃຫ້ມີການນຳໃຊ້ຢ່າງຍາວນານ. ການຝຶກອົບຮົມດັ່ງກ່າວນີ້ ຈະຕ້ອງໄດ້ລວມເອົາຫົວຂໍ້ກ່ຽວກັບຫລັກການຄຸ້ມຄອງໄພພິບັດທາງທຳມະຊາດ, ລວມທັງວິທີການກໍ່ສ້າງໂຄງການທີ່ຖືກທຳລາຍຄືນໃໝ່ແຕ່ໃຫ້ດີກວ່າເກົ່າ, ຂໍ້ແນະນຳໃນການປ້ອງກັນຜົນກະທົບທາງສິ່ງແວດລ້ອມ ແລະ ສັງຄົມ (ກອບການຄຸ້ມຄອງທາງດ້ານສິ່ງແວດລ້ອມ ແລະ ສັງຄົມ, ກອບນະໂຍບາຍການທົດແທນຄືນ ແລະ ການຍົກຍ້າຍຈັດສັນ, ກອບນະໂຍບາຍຊົນເຜົ່າ ແລະ ແຜນການຄວບຄຸມຢາປາບສັດຕູພືດທີ່ງ່າຍດາຍ).

### 7.3.6 ກອງປະຊຸມ ແລະ ຝຶກອົບຮົມປະຈຳເດືອນ ໃຫ້ແກ່ຜູ້ປະສານງານກຸ່ມບ້ານ

ຢູ່ໃນໄລຍະຈັດຕັ້ງປະຕິບັດໂຄງການຍ່ອຍ ຜູ້ປະສານງານກຸ່ມບ້ານ ຈະໄດ້ປະຊຸມກັບພະນັກງານຂັ້ນເມືອງ ທລຍ ເດືອນລະເທື່ອ. ຈຸດປະສົງກອງປະຊຸມດັ່ງກ່າວນີ້ ແມ່ນເພື່ອທົບທວນຄືນຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດໂຄງການຍ່ອຍຢູ່ແຕ່ລະກຸ່ມບ້ານ, ປຶກສາຫາລື ແລະ ຊອກຫາວິທີແກ້ບັນຫາທີ່ເກີດຂຶ້ນ, ປັບປຸງແຜນການເຄື່ອນໄຫວວຽກງານໃນຕໍ່ໜ້າ, ທົບທວນຄືນຄວາມສາມາດໃນການເຮັດວຽກຂອງຜູ້ປະສານງານກຸ່ມບ້ານ ແລະ ຝຶກອົບຮົມຄືນໃຫ້ແກ່ເຂົາເຈົ້າ. ຢູ່ໃນລະບຽບວາລະຂອງກອງປະຊຸມຕ້ອງໄດ້ຈົ່ງໄວ້ 2-3 ຊົ່ວໂມງ ສຳລັບນຳພາເຮັດທົດລອງຕົວຈິງ, ກອງປະຊຸມດັ່ງກ່າວນີ້ຍັງເພື່ອປຶກສາຫາລື ກ່ຽວກັບກໍລະນີສຶກສາ, ເພື່ອແລກປ່ຽນບົດຮຽນ - ລວມທັງບັນຫາ ແລະ ສິ່ງໃໝ່ໆທີ່ເກີດຂຶ້ນຈາກການພັດທະນາລວມທັງຜົນສຳເລັດທີ່ໄດ້ຮັບຈາກການຈັດຕັ້ງປະຕິບັດໂຄງການ. ຄ້າຍໆຄືກັນກັບກອງປະຊຸມປະຈຳເດືອນຂອງພະນັກງານ ທລຍ ເມືອງ (ກອງປະຊຸມອາດຈະໃຊ້ເວລາ 1 ຫຼື 2 ມື້) ໂດຍການເຂົ້າຮ່ວມຂອງພະນັກງານ ທລຍ ແຂວງ. ກອງປະຊຸມດັ່ງກ່າວນີ້ ແມ່ນເພື່ອທົບທວນຄືນຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດໂຄງການຍ່ອຍ, ປຶກສາຫາລື ແລະ ຊອກຫາວິທີແກ້ບັນຫາທີ່ເກີດຂຶ້ນ, ປັບປຸງແຜນການເຄື່ອນໄຫວວຽກງານໃນຕໍ່ໜ້າ. ກອງປະຊຸມດັ່ງກ່າວນີ້ ຕ້ອງໄດ້ຈົ່ງໄວ້ 2-3 ຊົ່ວໂມງ ສຳລັບປະຊຸມຮ່ວມກັບ

ຫ້ອງການທີ່ກ່ຽວຂ້ອງຂອງເມືອງ ເພື່ອແຈ້ງໃຫ້ຊາບກ່ຽວກັບຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດໂຄງການຍ່ອຍ ແລະ ສະເໜີຂໍການຊ່ວຍເຫລືອ ໃນການແກ້ໄຂບັນຫາທີ່ເກີດຂື້ນຜ່ານມາ. ກອງປະຊຸມດັ່ງກ່າວນີ້ ເຫັນວ່າມີຄວາມສຳຄັນເໝືອນກັນໂດຍສະເພາະ ໃນກໍລະນີທີ່ ທລຍ ບໍ່ສາມາດໃຫ້ການຊ່ວຍເຫລືອ ສາມາດສະເໜີຕໍ່ລັດຖະບານ ຫຼື ຜ່ານຫ້ອງການວິຊາການທີ່ກ່ຽວຂ້ອງ ຫາຜູ້ໃຫ້ທຶນ ຫຼື ໂຄງການພັດທະນາອື່ນໆ. ພະນັກງານ ທລຍ ເມືອງ ຈຳຕ້ອງໄດ້ສ້າງບົດລາຍງານຂອງກອງປະຊຸມ ເພື່ອສົ່ງໃຫ້ອຳນາດການປົກຄອງແຂວງ ແລະ ເກັບຮັກສາໄວ້ ເພື່ອເປັນຂໍ້ມູນຂອງໂຄງການ.

ຜູ້ປະສານງານກຸ່ມບ້ານ ແລະ ຫົວໜ້າທີມງານຂັ້ນກຸ່ມບ້ານ ແມ່ນຊຸກຍູ້ໃຫ້ເຂົ້າຮ່ວມກອງປະຊຸມສະຫລຸບການໃຊ້ຈ່າຍປະຈຳງວດຂັ້ນບ້ານ ເພື່ອສັງເກດ ແລະ ຕິດຕາມເບິ່ງການຄຸ້ມຄອງບໍລິຫານເງິນໂຄງການຍ່ອຍ, ການຈັດຕັ້ງປະຕິບັດໂຄງການ ແລະ ແລກປ່ຽນບົດຮຽນຊຶ່ງກັນ ແລະ ກັນ. ການເຂົ້າຮ່ວມກອງປະຊຸມດັ່ງກ່າວນີ້ ຍັງມີຈຸດປະສົງເພື່ອຊຸກຍູ້ ແລະ ຊ່ວຍໃຫ້ມີການແລກປ່ຽນບົດຮຽນ ສະນັ້ນ ຈຶ່ງຈະເປັນການເພີ້ມຄວາມເຂັ້ມແຂງ ແລະ ຄວາມສາມາດຂອງເຂົາເຈົ້າ ໃນການປະຕິບັດໜ້າທີ່ຕາມພາລະບົດບາດທີ່ໄດ້ມອບໝາຍໃຫ້.

ຜົນໄດ້ຮັບຂອງກອງປະຊຸມ ມີດັ່ງຕໍ່ໄປນີ້:

- ຜູ້ປະສານງານກຸ່ມບ້ານ ກະກຽມກອງປະຊຸມກ່ອນລ່ວງໜ້າ;
- ຫລັງຈາກກອງປະຊຸມຄັ້ງນີ້ ທີມງານຂັ້ນກຸ່ມບ້ານ ຈະໄດ້ເຜີຍແຜ່ຜົນຂອງກອງປະຊຸມໃຫ້ແກ່ທີມງານອື່ນໆຂອງກຸ່ມບ້ານ;
- ຜູ້ປະສານງານກຸ່ມບ້ານ ກະກຽມບົດລາຍງານກອງປະຊຸມ ເພື່ອເກັບຮັກສາໄວ້ຢູ່ຫ້ອງການ ແລະ ຫ້ອງການ ທລຍ ເມືອງ ພ້ອມທັງຕິດປະກາດໄວ້ຢູ່ກະດານຂ່າວຂອງກຸ່ມບ້ານ.

## 7.4 ການຝຶກອົບຮົມອື່ນໆ

ແຜນການຝຶກອົບຮົມປະຈຳປີ, ກຳນົດເວລາຝຶກອົບຮົມ ແລະ ການສືບຕໍ່ໂຄງການສຳລັບຮອບວຽນຕໍ່ໄປຈະຕ້ອງໄດ້ກະກຽມໂດຍໄວ ຫລັງຈາກທີ່ສຳເລັດການຝຶກອົບຮົມ. ຜູ້ປະສານງານກຸ່ມບ້ານ ແລະ ພະນັກງານທີ່ດີເດັ່ນ ແລະ ເຂັ້ມແຂງ ຈະຕ້ອງໄດ້ເຂົ້າຮ່ວມຝຶກອົບຮົມໃນປີຕໍ່ໄປ ໂດຍອາດໃຫ້ເປັນຄູຝຶກ ຫຼື ຢ່າງໜ້ອຍເປັນຜູ້ສຳຄັນໃນການແລກປ່ຽນບົດຮຽນຢູ່ໃນຊຸດຝຶກອົບຮົມດັ່ງກ່າວ. ກໍລະນີສຶກສາຕ່າງໆ ຂໍ້ຂັດແຍ້ງທີ່ຍົກຂຶ້ນ, ບັນຫາທີ່ພົບເຫັນ ແລະ ວິທີການໃໝ່ໆ ລວມທັງສິ່ງທີ່ມີຜົນສຳເລັດ ຈະຕ້ອງໄດ້ກະກຽມ ເພື່ອນຳສະເໜີຢູ່ຊຸດຝຶກອົບຮົມດັ່ງກ່າວ. ຊຸດຝຶກອົບຮົມເທື່ອຕໍ່ໄປເປັນການຍົກລະດັບຜູ້ປະສານງານກຸ່ມບ້ານ ແລະ ພະນັກງານ ທລຍ ແລະ ຍັງອະນຸຍາດໃຫ້ມີການປັບປຸງອຸປະກອນຮັບໃຊ້ການຝຶກອົບຮົມ ໂດຍອີງໃສ່ບົດຮຽນທີ່ຖອດຖອນ ຈາກການຈັດຕັ້ງປະຕິບັດຕົວຈິງໃນຮອບວຽນຜ່ານມາ. ການຍົກລະດັບ ຫຼື ການຝຶກອົບຮົມຄືນ ສຳລັບຜູ້ປະສານງານກຸ່ມບ້ານ ແລະ ພະນັກງານ ທລຍ ນັ້ນ ແມ່ນຕ້ອງໄດ້ເຮັດການປະເມີນຄວາມຕ້ອງການ ແລະ ການກຳນົດຫົວຂໍ້ຝຶກອົບຮົມຕ້ອງຂື້ນກັບຜົນການເຮັດວຽກໃນຮອບວຽນຜ່ານມາ

ຂອງເຂົາເຈົ້າ. ການປະເມີນຜົນຄວາມຕ້ອງການໃນການຝຶກອົບຮົມ ຈະຕ້ອງດຳເນີນກ່ອນຊຸດຝຶກອົບຮົມ ແລະ ຈະຕ້ອງຮັບປະກັນວ່າ ການຝຶກອົບຮົມດັ່ງກ່າວ ຕ້ອງໃຫ້ບັນລຸຕາມຈຸດປະສົງທີ່ກຳນົດໄວ້.

ໃນກໍລະນີ ມີການເພີ່ມເມືອງໃໝ່ ສະນັ້ນ ພະນັກງານ ທລຍ ແລະ ຜູ້ປະສານງານ ທີ່ໄດ້ບັນຈຸເຂົ້າໃໝ່ ຈະຕ້ອງໄດ້ຮັບການຝຶກອົບຮົມຄືກັນກັບທີ່ໄດ້ຝຶກອົບຮົມໃຫ້ແກ່ພະນັກງານ ທລຍ ຜ່ານມາ.

ການຝຶກອົບຮົມ ບໍ່ແມ່ນເລື່ອງສຳຄັນຫລາຍ. ພະນັກງານ ທລຍ ແລະ ຜູ້ອຳນວຍຄວາມສະດວກ ທີ່ໄດ້ຮັບການບັນຈຸເຂົ້າມານັ້ນ ເຄີຍໄດ້ຜ່ານ ຫຼື ບໍ່ໄດ້ຜ່ານການຝຶກອົບຮົມແລ້ວກໍຕາມ, ແຕ່ຖ້າຜູ້ກ່ຽວ ຈັດຕັ້ງບໍ່ໄດ້ດີ ກໍຈະບໍ່ຖືກຮັບເຂົ້າມາເຮັດວຽກນຳ ທລຍ. ກົງກັນຂ້າມ, ຖ້າຜູ້ໃດໄດ້ຜ່ານການຝຶກອົບຮົມໃນຫົວຂໍ້ທີ່ກ່ຽວຂ້ອງຕ່າງໆ (ເຊັ່ນ: ບົດບາດຍິງ-ຊາຍ ແລະ ຊົນເຜົ່າ, ການເປັນຜູ້ນຳ ແລະ ການຄຸ້ມຄອງບໍລິຫານ) ຊຶ່ງເປັນຫົວຂໍ້ທີ່ຕິດພັນກັບໂດຍກົງກັບວິທີການ ແລະ ຍຸດທະສາດຂອງ ທລຍ ຜູ້ກ່ຽວກໍຄວນໄດ້ຮັບການຍອມຮັບ ແລະ ໄດ້ຮັບໃບຢັ້ງຢືນໄປພ້ອມໆກັນ.

### ກ) ການທັດສະນະສຶກສາ ແລະ ແລກປ່ຽນບົດຮຽນ

ໃນໄລຍະການວາງແຜນ ແລະ ຈັດຕັ້ງປະຕິບັດໂຄງການຍ່ອຍ, ການແລກປ່ຽນຢ້ຽມຢາມ ແລະ ການ "ທັດສະນະສຶກສາ ລະດັບນ້ອຍ" ລະຫວ່າງເມືອງ ແລະ ແຂວງ ແມ່ນຮູບແບບການຝຶກອົບຮົມທີ່ດີທີ່ສຸດ, ແຕ່ວ່າຕ້ອງໄດ້ມີການກະກຽມຢ່າງລະອຽດຮອບຄອບ. ຫລັງຈາກສຳເລັດການຢ້ຽມຢາມ ການນຳສະເໜີຜົນໄດ້ຮັບ ຈະຕ້ອງໄດ້ຈັດຂຶ້ນ ເພື່ອເປັນການແລກປ່ຽນບົດຮຽນ ແລະ ຕ້ອງມີການເກັບຮັກສາເອກະສານຕ່າງໆໄວ້. ການດຳເນີນການຢູ່ໃນແຂວງນຶ່ງໆ ຈະຕ້ອງມີການທົບທວນຄືນຈຸດປະສົງ, ບົດລາຍງານ ແລະ ເອກະສານສຳຄັນຕ່າງໆ. ຈຸດປະສົງດັ່ງກ່າວນີ້ບໍ່ແມ່ນເພື່ອຊອກຫາຄວາມຜິດພາດທີ່ເກີດຂຶ້ນຂອງແຂວງດັ່ງກ່າວ (ຜ່ານຂະບວນການດັ່ງກ່າວອາດຈະພົບເຫັນ) ແຕ່ເປັນການແລກປ່ຽນບົດຮຽນ ແລະ ແລກປ່ຽນແນວຄວາມຄິດເຫັນນຳກັນຫລາຍກວ່າ ແລະ ເພື່ອປັບປຸງໂຄງການໃນຕໍ່ໜ້າໃຫ້ດີຂຶ້ນ.

ການແລກປ່ຽນບົດຮຽນ ລະຫວ່າງບ້ານ, ກຸ່ມບ້ານ ແລະ ກຸ່ມບ້ານ ໂດຍປົກະຕິ ຈັດຂຶ້ນໃນລະຫວ່າງການແລກປ່ຽນປະສົບການ ແລະ ເປັນການຮຽນຮູ້ຊຶ່ງກັນ ແລະ ກັນ. ການແລກປ່ຽນບົດຮຽນນີ້ ສາມາດເກີດຂຶ້ນໃນສະເພາະດ້ານໃດດ້ານນຶ່ງ.

### ຂ) ກອງປະຊຸມສຳມະນາ

ຢ່າງໜ້ອຍນຶ່ງເທື່ອຕໍ່ປີ ຈະຕ້ອງໄດ້ຈັດກອງປະຊຸມນີ້ຂຶ້ນ ສຳລັບຜູ້ປະສານງານກຸ່ມບ້ານທຸກໆຄົນ ແລະ ພະນັກງານ ທລຍ ຂັ້ນເມືອງ/ແຂວງ ທັງນີ້ເພື່ອຮັບປະກັນວ່າທຸກໆຄົນມີຄວາມເຂົ້າໃຈຕໍ່ສິ່ງປ່ຽນແປງຂອງໂຄງການ ແລະ ເພີ່ມຄວາມຊຳນິຊຳນານໃນການກະກຽມໃນຮອບວຽນຕໍ່ໄປ, ທັງແມ່ນເປັນການສ້າງກຳລັງໃຈ ແລະ ວິທີການເຮັດວຽກເປັນທີມອີກດ້ວຍ. ການຝຶກອົບຮົມທາງດ້ານວິຊາການທີ່ຈະດຳເນີນເປັນເວລາ 2 ຫຼື 3 ມື້ນັ້ນ ຍັງເປັນການເພີ່ມຄວາມຊຳນິຊຳນານໃຫ້ແກ່ພະນັກງານ ທລຍ ເຊັ່ນດຽວກັນ.

# 8 ການຕິດຕາມ ແລະ ປະເມີນຜົນ (M&E)

## 8.1 ຈຸດປະສົງລວມຂອງ ລະບົບຕິດຕາມ ແລະ ປະເມີນຜົນ

ລະບົບຕິດຕາມ ແລະ ປະເມີນຜົນໄດ້ຮັບການສ້າງຂຶ້ນ ເພື່ອຕິດຕາມການຈັດຕັ້ງປະຕິບັດວຽກງານ ຂອງ ທລຍ ໄລຍະທີ 2 ວ່າເປັນໄປຕາມຈຸດປະສົງລວມຂອງໂຄງການ, ລະບຽບຫລັກການ ແລະ ວິທີການຂອງຕົນເອງຫລືບໍ່. ທລຍ ເປັນໂຄງການທີ່ໄດ້ຮັບຄວາມສຳຄັນ ຈາກລັດຖະບານໃນການຈັດຕັ້ງປະຕິບັດຍຸດທະສາດ ເພື່ອລຶບລ້າງຄວາມທຸກຍາກ, ດັ່ງນັ້ນ ມັນຈຶ່ງມີຄວາມສຳຄັນທີ່ຈະຕ້ອງມີລະບົບຕິດຕາມ-ປະເມີນຜົນພາຍໃນ ທລຍ ເພື່ອເປັນຕົວແບບ ແລະ ຮູບແບບໃຫ້ລັດລະບານໃນການສ້າງແຜນນະໂຍບາຍໃນຕໍ່ໜ້າ.

ອົງປະກອບຂອງວຽກງານຕິດຕາມ ແລະ ປະເມີນຜົນ ມີລາຍລະອຽດດັ່ງນີ້:

- **ການຕິດຕາມທົ່ວໄປ**: ການຕິດຕາມວຽກງານທົ່ວໄປ ແມ່ນເປັນຄວາມຮັບຜິດຊອບຂອງພະນັກງານ ທລຍ, ຊຶ່ງໜ້າທີ່ຮັບຜິດຊອບເລົ່ານີ້ ແມ່ນລວມທັງຜູ້ໄດ້ຮັບຜົນປະໂຫຍດ, ທລຍ ຂັ້ນສູນກາງ, ແຂວງ ແລະ ເມືອງ, ຜູ້ປະສານງານກຸ່ມບ້ານ, ລວມທັງນັກຮຽນຈົບໃໝ່ ທີ່ຈະເປັນພາກສ່ວນນຶ່ງຮ່ວມເຂົ້າໃນກິດຈະກຳຕິດຕາມປະເມີນຜົນ. ທລຍ ແມ່ນໃຫ້ຄວາມສຳຄັນຕໍ່ຄວາມໂປ່ງໃສ, ການກະຈາຍຂໍ້ມູນຂ່າວສານ, ຕິດຕາມ ແລະ ປະເມີນຜົນ ຊຶ່ງຜ່ານທາງຮູບແບບຕິດຕາມ ແບບຄຸນນະພາບ ແລະ ປະລິມານ ຜ່ານແບບຟອມຕ່າງໆ.
- **ກໍລະນີສຶກສາຕ່າງໆ**: ການເຮັດກໍລະນີສຶກສາ ຈະໄດ້ຖືກຈັດຕັ້ງປະຕິບັດໃນແຕ່ລະໄລຍະຂອງການຈັດຕັ້ງປະຕິບັດ ຂອງ ທລຍ ໄລຍະທີ 2 ເພື່ອສຶກສາຂໍ້ມູນຢ່າງເລິກເຊິ່ງໃນຮູບແບບຕ່າງໆທີ່ ທລຍ ໄດ້ຈັດຕັ້ງປະຕິບັດຜ່ານມາ. ຊຶ່ງກໍລະນີສຶກສາຕ່າງໆນີ້ ຈະໄດ້ວ່າຈ້າງຜູ້ຊ່ຽວຊານ ຈາກພາຍນອກ ເຂົ້າມາປະຕິບັດ ໂດຍທີ່ໃຫ້ພະນັກງານ ທລຍ ແລະ ພາກສ່ວນທີ່ກ່ຽວຂ້ອງໄດ້ເຂົ້າຮ່ວມ ເພື່ອຖອດຖອນບົດຮຽນນຳອີກດ້ວຍ.
- **ການປະເມີນຜົນກະທົບ**: ທລຍ ຕ້ອງໄດ້ເຮັດການປະເມີນຜົນກະທົບ ໂດຍນຳໃຊ້ສອງຮູບແບບຄືປະເມີນໂດຍນຳໃຊ້ວິທີການແບບປະລິມານ ແລະ ວິທີການແບບຄຸນນະພາບ. ການປະເມີນຜົນກະທົບ ຈະໄດ້ຈັດຕັ້ງປະຕິບັດໂດຍຜູ້ຊ່ຽວຊານຈາກພາຍນອກ, ແຕ່ຈະພົວພັນກັບລະບົບຕິດຕາມ ແລະ ປະເມີນຜົນ ຂອງ ທລຍ, ໂດຍທົ່ວໄປແລ້ວ ການປະເມີນຜົນກະທົບ ຂອງ ທລຍ ໄລຍະທີ 2 ແມ່ນຈະໄດ້ຈັດຕັ້ງປະຕິບັດຢູ່ໃນທ້າຍປີ 2012 ແລະ ປະເມີນຄັ້ງສຸດທ້າຍ ໃນປີ 2015.

ຢູ່ໃນພາກນີ້ຈະໄດ້ລົງເລິກກ່ຽວກັບ:

- ຕົວຊີ້ວັດການຈັດຕັ້ງປະຕິບັດ ຂອງ ທລຍ ໄລຍະທີ 2;
- ການຕິດຕາມພາຍໃນ;
- ການລາຍງານ;
- ການປະເມີນຜົນ ແລະ ກໍລະນີສຶກສາ.

## 8.2 ຕົວຊີ້ວັດການຈັດຕັ້ງປະຕິບັດ

ຈຸດປະສົງຂອງ ທລຍ ໄລຍະທີ 2 ແມ່ນເພື່ອປັບປຸງການເຂົ້າເຖິງ ແລະ ການຊົມໃຊ້ພື້ນຖານໂຄງລ່າງ ແລະ ການບໍລິການຕ່າງໆ ຊຶ່ງແນ່ໃສ່ຊຸມຊົນຜູ້ທຸກຍາກ ເພື່ອໃຫ້ເກີດມີຄວາມຍືນຍົງຂອງໂຄງການ ໂດຍຜ່ານຂະບວນການມີສ່ວນຮ່ວມຂອງຊຸມຊົນ ໃນການພັດທະນາທ້ອງຖິ່ນຂອງເຂົາເຈົ້າເອງ. **ຊຶ່ງໄມ້ຫລາວັດແທກຜົນສຳເລັດຂອງການຈັດຕັ້ງປະຕິບັດ ທລຍ ໄລຍະທີ 2 ໃນປີ 2016 ແມ່ນວັດແທກຜົນສຳເລັດຂອງແຜນງານ ຜ່ານຕົວຊີ້ວັດທີ່ໄດ້ກຳນົດໄວ້ແລ້ວຢູ່ໃນຕາລະລາງລຸ່ມນີ້.** ຊຶ່ງ ທລຍ ຕ້ອງໄດ້ສະແດງອອກຢູ່ໃນບົດລາຍງານກາງປີ ເຖິງຕົວຊີ້ວັດຕ່າງໆ ຊຶ່ງໄດ້ກຳນົດໄວ້ແລ້ວ ຜ່ານຂະບວນການຕິດຕາມ, ການລາຍງານ ແລະ ລະບົບປະເມີນຜົນຕ່າງໆ.

# ກອບຜົນໄດ້ຮັບ ແລະ ການຕິດຕາມປະເມີນຜົນ

<table>
<tr><td colspan="12"><u>ຈຸດປະສົງການພັດທະນາຂອງໂຄງການ (PDO)</u>: ແມ່ນເພື່ອປັບປຸງການເຂົ້າເຖິງ ແລະ ການຊົມໃຊ້ພື້ນຖານໂຄງລ່າງ ແລະ ການບໍລິການ ໃນຊຸມຊົນທຸກຍາກທີ່ນອນຢູ່ໃນເປົ້າໝາຍ ຂອງ ທລຍ ໄລຍະທີ 2 ເພື່ອໃຫ້ເກີດມີຄວາມຍືນຍົງຂອງໂຄງການ[12] ໂດຍຜ່ານຂະບວນການມີສ່ວນຮ່ວມຂອງຊຸມຊົນ ໃນການພັດທະນາທ້ອງຖິ່ນຂອງເຂົາເຈົ້າເອງ</td></tr>
<tr><th rowspan="2">ຜົນ ແລະ ລະດັບ ຂອງຈຸດປະສົງການພັດທະນາ ຂອງໂຄງ ການ, ຕົວຊີ້ວັດ*</th><th rowspan="2">ພື້ນຖານ</th><th rowspan="2">ໜ່ວຍວັດແທກ</th><th rowspan="2">ພື້ນຖານ</th><th colspan="5">ຄ່າເປົ້າໝາຍສະສົມ**</th><th rowspan="2">ຄວາມຖີ່</th><th rowspan="2">ແຫລ່ງຂໍ້ມູນ/ ວິທີການ</th><th rowspan="2">ຮັບຜິດຊອບໃນການເກັບກຳຂໍ້ມູນ</th><th rowspan="2">ລາຍການ (ຕົວຊີ້ວັດ ແລະ ອື່ນໆ)</th></tr>
<tr><th>ປີ 1</th><th>ປີ 2</th><th>ປີ 3</th><th>ປີ 4</th><th>ປີ 5</th></tr>
<tr><td><u>ຕົວຊີ້ວັດທີ 1</u>:<br>ປັບປຸງການເຂົ້າເຖິງ ແລະ ການນຳໃຊ້ພື້ນຖານເສດຖະກິດ ແລະ ການບໍລິການສັງຄົມ ຢູ່ໃນກຸ່ມບ້ານທີ່ໄດ້ຮັບການສະໜັບສະໜູນ ຂອງ ທລຍ:<br>- % ອັດຕາການລໍຖ້າເຂົ້າໂຮງຮຽນ.<br>- % ການເພີ້ມຂື້ນ ຂອງຊົມໃຊ້ບໍລິການດ້ານສາທາລະນະສຸກ ແລະ ການນຳໃຊ້ໂຄງລ່າງດ້ານສາທາ.<br>- % ຂອງຄົວເຮືອນຊື່ງສາມາດເຂົ້າເຖິງ ແລະ ຊົມໃຊ້ນ້ຳສະອາດ.</td><td>☐</td><td>%</td><td>ພື້ນຖານເພື່ອສຸ່ມສຳຫລວດການປະເມີນຜົນກະທົບຊື່ງຕ້ອງສຳເລັດ ໃນປີທີ 1[13]</td><td></td><td></td><td></td><td></td><td>>6% ເພີ້ມຂື້ນ ຂອງການລົງທະບຽນເຂົ້າຮຽນ.<br><br>>6% ເພີ້ມຂື້ນ ຂອງການເຂົ້າເຖິງ ແລະ ຊົມໃຊ້ການລິການ ດ້ານສາທາລະນະສຸກ<br><br>>8% ສາມາດເຂົ້າເຖິງ ແລະ ໄດ້ນຳໃຊ້ນ້ຳສະອາດ</td><td>3 ເທື່ອຕະຫລອດອາຍຸຂອງໂຄງການ, ການສຳຫລວດພື້ນຖານຂໍ້ມູນ, ການສຳຫລວດກາງໂຄງການ ແລະ ການສຳຫລວດຄັ້ງສຸດທ້າຍ</td><td>ຄັດເລືອກກຸ່ມຕົວແທນ ເພື່ອປະເມີນຜົນກະທົບ</td><td>ບໍລິສັດຈາກພາຍນອກ</td><td>ວັດແທກ ແລະ ນຳໃຊ້ອັດຕາຂອງການບໍລິການຕ່າງໆ</td></tr>
</table>

[12] ສຳລັບຈຸດປະສົງ ຂອງ PRF II, ຄວາມຍືນຍົງຈະໄດ້ຮັບການປະເມີນໃນທຸກຮູບແບບ ດັ່ງຕໍ່ໄປນີ້: (i) ການພັດທະນາຮູບແບບທີ່ສາມາດປະຕິບັດ ແລະ ແບບຈຳລອງ ໃຫ້ລັດຖະບານ ແຫ່ງ ສປປ ລາວ ກ່ຽວກັບດ້ານການວາງແຜນ ແລະ ການໃຫ້ທຶນສຳລັບຊຸມຊົນ (ອົງປະກອບ 2, IR2); (ii) ການເພີ່ມບົດບາດຂອງອຳນາດການປົກຄອງທ້ອງຖິ່ນ ໃນການປະສານງານ ແລະ ສະໜັບສະໜູນໂຄງການ (ອົງປະກອບ 2, IR2); (iii) ສົ່ງເສີມຄວາມອາດສາມາດຂອງຊຸມຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ ໃນການວາງແຜນ ແລະ ປະຕິບັດກິດຈະກຳການພັດທະນາໃນທ້ອງຖິ່ນ (ອົງປະກອບ 2, IRs 1,2,3); ແລະ (iv) ການປັບປຸງຄຸນນະພາບ ຂອງການອອກແບບໂດຍລວມ ແລະ ການປະຕິບັດ ແລະ ການບຳລຸງຮັກສາ ໂຄງການຍ່ອຍໂຄງລ່າງພື້ນຖານ, ລວມທັງການອອກແບບມາດຕະການ ການຫຼຸດຜ່ອນໄພພິບັດມີຄວາມສ່ຽງທີ່ກ່ຽວຂ້ອງເຂົ້າໄປໃນໂຄງການຍ່ອຍ (ອົງປະກອບ 1, IR3).

[13] ຕາມຂໍ້ມູນຂອງການສຳຫລວດການຊົມໃຊ້ ແລະ ການໃຊ້ຈ່າຍ 2007, ຕົວເລກລວມຂອງຊາດ, 78% ຂອງເດັກໃນຊົນນະບົດແມ່ນໄດ້ເຂົ້າຮຽນ, 9% ຂອງບ້ານໃນຊົນນະບົດ (ຊື່ງບໍ່ມີເສັ້ນທາງ) ສາມາດເຂົ້າເຖິງສຸກສາລາ ແລະ ສູນບໍລິການດ້ານສາທາລະນະສຸກ, 70% ຂອງບ້ານທັງໝົດສາມາດທຽວໄດ້ສອງລະດູ, 72% ຂອງຄົວເຮືອນໄດ້ຊົມໃຊ້ນ້ຳສະອາດ ໃນລະດູແລ້ງ.

| | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|
| - % ການເພີ້ມຂື້ນ ແລະ ຊົມໃຊ້ ພື້ນຖານໂຄງລ່າງ ດ້ານເສັ້ນທາງ.<br>- ຕ່ຳສຸດສອງຫົວຂໍ້ຂ້າງເທິງທີ່ໄດ້ຮັບ ຜົນປະໂຫຍດຈາກການບໍລິການ. | | | | | | | | >8% ສາມາດເຂົ້າເຖີງ ແລະ ໄດ້ນຳໃຊ້ ເສັ້ນທາງຕ່າງໆ | | | | |
| <u>ຕົວຊີ້ວັດທີ 2</u>:<br>ການຕັດສິນໃຈໃນການອະນຸມັດ ໂຄງການ ແລະ ງົບປະມານ ທີ່ ຕ້ອງມີສ່ວນຮ່ວມ ຢ່າງນ້ອຍ 40% ແມ່ຍິງ ແລະ 60% ຊຸມຊົນຜູ້ທຸກ ຍາກເຂົ້າຮ່ວມ. | ☐ | % | ຂະບວນການ ຍັງບໍ່ທັນເລີ້ມ ສຳລັບໄລຍະ ທີ 2 | 40% ແມ່ຍິງ, 60% ຜູ້ທຸກ ຍາກ | 40% ແມ່ຍິງ, 60% ຜູ້ທຸກ ຍາກ | 40% ແມ່ຍິງ, 60% ຜູ້ທຸກ ຍາກ | 40% ແມ່ຍິງ, 60% ຜູ້ທຸກ ຍາກ | 40% ແມ່ຍິງ, 60% ຜູ້ທຸກຍາກ | ບົດລາຍງານ ປະຈຳປີ | ຖານຂໍ້ມູນ | ທລຍ | ຂະບວນການ ຕັດສິນໃຈຕ້ອງ ມີສ່ວນຮ່ວມ |
| <u>ຕົວຊີ້ວັດທີ 3</u>:<br>ເກີນ 75% ລະດັບຄວາມພືງພໍໃຈ ຂອງຊຸມຊົນ ໃນບ້ານເປົ້າໝາຍ ຕໍ່ກັບ ການປັບປຸງການບໍລິການດ້ານຕ່າງໆ ແລະ ແຜນພັດທະນາໃນຂັ້ນທ້ອງຖິ່ນ. | ☐ | % | ຂະບວນການ ຍັງບໍ່ທັນເລີ້ມ ສຳລັບໄລຍະ ທີ 2 | | | >70% | | >80% | 3 ເທື່ອ ຕະຫລອດ ອາຍຸ ຂອງໂຄງການ, ການສຳຫລວດ ພື້ນຖານຂໍ້ມູນ, ການສຳຫລວດ ກາງໂຄງການ ແລະ ການສຳ ຫລວດຄັ້ງສຸດ ທ້າຍ, 2 ເທື່ອ ສຳລັບການປະ ເມີນ ຜູ້ໄດ້ຮັບ ຜົນປະໂຫຍດ | ສຸ່ມປະເມີນຜົນ ກະທົບ ແລະ ປະເມີນຜູ້ໄດ້ ຮັບຜົນປະໂຫຍດ | ບໍລິສັດຈາກ ພາຍນອກ | ວັດຄວາມພືງພໍ ໃຈຂອງຜູ້ຮ່ວມ ຮັບຜົນປະ ໂຫຍດ ທຽບໃສ່ ທລຍ ແລະ ການ ບໍລິການ |
| <u>ຕົວຊີ້ວັດທີ 4</u>:<br>ຈຳນວນຜູ້ໄດ້ຮັບຜົນປະໂຫຍດ ຈຳນວນ x% ຕ້ອງແມ່ນເພດຍິງ. | X ☐ | # ຜູ້ໄດ້ຮັບ ຜົນປະ ໂຫຍດ | ຂື້ນກັບປະ ເພດຂອງກິດ ຈະກຳທີ່ຄັດ ເລືອກໂດຍ ຊຸມຊົນໃ໐ ຊ່ວງໂຄງການ | | | | | | ປະຈຳປີ | ຖານຂໍ້ມູນ | ທລຍ | ຕ້ອງການຮູບ ແບບລາຍງານ ຕາມຕົວຊີ້ວັດ ຂອງທະນາ ຄານໂລກ |

| ຜົນໄດ້ຮັບໄລຍະກາງ | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|
| ຜົນໄດ້ຮັບໄລຍະກາງ (ຕາມຮ່ອງທີນຶ່ງ): ງົບປະມານ ສຳລັບການພັດທະນາທ້ອງຖິ່ນ: ຊຸມຊົນນຳໃຊ້ຮ່ອງເງິນ ສຳລັບການລົງທຶນໃສ່ກິດຈະກຳປັບປຸງເສດຖະກິດ-ສັງຄົມ | | | | | | | | | | | | |
| ລະດັບຜົນຂອງຕົວຊີ້ວັດການພັດທະນາໂຄງການ<br>ຕົວຊີ້ວັດ* | ຄວາມກ່ຽວພັນ | ຫົວໜ່ວຍວັດແທກ | ການສຳຫລວດພື້ນຖານຂໍ້ມູນ | ປີ 1 | ປີ 2 | ປີ 3 | ປີ 4 | ປີ 5 | ຄວາມຖີ່ໃນການຈັດຕັ້ງປະຕິບັດ | ແຫລ່ງຂໍ້ມູນ / ວິທີການ | ຜູ້ຮັບຜິດຊອບໃນການເກັບກຳຂໍ້ມູນ | ລາຍການ (ລາຍການວັດແທກ ແລະ ອື່ນໆ) |
| ຜົນໄດ້ຮັບໄລຍະກາງ<br>ຕົວຊີ້ວັດທີ *1:*<br>*#/*ປະເພດກິດຈະກຳ ແລະ ໂຄງການທີ່ໄດ້ຈັດຕັ້ງປະຕິບັດ | ☐ | | ສຳລັບແຜນງານທີ່ຄັບເຄື່ອນໂດຍຊຸມຊົນ, ຈະບໍ່ມີລາຍການກິດຈະກຳລ່ວງໜ້າ. ຊຶ່ງກິດຈະກຳຕ່າງໆ ຈະໄດ້ໃນເວລາທີ່ວາງແຜນກັບຊຸມຊົນ ຜ່ານຂະບວນການວາງແຜນແບບມີສ່ວນຮ່ວມ. ເຖິງຢ່າງໃດກໍ່ຕາມ, ຈະໄດ້ມີການລາຍງານຕົວເລກ ແລະ ປະເພດຂອງກິດຈະກຳ ແລະ ໂຄງການໃນບົດລາຍງານປະຈຳໄຕມາດ | | | | | | ບົດລາຍງານປະຈຳໄຕມາດ ແລະ ບົດລາຍງານປະຈຳປີ | ຖານຂໍ້ມູນ | ພະນັກງານຫ້ອງການທລຍ | ປະເພດກິດຈະກຳທີ່ໄດ້ສະໜອງທຶນ |
| ຜົນໄດ້ຮັບໄລຍະກາງ<br>ຕົວຊີ້ວັດທີ *2:*<br>*x%* ຂອງກິດຈະກຳ ແລະ ໂຄງການທີ່ມີຄຸນນະພາບສູງ | ☐ | ຄຸນນະພາບຂອງໂຄງການ | 0 | | | >70% | | >85% | 2 ເທື່ອຕະຫລອດອາຍຸໂຄງການ | ການສຶກສາພາຍນອກທາງດ້ານຄຸນນະພາບ ຂອງໂຄງການ | ບໍລິສັດທີ່ປຶກສາພາຍນອກ | ຄຸນນະພາບຂອງການລົງທຶນ |
| ຜົນໄດ້ຮັບໄລຍະກາງ<br>ຕົວຊີ້ວັດທີ *3:*<br>*x%* ຂອງໂຄງການ ທີ່ໄດ້ຮັບການບຳລຸງຮັກສາ ແລະ ຍັງສາມາດໃຊ້ໄດ້ຫລັງການຈັດຕັ້ງປະຕິບັດສຳເລັດໄດ້ *2* ປີ | | ການບຳລຸງຮັກສາໂຄງການ | 0 | | | >80% | | >90% | 2 ເທື່ອຕະຫລອດອາຍຸໂຄງການ | ການສຶກສາພາຍນອກທາງດ້ານຄຸນນະພາບ ຂອງໂຄງການ | ບໍລິສັດທີ່ປຶກສາພາຍນອກ | ການບຳຮັກສາກິດຈະກຳໂຄງການ |
| ຜົນໄດ້ຮັບໄລຍະກາງ<br>ຕົວຊີ້ວັດທີ *4:*<br>ກິດຈະກຳໂຄງການ *x%* ແມ່ນລົງທຶນຢ່າງກຸ້ມຄ່າ (ຖືກກ່ວາ) ຖ້າທຽບໃສ່ພາກສ່ວນອື່ນທີ່ສະໜອງໂຄງການລັກສະນະໄກ້ຄຽງກັນ (ມາດຖານຂອງດ້ານວິຊາການຄືກັນ) | ☐ | | | | | >20% | | >30% | 2 ເທື່ອຕະຫລອດອາຍຸໂຄງການ | ການສຶກສາພາຍນອກທາງດ້ານຄຸນນະພາບ ຂອງໂຄງການ | ບໍລິສັດທີ່ປຶກສາພາຍນອກ | ຜະລິດທີຜົນທາງດ້ານການລົງທຶນ |

**ຜົນໄດ້ຮັບໄລຍະກາງ (ຮ່ວງທີ 2): ການພັດທະນາພື້ນຖານ ສະໜອງການເສີມສ້າງຄວາມອາດສາມາດໃຫ້ແກ່ຊຸມຊົນ ແລະ ພະນັກງານຝ່າຍລັດໃນທ້ອງຖິ່ນຕ່າງໆ ເພື່ອເພີ່ມຄວາມອາດສາມາດໃນຂອບເຂດທີ່ເຂົາເຈົ້າຮັບຜິດຊອບ.**

| ຜົນໄດ້ຮັບໄລຍະກາງ<br>ຕົວຊີ້ວັດ* | ຄວາມກ່ຽວພັນ | ຫົວໜ່ວຍ ວັດແທກ | ການສຳ ຫລວດ ພື້ນຖານຂໍ້ມູນ | ປີ 1 | ປີ 2 | ປີ 3 | ປີ 4 | ປີ 5 | ຄວາມຖີ່ໃນການ ຈັດຕັ້ງປະຕິບັດ | ແຫລ່ງຂໍ້ມູນ/ ວິທີການ | ຜູ້ຮັບຜິດ ຊອບໃນ ການເກັບ ກຳຂໍ້ມູນ | ລາຍການ (ລາຍການວັດ ແທກ ແລະ ອື່ນໆ) |
|---|---|---|---|---|---|---|---|---|---|---|---|---|
| ຜົນໄດ້ຮັບໄລຍະກາງ<br>ຕົວຊີ້ວັດທີ *1:*<br>*#* ຊຸມຊົນທີ່ສາມາດສ້າງແຜນ, ຈັດຕັ້ງປະຕິບັດ ແລະ ຕິດຕາມກິດຈະກຳຂອງເຂົາເຈົ້າໄດ້. | ☐ | ກຸ່ມບ້ານ | | 150 | 200 | 220 | 250 | 250 | ບົດລາຍງານປະຈຳໄຕມາດ ແລະ ບົດລາຍງານປະຈຳປີ | ຖານຂໍ້ມູນ | ພະນັກງານ ທລຍ | ວັດແທກຄວາມສາມາດຂອງພື້ນຖານ |
| ຜົນໄດ້ຮັບໄລຍະກາງ<br>ຕົວຊີ້ວັດທີ *2:*<br>*%* ຫ້ອງການເມືອງທີ່ໄດ້ໃຫ້ການສົ່ງເສີມທາງດ້ານວິຊາການ ແລະ ການຊີ້ນຳ ໃຫ້ແກ່ຊຸມຊົນ. | ☐ | ເມືອງ | 0 | 70% | 75% | 80% | 85% | 85% | ບົດລາຍງານປະຈຳໄຕມາດ ແລະ ບົດລາຍງານປະຈຳປີ | ຖານຂໍ້ມູນ ແລະ ບົດລາຍງານມາຈາກພື້ນຖານ | ທລຍ | ຕົວຊີ້ວັດພະນັກງານຝ່າຍລັດຂັ້ນເມືອງ ໃນການຊ່ວຍ ແລະ ເສີມສ້າງຄວາມອາດສາມາດ |
| ຜົນໄດ້ຮັບໄລຍະກາງ<br>ຕົວຊີ້ວັດທີ *3:*<br>*%* ຂອງແຜນການກຸ່ມບ້ານຂອງ ທລຍ ທີ່ນຳໃຊ້ໂດຍລັດຖະບານ ແລະ ອົງການພັດທະນາຕ່າງໆ. | ☐ | ແຜນຂອງກຸ່ມບ້ານ | | | | 25% | | 35% | ການສຶກສາກາງສະໄໝ ແລະ ການສຶກສາຄັ້ງສຸດທ້າຍ | ການສຶກສາຂີດຄວາມອາດສາມາດຂອງລັດຖະບານ | ບໍລິສັດພາຍນອກ | ວັດຜົນກະທົບຂອງການວາງແຜນ ແລະ ການລົງທຶນຂອງ ທລຍ |

**ຜົນໄດ້ຮັບໄລຍະກາງ (ຮ່ວງທີ 3): ການບໍລິຫານໂຄງການ**
**ໂຄງການໄດ້ສົ່ງເສີມທາງດ້ານການບໍລິຫານ ແລະ ການຈັດການ.**

| ຜົນໄດ້ຮັບໄລຍະກາງ<br>ຕົວຊີ້ວັດ* | ຄວາມກ່ຽວພັນ | ຫົວໜ່ວຍ ວັດແທກ | ການສໍາ ຫລວດ ພື້ນຖານຂໍ້ມູນ | ປີ 1 | ປີ 2 | ປີ 3 | ປີ 4 | ປີ 5 | ຄວາມຖີ່ໃນການ ຈັດຕັ້ງປະຕິບັດ | ແຫລ່ງຂໍ້ມູນ/ ວິທີການ | ຜູ້ຮັບຜິດ ຊອບໃນ ການເກັບ ກໍາຂໍ້ມູນ | ລາຍການ (ລາຍການວັດ ແທກ ແລະ ອື່ນໆ) |
|---|---|---|---|---|---|---|---|---|---|---|---|---|
| ຜົນໄດ້ຮັບໄລຍະກາງ<br>ຕົວຊີ້ວັດທີ *1:*<br>*X%* ພະນັກງານ ທລຍ ທີ່ບັນຈຸເຂົ້າ ເຕັມຕໍາແໜ່ງ | | ພະນັກ ງານ ທລຍ | | 85% | 90% | 100% | 100% | 100% | ໄຕມາດ | ບົດລາຍງານ ທລຍ | ທີມງານບໍລິ ຫານ ທລຍ ຂັ້ນສູນກາງ | ຕ້ອງໃຫ້ແນ່ໃຈ ວ່າພະນັກງານ ມີຄວາມຮັບຜິດ ຊອບສູງໃນ ການຈັດການ ແລະ ຈັດຕັ້ງ ໂຄງການ |
| ຜົນໄດ້ຮັບໄລຍະກາງ<br>ຕົວຊີ້ວັດທີ *2:*<br>*X* ການສຶກສາ ແລະ ປະເມີນຜົນ ສໍາເລັດຕາມກໍານົດເວລາ | | ຈໍານວນ | 0 ສໍາລັບ ທລຍ 2 | | | 3 | | 5 (ທັງໝົດ) | ຫລາຍເທື່ອຕະ ຫລອດອາຍຸໂຄງ ການ, ທັງກາງສະ ໄໝ ແລະ ທ້າຍ ສະໄໝ. | ບົດລາຍງານ | ທີມງານບໍລິ ຫານ ທລຍ, ທະນາຄານ ໂລກ | ສຶກສາເພື່ອປັບ ປຸງການອອກ ແບບ ແລະ ບໍລິຫານ ໂຄງການ |
| ຜົນໄດ້ຮັບໄລຍະກາງ<br>ຕົວຊີ້ວັດທີ *3:*<br>ບົດລາຍງານຄວາມຄືບໜ້າການ ຈັດ ຕັ້ງປະຕິບັດໂຄງການ ທີ່ກະກຽມຖືກ ຕາມກໍານົດ. | ☐ | ບົດລາຍ ງານປະ ຈໍາປີ | | 1 | 1 | 1 | 1 | 1 ສຸດທ້າຍ | ປະຈໍາປີ | ລະບົບ ການລາຍງານ | ທີມງານບໍລິ ຫານ ທລຍ | ບົດລາຍງານ ປະຈໍາປີ |
| ຜົນໄດ້ຮັບໄລຍະກາງ<br>ຕົວຊີ້ວັດທີ *4:*<br>ຖານຂໍ້ມູນໄດ້ຮັບການປັບປຸງ ເພື່ອໃຫ້ ສາມາດສະໜອງຂໍ້ມູນ ສໍາລັບຕິດ ຕາມຜົນ ແລະ ປະສິດທິພາບຂອງ ໂຄງການ. | | ລະບົບ | | | | ການ ປະ ເມີນ ດ້ານ ຄຸນນະ ພາບ | | ການປະເມີນ ດ້ານຄຸນນະພາບ | ຢ່າງນ້ອຍ 2 ເທື່ອ ຕະຫລອດ ອາຍຸ ຂອງ ໂຄງການ | ການປະເມີນ ດ້ານຄຸນນະ ພາບ ໂດຍທີມ ງານທະນາ ຄານໂລກ | ທະນາຄານ ໂລກ | ບົດລາຍງານ ແລະ ຖານຂໍ້ ມູນ |

## 8.3 ການຕິດຕາມ ແລະ ລະບົບການລາຍງານ

### 8.3.1 ການຕິດຕາມ

ທລຍ ແລະ ພະນັກງານທີ່ຮັບຜິດຊອບໜ້າວຽກຕ່າງໆ ຢູ່ຂັ້ນສູນກາງ, ແຂວງ ແລະ ເມືອງ ແມ່ນຕ້ອງໄດ້ຕິດຕາມການຈັດຕັ້ງປະຕິບັດໂຄງການຍ່ອຍໃນທຸກຂັ້ນຕອນຂອງແຕ່ລະຮອບວຽນ, ຊຶ່ງແມ່ນຄວາມຮັບຜິດຊອບຂອງພະນັກງານໃນແຕ່ລະຂັ້ນ ທີ່ຈະຕ້ອງລາຍງານຕາມຮູບແບບທີ່ກຳນົດໄວ້ແລ້ວ ໂດຍຈະຕິດຕາມຄວາມຄືບໜ້າຕ່າງໆ ແລະ ຕ້ອງໄດ້ລາຍງານທຸກກໍລະນີທີ່ເຫັນວ່າເປັນບັນຫາໃຫ້ກັບໜ່ວຍງານທີ່ຕົນເອງຂຶ້ນກັບ.

ໂດຍເປັນສ່ວນນຶ່ງຂອງໂຄງການໃນແຕ່ລະຮອບວຽນ, ຜູ້ປະສານງານກຸ່ມບ້ານ ແລະ ຊຸມຊົນ ແມ່ນຕ້ອງໄດ້ເຮັດໜ້າທີ່ໃນການຕິດຕາມໃນທຸກຂັ້ນຕອນຂອງການຈັດຕັ້ງປະຕິບັດໂຄງການເຊັ່ນດຽວກັນ (ເບິ່ງພາກທີ 4 ຮອບວຽນຂອງໂຄງການ) ຊຶ່ງຈະໄດ້ມີການຈັດກອງປະຊຸມສະຫລຸບງວດຫລາຍໆຄັ້ງ ທີ່ໄດ້ສ້າງແຜນໄວ້ກ່ອນແລ້ວ ໃນແຕ່ລະຮອບວຽນ ເພື່ອໃຫ້ຜູ້ຕາງໜ້າຂອງແຕ່ລະຊຸມຊົນໄດ້ລາຍງານຕໍ່ກອງປະຊຸມ ລວມທັງລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ. ກອງປະຊຸມສະຫລຸບງວດ ແມ່ນຈັດຂຶ້ນເພື່ອຕິດຕາມວ່າໂຄງການຈັດຕັ້ງປະຕິບັດໄປຕາມແຜນ ຫລື ຕ້ອງໄດ້ມີການປັບປຸງ. ການຕິດຕາມ ແລະ ຖອດຖອນບົດຮຽນຂອງແຕ່ລະກຸ່ມບ້ານ ກໍ່ເປັນອີກນຶ່ງທາງເລືອກ ເພື່ອຕິດຕາມການຈັດຕັ້ງປະຕິບັດ ແລະ ເປັນການສົ່ງເສີມໃຫ້ຂະບວນການຈັດຕັ້ງປະຕິບັດ ໃນເວລາໄປຕິດຕາມຄວາມຄືບໜ້າຂອງກຸ່ມບ້ານ ຊຶ່ງນຶ່ງໃນຈຸດປະສົງ ຂອງ ທລຍ ກໍ່ແມ່ນເພື່ອເສີມສ້າງຄວາມອາດສາມາດໃຫ້ແກ່ຊຸມຊົນ ແລະ ອຳນາດການປົກຄອງໃນຂັ້ນທ້ອງຖິ່ນ ເພື່ອຕິດຕາມກິດຈະກຳພັດທະນາທີ່ເກີດຂຶ້ນໃນທ້ອງຖິ່ນຂອງເຂົາເຈົ້າເອງ.

*ການລາຍງານ*

ລະບົບການລາຍງານ ຂອງ ທລຍ ເປັນເຄື່ອງມືນຶ່ງ ເພື່ອຕິດຕາມການຈັດຕັ້ງປະຕິບັດຢູ່ພາຍໃນ ທລຍ ເອງ ແລະ ໃນລະບົບການລາຍງານນີ້ ຍັງຕ້ອງໄດ້ສະແດງໃຫ້ເຫັນຈຸດທີ່ຕ້ອງການໃຫ້ມີການສະໜັບສະໜູນດ້ານວິຊາການ ຊຶ່ງບົດລາຍງານພາຍໃນທັງໝົດ ຈະໄດ້ບັນຈຸເອົາຂໍ້ມູນທີ່ມາຈາກຖານຂໍ້ມູນ ຊຶ່ງພະແນກຕິດຕາມ ແລະ ປະເມີນຜົນເປັນຜູ້ຮັບຜິດຊອບ ທັງການປັບປຸງຂໍ້ມູນໃນແຕ່ລະເດືອນ ແລະ ບົດລາຍງານດັ່ງກ່າວນີ້ ຍັງໄດ້ສັງລວມເອົາການລາຍງານຕ່າງໆຈາກແຂວງ, ເມືອງ, ກຸ່ມບ້ານ ແລະ ຂັ້ນບ້ານອີກດ້ວຍ. ພະແນກຕິດຕາມ ແລະ ປະເມີນຜົນຂັ້ນສູນກາງ ຈະເປັນພາກສ່ວນຮັບຜິດຊອບໃນການກະກຽມບົດລາຍງານຕ່າງໆ ໂດຍການຊີ້ນຳຂອງທ່ານຜູ້ອຳນວຍການ ແລະ ທີມງານບໍລິຫານ ທລຍ ຂັ້ນສູນກາງ.

ພະນັກງານ ທລຍ ຢູ່ໃນຂັ້ນຕ່າງໆ ຈະໄດ້ກະກຽມບົດລາຍງານຫາຂັ້ນສູນກາງ ເພື່ອລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ, ຜົນສຳເລັດຕ່າງໆ ຊຶ່ງສ່ວນຫລາຍແມ່ນໄດ້ມາຈາກແບບຟອມເກັບກຳຂໍ້ມູນຕ່າງໆ (ສາມາດເບິ່ງໄດ້ຢູ່ໃນເອກະສານຊ້ອນທ້າຍທີ 6) ຊຶ່ງໃນບົດລາຍງານທີ່ກ່າວມານີ້ ຍັງຕ້ອງໄດ້ລວມເອົາຂໍ້ມູນທີ່ກ່ຽວຂ້ອງກັບບົດບາດຍິງ-ຊາຍ ແລະ ຊົນເຜົ່າຕ່າງໆອີກດ້ວຍ.

**ບົດລາຍງານຕ່າງໆທີ່ຕ້ອງໄດ້ກະກຽມຢູ່ ທລຍ ຂັ້ນສູນກາງ:**

**ບົດລາຍງານປະຈຳປີເພື່ອສົ່ງຫາສະພາບໍລິຫານ**

ບົດລານງານຕ້ອງໄດ້ກະກຽມເປັນພາສາລາວ ແລະ ສົ່ງໃຫ້ສະພາບໍລິຫານ ໃນທຸກໆ 6 ເດືອນ ໂດຍພະແນກຕິດຕາມ-ປະເມີນເມີນຜົນຂັ້ນສູນກາງ ຊຶ່ງບົດລາຍງານຕ່າງໆ ມີລາຍລະອຽດກຳນົດກອບເວລາລະອຽດ ດັ່ງລຸ່ມນີ້:

| ບົດລາຍງານຄວາມຄືບໜ້າ ເພື່ອສົ່ງໃຫ້ສະພາບໍລິຫານ ແລະ ຜູ້ໃຫ້ທຶນ | ກຳນົດວັນເວລາ | ກອບໄລຍະເວລາ ທີ່ບົດລາຍງານກວມເອົາ |
|---|---|---|
| ບົດລາຍງານ 6 ເດືອນຕົ້ນປີ ຮອບວຽນ 9 | 31 ພຶດສະພາ 2012 | ຕຸລາ 2011 - ມີນາ 2012 |
| ບົດລາຍງານປະຈຳປີ ຮອບວຽນ 9 | 30 ພະຈິກ 2012 | ຕຸລາ 2011 - ກັນຍາ 2012 |
| ບົດລາຍງານ 6 ເດືອນຕົ້ນປີ ຮອບວຽນ 10 | 31 ພຶດສະພາ 2013 | ຕຸລາ 2012 - ມີນາ 2013 |
| ບົດລາຍງານປະຈຳປີ ຮອບວຽນ 10 | 30 ພະຈິກ 2013 | ຕຸລາ 2012 - ກັນຍາ 2013 |
| (ບົດລາຍງານເຄິ່ງອາຍຸໂຄງການ) | 31 ພຶດສະພາ 2014 | ຕຸລາ 2013 - ມີນາ 2014 |
| ບົດລາຍງານ 6 ເດືອນຕົ້ນປີ ຮອບວຽນ11 | 31 ພະຈິກ 2014 | ຕຸລາ 2013 - ກັນຍາ 2014 |
| ບົດລາຍງານປະຈຳປີ ຮອບວຽນ 11 | 31 ພຶດສະພາ 2015 | ຕຸລາ 2014 - ມີນາ 2015 |
| ບົດລາຍງານ 6 ເດືອນຕົ້ນປີ ຮອບວຽນ12 | 30 ພະຈິກ 2015 | ຕຸລາ 2014 - ກັນຍາ 2015 |
| ບົດລາຍງານປະຈຳປີ ຮອບວຽນ 12 | 31 ພຶດສະພາ 2016 | ຕຸລາ 2015 - ມີນາ 2016 |
| ບົດລາຍງານ 6 ເດືອນຕົ້ນປີ ຮອບວຽນ 13 | 30 ພະຈິກ 2016 | ຕຸລາ 2015 - ກັນຍາ 2016 |

ບົດລາຍງານຈະສະໜອງຂໍ້ມູນສັງລວມຕົວເລກສະຖິຕິ ເພື່ອສະແດງໃຫ້ເຫັນຜົນສຳເລັດຕ່າງໆ (ເຊັ່ນ: ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການຍ່ອຍ, ການປະກອບສ່ວນຂອງຊຸມຊົນ, ການອະນຸມັດງົບປະມານ) ແລະ ແຜນການຈັດຕັ້ງປະຕິບັດໃນຕໍ່ໜ້າ.

***ບົດລາຍງານປະຈຳປີ/ປະຈຳ 6 ເດືອນ ສົ່ງຫາຜູ້ໃຫ້ທຶນຕ່າງໆ***

ທລຍ ຂັ້ນສູນກາງ ເປັນຜູ້ຮັບຜິດຊອບກະກຽມບົດລາຍງານປະຈຳປີ ແລະ ປະຈຳ 6 ເດືອນ ສົ່ງຫາຜູ້ໃຫ້ທຶນຕ່າງໆ ຊຶ່ງບົດລາຍງານຕ່າງໆນີ້ ຈະມີເນື້ອໃນຂອງການລາຍງານ ກ່ຽວກັບຕົວຊີ້ວັດຂອງການຈັດຕັ້ງປະຕິບັດໂຄງການ ຊຶ່ງໄດ້ກຳນົດໄວ້ຢູ່ໃນປື້ມຄູ່ມືຈັດຕັ້ງປະຕິບັດ. ນອກຈາກນັ້ນ ບົດລາຍງານ ຍັງປະກອບມີການລາຍງານກ່ຽວກັບການເຮັດວຽກກັບອຳນາດການປົກຄອງທ້ອງຖິ່ນ, ການສ້າງແຜນການຮ່ວມກັບຊຸມຊົນ, ການຈັດຕັ້ງປະຕິບັດ ແລະ ບຳລຸງຮັກສາ ພື້ນຖານໂຄງລ່າງຕ່າງໆ, ຊຶ່ງມີການວິເຄາະ ແລະ ປຽບທຽບກັນໃນແຕ່ລະຮອບວຽນ, ການປະສານສົມທົບ ແລະ ຮ່ວມມືກັບພາກສ່ວນອື່ນໆ, ສະທ້ອນໃຫ້ເຫັນກິດຈະກຳທີ່ແຕ່ລະພະແນກໄດ້ຈັດຕັ້ງປະຕິບັດ, ບັນຫາທີ່ພົບພໍ້ໃນແຕ່ລະໄລຍະ ແລະ ຍັງມີແຜນການຈັດຕັ້ງປະຕິບັດໃນຕໍ່ໜ້າ ເພື່ອລາຍງານໃນຄັ້ງຕໍ່ໄປ (ເບິ່ງເອກະສານຄັດຕິດ: ໂຄງຮ່າງຂອງລົດລາຍງານ).

### *ບົດລາຍງານປະຈຳເດືອນ ຈາກ ແຂວງ ສົ່ງຫາ ສູນກາງ*

ຫ້ອງການ ທລຍ ຢູ່ແຕ່ລະແຂວງ ຕ້ອງໄດ້ກະກຽມບົດລາຍງານສົ່ງຫາຫ້ອງການຂັ້ນສູນກາງ ແລະ ບົດລາຍງານນີ້ຍັງໄດ້ສົ່ງຫາຫ້ອງການຕ່າງໆຂອງລັດຖະບານຢູ່ຂັ້ນແຂວງ.

*ຊື່ຫົວຂໍ້ຂອງບົດລາຍງານຕ່າງໆປະກອບດ້ວຍ:*

- ຂໍ້ມູນທາງດ້ານບໍລິຫານ, ການເງິນ ແລະ ພະນັກງານ;
- ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ (ໂຄງການຍ່ອຍ ແລະ ການນຳໃຊ້ງົບປະມານ);
- ກິດຈະກຳທີ່ພົວພັນກັບການກະຈາຍຂໍ້ມູນຂ່າວສານ;
- ການຈັດກອງປະຊຸມ ແລະ ການຝຶກອົບຮົມ (ລວມທັງການສ້າງຄວາມເຂັ້ມແຂງຕ່າງໆ);
- ບັນຫາທີ່ພົບພໍ້ ແລະ ວິທີການແກ້ໄຂ;
- ແຜນການຈັດຕັ້ງປະຕິບັດໃນເດືອນຕໍ່ໄປ;
- ການສະແດງຄຳຄິດເຫັນ ແລະ ການແກ້ໄຂບັນຫາ ສຳລັບທີມງານຂັ້ນແຂວງ.

*ກຳນົດເວລາ:* ບົດລາຍງານທີ່ແຂວງກະກຽມຈະຕ້ອງໄດ້ສົ່ງຫາຫ້ອງການຂັ້ນສູນກາງ ໃນທຸກວັນທີ *10* ຂອງທຸກໆເດືອນ.

### *ບົດລາຍງານປະຈຳເດືອນ ຈາກ ເມືອງ ສົ່ງຫາ ແຂວງ*

ໃນທຸກໆເດືອນ ພະນັກງານ ທລຍ ຂັ້ນເມືອງ ຕ້ອງໄດ້ກະກຽມບົດລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ ປະຈຳເດືອນ ສົ່ງຫາຫ້ອງການແຂວງ ຊຶ່ງມີເນື້ອໃນດັ່ງນີ້:

- ຂໍ້ມູນທາງດ້ານບໍລິຫານ, ການເງິນ ແລະ ພະນັກງານ;
- ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ (ໂຄງການຍ່ອຍ ແລະ ການນຳໃຊ້ງົບປະມານ);
- ການຈັດກອງປະຊຸມ ແລະ ການຝຶກອົບຮົມ (ລວມທັງການສ້າງຄວາມເຂັ້ມແຂງຕ່າງໆ);
- ບັນຫາທີ່ພົບພໍ້ ແລະ ວິທີການແກ້ໄຂ;
- ແຜນການຈັດຕັ້ງປະຕິບັດໃນເດືອນຕໍ່ໄປ;
- ການສະແດງຄຳຄິດເຫັນ ແລະ ການແກ້ໄຂບັນຫາ ສຳລັບທີມງານຂັ້ນເມືອງ.

ໂດຍປະສານກັບຜູ້ປະສານງານກຸ່ມບ້ານ ແລະ ທີມງານຂັ້ນກຸ່ມບ້ານ, ພະນັກງານຂັ້ນເມືອງ ຕ້ອງມີໜ້າທີ່ຕື່ມແບບຟອມບົດລາຍງານຕ່າງໆ ຂອງການຈັດຕັ້ງປະຕິບັດໂຄງການຢູ່ໃນແຕ່ລະຮອບວຽນ ຊຶ່ງປະກອບດ້ວຍ:

- ແບບຟອມບັນທຶກ (ກອງປະຊຸມ ແລະ ການຝຶກອົບຮົມ);
- ແບບຟອມວາງແຜນຂັ້ນບ້ານ;
- ແບບຟອມການວາງແຜນພັດທະນາຂັ້ນກຸ່ມບ້ານ;

- ແບບຟອມບົດສະເໜີໂຄງການຍ່ອຍ;
- ແບບຟອມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການຍ່ອຍ;
- ແບບຟອມທາງດ້ານບໍລິຫານການເງິນ;
- ແບບຟອມກວດກາຄຸນນະພາບຂອງໂຄງການຍ່ອຍຄັ້ງສຸດທ້າຍ;
- ແບບຟອມການໄປຕິດຕາມໂຄງການຍ່ອຍ;
- ແບບຟອມການໄປຖອດຖອນບົດຮຽນກັບກຸ່ມບ້ານອື່ນ;
- ແບບຟອມການສ້າງຄວາມອາດສາມາດໃຫ້ຊຸມຊົນ.

*ກຳນົດກອບເວລາ*: ແບບຟອມຕ່າງໆຕ້ອງໄດ້ສົ່ງໃຫ້ທີມງານຂັ້ນແຂວງ ພາຍໃນ 1 ອາທິດ ຫລັງຈາກການຈັດຕັ້ງປະຕິບັດສຳເລັດ. ສ່ວນບົດລາຍງານປະຈຳເດືອນ ຈາກຫ້ອງການເມືອງສົ່ງຫາແຂວງນັ້ນ ແມ່ນໃຫ້ສົ່ງທຸກໆທ້າຍເດືອນ (ວັນທີ 5 ຂອງທຸກໆເດືອນ).

### *ຜູ້ປະສານງານຂັ້ນກຸ່ມບ້ານ*

ພະນັກງານ ທລຍ ຂັ້ນເມືອງ ຈະເປັນຜູ່ຊ່ວຍຜູ້ປະສານງານກຸ່ມບ້ານ ໃນການຕິດຕາມຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດໂຄງການຍ່ອຍ ພ້ອມທັງຕື່ມແບບຟອມຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດໂຄງການຍ່ອຍປະຈຳເດືອນ (SPIM).

*ກຳນົດກອບເວລາ*: ແບບຟອມຕ້ອງໄດ້ສົ່ງຫາຫ້ອງການແຂວງ ພາຍໃນນຶ່ງອາທິດ ຫລັງຈາກສຳເລັດການລົງໄປຕິດຕາມ.

### *ບົດລາຍງານທາງດ້ານການເງິນ*

ພະແນກບໍລິຫານ-ການເງິນ ຕ້ອງໄດ້ຮັບຜິດຊອບກະກຽມບົດລາຍງານດັ່ງນີ້:

- ບົດລາຍງານປະຈຳເດືອນທາງດ້ານການເງິນ;
- ບົດງານງານປະຈຳໄຕມາດທາງດ້ານການເງິນ;
- ບົດລາຍງານກາງສະໄໝທາງດ້ານການກວດສອບການເງິນ;
- ເອກະສານງົບປະມານປະຈຳປີ;
- ເອກະສານການນຳໃຊ້ງົບປະມານ.

ເພື່ອເຮັດໃຫ້ສອດຄ່ອງກັບຫລັກການຄວາມໂປ່ງໃສ ແລະ ສາມາດກວດສອບໄດ້ ຂອງ ທລຍ, ບົດລາຍງານຕ່າງໆຕ້ອງໄດ້ເອົາຂື້ນເຜີຍແຜ່ຢູ່ໃນເວັບໄຊ ຂອງ ທລຍ.

ຊື່ງລາຍລະອຽດເພີ່ມເຕີມ ສາມາດເບິ່ງຕື່ມຢູ່ໃນຫົວຂໍ້ 9.6 ຂອງພາກການລາຍງານ.

## 8.4 ການປະເມີນຜົນ ແລະ ກໍລະນີສຶກສາຕ່າງໆ

ເພື່ອໃຫ້ສາມາດວັດແທກໄດ້ວ່າ ທລຍ ໄດ້ບັນລຸຈຸດປະສົງຂອງການຈັດຕັ້ງປະຕິບັດຂອງຕົວເອງ, ດັ່ງນັ້ນ ທລຍ ຈຶ່ງໄດ້ມີແຜນໃນການປະເມີນຜົນ ແລະ ເຮັດກໍລະນີສຶກສາຕ່າງໆ ຊຶ່ງຈະຊ່ວຍໃນການປັບປຸງການຈັດຕັ້ງປະຕິບັດຕ່າງໆຂອງໂຄງການ ຊຶ່ງການສຶກສາຕ່າງໆ ຈະໄດ້ວ່າຈ້າງທີ່ປຶກສາ ຫລື ບໍລິສັດເອກະຊົນຈາກພາກສ່ວນພາຍນອກ ເພື່ອເຂົ້າມາຈັດຕັ້ງປະຕິບັດ ຊຶ່ງແຕ່ລະກໍລະນີສຶກສາກໍ່ຈະລົງເລິກໃສ່ຕົວຊີ້ວັດຂອງການຈັດຕັ້ງປະຕິບັດໂຄງການ ຂອງ ທລຍ. ຊຶ່ງພາບລວມຂອງການປະເມີນຜົນ ແລະ ກໍລະນີສຶກສາຕ່າງໆ ລວມທັງກອບກໍານົດເວລາແມ່ນໄດ້ສະແດງຢູ່ໃນຕາຕະລາງຂ້າງລຸ່ມນີ້:

1. ການປະເມີນຜົນກະທົບ. ເພື່ອປະເມີນວ່າ ທລຍ ສາມາດຈັດຕັ້ງປະຕິບັດໄດ້ຕາມຈຸດປະສົງຄາດໝາຍ ຈຶ່ງຈໍາເປັນຕ້ອງໄດ້ເຮັດການປະເມີນຜົນກະທົບຂອງໂຄງການ ຊຶ່ງຈະນໍາໃຊ້ຮູບແບບການປະເມີນແບບປະລິມານ ແລະ ຄຸນນະພາບ ໂດຍສະເພາະການສໍາຫລວດດັ່ງກ່າວນີ້ ຕ້ອງໄດ້ຈັດຕັ້ງປະຕິບັດກ່ອນເລີ່ມຕົ້ນຈັດຕັ້ງປະຕິບັດໂຄງການຢູ່ໃນແຂວງໃໝ່ ແລະ ຫລັງຈາກຈັດຕັ້ງປະຕິບັດໂຄງການໄດ້ສາມປີ. ການປະເມີນຜົນກະທົບຈະວັດແທກໃນຫົວຂໍ້ຕ່າງໆເຊັ່ນ: ການຊົມໃຊ້ ແລະ ການໃຊ້ຈ່າຍ; ການເຂົ້າເຖິງການບໍລິການດ້ານຕ່າງໆ; ການບໍລິຫານຂອງລັດຖະບານ ເຊັ່ນ ຄວາມພຶງພໍໃຈຂອງຊຸມຊົນ ແລະ ລັດຖະບານຕໍ່ການຈັດຕັ້ງປະຕິບັດວຽກ ຂອງ ທລຍ; ການມີສ່ວນຮ່ວມ; ສະມາຄົມ ແລະ ເຄືອຂ່າຍ ແລະ ການຕັດສິນໃຈຕ່າງໆ. ສະເພາະການສຶກສາດ້ານຄຸນນະພາບ ແມ່ນຈະເນັ້ນໃສ່ການມີສ່ວນຮ່ວມ ແລະ ເຂົ້າຮ່ວມຂອງກຸ່ມຜູ້ດ້ອຍໂອກາດໃນສັງຄົມ, ຊົນເຜົ່າຕ່າງໆ ແລະ ແມ່ຍິງ.

2. ການປະເມີນຜູ້ໄດ້ຮັບຜົນປະໂຫຍດ (ການສຶກສາທາງດ້ານສັງຄົມ ຊຶ່ງກວມເອົາຊົນເຜົ່າຕ່າງໆ, ແມ່ຍິງ ແລະ ກຸ່ມຜູ້ດ້ອຍໂອກາດຕ່າງໆ) ລວມທັງການສຶກສາກຸ່ມຊາດພັນ ຊຶ່ງຈະສຸມໃສ່ເວລາທີ່ໄດ້ຮັບຜົນປະໂຫຍດ ໂດຍສະເພາະກຸ່ມຊົນເຜົ່າ ວ່າມີຄວາມຄິດແນວໃດແບບໃດຕໍ່ກັບໂຄງການ ທລຍ. ຊຶ່ງຍັງໄດ້ວາງແຜນທີ່ຈະສຸ່ມສໍາຫລວດຕົວຢ່າງ ກ່ຽວກັບບົດບາດ-ຍິງຊາຍນໍາອີກດ້ວຍ.

3. ການສຶກສາທາງດ້ານຄຸນນະພາບຂອງການກໍ່ສ້າງ ແລະ ການນໍາໃຊ້ງົບປະມານທີ່ສົມເຫດສົມຜົນ ຊຶ່ງຈະຊ່ວຍໃຫ້ເຫັນຄຸນນະພາບຂອງການກໍ່ສ້າງໂຄງການ ຂອງ ທລຍ ໃນປະເພດຕ່າງໆ, ການຈັດຕັ້ງປະຕິບັດ ແລະ ການບໍາລຸງຮັກສາ, ຄວາມຍືນຍົງຂອງໂຄງການ, ການນໍາໃຊ້ງົບປະມານທີ່ສົມເຫດສົມຜົນ ແລະ ການເອົາໃຈໃສ່ຕໍ່ການປ້ອງກັນດ້ານສັງຄົມ ແລະ ສິ່ງແວດລ້ອມ.

4. ການສຶກສາດ້ານການເສີມສ້າງຄວາມອາດສາມາດ ເພື່ອວັດແທກປະສິດທິພາບ ຂອງການຈັດຕັ້ງປະຕິບັດກິດກະກໍາສ້າງຄວາມອາດສາມາດ ຂອງ ທລຍ ຢູ່ໃນຂັ້ນບ້ານ, ຂັ້ນກຸ່ມບ້ານ, ຂັ້ນເມືອງ ແລະ ຂັ້ນແຂວງ.

5. ການທວນຄືນເຄິ່ງໄລຍະໂຄງການ ແລະ ການສຶກສາຈາກພາຍນອກ ເພື່ອທວນຄືນຂະບວນການຈັດຕັ້ງປະຕິບັດໂຄງການ ແລະ ປະເມີນຄວາມຕ້ອງການໃນການປັບປຸງການຈັດຕັ້ງປະຕິບັດໂຄງການໃນຕໍ່ໜ້າ.

6. ການປະເມີນຜົນກະທົບ, ທລຍ ຈະຈັດຕັ້ງປະຕິບັດການປະເມີນຜົນກະທົບຢູ່ໃນແຂວງ ແລະ ເມືອງໃໝ່ທີ່ເປັນເປົ້າໝາຍ ຂອງ ທລຍ, ການປະເມີນທາງດ້ານປະລິມານຈະກວມເອົາກຸ່ມຕົວຢ່າງ ຢູ່ໃນ 4,400 ຄົວເຮືອນ ຢູ່ໃນ 44 ກຸ່ມບ້ານ ຢູ່ໃນ 11 ເມືອງ ຂອງແຂວງ ຜົ້ງສາລີ, ອຸດົມໄຊ, ຫລວງພະບາງ ແລະ ອັດຕະປື. ໃນຈຳນວນ 44 ກຸ່ມບ້ານຈະແຍກອອກເປັນ 2 ປະເພດກຸ່ມບ້ານ, 22 ກຸ່ມບ້ານ ຈະເປັນຕົວປຽບທຽບທີ່ຈັດຕັ້ງປະຕິບັດກິດຈະກຳປົກກະຕິ ຂອງ ທລຍ ແລະ ອີກ 22 ກຸ່ມບ້ານ ຈະເປັນກຸ່ມບ້ານປຽບທຽບ ທີ່ຈະບໍ່ອະນຸຍາດໃຫ້ໂຄງການ ຂອງ ທລຍ ຫລື ຂອງພາກສ່ວນອື່ນເຂົ້າມາຈັດຕັ້ງປະຕິບັດ ຊຶ່ງການຄັດເລືອກແມ່ນນຳໃຊ້ຮູບແບບສຸ່ມຄັດເລືອກ.

| | |
|---|---|
| *ພື້ນທີ່ເປົ້າໝາຍ:* | • ແຂວງ: ຜົ້ງສາລີ, ອຸດົມໄຊ, ຫລວງພະບາງ ແລະ ອັດຕະປື. |
| *ຂະໜາດ ສຸ່ມສຳຫລວດ:* | • 4,400 ຄົວເຮືອນ ຢູ່ໃນ 44 ກຸ່ມບ້ານ ຢູ່ໃນ 11 ເມືອງ.<br>• ໃນ 44 ກຸ່ມບ້ານ ຈະແຍກອອກເປັນ 2 ປະເພດກຸ່ມບ້ານ, 22 ກຸ່ມບ້ານ ຈະເປັນຕົວປຽບທຽບທີ່ຈັດຕັ້ງປະຕິບັດກິດຈະກຳປົກກະຕິ ຂອງ ທລຍ ແລະ ອີກ 22 ກຸ່ມບ້ານ ຈະເປັນກຸ່ມບ້ານປຽບທຽບທີ່ຈະບໍ່ອະນຸຍາດໃຫ້ໂຄງການ ຂອງ ທລຍ ຫລື ຂອງພາກສ່ວນອື່ນເຂົ້າມາຈັດຕັ້ງປະຕິບັດ. |
| *ການທົດລອງ:* | • ໄລຍະທີ 1: ສິງຫາ 2011<br>• ໄລຍະທີ 2: ໄຕມາດທີ 1 ແລະ 2 ຂອງປີ 2012 |
| *ສຳຫລວດ ພື້ນຖານຂໍ້ມູນ:* | • ເດືອນກັນຍາ/ຕຸລາ 2012 |

## ຕາຕະລາງ: ທລຍ ໄລຍະ 2

## ຕາຕະລາງເບື້ອງຕົ້ນ ແລະ ຄວາມຮັບຜິດຊອບ ຂອງການປະເມີນຜົນ/ການສຶກສາພິເສດ

| | ການປະເມີນ/ການສຶກສາ | 2011 | 2012 | 2013 | 2014 | 2015 | 2016 | ຄໍາເຫັນ |
|---|---|---|---|---|---|---|---|---|
| | ໄລຍະເວລາ | ເລີ້ມຕົ້ນ ເດືອນ ພະຈິກ | | ທວນຄືນກາງສະໄໝ ເດືອນ ກັນຍາ (9) 2013 | | | ວັນທີ 30 ມິຖຸນາ. ມື້ປິດໂຄງການ | |
| 1 | ການປະເມີນຜົນກະທົບ-ປະລິມານ ແລະ ຄຸນນະພາບ | | ການເກັບກໍາພື້ນ ຖານຂໍ້ມູນ ເດືອນກັນຍາ-ຕຸລາ | | | ການປະເມີນຜົນ ກະທົບ ຄັ້ງສຸດທ້າຍ ເດືອນ ກັນຍາ-ຕຸລາ | | ທະນາຄານໂລກ ເປັນຜູ້ວ່າ ຈ້າງບໍລິສັດ ຈາກພາຍນອກ (ໃຊ້ເງິນຮ່ວງອົດສເອດ) |
| 2. | ການສຶກສາດ້ານຄຸນນະພາບຂອງ ໂຄງການ ແລະ ການນໍາໃຊ້ທຶນ | | ເລີ້ມເດືອນ ເມສາ | ເລີ້ມຕົ້ນເດືອນ ເມສາ | | ເລີ້ມຕົ້ນເດືອນ ມີນາ | | ນໍາໃຊ້ທຶນ ທລຍ ເພື່ອຈ້າງ ບໍລິສັດທີ່ປືກສາພາຍນອກ |
| 3. | ການສຶກສາ ການເສີມສ້າງ ຄວາມອາດສາມາດ | | | ເລີ້ມຕົ້ນເດືອນ ເມສາ | | ເລີ້ມຕົ້ນເດືອນ ມີນາ | | ນໍາໃຊ້ທຶນ ທລຍ ເພື່ອຈ້າງ ບໍລິສັດທີ່ປືກສາພາຍນອກ |
| 4. | ການສຶກສາ ກ່ຽວກັບການຄຸ້ມ ຄອງລັດ ຢູ່ຂັ້ນພື້ນຖານ | | | ເລີ້ມຕົ້ນເດືອນ ເມສາ | | ເລີ້ມຕົ້ນເດືອນ ມີນາ | | ທະນາຄານໂລກ ເປັນຜູ້ວ່າ ຈ້າງບໍລິສັດ ຈາກພາຍນອກ (ໃຊ້ເງິນຮ່ວງອົດສເອດ)) |
| 5. | ການປະເມີນຜູ້ໄດ້ຮັບຜົນ ປະໂຫຍດ (ການສຶກສາເຜົ່າພັນ ທີ່ເນັ້ນໃສ່ຊົນເຜົ່າ ແລະ ບົດບາດ ຍິງ-ຊາຍ) | | ຕິດຕາມການຈັດຕັ້ງ ປະຕິບັດ ຂອງໂຄງ ການ ໄລຍະ 6 ເດືອນ | ຕິດຕາມການຈັດຕັ້ງ ປະຕິບັດ ຂອງໂຄງ ການ ໄລຍະ 6 ເດືອນ | ຕິດຕາມການ ຈັດຕັ້ງປະຕິບັດ ຂອງໂຄງການ ໄລຍະ 6 ເດືອນ | | | ທະນາຄານໂລກ ເປັນຜູ້ວ່າ ຈ້າງບໍລິສັດ ຈາກພາຍນອກ (ໃຊ້ເງິນຮ່ວງອົດສເອດ) |
| | | | | | | | | ທະນາຄານໂລກ ເປັນຜູ້ວ່າ ຈ້າງບໍລິສັດ ຈາກພາຍນອກ (ໃຊ້ເງິນຮ່ວງອົດສເອດ) |

| | | | | | | | | |
|---|---|---|---|---|---|---|---|---|
| 7. | ການປະເມີນຜົນກະທົບໄລຍະກາງສະໄໝ | | | ເລີ້ມຕົ້ນເດືອນ ເມສາ | X | | | ນຳໃຊ້ທຶນ ທລຍ ເພື່ອຈ້າງບໍລິສັດທີ່ປຶກສາ ພາຍນອກ |
| 8 | ການປະເມີນຜົນກະທົບໄລຍະທ້າຍໂຄງການ | | | | | | ເລີ້ມຕົ້ນເດືອນ ເມສາ | ນຳໃຊ້ທຶນ ທລຍ ເພື່ອຈ້າງບໍລິສັດທີ່ປຶກສາ ພາຍນອກ |

# 9 ການຄຸ້ມຄອງບໍລິຫານການເງິນ

ສຳລັບພາກນີ້ ໄດ້ສະແດງໃຫ້ເຫັນພາບລວມຂອງໂຄງຮ່າງການຈັດຕັ້ງຂອງພະແນກບໍລິຫານການ, ການໄຫລວຽນຂອງເງິນ, ການເບີກຈ່າຍ, ບົດລາຍງານທາງດ້ານເງິນ, ລະບຽບການກວດສອບ ແລະ ຫລັກການທີ່ຈຳເປັນຂອງການຄຸ້ມຄອງບໍລິຫານທາງດ້ານການເງິນຂອງກຸ່ມບ້ານ. ສຳລັບລາຍລະອຽດກ່ຽວກັບລະບຽບການຄຸ້ມຄອງບໍລິຫານທາງດ້ານການເງິນ ໄດ້ປະກອບສະເພາະຢູ່ໃນຄູ່ມືການຄຸ້ມຄອງບໍລິຫານທາງດ້ານການເງິນ.

## 9.1 ໂຄງຮ່າງການຈັດຕັ້ງສຳລັບພະແນກບໍລິຫານການເງິນ

ຂັ້ນສູນກາງປະກອບດ້ວຍພະນັກງານການເງິນ 4 ຕຳແໜ່ງເຊັ່ນ: 1 ການເງິນ, 1 ບັນຊີ, 1 ຜູ້ຊ່ວຍບັນຊີ, ແລະ ຜູ້ຮັບຜິດຊອບຄັງເງິນສົດ. ຫົວໜ້າພະແນກການເງິນ ເປັນທັງຫົວໜ້າພະແນກບໍລິຫານການເງິນເຊິ່ງໄດ້ໃຫ້ການຊີ້ນຳວຽກງານລວມຂອງພະແນກໃນທຸກລະດັບ.

ຂັ້ນແຂວງປະກອບດ້ວຍພະນັກງານການເງິນ 2 ຕຳແໜ່ງ ເຊັ່ນ: 1 ການເງິນ ແລະ ຜູ້ຮັບຜິດຊອບເງິນສົດ/ເລຂາ.

ຂັ້ນເມືອງ ມີ 1 ພະນັກງານການເງິນ.

ລາຍລະອຽດກ່ຽວກັບໂຄງຮ່າງການຈັດຕັ້ງ ແລະ ພາລະບົດບາດຂອງທຸກຕຳແໜ່ງງານ ຢູ່ໃນປຶ້ມຄູ່ມືບໍລິຫານທາງດ້ານການເງິນ (FMM).

## 9.2 ງົບປະມານ

ແຜນງົບປະມານສຳລັບກຸ່ມບ້ານຈະກວມເອົາໄລຍະ 4 ປີ; ທຶນທີ່ຈະນຳໃຊ້ຈະໄດ້ຮັບເປັນແຕ່ລະປີ.

ສຳລັບລາຍລະອຽດຂອງການຂຶ້ນແຜນງົບປະມານ, ໃຫ້ອີງໃສ່ຫົວຂໍ້ພາກຍ່ອຍຂໍ້ 3.4 ຢູ່ໃນປຶ້ມຄູ່ມືຈັດຕັ້ງປະຕິບັດໂຄງການທົວນີ້.

## 9.3 ການໄຫລວຽນຂອງທຶນ

ຕາຕະລາງການໄຫລວຽນຂອງທຶນຈາກແຕ່ລະຜູ້ໃຫ້ທຶນເຂົ້າເຖິງໂຄງການ ທລຍ

ຕາຕະລາງ 3: ການໄຫລວຽນຂອງທຶນ



## 9.4 ລະບຽບການເບີກຈ່າຍ

ຂັ້ນຕອນການເບີກຈ່າຍງົບປະມານແມ່ນອີງໃສ່ລະບຽບຂອງກະຊວງການເງິນ, ທະນາຄານໂລກ ແລະ ບັນດາຜູ້ໃຫ້ທຶນອື່ນໆຕາມຄວາມເໝາະສົມ. ສ່ວນລາຍລະອຽດຂອງລະບຽບຫລັກການໄດ້ປະກອບຢູ່ໃນປື້ມຄູ່ມືບໍລິຫານການເງິນ. (ບົດບັນທຶກຄວາມເຂົ້າໃຈລະຫວ່າງກະຊວງການເງິນ ກັບກອງທຶນຫລຸດຜ່ອນຄວາມທຸກຍາກ ກ່ຽວກັບການເບີກຈ່າຍຈາກບັນຊີພິເສດ ແລະ ບັນຊີໂຄງການສຳລັບກອງທຶນຫລຸດຜ່ອນຄວາມທຸກຍາກ ໄລຍະ 2 ແມ່ນມີລາຍລະອຽດຢູ່ໃນເອກກະສານຄັດຕິດ XX.)

ຢູ່ແຕ່ລະແຂວງມີ 2 ບັນຊີ ເປັນສະກູນເງິນ ກີບ; (1) ບັນຊີແຂວງສຳລັບວຽກບໍລິຫານ ແລະ ກິດຈະກຳພັດທະນາ ແລະ (2) ບັນຊີແຂວງສຳລັບໂຄງການຍ່ອຍຂອງງົບປະມານທີ່ໄດ້ຈັດສັນໄວ້.

ຂັ້ນຕອນການເບີກຈ່າຍທຶນ ລົງໄປເຖິງຂັ້ນກຸ່ມບ້ານແມ່ນອີງໃສ່ລະບຽບການ ແລະ ຫລັກການຢູ່ໃນປື້ມຄູ່ມືລະບຽບການຄຸ້ມຄອງບໍລິການທາງດ້ານການເງິນຂັ້ນກຸ່ມບ້ານ. ຢູ່ແຕ່ລະກຸ່ມບ້ານ ຈະໄດ້ເປີດບັນຊີຢູ່ທີ່ທະນາຄານການຄ້າເພື່ອຮັບເອົາທຶນ ແລະ ດຳເນີນການເບີກຈ່າຍ.

## ວົງຈອນການເບີກຈ່າຍຂອງໂຄງການຍ່ອຍ




### 9.5 ການຈັດວາງເອກະສານ, ບັນທຶກ ແລະ ເອກະສານການເບີກຈ່າຍ:

ທີມງານການເງິນຂັ້ນແຂວງ/ເມືອງ ຈະເປັນຜູ້ຝຶກອົບຮົມໃຫ້ແກ່ບັນດາຕົວແທນກຸ່ມບ້ານ ກ່ຽວກັບວິທີການບັນທຶກລາຍຮັບລາຍຈ່າຍ. ເຖິງຢ່າງໃດກໍ່ຕາມ ທີມງານຂັ້ນກຸ່ມບ້ານ ສາມາດຕັດສິນໃຈ ທີ່ຈະຈ້າງພະນັກງານການເງິນທ້ອງຖິ່ນເພື່ອຊ່ວຍເຂົາເຈົ້າໃນການຄຸ້ມຄອງບັນຊີ (ງົບປະມານດັ່ງກ່າວແມ່ນຈະລວມຢູ່ໃນງົບປະມານຄຸ້ມຄອງບໍລິຫານໂຄງການຍ່ອຍ).

(1) ທຸກໆລາຍຈ່າຍຂອງກຸ່ມບ້ານຈະຕ້ອງມີການສະຫລູບລາຍງານ. ເອກກະສານການເບີກຈ່າຍຈະຕ້ອງປະກອບຢ່າງຈະແຈ້ງກ່ຽວກັບຈຸດປະສົງຂອງການເບີກຈ່າຍ ສໍາລັບການບໍລິການ ຫລື ການຈັດຊື້ສິນຄ້າ ຈະຕ້ອງຫລີກລ້ຽງບໍ່ໃຫ້ມີລຶບ ແລະ ນໍ້າລຶບຂາວ, ເພື່ອຮັບປະກັນວ່າການດັດແກ້ສາມາດເບິ່ງເຫັນໄດ້ຢ່າງຈະແຈ້ງ. ທຸກໆເອກກະສານທາງດ້ານການເງິນ ຈະເກັບຮັກສາໄວ້ທີ່ ຫ້ອງການ ທລຍ ແຂວງ.

(2) ປື້ມບັນທຶກຮັບ-ຈ່າຍເງິນສົດທີ່ງ່າຍດາຍຈະກັບຮັກສາໄວ້ກັບຕົວແທນກຸ່ມບ້ານ ແລະ ບັນທຶກເປັນປະຈໍາວັນ.

(3) ພະນັກງານການເງິນມີໜ້າທີ່ກວດກາບັນຊີຂອງກຸ່ມບ້ານ ແລະ ບັນທຶກເປັນໄລຍະຢ່າງຕໍ່ເນື່ອງ.

(4) ກອງປະຊຸມສະຫລູບລາຍງານການໃຊ້ຈ່າຍ ຄວນຈະຈັດຢູ່ໃນໄລຍະ (ຢ່າງນອ້ຍໃນແຕ່ລະຄັ້ງທີ່ຈະມີການໂອນເງິນ). ເຊິ່ງຂັ້ນຕອນການຈັດຕັ້ງປະຕິບັດ ເພື່ອທວນຄືນກ່ຽວກັບການຈັດຊື້-ຈັດຈ້າງ, ການໃຊ້ຈ່າຍທີ່ກ່ຽວຂອ້ງກບັການເບີກຈ່າຍ.

## 9.6 ການລາຍງານ

ພະແນກບໍລິຫານການເງິນ ມີໜ້າທີ່ເຮັດບົດລາຍງານທາງດ້ານການເງິນແຕກຕ່າງກັນ ໃຫ້ແຕ່ລະພາກສວ່ນ ເຊັ່ນ:

- **ບົດລາຍງານການເງິນປະຈໍາເດືອນ** ປະກອບດວ້ຍຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ ແລະ ການໃຊ້ຈ່າຍທຶນເພື່ອສົມທຽບກັບແຜນງົບປະມານ. ບົດລາຍງານດັ່ງກ່າວ ຈະສົ່ງເຖິງຜູ້ອໍານວຍການບໍລິຫານ ແລະ ສະພາບໍລິຫານ ເພື່ອສະໜັບສະໜູນໃຫ້ແກ່ການຕັດສິນໃຈ.
- **ບົດລາຍງານການເງິນປະຈໍາໄຕມາດ** ຊຶ່ງໄດ້ນໍາເອົາຂໍ້ມູນທີ່ສໍາຄັນຈາກແຕ່ລະແຂວງ, ຈາກຂໍ້ສັງເກດ ແລະ ການເອົາຂໍ້ມູນໃນເວລາທີ່ລົງຢ້ຽມຢາມພາກສະໜາມຂອງທີມງານ ທລຍ ສູນກາງ. ມີບາງບັນຫາກໍ່ມາຈາກຂໍ້ມູນຈາກພາກສວ່ນພາຍນອກ ແລະ ບົດລາຍງານການເງິນປະຈໍາໄຕມາດ. ຊຶ່ງເຮັດໃຫ້ ທີມງານບໍລິຫານຂອງ ທລຍ ສາມາດຕິດຕາມກ່ຽວກັບຄວາມຄືບໜ້າຂອງໂຄງການ ແລະ ປະກອບໃຫ້ແກ່ການຕັດສິນໃຈ.
- **ບົດລາຍງານທາງດ້ານການເງິນ** ໄດ້ໃຫ້ຂໍ້ມູນພຽງພໍສໍາລັບການຕິດຕາມໂຄງການໃນດ້ານການຮັບ ແລະ ການນໍາໃຊ້ທຶນ ແລະ ສະແດງໃຫ້ເຫັນເຖິງການຈັດຕັ້ງປະຕິບັດໂຄງການໃນແຕ່ລະຂັ້ນຕອນ ແລະ ການນໍາໃຊ້ງົບປະມານຈະບໍ່ເກີນແຜນ. ບົດລາຍງານດ້ານການເງິນຈະຕອ້ງກະກຽມ ແລະ ສົ່ງເຖິງທະນາຄານໂລກບໍ່ເກີນ 45 ວັນ ພາຍຫລັງໄຕມາດສຸດທ້າຍ.
- **ບົດລາຍງານດ້ານການເງິນປະຈໍາປີ** ໃນແຕ່ລະທ້າຍສົກປີງົບປະມານ, ຫອ້ງການ ທລຍ ຈະຕອ້ງໄດ້ກະກຽມບົດລາຍງານການເງິນປະຈໍາປີ, ບັນຊີພິເສດ ແລະ ບົດລາຍງານການຄຸ້ມເງິນຈະຕອ້ງປະກອບຢູ່ໃນບົດລາຍງານ ຊຶ່ງເປັນທີ່ຍອມຮັບໄດ້ຈາກບັນດາຜູ້ໃຫ້ທຶນ ເພື່ອກຽມພອ້ມສໍາລັບການກວດສອບບັນຊີຂອງຜູ້ກວດສອບຈາກພາຍນອກ.

- **ບົດລາຍງານການຄຸ້ມເງິນ** ຊຶ່ງກະກຽມສຳລັບການຄຸ້ມເງິນເຂົ້າບັນຊີສະເພາະ .ຈະມີການແຍກສະເພາະແຕ່ລະປະເພດລາຍຈ່າຍ, ນ້ຳເບີອ້າງອີງ ແລະ ຈຳນວນເງິນຈະຄຸ້ມຂໍລວມທີ່ຈຳນວນ . ໄວ້ວາງຈັດໄດ້ທີ່ງົບປະມານຂອງການລະບຽບໃສ່ຕອ້ງອີງ ຕາມລະບຽບຂອງການເບີກຈ່າຍຂອງທະນາຄານໂລກໃນໄລຍະຂອງການຈັດຕັ້ງປະຕິບັດໂຄງການ.

ແຕ່ລະຜູ້ໃຫ້ທຶນຈະໄດ້ຮັບບົດລາຍງານທາງດ້ານການເງິນທີ່ລາຍງານໃຫ້ເຫັນພາບລວມຂອງງົບປະມານທັງໝົດ ແລະ ລວມທັງທຶນຂອງບັນດາຜູ້ໃຫ້ທຶນອື່ນໆ.

**9.7 ການກວດສອບ**

**ການກວດສອບບັນຊີ-ການເງິນ**

ກອງທຶນຫລຸດຜ່ອນຄວາມທຸກຍາກ ຈະຕອ້ງໄດ້ມີການກວດສອບບັນຊີປະຈຳປີ ໂດຍອີງໃສ່ມາດຕະຖານສາກົນ (ISA) ໃນການກວດສອບຂອງບໍລິສັດທີ່ປຶກສາກວດສອບບັນຊີທີ່ມີວຸດທິສູງ ໃນການກວດສອບລະດັບສາກົນ ໂດຍມີການກຳນົດໜ້າວຽກໃຫ້ແກ່ບໍລິສັດທີ່ປຶກສາດັ່ງກ່າວ ຈະຕ້ອງຜ່ານການເຫັນດີຈາກຜູ້ໃຫ້ທຶນ. ໜ້າວຽກໃນການກວດສອບ ຈະຕອ້ງອີງໃສ່ການກວດສອບມາດຕະຖານສາກົນ (ISA) 240, ເຊິ່ງເປັນບັນທັດຖານທີ່ຈຳເປັນ ສຳລັບຜູ້ກວດສອບທີ່ຈຳເປັນຕ້ອງເອົາໃຈໃສ່ເປັນພິເສດ, ໂດຍສະເພາະແມ່ນການສໍ້ໂກງ ແລະ ການກິນສິນບົນ.

**ການຄັດເລືອກບໍລິສັດທີ່ປຶກສາກວດສອບບັນຊີ**

ການຄັດເລືອກບໍລິສັດທີ່ປຶກສາກວດສອບບັນຊີລະດັບສາກົນຈະຕອ້ງປະຕິບັດຕາມຂັ້ນຕອນຕາມລະບຽບການທີ່ມີລາຍລະອຽດຢູ່ໃນປື້ມຄູ່ມື ຈັດຊື້-ຈັດຈ້າງ ຢູ່ໃນພາກຂອງ (ການຈັດຈ້າງຊ່ຽວຊານທີ່ປຶກສາ).

**ການກະກຽມສຳລັບການກວດສອບບັນຊີ:**

ພະແນກບໍລິຫານ ແລະ ການເງິນຈະຕອ້ງກະກຽມບົດລາຍງານທາງດ້ານການເງິນ, ບົດລາຍງານການຄຸ້ມເງິນ ແລະ ທຸກເອກະສານທີ່ກ່ຽວຂອ້ງ ທີ່ມີລາຍລະອຽດຢ່າງຄົບຖວ້ນ ເພື່ອກຽມພອ້ມສຳລັບການກວດສອບບັນຊີ.

ຜູ້ກວດສອບຈະເນັ້ນໃສ່ກວດກາ ແລະ ມີຄຳເຫັນກ່ຽວກັບ: (I) ບົດລາຍງານທາງດ້ານການເງິນ, (II) ການເບີກຈ່າຍເງິນຈາກບັນຊີເສດຖືກຕອ້ງ ຕາມລະບຽບທາງດ້ານການເງິນ ແລະ ສັນຍາຂອງໂຄງການ ຫລື ບໍ່ (III) ຄວາມຖືກຕອ້ງເໝາະສົມຂອງເອກກະສານການເບີກຈ່າຍ ແລະ ກວດກາກ່ຽວກັບລະບຽບຂອງການຄຸ້ມເງິນ ເຊິ່ງເປັນພື້ນຖານຂອງການເບີກຈ່າຍ. ບົດລາຍງານການເງິນ, ບົດລາຍງານການ

ກວດສອບ ແລະ ພ້ອມດວ້ຍບົດສັງລວມຄໍາເຫັນຂອງການກວດສອບຈະຕ້ອງສົ່ງເຖິງຜູ້ໃຫ້ທຶນ ພາຍໃນ 6 ເດືອນ ພາຍຫລັງທີ່ປິດສົກປີງົບປະມານ ກອ່ນວັນທີ 31 ເດືອນ ມີນາ ຂອງແຕ່ລະປີ.

ບົດລາຍງານທາງດ້ານການເງິນ ແລະ ບົດລາຍງານການກວດສອບບັນຊີ ຈະຕອ້ງເອົາລົງເປີດກວ້າງ ຢູ່ໃນເວັບໄຊ ຂອງ ທລຍ.

## 9.8 ການກວດສອບພາຍໃນ :

ໜວ່ຍງານກວດສອບພາຍໃນ ຈະຂຶ້ນກັບຜູ້ອໍານວຍການບໍລິຫານ ເປັນຜູ້ຄຸ້ມຄອງບໍລິຫານ ເຊິ່ງຈະປະກອບດ້ວຍພະນັກງານກວດສອບພາຍໃນ ແລະ ຜູ້ຊວ່ຍ. ແລະຈະມີ ຊ່ຽວຊານທີ່ປຶກສາໄລຍະສັ້ນຈາກພາຍນອກ ເພື່ອທີ່ຈະມາຊ່ວຍໃຫ້ສະໜັບສະໜູນໃນການຈັດຕັ້ງປະຕິບັດ. ໜ້າວຽກຂອງການກວດສອບພາຍໃນຈະເຮັດກວດກາກ່ຽວກັບວຽກງານການເງິນ ແລະ ຈັດຊື້-ຈັດຈ້າງ, ນອກຈາກນັ້ນຍັງຈະຕອ້ງປະເມີນກ່ຽວກັບວິທີການຈັດຕັ້ງປະຕິບັດວຽກງານໂຄງການ ໂດຍອີງໃສ່ປື້ມຄູ່ມື ແລະ ລະບຽບຫລັກການຂອງ ທລຍ ແລະ ລະບຽບການຄຸ້ມຄອງ ແລະ ປົກປັກຮັກສາຊັບສິນຂອງໂຄງການ, ອັດຕາກິນ, ເບັ້ຍລ້ຽງ ແລະ ອື່ນໆ. ຈະໄດ້ວ່າຈ້າງຊ່ຽວຊານທີ່ປຶກສາເພື່ອສ້າງຕັ້ງໜ່ວຍງານກວດສອບພາຍໃນຂຶ້ນ.

ຜູ້ກວດສອບພາຍໃນຈະໄປຕິດຕາມວຽກງານຂອງ ທລຍ ຢູ່ຂັ້ນແຂວງ, ຂັ້ນເມືອງ ແລະ ກຸ່ມບ້ານຢ່າງເປັນປະຈໍາເພື່ອຮັບປະກັນວ່າການຈັດຕັ້ງປະຕິບັດໂຄງການໄປຕາມລະລະບົບ, ລະບຽບການທີ່ກໍານົດໄວ້ໃນປື້ມຄູ່ມືການຈັດຕັ້ງປະຕິບັດໂຄງການ, ການຈັດຕັ້ງປະຕິບັດໂຄງການດີ ແລະ ມີພະນັກງານບັນຈຸຢ່າງຄົບຖວ້ນ ແລະ ພອ້ມກັນນັ້ນກໍ່ໄດ້ມີການທົບທວນທາງດ້ານການເງິນ ແລະ ມີເອກກະສານຢັ້ງຢືນການເບີກຈ່າຍ ແລະ ການເກັບມ້ຽນຢ່າງເປັນລະບົບ.

# 10 ການປະມູນຈັດຊື້ ແລະ ການເຊັນສັນຍາ ໂຄງການຍ່ອຍ

## 10.1 ຫລັກການທີ່ສຳຄັນຂອງການປະມູນຈັດຊື້

ສາມຫລັກການພື້ນຖານທີ່ສຳຄັນຂອງການດຳເນີນການປະມູນຈັດຊື້-ຈັດຈ້າງ ມີດັ່ງນີ້:

- ການຈັດຊື້ ກ່ຽວກັບການກໍ່ສ້າງ ສ້ອມແປງ, ຈັດຊື້ສິນຄ້າ, ການບໍລິການ (ທີ່ປຶກສາແລະ ບໍ່ແມ່ນທີ່ປຶກສາ) ແມ່ນຕ້ອງດຳເນີນໄປໃຫ້ມີປະສິດທິພາບສູງ ແລະ ປະຢັດທີ່ສຸດ ເທົ່າທີ່ຈະເປັນໄປໄດ້;
- ຜູ້ເຂົ້າຮ່ວມປະມູນທີ່ມີຄຸນວຸດທິທຸກຄົນ ຈະໄດ້ຮັບໂອກາດເທົ່າທຽມກັນ ແລະ ຮັບຂໍ້ມູນອັນດຽວກັນ ເພື່ອເຂົ້າມາແຂ່ງຂັນ ໃນການສະໜອງສິນຄ້າ, ການກໍ່ສ້າງສ້ອມແປງ, ການບໍລິການ (ທີ່ປຶກສາ ແລະ ບໍ່ແມ່ນທີ່ປຶກສາ);
- ຄວາມໂປ່ງໃສ ມີຄວາມສຳຄັນ ໃນຂະບວນການຂອງການປະມູນຈັດຊື້.

**ຄວາມໂປ່ງໃສ** ເປັນສິ່ງທີ່ສຳຄັນຫລາຍ ໃນຂະບວນການປະມູນຈັດຊື້. ຄວາມໂປ່ງໃສ ໝາຍຄວາມວ່າ ບໍ່ພຽງແຕ່ ການປະຕິບັດຖືກຕ້ອງຕາມແຕ່ລະຂັ້ນຕອນເທົ່ານັ້ນ, ແຕ່ວ່າທຸກຄົນ ສາມາດຕິດຕາມ ແລະ ຮູ້ໄດ້ວ່າຂັ້ນຕອນທີ່ຖືກຕ້ອງ ໃນການປະຕິບັດ.

**ການກຳນົດແຂວງທົດລອງ:**

ໂຄງການຍ່ອຍທັງໝົດ ທີ່ດຳເນີນການຈັດຕັ້ງປະຕິບັດ ຢູ່ໃນແຂວງ ອຸດົມໄຊ ແລະ ຫລວງພະບາງ ຈະຕ້ອງດຳເນີນຢູ່ຂັ້ນບ້ານທີ່ໄດ້ຮັບຜົນປະໂຫຍດ (ຫລື ຂັ້ນກຸ່ມບ້ານ, ຖ້າຫາກໂຄງການຍ່ອຍມີຜົນປະໂຫຍດຮ່ວມກັນຫລາຍບ້ານ). ພະນັກງານ ທລຍ ຈະເປັນຜູ້ໃຫ້ຄຳແນະນຳໃນການດຳເນີນການຈັດຊື້ໃຫ້ແກ່ບ້ານຕາມຄວາມຈຳເປັນ. ພະນັກງານອຳນາດການປົກຄອງຂັ້ນເມືອງ ຈະບໍ່ມີບົດບາດໃນພາກການຈັດຊື້-ຈັດຈ້າງໂຄງການຍ່ອຍເຫລົ່ານີ້.

ການດຳເນີນການຈັດຊື້-ຈັດຈ້າງໂຄງການຍ່ອຍ ໃນ 7 ແຂວງອື່ນ ຂອງ ທລຍ II ຈະຍັງຄົງດຳເນີນການໂດຍຂັ້ນກຸ່ມບ້ານ ຕາມຂໍ້ກຳນົດດັ່ງລຸ່ມນີ້:

- ການເປີດຊອງປະມູນ ຕ້ອງດຳເນີນຢູ່ຂັ້ນເມືອງ ໂດຍການເປີດກວ້າງ ການເຂົ້າຮ່ວມຂອງຄະນະກຳມະການ ການປະມູນຕາງໜ້າຈາກບ້ານ, ພະນັກງານພາກລັດຂັ້ນເມືອງ, ແລະ ພະນັກງານ ທລຍ ຂັ້ນເມືອງ. ຜູ້ສົນໃຈເຂົ້າຮ່ວມຍື່ນຊອງປະມູນ ສາມາດເຂົ້າຮ່ວມເພື່ອເປັນພະຍານໃນການເປີດຊອງປະມູນໄດ້ ຖ້າພວກເຂົາຫາກຕ້ອງການ;
- ການປະເມີນການປະມູນ ແລະ ການຕັດສິນຮັບຮອງເອົາຜູ້ຊະນະການປະມູນ ຈະຕ້ອງດຳເນີນໂດຍຄະນະກຳມະການປະມູນຈາກຂັ້ນບ້ານເທົ່ານັ້ນ, ພາຍໃຕ້ການຊ່ວຍເຫລືອຈາກທີມງານ ທລຍ ຂັ້ນເມືອງເທົ່ານັ້ນ. ບໍ່ໃຫ້ມີພະນັກງານອຳນາດການປົກຄອງທ້ອງຖິ່ນເຂົ້າຮ່ວມເພື່ອ "ສັງເກດການ"

ຫລື ເຂົ້າຮ່ວມໃນການຂັ້ນຕອນການປະເມີນການປະມູນຈັດຊື້ໂຄງການຍ່ອຍ. ຖ້າມີການຕັ້ງຄໍາຖາມທີ່ກ່ຽວກັບດ້ານເຕັກນິກ, ພະນັກງານ ທລຍ ຈະຕ້ອງຮັບປະກັນໃນການໃຫ້ຄວາມກະຈ່າງແຈ້ງທາງດ້ານເຕັກນິກ, ການອໍານວຍຄວາມສະດວກ;

- ການປະເມີນຜົນການປະມູນ ຕ້ອງບໍ່ດໍາເນີນພາຍໃນມື້ດຽວ ຫລື ພາຍໃນສະຖານທີ່ດຽວ ກັນກັບມື້ເປີດຊອງປະມູນ, ແຕ່ສາມາດດໍາເນີນໄດ້ຢູ່ຂັ້ນເມືອງ, ໂດຍອີງໃສ່ຄວາມຕ້ອງການ ຂອງຫ້ອງການ ທລຍ;
- ຜົນຂອງການປະເມີນການປະມູນຈັດຊື້ ຕ້ອງໄດ້ແຈ້ງໃຫ້ແກ່ອໍານາດການປົກຄອງທ້ອງຖິ່ນຂັ້ນເມືອງເພື່ອຮັບຊາບ ແລະ ຕິດຕາມນໍາ;
- ທລຍ ເປັນຜູ້ສະໜັບສະໜູນງົບປະມານໃນການເດີນທາງ ໃຫ້ຜູ້ຕາງໜ້າຄະນະກໍາມະການປະມູນຂັ້ນບ້ານ ເດີນທາງມາຮ່ວມການດໍາເນີນກິດຈະກໍາຢູ່ຂັ້ນເມືອງ (ແລະ ງົບປະມານດັ່ງກ່າວນັ້ນແມ່ນນໍາໃຊ້ ຈາກອົງປະກອບ 2, ບໍ່ແມ່ນນໍາໃຊ້ໃນຮ່ວງງົບປະມານໂຄງການຍ່ອຍທີ່ຈັດສັນໄວ້);
- ການປະມູນຈັດຊື້ແຕ່ລະໂຄງການຍ່ອຍ ຕ້ອງດໍາເນີນບົນພື້ນຖານຂອງຄວາມຕ້ອງການ ແລະ ໃນເວ ລາທີ່ເໝາະສົມ, ແລະ ບໍ່ຈໍາເປັນຕ້ອງລໍຖ້າດໍາເນີນພ້ອມກັນທັງໝົດທຸກໂຄງການຍ່ອຍພາຍໃນເວລາດຽວກັນ ເພື່ອຄວາມສະດວກຂອງຂັ້ນເມືອງ ແລະ ແຂວງ. ດັ່ງນັ້ນ ທລຍ ອາດຕ້ອງກໍານົດແຜນຕາຕະລາງການເຄື່ອນໄຫວຂອງກອງປະຊຸມເປີດຊອງປະມູນ ຢູ່ຂັ້ນເມືອງຫລາຍກວ່າໜຶ່ງເທື່ອ ໃນແຕ່ລະຮອບວຽນ; ແລະ
- ອື່ນໆ ທີ່ກ່ຽວຂ້ອງຕາມການກະກຽມໃນໝວດຕ່າງໆຂ້າງລຸ່ມ ຂອງຄູ່ມືສະບັບນີ້.

**ສໍາລັບແຂວງຜົ້ງສາລີ** ຈະດໍາເນີນຂັ້ນຕອນການປະມູນຈັດຊື້ ໂດຍນໍາໃຊ້ແບບວິທີທີ່ປະສົມປະສານ ອັນໃດນຶ່ງ ລະຫວ່າງ ແຂວງເກົ່າ ແລະ ແຂວງໃໝ່, ການດໍາເນີນຂັ້ນຕອນການປະມູນ ສາມາດດໍາເນີນໄດ້ຢູ່ຂັ້ນເມືອງ ໂດຍນໍາໃຊ້ລະບົບທີ່ນໍາໃຊ້ໃນບັນດາແຂວງເກົ່າ ຫລື ດໍາເນີນຢູ່ຂັ້ນບ້ານ ໂດຍນໍາໃຊ້ລະບົບທີ່ນໍາໃຊ້ໃນບັນດາແຂວງທົດລອງ. ພະນັກງານ ທລຍ ຈະເປັນຜູ້ໃຫ້ຄໍາແນະນໍາ ແລະ ຊ່ວຍເຫລືອ ກ່ຽວກັບການດໍາເນີນຂັ້ນຕອນການປະມູນຈັດຊື້ຕ່າງໆ ໃຫ້ແກ່ທີມງານຊຸມຊົນຕາມຄວາມຈໍາເປັນ.

ຖ້າການທົດລອງນີ້ ພິສູດໃຫ້ເຫັນວ່າປະສົບຄວາມສໍາເລັດ, ວິທີການດັ່ງກ່າວນີ້ ຈະຖືກນໍາໃຊ້ເຂົ້າໃນທຸກແຂວງ ຂອງ ທລຍ ທີ່ໃຫ້ທຶນສະໜັບສະໜູນ ສໍາລັບສອງຮອບວຽນສຸດທ້າຍ.

## 10.2 ຄວາມຮັບຜິດຊອບ ກ່ຽວກັບວຽກງານຈັດຊື້-ຈັດຈ້າງ ຂອງ ທລຍ

### ກ) ຫ້ອງການ ທລຍ ຂັ້ນສູນກາງ:

- ຮັບຜິດຊອບດູແລທຸກຂັ້ນຕອນການປະມູນຈັດຊື້ ຂອງ ທລຍ (ລວມທັງການສັງລວມແຜນຈັດຊື້ຈັດຈ້າງທັງໝົດ);
- ຈັດການຝຶກອົບຮົມຢ່າງສະໝໍ່າສະເໝີ ແລະ ໃຫ້ການແນະນໍາແກ່ພະນັກງານ ທລຍ ຂັ້ນເມືອງ ແລະ ຂັ້ນແຂວງ (ໃນການຊ່ວຍເຫລືອໃຫ້ແກ່ພະນັກງານ ທລຍ ຂັ້ນແຂວງ);
- ຮັບຜິດຊອບໃນການຕິດຕາມທຸກຂັ້ນຕອນຂອງການປະມູນຈັດຊື້;

- ຕິດຕໍ່ພົວພັນ ກັບບັນດາຜູ້ໃຫ້ທຶນ (ສົ່ງແຜນຈັດຊື້-ຈັດຈ້າງ ແລະ ອື່ນໆ);
- ຮັບປະກັນວ່າທຸກການປະມູນຈັດຊື້ ແມ່ນຖືກປະຕິບັດຕາມຂັ້ນຕອນ ແລະ ຖືກຕ້ອງຕາມວິທີການທີ່ໄດ້ກໍານົດໄວ້ ເພື່ອຮັບປະກັນທາງດ້ານການປະຢັດ, ປະສິດທິພາບ ແລະ ຄວາມໂປ່ງໃສ.

**ຂ) ຫ້ອງການ ທລຍ ແຂວງ:**

- ຊ່ວຍຊຸມຊົນທີ່ໄດ້ຮັບຜົນປະໂຫຍດ ໃນການດໍາເນີນກິດຈະກໍາ ແລະ ຕິດຕາມ ຂັ້ນຕອນການປະມູນຈັດຊື້ ແລະ ຄຸ້ມຄອງສັນຍາ;
- ກະກຽມແຜນຈັດຊື້ຈັດຈ້າງໂຄງການຍ່ອຍພາຍໃນແຂວງ;
- ຈັດການຝຶກອົບຮົມຢ່າງສະໝໍ່າສະເໝີໃຫ້ແກ່ພະນັກງານ ທລຍ ຂັ້ນເມືອງ, ຜູ້ຕາງໜ້າຈາກຂະແໜງການທີ່ກ່ຽວຂ້ອງ, ຜູ້ປະສານງານຂັ້ນກຸ່ມ, ຊຸມຊົນ/ທີມງານຈັດຕັ້ງປະຕິບັດຂັ້ນບ້ານ (ກຸ່ມບ້ານຖ້າມີ) ທີ່ມີສ່ວນຮ່ວມໃນການດໍາເນີນການປະມູນຈັດຊື້ໂຄງການຍ່ອຍ.

**ຄ) ຫ້ອງການ ທລຍ ຂັ້ນເມືອງ:**

- ຊ່ວຍເຫລືອ[14] ຊຸມຊົນ/ທີມງານຈັດຕັ້ງປະຕິບັດຂັ້ນບ້ານ ໃນການກຽມທຸກເອກະສານທີ່ກ່ຽວຂ້ອງກັບໂຄງການ ປະກອບດ້ວຍໜັງສືເຊີນເຂົ້າຮ່ວມຍື່ນຊອງປະມູນເພື່ອສົມທຽບລາຄາ, ການປະມູນແບບເປີດກວ້າງພາຍໃນທ້ອງຖິ່ນ, ບົດບັນທຶກການເປີດຊອງປະມູນ, ບົດບັນທຶກການຕັດສິນການປະມູນ, ໃບສັ່ງຊື້, ສັນຍາ, ໃບສັ່ງວຽກ, ບົດລາຍງານຄວາມຄືບໜ້າ ແລະ ອື່ນໆທີ່ກ່ຽວຂ້ອງທາງດ້ານເອກະສານ;
- ກະກຽມແຜນຈັດຊື້ໂຄງການຍ່ອຍຂອງເມືອງ.

ສໍາລັບການຈັດຊື້ເຄື່ອງອຸປະກອນທີ່ມີເຕັກໂນໂລຊີສູງ ແລະ ອຸປະກອນພິເສດ ເຊັ່ນ: ອຸປະກອນທາງການແພດ ຫລື ເຄື່ອງຜະລິດພະລັງງານໄຟຟ້າແສງຕາເວັນ, ຊຶ່ງບໍ່ມີຜູ້ສະໜອງໃນທ້ອງຖິ່ນ ຫລື ຊຸມຊົນໃກ້ຄຽງ, ແຕ່ມີພຽງຜູ້ສະໜອງທີ່ຢູ່ໃນລະດັບຂັ້ນສູນກາງ ທີ່ສາມາດສະໜອງໃຫ້ເຂົາເຈົ້າໄດ້, ການຈັດຊື້ດັ່ງກ່າວ ອາດຈະດໍາເນີນໂດຍຜ່ານຫ້ອງການ ທລຍ ຂັ້ນສູນກາງ ໃນນາມຂອງຊຸມຊົນ. ໃນກໍລະນີດັ່ງກ່າວນີ້, ທີມງານຊຸມຊົນ/ທີມງານຈັດຕັ້ງປະຕິບັດຂັ້ນບ້ານ ຕ້ອງໄດ້ເຮັດໜັງສືມອບສິດໃຫ້ແກ່ຫ້ອງການ ທລຍ ສູນກາງ ເພື່ອດໍາເນີນການປະມູນຈັດຊື້ ແລະ ຈັດສົ່ງໃຫ້ ແລະ ດໍາເນີນການເບີກຈ່າຍເງິນໂດຍກົງໃຫ້ແກ່ຜູ້ສະໜອງສິນຄ້າ

---

[14] ການຊ່ວຍເຫລືອ ບໍ່ໄດ້ໝາຍຄວາມວ່າ ອະນຸຍາດໃຫ້ພະນັກງານ ທລຍ ເມືອງ ເຮັດວຽກທຸກອັນແທນຊຸມຊົນ/ບ້ານ. ແຕ່ຈະເປັນຜູ້ສະໜອງແຈ້ງໃຫ້ຮູ້, ໃຫ້ຄໍາແນະນໍາ ແລະ ຝຶກອົບຮົມໃຫ້ແກ່ຊຸມຊົນ/ບ້ານ.

### 10.3 ໜ້າທີ່ຮັບຜິດຊອບ ຂອງທີມງານຊຸມຊົນ/ທີມງານຈັດຕັ້ງປະຕິບັດຂັ້ນບ້ານ (ທີມງານກຸ່ມບ້ານ, ຖ້າມີ),

ຫລັກການນຶ່ງທີ່ສຳຄັນ ຂອງ ທລຍ ແມ່ນການຊຸກຍູ້ຊາວບ້ານໃຫ້ດຳເນີນການຄຸ້ມຄອງທຶນທີ່ໄດ້ຮັບດ້ວຍຕົນເອງ. ແຕ່ລະຊຸມຊົນເປັນຜູ້ຄັດເລືອກໂຄງການຍ່ອຍເອົາເອງ, ບ້ານເຊັນສັນຍາກັບ ທລຍ (ເອກະສານຊ້ອນທ້າຍ 1.1-1.2 ໃນປຶ້ມຄູ່ມືຈັດຊື້-ຈັດຈ້າງ ສຳລັບຊຸມຊົນ: ເອກະສານຊ້ອນທ້າຍ 1.1 "ສັນຍາສະໜັບສະໜູນທຶນຊ່ວຍເຫລືອ ລະຫວ່າງ ທລຍ ກັບ ຊຸມຊົນ", ເອກະສານຊ້ອນທ້າຍ 1.2 "ຂໍ້ຕົກລົງສະໜັບສະໜູນ ທຶນຊ່ວຍເຫລືອ ລະຫວ່າງ ທລຍ ກັບ ຊຸມຊົນ"). ພະນັກງານ ທລຍ ຂັ້ນເມືອງ, ຂັ້ນແຂວງ ແລະ ທີ່ປຶກສາດ້ານການຈັດຊື້-ຈັດຈ້າງ ເປັນຜູ້ສະໜັບສະໜູນທາງດ້ານເຕັກນິກ ແລະ ສະໜອງການຝຶກອົບຮົມໃຫ້ຊຸມຊົນ ແລະ ຕິດຕາມກວດກາໂດຍອຳນາດການປົກຄອງທ້ອງຖິ່ນ. ຊຸມຊົນເປັນຜູ້ຮັບຜິດຊອບໃນການຈັດຕັ້ງປະຕິບັດໂຄງການຍ່ອຍ ລວມທັງການດຳເນີນຂັ້ນຕອນກິດຈະກຳດ້ານການປະມູນຈັດຊື້, ຄຸ້ມຄອງສັນຍາ, ບຳລຸງຮັກສາໂຄງການຍ່ອຍ, ແລະ ເກັບມ້ຽນເອກະສານຕ່າງໆທີ່ກ່ຽວຂ້ອງ.

**ທີມງານຊຸມຊົນ/ທີມງານຈັດຕັ້ງປະຕິບັດຂັ້ນບ້ານ (ທີມງານຂັ້ນກຸ່ມ, ຖ້າມີ)**

ທີມງານຊຸມຊົນ/ທີມງານຈັດຕັ້ງປະຕິບັດຂັ້ນບ້ານ (ທີມງານກຸ່ມບ້ານ, ຖ້າມີ) ໂດຍໄດ້ຮັບການຊ່ວຍເຫລືອຈາກພະນັກງານ ທລຍ ຂັ້ນເມືອງ ແລະ ຂັ້ນແຂວງ, ຈະເປັນຜູ້ຮັບຜິດຊອບ ສຳລັບ:

- ກຳນົດຄວາມຕ້ອງການເຊັ່ນ: ການຈັດຊື້ສິນຄ້າ (ວັດສະດຸການກໍ່ສ້າງ), ການກໍ່ສ້າງ, ແລະ ການບໍລິການ ສຳລັບໂຄງການຍ່ອຍ;
- ກະກຽມການຄາດຄະເນລາຄາ ສຳລັບໂຄງການຍ່ອຍ;
- ຍື່ນບົດສະເໜີໂຄງການຍ່ອຍ ເພື່ອຂໍອະນຸມັດໃນກອງປະຊຸມຂັ້ນກຸ່ມບ້ານ ແລະ ສະເໜີຕໍ່ໄປຍັງກອງປະຊຸມຂັ້ນເມືອງ ເພື່ອຮັບຮອງເອົາທາງດ້ານເຕັກນິກ;
- ກຽມເອກະສານການປະມູນ ລວມທັງມາດຕາຖານທາງດ້ານເຕັກນິກທີ່ຕ້ອງການ;
- ກຽມໜັງສືເຊີນເຂົ້າຮ່ວມການປະມູນ/ສະເໜີລາຄາ ເພື່ອສົ່ງໃຫ້ຜູ້ສະໜອງສິນຄ້າ ແລະ ຜູ້ຮັບເໝົາ, ຫລື ໜັງສືເຊີນຍື່ນສະແດງເອກະສານສົນໃຈ ສົ່ງໃຫ້ຊ່ຽວຊານທີ່ປຶກສາ (ວິຊາການຊຸມຊົນ);
- ຮັບ ແລະ ປະເມີນການປະມູນ/ໃບສະເໜີລາຄາ ຫລື ການຍື່ນສະເໜີເອກະສານສະແດງຄວາມສົນໃຈໃນການບໍລິການ ເພື່ອເລືອກເອົາລາຄາທີ່ໄດ້ປະເມີນວ່າແມ່ນລາຄາຕ່ຳ ແລະ ຕອບສະໜອງຄົບຖ້ວນສົມບູນ ຕາມເອກະສານປະມູນ/ໜັງສືສະເໜີລາຄາ ຫລື ທີ່ປຶກສາທີ່ດີທີ່ສຸດຕາມລຳດັບ;
- ຕັດສິນມອບສັນຍາ ແລະ ເຊັນສັນຍາ ຫລື ອອກໃບສັ່ງຊື້ ຫລື ໃບສັ່ງວຽກ;
- ຄຸ້ມຄອງການຈັດຕັ້ງປະຕິບັດສັນຍາ;
- ດຳເນີນການເບີກຈ່າຍເງິນ;
- ກຽມບົດລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການຍ່ອຍ;
- ປົກປັກຮັກສາໂຄງການຍ່ອຍ, ທີ່ກ່ຽວພັນກັບເອກະສານ ລວມທັງເອກະສານປະມູນ;

- ກຽມເອກະສານໂຄງການຍ່ອຍທັງຫມົດ ລວມທັງເອກະສານການປະມູນຈັດຊື້ ເພື່ອກຽມພ້ອມໃຫ້ແກ່ການກວດສອບພາຍຫລັງ ລວມທັງການກວດສອບ ຈາກຜູ້ກວດສອບບັນຊີເອກະລາດສໍາລັບການກວດສອບປະຈໍາປີ.

ທີມງານຊຸມຊົນ/ທີມງານຈັດຕັ້ງປະຕິບັດຂັ້ນບ້ານ (ທີມງານຂັ້ນກຸ່ມ, ຖ້າມີ) ແມ່ນປະກອບດ້ວຍ 3 ທ່ານຄັດເລືອກໂດຍສະມາຊິກຊຸມຊົນ/ຊາວບ້ານ ຮັບຜິດຊອບໃນການດໍາເນີນທຸກຂັ້ນຕອນກິດຈະກໍາການປະມູນຈັດຊື້ ແລະ ການບໍລິຫານສັນຍາ ຕາງໜ້າໃຫ້ຊຸມຊົນ/ຊາວບ້ານທຸກຄົນ. ຜູ້ປະສານງານດ້ານການຈັດຕັ້ງປະຕິບັດ, ຜູ້ບໍລິຫານດ້ານການຈັດຊື້-ຈັດຈ້າງ, ຜູ້ບໍລິຫານດ້ານການເງິນ. ທີມງານຢ່າງໜ້ອຍຕ້ອງປະກອບມີຜູ້ຍິງ 1 ທ່ານ ແລະ ຈາກຊົນເຜົ່າສ່ວນນ້ອຍ 1 ທ່ານ, ແລະ ໜຶ່ງໃນ 3 ທ່ານ ຕ້ອງສາມາດອ່ານອອກ ແລະ ຂຽນໄດ້.

ສະມາຊິກຂອງທີມງານຊຸມຊົນ/ທີມງານຈັດຕັ້ງປະຕິບັດຂັ້ນບ້ານ (ທີມງານຂັ້ນກຸ່ມບ້ານ, ຖ້າມີ) ແມ່ນມີຄວາມຮັບຜິດຊອບດັ່ງລຸ່ມນີ້:

## I. <u>ຜູ້ປະສານງານການຈັດຕັ້ງປະຕິບັດຂັ້ນບ້ານ (ຫົວໜ້າທີມງານ) ຈະມີໜ້າທີ່ຮັບຜິດຊອບ ດັ່ງຕໍ່ໄປນີ້:</u>

### ກ. ວຽກທົ່ວໄປ

- ປະສານສົມທົບ ກ່ຽວກັບວຽກງານຈັດຕັ້ງປະຕິບັດກິດຈະກໍາໂຄງການຍ່ອຍ ລວມທັງວຽກງານຈັດຊື້-ຈັດຈ້າງ, ບໍລິຫານການເງິນ, ຕິດຕາມ, ການຈັດຕັ້ງປະຕິບັດ, ການດໍາເນີນງານ, ແລະການບົວລະບັດຮັກສາ;
- ອໍານວຍຄວາມສະດວກ ແລະ ປະສານສົມທົບກັບສະມາຊິກທີມງານຈັດຕັ້ງປະຕິບັດຂັ້ນບ້ານຄົນອື່ນໃນໄລຍະການຈັດຕັ້ງປະຕິບັດໂຄງການຍ່ອຍ;
- ເຮັດວຽກຢ່າງໃກ້ສິດ ຮ່ວມກັບຜູ້ປະສານງານການຈັດຊື້-ຈັດຈ້າງ ຂັ້ນບ້ານ, ແລະ ຜູ້ປະສານງານການບໍລິຫານການເງິນ ຂັ້ນບ້ານ;
- ເຮັດວຽກຢ່າງໃກ້ສິດ ຮ່ວມກັບທີມງານຮັບຄໍາຄິດຄໍາເຫັນ ແລະ ແກ້ໄຂຂໍ້ຂັດແຍ່ງ ໃນໄລຍະເວລາການຈັດຕັ້ງປະຕິບັດໂຄງການຍ່ອຍ;
- ຮັບຜິດຊອບວຽກອື່ນໆ ຕາມການມອບໝາຍຈາກຊຸມຊົນ.

### ຂ. ວຽກຈັດຊື້-ຈັດຈ້າງ

- ປະສານສົມທົບກັບສະມາຊິກພາຍໃນທີມງານ ແລະ ຊຸມຊົນ ໃນການກະກຽມ ແລະ ກໍານົດບົດສະເໜີໂຄງການຍ່ອຍໃຫ້ສໍາເລັດສົມບູນ;
- ປະສານສົມທົບກັບອໍານາດການປົກຄອງທ້ອງຖິ່ນ ແລະ ຫ້ອງການພາກສ່ວນອື່ນໆທີ່ກ່ຽວຂ້ອງເຂົ້າຮ່ວມຕິດຕາມຂັ້ນຕອນຂະບວນການປະມູນ;
- ລົງນາມໃນສັນຍາ/ອອກໃບສັ່ງຊື້.

ຄ. ວຽກບໍລິຫານການເງິນ

- ອະນຸມັດການເບີກຈ່າຍໂຄງການຍ່ອຍ;
- ກວດກາ ແລະ ຢັ້ງຢືນບົດລາຍງານຄວາມຄືບໜ້າຂອງວຽກ ສຳລັບສະເໜີຂໍເບີກຈ່າຍເງິນງວດຕໍ່ໄປ;
- ກວດກາ ແລະ ຢັ້ງຢືນການເບີກຈ່າຍເງິນແຕ່ລະງວດ;
- ກວດກາ ແລະ ຢັ້ງຢືນບົດລາຍງານດ້ານການເງິນ ກ່ອນສົ່ງໃຫ້ຫ້ອງການ ທລຍ;
- ຈັດກອງປະຊຸມລາຍງານການເບີກຈ່າຍປະຈຳງວດປົກກະຕິ.

ງ. ວຽກຈັດຕັ້ງປະຕິບັດໂຄງການຍ່ອຍ/ການຊີ້ນຳ/ການບຳລຸງຮັກສາ

- ຊຸກຍູ້ຊຸມຊົນ ເພື່ອໃຫ້ເຂົາເຈົ້າເຫັນດີເປັນເອກະພາບກັບກົດລະບຽບໃນການຄຸ້ມຄອງ, ແລະ ບົວລະບັດຮັກສາໂຄງການຍ່ອຍ;
- ຊຸກຍູ້ຊຸມຊົນ ເພື່ອຮັບປະກັນການໃຫ້ມີການຊຳລະເງິນຢ່າງເປັນປົກກະຕິ ສຳລັບຄ່າບົວລະບັດຮັກສາ ຕາມທີ່ໄດ້ຕົກລົງກັນໄວ້ຕໍ່ຄົວເຮືອນ;
- ຊຸກຍູ້ຊຸມຊົນ ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງ ແລະ ການປະກອບສ່ວນຂອງຊຸມຊົນເຂົ້າໃນໂຄງການຍ່ອຍ ໃຫ້ທັນກັບເວລາໃນການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາທີ່ກ່ຽວຂ້ອງກັບໂຄງການຍ່ອຍ;
- ປະສານສົມທົບກັບຊຸມຊົນ, ອຳນາດການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງໃນການວາງແຜນ ສຳລັບລະບົບການບຳລຸງຮັກສາໃນອານາຄົດ.
- ຊຸກຍູ້ຊຸມຊົນ ເພື່ອຮັບປະກັນໃຫ້ເຂົາເຈົ້າມີສ່ວນຮ່ວມໃນກິດຈະກຳການບົວລະບັດຮັກສາໂຄງການຍ່ອຍ;
- ຈັດກອງປະຊຸມພົບປະຊາວບ້ານໃຫ້ເປັນປົກກະຕິ ເພື່ອລາຍງານການນຳໃຊ້ເງິນທຶນເຂົ້າໃນການບົດລະບັດຮັກສາໂຄງການຍ່ອຍ.

II. **<u>ຜູ້ປະສານງານຈັດຊື້-ຈັດຈ້າງຂັ້ນບ້ານ</u>** ພາຍໃຕ້ການແນະນຳ ຈາກພະນັກງານ ທລຍ ເມືອງ ແລະ ແຂວງ ຈະມີໜ້າທີ່ຮັບຜິດຊອບ ດັ່ງຕໍ່ໄປນີ້:

- ກຽມຮ່າງເອກະສານການປະມູນ/ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ/ໜັງສືເຊີນຍື່ນເອກະສານສະແດງຄວາມສົນໃຈ ໂດຍອີງຕາມຕົວແບບມາດຕະຖານທີ່ກຳນົດໄວ້ໃນເອກະສານຊ້ອນທ້າຍ ໃນຄູ່ມືສະບັບນີ້;
- ກວດກາຄືນຂໍ້ກຳນົດມາດຕະຖານເຕັກນິກທີ່ຕ້ອງການ ແລະ ຄວາມຕ້ອງການອື່ນໆ;
- ກຽມຮ່າງບົດລາຍງານການປະເມີນຜົນການປະມູນ ແລະ ຮັບປະກັນວ່າໄດ້ຮັບການອະນຸມັດຈາກຫ້ອງການ ທລຍ ແຂວງ ກ່ອນທີ່ຈະເຊັນສັນຍາກັບຜູ້ທີ່ຖືກຄັດເລືອກໃຫ້ເປັນຜູ້ຊະນະການປະມູນ ຫລື ໄດ້ຮັບອະນຸມັດ ຈາກຫ້ອງການ ທລຍ ສູນກາງ ຫລື ທະນາຄານໂລກໃນກໍລະນີ ຫາກສັນຍາຖືກກຳນົດໃຫ້ເປັນການກວດສອບກ່ອນການຈັດຕັ້ງປະຕິບັດ;

- ຕິດປະກາດແຈ້ງການປະມູນ ຫລື ແຈ້ງເຊີນຍື່ນເອກະສານສະແດງຄວາມສົນໃຈ ໃນການບໍລິການດ້ານຊ່ຽວຊານ;
- ກຽມເອກະສານການປະມູນ;
- ເກັບກຳບັນຊີລາຍຊື່ ແລະ ທີ່ຢູ່ ຂອງຜູ້ຮັບເໝົາ, ຜູ້ສະໜອງສິນຄ້າ, ຊ່ຽວຊານທີ່ປຶກສາ ທີ່ໄດ້ສົ່ງໜັງສືເຊີນເຂົ້າຮ່ວມການປະມູນ ຫລື ຍື່ນສະແດງຄວາມສົນໃຈ;
- ເກັບຮັກສາເອກະສານໂຄງການຍ່ອຍທັງໝົດ ລວມທັງເອກະສານການປະມູນຈັດຊື້. ເອກະສານສະບັບຕົ້ນ ແມ່ນເກັບຮັກສາມ້ຽນໄວ້ໃນຫ້ອງການ ທລຍ ເມືອງ ແລະ ສຳເນົາເອກະສານທີ່ຈຳເປັນ ເກັບມ້ຽນໄວ້ຫ້ອງການບ້ານ/ກຸ່ມບ້ານ ເພື່ອຕິດຕາມ ແລະ ກວດກາຄວາມຄືບໜ້າໂຄງການຍ່ອຍ;
- ເປັນຜູ້ຮັບຜິດຊອບໃນຂັ້ນຕອນການລົງທະບຽນ ສຳລັບຜູ້ຮັບເໝົາ/ຜູ້ສະໜອງສິນຄ້າ;
- ເປັນຜູ້ຮັບ ແລະ ບັນທຶກການຮັບຊອງປະມູນ/ໃບສະເໜີລາຄາ ຫລື ການຍື່ນເອກະສານສະແດງຄວາມສົນໃຈ;
- ເປັນຜູ້ບັນທຶກ ໃນເວລາເປີດຊອງປະມູນ;
- ເປັນຜູ້ໃຫ້ການຊ່ວຍເຫລືອທີ່ຈຳເປັນ ແລະ ຕ້ອງການ ໃນໄລຍະກອງປະຊຸມຝຶກອົບຮົມການຈັດຊື້, ແລະ ກອງປະຊຸມອື່ນໆ ຊຶ່ງຈັດຂຶ້ນໂດຍຫ້ອງການ ທລຍ.
- ຮັບຜິດຊອບວຽກອື່ນໆ ຂອງທີມງານຊຸມຊົນ/ທີມງານຈັດຕັ້ງປະຕິບັດຂັ້ນບ້ານ (ທີມງານກຸ່ມບ້ານ, ຖ້າມີ) ຮ່ວມກັບສະມາຊິກອື່ນໆ.

III. <u>ຜູ້ປະສານງານການເງິນຂັ້ນບ້ານ ຈະມີໜ້າທີ່ຮັບຜິດຊອບ ດັ່ງຕໍ່ໄປນີ້:</u>

- ຄຸ້ມຄອງງົບປະມານໂຄງການຍ່ອຍ ທີ່ໄດ້ຮັບອະນຸມັດຈາກ ທລຍ ແລະ ການເບີກຈ່າຍ;
- ປະສານສົມທົບກັບທີມງານຂັ້ນບ້ານ ໃນການກະກຽມງົບປະມານບໍລິຫານ ແລະ ຄຸ້ມຄອງໂຄງການຍ່ອຍ;
- ສະຫລຸບລາຍຈ່າຍເງິນບໍລິຫານ ແລະ ເງິນຄຸ້ມຄອງໂຄງການຍ່ອຍ;
- ກະກຽມການເບີກຈ່າຍເງິນບໍລິຫານໂຄງການຍ່ອຍແຕ່ລະງວດ ແລະ ກະກຽມໃບສັ່ງຈ່າຍ;
- ກະກຽມບົດລາຍງານຄວາມຄືບໜ້າການໃຊ້ຈ່າຍເງິນໂຄງການຍ່ອຍ ແລະ ສົ່ງໃຫ້ຫົວໜ້າທີມງານຈັດຕັ້ງປະຕິບັດຂັ້ນບ້ານ ເພື່ອຢັ້ງຢືນ ແລະ ສົ່ງໃຫ້ຫ້ອງການ ທລຍ ຕາມກຳນົດເວລາ;
- ຕ້ອງຮັບປະກັນ ທຸກລາຍການເບີກຈ່າຍ ແມ່ນໄດ້ຮັບການອະນຸມັດ ຈາກຫົວໜ້າທີມງານຈັດຕັ້ງປະຕິບັດຂັ້ນບ້ານ;
- ລາຍງານວຽກງານການເງິນ ໃນກອງປະຊຸມສະຫລຸບເງິນປະຈຳງວດ;
- ເດີນທາງໄປທະນາຄານ ເພື່ອຖອນເງິນ ຫລື ໂອນເງິນ ໃຫ້ຜູ້ຮັບເໝົາ, ຜູ້ສະໜອງສິນຄ້າ ແລະ ອື່ນໆ;
- ເກັບຮັກສາເອກະສານການເງິນຕ່າງໆ ເພື່ອການກວດສອບ ຂອງພະນັກງານ ທລຍ, ຜູ້ໃຫ້ທຶນ ແລະ ຜູ້ກວດສອບອື່ນໆ.

ໃນກໍລະນີ, ໂຄງການຍ່ອຍທີ່ມີຜົນປະໂຫຍດຮ່ວມກັນຫລາຍກ່ວາໜຶ່ງຊຸມຊົນ/ບ້ານ (ລະຫວ່າງຊຸມຊົນ/ບ້ານ) ຫລື ຊຸມຊົນ ບໍ່ມີສະມັກຊິກຊຸມຊົນພຽງພໍ ຜູ້ທີ່ສາມາດອ່ານອອກ ແລະ ຂຽນໄດ້ ເພື່ອປະກອບເຂົ້າໃນທີມງານຊຸມຊົນ/ທີມງານຈັດຕັ້ງປະຕິບັດຂັ້ນບ້ານ, ທີມງານກຸ່ມບ້ານ ຈຶ່ງຈະຖືກສ້າງຕັ້ງຂຶ້ນ ແລະ ເປັນຜູ້ຊ່ວຍໃຫ້ແກ່ທີມງານຊຸມຊົນ/ບ້ານ ໃນການດໍາເນີນກິດຈະກໍາການປະມູນຈັດຊື້ທັງຫມົດ. ທີມງານກຸ່ມບ້ານນີ້ຄວນຈະປະກອບດ້ວຍ 3 ຫາ 5 ສະມາຊິກ ໃນນັ້ນຢ່າງຫນ້ອຍຕ້ອງມີ 1 ສະມາຊິກທີ່ເປັນແມ່ຍິງ, 1 ສະມາຊິກ ຕ້ອງເປັນຜູ້ທີ່ສາມາດອ່ານອອກ ແລະ ຂຽນໄດ້, ຈາກກຸ່ມຊົນເຜົ່າສ່ວນນ້ອຍ, ແລະ 1 ສະມາຊິກຈາກແຕ່ລະຊຸມຊົນ/ບ້ານ ທີ່ໄດ້ຮັບປະໂຫຍດ. ທີມງານຈັດຕັ້ງປະຕິບັດຂັ້ນບ້ານ ຈະໄດ້ຮັບການຝຶກອົບຮົມ ແລະ ໃຫ້ການແນະນໍາໃນການດໍາເນີນການປະມູນຈັດຊື້ ແລະ ຈັດຕັ້ງປະຕິບັດ ຈາກພະນັກງານ ທລຍ ຂັ້ນເມືອງ ແລະ ຂັ້ນແຂວງ.

## 10.4 ການຝຶກອົບຮົມ ກ່ຽວກັບການຈັດຊື້-ຈັດຈ້າງ

ຫລັງຈາກທີມງານຊຸມຊົນ/ທີມງານຈັດຕັ້ງປະຕິບັດຂັ້ນບ້ານ (ທີມງານກຸ່ມ, ຖ້າມີ) ໄດ້ຖືກສ້າງຕັ້ງຂຶ້ນ, ພະນັກງານ ທລຍ ຈະຈັດການຝຶກອົບຮົມຂຶ້ນ ເປັນໄລຍະເວລາ 1-2 ມື້ ເພື່ອຮັບປະກັນໃຫ້ຊຸມຊົນ ເຂົ້າໃຈຢ່າງເລິກເຊິ່ງ ແລະສາມາດປະຕິບັດຕາມລະບຽບຫລັກການ ແລະ ຄໍາແນະນໍາ ທີ່ໄດ້ກ່າວຂ້ອງໃນການປະມູນຈັດຊື້ ແລະ ປະຕິບັດຕາມໜ້າທີ່ທີ່ໄດ້ຮັບມອບໝາຍ. ສໍາລັບລາຍລະອຽດກ່ຽວກັບຫົວຂໍ້ການຝຶກອົບຮົມ ແລະ ວິທີການຈັດຕັ້ງປະຕິບັດ ແມ່ນໄດ້ກໍານົດໄວ້ໃນຄູ່ມືຈັດຊື້-ຈັດຈ້າງສໍາລັບຊຸມຊົນ (ຫົວຂໍ້ທີ່ V).

## 10.5 ປະເພດຂອງການຈັດຊື້-ຈັດຈ້າງ

ມີ 3 ປະເພດການຈັດຊື້-ຈັດຈ້າງຕົ້ນຕໍ ທີ່ນໍາໃຊ້ພາຍໃຕ້ໂຄງການຍ່ອຍ ເຊິ່ງແມ່ນ: ການກໍ່ສ້າງສ້ອມແປງ, ການຈັດຊື້ສິນຄ້າ (ລວມທັງອຸປະກອນ ແລະ ວັດສະດຸກໍ່ສ້າງ) ແລະ ການບໍລິການທີ່ປຶກສາ. ສັນຍາທີ່ໄດ້ຮັບຈາກການຈັດຊື້ທັງ 3 ປະເພດນີ້ ໝາຍເຖິງສັນຍາ: ການກໍ່ສ້າງສ້ອມແປງ, ການສັ່ງຊື້, ແລະ ການບໍລິການທີ່ປຶກສາ.

**(ກ).** **<u>ສັນຍາການກໍ່ສ້າງສ້ອມແປງ</u>** ແມ່ນສໍາລັບການກໍ່ສ້າງສ້ອມແປງຊັບສິນຄົງທີ່ ເຊັ່ນ: ໂຮງຮຽນ, ສຸກສາລາ, ເສັ້ນທາງຊົນນະບົດຂະໜາດນ້ອຍ, ຂົວ, ຊົນລະປະທານຂະໜາດນ້ອຍ, ແລະ ອື່ນໆ ບາງຄັ້ງສັນຍາການກໍ່ສ້າງສ້ອມແປງ ອາດຈະປະກອບມີການສະໜອງອຸປະກອນສະເພາະໃດໜຶ່ງ, ວັດສະດຸການກໍ່ສ້າງ, ຄ່າແຮງງານ, ການບໍລິການທີ່ບໍ່ແມ່ນທີ່ປຶກສາ (ການອອກແບບ, ການເຈາະນໍ້າບາດານ ແລະ ອື່ນໆ) ແລະ ຄ່າໃຊ້ຈ່າຍອື່ນໆ. ສັນຍາການກໍ່ສ້າງສ້ອມແປງ ແມ່ນຈັດຕັ້ງປະຕິບັດໂດຍ**ຜູ້ຮັບເໝົາ.**

**(ຂ).** **<u>ການສັ່ງຊື້</u>** ນໍາໃຊ້ ເພື່ອຈັດຊື້ສິນຄ້າໃດໜຶ່ງ, ວັດສະດຸການກໍ່ສ້າງ ຫລື ອຸປະກອນ. **ຜູ້ສະໜອງສິນຄ້າ** ຈະສະໜອງສິນຄ້າໃຫ້ແກ່ໂຄງການຂອງຊຸມຊົນ. ໃນເວລາສິນຄ້າໄດ້ຖືກຈັດສົ່ງໃຫ້ຊຸມຊົນສໍາ ເລັດແລ້ວ, ຊຸມຊົນຈະຕ້ອງຈ່າຍເງິນໃຫ້ຜູ້ສະໜອງສິນຄ້າ ຫລັງຈາກການຈັດຊື້ໄດ້ຖືກຮັບຮອງວ່າສໍາເລັດ.

(ຄ). **<u>ສັນຍາການບໍລິການທີ່ປຶກສາ</u>** ແມ່ນສຳລັບວ່າຈ້າງຊ່ຽວຊານ (ບຸກຄົນໃດໜຶ່ງ ຫລື ອົງການຈັດຕັ້ງໃດໜຶ່ງ) ເພື່ອສະໜອງການຊ່ວຍເຫລືອ ກ່ຽວກັບການພັດທະນາບົດສະເໜີໂຄງການຍ່ອຍ, ດຳເນີນການສຶກສາດ້ານການຕະຫລາດ, ສຳຫລວດ ແລະ ອອກແບບການກໍ່ສ້າງໂຄງການພື້ນຖານດ້ານໂຄງລ່າງ ແລະ ອື່ນໆ.

**10.6 ວິທີການຈັດຊື້-ຈັດຈ້າງ**

**ກ. ວິທີການຈັດຊື້ ສຳລັບ ການກໍ່ສ້າງສ້ອມແປງ ແລະ ຈັດຊື້ສິນຄ້າ ມີດັ່ງນີ້:**

1. **<u>ການປະມູນແບບເປີດກວ້າງພາຍໃນທ້ອງຖິ່ນ (Local Bidding) ສຳລັບການຈັດຊື້ສິນຄ້າ ແລະ ການກໍ່ສ້າງ</u>**

ວິທີການແບບນີ້ ຈະຖືກນຳໃຊ້ ໃນເວລາທີ່ມູນຄ່າສັນຍາມີມູນຄ່າຫລາຍກວ່າ 50,000 ໂດລາສະຫະລັດ. ການປະກາດແຈ້ງການປະມູນ/ການແຈ້ງເຊີນເຂົ້າຮ່ວມປະມູນ ຄວນຈະປະກາດອອກທາງໂທລະໂຂ່ງ, ວິທະຍຸ/ໂທລະພາບ ແລະ ໜັງສືພິມທ້ອງຖິ່ນ ຖ້າມີທາງເປັນໄປໄດ້, ຕິດປະກາດຢູ່ກະດານຂ່າວຂອງຊຸມຊົນ/ບ້ານ, ຫ້ອງການເມືອງ ແລະ ຫ້ອງການແຂວງ (ວິທີການນີ້ ແມ່ນຄ້າຍຄືກັບການປະມູນແບບເປີດກວ້າງພາຍໃນ (NCB), ຍົກເວັ້ນແຕ່ ບໍ່ໄດ້ຖືກກຳນົດໃຫ້ລົງປະກາດໂຄສະນາໃນໜັງສືພິມ ທີ່ພິມອອກຈຳໜ່າຍທີ່ສູນກາງ ແລະ ໄຫລວຽນໄປທົ່ວປະເທດ). ຜູ້ສະໜອງສິນຄ້າ ແລະ ຜູ້ຮັບເໝົາກໍ່ສ້າງ ທີ່ເປັນເປົ້າໝາຍ ແມ່ນຜູ້ທີ່ຢູ່ໃນເຂດໃກ້ຄຽງຂອງຊຸມຊົນທີ່ໄດ້ຮັບປະໂຫຍດ ແລະ ແຂດແດນໃກ້ຄຽງກັນ. ຢ່າງໜ້ອຍຕ້ອງໄດ້ປະກາດ **<u>30 ວັນ</u>** ນັບແຕ່ມື້ອອກປະກາດແຈ້ງການໂຄສະນາການປະມູນ ຫລື ນັບແຕ່ມື້ທີ່ເອກະສານການປະມູນກຽມພ້ອມທີ່ຈະແຈກຢາຍ ໂດຍຖືເອົາອັນສຸດທ້າຍເປັນຫລັກ ເພື່ອໃຫ້ບັນດາຜູ້ເຂົ້າຮ່ວມການປະມູນທີ່ໄດ້ຮັບຊອງປະມູນ ສາມາດກະກຽມເອກະສານປະມູນຂອງເຂົາເຈົ້າ. ຊອງປະມູນ ຕ້ອງໄດ້ເປີດຢູ່ຕໍ່ໜ້າສາທາລະນະທັນທີ ຫລັງຈາກມື້ທີ່ກຳນົດເປັນມື້ປິດຮັບຊອງປະມູນ ແລະ ຢູ່ຕໍ່ໜ້າສະມາຊິກຊຸມຊົນ ແລະ ຜູ້ເຂົ້າຮ່ວມປະມູນທີ່ສົນໃຈເຂົ້າຮ່ວມໃນກອງປະຊຸມເປີດຊອງປະມູນ. ເອກະສານປະມູນທຸກຊອງ ຈະຖືກກວດກາ ເພື່ອຢັ້ງຢືນຄວາມຖືກຕ້ອງ ແລະ ຖືກຕາມເງື່ອນໄຂຂໍ້ກຳນົດ ແລະ ເປັນຜູ້ທີ່ມີຄຸນວຸທິຕໍ່າສຸດ ຕາມທີ່ໄດ້ກຳນົດໄວ້ໃນເອກະສານການປະມູນ (ປະສົບການ, ຄຸນນະພາບຂອງການກໍ່ສ້າງ, ເຄື່ອງອຸປະກອນ, ການບໍລິການທີ່ສະໜອງໃຫ້, ແລະ ວັນທີສົ່ງມອບ). ເອກະສານປະມູນທີ່ຕອບສະໜອງຕາມເງື່ອນໄຂຄວາມຕ້ອງການຂັ້ນຕໍ່າສຸດ ຕາມທີ່ລະບຸໄວ້ໃນເອກະສານປະມູນ ແມ່ນຍັງຈະຮັກສາໄວ້ເພື່ອປະເມີນຜົນຕໍ່ໄປ ແລະ ເອກະສານປະມູນທີ່ຕອບສະໜອງຕາມເງື່ອນໄຂຄວາມຕ້ອງການຕໍ່າສຸດ ແລະ ສະເໜີລາຄາທີ່ປະເມີນວ່າຕໍ່າສຸດ ຈະເປັນຜູ້ທີ່ຖືກຄັດເລືອກມອບສັນຍາໃຫ້. ການຕັດສິນ ແລະ ມູນຄ່າສັນຍາ ຈະຕ້ອງໄດ້ແຈ້ງໃຫ້ຜູ້ເຂົ້າຮ່ວມປະມູນທຸກຄົນຊາບ ແລະ ແຈ້ງປະກາດຕໍ່ສາທາລະນະ ຢູ່ບ່ອນທີ່ໄດ້ໂຄສະນາ/ແຈ້ງເຊີນການປະມູນຜ່ານມາ.

## 2. ການປະມູນແບບສົມທຽບລາຄາ (Shopping) ສໍາລັບການຈັດຊື້ສິນຄ້າ ແລະ ການກໍ່ສ້າງ

ວິທີການແບບນີ້ ຈະຖືກນໍາໃຊ້ ໃນເວລາທີ່ມູນຄ່າສັນຍາມີມູນຄ່າໜ້ອຍກ່ວາ 50,000 ໂດລາສະຫະລັດ. ໜັງສືສະເໜີລາຄາ ຕ້ອງໄດ້ມາຈາກຢ່າງໜ້ອຍ 3 ຜູ້ສະໜອງສິນຄ້າ ຫລື ຜູ້ຮັບເໝົາກໍ່ສ້າງ ທີ່ມີຄຸນວຸດທິ. ຖ້າແມ່ນແບບການສົມທຽບລາຄາ ສໍາລັບການກໍ່ສ້າງສ້ອມແປງ, ເອກະສານປະມູນ ຕ້ອງໄດ້ອະທິບາຍ ກ່ຽວກັບຂອບເຂດຂອງໜ້າວຽກດັ່ງກ່າວ, ລະບຸຂໍ້ກໍານົດລະອຽດມາດຕະຖານເຕັກນິກ ແລະ ອາດປະກອບດ້ວຍແຜນພັງຮູບແຕ້ມ, ການປະກາດແຈ້ງການປະມູນ ແມ່ນບໍ່ໄດ້ກໍານົດໃຫ້ມີ, ແຕ່ໜັງສືແຈ້ງເຊີນໃຫ້ຍື່ນໃບສະເໜີລາຄາ ຕ້ອງສົ່ງໃຫ້ຜູ້ເຂົ້າຮ່ວມປະມູນ ທີ່ມີຄຸນວຸດທິຈໍານວນຫລາຍເທົ່າທີ່ຈະເປັນໄປໄດ້ (ປົກກະຕິແມ່ນ 5 ຫາ 6 ຜູ້ສະໜອງສິນຄ້າ) ເພື່ອຮັບປະກັນໃຫ້ໄດ້ຢ່າງໜ້ອຍ 3 ໃບສະເໜີລາຄາ ເພື່ອມາສົມທຽບກັນ. ນອກເໜືອໄປຈາກການສົ່ງໜັງສືເຊີນເຂົ້າຮ່ວມປະມູນສົມທຽບລາຄາຫາຜູ້ທີ່ມີຄຸນວຸດທິໂດຍກົງແລ້ວ, ການແຈ້ງການປະມູນ ອາດຖືກພິຈາລະນາ ໂດຍການແຈ້ງປະກາດການປະມູນອອກທາງໂທລະໂຄ່ງ/ໂທລະພາບ ບ່ອນໃດທີ່ເປັນໄປໄດ້, ຕິດປະກາດຢູ່ກະດານຂ່າວ ຂອງຫ້ອງການຂອງຊຸມຊົນ/ບ້ານ, ຫ້ອງວ່າການເມືອງ ແລະ ແຂວງ. ຢ່າງໜ້ອຍຕ້ອງໄດ້ປະກາດ **15 ວັນ** ນັບແຕ່ມື້ແຈ້ງເຊີນເຂົ້າຮ່ວມສົມທຽບລາຄາ (ຫລື ນັບແຕ່ມື້ລົງປະກາດແຈ້ງການປະມູນ, ຖ້າມີ) ເພື່ອໃຫ້ບັນດາຜູ້ເຂົ້າຮ່ວມປະມູນມີເວລາພຽງພໍ ໃນການກະກຽມເອກະສານສະເໜີລາຄາຂອງເຂົາເຈົ້າ. ໜັງສືສະເໜີລາຄາ ຈະຕ້ອງເປີດຢູ່ຕໍ່ໜ້າສາທາລະນະ ຫລັງຈາກມື້ທີ່ກໍານົດໃຫ້ເປັນມື້ປິດຮັບຊອງປະມູນ ແລະ ຢູ່ຕໍ່ໜ້າສະມາຊິກຊຸມຊົນ ແລະ ຜູ້ເຂົ້າຮ່ວມປະມູນທີ່ສົນໃຈເຂົ້າຮ່ວມໃນກອງປະຊຸມເປີດຊອງປະມູນ. ອີງຕາມລະບຽບຫັລກທົ່ວໄປແລ້ວ, ຜູ້ສະໜອງສິນຄ້າ ຫລື ຜູ້ຮັບເໝົາກໍ່ສ້າງ ຜູ້ທີ່ສະເໜີລາຄາຕໍ່າສຸດ ແລະ ຕອບສະໜອງຕາມຄວາມຕ້ອງການ ຕາມຂໍ້ກໍານົດທາງດ້ານຄຸນວຸທິ ທີ່ກໍານົດໄວ້ໃນເອກະສານການປະມູນແລ້ວ ຈະໄດ້ຮັບການອານຸມັດມອບສັນຍາ. ຜົນການຕັດສິນ ແລະ ມູນຄ່າສັນຍາ ຕ້ອງແຈ້ງໃຫ້ຜູ້ເຂົ້າຮ່ວມປະມູນທຸກຄົນຊາບ ແລະ ປະກາດອອກສູ່ສາທາລະນະ ແລະ ຕິດຢູ່ໃນບ່ອນທີ່ໄດ້ເຄີຍຕິດປະກາດໂຄສະນາ/ໜັງສືແຈ້ງເຊີນເຂົ້າຮ່ວມປະມູນຜ່ານມາ.

## 3. ການປະມູນແບບຈັດຊື້ໂດຍກົງ (Direct contracting)

ການເຮັດສັນຍາໂດຍກົງ ສາມາດເຮັດໄດ້ກັບຜູ້ສະໜອງສິນຄ້າ ຫລື ຜູ້ຮັບເໝົາກໍ່ສ້າງ ທີ່ໄດ້ຮັບການຄັດເລືອກ ໂດຍບໍ່ມີການແຂ່ງຂັນ ຕາມວິທີການປະມູນຕ່າງໆ ທີ່ໄດ້ກ່າວມາຂ້າງເທິງ. ວິທີການນີ້ ແມ່ນນໍາໃຊ້ໃນກໍລະນີທີ່ມີພຽງແຕ່ແຫລ່ງດຽວເທົ່ານັ້ນ. ເຫດຜົນອື່ນໆ ທີ່ສາມາດເຮັດສັນຍາໂດຍກົງໄດ້ ປະກອບມີ: ຄວາມຮີບດ່ວນ, ຄວາມຕ້ອງການ ເພື່ອຮັບຮອງເອົາເຕັກໂນໂລຊີສະເພາະໃດໜຶ່ງ ຫລື ການສັ່ງຊື້ເພີ້ມເຕີມ. ມູນຄ່າສັນຍາທີ່ຕົກລົງກັນ ຄວນຈະແມ່ນອັດຕາລາຄາໃນທ້ອງຕະຫລາດໃນທ້ອງຖິ່ນ ຫລື ການກໍານົດລາຄາຄາດຄະເນ ຕ້ອງແມ່ນລາຄາທີ່ກໍານົດໄວ້ໃນຂໍ້ມູນຫົວໜ່ວຍລາຄາຂອງໂຄງການ. ພາຍໃຕ້ວິທີການນີ້, ມູນຄ່າສັນຍາສາມາດຕໍ່ລອງໄດ້. ການເຮັດສັນຍາໂດຍກົງນີ້ ຈະຕ້ອງໄດ້ຮັບການອະນຸມັດ ຈາກຫ້ອງການ ທລຍ ສູນກາງ ແລະ ກວດກາຄືນຈາກທະນາຄານໂລກກ່ອນ ຈຶ່ງສາມາດຈັດຕັ້ງປະຕິບັດໄດ້.

ການເຮັດສັນຍາໂດຍກົງ ສຳລັບວຽກກໍ່ສ້າງສ້ອມແປງ ແມ່ນອະນຸຍາດພິເສດໃຫ້ນຳໃຊ້ໄດ້ກັບລັດວິສາຫະກິດ ທີ່ສ້າງຕັ້ງຂຶ້ນໂດຍກະຊວງການທາລະນະສຸກ (ພະແນກນ້ຳສະອາດ) ຊຶ່ງດຳເນີນການເຈາະນ້ຳບາດານໃນເຂດຫ່າງໄກສອກຫລີກ ຂອງ ສປປ ລາວ ແລະ ບໍລິສັດລັດວິສາຫະກິດໄຟຟ້າລາວ.

ການເຮັດສັນຍາໂດຍກົງ ສຳລັບວຽກຈັດຊື້ສິນຄ້າ ແມ່ນອະນຸຍາດພິເສດ ສະເພາະສິນຄ້າທີ່ມີກຳມະສິດສະເພາະ ຫລື ສິນຄ້າທີ່ສາມາດຊອກໄດ້ຈາກແຫລ່ງຜະລິດດຽວ ເຊັ່ນ: ປຶ້ມແບບຮຽນ ແລະ ຄູ່ມືຄູ ຈາກວິສະຫະກິດໂຮງພິມສຶກສາ ແລະ ລະບົບຜະລິດພະລັງງານທົດແທນໄຟຟ້າແສງຕາເວັນ ຈາກ ບໍລິສັດຊັນລະບົບ.

## 4. ບັນຊີບໍລິຫານຂອງຊຸມຊົນ

ພາຍໃຕ້ບັນຊີບໍລິຫານຂອງຊຸມຊົນ, ຊຸມຊົນເປັນຜູ້ຈັດຕັ້ງປະຕິບັດໂຄງການຍ່ອຍເອົາເອງ ໂດຍນຳໃຊ້ຊັບພະຍາກອນທຳມະຊາດທີ່ມີໃນທ້ອງຖິ່ນ (ແຮງງານທີ່ມີສີມື ແລະ ບໍ່ມີສີມື, ວັດສະດຸ, ອຸປະກອນ) ແລະອາດຈະເຮັດສັນຍາຍ່ອຍ ກັບຜູ້ຮັບເໝົາກໍ່ສ້າງ ຫລື ຜູ້ສະໜອງສິນຄ້າ ເຊິ່ງຕ້ອງປະຕິບັດຕາມວິທີການປະມູນຈັດຊື້ໃດໜຶ່ງທີ່ໄດ້ກ່າວມາຂ້າງເທິງນີ້. ວິທີການນີ້ເປັນວິທີການທີ່ຂັບເຄື່ອນໂດຍຊຸມຊົນ ແລະ ເປັນການນຳໃຊ້ທຶນທີ່ມີປະສິດທິຜົນ (ປັດໃຈແມ່ນເພື່ອໃຫ້ຊຸມຊົນມີຄ່າໃຊ້ຈ່າຍທີ່ຕ່ຳກວ່າທ້ອງຕະຫລາດ), ແລະມັນເປັນການເພີ້ມທຶນເຂົ້າໃນຊຸມຊົນ (ຕົວຢ່າງ: ຜ່ານການຈ່າຍຄ່າຈ້າງ ແລະ ວັດສະດຸ). ມູນຄ່າສັນຍາທີ່ໄດ້ເຊັນກັບຊຸມຊົນ ຄວນຈະຢູ່ໃນອັດຕາໃນທ້ອງຕະຫລາດໃນທ້ອງຖິ່ນ ຫລື ລາຄາຄາດຄະເນໄວ້ ຕາມທີ່ໄດ້ລະບຸໄວ້ຢູ່ໃນຖານຂໍ້ມູນຫົວໜ່ວຍລາຄາ.

### A. ວິທີການຈັດຈ້າງ ສຳລັບການບໍລິການ:

ນອກຈາກ ການຊ່ວຍເຫລືອຈາກທີມງານ ທລຍ, ທ່ານເຈົ້າເມືອງ, ແລະ ພະແນກທີ່ກ່ຽວຂ້ອງຕ່າງໆຂັ້ນເມືອງແລ້ວ, ຊຸມຊົນອາດຈະຕ້ອງການຄວາມຊ່ວຍເຫລືອ ໃນການກະກຽມ ແລະ ຈັດຕັ້ງປະຕິບັດໂຄງການຍ່ອຍຂອງພວກເຂົາ. ການຊ່ວຍເຫລືອດັ່ງກ່າວ ແມ່ນການໃຫ້ຄຳປຶກສາແນະນຳຕາມປົກກະຕິ ໂດຍຊ່ຽວຊານ (ບຸກຄົນ ຫລື ບໍລິສັດ) ຫລື ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGOs), ແລະ ຄາດວ່າຈະມີມູນຄ່າສັນຍາຕ່ຳ. ດ້ວຍເຫດນີ້, ຄູ່ມືແນະນຳການຄັດເລືອກ ແລະ ວ່າຈ້າງທີ່ປຶກສາ ຂອງທະນາຄານແມ່ນຈະຖືກນຳໃຊ້ເຂົ້າໃນການຄັດເລືອກເອົາອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGO), ບຸກຄົນ, ແລະ ບໍລິສັດ. ມັນອາດຈະສະດວກ ສຳລັບຫ້ອງການ ທລຍ ຂັ້ນສູນກາງ ຖ້າສາມາດກຽມບັນຊີລາຍຊື່ຂອງຊ່ຽວຊານທີ່ປຶກສາທີ່ມີຄຸນວຸດທິ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGOs) ເກັບໄວ້, ແລະ ເພື່ອຊຸມຊົນສາມາດຄັດເລືອກຕິດຕໍ່ຊ່ຽວຊານທີ່ປຶກສາ ຫລື ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGO) ໄດ້ຈາກບັນຊີລາຍຊື່ດັ່ງກ່າວນັ້ນ.

ຜູ້ຮັບເໝົາກໍ່ສ້າງ/ຜູ້ສະໜອງສິນຄ້າ ທັງໝົດ ຈະຕ້ອງຈ່າຍຄ່າອາກອນ ຈຳນວນ 10% ແລະ ຊ່ຽວຊານຈະຕ້ອງຈ່າຍຄ່າອາກອນຕາມທີ່ກຳນົດໄວ້ ໃຫ້ກະຊວງການເງິນ. ດັ່ງນັ້ນ, ທີມງານຊຸມຊົນ/ທີມງານຈັດຕັ້ງປະຕິບັດບ້ານ ຫລື ທີມງານກຸ່ມບ້ານ (ຖ້າມີ) ຕ້ອງໄດ້ກວດເບິ່ງວ່າມູນຄ່າອາກອນນີ້ ໄດ້ຖືກຄິດໄລ່ລວມເຂົ້າໃນບົດສະເໜີລາຄາທີ່ຍື່ນສະເໜີມາທັງໝົດແລ້ວ.

ບົດສະຫລູບສັງລວມ ວິທີການຈັດຊື້, ເພດານເງິນ, ແລະ ຂັ້ນຕອນຂອງການຈັດຊື້-ຈັດຈ້າງ ແມ່ນສາມາດສຶກສາໄດ້ໃນປື້ມຄູ່ມືການຈັດຊື້-ຈັດຈ້າງ ສຳລັບຊຸມຊົນ

## 10.7 ໃຜສາມາດເປັນຜູ້ຮັບເໝົາ ຫລື ຜູ້ສະໜອງສິນຄ້າ ຫລື ຊ່ຽວຊານ?

### ກ). ໃຜສາມາດເປັນຜູ້ຮັບເໝົາ?

ທຸກຫົວໜ່ວຍທຸລະກິດເອກະຊົນ, ທີ່ມີໃບທະບຽນວິສາຫະກິດ ທີ່ໄດ້ຈົດທະບຽນທີ່ກ່ຽວຂ້ອງກັບກິດຈະກຳໂຄງການຍ່ອຍ ແລະ ມີຄຸນສົມບັດສອດຄ່ອງເໝາະສົມທັງໝົດ ທີ່ສາມາດດຳເນີນການກໍ່ສ້າງໃຫ້ສຳເລັດຕາມລາຍການໜ້າວຽກ ແລະ ເງື່ອນໄຂຂໍ້ກຳນົດທີ່ຕ້ອງການທີ່ໄດ້ລະບຸໄວ້ ສາມາດເປັນຜູ້ຮັບເໝົາໄດ້.

### ຂ). ໃຜສາມາດເປັນຜູ້ສະໜອງສິນຄ້າ?

ທຸກຫົວໜ່ວຍທຸລະກິດເອກະຊົນ ຫລື ຜູ້ຄ້າຂາຍ ທີ່ມີໃບທະບຽນວິສາຫະກິດ ທີ່ໄດ້ຂຶ້ນຈົດທະບຽນແລ້ວທີ່ສາມາດສະໜອງສິນຄ້າໃຫ້ຖືກຕ້ອງຕາມເງື່ອນໄຂຂໍ້ກຳນົດທີ່ຕ້ອງການທີ່ໄດ້ລະບຸໄວ້ ສາມາດເປັນຜູ້ສະໜອງສິນຄ້າໄດ້.

### ຄ). ໃຜສາມາດເປັນຊ່ຽວຊານທີ່ປຶກສາ?

ບຸກຄົນໃດໜຶ່ງ ຫລື ບໍລິສັດໃດໜຶ່ງ ຜູ້ທີ່ຕອບສະໜອງດ້ານຄຸນວຸດທິຂັ້ນຕ່ຳສຸດ ແລະ ສາມາດສະ ໜອງການບໍລິການໃຫ້ສອດຄ່ອງກັບພາລະບົດບາດ ແລະ ໜ້າທີ່ ທີ່ກຳນົດໄວ້ ສາມາດເປັນຊ່ຽວຊານໄດ້.

<u>**ເຖິງຢ່າງໃດກໍ່ຕາມ**</u>, ພະນັກງານລັດຖະກອນ (ຕຳຫລວດ ຫລື ທະຫານ, ຫລື ພະນັກງານກະຊວງ ຫລື ບໍລິຫານຂັ້ນແຂວງ ຫລື ເທດສະບານເມືອງ) ບໍ່ສາມາດຈະເປັນຜູ້ຮັບເໝົາ, ຜູ້ສະໜອງສິນຄ້າ, ຫລື ເປັນຊ່ຽວຊານທີ່ປຶກສາໄດ້. ຄຸນສົມບັດທີ່ເໝາະສົມຂອງຜູ້ເຂົ້າຮ່ວມປະມູນ/ຊ່ຽວຊານທີ່ປຶກສາ ແມ່ນໄດ້ມີການກຳນົດໄວ້ໃນໝວດທີ່ 1 ຂອງຄູ່ມືແນະນຳຂອງທະນາຄານໂລກ, ບໍລິສັດ ຫລື ຊ່ຽວຊານສ່ວນບຸກຄົນ ກ່ອນໜ້ານີ້ ໄດ້ມີການປະກາດວ່າ ເປັນຜູ້ທີ່ບໍ່ມີຄວາມເໝາະສົມ ໂດຍທະນາຄານໂລກ ໂດຍອີງໃສ່ການກຳນົດຂອງທະນາຄານໂລກ ທີ່ວ່າບໍລິສັດນີ້ ຫລື ຊ່ຽວຊານທີ່ປຶກສາສ່ວນບຸກຄົນຜູ້ນີ້ ໄດ້ມີສ່ວນກ່ຽວຂ້ອງໃນການກິນສິນບົນ, ການສໍ້ໂກງ, ການສົມຮູ້ຮ່ວມຄິດ, ຫລື ການບີບບັງຄັບ ທີ່ໄດ້ປະກາດວ່າເປັນຜູ້ທີ່ບໍ່ມີຄວາມເໝາະສົມ ທີ່ຈະເຊັນສັນຍາກັບໂຄງການຂອງທະນາຄານໂລກ.

ບັນຊີລາຍຊື່ຂອງບໍລິສັດ/ຊ່ຽວຊານທີ່ປຶກສາສ່ວນບຸກຄົນ ທີ່ຖືກຫ້າມບໍ່ໃຫ້ເຂົ້າຮ່ວມການປະມູນຈັດຊື້ ທີ່ທະນາຄານໂລກໃຫ້ການຊ່ວຍເຫລືອ ແມ່ນມີຢູ່ໃນແວບໄຊ http://WWW.worldbank.org/debarr.

## 10.8 ຂັ້ນຕອນການດຳເນີນການປະມູນຈັດຊື້

**ຂັ້ນຕອນການປະມູນຈັດຊື້ ສຳລັບການປະມູນແບບເປີດກວ້າງພາຍໃນທ້ອງຖິ່ນ:**

### ໄລຍະທີ່ 1: ການກະກຽມເອກະສານປະມູນ

- ຂັ້ນຕອນທີ 1: ກະກຽມເອກະສານປະມູນ;
- ຂັ້ນຕອນທີ 2: ສຳລັບໂຄງການຍ່ອຍໃດທີ່ຖືກກຳນົດຕ້ອງໄດ້ຂໍອະນຸມັດກ່ອນເທົ່ານັ້ນ, ຮ່າງເອກະສານປະມູນທີ່ກະກຽມຄົບຖ້ວນສົມບູນສຳເລັດແລ້ວ ຕ້ອງໄດ້ສົ່ງໃຫ້ຫ້ອງການທລຍ ຂັ້ນສູນກາງ ຫລື ທະນາຄານໂລກ ເພື່ອພິຈາລະນາ ແລະ ໄດ້ຮັບໜັງສືອະນຸມັດໃນການນຳໃຊ້ກ່ອນ ຈຶ່ງສາມາດນຳໄປແຈກຢາຍໃຫ້ຜູ້ເຂົ້າຮ່ວມປະມູນໄດ້.
- ຂັ້ນຕອນທີ 3: ປະກາດແຈ້ງການປະມູນ ໂດຍສະນາອອກທາງໜ້າໜັງສືພິມພາຍໃນທ້ອງຖິ່ນ, ໂທລະໂຄ່ງ/ໂທລະທັດ ຂອງແຂວງ/ເມືອງ ແລະ ຕິດປະກາດໃສ່ກະດານຂ່າວຂອງຊຸມຊົນ ຫລື ຫ້ອງການຂອງທ່ານເຈົ້າເມືອງ ແລະ ສົ່ງໜັງສືເຊີນແຈ້ງການໂດຍກົງ ຫາ ຜູ້ຮັບເໝົາກໍ່ສ້າງ ຫລື ຜູ້ສະໜອງສິນຄ້າ.

### ໄລຍະທີ່ 2: ການປະເມີນປະມູນ ແລະ ການລາຍງານ

- ຂັ້ນຕອນທີ 4: ຮັບຊອງປະມູນ ກ່ອນວັນທີປິດຮັບຊອງປະມູນຍື່ນສະເໜີລາຄາ, ແລະ ເປີດຊອງປະມູນຕໍ່ໜ້າສາທາລະນະໃນເວລາດຳເນີນການເປີດຊອງປະມູນ, ຖ້າຫາກທີມງານຈັດຕັ້ງປະຕິບັດຂັ້ນບ້ານ (ກຸ້ມບ້ານ, ຖ້າມີ) ຫາກໄດ້ຮັບນ້ອຍກວ່າ 3 ຊອງປະມູນທີ່ຍື່ນສະເໜີ, ພິທີການດຳເນີນການເປີດປະມູນລາຄາ ແມ່ນສາມາດດຳເນີນຕໍ່ໄປໄດ້ ຖ້າຫາກໄດ້ລົງແຈ້ງປະກາດການປະມູນ ໂດຍສະນາອອກສູ່ສາທາລະນະ ທາງໜ້າໜັງງສືພິມທ້ອງຖິ່ນ, ໂທລະໂຄ່ງ/ໂທລະພາບ ແຂວງ/ເມືອງ ແລະ ຕິດໃສ່ກະດານຂ່າວຂອງຊຸມຊົນ ຫລື ຫ້ອງການຂອງທ່ານເຈົ້າເມືອງ;
- ຂັ້ນຕອນທີ 5: ປະເມີນຊອງປະມູນ ແລະ ກຽມບົດລາຍງານການປະເມີນຜົນ;

**ໄລຍະທີ 3: ການສົ່ງບົດລາຍງານການປະມູນ ແລະ ການເຊັນສັນຍາ**

- ຂັ້ນຕອນທີ 6: ສົ່ງບົດລາຍງານການປະເມີນຜົນ ຫາຫ້ອງການ ທລຍ ສູນກາງ ຫລື ທະນາຄານໂລກ ເພື່ອສະເໜີຂໍອະນຸມັດ ແລະ ໄດ້ຮັບໜັງສືອະນຸມັດກ່ອນຈຶ່ງ ສາມາດດຳເນີນຂັ້ນຕອນຕໍ່ໄປໄດ້ ສຳລັບໂຄງການຍ່ອຍໃດ ທີ່ຖືກກຳນົດໃຫ້ ເປັນໂຄງການຍ່ອຍທີ່ຕ້ອງໄດ້ທົບທວນ ແລະ ກວດກາກ່ອນການຈັດຕັ້ງປະຕິ ບັດ ແລະ ສຳລັບໂຄງການຍ່ອຍໃດ ຫາກໄດ້ຮັບນ້ອຍກວ່າ 3 ຊອງປະມູນຍື່ນ ສະເໜີລາຄາ ໃນມື້ເປີດຊອງປະມູນ;
- ຂັ້ນຕອນທີ 7: ເຊັນສັນຍາກັບຜູ້ທີ່ຖືກຄັດເລືອກໃຫ້ເປັນຜູ້ຊະນະການປະມູນ ທີ່ໄດ້ຜ່ານການປະ ເມີນແລ້ວວ່າ ແມ່ນລາຄາຕໍ່າ ແລະ ຕອບສະໜອງຕາມເງື່ອນໄຂຂໍ້ກຳນົດທີ່ ຕ້ອງການ;
- ຂັ້ນຕອນທີ 8: ສົ່ງສັນຍາທີ່ເຊັນແລ້ວ ໃຫ້ຫ້ອງການ ທລຍ ສູນກາງ ແລະ ທະນາຄານໂລກ ເພື່ອບັນທຶກເປັນຂໍ້ມູນ ສຳລັບໂຄງການຍ່ອຍທີ່ໄດ້ກຳນົດໃຫ້ເປັນໂຄງການຍ່ອຍ ທີ່ຕ້ອງໄດ້ທົບທວນ ແລະ ກວດກາກ່ອນ.

**ຂັ້ນຕອນການປະມູນຈັດຊື້ ສຳລັບການປະມູນແບບສົມທຽບລາຄາ:**

**ໄລຍະທີ 1: ການກະກຽມເອກະສານປະມູນ**

- ຂັ້ນຕອນທີ 1: ກະກຽມໜັງສືເຊີນເຂົ້າຮ່ວມສົມທຽບລາຄາ;
- ຂັ້ນຕອນທີ 2: ສຳລັບສັນຍາ ທີ່ຖືກກຳນົດໃຫ້ມີການທົບທວນ ແລະ ກວດກາຄືນກ່ອນເທົ່ານັ້ນ, ສົ່ງຮ່າງໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ ຫາຫ້ອງການ ທລຍ ແລະຫລື ທະນາຄານໂລກ ແລະ ຮັບ/ໜັງສືອະນຸມັດກ່ອນຈຶ່ງສາມາດດຳເນີນ ການຂັ້ນຕອນຕໍ່ໄປໄດ້;
- ຂັ້ນຕອນທີ 3: ສົ່ງໜັງສືເຊີນເຂົ້າຮ່ວມສົມທຽບລາຄາໂດຍກົງ ຫາຜູ້ເຂົ້າຮ່ວມປະມູນ ໃຫ້ໄດ້ ຫລາຍກວ່າ ຜູ້ 3ສົນໃຈເຂົ້າຮ່ວມປະມູນ ທີ່ມີຄຸນວຸດທິ ແລະ ມີຄຸນສົມບັດເໝ າະສົມ (6 ຫາ 5 ປົກກະຕິແລ້ວແມ່ນ) ເພື່ອຮັບປະກັນໃຫ້ໄດ້ຮັບ 3 ໃບສະ ເໜີລາຄາ ຈາກຜູ້ຮັບເໝົາກໍ່ສ້າງ/ຜູ້ສະໜອງສິນຄ້າ ທີ່ມີຄຸນວຸດທິ;

**ໄລຍະທີ 2: ການປະເມີນໜັງສືຍື່ນສະເຫນີລາຄາ ແລະ ການລາຍງານ**

- ຂັ້ນຕອນທີ 4: ຮັບໜັງສືສະເຫນີລາຄາ ກ່ອນວັນທີທີ່ກຳນົດໃຫ້ເປັນວັນທີປິດຮັບຊອງສະເຫນີ ລາຄາ, ແລະ ເປີດຊອງສະເຫນີລາຄາຕໍ່ໜ້າສາທາລະນະ. ໃນເວລາດຳເນີນ ການເປີດຊອງສະເຫນີລາຄາ, ຖ້າຫາກ ທີມງານຊຸມຊົນ/ທີມງານຈັດຕັ້ງປະຕິ ບັດຂັ້ນບ້ານ ຫາກໄດ້ຮັບຊອງປະມູນໜ້ອຍກວ່າ 3 ຊອງຍື່ນສະເໜີລາຄາ, ພິທີ

ການເປີດຊອງສະເໜີລາຄາ ແມ່ນສາມາດດຳເນີນຕໍ່ໄປໄດ້ ຖ້າຫາກໄດ້ສົ່ງໜັງສືແຈ້ງເຊີນເຂົ້າຮ່ວມປະມູນສົມທຽບລາຄາ ໃຫ້ຫລາຍກວ່າ 3 ຜູ້ສົນໃຈເຂົ້າຮ່ວມປະມູນ ທີ່ມີຄຸນວຸດທິ ແລະ ມີຄວາມເໝາະສົມພຽງພໍ ແລະ ໃຫ້ເວລາພຽງພໍແກ່ເຂົາເຈົ້າໃນການກະກຽມ ແລະ ສົ່ງໜັງສືສະເໜີລາຄາ;

- ຂັ້ນຕອນທີ 5: ປະເມີນໜັງສືສະເໜີລາຄາ ແລະ ກຽມບົດລາຍງານການປະເມີນຜົນ;

## ໄລຍະທີ່ 3: ການສົ່ງບົດລາຍງານຜົນການປະມູນ ແລະ ການເຊັນສັນຍາ

- ຂັ້ນຕອນທີ 6: ສົ່ງບົດລາຍງານການປະເມີນຜົນ ຫາຫ້ອງການ ທລຍ ສູນກາງ ຫລື ທະນາຄານໂລກ ເພື່ອສະເໜີຂໍອະນຸມັດ ແລະ ໄດ້ຮັບໜັງສືອະນຸມັດກ່ອນຈຶ່ງສາມາດດຳເນີນຂັ້ນຕອນຕໍ່ໄປໄດ້ ສຳລັບໂຄງການຍ່ອຍໃດ ທີ່ຖືກກຳນົດໃຫ້ເປັນໂຄງການຍ່ອຍທີ່ຕ້ອງໄດ້ທົບທວນ ແລະ ກວດກາກ່ອນການຈັດຕັ້ງປະຕິບັດ ແລະ ສຳລັບໂຄງການຍ່ອຍໃດ ຫາກໄດ້ຮັບນ້ອຍກວ່າ 3 ຊອງປະມູນຍື່ນສະເໜີລາຄາ ໃນມື້ເປີດຊອງປະມູນ;
- ຂັ້ນຕອນທີ 7: ເຊັນສັນຍາກັບຜູ້ທີ່ຖືກຄັດເລືອກໃຫ້ເປັນຜູ້ຊະນະການປະມູນ ທີ່ໄດ້ຜ່ານການປະເມີນແລ້ວວ່າ ແມ່ນລາຄາຕ່ຳ ແລະ ຕອບສະໜອງຕາມເງື່ອນໄຂຂໍ້ກຳນົດທີ່ຕ້ອງການ;
- ຂັ້ນຕອນທີ 8: ສົ່ງສັນຍາທີ່ເຊັນແລ້ວ ໃຫ້ຫ້ອງການ ທລຍ ສູນກາງ ແລະ ທະນາຄານໂລກ ເພື່ອເປັນຂໍ້ມູນ ສຳລັບໂຄງການຍ່ອຍໃດທີ່ໄດ້ກຳນົດໃຫ້ເປັນໂຄງການຍ່ອຍ ທີ່ຕ້ອງໄດ້ທົບທວນ ແລະ ກວດກາຄືນກ່ອນການດຳເນີນຂັ້ນຕອນຕໍ່ໄປ.

## ຂັ້ນຕອນການປະມູນຈັດຊື້ ສຳລັບການປະມູນແບບໂດຍກົງ:

## ໄລຍະທີ່ 1: ການກະກຽມເອກະສານປະມູນ

- ຂັ້ນຕອນທີ 1: ກະກຽມໜັງສືແຈ້ງເຊີນເພື່ອຍື່ນສະເໜີລາຄາ
- ຂັ້ນຕອນທີ 2: ສົ່ງຮ່າງໜັງສືແຈ້ງເຊີນຍື່ນສະເໜີລາຄາ ຫາຫ້ອງການ ທລຍ ແລະ ທະນາຄານໂລກ ແລະ ຮັບໜັງສືອະນຸມັດກ່ອນດຳເນີນຂັ້ນຕອນຕໍ່ໄປ;
- ຂັ້ນຕອນທີ 3: ສົ່ງໜັງສືແຈ້ງເຊີນຍື່ນສະເໜີລາຄາໂດຍກົງ ຫາຜູ້ຮັບເໝົາກໍ່ສ້າງ ຫລື ຜູ້ສະໜອງສິນຄ້າແຕ່ຜູ້ດຽວ ທີ່ມີຄຸນວຸດທິ ແລະ ມີຄຸນສົມບັດເໝາະສົມ.

## ໄລຍະທີ່ 2: ການປະເມີນໜັງສືຍື່ນສະເໜີລາຄາ ແລະ ການລາຍງານ

- ຂັ້ນຕອນທີ 4: ຮັບໜັງສືສະເໜີລາຄາ ແລະ ປະເມີນໜັງສືສະເໜີລາຄາ ແລະ ຕໍ່ລອງລາຄາ;

- ຂັ້ນຕອນທີ 5: ກຽມບົດລາຍງານການປະເມີນຜົນ ລວມທັງບົດບັນທຶກກອງປະຊຸມຕໍ່ລອງລາຄາ;

**ໄລຍະທີ່ 3: ການລາຍງານ ແລະ ການເຊັນສັນຍາ**

- ຂັ້ນຕອນທີ 6: ສົ່ງບົດລາຍງານ ຫາຫ້ອງການ ທລຍ ແລະ ທະນາຄານໂລກ ເພື່ອຂໍໜັງສືອະນຸມັດ;
- ຂັ້ນຕອນທີ 7: ເຊັນສັນຍາກັບຜູ້ຮັບເໝົາກໍ່ສ້າງ/ຜູ້ສະໜອງສິນຄ້າ ພາຍຫລັງໄດ້ຮັບໜັງສືອະນຸມັດ;
- ຂັ້ນຕອນທີ 8: ສົ່ງສັນຍາ ທີ່ໄດ້ເຊັນແລ້ວ ຫາຫ້ອງການ ທລຍ ແລະ ທະນາຄານໂລກ ເພື່ອບັນທຶກເປັນຂໍ້ມູນ.

## 10.9 ແຜນຈັດຊື້ໂຄງການຍ່ອຍ ແລະ ກວດກາຄືນ

ເມື່ອບົດສະເໜີໂຄງການຍ່ອຍທັງໝົດ ຂອງຊຸມຊົນ/ບ້ານ ໄດ້ຖືກສົ່ງມາ ແລະ ໄດ້ຮັບການອະນຸມັດແລ້ວ ໃນໄລຍະກອງປະຊຸມຄັດເລືອກໂຄງການຍ່ອຍຢູ່ຂັ້ນກຸ່ມບ້ານ, ຫລັງຈາກນັ້ນ ທີມງານຊຸມຊົນ/ທີມງານຈັດຕັ້ງປະຕິບັດຂັ້ນບ້ານ ຕ້ອງກຽມແຜນຈັດຊື້ໂຄງການຍ່ອຍ (ເບິ່ງເອກະສານຊ້ອນທ້າຍ 2.1 ໃນປື້ມຄູ່ມືການຈັດຊື້-ຈັດຈ້າງ ສໍາລັບຊຸມຊົນ) ແລະ ສົ່ງຫາຫ້ອງການ ທລຍ ເມືອງ ເພື່ອສັງລວມ ແລະ ຫລັງຈາກນັ້ນສົ່ງໃຫ້ຫ້ອງການ ທລຍ ແຂວງ ເພື່ອທົບທວນຄືນ ແລະ ອະນຸມັດ. ພາຍຫລັງການອະນຸມັດແລ້ວ ຫ້ອງການ ທລຍ ແຂວງ ຕ້ອງສົ່ງຄືນແຜນຈັດຊື້ດັ່ງກ່າວຄືນຫາຫ້ອງການ ທລຍ ເມືອງ ເພື່ອແຈ້ງຕໍ່ໄປຍັງຊຸມຊົນ ແລະ ສໍາເນົາແຜນຈັດຊື້ໂຄງການຍ່ອຍດັ່ງກ່າວ ສົ່ງໃຫ້ຫ້ອງການ ທລຍ ສູນກາງ ເພື່ອສັງລວມ ແລະ ສົ່ງໃຫ້ຜູ້ໃຫ້ທຶນ (ທະນາຄານໂລກ) ເພື່ອເປັນຂໍ້ມູນ.

ແຜນຈັດຊື້ໂຄງການຍ່ອຍ ແມ່ນສາມາດປັບປຸງໄດ້ຕະຫລອດເວລາ ໃນໄລຍະການດໍາເນີນການຈັດຕັ້ງປະຕິບັດໂຄງການຍ່ອຍ ເພື່ອໃຫ້ສອດຄອງກັບລາຄາທີ່ໄດ້ມີການປະເມີນຄືນໃຫມ່, ການກໍານົດຄືນມາດຕະຖານເຕັກນິກ, ແລະ ຈໍານວນໂຄງການຍ່ອຍທີ່ເພີ້ມຂື້ນ, ແລະ ໃນກໍລະນີສໍາຄັນອື່ນໆ. ແຜນຈັດຊື້ໂຄງການຍ່ອຍສະບັບປັບປຸງຄືນໃໝ່ທີ່ສົມບູນແລ້ວ ຈະຕ້ອງສົ່ງໃຫ້ທະນາຄານໂລກ ເພື່ອເປັນເອກະສານອ້າງອີງ ແລະ ເກັບກໍາເປັນຂໍ້ມູນ.
ສະເພາະແຕ່ໂຄງການຍ່ອຍ ທີ່ດໍາເນີນຕາມແບບວິທີການເຮັດສັນຍາໂດຍກົງ ຫລື ຈາກແຫລ່ງດຽວສໍາລັບການວ່າຈ້າງຊ່ຽວຊານທີ່ປຶກສາ ແລະ ໃນກໍລະນີ ທີ່ມູນຄ່າຍື່ນສະເໜີຫາກຕໍ່າກວ່າ ຫລື ສູງກວ່າລາຄາທີ່ໄດ້ປະເມີນໄວ້ທີ່ໄດ້ຮັບການອະນຸມັດແລ້ວ ແມ່ນຕ້ອງໄດ້ສະເໜີຂໍອະນຸມັດຈາກທະນາຄານໂລກກ່ອນການດໍາເນີນຂັ້ນຕອນຕໍ່ໄປ. ສ່ວນໂຄງການຍ່ອຍອື່ນໆ ແມ່ນກໍານົດໃຫ້ເປັນໂຄງການຍ່ອຍທີ່ຕ້ອງມີການທົບທວນ ແລະ ກວດກາຄືນພາຍຫລັງການຈັດຕັ້ງປະຕິບັດ ຈາກທະນາຄານໂລກ.

ທະນາຄານໂລກ ຈະດຳເນີນການກາຄືນ ໂດຍອີງບົນພື້ນຖານບົດລາຍງານການກວດກາ ຂອງຫ້ອງການ ທລຍ ສູນກາງ ແລະ ຍັງຈະສຸມກວດກາເອກະສານບາງໂຄງການຍ່ອຍ ຢູ່ໃນຂັ້ນຊຸມຊົນ/ບ້ານ. ຈຳນວນ 10% ຂອງໂຄງການຍ່ອຍ ແມ່ນກຳນົດໃນການກວດກາ ຈາກທະນາຄານໂລກ.

ຫ້ອງການ ທລຍ ຂັ້ນສູນກາງ ຈະສຸມເລືອກ 20% ຂອງຈຳນວນໂຄງການຍ່ອຍ ເພື່ອນຳມາກວດກາຄືນ ໂຄງການຍ່ອຍພາຍຫລັງສຳເລັດ. ບໍ່ຈຳເປັນຕ້ອງມີການທົບທວນ ແລະ ກວດກາ ແລະ ສະເໜີຂໍອະນຸມັດ ຈາກຫ້ອງການ ທລຍ ສູນກາງ ກ່ອນການຈັດຕັ້ງປະຕິບັດໂຄງການຍ່ອຍ, ຍົກເວັ້ນເສຍແຕ່ ໂຄງການ ຍ່ອຍທີ່ດຳເນີນການຈັດຊື້-ຈັດຈ້າງ ຕາມແບບວິທີການເຮັດສັນຍາໂດຍກົງ ຫລື ໃນກໍລະນີ ທີ່ໄດ້ຮັບຊອງ ປະມູນ/ໜັງສືສະເໜີລາຄາຕ່ຳກວ່າ 3 ຊອງປະມູນຈາກຜູ້ເຂົ້າຮ່ວມປະມູນທີ່ມີຄຸນວຸດທິ, ແລະ ໃນກໍລະນີ ທີ່ລາຄາຍື່ນສະເໜີ ຫາກໜ້ອຍກວ່າ ຫລື ຫລາຍກວ່າລາຄາທີ່ໄດ້ປະເມີນໄວ້ ແລະ ໄດ້ຜ່ານການ ອະນຸມັດແລ້ວ.

ທະນາຄານໂລກ ແລະ ຫ້ອງການ ທລຍ ສູນກາງ ຈະດຳເນີນການກວດກາເອກະສານປະມູນພາຍຫລັງ ການຈັດຕັ້ງປະຕິບັດໂຄງການຍ່ອຍສຳເລັດ ຢ່າງນ້ອຍປີລະຄັ້ງ. ສຳເນົາເອກະສານທັງຫມົດທີ່ກ່ຽວຂ້ອງກັບ ຂະບວນການປະມູນຈັດຊື້ ລວມທັງບົດລາຍງານການປະເມີນຜົນລະອຽດ ພ້ອມດ້ວຍເອກະສານສະບັບຕົ້ນ ທັງຫມົດ ທີ່ຜູ້ເຂົ້າຮ່ວມປະມູນໄດ້ຍື່ນສະເໜີມານັ້ນ ຕ້ອງໄດ້ເກັບຮັກສາໄວ້ຢູ່ໃນຫ້ອງການຂອງຊຸມຊົນ/ ບ້ານ ຫລື ຫ້ອງການກຸ່ມບ້ານ (ຖ້າມີ), ແລະ ຫ້ອງການ ທລຍ ເມືອງ ແລະ ພ້ອມທີ່ຈະໃຫ້ຫ້ອງການ ທລຍ ສູນກາງ ແລະ ທະນາຄານໂລກ ແລະ ທີມງານກວດສອບບັນຊີເອກະລາດ ສາມາດມາກວດກາໄດ້ ຕາມພາຍຫລັງ.

### 10.10 ການກະກຽມເອກະສານປະມູນ

ມີ 4 ຮູບແບບເອກະສານປະມູນ ດັ່ງລຸ່ມນີ້:

1. ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ ສຳລັບຈັດຊື້ສິນຄ້າ;
2. ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ ສຳລັບການກໍ່ສ້າງສ້ອມແປງ;
3. ເອກະສານປະມູນແບບເປີດກວ້າງພາຍໃນທ້ອງຖິ່ນ ສຳລັບການຈັດຊື້ສິນຄ້າ;
4. ເອກະສານປະມູນແບບເປີດກວ້າງພາຍໃນທ້ອງຖິ່ນ ສຳລັບການກໍ່ສ້າງສ້ອມແປງ.

ເອກະສານປະມູນທີ່ກຳນົດໄວ້ທັງຫມົດເຫລົ່ານີ້ ແມ່ນປະກອບມີໃນປຶ້ມຄູ່ມືການຈັດຊື້-ຈັດຈ້າງ ສຳລັບຊຸມ ຊົນ (ເອກະສານຊ້ອນທ້າຍ 3.1-3.4) ແມ່ນໄດ້ຖືກກະກຽມ ເພື່ອໃຫ້ສອດຄ່ອງກັບເອກະສານການປະມູນ ໃນຮູບແບບມາດຕະຖານຕ່າງໆທີ່ສ້າງຂຶ້ນໂດຍຫ້ອງການຄຸ້ມຄອງຕິດຕາມລະບຽບການປະມູນຈັດຊື້ ຂອງ ກະຊວງການເງິນ ທີ່ໄດ້ມີການດັດແກ້ໃຫ້ເໝາະສົມ ເປັນທີ່ພໍໃຈ ກັບຂັ້ນຕອນຂະບວນການການປະມູນຈັດ ຊື້ ຂອງຊຸມຊົນ.

ທີມງານຊຸມຊົນ/ທີມງານຈັດຕັ້ງປະຕິບັດຂັ້ນບ້ານ ຫລື ທີມງານກຸ່ມບ້ານ (ຖ້າມີ) ໂດຍໄດ້ຮັບການຊ່ວຍເຫລືອຈາກພະນັກງານ ທລຍ ເມືອງ/ພະນັກງານຈັດຊື້ແຂວງ ສາມາດເລີ່ມຕົ້ນການກະກຽມເອກະສານການປະມູນໄດ້ ພາຍຫລັງທີ່ໄດ້ຮັບການອະນຸມັດແຜນຈັດຊື້ໂຄງການຍ່ອຍທີ່ກຳນົດໃຫ້ເຫັນເຖິງວິທີການຈັດຊື້ ແລະ ຜູ້ໃດເປັນຜູ້ຈັດຕັ້ງປະຕິບັດໂຄງການຍ່ອຍ.

ສຳລັບໂຄງການຍ່ອຍ ທີ່ໄດ້ກຳນົດໃຫ້ເປັນໂຄງການທີ່ຕ້ອງໄດ້ມີທົບທວນ ແລະ ກວດກາກ່ອນການຈັດຕັ້ງປະຕິບັດ ຈາກທະນາຄານໂລກ, ທີມງານຊຸມຊົນ/ທີມງານຈັດຕັ້ງປະຕິບັດບ້ານ ຫລື ທີມງານກຸ່ມບ້ານ (ຖ້າມີ) ຈະຕ້ອງໄດ້ກຽມເອກະສານປະມູນທີ່ກຳນົດໄວ້ໃຫ້ສຳເລັດສົມບູນ ກ່ອນຈະນຳແຈ້ງການ ການປະມູນດັ່ງກ່າວ ໄປລົງປະກາດໂຄສະນາ ແລະ/ຫລື ແຈກຢາຍໜັງສືເຊີນເຂົ້າຮ່ວມປະມູນ ໃຫ້ຜູ້ທີ່ສົນໃຈເຂົ້າຮ່ວມປະມູນທີ່ມີຄຸນວຸດທິ. ເອກະສານປະມູນດັ່ງກ່າວ ຕ້ອງໄດ້ສົ່ງຫາໃຫ້ຫ້ອງການ ທລຍ ຂັ້ນສູນກາງ ແລະ ທະນາຄານໂລກ ເພື່ອຂໍອະນຸມັດ. ຖ້າຫາກ ຫ້ອງການ ທລຍ ຂັ້ນສູນກາງ ແລະ ທະນາຄານໂລກ ຫາກມີຄຳເຫັນໃດນຶ່ງຕໍ່ກັບເອກະສານດັ່ງກ່າວ ຕິດຄັດມາກັບໜັງສືອະນຸມັດ, ທີມງານຊຸມຊົນ/ທີມງານຈັດຕັ້ງປະຕິບັດບ້ານ ຫລື ທີມງານກຸ່ມບ້ານ (ຖ້າມີ) ຈະຕ້ອງໄດ້ດັດແກ້ເອກະສານການປະມູນໃຫ້ຖືກຕ້ອງຕາມຄຳເຫັນທີ່ຄັດຕິດມານັ້ນ ແລະ ຫລັງຈາກນັ້ນ ຈຶ່ງສາມາດດຳເນີນຂະບວນການປະມູນຈັດຊື້ຂັ້ນຕໍ່ໄປໄດ້.

### *ຂໍ້ມູນດ້ານມາດຕະຖານເຕັກນິກ ທີ່ຈະລວມເອົາເຂົ້າໃນເອກະສານການປະມູນ*

ພະນັກງານວິຊາການ ທລຍ ຂັ້ນແຂວງ/ເມືອງ ຫລື ຊ່ຽວຊານທີ່ປຶກສາ ຖ້າຈຳເປັນ ຈະຕ້ອງສະໜອງຂໍ້ມູນດ້ານເຕັກນິກ ໃຫ້ແກ່ທີມງານຊຸມຊົນ/ທີມງານຈັດຕັ້ງປະຕິບັດບ້ານ ຫລື ທີມງານກຸ່ມບ້ານ (ຖ້າມີ) ເພື່ອນຳປະກອບເຂົ້າໃນເອກະສານການປະມູນ ມີລາຍການ ດັ່ງນີ້:

1. ລາຍລະອຽດລາຍການໜ້າວຽກ/ລາຍຊື່ວັດສະດຸອຸປະກອນການກໍ່ສ້າງສ້ອມແປງ/ຕາຕະລາງລາຄາສຳລັບສິນຄ້າ/ຕາຕະລາງລາຄາ ສຳລັບການບໍລິການທີ່ກ່ຽວຂ້ອງ;
2. ມາດຕະຖານເຕັກນິກທີ່ຕ້ອງການ ສຳລັບການກໍ່ສ້າງສ້ອມແປງ ແລະ/ຫລື ວັດສະດຸກໍ່ສ້າງ;
3. ຄຳແນະນຳການປ້ອງກັນດ້ານສິ່ງແວດລ້ອມ ແລະ ສັງຄົມ ສຳລັບຜູ້ຮັບເໝົາກໍ່ສ້າງສ້ອມແປງ;
4. ແຜນຜັງ, ຮູບແຕ້ມ.

ຂໍ້ກຳນົດມາດຕະຖານ ແມ່ນເອກະສານທາງດ້ານວິຊາການ ທີ່ອະທິບາຍກ່ຽວກັບຄຸນນະພາບຂອງວຽກ ໃນແຜນຜັງຮູບແຕ້ມ. ຕົວຢ່າງ: ແຜນຜັງອາດຈະສະແດງໃຫ້ເຫັນ "ຄອນກຣີດ", ແຕ່ຂໍ້ກຳນົດມາດຕະຖານເຕັກນິກ ອາດຈະເວົ້າເຖິງຈຳນວນຖົງຊີມັງທີ່ນຳໃຊ້, ມີປະເພດໃດແດ່ ແລະ ປະລິມານທີ່ນຳໃຊ້, ແລະວິທີການປະສົມຊີມັງແນວໃດ.

ຂໍ້ກຳນົດມາດຕະຖານ ສຳລັບປະເພດໂຄງການຍ່ອຍທົ່ວໄປ ແມ່ນມີຢູ່ໃນຄູ່ມືດ້ານວິຊາການ ຂອງ ທລຍ. ຖ້າຫາກວ່າ ປະເພດຂອງໂຄງການຍ່ອຍຫາກຄືກັນ, ຂໍ້ກຳນົດມາດຕະຖານເຕັກນິກເຫລົ່ານັ້ນ ຄວນຈະກ່າຍລອກເອົາ ແລະ ນຳໃຊ້ເຂົ້າໃນໜັງສືເຊີນເຂົ້າຮ່ວມປະມູນ (ຄັດຕິດໃນແບບຟອມເອກະສານປະມູນ). ຢ່າງໃດກໍຕາມ, ຖ້າຫາກວ່າ ມີໂຄງການຍ່ອຍສະເພາະພິເສດ, ຂໍ້ກຳນົດມາດຕະຖານເຕັກນິກ ຈະຕ້ອງໄດ້ມີການກະກຽມ ແລະ ຄັດຕິດໃນແບບຟອມປະມູນລາຄາ.

***ແບບຟອມການປະມູນ ສຳລັບການກໍ່ສ້າງສ້ອມແປງ***

ແບບຟອມປະມູນຕ້ອງສະແດງໃຫ້ເຫັນ:

- ລາຍລະອຽດຂອງແຕ່ລະໜ້າວຽກ;
- ສະຖານທີ່ ທີ່ຈະກໍ່ສ້າງຢູ່ໃສ ບ້ານໃດ;
- ຫົວໜ່ວຍ ແລະ ຈຳນວນ ຂອງແຕ່ລະລາຍການຂອງໜ້າວຽກ

ຂໍ້ມູນຂ້າງລຸ່ມນີ້ ຈະຕ້ອງປະກອບໃສ່ໃນແບບຟອມປະມູນລາຄາ ໂດຍຜູ້ເຂົ້າຮ່ວມປະມູນເອງ ໃນເວລາທີ່ຜູ້ເຂົ້າຮ່ວມປະມູນ ຍື່ນແບບຟອມສະເຫນີລາຄາຂອງເຂົາເຈົ້າ ສຳລັບວຽກກໍ່ສ້າງສ້ອມແປງ:

- ຫົວໜ່ວຍລາຄາແຕ່ລະລາຍການ ແລະ ລາຍການກໍ່ສ້າງ
- ລາຄາລວມຂອງແຕ່ລະລາຍການກໍ່ສ້າງ
- ມູນຄ່າລວມຂອງສັນຍາ

ເຫດຜົນ ໃນການສະເຫນີ ຂໍໃຫ້ຜູ້ເຂົ້າຮ່ວມການປະມູນ ກຳນົດລາຄາ ສຳລັບແຕ່ລະລາຍການກໍ່ສ້າງ ເພາະວ່າ:

- ເພື່ອຄວາມສະດວກໃນການສົມທຽບລາຄາ ກັບລາຄາປະເມີນທີ່ໄດ້ກຳນົດໄວ້ ເພື່ອກວດເບິ່ງວ່າ ຜູ້ເຂົ້າຮ່ວມປະມູນ ມີຄວາມຜິດພາດໃນການຄິດໄລ່ລາຄາຂອງເຂົາເຈົ້າ ຫລື ບໍ;
- ຖ້າໂຄງການຂອງຊຸມຊົນ ຕ້ອງການຈະມີການປ່ຽນແປງຈຳນວນ ຫລັງຈາກການປະມູນສຳເລັດ, ຕົວຢ່າງ: ມີເງິນເຫລືອບາງສ່ວນ, ດັ່ງນັ້ນ ຊຸມຊົນຕ້ອງການເພີ້ມຈຳນວນຫນຶ່ງທໍ່ລະບາຍນໍ້າ ຫລື ຈຳນວນນໍ້າສາງຫນຶ່ງບໍ, ພວກເຂົາສາມາດດຳເນີນການໄດ້ ພຽງແຕ່ໃຫ້ເອົາຫົວໜ່ວຍລາຄາທີ່ລະບຸໄວ້ໃນແບບຟອມເອກະສານປະມູນ,

*ແບບຟອມການປະມູນ ສຳລັບການຈັດຊື້ວັດສະດຸການກໍ່ສ້າງສ້ອມແປງ*

ສຳລັບການສັ່ງຊື້ສິນຄ້າ, ທີມງານຊຸມຊົນ/ທີມງານຈັດຕັ້ງປະຕິບັດບ້ານ ຫລື ທີມງານກຸ່ມບ້ານ (ຖ້າມີ) ຈະຕ້ອງກຽມແບບຟອມທີ່ງ່າຍດາຍ ທີ່ສະແດງໃຫ້ເຫັນ ປະເພດ ແລະ ຈຳນວນ ຂອງສິນຄ້າ. ຕາມປົກກະ ຕິແລ້ວ ຈະບໍ່ມີຄວາມຈຳເປັນຕ້ອງເພີ່ມເອກະສານໃດໆຕື່ມອີກ.

ຢ່າງໃດກໍ່ຕາມ, ສຳລັບການສັ່ງຊື້ບາງປະເພດ, ມັນອາດຈຳເປັນຕ້ອງໄດ້ຂຽນຂໍ້ກຳນົດມາດຕະຖານເຕັກນິກລະອຽດ (ຕົວຢ່າງ: ສຳລັບປະເພດສິນຄ້າສະເພາະ ເຊັ່ນ: ເຄື່ອງກຳເນີດໄຟຟ້າ) ຫລື ກຽມຮູບພາບທີ່ກ່ຽວຂ້ອງ (ຕົວຢ່າງ: ເຄື່ອງເຟີນິເຈີ). ໃນກໍລະນີນີ້, ເອກະສານຕ່າງໆເຫລົ່ານັ້ນຕ້ອງໄດ້ປະກອບໃຫ້ຜູ້ເຂົ້າຮ່ວມປະມູນຮ່ວມກັບແບບຟອມສະເຫນີລາຄາ.

*<u>ບັນທັດຖານການປະເມີນ</u>*

ບັນທັດຖານໃນການປະເມີນ ຈະຕ້ອງລະບຸຈະແຈ້ງຢູ່ໃນເອກະສານປະມູນ; ບໍ່ມີບັນທັດຖານອື່ນໆ ນອກຈາກທີ່ໄດ້ລະບຸໄວ້ໃນເອກະສານປະມູນເທົ່ານັ້ນ ທີ່ຈະນຳເອົາມາປະເມີນການປະມູນ ແລະ ມອບສັນຍາ. ສັນຍາຈະມອບໃຫ້ຜູ້ປະມູນ ທີ່ຕອບສະໜອງຄົບຖ້ວນສົມບູນ ຕໍ່ກັບເງື່ອນໄຂທີ່ຂໍ້ກຳນົດທີ່ຕ້ອງການທີ່ໄດ້ລະບຸໄວ້, ແລະ ຕອບສະໜອງຕາມຂໍ້ກຳນົດມາດຕະຖານເຕັກນິກທີ່ຕ້ອງການ ແລະ ໄດ້ຜ່ານການປະເມີນແລ້ວວ່າ ແມ່ນລາຄາຕໍ່າ.

*<u>ການຢັ້ງມຢາມພາກສະຫນາມ ສຳລັບການກໍ່ສ້າງ ໂຄງການຍ່ອຍ</u>*

ຈາກບົດຮຽນທີ່ສາມາດຖອດຖອນໄດ້ ຈາກການເຮັດສັນຍາກັບຊຸມຊົນ ພາຍໃຕ້ໂຄງການທີ່ຂັບເຄື່ອນໂດຍຊຸມຊົນອື່ນໆ ໃນປະເທດອື່ນ ເຊັ່ນ: ໂຄງການ KALAHI-CIDSS ໃນປະເທດ ຟີລິປິນ, ການລົງຢັ້ງມຢາມພາກສະຫນາມ ແມ່ນຈຳເປັນຕ້ອງເຮັດກ່ອນການຍື່ນຊອງປະມູນ. ການຢັ້ງມຢາມພາກສະຫນາມແມ່ນການໃຫ້ໂອກາດແກ່ຜູ້ສົນໃຈເຂົ້າຮ່ວມການປະມູນ ໄດ້ມີໂອກາດໃນການລົງໄປກວດກາສະຖານທີ່ກໍ່ສ້າງ ແລະ ເບິ່ງສະພາບແວດລ້ອມອ້ອມຂ້າງສະໜາມ ແລະ ເກັບກຳເອົາຂໍ້ມູນທີ່ຈຳເປັນ ເຊິ່ງອາດຈະໄດ້ນຳມາໃຊ້ເຂົ້າໃນການຄິດໄລ່ລາຄາ ແລະ ປະກອບເຂົ້າໃນສັນຍາ ສຳລັບບັນດາໂຄງການຍ່ອຍ ທີ່ຕັ້ງຢູ່ໃນເຂດພື້ນທີ່ຫ່າງໄກສອກຫລີກ ແລະ ເຂດພູດອຍທີ່ມີຄວາມຫຍຸ້ງຍາກໃນການເຂົ້າເຖິງ ສຳລັບການບໍລິການດ້ານການຈັດສົ່ງ ແລະ ມີທີ່ຕັ້ງຢູ່ໄກຈາກຫ້ອງຕະຫລາດ. ດ້ວຍເຫດນີ້, ການຢັ້ງມຢາມພາກສະຫນາມ ແມ່ນຫນຶ່ງໃນເງື່ອນໄຂຂໍ້ກຳນົດໄວ້ໃນບັນທັດຖານການຄັດເລືອກ ຂອງ ທລຍ. ພາຍຫລັງການລົງຢັ້ງມຢາມພາກສະຫນາມ, ຜູ້ສົນໃຈເຂົ້າຮ່ວມການປະມູນ ຈະຕ້ອງໄດ້ຂໍໜັງສືຢັ້ງຢືນການລົງມາຢັ້ງມຢາມພາກສະຫນາມຄັ້ງດັ່ງກ່າວ ກັບທີມງານຊຸມຊົນ/ທີມງານຈັດຕັ້ງປະຕິບັດຂັ້ນບ້ານ ຫລື ທີມງານກຸ່ມບ້ານ (ຖ້າມີ). ໃບຢັ້ງຢືນການລົງຢັ້ງມຢາມພາກສະຫນາມນີ້ ຈະຕ້ອງມີການເຊັນຢັ້ງຢືນ ຈາກຜູ້ປະສານງານຊຸມຊົນ ຫລື ຜູ້ບໍລິຫານການຈັດຊື້ (ໃນກໍລະນີ ຫາກຜູ້ປະສານງານຊຸມຊົນບໍ່ຢູ່) ຂອງທີມຊຸມຊົນ/ທີມງານຈັດຕັ້ງປະຕິບັດບ້ານ ຫລື ທີມງານກຸ່ມບ້ານ (ຖ້າມີ). ຜູ້ເຂົ້າຮ່ວມປະມູນຜູ້ໃດທີ່ບໍ່ໄດ້ຍື່ນໜັງສືຢັ້ງຢືນ

ການລົງຍຸ້ມຍາມພາກສະໜາມຂອງເຂົາເຈົ້າ ໃນຊອງປະມູນ ໃນມື້ເປີດຊອງປະມູນ. ຊອງປະມູນຂອງເຂົາເຈົ້ານັ້ນ ຈະຕ້ອງຖືກປະຕິເສດ ແລະ ພິຈາລະນາໃຫ້ເປັນເອກະສານປະມູນທີ່ບໍ່ຕອບສະໜອງຕາມເງື່ອນໄຂ ແລະ ຈະບໍ່ໄດ້ຮັບການພິຈາລະນາ.

***ການຄ້ຳປະກັນການປະມູນ***

ໃນຮູບແບບໜັງສືແຈ້ງຮັບຮອງການຄ້ຳປະກັນການປະມູນ ແລະ ການປະຕິບັດສັນຍາ ແມ່ນມີຄວາມຈຳເປັນ ສຳລັບການປະມູນ ແບບວິທີການການສົມທຽບລາຄາ ແລະ ແບບວິທີການປະມູນເປີດກວ້າງພາຍໃນທ້ອງຖິ່ນ. ຮ່າງໜັງສືແຈ້ງຮັບຮອງການຄ້ຳປະກັນການປະມູນ ແລະ ການປະຕິບັດສັນຍາ ແມ່ນຕ້ອງປະກອບຢູ່ໃນເອກະສານປະມູນ.

ໜັງສືຮັບຮອງການຄ້ຳປະກັນການປະມູນ ແລະ ການປະຕິບັດສັນຍາ ຈະຕ້ອງມີໄລຍະເວລາທີ່ມີຜົນໄຊ້ໄດ້ຕື່ມອີກ 28 ວັນ ພາຍຫລັງທີ່ໄລຍະເວລາການປະມູນມີຜົນໃຊ້ໄດ້ຕົວຈິງຫມົດອາຍຸ.

***ການພົວພັນເອົາເອກະສານປະມູນໄດ້ຢູ່ໃສ?***

ຜູ້ຮັບເໝົາກໍ່ສ້າງ/ຜູ້ສະໜອງສິນຄ້າ ສາມາດພົວພັນເອົາສຳເນົາເອກະສານປະມູນໄດ້ ໂດຍບໍ່ຕ້ອງຈ່າຍຄ່າເອກະສານປະມູນໃດໆໄດ້ທີ່ຫ້ອງການຂອງຊຸມຊົນ/ບ້ານ ຫລື ເມືອງ, ຫລື ແຂວງ.

ຫ້ອງການດັ່ງກ່າວນັ້ນ ຕ້ອງຮັບປະກັນໃຫ້ມີເອກະສານການປະມູນຢູ່ຕະຫລອດເວລາ ໃນໄລຍະເວລາລັດຖະການ ນັບຈາກມື້ໄດ້ລົງແຈ້ງປະກາດການປະມູນ ຈົນຮອດມື້ປິດຮັບເອກະສານປະມູນ.

***ຂໍ້ມູນທີ່ຈະປະກອບເຂົ້າໃນການແຈ້ງປະກາດການປະມູນ ຫລື ແຈ້ງເຊີນເຂົ້າຮ່ວມປະມູນລາຄາ/ສະເໜີລາຄາ***

ການປະກາດແຈ້ງການປະມູນ ຫລື ເຊີນເຂົ້າຮ່ວມການປະມູນລາຄາ/ສະເໜີລາຄາ ຈະຕ້ອງປະກອບດ້ວຍຂໍ້ມູນ ສຳລັບຜູ້ຮັບເໝົາກໍ່ສ້າງສ້ອມແປງ ແລະ ຜູ້ສະໜອງສິນຄ້າ ກ່ຽວກັບການປະມູນ ສຳລັບຫຍັງ ແລະແບບວິທີການປະມູນລາຄາແບບໃດ.

**ການປະກາດແຈ້ງການປະມູນ ສຳລັບການກໍ່ສ້າງສ້ອມແປງ ຄວນລະບຸ:**

- ສັນຍາ ກ່ຽວກັບວຽກກໍ່ສ້າງສ້ອມແປງຫຍັງ;
- ຜູ້ຮັບເໝົາກໍ່ສ້າງສ້ອມແປງປະເພດໃດ ອະນຸມັດໃຫ້ເຂົ້າຮ່ວມການປະມູນ;
- ຢູ່ໃສສາມາດພົວພັນເອົາເອກະສານປະມູນໄດ້;
- ເວລາ ແລະ ສະຖານທີ່ ດຳເນີນກອງປະຊຸມເປີດຊອງປະມູນ;
- ມື້ສຸດທ້າຍໃນການຍື່ນຊອງປະມູນ;

- ເວລາ ແລະ ສະຖານທີ່ເປີດຊອງປະມູນ.

**ການປະກາດແຈ້ງການປະມູນ ສໍາລັບການຈັດຊື້ສິນຄ້າ ຄວນລະບຸ:**

- ລາຍການລະອຽດຂອງສິນຄ້າ ທີ່ຈະຈັດຊື້;
- ສະຖານທີ່ປາຍທາງຈັດສົ່ງສຸດທ້າຍ ທີ່ຈະຈັດສົ່ງສິນຄ້າ;
- ຢູ່ໃສສາມາດຈະພົວພັນເອົາເອກະສານປະມູນ;
- ລາຄາທີ່ປະເມີນໄວ້ (ຖ້າສາມາດເອົາໃຫ້ໄດ້);
- ເວລາ ແລະ ສະຖານທີ່ ສໍາລັບການຍື່ນ ແລະ ຮັບ ຊອງປະມູນລາຄາ;
- ເວລາ ແລະ ສະຖານທີ່ ສໍາລັບການເປີດຊອງປະມູນລາຄາ.

ການປະກາດແຈ້ງການປະມູນ ຈະຕ້ອງປະກາດໂຄສະນາອອກທາງໜ້າໜັງສືພິມພາຍໃນທ້ອງຖິ່ນ, ຕິດປະກາດເທິງກະດານຂ່າວຂອງຊຸມຊົນ/ບ້ານ/ກຸ່ມບ້ານ/ທລຍ ເມືອງ ຫລື ແຂວງ/ຫລື ທາງເວັບໄຊຂອງ ທລຍ ຫລື ປະກາດອອກທາງໂທລະໂຄ່ງ ຂອງແຂວງ.

ການປະກາດແຈ້ງການປະມູນ ສໍາລັບການປະມູນ ຕ້ອງເປີດກວ້າງຕໍ່ສາທາລະນະເຊັ່ນກັນ ແລະ ຕິດປະກາດຢູ່ເທິງກະດານຂ່າວ ຂອງຊຸມຊົນ ແລະ ຕິດໃສ່ກະດານຂ່າວຂອງຫ້ອງການເມືອງ ແລະ ແຂວງ. ການຕິດປະກາດແຈ້ງການປະມູນ ຕ້ອງໄດ້ເລີ້ມຕິດໃສ່ກະດານຂ່າວກ່ອນຢ່າງຕໍ່າ 2 ອາທິດ ກ່ອນວັນທີທີ່ກໍານົດໃຫ້ເປັນວັນທີ່ປິດຮັບຊອງປະມູນ.

ການແຈ້ງການປະມູນ ຈະຕ້ອງປະກອບດ້ວຍຂໍ້ມູນ ດັ່ງນີ້:

- ແບບຟອມຍື່ນສະເໜີເຂົ້າຮ່ວມປະມູນ;
- ເງື່ອນໄຂຂອງສັນຍາ;
- ລາຄາທີ່ປະເມີນໄວ້ (ຖ້າສາມາດສະໜອງໃຫ້ໄດ້);
- ເວລາທີ່ກໍານົດໄວ້ໃຫ້ສົ່ງສິນຄ້າສໍາເລັດ ຫລື ສໍາເລັດວຽກກໍ່ສ້າງ ຫລື ສໍາເລັດໃນການບໍລິການດ້ານຊ່ຽວຊານທີ່ປຶກສາ;
- ເງື່ອນໄຂຂອງການເບີກຈ່າຍເງິນແຕ່ລະງວດ;
- ເງື່ອນໄຂຂໍ້ກໍານົດ, ມາດຕະຖານເຕັກນິກ, ແຜນຜັງຮູບແຕ້ມ (ຖ້າມີ);
- ບົດລາຍງານກ່ຽວກັບຈັນຍາບັນດ້ານການສໍ້ໂກງ, ແລະ ການສໍ້ລາດບັງຫລວງ.

ຂັ້ນຕອນລະອຽດກ່ຽວກັບການປະເມີນຜົນ (ປະກອບດ້ວຍວິທີການດໍາເນີນພິທີການເປີດຊອງປະມູນ/ໜັງສືຍື່ນສະເໜີລາຄາ) ສາມາດສຶກສາໄດ້ໃນປຶ້ມຄູ່ມືການຈັດຊື້-ຈັດຈ້າງ ສໍາລັບຊຸມຊົນ.

## 10.11 ບົດລາຍງານການປະເມີນຜົນການປະມູນ

ການປະເມີນຜົນການປະມູນ ຈະຕ້ອງດຳເນີນການໂດຍທັນທີ ພາຍຫລັງການເປີດຊອງປະມູນລາຄາສຳເລັດ ຕາມແບບຟອມບົດລາຍງານການປະເມີນຜົນການປະມູນລາຄາ (ເບິ່ງເອກະສານຊ້ອນທ້າຍ 4.2 ໃນປຶ້ມຄູ່ມືການຈັດຊື້-ຈັດຈ້າງ ສຳລັບຊຸມຊົນ). ໃນກໍລະນີ, ຖ້າຕ້ອງການ ການຊ່ວຍເຫລືອ ຫລື ການໃຫ້ຄຳແນະນຳ ທາງດ້ານວິຊາການ ຈາກ ຫ້ອງການ ທລຍ ຂັ້ນເມືອງ, ຫລື ຂັ້ນແຂວງ, ຫລື ລວມທັງຂັ້ນສູນກາງ, ທີມງານຊຸມຊົນ/ທີມງານຈັດຕັ້ງປະຕິບັດຂັ້ນບ້ານ ຫລື ທີມງານກຸ່ມບ້ານ (ຖ້າມີ) ສາມາດເຮັດໜັງສືຂໍສະເໜີຢ່າງເປັນທາງການໄດ້.

ການປະເມີນຜົນການປະມູນ ແລະ ການຕັດສິນມອບສັນຍານັ້ນ ຕ້ອງໄດ້ເຮັດບົນພື້ນຖານຂອງຂໍ້ກຳນົດຄຸນວຸດທິທີ່ຕ້ອງການ ແລະ ມາດຕະຖານເຕັກນິກທີ່ຕ້ອງການ ທີ່ໄດ້ກຳນົດໄວ້ໃນເອກະສານປະມູນເທົ່ານັ້ນ. ບໍ່ມີບັນທັດຖານອື່ນໃດ ຈະສາມາດເພີ່ມເຂົ້າຕື່ມໄດ້ ໃນໄລຍະເວລາຂັ້ນຕອນການປະເມີນຜົນການປະມູນລາຄາ ແລະ ການຕັດສິນຕັດສິນມອບສັນຍາ.

ເອກະສານປະມູນທຸກຊອງ ຈະບໍ່ຖືກປະຕິເສດ ຍ້ອນເຫດຜົນພຽງແຕ່ດ້ານການຄາດຄະເນມູນຄ່າ ຫລື ເພດານງົບປະມານເທົ່ານັ້ນ ທຸກການປະຕິເສດຕ້ອງໄດ້ສະເໜີຂໍໜັງສືອະນຸມັດ ຈາກທະນາຄານໂລກກ່ອນ.

ສິ່ງທີ່ຄວນເອົາໃຈໃສ່ເປັນພິເສດ ຄວນຈະຕ້ອງຮັກສາຄວາມລັບຂອງຂັ້ນຕອນຂະບວນການປະເມີນຜົນການປະມູນ ຈົນກ່ວາການເຊັນສັນຍາສຳເລັດ.

ບົດລາຍງານການປະເມີນຜົນການປະມູນ ຕ້ອງໄດ້ເຊັນຢັ້ງຢືນ ໂດຍສະມາຊິກທຸກຄົນຂອງທີມງານຊຸມຊົນ/ທີມງານຈັດຕັ້ງປະຕິບັດຂັ້ນບ້ານ ຫລື ທີມງານກຸ່ມບ້ານ (ຖ້າມີ)

## 10.12 ການເຊັນສັນຍາ

ກອງປະຊຸມສຳລັບການເຊັນສັນຍາ ຄວນຈະຈັດຂຶ້ນພາຍໃນ ສິບຫ້າ (15) ວັນ ຫລັງຈາກວັນທີ່ແຈ້ງຜູ້ຊະນະການປະມູນ.

ສັນຍາການກໍ່ສ້າງສ້ອມແປງ ຕາມປົກກະຕິແລ້ວ ຈະນຳໃຊ້ເງື່ອນໄຂຂອງສັນຍາທີ່ໄດ້ຄັດຕິດຢູ່ໃນເອກະສານປະມູນ, ສິ່ງສຳຄັນທີ່ສຸດ ແມ່ນບັນດາຜູ້ຮັບເໝົາ ຈະຕ້ອງໄດ້ອ່ານ ແລະ ເຂົ້າໃຈທຸກເງື່ອນໄຂຂອງສັນຍາກ່ອນຍື່ນຊອງປະມູນ.

ສິ່ງທີ່ສຳຄັນອີກອັນໜຶ່ງທີ່ກຳນົດໄວ້ໃນເງື່ອນໄຂຂອງສັນຍາແມ່ນ ຜູ້ຮັບເໝົາຕ້ອງຮັບຜິດຊອບໃນການດຳເນີນການບຳລຸງຮັກສາສິ່ງກໍ່ສ້າງ ພາຍໃນທີກ (6) ເດືອນ ຫລັງຈາກການກໍ່ສ້າງສຳເລັດ (ທີກເດືອນນີ້ແມ່ນເອີ້ນວ່າ "ໄລຍະບຳລຸງຮັກສາ ຫລື ໄລຍະຄ້ຳປະກັນການເປ່ເພ". ມັນເປັນສິ່ງທີ່ຈຳເປັນທີ່ຜູ້ຮັບເໝົາທຸກຄົນຕ້ອງເຂົ້າໃຈໃນເງື່ອນໄຂນີ້.

### 10.13 ການກວດກາ ແລະ ການຄຸ້ມຄອງສັນຍາ

ຈຸດສຳຄັນທີ່ຈະພິຈາລະນາ ມີດັ່ງຕໍ່ໄປນີ້:

- ການເລີ້ມວຽກ;
- ເວລາສຳເລັດວຽກ/ການສົ່ງສິນຄ້າຕາມກຳນົດເວລາ;
- ຄຸນນະພາບຕອບສະໜອງຕາມຄວາມຕ້ອງການດ້ານມາດຕະຖານເຕັກນິກທີ່ກຳນົດໄວ້/ຈຳນວນສິນຄ້າ;
- ການຄ້ຳປະກັນການເປ່ເພ/ໄລຍະເວລາການບຳລຸງຮັກສາ.

ການກວດກາ ແລະ ການສົ່ງສິນຄ້າ ແລະ ການຄວບຄຸມດູແລວຽກງານການກໍ່ສ້າງສ້ອມແປງ ຈະຕ້ອງມີການພົວພັນ ແລະ ມີສ່ວນຮ່ວມ ຂອງສະມາຊິກຊຸມຊົນຜູ້ທີ່ໄດ້ຮັບຜົນປະໂຫຍດ ເພື່ອຮັບປະກັນວ່າ ການນຳສົ່ງສິນຄ້າ ແລະ ການດຳເນີນການກໍ່ສ້າງສ້ອມແປງ ແມ່ນໄດ້ປະຕິບັດສອດຄ່ອງກັບພັນທະຂອງສັນຍາ. ໃນກໍລະນີ ມີການເສຍຫາຍ ຫລື ພົບເຫັນບັນຫາ, ສະມາຊິກຂອງຊຸມຊົນ ສາມາດລາຍງານ ຕໍ່ທີມງານຊຸມຊົນ/ທີມງານຈັດຕັ້ງປະຕິບັດຂັ້ນບ້ານ ຫລື ທີມງານກຸ່ມບ້ານ (ຖ້າມີ) ຜູ້ທີ່ຈະເປັນຜູ້ນຳບັນຫາເຫລົ່ານັ້ນ ໄປສະເຫນີຕໍ່ກັບຜູ້ສະໜອງສິນຄ້າ/ຜູ້ຮັບເໝົາກໍ່ສ້າງສ້ອມແປງ ເພື່ອແກ້ໄຂສິ່ງທີ່ບໍ່ເໝາະສົມເຫລົ່ານັ້ນ. ຖ້າຜູ້ສະໜອງສິນຄ້າ/ຜູ້ຮັບເໝົາກໍ່ສ້າງສ້ອມແປງ ບໍ່ດຳເນີນການແກ້ໄຂ ຕາມການສະເຫນີ, ທີມງານຊຸມຊົນ/ທີມງານຈັດຕັ້ງປະຕິບັດຂັ້ນບ້ານ ຫລື ທີມງານກຸ່ມບ້ານ (ຖ້າມີ) ຈະໃຊ້ມາດຕະການຕາມທີ່ໄດ້ລະບຸໄວ້ໃນເງື່ອນໄຂຂອງສັນຍາ. ທີມງານຊຸມຊົນ/ທີມງານຈັດຕັ້ງປະຕິບັດຂັ້ນບ້ານ ຫລື ທີມງານກຸ່ມບ້ານ (ຖ້າມີ) ອາດຈະສະເຫນີຂໍຄວາມຊ່ວຍເຫລືອ ຈາກຫ້ອງການ ທລຍ ຕ່າງໆທີ່ກ່ຽວຂ້ອງ ເພື່ອຈັດການກັບບັນຫາດັ່ງກ່າວທີ່ເກີດຂຶ້ນ ໃນລະຫວ່າງການຄຸ້ມຄອງສັນຍາ. ໃບຢັ້ງຢືນການມອບຮັບ ຈະອອກໃຫ້ໂດຍທີມງານຊຸມຊົນ/ທີມງານຈັດຕັ້ງປະຕິບັດຂັ້ນບ້ານ ຫລື ທີມງານກຸ່ມບ້ານ (ຖ້າມີ) ສະເພາະແຕ່ໃນກໍລະນີ ການຈັດສົ່ງສິນຄ້າ ຫລື ການກໍ່ສ້າງສ້ອມແປງ ໄດ້ສຳເລັດສົມບູນ ຕາມຄວາມຕ້ອງການທີ່ໄດ້ກຳນົດໃວ້ໃນສັນຍາເທົ່ານັ້ນ.

### 10.14 ການເກັບມ້ຽນເອກະສານປະມູນ

ເອກະສານສະບັບຕົ້ນທັງຫມົດທີ່ກ່ຽວຂ້ອງກັບຂະບວນການປະມູນຈັດຊື້ ຕ້ອງໄດ້ເກັບຮັກສາມ້ຽນໄວ້ຢູ່ທີ່ຫ້ອງການ ທລຍ ເມືອງ ແລະ ພ້ອມສຳລັບການກວດກາເອກະສານຄືນ ໂດຍຫ້ອງການ ທລຍ ສູນກາງ ຫລື ທະນາຄານໂລກ ແລະ ທີມງານກວດສອບບັນຊີເອກະລາດ. ເອກະສານສຳເນົາອື່ນໆເຫລົ່ານີ້ທີ່ຈຳເປັນ ຕ້ອງໄດ້ເກັບຮັກສາໄວ້ຢູ່ທີ່ຫ້ອງການຂອງຊຸມຊົນ/ບ້ານ ຫລື ກຸ່ມບ້ານ (ຖ້າມີ) ເພື່ອໃຫ້ເຂົາເຈົ້າ

ສາມາດຕິດຕາມກ່ຽວກັບຄວາມຄືບໜ້າຂອງວຽກກໍ່ສ້າງສ້ອມແປງ/ຈັດສົ່ງສິນຄ້າ ແລະ ກວດກາຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ.

ລາຍການເອກະສານປະມູນລະອຽດທີ່ຈະເກັບມ້ຽນ ສາມາດສຶກສາໄດ້ຢູ່ໃນປຶ້ມຄູ່ມືການຈັດຊື້-ຈັດຈ້າງ ສໍາລັບຊຸມຊົນ.

# 11 ການປ້ອງກັນດ້ານສັງຄົມ ແລະ ສິ່ງແວດລ້ອມ

## 11.1 ຈຸດປະສົງ ແລະ ກອບທາງກົດໝາຍ

ທະນາຄານໂລກ (ທຄລ) ໄດ້ກຳນົດການຈັດຕັ້ງ ທລຍ 2 ເຂົ້າຢູ່ໃນ "ປະເພດ ຂ" ແລະ ບໍ່ນອນຢູ່ໃນ 10 ນະໂຍບາຍດ້ານການປ້ອງກັນດ້ານສັງຄົມ ແລະ ສິ່ງແວດລ້ອມ, ໃນນັ້ນມີ 4 ນະໂຍບາຍທີ່ຕ້ອງໄດ້ປະຕິບັດເຊັ່ນ: ນະໂຍບາຍການປະເມີນສິ່ງແວດລ້ອມ (ຫົວຂໍ້ 4.01), ນະໂຍບາຍກ່ຽວກັບການຄວບຄຸມຢາຂ້າສັດຕູພືດ (ຫົວຂໍ້ 4.09), ນະໂຍບາຍກ່ຽວກັບຊົນເຜົ່າຕ່າງໆ (ຫົວຂໍ້ 4.10), ແລະ ນະໂຍບາຍກ່ຽວກັບການປົກປ້ອງການຍົກຍ້າຍຖິ່ນຖານແບບບໍ່ສະໝັກໃຈ (ຫົວຂໍ້ 4.12) ເພື່ອສະແດງໃຫ້ເຫັນຮູບແບບຂອງແຕ່ລະປະເພດໂຄງການ ທີ່ນອນຢູ່ໃນໂຄງການພັດທະນາແບບມີສ່ວນຮ່ວມ ແລະ ລັກສະນະຂອງໂຄງການ ເປັນໂຄງການຂະໜາດນ້ອຍ ຊຶ່ງອາດບໍ່ມີຜົນກະທົບຫລາຍຕໍ່ສະພາບແວດລ້ອມ. ເຖິງຢ່າງໃດກໍ່ຕາມໂຄງການຂະໜາດນ້ອຍ ບາງຄັ້ງກໍ່ຍັງຕ້ອງຮຽກຮ້ອງໃຫ້ມີການທົດແທນຄືນດ້ານເນື້ອທີ່ດິນເລັກນ້ອຍ ແລະ ອາດກໍ່ໃຫ້ເກີດຜົນກະທົບທາງບວກຕໍ່ສະພາບແວດລ້ອມ ແລະ ຊຸມຊົນໃນບໍລິເວັນດັ່ງກ່າວ ແຕ່ຜົນກະທົບນັ້ນອາດຈຳກັດຢູ່ສະເພາະບາງພື້ນທີ່ໃດນຶ່ງ, ເປັນລັກສະນະຊົ່ວຄາວ ແລະ ສາມາດຫລຸດຜ່ອນຜົນກະທົບລົງໄດ້ ດ້ວຍການວາງແຜນ ແລະ ກໍ່ສ້າງທີ່ດີ.

ເພື່ອໃຫ້ສອດຄ່ອງກັບຄູ່ມືຈັດຕັ້ງປະຕິບັດ (ຫົວຂໍ້ 4.01, 4.09, 4.10, ແລະ 4.12) ຈຶ່ງໄດ້ມີການກະກຽມ 4 ເອກະສານສະ ເພາະເຊັ່ນ:

- ກອບການຄຸ້ມຄອງດ້ານສັງຄົມ ແລະ ສິ່ງແວດລ້ອມ (ESMF);
- ແຜນການຄວບຄຸມຢາປາບສັດຕູພືດ (PMP);
- ກອບນະໂຍບາຍໃນການທົດແທນຄືນ ແລະ ການຍົກຍ້າຍຖິ່ນຖານ (CRPF);
- ກອບນະໂຍບາຍຊົນຊາດຊົນເຜົ່າຕ່າງໆ (EGPF).

## 11.2 ກອບການຄຸ້ມຄອງດ້ານສັງຄົມ ແລະ ສິ່ງແວດລ້ອມ (ESMF)

ຄູ່ມືນະໂຍບາຍຄວາມປອດໄພ ກ່ຽວກັບສັງຄົມ ແລະ ສິ່ງແວດລ້ອມ (ESMP) ກ່ຽວກັບວິທີການ ແລະນະໂຍບາຍທີ່ຈະນຳໃຊ້ເພື່ອໃຫ້ຫລີກລ້ຽງຫລືຫລຸດຜ່ອນຜົນກະທົບຕໍ່ໂຄງການຍ່ອຍ ແລະ ເພື່ອຮັບປະກັນໃຫ້ຖືກຕ້ອງກັບນະໂຍບາຍຄວາມປອດໄພ ຂອງທະນາຄານໂລກ ທີ່ໄດ້ກຳນົດໄວ້. ການຈັດຕັ້ງປະຕິບັດຈະຕ້ອງປະຕິບັດຕາມລະບຽບ ແລະ ນະໂຍບາຍ ຂອງ ສປປ ລາວ ກໍ່ຄືນະໂຍບາຍດ້ານຄວາມປອດໄພຂອງທະນາຄານໂລກ. ຈຸດປະສົງຂອງຄູ່ມືສະບັບນີ້ ແມ່ນເພື່ອຊ່ວຍໃຫ້ພາກລັດຂັ້ນສູນກາງ, ແຂວງ ແລະເມືອງ, ທີມງານທລຍ, ທີ່ປຶກສາ, ຫ້ອງການບ້ານ, ພາກລັດ ແລະ ເອກະຊົນ ບໍ່ໃຫ້ມີບັນຫາໃນເວລາຈັດຕັ້ງປະຕິບັດ ແລະ ອອກແບບໂຄງການຍ່ອຍ ໂດຍສະເພາະແມ່ນບັນຫາທາງດ້ານສະພາບແວດລ້ອມ ແລະ ສັງຄົມ ເພື່ອປັບຮູບແບບການພັດທະນາໂດຍຊຸມຊົນ ເຂົ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ,

## 11.3 ກອບການຄຸ້ມຄອງສະພາບແວດລ້ອມ (EMF)

ກອບການຄຸ້ມຄອງສະພາບແວດລ້ອມ (EMF) ຈະໄດ້ຖືກຈັດຕັ້ງປະຕິບັດໃນຮອບວຽນ ຂອງ ທລຍ ແລະ ໜ້າວຽກດັ່ງກ່າວ ຈະໄດ້ໝູນໃຊ້ເຂົ້າໃນຂັ້ນຕອນການຄັດເລືອກໂຄງການຍ່ອຍ, ອະນຸມັດໂຄງການ, ຈັດຕັ້ງປະຕິບັດ ແລະ ການຕິດຕາມປະເມີນຜົນ. ກອບການຄຸ້ມຄອງສະພາບແວດລ້ອມ (EMF) ແມ່ນພັດທະນາບົນພື້ນຖານປະສົບການຈັດຕັ້ງປະຕິບັດຜ່ານມາ ຂອງຄູ່ມືປ້ອງກັນດ້ານສັງຄົມ ແລະ ສິ່ງແວດລ້ອມ (SESG) ສຳລັບໂຄງການ ທລຍ 1 ແລະ ຂອບເຂດກິດຈະກຳຈະໄດ້ມານຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດ ທລຍ 2. ສຳລັບ (EMF) ໄດ້ອະທິບາຍກ່ຽວກັບການກັ່ນຕອງຄວາມປອດໄພ, ທົບທວນຂັ້ນຕອນຄືນ ແລະ ຈະຕ້ອງໄດ້ເຮັດວຽກງານຄວາມປອດໄພ, ລວມທັງການຕິດຕາມ, ກວດກາ ແລະ ຈະໄດ້ນຳໃຊ້ເຂົ້າໃນທຸກການລົງທຶນ ຂອງໂຄງການ ທລຍ 2.

ຂັ້ນຕອນການກັ່ນຕອງ ຈະຕ້ອງໄດ້ເຮັດ ແລະ ທົບທວນຄືນກ່ອນ ຈະສະເໜີໂຄງການຍ່ອຍເຂົ້າໃນກອງປະຊຸມວາງແຜນຂັ້ນເມືອງ. ມັນຈະຕ້ອງມີການລາຍງານ ກ່ຽວກັບສະພາບແວດລ້ອມທີ່ນຳໃຊ້ (ECOP) ສຳລັບທຸກປະເພດວຽກງານວິສະວະກຳທີ່ນຳໃຊ້ງົບປະມານ ຂອງ ທລຍ 2. ລວມມີມາດຕະຖານຕ່າງໆ ເຊັ່ນ: CRPF, EGPF, ແລະ PMP.

ເອກະສານນີ້ໄດ້ພິຈາລະນາໃຫ້ເປັນເອກະສານໃໝ່ ແລະ ສາມາດດັດແກ້ ແລະ ປ່ຽນແປງຕາມສະຖານະການທີ່ມີການປ່ຽນແປງ ຫລື ຂອບເຂດກິດຈະກຳ. ມັນຈຳເປັນຕ້ອງໄດ້ເຮັດວຽກປະສານກັນກັບທີມງານທະນາຄານໂລກໃຫ້ຈະແຈ້ງ ໃນການທົບທວນຄືນ (EMP) ໃນເວລາທີ່ຈຳເປັນ.

### a) ຍຸດທະສາດການຄຸ້ມຄອງສະພາບແວດລ້ອມ.

ເພື່ອຫລຸດຜ່ອນຜົນກະທົບທາງລົບສະພາບແວດລ້ອມ ໃສ່ກັບສະພາບແວດລ້ອມຕົວຈິງ, ທລຍໄດ້ພັດທະນາກອບການຄຸ່ມຄອງສະພາບແວດລ້ອມ ໃຫ້ເຂົ້າກັບນະໂຍບາຍຄວາມປອດໄພ ຂອງທະນາຄານໂລກ (OP/BP4.01) ໂດຍມີຈຸດປະສົງດັ່ງລຸ່ມນີ້:

- ຂັ້ນຕອນການກັ່ນຕອງ ແລະ ການປະເມີນຜົນກະທົບເປັນຂັ້ນຕອນທີ່ສຳຄັນ ກ່ອນຈະມີການສະເໜີໂຄງການຍ່ອຍເພື່ອອະນຸມັດ;
- ການຫລຸດຜອ່ນຜົນກະທົບທາງລົບຂອງໂຄງການຍ່ອຍທີ່ໄດ້ອະນຸມັດແລ້ວ ໃນໄລຍະການອອກແບບ, ການກໍ່ສ້າງ ແລະ ການຈັດຕັ້ງປະຕິບັດໃນໄລຍະຍາວ.

### 1) *ໄລຍະກຳນົດໂຄງການຍ່ອຍ*

ກ່ອນຈະອະມັດໂຄງການຍ່ອຍ, ທລຍ ໄດ້ຈັດກອງປະຊຸມຂື້ນຫລາຍຄັ້ງທີ່ບ້ານ, ກຸ່ມບ້ານ ແລະ ຂັ້ນເມືອງ ໃນໄລຍະດຳເນີນກອງປະຊຸມ, ພະນັກງານ ທລຍ ຈະໄດ້ລາຍງານໃຫ້ຊຸມຊົນ ກ່ຽວກັບຄວາມສຳຄັນ ຂອງສະພາບແວດລ້ອມທີ່ມີຄວາມສ່ຽງຕໍ່ໂຄງການຍ່ອຍ, ປູກຈິດສຳນຶກໃຫ້ຊຸມຊົນ ກ່ຽວກັບວິທີປ້ອງກັນ ແລະ

ຫລຸດຜ່ອນຜົນກະທົບທາງລົບໃຫ້ແກ້ຊຸມຊົນເອງ ແລະ ຂໍ້ມູນໃນບໍລິເວດພື້ນທີ່ ທີ່ໂຄງການຍ່ອຍຈະມີການກໍ່ສ້າງ, ຕົວຢ່າງ: ການນຳໃຊ້ທີ່ດິນໃນປະຈຸບັນ, ພື້ນທີ່ປ້ອງກັນທີ່ມີຢູ່ຕົວຈິງ ແລະ ອື່ນໆ. ຖ້າໂຄງການຍ່ອຍດັ່ງກ່າວ ຫາກພົບວ່າເປັນກິດຈະກຳທີ່ນອນໃນຂໍ້ຫ້າມໃນພາກທີ 2, ກິດຈະກຳດັ່ງກ່າວ ຈະຕ້ອງໄດ້ເຮັດການກັ່ນຕອງອອກ ຫລື ຕ້ອງໄດ້ພິຈາລະນາຄືນ ເພື່ອຈະຈັດຕັ້ງປະຕິບັດກິດຈະກຳດັ່ງກ່າວ.

2) ***ໄລຍະອອກແບບໂຄງການຍ່ອຍ***

ໂຄງການຍ່ອຍທີ່ໄດ້ສະເໜີຈາກບ້ານ ແລະ ໄດ້ມີການຄັດເລືອກໃນໄລຍະກອງປະຊຸມວາງແຜນພັດທະນາກຸ່ມບ້ານ, ແລະ ກອງປະຊຸມປະສານການວາງແຜນຂັ້ນເມືອງ ຈະໄດ້ມີການອອກແບບຮ່ວມກັບຊຸມຊົນໂດຍແມ່ນການຊ່ວຍເຫລືອທາງດ້ານວິຊາການ ຈາກທີມງານ ທລຍ.

ແບບຟອມບົດສະເໜີໂຄງການຍ່ອຍ (SPPF) ໄດ້ຖືກນຳໃຊ້ເປັນເອກະສານຫລັກໃນການອອກແບບ ແລະ ລວມມີການກັ່ນຕອງກວດກາສະພາບແວດລ້ອມໂດຍຫຍໍ້ ເພື່ອໃຫ້ທີມງານໄດ້ກວດກາ ໃນກໍລະນີ ມີຄວາມສ່ຽງ ສະເພາະພະນັກງານ ທລຍ ຈະໄດ້ປະກອບແບບຟອມບົນພື້ນຖານຄວາມຮູ້ຂອງຊາວບ້ານ, ດ້ວຍການສັງເກດ ໃນສະພາບຕົວຈິງ ແລະ ກ່ອນມີການປຶກສາຫາລືກັບພະພນັກງານລັດຂັ້ນເມືອງ (ຕົວຢ່າງ: :ກວດກາໂຄງການຈະບໍ່ຖືກໃນເຂດປ່າສະຫງວນ ຫລື ເຂດຫວງຫ້າມບໍ).ໃນຂັ້ນຕອນນີ້, ຖ້າກິດຈະກຳໂຄງການຍ່ອຍ ໄດ້ກຳນົດພາກ 1.5.2 ຂອງກິດຈະກຳບໍ່ໃຫ້ການສະໜັບສະໜູນ, ກິດຈະກຳດັ່ງກ່າວ ຈະຕ້ອງໄດ້ຍົກເລີກ/ເອົາບົດສະເໜີໂຄງການຍ່ອຍອອກ. ຖ້າຜົນກະທົບບໍ່ຮ້າຍແຮງ ບໍ່ຈຳເປັນຍົກເລີກ ແລະ ຂະໜາດຂອງໂຄງການຍ່ອຍ ທີ່ມີຜົນກະທົບໜ້ອຍທີ່ສຸດ, ນອກນັ້ນ ການປະເມີນຜົນສະພາບແວດລ້ອມ ແມ່ນບໍ່ຈຳເປັນປະເມີນ ແລະ ໂຄງການຍ່ອຍຖືກຕ້ອງຕາມມາດຕະຖານການຈັດຕັ້ງປະຕິບັດໃນວຽກງານວິສະວະກຳ ແລະ ປື້ມຄູ່ມືທາງດ້ານວິສະວະ ຈະໄດ້ນຳໃຊ້ວຽກງານສະພາບແວດລ້ອມໃຫ້ເໝາະສົມ

ຖ້າຄວາມສ່ຽງສະພາບແວດລ້ອມໄດ້ກຳນົດ, ຈະໄດ້ນຳໃຊ້ແບບຟອມປະເມີນຜົນສິ່ງແວດລ້ອມແບບງາຍດາຍ ດ້ວຍການປະເມີນຂອງທີມງານ ທລຍ ເມືອງ .ຕົວຢ່າງ: ຜົນກະທົບສະພາບແວດລ້ອມ ແລະ ວິທີການຫລຸດຜ່ອນ ແມ່ນໄດ້ຈັດເປັນແຕ່ລະປະເພດໂຄງການຍ່ອຍ ເພື່ອເປັນບ່ອນອີງໃນການດຳເດີນການປະເມີນຜົນ ແລະ ກຳນົດວິທີການຫລຸດຜ່ອນຜົນກະທົບໃຫ້ເໝາະສົມ. ຮ່າງບົດປະເມີນຜົນຈະໄດ້ຄັດຕິດ ເພື່ອປຶກສາຫາລືກັບທີມງານຂັ້ນບ້ານ ແລະ ຜູ້ໄດ້ຮັບຜົນປະໂຫຍດອື່ນໆ ເພື່ອປະສານງານ ແລະ ຊອກຫາວິທີການຫລຸດຜ່ອນຜົນກະທົບຕໍ່ໂຄງການຍ່ອຍໃນເວລາອອກແບບ. ໃນເມື່ອຮ່າງບົດປະເມີນຜົນສິ່ງແວດລ້ອມສຳເລັດແລ້ວ, ທີມງານ ທລຍ ຈະໄດ້ສົ່ງໄປຫາວິຊາການພາກລັດຂັ້ນເມືອງ ເພື່ອກວດກາ ແລະ ອະນຸມັດກ່ອນບົດສະເໜີໂຄງການຍ່ອຍຈະໄດ້ສົ່ງເຂົ້າກອງປະຊຸມອະນັດ (ຕັດສິນຂັ້ນເມືອງ).

ຂໍ້ສັງເກດ: ຂັ້ນຕອນການກັ່ນຕອງສະພາບແວດລ້ອມແບບງາຍດາຍ ໄດ້ລວມຢູ່ໃນບົດສະເໜີໂຄງການຍ່ອຍ ແລະ ໄດ້ກວດແກ້ໃນໄລຍະປັບປຸງຄູ່ມືການຈັດຕັ້ງປະຕິບັດໃນຕອນເລີ່ມຕົ້ນໂຄງການ ໃນປີ 2008. ບົນພື້ນຖານປະສົບການ ຂອງ ທລຍ ແລະ ຄວາມສ່ຽງຂອງສະພາບແວດລ້ອມສ່ວນໃຫ່ຍ ຈະບໍ່ໄດ້ພົວພັນ

ເຖິງຂະໜາດຂອງໂຄງລ່າງພື້ນຖານ ແຕ່ຈະພົວພັນເຖິງການຄັດເລືອກຈຸດທີ່ຈະກໍ່ສ້າງຫລາຍກ່ວາ. ເຖິງຢ່າງໃດກໍ່ຕາມ, ໃນເວລາທີ່ຈຳເປັນ ຈະຕ້ອງມີຂໍ້ຄວນລະວັງເປັນພິເສດ ໃນເມື່ອຂະໜາດຂອງໂຄງລ່າງພື້ນເກີນກ່ວາມາດຕະຖານ ຂອງ ທລຍ. ເຖິງຢ່າງ:ໃດກໍ່ຕາມ ຂະໜາດຂອງໂຄງລ່າງພື້ນຖານ ກໍ່ຍັງເປັນບັນທັດຖານສຳຄັນ (ຫລື ບໍ່) ແຕ່ວ່າການເຮັດປະເມີນຜົນສິ່ງແວດລ້ອມ ກໍ່ເປັນພຽງສິ່ງເລີ່ມຕົ້ນກວດກາ ແລະ ໄດ້ກ່າວໄວ້ໃນແບບຟອມບົດສະເໜີໂຄງການຍ່ອຍ ດັ່ງລຸ່ມນີ້

ຕາຕະລາງ 5 : ສະເໜີກ່ຽວກັບຄສາມປອດໄພທາງສິ່ງແວດລ້ອມ

| | ປະເພດກິດຈະກຳ | ບັນທັດຖານໃນການກັ່ນຕອງ |
|---|---|---|
| ຂະໜາດ | **ທາງຊົນນະບົດ, ທາງກຽມ ແລະ ທາງຄົນຍ່າງ (3-3.5 ມ)** | |
| | - ຍົກລະດັບທາງຊົນນະບົດ | ບໍ່ຈຳເປັນປະເມີນຜົນສິ່ງແວດລ້ອມ |
| | - ປັບປຸງທາງຄົນຍ່າງ | ບໍ່ຈຳເປັນປະເມີນຜົນສິ່ງແວດລ້ອມ |
| | **ຂົວ, ທາງລົງບັກ ແລະ ເສົາຂົວ** | |
| | - ໂຄງສ້າງຂົວ | ≥30 ມ ຕ້ອງການປະເມີນຜົນ |
| | - ຂົວອູ່ຄົນຍ່າງ/ຂົວອູ່ | ບໍ່ຈຳເປັນປະເມີນຜົນສິ່ງແວດລ້ອມ |
| | **ລະບົບນ້ຳໃຊ້** | |
| | - ນ້ຳສ້າງ | ບໍ່ຈຳເປັນເຮັດປະເມີນຜົນສິງແວດລ້ອມ |
| | - ນ້ຳບາດານ | ບໍ່ຈຳເປັນເຮັດປະເມີນຜົນສິງແວດລ້ອມ |
| | - ນ້ຳລິນ | 1000 ຄົນ, ເຮັດປະເມີນຜົນ |
| | - ນ້ຳປະປາຊຸມຊົນ | 1000 ຄົນ, ເຮັດປະເມີນຜົນ |
| | **ລະບົບຊົນລະປະທານ** | |
| | - ຝາຍນ້ຳລົ້ນ | >10 ມ, ເຮັດປະເມີນຜົນ |
| | - ຄອງລະບາຍນ້ຳ | ບໍ່ຈຳເປັນເຮັດປະເມີນຜົນສິງແວດລ້ອມ |
| | - ສ້ອມແປງຝາຍ | ບໍ່ຈຳເປັນເຮັດປະເມີນຜົນສິງແວດລ້ອມ |
| | - ພື້ນທີ່ເກັບນ້ຳ | >10 ເຮັກຕາ, ເຮັດປະເມີນຜົນ |
| | **ປະເພດອາຄານ (ສຸກສາລາ, ໂຮງຮຽນ, ຕະຫລາດ)** | |
| | - ໂຮງຮຽນ | >1000 ມ2, ເຮັດປະເມີນຜົນ |
| | - ສຸກສາລາ | >600 ມ2, ເຮັດປະເມີນຜົນ |
| | - ຫ້ອງປະຊຸມຊຸມຊົນ | >1000 ມ2, ເຮັດປະເມີນຜົນ |
| | - ຕະຫລາດ | >400 ມ2, ເຮັດປະເມີນຜົນ |
| | ສະຖານທີ່ອະນາໄມ (ຫ້ອງນ້ຳ) | >200 ຄົນ, ເຮັດປະເມີນຜົນ |
| | ເຄື່ອນໄຟຟ້າຂະໜາດນ້ອຍ | >10 ກວ, ເຮັດປະເມີນຜົນ |

### 3) *ໄລຍະຈັດຕັ້ງປະຕິບັດໂຄງການຍ່ອຍ*

ເພື່ອຫລຸດຜ່ອນຜົນກະທົບ ໃນເວລາຈັດຕັ້ງປະຕິບັດ ກໍ່ຄືການຕິດຕາມ ແລະ ກວດກາຂັ້ນຕອນຂອງການກວດກາສະພາບແວດລ້ອມ ແມ່ນໜ້າທີ່ຂອງທີມງານຈັດຕັ້ງປະຕິບັດໂຄງການຍ່ອຍລວມທັງຊຸມຊົນ. ການຝຶກອົບຮົມປູກຈິດສຳນຶກ ຈະຕ້ອງໄດ້ເຮັດ ເພື່ອຮັບປະກັນໃຫ້ຊຸມຊົນເຂົ້າໃຈເຖິງຄວາມສ່ຽງຂອງສະພາບແວດລ້ອມ ແລະ ຮັບປະກັນໃນການຫລີກລ່ຽງ ແລະ ຫລຸດຜ່ອນຄວາມສ່ຽງດັ່ງກ່າວ ແລະ ສ້າງຂີດຄວາມສາມາດໃຫ້ແກ່ຜູ້ຮັບເໝົາໃນການຕິດຕາມ ແລະ ຮັບປະກັນໃຫ້ຖືກຕ້ອງຕາມຂໍ້ຜູກມັດໃນເງື່ອນໄຂຂໍ້ຫ້າມຂອງສະພາບແວດລ້ອມ. ເຄື່ອງມືໂຄສະນາ ຈະຕ້ອງໄດ້ພັດທະນາກ່ອນຈະເລີ່ມໂຄງການຍ່ອຍ ແລະ ຝຶກອົບຮົມກ່ຽວກັບການປ້ອງກັນສະພາບແວດລ້ອມ ຝຶກໂດຍທີມງານພັດທະນາຊຸມຊົນ ຂອງ ທລຍ ໃນໄລຍະຈັດຕັ້ງປະຕິບັດໂຄງການຍ່ອຍ.

ໃນຮ່າງສັນຍາຍ່ອຍວຽກງານດັ່ງກ່າວ ຈະຕ້ອງໄດ້ດັດປັບ ແລະ ໃຫ້ມີມາດຕາສະເພາະລະອຽດ ກ່ຽວກັບຂໍ້ຜູກມັດຂອງຜູ້ຮັບເໝົາຍ່ອຍ ໃນວຽກງານປ້ອງກັນສະພາບແວດລ້ອມ. ໃນເອກະສານສັນຍາ ລະຫ່ວາງຊຸມຊົນ ກັບ ທລຍ ຈະຕ້ອງໄດ້ກຳນົດແຕ່ລະມາດຕາລະອຽດ ເພື່ອໃຫ້ເປັນຂໍ້ຜູກມັດກັບຊຸມຊົນໃນການປ້ອງກັນສະພາບແວດລ້ອມ.

ໃນໄລຍະຈັດຕັ້ງປະຕິບັດ, ທີມງານ ທລຍ ຈະຕ້ອງຕິດຕາມຜົນກະທົບສະພາບແວດລ້ອມຢ່າງເປັນປົກກະຕິ ແລະ ກວດກາການຫລຸດຜ່ອນຜົນກະທົບສະພາບແວດລ້ອມ. ໃນເມື່ອວຽກໄດ້ເຮັດເປັນສັນຍາຍ່ອຍ, ການກວດກາຄັ້ງສຸດທ້າຍ ຈະຕ້ອງໄດ້ຈັດກ່ອນການມອບຮັບໂຄງການຍ່ອຍ (ເບິ່ງພາກ 5.8 ການກວດກາຄຸນນະພາບໂຄງການຍ່ອຍໃນເວລາຢ້ຽມຢາມສະໜາມ). ທີມງານ ທລຍ ໄດ້ນຳໃຊ້ແບບຟອມສະເພາະ ເພື່ອປະເມີນຄຸນນະພາບຂອງວຽກໃນໄລຍະຢ້ຽມຢາມສະໜາມ ລວມມີລາຍການການຕິດຕາມແລະກວດກາສະພາບແວດລ້ອມ.

### 4) *ການຄຸ້ມຄອງຢາປາບສັດຕູພືດ*

ໂຄງການ ທລຍ ຈະບໍ່ໃຫ້ການສະໜັບສະໜູນໃນການຈັດຊື້ ແລະ ສົ່ງເສີມການນຳໃຊ້ສານເຄມີ ເພື່ອຂ້າແມງໄມ້ ແລະ ປຸຍເຄມີ, ທີ່ມີລາຍການລວມຢູ່ໃນລາຍການບໍ່ໃຫ້ການສະໜັບສະໜູນ, ມັນກໍ່ເປັນອັນຍາກທີ່ຈະປ້ອງກັນບໍ່ໃຫ້ຊາວນາ ນຳໃຊ້ເຄມີດັ່ງກ່າວ. ໂດຍສະເພາະແມ່ນການຟື້ນຟູໂຄງລ່າງກະສິກຳ, ກໍ່ສ້າງຊົນລະປະທານຂະໜາດນ້ອຍ/ຜົນຜະລິດກະສິກຳ, ຫລື ການຄວບຄຸມການແຜ່ຂະຫຍາຍຂອງພະຍາດລວມທັງການນຳໃຊ້ຢາຂ້າແມງໄມ້ ຫລື ການຈັດຊື້ຈຳນວນຢາປາບສັດຕູພືດ, ຢາຂ້າຫຍ້າ ແລະ ຢາຂ້າແມງໄມ້. ເພື່ອຫລຸດຜ່ອນຜົນກະທົບດັ່ງກ່າວ, ແຜນການຄອບຄຸມຢາປາບສັດຕູພືດ (PMP) ໄດ້ອອກແບບມາດຕະການຢ່າງລະອຽດ ແລະ ວິທີການ ສຳລັບຄວບຄຸມຢາປາບສັດຕູພືດ ຫລື ສານພິດຕ່າງໆ ແຕ່ຈະຕ້ອງໃຫ້ຄວາມຮູ້ ແລະ ຝຶກອົບຮົມ ກ່ຽວກັບຜົນກະທົບດ້ານສຸຂະພາບ ແລະ ຄວາມປອດໄພ ໃນການນຳໃຊ້ຢາປາບສັດຕູພືດ ແລະ ຖ້າປັນໄປໄດ້, ຈະຕ້ອງໄດ້ສົ່ງເສີມການນຳໃຊ້ຝຸ່ນທຳມະຊາດ ເຊັ່ນ: :ຟາມປອດສານເຄມີ. ທີມງານ ທລຍ ຈະໄດ້ເຮັດວຽກຮ່ວມກັບຂະແໜງກະສິກຳຢ່າງໃກ້ສິດ ເພື່ອຮັບປະກັນ

ການນຳໃຊ້ແຜນການຄວບຄຸມຢາປາບສັດຕູພືດໃນຊຸມຊົນທີ່ໄດ້ຮັບຜົນປະໂຫຍດ ຈາກການຜະລິດກະສິກຳ ແລະ ການກິນຢູ່ທີ່ພົວພັນເຖິງກິດຈະກຳທີ່ ທລຍ 2 ໃຫ້ການສະໜັບສະໜູນ.

5) ***ການຄວບຄຸມລູກລະເບີກທີ່ບໍ່ທັນແຕກທີ່ມີຄວາມສ່ຽງ***

ໃນເມື່ອບົດສະເໜີໂຄງການຍ່ອຍ ຖືກສະເໜີໂດຍຊຸມຊົນ ດ້ວຍການຊ່ວຍເຫຼືອຂອງທີມງານ ທລຍ, ຊຸມຊົນຈະໄດ້ສອບຖາມກ່ຽວກັບລູກລະເບີດທີ່ບໍ່ທັນແຕກໃນສະຖານທີ່ຈະກໍ່ສ້າງໂຄງການຍ່ອຍ ຫລື ບໍລິເວນໄກ້ຄຽງ. ບົດລາຍງານການເກັບກູ້ລະເບີດ ຈະໄດ້ຕິດໃສ່ບົດສະເໜີໂຄງການຍ່ອຍ (SPPF) ແລະ ຈະໄດ້ກວດກາໃສ່ກັບແຜນອົງການເກັບກູ້ລະເບີດລາວຢູ່ຂັ້ນເມືອງ. ນອກນັ້ນ ທີມງານຂອງອົງການເກັບກູ້ລະເບີດລາວຂັ້ນເມືອງ ຈະເຂົ້າຮ່ວມໃນກອງປະຊຸມທົບທວນຄືນ ແລະ ມີຄວາມເຫັນໃຫ້ກັບໂຄງການຍ່ອຍທີ່ມີຄວາມສ່ຽງຈາກລູກລະເບີດທີ່ບໍ່ທັນແຕກ.

ທີມງານ ທລຍ ຂັ້ນເມືອງ ຕ້ອງໄດ້ສົ່ງລາຍການໂຄງການ ເພື່ອຈັດຕັ້ງປະຕິບັດ ໃນ 4 ປີ ໃຫ້ອົງການເກັບກູ້ລະເບີດລາວ ເຂົ້າໃນແຜນ ເພື່ອສຳຫລວດ ແລະ ເກັບກູ້ລູກລະເບີດ, ໃນປີຕໍ່ໄປ ຖ້າມີການປ່ຽນແປງຈຸດທີ່ຕັ້ງໂຄງການ ທີມງານ ທລຍ ຈະຕ້ອງໄດ້ແຈ້ງ ແລະ ລາຍງານໃຫ້ອົງການເກັບກູ້ລູກເບີດທຸກໆຂັ້ນເມືອງ, ແຂວງ, ຂັ້ນສູນກາງຮັບຊາບ

ຖ້າມີຄວາມສ່ຽງສູງ ແລະ ຖ້າພື້ນທີ່ຍັງບໍ່ທັນມີການສຳຫລວດ ຫລື ເກັບກູ້ຜ່ານມາໂດຍອົງການເກັບກູ້ລະເບີດລາວ, ທີມງານ ທລຍ ຈະໄດ້ແຕ່ງໜັງສືຫາອົງການເກັບກູ້ລະເບີດ ພ້ອມດ້ວຍລາຍການໂຄງການຍ່ອຍທີ່ຕ້ອງການເກັບກູ້ກ່ອນໄລຍະການຈັດຕັ້ງປະຕິບັດ ທັງຂັ້ນເມືອງ ແລະ ຂັ້ນແຂວງ ເພື່ອໃຫ້ພື້ນທີ່ດັ່ງກ່າວ ເຂົ້າໃນແຜນຂອງອົງການເກັບກູ້ລະເບີດລາວ.

ຖ້າຄວາມສ່ຽງໄດ້ກຳນົດໄວ້ໃນໄລຍະການອອກແບບ, ທີມງານ ທລຍ ຈະບໍ່ໂອນງົບປະມານໃຫ້ທີມງານກຸ່ມບ້ານ/ບ້ານເວັ້ນ ເສຍແຕ່ວ່າໄດ້ມີການເກັບກູ້ແລ້ວ ຫລື ໄດ້ອອກໃບຢັ້ງຢືນໂດຍອົງການເກັບກູ້ລະເບີດລາວ ຕິດຄັດໃສ່ໃບສະເໜີຂໍເບີກຈ່າຍ.

### 11.4 ກອບນະໂຍບາຍ ກ່ຽວກັບການທົດແທນຄືນ ແລະ ການຍົກຍ້າຍຖິ່ນຖານ (CRPF)

ກອບນະໂຍບາຍກ່ຽວກັບການທົດແທນຄືນ ແລະ ການຍົກຍ້າຍຖິ່ນຖານ ມີຈຸດປະສົງເພື່ອໃຫ້ພະນະງານຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ, ທີມງານ ທລຍ, ທີ່ປຶກສາ, ຫ້ອງການບ້ານ ແລະ ພາກລັດ, ເອກະຊົນ, ຊຸມຊົນຜູ້ທີ່ໄດ້ຮັບຜົນປະໂຫຍດມີຄູ່ມືນຳໃຊ້ໃຫ້ພຽງພໍ ເພື່ອແກ້ໄຂບັນຫາທີ່ມີຜົນກະທົບຈາກສັງຄົມທີ່ພົວພັນກັບຄູ່ມືຈັດຕັ້ງປະຕິບັດ 4.12 ການຍົກຍ້າຍຈັດສັນແບບບໍ່ສະມັກໃຈທີ່ນຳໃຊ້ເຂົ້າໃນໂຄງການ ທລຍ. ຂັ້ນຕອນຈະໄດ້ຖືກນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດ ແລະ ເປັນພາກສ່ວນນຶ່ງຂອງຮອບວຽນໂຄງການຍ່ອຍ ແລະ ກິດຈະກຳ ຈະເຮັດແບບປະສົມປະສານກັນເຂົ້າໃນການຄັດເລືອກໂຄງການ, ອະນຸມັດ, ຈັດຕັ້ງປະຕິບັດ, ຕິດຕາມ ແລະ ປະເມີນຜົນ. ກອບນະໂຍບາຍກ່ຽວກັບການທົດແທນຄືນ

ແລະ ການຍົກຍ້າຍຖິ່ນຖານ (CRPF) ຖືກພັດທະນາຂຶ້ນບົນພື້ນຖານຄູ່ມືແນະນຳ ແລະ ປະສົບການຈາກການຈັດຕັ້ງປະຕິບັດ ຂອງ ທລຍ 1 ແລະ ກອບກິດຈະກຳທີ່ຈະໄດ້ເຮັດພາຍໃຕ້ ທລຍ 2. ກອບນະໂຍບາຍກ່ຽວກັບການທົດແທນຄືນ ແລະ ການຍົກຍ້າຍຖິ່ນຖານ (CRPF) ໄດ້ປະຕິບັດຕາມດຳລັດເລກທີ 192 ຂອງລັດຖະບານລາວ ເພື່ອທົດແທນ ແລະ ຍົກຍ້າຍຈັດສັນປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກການພັດທະນາໂຄງການ (2005). ວຽກດັ່ງກ່າວ ມັນຍັງພົວພັນເຖິງກອບນະໂຍບາຍຊົນຊາດຊົນເຜົ່າຕ່າງໆ (EGPF) ແລະ ກອບການຄຸ້ມຄອງດ້ານສັງຄົມ ແລະ ສິ່ງແວດລ້ອມ (ESMF). ທີມງານ ທລຍ ຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ຕ້ອງໄດ້ຮັບຜິດຊອບໂດຍກົງ ໂດຍຜ່ານພະແນກພັດທະນາຊຸມຊົນໃນການຈັດຕັ້ງປະຕິບັດກອບນະໂຍບາຍ ກ່ຽວກັບການທົດແທນຄືນ ແລະ ການຍົກຍ້າຍຖິ່ນຖານ (CRPF) ແລະ ຮັບປະກັນໃນຄວາມຖືກຕ້ອງ, ລວມທັງເກັບຮັກສາເອກະສານໄວ້ເປັນຢ່າງດີ ເພື່ອໃຫ້ທີມງານທະນາຄານກວດກາ

## 11.5 ກອບການຍົກຍ້າຍຖິ່ນຖານ ແລະ ຈັດຫາທີ່ດິນ ຫລື ສັບສິນ (FRALA)

ກອບການຍົກຍ້າຍຖິ່ນຖານ ແລະ ຈັດຫາທີ່ດິນ ຫລື ສັບສິນ (FRALA) ເປັນວຽກທີ່ສຳຄັນ ຂອງອົງປະກອບ ຂອງກອບນະໂຍບາຍກ່ຽວກັບການທົດແທນຄືນ ແລະ ການຍົກຍ້າຍຖິ່ນຖານ (CRPF) ມີຫລັກການດັ່ງຕໍ່ໄປນີ້ :

a) **ຫລັກການແນະນຳສຳລັບການຍົກຍ້າຍຖິ່ນຖານແບບບໍ່ສະມັກໃຈ.**

a. ການທົດແທນທີ່ດິນ ແລະ ຊັບສິນອື່ນໆ ຄວນຈະຫລີກລ້ຽງ ຖ້າເປັນໄປໄດ້ ຫລື ຫລຸດຜ່ອນຜ່ອນກະທົບໃຫ້ໜ້ອຍເທົ່າທີ່ເຮັດໄດ້;
b. ຖ້າມີບຸກຄົນໃດໄດ້ຮັບຜົນກະທົບໂດຍກົງ, ວິທີການຫລຸດຜ່ອນຜົນກະທົບ ຈະຕ້ອງໄດ້ແນະນຳໃຫ້ພວກເຂົາ ໄດ້ມີໂອກາດພັດທະນາຢ່າງພຽງພໍ, ຫລື ຢ່າງໜ້ອຍທີ່ສຸດ ຕ້ອງໄດ້ຮັບການທົດແທນຄືນໃນດ້ານລາຍຮັບ ແລະ ມາດຕະຖານການດຳລົງຊີວິດທີ່ດີ;
c. ມີການສູນເສຍຊັບສິນ ຈະຕ້ອງໄດ້ທົດແທນຄືນ ດ້ວຍວັດຖຸ ຫລື ເງິນ, ຫລື ທົດແທນດ້ວຍມູນຄ່າທີ່ເສຍຫາຍ;
d. ການທົດແທນຄືນ ຈະຕ້ອງຈ່າຍໃຫ້ເຕັມ, ການເສຍພາສີ ຫລື ອື່ນໆ ຈະຕ້ອງໄດ້ຫັກອອກ;
e. ຖ້າບຸກຄົນໃດ ຕ້ອງການຍາກຍົກຍ້າຍ, ຈະຕ້ອງຈ່າຍຄ່າຂົນສົ່ງ ແລະ ແຮງງານ ພ້ອມທັງມູນຄ່າປຸກສ້າງອາຄານ ຫລື ຊັບສິນອື່ນໆ.;
f. ທີ່ດິນ ຫລື ຊັບສິນຕ່າງໆ ທີ່ຖືກຜົນກະທົບ ໂດຍບໍ່ມີໃບຍັ້ງຢືນ ຈະບໍ່ໃຫ້ເປັນບັນຫາໃນການທົດແທນຄືນ ຫລື ຄວນມີຮູບການຊ່ວຍເຫລືອແບບອື່ນໆທີ່ເໝາະສົມ;
g. ຜູ້ໄດ້ຮັບຜົນກະທົບ ຈະຕ້ອງໃຫ້ຂໍ້ມູນຂ່າວສານກ່ຽວຜົນກະທົບທີ່ພວກເຂົ້າໄດ້ພົບ, ຈະຕ້ອງໄດ້ປຶກສາຫາລື ແລະ ເປັນບ່ອນອີງໃນເວລາຈັດຕັ້ງປະຕິບັດ, ຈະຕ້ອງໄດ້ແຈ້ງ ກ່ຽວກັບວິທີການ ແລະ ຂັ້ນຕອນຕາມຄວາມພໍໃຈ.

ໃນໂຄງການນີ້ ຈະບໍ່ໃຫ້ມີການຍົກຍາຍແບບບໍ່ສະມັກໃຈ ຫລື ການຈັດຫາທີ່ດິນແບບບໍ່ສະມັກໃຈ, ສະນັ້ນ ຈະບໍ່ມີວິທີການ ເພື່ອແກ້ໄຂບັນຫາທີ່ໄດ້ກໍານົດໃນປື້ມຄູ່ມືນີ້. ເພາະສະນັ້ນ ກອບວຽກດັ່ງກ່າວ ໄດ້ກໍານົດ ເນື້ອໃນ ແລະ ໃຫ້ຄໍາແນະນໍາສໍາລັບຜູ້ສະມັກໃຈປະກອບສ່ວນທີ່ດິນ ຫລື ຊັບສິນອື່ນໆ (ລວມມີກົດລະ ບຽບໃນການນໍາໃຊ້ຊັບສິນ) ທີ່ເປັນສາຍເຫດຈາກການຈັດຕັ້ງປະຕິບັດໂຄງການຍ່ອຍ ດ້ວຍການ ປະກອບສ່ວນລ້າ ຫລື ດ້ວຍການທົດແທນຄືນໂດຍຊຸມຊົນ ແລະ ສ້າງລະບຽບຫລັກການ, ວິທີການເພື່ອ ຮັບປະກັນໃຫ້ມີຄວາມສະເໜີພາບໃ ນການຟື້ນຟູຄືນໃຫ້ຜູ້ທີ່ໄດ້ຮັບຜົນກະທົບຈາກການຈັດຕັ້ງປະຕິບັດ ໂຄງການຍ່ອຍ .ກອບວຽກດັ່ງກ່າວ ແມ່ນໄດ້ອີງໃສ່ກິດຈະກໍາ ຂອງ ທລຍ ເທົ່ານັ້ນ.

b) **ວິທີການສໍາລັບການປະກອບສ່ວນແບບສະມັກໃຈແລະການປະກອບສ່ວນທີ່ມີການທົດແທນຄື**

ວິທີການດັ່ງຕໍ່ໄປນີ້ ແມ່ນວິທີການ ສໍາລັບການປະກອບສ່ວນແບບສະມັກໃຈ ແລະ ການປະກອບສ່ວນທີ່ມີ ການທົດແທນຄືນ,

**ວິທີການ ແລະ ຫລັກການທົດແທນຄືນ**

- ໃນການຈັດຕັ້ງປະຕິບັດໂຄງການຍ່ອຍບາງຄັ້ງ ມີການຈັດຫາທີ່ດິນ ຫລື ຍົກຍ້າຍຖິ່ນຖານອາດຈະ ເກີດຂື້ນ, ແຕ່ເປັນພຽງແຕ່ແບບສະມັກໃຈ ຫລື ການທົດແທນຄືນ (ບາງຄັ້ງກໍ່ເປັນປະເພດອື່ນໆ) ທີ່ຊຸມຊົນຈັດຫາໃຫ້;
- ການສະເໜີໂຄງການ ບາງຄັ້ງມັນຕ້ອງການທູບມ້າງເຮືອນຢູ່ອາໃສ, ຕ້ອງການດິນຜະລິດກະສິກໍາ ເປັນແບບຖາວອນ ຫລື ແບບຊົ່ວຄາວ ຈະຕ້ອງໄດ້ເອົາໃຈໃສ່ທົບທວນຄືນເປັນພິເສດ ດ້ວຍຜູ້ ປະສານງານເມືອງ ແລະ ອະນຸມັດຈາກຫ້ອງການ ທລຍ ແຂວງ. ຂັ້ນຕອນການທົບທວນຄືນ ຕ້ອງໄດ້ຢັ້ງຢືນວ່າ ແຕ່ລະຝ່າຍຕ້ອງມີຄວາມພໍໃຈກັບທາງເລືອກ, ຜູ້ໄດ້ຮັບຜົນກະທົບຈະໄດ້ຮັບຂໍ້ ມູນຂ່າວສານ ກ່ຽວກັບສິດທິໃນການທົດແທນຄືນ ແລະ ຮັບປະກັນວ່າ ພວກເຂົາເຫັນດີຕົກລົງກັບ ການທົບທວນດັ່ງກ່າວ;
- ບົດບັນທຶກກ່ຽວກັບການຍົກຍ້າຍ ຫລື ການທົດແທນທີ່ດິນ ທີ່ຖືກກະທົບຈະຕ້ອງໄດ້ປະກອບໃສ່ ບົດສະເໜີໂຄງການຍ່ອຍໄວ້;
- ໂຄງການຍ່ອຍທີ່ມີຜູ້ໄດ້ຮັບຜົນກະທົບ ຫລາຍກ່ວາ 100 ຄົນ, ໃນນັ້ນຫລາຍກ່ວາ 10% ຂອງ ຫລັງຄາເຮືອນທີ່ຖືກກະທົບ, ຫລື ໂຄງການຍ່ອຍ ທີ່ມີຜົນກະທົບ ຫລາຍກ່ວາ 5 ຫລັງຄາເຮືອນ ຫລື ໂຄງສ້າງເຮືອນ ຈະຖືກຍົກຍ້າຍ ຫລື ຕ້ອງການຍົກຍ້າຍອອກ ຕ້ອງໄດ້ຂຽນບົດລາຍງານ ກ່ຽວກັບການຈັດຫາທີ່ດິນ ແລະ ການຍົກຍ້າຍຈັດສັນໃໝ່ ເພື່ອໃຫ້ ທລຍ ສູນກາງ ທົບທວນຄືນ ແລະ ອະນຸມັດ.

ມັນກໍ່ເປັນໄປໃນແຕ່ລະກໍລະນີ້ ທີ່ຈະບໍ່ຕ້ອງການທີ່ດິນ ຫລື ການທົດແທນຄືນ, ຄູ່ມືໄດ້ມີການແນະນໍາວິທີການນໍາໃຊ້ທີ່ດິນ ຫລື ຊັບສິນ ໃຫ້ຖືກຕ້ອງ ໂດຍຜ່ານ 2 ວິທີການຕໍ່ໄປນີ້:

***ການປະກອບສ່ວນແບບສະມັກໃຈ***: ສໍາມະຊິກໃນຊຸມຊົນມີສິດໃນການປະກອບສ່ວນທີ່ດິນ ຫລື ຊັບສິນຂອງພວກເຂົາ, ຫລື ຍົກຍ້າຍບ້ານແບບຊົ່ວຄາວ ຫລື ແບບຖາວອນ, ໂດຍບໍ່ມີການຈ່າຍທົດແທນ. ທັງນີ້ກໍ່ສາມາດເກີດຂື້ນເລື້ອຍ ໃນການປັບດັດລາຄາ ເນື່ອງຈາກວ່າ ມູນຄ່າຂອງໂຄງການຍ່ອຍຈະສູງຂື້ນຫລືຕໍ່າລົງ ມັນກໍ່ຂື້ນກັບມູນຄ່າຊັບສິນທີ່ມີ ແລະ ຄວາມເສຍຫາຍ ເປັນຜົນກະທົບໂດຍກົງໃຫ້ແກ້ຊຸມຊົນ. ການປະກອບສ່ວນລ້າ ແມ່ນການກະທໍາທີ່ເປັນເອກະພາບກັນໃນຊຸມຊົນ. ຫົວໜ້າທີມງານຂັ້ນເມືອງ ຕ້ອງຮັບປະກັນວ່າ ການປະກອບສ່ວນລ້າ ແມ່ນແນວຄິດລິ້ເລີ່ມຂອງຊຸມຊົນ ແຕ່ບາງຄັ້ງກໍ່ມີທາງເລືອກອື່ນໆທີ່ເໝາະສົມກ່ວາ ແລະ ການຮັບຮອງເອົານັ້ນ ບໍ່ໃຫ້ເປັນການບັງຄັບ ຫລື ນາບຄູ່ໃຫ້ຊຸມຊົນຮັບຮອງເອົາ. ການສະເໜີເພື່ອປະກອບສ່ວນລ້າ ຈະບໍ່ຈໍາເປັນຕ້ອງມີການຂໍອະນຸມັດ ໃນເມື່ອພວກເຂົ້າມີຄວາມຫຍຸງຍາກກັບລາຍຮັບ ຫລື ມາດຕະການດໍາລົງຊີວິດຂອງແຕ່ເຮືອນ ຫລື ຜູ້ຊົມໃຊ້ (ຈໍານວນການປະກອບສ່ວນລ້າບົນພື້ນຖານແລ້ວຈະບໍ່ໃຫ້ເກີນ 5% ຂອງລາຍໄດ້ແຕ່ລະຄົນ),

***ການປະກອບສ່ວນແບບບໍ່ມີການທົດແທນຄືນ***: ບຸກຄົນໃດທີ່ໄດ້ປະກອບສ່ວນທີ່ດິນ ຫລື ຊັບສິນອື່ນໆ ມີສິດຈະໄດ້ຮັບການທົດແທນຄືນ (ງົບປະມານສໍາລັບໂຄງການຍ່ອຍ ຈະບໍ່ອະນຸຍາດເອົາໄປຈ່າຍຄ່າທົດແທນຄືນ). ຫົວໜ້າທີມງານຂັ້ນເມືອງ ຕ້ອງຮັບປະກັນວ່າໃນຫົວຂໍ້ການທົດແທນຄືນ ຕໍ່ໄປນີ້ແມ່ນໄດ້ຕົກລົງ ແລະ ເຫັນດີກ່ອນມີການກໍ່ສ້າງ:

a) ທົດແທນທີ່ດິນຄືນ ທີ່ມີຜົນຜະລິດເທົ່າທຽມກັນ ຫລື ຊັບສິນທີ່ມີການຜະລິດເທົ່າກັນ;
a. ໃຫ້ວັດສະດຸກໍ່ສ້າງ ແລະ ຊ່ວຍໃນການກໍ່ສ້າງຄືນ ໃນສິ່ງທີ່ທັບມ້າງອອກ;
b. ທົດແທນຜົນຜະລິດທີ່ເສຍຫາຍ ໃນລາຄາທ້ອງຕະຫລາດ;
c. ແລະ ໃນເງື່ອນໄຂອື່ນໆ ທີ່ຮັບຮອງເອົາໄດ້ ຈະເປັນວັດຖຸ ຫລື ເງິນສົດ ເພື່ອເປັນການທົດແທນຄືນ.

### 11.6 ຫລັກການໃນການປຶກສາຫາລື.

ບ້ານຕ້ອງຮັບປະກັນໃຫ້ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການຍ່ອຍ ຕ້ອງມີການປະຊຸມປຶກສາຫາລືໃນທີ່ສາທາລະນະ ພາຍໃນບ້ານ. ໄລຍະກອງປະຊຸມປຶກສາຫາລື ຈະຕ້ອງໄດ້ຈັດຂື້ນໃນເວລາສໍາຫລວດອອກແບບໂຄງການຍ່ອຍ, ສິດທິໃນການຮັບຄ່າທົດແທນຄືນ ຈະຕ້ອງໄດ້ອະທິບາຍ, ແລະ ທາງເລືອກອື່ນໆທີມີໃນຄໍາແນນໍາ. ບົດບັນທຶກກອງປະຊຸມ (ຈະຕ້ອງໄດ້ປະກອບຈໍານວນການປະກອບສ່ວນ ແລະການທົດແທນຄືນໃສ່ໃນແບບຟອມ) ແລະ ຈະລວມມີຫົວຂໍ້ສໍາຄັນຕ່າງໆ ໃນເວລາປຶກສາຫາລື ລວມທັງການຕັດສິນບັນຫາຕ່າງໆ:

a) ສໍາລັບການປະກອບສ່ວນແບບສະມັກໃຈ, ຈະປະກອບມີຊື່ຂອງຜູ້ທີ່ຖືກກະທົບ ແລະ ລາຍລະອຽດຂອງການປະກອບສ່ວນ;

b) ສຳລັບການການປະກອບສ່ວນທີ່ມີການທົດແທນຄືນ, ຊື່ຂອງຜູ້ທີ່ໄດ້ຮັບການທົດແທນຄືນ, ແລະ ລາຍລະອຽດຂອງປະເພດ ແລະ ຈຳນວນການທົດແທນຄືນ;
c) ນອກນັ້ນ, ຈະຕ້ອງປະກອບມີບົດບັນທຶກທີ່ມີລາຍເຊັນຂອງຜູ້ໄດ້ຮັບຜົນກະທົບ ແລະ ກາຈຳ ຂອງນາຍບ້ານ ຈະມີບົດບັນທຶກຂອງການຮ້ອງທຸກຂອງຜູ້ທີ່ຖືກກະທົບ ແລະ ມີແຜນທີ່ສະແດງໃຫ້ເຫັນຈຸດທີ່ຕັ້ງຂອງພື້ນທີ່ ແລະ ຊັບສິນທີ່ຖືກກະທົບ.

ຜູ້ປະສານກຸ່ມບ້ານ ຈະໄດ້ສຳເນົາເອກະສານທີ່ກ່າວມາຂ້າງເທິງນັ້ນ ສົ່ງໃຫ້ຜູ້ທີ່ມີຜົນກະທົບຈາກການກໍ່ສ້າງໂຄງການຍ່ອຍ, ຕ້ອງໄດ້ຄຳນຶງເຖິງຄວາມປາດທະໜາ ແລະ ຄວາມຕ້ອງການຂອງຊຸມຊົນ ທີ່ຈະໄດ້ຮັບການທົດແທນຄືນ, ຂໍ້ຕົກລົງຄວາມເຂົ້າໃຈທັງສອງຝ່າຍທີ່ໄດ້ຕົກລົງກັນ ແລະ ການຟ້ອງຮ້ອງຂອງຊຸມຊົນ (ຖ້າມີ).

ຂັ້ນຕອນຂອງການຕົກລົງເຫັນດີໃນການທົດແທນຄືນ ແມ່ນຄວາມຮັບຜິດຊອບຂອງບ້ານ, ໃນກຸ່ມບ້ານ ທີ່ມີຜູ້ປະສານງານບໍ່ມີອຳນາດໃນການຕັດສິນໃຈ, ຜູ້ປະສານງານກຸ່ມບ້ານ ຈະຕ້ອງໄດ້ເຮັດຕາມຂັ້ນຕອນ ດັ່ງລຸ່ມນີ້:

- ລາວຈະຕ້ອງໄດ້ສະລຸບການອະນຸມັດຂອງລາວ ເພື່ອຮັບປະກັນວ່າ ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການຍ່ອຍ ມີຄວາມພໍໃຈກັບການທົດແທນຄືນທີ່ພວກເຂົ້າໄດ້ຮັບ, ເຖິງແມ່ນວ່າ ມາດຕານີ້ຈະມີການຄັດກັນ, ການດັດແກ້ແບບ ຫລື ຈະແກ່ຍາວໃນການເຈລະຈາກໍ່ຕາມ. ຫ້າມບໍ່ໃຫ້ບຸກຄົນພາຍນອກເຂົ້າໄປແຊກແຊງ ແລະ ສະເໜີການແກ້ໄຂບັນຫາດັ່ງກ່າວ;
- ລາວຈະຕ້ອງໄດ້ຢຸດການຈັດຕັ້ງປະຕິບັດໄປຈົນກ່ວາການທົດແທນຄືນສຳເລັດ.ການຈັດຕັ້ງປະຕິບັດໂຄງການຍ່ອຍ ຈະຢູ່ໃນເວລາໃດກໍ່ຕາມ, ຊ່ຽວຊານ, ພະນັກງານລັດ ແລະ ຜູ້ໃຫ້ທຶນ ຈະຕ້ອງໄດ້ຮັບປະກັນການທົດແທນຄືນຈະຕ້ອງໄດ້ເຮັດສຳເລັດ.

## 11.7 ການກະກຽມເຮັດບົດລາຍງານ ກ່ຽວກັບການຈັດຫາທີ່ດິນ ແລະ ການຍົກຍ້າຍຈັດສັນ

ສຳລັບກິດຈະກຳ ຫລື ງົບປະມານໂຄງການຍ່ອຍ ທີ່ມີການຈັດສັນທີ່ດິນ (ມີຜົນກະທົບ ຫລາຍກ່ວາ 100 ຄົນ ຫລື ຫລາຍກ່ວາ 10% ຂອງຜູ້ໄດ້ຮັບຜົນກະທົບຈາກໂຄງການ) ແລະ ກິດຈະກຳເລົ່ານັ້ນ ມັນຕ້ອງການໃຫ້ມີການຍົກຍ້າຍແບບສະມັກໃຈ ຫລື ມີການຍົກຍາຍເຮືອນ ຫລື ທຸລະກິດ ແມ່ນຕ້ອງການໃຫ້ມີການລາຍງານແບບສັ້ນໆ[15]. ໂຄງສ້າງ ແລະ ອົງປະກອບຂອງບົດລາຍງານ ແມ່ນໄດ້ກຳນົດໄວ້ໃນກອບນະໂຍບາຍໃນການທົດແທນຄືນ ແລະ ການຍົກຍ້າຍຖິ່ນຖານ (CRPF).

ພະນັກງານ ທລຍ ຈະໄດ້ຊ່ວຍຊາວບ້ານ ໃນການກະກຽມບົດລາຍງານ, ເຊິ່ງຈະໄດ້ທົບທວນໂດຍພະນັກງານ ທລຍ ສູນກາງ. ຈະບໍ່ໃຫ້ມີກິດຈະກຳໄດ້ທີ່ຕ້ອງການທີ່ດິນ ຫລື ການລາຍງານການຍົກຍ້າຍ

---

[15] ຄຳຫຍໍ້ການລາຍງານການຈັດຫາທີ່ດິນ / ການຍົກຍ້າຍຈັດສັນ ແມ່ນຄຳສັບທີ່ໃຊ້ໃນ ສປປລາວ, ແຕ່ມີຄວາມໝາຍຄືກັນ, ໃນເນື້ອ ແລະ ປະເພດຄຳຫຍໍ້ຂອງແຜນການປະຕິບັດການຍົກຍ້າຍຈັດສັນດັ່ງທີ່ໄດ້ກຳນົດໃນນະໂຍບາຍການຈັດຕັ້ງປະຕິບັດ ຂອງທະນາຄານ 4.12

ຈັດສັນໄດ້ອະນຸມັດ ເວັ້ນເສຍແຕ່ວ່າ ບົດລາຍງານໄດ້ຮັບອະນຸມັດຈາກຄະນະກຳມະການຂັ້ນແຂວງ ແລະ ທະນາຄານໂລກ. ດັ່ງນັ້ນ ກິດຈະກຳມັນຕ້ອງການໃຫ້ມີການທັບມ້າງເຮືອນ ຫລື ຕ້ອງການທີ່ດິນ ເພື່ອທຳການຜະລິດ, ເຮືອນຢູ່ຊົ່ວຄາວ ຫລື ຖາວອນ ຈະໄດ້ທົບທວນຄືນຢ່າງລະມັດລະວັງ ໂດຍພະນັກງານ ທລຍ. ຂັ້ນຕອນການທົບທວນຄືນ ຈະຢັ້ງຢືນຄືນ ມີທາງເລືອກອື່ນອີກບໍ່, ຜູ້ໄດ້ຮັບຜົນປະໂຫຍກ ຈະໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບສິດໃນການທົດແທນຄືນ ແລະ ຮັບປະກັນວ່າພວກເຂົ້າໄດ້ຮັບຕາມການຕົກລົງ.

### 11.8 ສິດທິໃນການສະເໜີຄຳຄິດເຫັນ ແລະ ປະຕິບັດຕາມຂັ້ນຕອນກົດໝາຍ

ທຸກການສະເໜີ ຫລື ຟ້ອງຮອ້ງ ຕ້ອງໄດ້ເຮັດ ຫລື ແກ້ບັນຫາຢູ່ຂັ້ນບ້ານ ຖ້າເປັນໄປໄດ້. ຖ້າບັນຫາບໍ່ສາມາດແກ້ໄຂໄດ້ໃນຂັ້ນບ້ານ, ການຟ້ອງຮອງ ແລະ ການປະຕິບັດກົດໝາຍ ແມ່ນໃຫ້ເຮັດຕາມຄູ່ມືແນະນຳ, ຂໍ້ຕົກລົງການຈັດຕັ້ງປະຕິບັດ ຈະໄດ້ລະບຸໃສ່ບົດບັນທຶກ, ຫລື ຄວາມບໍ່ພໍໃຈຕ່າງໆ ສາມາດຂຽນລົງໃນແບບຟອມຕາມວິທີການທີ່ໄດ້ກຳນົດໃນຂໍ້ 12 ຂອງປື້ມຄູ່ມືຈັດຕັ້ງປະຕິບັດລະອຽດ ກ່ຽວກັບກົນໄກແກ້ໄຂຂໍ້ຂັດແຍ່ງ.

### 11.9 ລະບຽບການກວດສອບ

ທີມງານ ທລຍ ຈະເກັບຮັກສາທຸກແບບຟອມໃນຂັ້ນເມືອງ. ທຸກເວລາ, ທຸກເອກະສານທີ່ເກັບໄວ້ ຈະຕ້ອງປະກອບມີການທົດແທນຄືນ, ບົດບັນທຶກ ແລະ ເອກະສານຢັ້ງຢືນການຮັບການທົດແທນຄືນ ຈະຕ້ອງໄດ້ເກັບໄວ້ ເພື່ອການກວດກາ ໂດຍຜູ້ປະສານງານເມືອງ, ທີ່ປຶກສາຂັ້ນແຂວງ, ຜູ້ກວດກາ, ແລະ ຜູ້ຖືກແຕ່ງຕັ້ງໃນການຕິດຕາມໂຄງການຍ່ອຍ ໂດຍຜູ້ບໍລິຫານໂຄງການຍ່ອຍ. ບົດບັນທຶກກອງປະຊຸມຂັ້ນບ້ານ ແລະ ຫລັກຖານໃນການທົດແທນຄືນຕ້ອງໄດ້ເຮັດ ແລະ ສົ່ງໃຫ້ປະສານງານກຸ່ມບ້ານ ເພື່ອຊ່ວຍບ້ານ, ສົ່ງໃຫ້ວິສະວະກອນຄຸມງານປະຈຳສະໜາມ, ສົ່ງໃຫ້ຜູ້ກວດກາ ແລະ ຜູ້ຕິດຕາມທາງດ້ານເສດຖະກິດ ແລະ ສັງຄົມເພື່ອເປັນບ່ອນອີງໃນເວລາກວດກາໂຄງການຍ່ອຍ.

### 11.10 ການກັ່ນຕອງທາງດ້ານສັງຄົມ

ຕ້ອງຮັບປະກັນວ່າ ຜົນກະທົບທີ່ຮ້າຍແຮງ ສາມາດຫລີກລ້ຽງ, ສາມາດຫລຸດຜ່ອນ ແລະ ສາມາດກຳນົດໄດ້ ໃນໄລຍະວາງແຜນ ໂດຍມີການປຶກສາຫາລືກັບຊຸມຊົນຢ່າງໄກ້ສິດກັບທຸກໆໂຄງການຍ່ອຍ. ທຸກກິດຈະກຳ ແລະ ທຸກໂຄງການຍ່ອຍທີ່ກ່ຽວຂ້ອງກັບການຈັດຫາທີ່ດິນ, ການທົດແທນຄືນ, ການບໍລິຈາກແບບສະມັກໃຈ ແລະ ຫ້າມບໍ່ໃຫ້ເຂົ້າເຖິງຊັບພະຍາກອນທຳມະຊາດ ແມ່ນຕ້ອງການການກັ່ນຕອງທາງສັງຄົມ ໂດຍການນຳໃຊ້ແບບຟອມການກັ່ນຕອງທີ່ໄດ້ກຳນົດໄວ້ໃນ (ເອກະສານເພີ່ມເຕີມ 8). ຂໍ້ມູນຕ່າງໆຈະໄດ້ສັງລວມໃສ່ແບບຟອມຕາຕະລາງກ່ຽວກັບພື້ນດິນທີ່ຖືກກະທົບ ແລະ ໂຄງລ່າງພື້ນຖານ (ເອກະສານເພີ່ມເຕີມ 8). ເອກະສານຈະຕ້ອງໄດ້ເກັບຮັກສາໄວ້ຢູ່ຂັ້ນເມືອງ ແລະ ຂັ້ນສູນກາງ ເພື່ອໃຫ້ທີມງານທະນາຄານໂລກກວດກາ.

## 11.11 ການທົດແທນຄືນ ແລະ ການກຳນົດປະເພດຜົນກະທົບ

*ການທົດແທນຄືນທີ່ເໝາະສົມ*: ທຸກໂຄງການທີ່ມີຜົນກະທົບກັບຜູ້ຊົມ ໃຫ້ນຳໃຊ້ຮູບແບບ (PAPs) ຜູ້ໄດ້ທີ່ໄດ້ກຳນົດລາຍຊື່ເຂົ້າໃນໂຄງການຍ່ອຍທີ່ມີຜົນກະທົບໃສ່ພື້ນທີ່ ຈະໄດ້ມີການທົດແທນຄືນ ສຳລັບຊັບສິນທີ່ຖືກກະທົບ, ແລະ ຈະໄດ້ມີການຟື້ນຟູຄືນ ຫລື ບົວລະບັດຄືນ ໃຫ້ໄດ້ມາດຕະຖານເກົ່າ ໃນການດຳລົງຊີວິດຂອງປະຊາຊົນໃຫ້ມີລາຍຮັບ ແລະ ຜົນຜະລິດທີ່ດີຂື້ນ.

*ການກຳນົດປະເພດຜົນກະທົບ*: ການກຳນົດປະເພດຜົນກະທົບ ແມ່ນຂື້ນກັບປະເພດຂອງຜູ້ທີ່ກະທົບ (PAPs), ແລະ ການກຳນົດຂອງພວກເຂົາ, ທລຍ 2 ຈະຊ່ວຍຊຸມຊົນໃນການກະກຽມມາດຖານການກຳນົດປະເພດຜົນກະທົບ ແມ່ນອີງຕາມຕາຕະລາງການຕັ້ງຊື່ໃນ (ພາກເພີ່ມເຕີມ 8) ຕາມຄວາມເໝາະສົມ. ໃນກໍລະນີ ຊຸມຊົນສະເໜີການສູນເສຍທີ່ດິນ ຫລື ຊັບສິນອື່ນໆທີ່ມີການທົດແທນຄືນຫລາຍກ່ວາການບໍລິຈາກ ສຳລັບການຈັດຕັ້ງປະຕິບັດໃນໂຄງການທີ່ພົວພັນກັນ, ຮູບແບບການທົດແທນຈະມີຄວາມແຕກຕ່າງກັນແຕ່ລະປະເພດຜົນກະທົບ, ການກຳນົດຂໍ້ກຳນົດການທົດແທນ ແລະ ການຟື້ນຟູຄືນ ຈະຕ້ອງໃຫ້ພຽງພໍໃນການເຮັດຄືນໃໝ່ໃນລະດັບການກຳລົງຊີວິດຂອງຊຸມຊົນ.

## 11.12 ການຕິດຕາມ ແລະ ເປີດເຜີຍຂໍ້ມູນຂ່າວສານ

*ການຕິດຕາມພາຍໃນ*: ການຈັດຕັ້ງປະຕິບັດກອບນະໂຍບາຍໃນການທົດແທນຄືນ ແລະ ການຍົກຍ້າຍຖິ່ນຖານ (CRPF) ຈະໄດ້ກວດກາເປັນປະຈຳ ແລະ ຕິດຕາມໂດຍພະນັກງານ ທລຍ ສູນກາງ ເປັນຜູ້ຮັບຜິດຊອບໃນການຈັດຕັ້ງປະຕິບັດ ຂອງກິດຈະກຳການລົງທຶນທີ່ກ່ຽວຂ້ອງກັບການຈັດສັນທີ່ດິນ ແລະ ການເຂົ້າຫາແຫລ່ງທຳມະຊາດທີ່ຫວງຫ້າມ. ບັນຫາທີ່ພົບພໍ ແລະ ຄຳແນະນຳຈະໄດ້ເກັບຮັກສາໄວ້ໃນເອກະສານໂຄງການ ເພື່ອທົບທວນຄືນໂດຍຜູ້ໃຫ້ທຶນ. ພະນັກງານ ທລຍ ສູນກາງ ຈະກວດກາ, ຕິດຕາມຄວາມຄືບໜ້າຢ່າງໜ້ອຍສຸດ 1 ເທື່ອຕໍ່ປີ ແລະລວມທັງການຂຽນໃສ່ບົດລາຍງານປະຈຳປີ ເພື່ອປະກອບໃຫ້ທີມງານທະນາຄານ. ພະນັກງານ ທລຍ ສູນກາງ ຈະໄດ້ປຶກສາຫາລືຢ່າງໃກ້ສິດກັບອຳນາດການປົກຄອງ ແລະ ຜູ້ທີ່ໄດ້ຮັບຜົນກະທົບ ແລະ ພ້ອມດຽວກັນນັ້ນ ຈະໄດ້ສ້າງຕົວຊີ້ວັດ ແລະ ລະບົບຕິດຕາມບົນພື້ນຖານຂໍ້ມູນຈາກຂໍ້ມູນທີ່ໄດ້ເກັບກຳໄວ້ເບື້ອງຕົ້ນ.

*ການຕິດຕາມຈາກພາຍນອກ* :ກິດຈະກຳທີ່ໄດ້ລົງທຶນ ກ່ຽວກັບຊັບສິນທີ່ດິນ/ບົດລາຍງານການຍົກຍ້າຍຈັດສັນ ຈະຕ້ອງໄດ້ກວດກາໂດຍບໍລິສັດທີ່ປຶກສາ ຫລື ທີ່ປຶກສາທີ່ມີຄຸນນະພາບຈາກພາຍນອກ. ການຕິດຕາມຈາກພາຍນອກ ຫລື ທີ່ປຶກສາ ຈະໄດ້ວ່າຈ້າງພາຍໃຕ້ເງື່ອນໄຂທີ່ໄດ້ກຳນົດໃນການຕິດຕາມເປັນປະຈຳ, ການເກັບຕົວຢ່າງ, ວິທີການສຳພາດ ແລະ ການລາຍງານ. ບົດລາຍງານການຕິດຕາມ ຈະໄດ້ເກັບຮັກສາໄວ້ໂດຍທີມງານບໍລິຫານໂຄງການ ເພື່ອໃຫ້ທີມງານທະນາຄານໂລກກວດກາ.

***ການເຜີຍແຜ່ຂໍ້ມູນຂ່າວສານ***: ການປຶກສາຫາລືໃນທີ່ສາທາລະນະ ແລະ ການເຜີຍແຜ່ຂໍ້ມູນຂ່າວສານ (ປື້ມຄູ່ມືຈັດຕັ້ງປະຕິບັດໜ້າ 17.50) ໄດ້ກຳນົດຄວາມຕ້ອງການຂອງທະນາຄານ ເພື່ອໃຫ້ສາທາລະນະ ສາມາດເຂົ້າເຖິງຂໍ້ມູນຂ່າວສານ ກ່ຽວກັບໂຄງການ ແລະ ເອກະສານໂຄງການ. ມັນຕ້ອງການໃນໄລຍະ ການວາງແຜນ ແລະ ໄລຍະການກະກຽມ, ຈະຕ້ອງໄດ້ປຶກສາຫາລືກັບຜູ້ໄດ້ຮັບຜົນປະໂຫຍດຈາກ ໂຄງການ, ກຸ່ມທີ່ໄດ້ຮັບຜົນກະທົບ ແລະ ອົງການທີ່ບໍ່ຂື້ນກັບລັດຖະບານໃນທ້ອງຖິ່ນ, ສະພາບແວດລ້ອມ ແລະ ສັງຄົມ ຂອງໂຄງການ ຈະຕ້ອງໄດ້ສະເໜີ. ການປຶກສາຫາລື ຈະໄດ້ເຮັດເປັນປົກກະຕິ ໂດຍຜ່ານ ການອອກແບບ ແລະ ຈັດຕັ້ງປະຕິບັດຂອງການລົງທຶນ ແລະ ຕ້ອງໃຫ້ສອດຄອງກັບນະໂຍບາຍຄວາມ ປອດໄພໃນສັງຄົມ. ເພື່ອໃຫ້ຕິດພັນກັບນະໂຍບາຍ, ຂໍ້ມູນຄວາມປອດໄພທີ່ພົວພັນເຖິງວິທີການຫລຸດຜ່ອນ ທີ່ໄດ້ເຮັດ ພາຍໃຕ້ ທລຍ 2 ໃຫ້ສາທາລະນະ ສາມາດເຂົ້າເຖິງຂໍ້ມູນຂ່າວສານ ໃນເວບໄຊ ຂອງ ທລຍ ແລະ ກະດານຂ່າວທີ່ມີໃນຂັ້ນກຸ່ມບ້ານ.

## <u>ຮູບ 7 : ສັງລວມຫຍໍ້ ກອບນະໂຍບາຍ ກ່ຽວກັບການຍົກຍ້າຍຈັດສັນ ຫລື ການເວນຄືນທີ່ດິນ</u>




ການກະກຽມບົດລາຍງານ ກ່ຽວກັບການເວນຄືນທີ່ດິນໃນການຈັດຕັ້ງປະຕິບັດໂຄງການ/ການຍົກຍ້າຍຈັດສັນ:

- ສໍາລັບກິດຈະກໍາ ຫລື ການລົງທຶນ ທີ່ມີຄວາມຕ້ອງການທີ່ດິນຫລາຍ (ກະທົບຫລາຍກວ່າ 100 ຄົນ ຫລື ຫລາຍກວ່າ 10% ຂອງຊັບສິນ)
- ສໍາລັບການລົງທຶນທີ່ຕ້ອງການຍົກຍ້າຍໂດຍສະໝັກໃຈ

## 11.13 ກອບການພັດທະນາຊົນເຜົ່າທີ່ດ້ອຍໂອກາດ

### ກ) ຄຳອະທິບາຍຫຍໍ້

ທລຍ 2 ຈະສືບຕໍ່ຈັດຕັ້ງປະຕິບັດໃນພື້ນທີ່ຊົນນະບົດຮ່າງໄກສອກຫລີກຂອງເມືອງ ລວມທັງລາຍການເມືອງທຸກຍາກ ຂອງລັດຖະບານ 47 ເມືອງ ບຸລິມະສິດ ແລະ ກຸ່ມບ້ານ ທີ່ທຸກຍາກ ທີ່ບໍ່ນອນໃນເມືອງບຸລິມະສິດ ທີ່ມີຊົນເຜົ່າທີ່ແຕກຕ່າງກັນ. ເມືອງທີ່ມີປະຊາກອນ 20% ເປັນລາວລຸ່ມ, ແຕ່ກວມເອົາປະຊາກອນຜູ້ທຸກຍາກ 55%. ນອກຈາກນັ້ນ ປະຊາກອນໃນ 47 ເມືອງທຸກຍາກ ແມ່ນຫລາຍກ່ວາ 80% ມາຈາກຊົນເຜົ່າຜູ້ດ້ອຍໂອກາດລາວ-ໄທ. ໃນລັກສະນະນີ້ ຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການສ່ວນໃຫ່ຍຕ້ອງມາຈາກຊົນເຜົ່າທີ່ດ້ອຍໂອກາດ ແລະ ໂຄງການຍ່ອຍ ຕ້ອງອອກແບບໃຫ້ໄປຕາມຄູ່ມືຈັດຕັ້ງປະຕິບັດ 4.10.

ກອບການພັດທະນາຊົນເຜົ່າທີ່ດ້ອຍໂອກາດ (EGDF) ກອບການພັດທະນາແມ່ນສ້າງຂື້ນ ເພື່ອຮັບປະກັນໃຫ້ຊົນເຜົ່າທີ່ດ້ອຍໂອກາດ ໄດ້ເຂົ້າຮ່ວມໃນທຸກຂັ້ນຕອນ. 1) ຜູ້ປາກພາສາທີ່ມີຄວາມແຕກຕ່າງຈາກພາສາທີ່ໃຊ້ເປັນທາງການໃນປະເທດ. 2) ຮັກສາຊົນເຜົ່າທີ່ຄືກັນໄວ້ນຳກັນ ດ້ວຍການກຳນົດຈາກລັກສະນະການນຸ່ງຖືກ, ເຄື່ອງ, ປະເພນີ ແລະ ວັດທະນະທຳ ເຊິ່ງມີຄວາມແຕກຕ່າງກັນໃນແຕ່ລະພາກຂອງປະເທດ. ກອບການພັດທະນາຊົນເຜົ່າທີ່ດ້ອຍໂອກາດ (EGDF) ໄດ້ມີກິດຈະກຳ ແລະ ຂັ້ນຕອນທີ່ຈະຕ້ອງໄດ້ເຮັດໃນໂຄງການຍ່ອຍ ເພື່ອຮັບປະກັນພວກເຂົາໄດ້ຮັບຜົນປະໂຫຍດຢ່າງເຕັມທີ່ ແລະ ເໝາະສົມຈາກກິດຈະການແຜນງານໃນລັກສະນະວັດທະນະທຳ.

*ກິດຈະກຳຫລັກ ແລະ ວິທີການ*: ກິດຈະກຳຕໍ່ໄປນີ້ໄດ້ຖືກນຳໃຊ້ ເພື່ອອຳນວຍຄວາມສະດວກ, ປະສົມປະສານ ແລະ ໃຫ້ສິດທິແກ່ຜູ້ທີ່ດ້ອຍໂອກາດໃຫ້ດີຂື້ນ. ວິທີການດັ່ງກ່າວນີ້ ໄດ້ມີການດັດແກ້ພາຍຫລັງຮອບວຽນທີ 5 ຂອງ ທລຍ 1 ແລະ ໄດ້ສືບຕໍ່ນຳໃຊ້ໃນ ທລຍ 2:

1. ຝຶກອົບຮົມໃຫ້ພະນັກງານທລຍ, ປະສານງານກຸ່ມບ້ານ ໃນຮູບແບບຍົກສູງບົດບາດຍິງຊາຍ ແລະ ຊົນເຜົ່າທີ່ດ້ອຍໂອກາດ (ເບິ່ງຄູ່ມືຝຶກອົບຮົມໃນ EGDF);
2. ອະທິບາຍຂໍ້ມູນຂ່າວສານ ກ່ຽວກັບເອກະສານໂຄງການທີ່ສຳຄັນ ເປັນພາສາທ້ອງຖິ່ນ ໃນໄລຍະຈັດກອງປະຊຸມຂັ້ນກຸ່ມບ້ານ;
3. ເກັບກຳຂໍ້ມູນບ້ານ: ລວມທັງຂໍ້ມູນຊົນເຜົ່າທີ່ແຕກຕ່າງກັນ ແຕ່ອາໃສໃນບ້ານດຽວກັນ, ລະດັບຄວາມທຸກຍາກ. ປັບປຸງຂໍ້ມູນປົກກະຕິປະຈຳປີ (ເບິ່ງຄູ່ມືຈັດຕັ້ງປະຕິບັດ). ແຜນທີ່ແບບງ່າຍດາຍເພື່ອສະແດງໃຫ້ເຫັນຊົນເຜົ່າທີ່ອາໃສຢູ່ໃນບ້ານ;
4. ສ້າງບຸກຄະລະກອນໃຫ້ຕົວແທນບ້ານ, ໂດຍສະເພາະ ແມ່ນຊົນເຜົ່າຜູ້ທີ່ດ້ອຍໂອກາດ (ເບິ່ງຄູ່ມືຝຶກອົບຮົມ);
5. ຕິດຕາມກວດກາໃນພາສາຊົນເຜົ່າທ້ອງຖິ່ນ;
6. ຈັດກອງປະຊຸມປຶກສາຫາລື ແລະ ຝຶກອົບຮົມບັນຫາທີ່ພົວພັນເຖິງຊົນເຜົ່າຜູ້ທີ່ດ້ອຍໂອກາດ (ເບິ່ງຄູ່ມືຝຶກອົບຮົມ);

7. ຈັດການໄປທັດສະນະສຶກສາ ລະຫວ່າງປະສານງານກຸ່ມບ້ານທີ່ເຮັດວຽກພາຍໃນບ້ານ ທີ່ມີຊົນເຜົ່າແຕກຕ່າງກັນ ໃນຮູບແບບການດຳລົງຊີວິດ, ຂໍ້ຫຍຸ້ງຍາກ, ການແກ້ບັນຫາໃນເວລາຮ່ວມເຂົ້າກັນ, ພົບປະສະມາຄົມ ແລະ ການເຄື່ອນຍ້າຍຊົນເຜົ່າຕ່າງໆ;
8. ຮຽນຈາກປະສົບການຫລາຍໆປະເທດ ໂດຍຜ່ານການຄົ້ນຄ້ວາ ແລະ ທັດສະນະສຶກສາ.

**ຂ) ການຝຶກອົບຮົມ**

ກອງປະຊຸມຝຶກອົບຮົມຄວາມປອດໄພທາງສັງຄົມ ໃຊ້ເວລານຶ່ງມື້ ຈະໄດ້ຈັດໃຫ້ທີມງານ ທລຍ ຈາກສູນກາງລົງຮອດຂັ້ນເມືອງ ໂດຍແມ່ນໜ້າທີ່ຂອງທີມງານທະນາຄານໂລກ ຈະເປັນຜູ້ຝຶກໃນຕອນເລີ້ມຕົ້ນໂຄງການ. ທີມງານຂັ້ນເມືອງ ຈະສົ່ງຄວາມຮູ້ກ່ຽວກັບຄວາມປອດໄພທາງສັງຄົມ ໃຫ້ທີມງານກຸ່ມບ້ານ ແລະ ບ້ານ ໂດຍຜ່ານຫລາຍຮູບແບບຂອງການຝຶກອົບຮົມ ຈະເປັນແບບຝຶກຫັດເຮັດຕົວຈິງ ດ້ວຍການຊ່ວຍເຫລືອຂອງທີມງານແຂວງ. ການຈັດຝຶກອົບຮົມກ່ຽວກັບຄວາມປອດໄພທາງສັງຄົມ ສາມາດເອົາຫົວຂໍ້ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງເຂົ້າຮ່ວມກັນ. ບົດສະຫລຸບຫຍໍ້ກ່ຽວກັບການຝຶກອົບຮົມ ຈະໄດ້ສັງລວມເອົາຄວາມຮູ້ ແລະ ປະສົບການກ່ຽວກັບຄວາມປອດໄພທາງສັງຄົມ. ມັນຈະໄດ້ຈັດຂື້ນໃນ 6 ເດືອນຕໍ່ໜ້າ ຫລື ນຶ່ງປີພາຍຫລັງທີ່ຂໍ້ຕົກລົງ ຂອງ ທລຍ 2 ໄດ້ມີຜົນສັກສິດໃຫ້ນຳໃຊ້

## 11.14 ກອບນະໂຍບາຍສຳລັບການດຳລົງຊີວິດແລະກິດຈະກຳເພື່ອປັບປຸງການເປັນຢູ່ໃຫ້ດີຂື້ນ

ເປັນສ່ວນນຶ່ງ ຂອງ ທລຍ 2, ໂຄງການທົດລອງ ກ່ຽວກັບການດຳລົງຊີວິດ (ສະໜັບສະໜູນໂດຍອົງການ JSDF) ຈະໄດ້ຈັດຕັ້ງປະຕິບັດເພື່ອສົ່ງເສີມກິດຈະກຳການພັດທະນາ ເພື່ອນຳໄປສູ່ການປັບປຸງຊີວິດການເປັນຢູ່ ແລະ ຄວາມຜາສຸກຂອງປະຊາຊົນ. ມັນຈະຕ້ອງໄດ້ມີການຮ່ວມມື ແລະ ການຊ່ວຍເຫລືອ ໂດຍສະເພາະ ແມ່ນແມ່ຍິງ ເພື່ອຈັດຕັ້ງ ແລະ ລວບລວມການພັດທະນາແບບຊຸມຊົນເປັນເຈົ້າ. ການປັບປຸງຊີວິດການເປັນຢູ່ ຈະນຳໃຊ້ຮູບແບບການມີສ່ວນຮ່ວມ ເພື່ອຊ່ວຍໃຫ້ປະຊາຊົນເຂົ້າໃຈ ແລະ ປະເມີນບັນຫາຂອງພວກເຂົາທີ່ກ່ຽວຂ້ອງກັບການປັບປຸງຊີວິດການເປັນຢູ່ ແລະ ຄວາມຮັ່ງມີ ແລະ ແກ້ໄຂໃນການຈັດບຸລິມະສິດຂອງແຊກແຊງ. ກິດຈະກຳຈະຕ້ອງໄດ້ກັ່ນຕອງໃສ່ກັບລາຍການທີ່ບໍ່ໃຫ້ການສະໜັບສະໜູນ, ລວມທັງກິດຈະກຳທີ່ເປັນຜົນລົບຕໍ່ສະພາບແວດລ້ອມ ຫລື ຜົນກະທົບທາງສັງຄົມ ເຊັ່ນ: :ການຈັດຫາທີ່ດິນ ຫລື ຫ້າມບໍ່ໃຫ້ເຂົ້າຫາແຫ່ງທຳມະຊາດ, ການປ່ຽນແປງລັກສະນະທຳມະຊາດຂອງປ່າໄມ້ ສຳລັບການຜະລິດກະສິກຳ ຫລື ການນຳໃຊ້ຢາປາບສັດຕູພືດ.

ກິດຈະກຳປັບປຸງຊີວິດການເປັນຢູ່ ຈະສົ່ງເສີມກິດຈະກຳທີ່ຕິດພັນກັບຊົນເຜົ່າ, ເພື່ອອຳນວຍຄວາມສະດວກສະເພາະ ແລະ ຕິດຕາມການຈັດການ ເພື່ອຮັບປະກັນ ຊຸມຊົນສາມາດມີຜົນປະໂຫຍດໃນດ້ານວັດທະນະທຳທີ່ເໝາະສົມ ແລະ ໃຫ້ມີລັກສະນະການມີສ່ວນຮ່ວມຂອງແມ່ຍິງ. ມາດຕະຖານສຳລັບການຄັດເລືອກອົງປະກອບຂອງກຸ່ມພັດທະນາຕົນເອງ ຈະສ້າງຂື້ນ ເພື່ອຮັບປະກັນບໍ່ໃຫ້ກີດກັນຊຸມຊົນຜູ້ທີ່ທຸກຍາກ ແລະ ໃຫ້ມີຄວາມໂປ່ງໃສປະກອບສ່ວນໃຫ້ກັບຜູ້ໄດ້ຮັບຜົນປະໂຫຍດ ຈາກການປັບປຸງຊີວິດການເປັນຢູ່. ນະໂຍບາຍຄວາມປອດໄພທາງສັງຄົມທີ່ມີຢູ່ໃນຄູ່ມືການຈັດຕັ້ງປະຕິບັດ ຂອງ ທລຍ ຈະມີການ

ດັດແກ້ ຫລື ດັດປັບໃນເວລາທີ່ຈໍາເປັນໃນໄລຍະການກະກຽມໂຄງການ JSDF ກິດຈະກໍາປັບປຸງຊີວິດການເປັນຢູ່.

## 12 ກົນໄກສະແດງຄຳຄິດເຫັນ ແລະ ແກ້ໄຂບັນຫາ (ກສກ)

ຈຸດປະສົງຂອງກົນໄກສະແດງຄຳຄິດເຫັນ ແລະ ແກ້ໄຂບັນຫາ (ກສກ) ແມ່ນເພື່ອໃຫ້ແນ່ໃຈວ່າ ທລຍ ມີລະບົບການຮັບຄຳຄິດເຫັນຈາກປະຊາຊົນ, ເພື່ອໃຫ້ແນ່ໃຈວ່າສຽງຂອງປະຊາຊົນຜູ້ທຸກຍາກ ແລະ ຜູ້ດ້ອຍໂອກາດໃນສັງຄົມ ໄດ້ຮັບການແກ້ໄຂໂດຍໄວ. ຈຸດປະສົງຂອງກົນໄກ ກສກ ຍັງຊ່ວຍໃນການຄັບເຂື່ອນການບໍລິຫານຂະບວນການຈັດຕັ້ງປະຕິບັດໂຄງການ ເພື່ອເພີ່ມປະສິດທິຜົນຂອງໂຄງການ. ລະບົບດັ່ງກ່າວນີ້ ຍັງຈະຊ່ວຍໃຫ້ ທລຍ ມີສ່ວນຮັບຜິດຊອບຢ່າງເຕັມສ່ວນຕໍ່ກັບຊຸມຊົນຜູ້ໄດ້ຮັບຜົນປະໂຫຍດ ແລະ ກະຈາຍອຳນາດໃຫ້ແກ່ຊົນເຜົ່າຕ່າງໆ ແລະ ຜູ້ທຸກຍາກ ຊຶ່ງແມ່ນເປົ້າ ໝາຍສ່ວນໃຫຍ່ຂອງແຜນງານ.

### 12.1 ຫລັກການຂອງລະບົບ

<u>ຕາຕະລາງ 4: **ຫລັກການຂອງລະບົບ**</u>

| | |
|---|---|
| **ເຫັນປະຈັກຕາ** | ຂໍ້ມູນກ່ຽວກັບການສະແດງຄຳຄິດເຫັນໄດ້ຢູ່ໃສ, ຕ້ອງໄດ້ມີການໃຫ້ຂໍ້ມູນຄັກແນ່ |
| **ການເຂົ້າເຖິງ** | ປະຊາຊົນຕ້ອງເຫັນວ່າ ມັນມີຂັ້ນຕອນທີ່ງ່າຍ ຕໍ່ການມີສ່ວນຮ່ວມ ແລະ ການນຳໃຊ້ ລະບຽບຫລັກການຂອງການສະແດງຄຳຄິດເຫັນ ໂດຍບໍ່ຄຳນຶງເຖິງພາສາ ຫລື ຄວາມພິການ |
| **ການຕອບສະ ໜອງ** | ຮັບຊາບເພື່ອຈັດຕັ້ງປະຕິບັດຕາມ ໂດຍທີ່ແຈ້ງໃຫ້ຜູ້ສະແດງຄຳຄິດເຫັນ ຮູ້ເຖິງຂະບວນການທີ່ພວກດຳເນີນຢູ່ |
| **ວັດຖຸປະສົງ** | ການສອບສວນຄວນເປີດກ້ວາງ ແລະ ເປັນກາງ, ສົມບູນແບບ ແລະ ເປັນທຳ |
| **ຄ່າໃຊ້ຈ່າຍ** | ບໍ່ມີຄ່າໃຊ້ຈ່າຍໃດໆ ສຳລັບຜູ້ສະແດງຄຳຄິດເຫັນ ເພາະວ່າຄຳຄິດເຫັນຂອງພວກເຂົາເຈົ້າ ແມ່ນຕອບສະໜອງໃຫ້ຂໍ້ມູນ ແລະ ນຳມາແກ້ໄຂເທົ່ານັ້ນ |
| **ຄວາມລັບ** | ຍົກເວັ້ນວ່າມີຄວາມສະໝັກໃຈໃນການເປີດເຜີຍຂໍ້ມູນ, ຂໍ້ມູນຂອງຜູ້ສະແດງຄຳຄິດເຫັນ ຈະຖືກເກັບເປັນຄວາມລັບ ແລະ ຫລັງຈາກຜ່ານຂະບວນການສອບສວນແລ້ວເທົ່ານັ້ນ |
| **ປະຊາຊົນເປັນຈຸດສຸມ** | ໂຄງການຍິນດີຮັບເອົາທຸກຄຳຄິດເຫັນທີ່ມາຈາກປະຊາຊົນ, ໂດຍເຫັນຊຸມຊົນເປັນຈຸດສຸມຂອງການສະແດງຄຳຄິດເຫັນ |
| **ຄວາມຮັບຜິດຊອບ** | ຄວນຈະມີຄວາມຊັດເຈນ ກ່ຽວກັບບົດບາດ ແລະ ອຳນາດໜ້າທີ່ໃນການແກ້ໄຂຄຳຄິດເຫັນ ແລະ ພະນັກງານຄວນມີຄວາມຮັບຜິດຊອບຕໍ່ການປະຕິບັດ ແລະ ການຕັດສິນໃຈ ຂອງພວກເຂົາເຈົ້າ |
| **ມີຄວາມຕໍ່ເນື່ອງໃນການປັບປຸງ** | ຕ້ອງມີຈຸດປະສົງອັນແນ່ນອນ ທີ່ໄດ້ຮຽນຮູ້ຈາກການສະແດງຄຳຄິດເຫັນ ເພື່ອປັບປຸງຂະ ບວນການຕ່າງໆ, ນະໂຍບາຍ ແລະ ລະບຽບຫລັກການ |

ປັບປຸງມາຈາກ ISO 10002, ມາດຕະຖານໃນການແກ້ໄຂຄຳຮ້ອງທຸກຂອງນານາຊາດ.

### 12.2 ແຫລ່ງຂໍ້ມູນຂອງກົນໄກສະແດງຄຳຄິດເຫັນ

ຕາມຫລັກການແລ້ວ ການສະແດງຄຳຄິດເຫັນ ແມ່ນສາມາດເຮັດໃດ້ ໂດຍທຸກໆຄົນທີ່ມີສ່ວນຮ່ວມໃນຂະບວນການຂອງ ທລຍ (ຊາວບ້ານ, ຕົວແທນຂອງຊຸມຊົນ, ອຳນາດການປົກຄອງໃນທຸກລະດັບ, ຜູ້ຮັບເໝົາ, ອົງການພັດທະນາຕ່າງໆ, ພະນັກງານ ທລຍ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ). ລະບົບແມ່ນສ້າງ ແລະ ປັບປຸງ ເພື່ອສາມາດເພີ້ມການມີສ່ວນຮ່ວມຂອງກຸ່ມດ້ອຍໂອກາດ (ຕົວຢ່າງ: ກຸ່ມຊົນເຜົ່າ ແລະ ແມ່ຍິງ) ຊຶ່ງເບິ່ງຄ້າຍຄືວ່າກຸ່ມດັ່ງກ່າວ ຈະບໍ່ມີສິດມີສຽງຫລາຍເທົ່າທີ່ຄວນຢູ່ໃນຂະບວນການວາງແຜນ ແລະ ຈັດຕັ້ງປະຕິບັດ ຂອງ ທລຍ.

### 12.3 ຂອງການສະແດງຄຳຄິດເຫັນ

- **ປະເພດ ກ**: ແມ່ນປະເພດການສະແດງຄຳເຫັນ ຫລື ຄຳຖາມ. ຊຶ່ງປະເພດດັ່ງກ່າວນີ້ ບໍ່ແມ່ນປະເພດທີ່ເປັນບັນຫາ ມີພຽງແຕ່ເປັນການຖາມ ແລະ ການຕອບເທົ່ານັ້ນ ຊຶ່ງສ່ວນຫລາຍແລ້ວ ພະນັກງານຂອງ ທລຍ ຢູ່ໃນຂັ້ນຕ່າງໆສາມາດຊີ້ແຈງ ແລະ ຕອບຄຳຖາມໄດ້ຢູ່ໃນຂັ້ນ: ພະນັກງານຮັບຜິດຊອບກົນໄກ ກສກ ຂັ້ນສູນກາງ, ພະນັກງານຢູ່ໃນຂັ້ນແຂວງ ແລະ ເມືອງ ຫລື ຜູ້ປະສານງານກຸ່ມບ້ານ.

- **ປະເພດ ຂ**: ຊຶ່ງອາດກ່ຽວຂ້ອງກັບການລະເມີດສິດ ຫລື ບໍ່ປະຕິບັດຕາມພັນທະສັນຍາ, ຊຶ່ງອາດກວມເອົາຫົວຂໍ້ຕ່າງໆດັ່ງລຸ່ມນີ້:

    - ລະເມີດ ຫລື ບໍ່ສອດຄ່ອງກັບສິດທິຕ່າງໆ ຂອງ ຫລາຍຝ່າຍຕໍ່ກັບໂຄງການ;
    - ລະເມີດຕໍ່ລະບຽບຫລັກການຂອງໂຄງການ;
    - ການບໍ່ປະຕິບັດຕາມພັນທະທີ່ໄດ້ຕົກລົງກັນຢູ່ໃນບົດບັນທຶກຊ່ວຍຈຳ.

  ຊຶ່ງປະເພດຂອງການສະແດງຄຳຄິດເຫັນຂ້າງເທິງນີ້ ແມ່ນຈະໄດ້ນຳເອົາໄປປຶກສາ ແລະ ແກ້ໄຂຢູ່ໃນກອງປະຊຸມຂັ້ນບ້ານ ຫລື ກອງປະຊຸມຂັ້ນກຸ່ມບ້ານ.

- **ປະເພດ ຄ**: ໝາຍເຖິງຄວາມຂັດຂ້ອງໃຈ ຫລື ຄວາມຜິດທີ່ພົວພັນເຖິງການລະເມີດກົດໝາຍ. ຊຶ່ງເປັນປະເພດທີ່ຕ້ອງໄດ້ເອົາໃຈໃສ່ ແລະ ຕ້ອງໄດ້ໃຊ້ເວລາໃນການແກ້ໄຂ ເພາະວ່າອາດຈຳເປັນຕ້ອງໄດ້ແກ້ໄຂຜ່ານຂະບວນການກົດໝາຍ. ເຖິງຢ່າງໃດກໍ່ຕາມຢູ່ໃນກອງປະຊຸມຂັ້ນບ້ານ ຫລື ຂັ້ນກຸ່ມບ້ານອາດຈະນຳເອົາບັນຫາດັ່ງກ່າວມາແກ້ໄຂ ແລະ ອາດບໍ່ຈຳເປັນຕ້ອງໃຊ້ຂະບວນການທາງດ້ານກົດໝາຍມາແກ້ໄຂ.

- **ປະເພດ ງ**: ແມ່ນກ່ຽວຂ້ອງກັບຄຳຮ້ອງທຸກຕໍ່ກັບພະນັກງານ ຂອງ ທລຍ ແລະ ພະນັກງານ ຂອງອົງການຈັດຕັ້ງ ອື່ນໆ. ຊຶ່ງຄຳຮ້ອງທຸກກ່ຽວກັບພະນັກງານ ຂອງ ທລຍ ນັ້ນ ຈະນຳໃຊ້ກົດລະບຽບ ແລະ ຫລັກການພາຍໃນ ເພື່ອແກ້ໄຂ. ສຳລັບພະນັກງານຂອງອົງການຈັດຕັ້ງອື່ນ ແມ່ນຈະໄດ້ຮັບການແກ້

ໄຂໃນລັກສະນະດຽວກັນ ໂດຍນຳໃຊ້ກົດລະບຽບພາຍໃນຂອງເຂົາເຈົ້າທັນທີ ຖ້າຫາກຢູ່ໃນກໍລະນີເຂົາເຈົ້າຖືກຮ້ອງຟ້ອງ.

### 12.4 ຊ່ອງທາງຂອງການສະແດງຄຳຄິດເຫັນ

ກສກ ແມ່ນພາກສ່ວນນຶ່ງ ຂອງລະບົບຄຸ້ມຄອງຂໍ້ມູນຂ່າວສານ ຂອງ ທລຍ ແລະ ເປັນສິ່ງສຳຄັນໃຫ້ການຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ຊຶ່ງເປັນຫລັກການພື້ນຖານ ຂອງ ທລຍ. ການສະແດງຄຳຄິດເຫັນ ແມ່ນສາມາດເຮັດໄດ້ຢູ່ໃນທຸກລະດັບ (ບ້ານ[16], ເມືອງ, ແຂວງ ແລະ ຂັ້ນສູນກາງ). ເພື່ອ ໃຫ້ລະບົບ ກສກ ເຮັດວຽກໄດ້ຢ່າງສົມບູນ ທລຍ ໄດ້ສ້າງລະບົບຮັບຮອງເອົາຄຳຄິດເຫັນຕ່າງໆ ດັ່ງລຸ່ມນີ້:

- ກຳມະການ ກສກ ຢູ່ໃນຂັ້ນບ້ານ, ເມືອງ ແລະ ແຂວງ;
- ກ່ອງຮັບຄຳຄິດເຫັນ;
- ສາຍດ່ວນ (161);
- ຕູ້ໄປສະນີ 4625;
- ອີເມລ : (prf.frm@gmail.com);
- ເວັບໄຊ: (www.prflaos.org);
- ກອງປະຊຸມຕ່າງໆຢູ່ໃນແຕ່ລະຂັ້ນ ຊຶ່ງຈັດຕັ້ງປະຕິບັດຢູ່ໃນຮອບວຽນ (ບ້ານ, ກຸ່ມບ້ານ, ເມືອງ, ແຂວງ ແລະ ສູນກາງ);
- ກອງປະຊຸມປະຈຳປີ ຢູ່ໃນບ້ານທີ່ໄດ້ຖືກຄັດເລືອກ ໃນແຕ່ລະກຸ່ມບ້ານ ໂດຍການຊັກຊວນ ໃຫ້ຊຸມຊົນສະແດງຄຳຄິດເຫັນ.

ການສະແດງຄຳຄິດເຫັນ ສາມາດເຮັດໄດ້ ໂດຍການບອກເລົ່າ ຫລື ຂຽນແບບຟອມ. ການສະແດງ ຄຳຄິດເຫັນໂດຍປາກເປົ່າໃຫ້ແກ່ສະມາຊິກໃນຊຸມຊົນຜູ້ທີ່ສາມາດໄວ້ວາງໃຈໄດ້ ແມ່ນເປັນທີ່ຍອມຮັບ ສຳລັບຊ່ອງທາງການແກ້ໄຂບັນຫາທີ່ມີປະສິດທິພາບ, ຄະນະກຳມະການ ກສກ ຂັ້ນບ້ານ ຈະຊ່ວຍຄະນະບ້ານ (ລວມທັງຜູ້ເປັນກາງ ຮູບແບບທີ່ໃຊ້ກັນມາແຕ່ດັ້ງເດີມ ເຊັ່ນ: ແນວໂຮມ) ແລະ ຕົວແທນ 2 ທ່ານ ຈາກ ທລຍ (ຍິງ 1 ທ່ານ ແລະ ຊາຍ 1 ທ່ານ) ຊຶ່ງເປັນຜູ້ທີ່ສາມາດຮັບເອົາການສະແດງຄຳຄິດເຫັນ ແລະ ອຳນວຍຄວາມສະດວກໃຫ້ຂະບວນການສະແດງຄຳຄິດເຫັນຢູ່ໃນຂັ້ນບ້ານ. ຖ້າຫາກສະມາຊິກຜູ້ໃດນຶ່ງ ບໍ່ສາມາດອ່ານອອກຂຽນໄດ້, ຜູ້ທີ່ອ່ານອອກຂຽນເປັນຕ້ອງໄດ້ເຮັດວຽກຢ່າງໃກ້ຊິດກັບຜູ້ສະ ແດງຄຳຄິດເຫັນເພື່ອໃຫ້ແນ່ໃຈວ່າເອກະສານສະແດງຄຳຄິດເຫັນຖືກຕ້ອງດີ ຊຶ່ງລວມທັງການສະແດງຄຳຄິດເຫັນແບບປາກເປົ່າ (ຊຶ່ງແຕ່ງຕັ້ງບຸກຄົນດັ່ງກ່າວນີ້ໃຫ້ປະຈຳຢູ່ໃນຂັ້ນບ້ານ). ກຳມະການ ກສກ ທຸກໆຄົນຕ້ອງໄດ້ຮັບການຝຶກອົບຮົມ ກ່ຽວກັບໜ້າທີ່ ແລະ ຄວາມຮັບຜິດຊອບຂອງເຂົາເຈົ້າຢ່າງເໝາະສົມ.

[16] ກຸ່ມບ້ານບໍ່ນອນຢູ່ໃນກົນໄກ ກສກ ເພາະວ່າກຸ່ມບ້ານແມ່ນການລວມກຸ່ມກັນຂອງບ້ານ ແລະ ໃຈກາງກຸ່ມບ້ານແມ່ນບ້ານ, ສະນັ້ນ ແມ່ນຄວນແມ່ນການລວມສູນຂອງຄະນະກຳມະການ ກສກ ຂັ້ນບ້ານ ບໍ່ແມ່ນຂອງກຸ່ມບ້ານ.

ແບບຟອມສະແດງຄໍາຄິດເຫັນ ແລະ ແກ້ໄຂບັນຫາ (FR-Form) ແມ່ນມີຢູ່ໃນຂັ້ນບ້ານ, ເມືອງ ແລະ ແຂວງ ຊຶ່ງຢູ່ຂ້າງກ່ອງສະແດງຄໍາຄິດເຫັນ ຢູ່ສະຖານທີ່ຕ່າງໆທີ່ມີກ່ອງ (ເບິ່ງເອກະສານຊ້ອນທ້າຍ 9). ປະຊາຊົນໃຜທີ່ຕ້ອງການສະແດງ ຄໍາຄິດເຫັນ ຫລື ຮ້ອງຟ້ອງ ແມ່ນສາມາດເຮັດໄດ້ ໂດຍການຕື່ມແບບຟອມສະແດງຄໍາຄິດເຫັນ FR-form ເພື່ອການສືບ ສວນ ຫລື ສາມາດຂຽນຄໍາຄິດເຫັນໃສ່ເຈ້ຍເປົ່າກໍ່ໄດ້ ໂດຍໃຫ້ມີເນື້ອໃນຄືກັນກັບຢູ່ໃນແບບຟອມ FR-form. ບຸກຄົນທີ່ມີຄວາມຫຍຸ້ງຍາກໃນການຂີດຂຽນ ສາມາດຫາຄວາມຊ່ວຍເຫລືອຈາກຜູ້ອື່ນຂຽນແທນໄດ້ (ເຊັ່ນ: ໝູ່, ພີ່ນ້ອງ, ສະມາຊິກອົງການຈັດຕັ້ງມະຫາຊົນ ຫລື ຄະນະກໍາມະການ ກສກ). ທຸກໆການສະແດງຄໍາຄິດເຫັນ ໂດຍນໍາໃຊ້ການຂຽນຕ້ອງໄດ້ສົ່ງເອກະສານດັ່ງກ່າວນັ້ນໃສ່ກ່ອງສະແດງຄໍາຄິດເຫັນ.

ການສະແດງຄໍາຄິດເຫັນ ຍັງສາມາດຖ່າຍທອດ ໂດຍການບອກເລົ່າປາກເປົ່າຕໍ່ຫ້ອງການ ທລຍ ຫລື ໃນເວລາທີ່ ທລຍ ຈັດກອງປະຊຸມຢູ່ໃນຂັ້ນຕ່າງໆຂອງຮອບວຽນ. ຊຶ່ງທຸກການສະແດງຄໍາຄິດເຫັນທີ່ໄດ້ຮັບຕ້ອງໄດ້ບັນທຶກເຂົ້າແບບຟອມສະແດງຄໍາຄິດເຫັນ FR-Form ໂດຍພະນັກງານ ທລຍ ແລະ ພະນັກງານ ທລຍ ຕ້ອງໄດ້ແຈ້ງຂະບວນການຕໍ່ໄປໃຫ້ແກ່ຜູ້ສະແດງຄໍາຄິດເຫັນ ຊຶ່ງຫລັງຈາກນັ້ນ ຈະຕ້ອງໄດ້ປ່ອນເອກະສານດັ່ງກ່າວນັ້ນໃສ່ກ່ອງສະແດງຄໍາຄິດເຫັນ ໂດຍຜູ້ສະແດງຄໍາຄິດເຫັນ.

ຕົວແທນອົງການຈັດຕັ້ງມະຫາຊົນທີ່ນອນຢູ່ໃນຄະນະ ກສກ ເຊັ່ນ: ສະຫະພັນແມ່ຍິງ, ແນວລາວ ກໍ່ສະໜັບສະໜູນໃຫ້ເປັນພາກສ່ວນຫລັກໃນການຊີ້ນໍາປະຊາຊົນໃຫ້ສະແດງຄວາມຄິດເຫັນ. ອົງການຈັດຕັ້ງມະຫາຊົນ ຕ້ອງໄດ້ລົງຕິດຕາມການເປັນຢູ່ຂອງປະຊາຊົນຢູ່ໃນເຂດຫ່າງໄກສອກຫລີກ ເພື່ອເກັບກໍາການສະແດງຄວາມຄິດເຫັນຂອງເຂົາເຈົ້າ, ຍົກການແກ້ໄຂບັນຫາໄປຫາກຸ່ມບ້ານ ເພື່ອຈັດລຽງລໍາດັບ ແລະ ປະມວນຜົນໃນຕໍ່ໜ້າ. ຕົວແທນທີ່ໄດ້ຖືກຄັດເລືອກຈາກອົງການຈັດຕັ້ງມະຫາຊົນຕ່າງໆ ເພື່ອເຂົ້າເປັນຄະນະກໍາມະການ ກສກ ແລະ ລະບຸຫົວຂໍ້ໃນການຝຶກອົບຮົມ ກ່ຽວກັບ ກສກ. ໂດຍທົ່ວໄປແລ້ວ ຈະນໍາໃຊ້ຮູບແບບສົນທະນາແລກປ່ຽນ ແລະ ແກ້ໄຂຂໍ້ຂັດແຍ່ງ.

ນອກຈາກກົນໄກສະແດງຄໍາຄິດເຫັນແລ້ວ, ທລຍ ຈະຮັກສາການສື່ສານອາສາສະໝັກ, ອົງການຈັດຕັ້ງມະຫາຊົນ ແລະ ຊຸມຊົນ ເພື່ອໃຫ້ເຂົາເຈົ້າໄດ້ສະແດງຄໍາຄິດເຫັນ. ນອກຈາກກອງປະຊຸມຕ່າງໆໃນຮອບວຽນຂອງໂຄງການແລ້ວ ຄະນະບ້ານສາມາດຈັດກອງປະຊຸມທົ່ວໄປ ເພື່ອຮັບຟັງຄໍາຄິດເຫັນຕໍ່ກັບການຈັດຕັ້ງປະຕິບັດໂຄງການ ຊຶ່ງພວກເຮົາຈະໄດ້ຮັບກ່ຽວກັບການສະແດງຄໍາເຫັນ ແລະ ຂໍ້ສະເໜີຕ່າງໆ ຊຶ່ງການຈັດກອງປະຊຸມໃນລັກສະນະນີ້ ແມ່ນຈະຊ່ວຍໃຫ້ລັດຖະບານສ້າງສະຖາບັນການມີສ່ວນຮ່ວມຂອງຜູ້ທຸກຍາກ ເຂົ້າໃນຂະບວນການວາງແຜນ ຢູ່ພາຍໃນປະເທດໃນແຕ່ລະໄລຍະ.

ສຸດທ້າຍ, ທຸກຄົນສາມາດຮ້ອງທຸກທີ່ຕິດພັນກັບຂໍ້ກ່າວຫາ ກ່ຽວກັບການຫລອກລວງ ແລະ ທຸດຈະລິດ ໂດຍກົງຫາທີມງານທະນາຄານໂລກ ຊຶ່ງໃນກໍລະນີດັ່ງກ່າວນີ້ ເຂົາອາດຈະເຂົ້າໃຈວ່າບໍ່ສາມາດຈະແກ້ໄຂຜ່ານຂະບວນການປົກກະຕິຂອງໂຄງການ ຊຶ່ງສາມາດປະສານງານໄດ້ ໃນ 2 ຈຸດ ທີ່ກະກຽມໄວ້ດັ່ງລຸ່ມນີ້:

- **ສາຍດ່ວນອິດສະລະ ການປາບປາມການສໍ້ລາດບັງຫລວງ ແລະ ທຸດຈະລິດ.**

  + 1 704 556 7046 (ເປັນອົງການພາຍນອກຮັບຜິດຊອບ, ມີຄ່າໃຊ້ຈ່າຍ)
  ລະຫັດໄປສະນີ: PMB 3767, 13950 Ballantyne Place, Charlotte, NC 28277, USA.

- **ຕິດຕໍ່ໂດຍກົງຫາຮອງປະທານ**

  ໂທ: + 1 202 458 7677
  ແຟັກ: + 1 202 522 7140
  ອີເມລ: investigations_hotline@worldbank.org
  ສຳລັບຂໍ້ມູນເພີ້ມເຕີມສາມາເຂົ້າເບິ່ງຢູ່ເວັບໄຊ: www.worldbank.org/integrity

## 12.5 ການຈັດລຳດັບ ແລະ ການປະເມີນຜົນ

ຢູ່ໃນໝູ່ບ້ານທີ່ກຳລັງຈັດຕັ້ງປະຕິບັດໂຄງການຍ່ອຍ, ກ່ອງຮັບຄຳຄິດເຫັນຈະຕ້ອງໄດ້ເປີດຢ່າງນ້ອຍ ນຶ່ງເທື່ອໃນນຶ່ງເດືອນໂດຍພະນັກງານ ທລຍ ແລະ ສະມາຊິກຂອງຄະນະກຳມະການ ກສກ (ຢູ່ໃນຂັ້ນບ້ານ, ຂັ້ນເມືອງ ແລະ ຂັ້ນແຂວງ) ແລະ ຕ້ອງໄດ້ບັນທຶກໄວ້ດັ່ງນີ້:

- ຢູ່ໃນຂັ້ນບ້ານ, ໂດຍສະມາຊິກຂອງຄະນະ ກສກ (ຢ່າງນ້ອຍ 2 ທ່ານ) ໂດຍມີການເຂົ້າຮ່ວມຂອງພະນັກງານ ທລຍ ແລະ ຜູ້ປະສານງານກຸ່ມບ້ານ. ຄຳຄິດເຫັນຕ່າງໆຈະໄດ້ເຮັດການບັນທຶກຢູ່ໃນປື້ມບັນທຶກ ຂອງ ກສກ ແລະ ຈະມີການປຶກສາຫາລື ເພື່ອດຳເນີນຂະບວນການ ແລະ ຂັ້ນຕອນຕໍ່ໄປ ເພື່ອແກ້ໄຂຄຳຄິດເຫັນທີ່ໄດ້ຮັບ ພ້ອມດຽວກັນນັ້ນກໍ່ຍັງແບ່ງຄວາມຮັບຜິດຊອບໂດຍກົງໃຫ້ແກ່ຄະນະທີ່ຈະດຳເນີນການໃນຂັ້ນຕໍ່ໄປ. ໃນກໍລະ ນີທີ່ພະນັກງານ ທລຍ ບໍ່ສາມາດໄປເປີດກ່ອງຮັບຄວາມຄິດເຫັນໄດ້, ຜູ້ປະສານງານກຸ່ມບ້ານຈະເປັນຜູ້ແຈ້ງຂໍ້ມູນໃຫ້ແກ່ພະນັກງານ ທລຍ ໃນເວລາທີ່ຈັດກອງປະຊຸມປະຈຳເດືອນຮ່ວມກັບພະນັກງານ ທລຍ.
- ຢູ່ໃນຂັ້ນເມືອງ, ໂດຍສະມາຊິກຂອງຄະນະ ກສກ (ຢ່າງນ້ອຍ 2 ທ່ານ) ໂດຍມີການເຂົ້າຮ່ວມຂອງພະນັກງານພັດທະນາຊຸມຊົນ ຂອງ ທລຍ ຊຶ່ງເປັນຜູ້ທີ່ບັນທຶກທຸກການສະແດງຄຳຄິດເຫັນ ແລະ ຮ້ອງຟ້ອງລົງໃສ່ແບບຟອມລາຍງານ ຂອງ ກສກ, ແລະ ຈະມີການປຶກສາຫາລື ເພື່ອດຳເນີນຂະບວນການ ແລະ ຂັ້ນຕອນຕໍ່ໄປ ເພື່ອແກ້ໄຂຄຳຄິດເຫັນທີ່ໄດ້ຮັບ ພ້ອມດຽວກັນນັ້ນກໍ່ຍັງແບ່ງຄວາມຮັບຜິດຊອບໂດຍກົງໃຫ້ແກ່ຄະນະທີ່ຈະດຳເນີນການໃນຂັ້ນຕໍ່ໄປ. ຂໍ້ມູນ ກສກ ຈະໄດ້ຖືກບັນທຶກເຂົ້າຢູ່ໃນຖານຂໍ້ມູນ ແລະ ຈະໄດ້ເຮັດເປັນບົດລາຍງານສົ່ງຫາແຂວງເພື່ອຊາບ.

- ຢູ່ໃນຂັ້ນແຂວງ, ໂດຍສະມາຊິກຂອງຄະນະ ກສກ (ຢ່າງນ້ອຍ 2 ທ່ານ) ໂດຍມີການເຂົ້າຮ່ວມຂອງພະນັກງານຕິດຕາມ-ປະເມີນຜົນ ຂອງ ທລຍ ເພື່ອເຮັດການບັນທຶກການສະແດງຄຳຄິດເຫັນ ແລະ ຮ້ອງພ້ອງເຂົ້າໃນບົດລາຍງານ ກສກ ຊຶ່ງພາຍຫລັງຈະໄດ້ລາຍງານຫາທີມງານບໍລິຫານງານ ທລຍ ຂັ້ນສູນກາງ ຜ່ານບົດລາຍງານປະຈຳເດືອນ ຂອງ ກສກ. ຂໍ້ມູນ ກສກ ຈະໄດ້ລາຍງານຫາຫ້ອງການ ທລຍ ຂັ້ນສູນກາງ ຜ່ານບົດລາຍງານປະຈຳ ເດືອນ.

ເມື່ອຄຳຄິດເຫັນໄດ້ຮັບການບັນທຶກ, ທຸກຄຳຄິດເຫັນທີ່ໄດ້ຮັບມາຈາກຂັ້ນບ້ານ, ຂັ້ນເມືອງ ແລະ ຂັ້ນແຂວງທີ່ເກັບກຳໄດ້ຢູ່ໃນຂັ້ນເມືອງ. ພະນັກງານ ທລຍ ຜູ້ທີ່ຮັບຜິດຊອບຢູ່ໃນຂັ້ນເມືອງຈະໄດ້ປ້ອນຂໍ້ມູນສະແດງຄຳຄິດເຫັນ ຢູ່ໃນແບບຟອມ ກສກ ເຂົ້າໃນລະບົບຖານຂໍ້ມູນ (ເບິ່ງເອກະສານຄັດຕິດ 9) ຊຶ່ງຫລັງຈາກນັ້ນ ກໍ່ຈະໄດ້ເຮັດການລວບລວມ ແລະ ລາຍງານ ໃນແຕ່ລະເດືອນ ຫາພະແນກຕິດຕາມ ແລະ ປະເມີນຜົນຂັ້ນສູນກາງ ຈົນກ່ວາທຸກໆຄຳຄິດເຫັນ ແລະ ຄຳຮ້ອງພ້ອງຕ່າງໆ ຈະໄດ້ຮັບການແກ້ໄຂ (ເບິ່ງເອກະສານຄັດຕິດ 9).

ຢູ່ໃນກອງປະຊຸມຕ່າງໆທີ່ໄດ້ຖືກຈັດຢູ່ແຕ່ລະຂັ້ນ ໃນຮອບວຽນ ຂອງການຈັດຕັ້ງປະຕິບັດກິດຈະກຳ ຂອງ ທລຍ, ຜູ້ທີ່ໃຫ້ຂໍ້ມູນເປັນການສະແດງຄຳຄິດເຫັນ, ຜູ້ຮ້ອງພ້ອງ ຫລື ຕົວແທນຂອງພວກເຂົາເຈົ້າ ຈະໄດ້ຖືກເຊີນ ເພື່ອເຂົ້າຮ່ວມກອງປະຊຸມ ແລະ ສະແດງຄຳຄິດເຫັນ. ພະນັກງານ ທລຍ ຈະຮັບຜິດຊອບໃນການຕື່ມແບບຟອມ ກສກ FR-form ແລະ ສົ່ງລາຍລະອຽດຂອງຂະບວນການໃນຂັ້ນຕໍ່ໄປ ໃຫ້ຜູ້ສະແດງຄຳຄິດເຫັນ ຊຶ່ງຂໍ້ມູນດັ່ງກ່າວ ກໍ່ແມ່ນຂຶ້ນກັບປະເພດຂອງການປະກອບຄຳຄິດເຫັນ. ຕົວແທນຂອງ ທລຍ ສາມາດຕັດສິນໃຈທີ່ຈະແກ້ໄຂບັນຫາ, ປຶກສາຫາລື ແລະ ປິດບັນ ຫາກັບທີ່ຢູ່ໃນກອງປະຊຸມ. ໃນກໍລະນີນີ້, ຕົວແທນຂອງພະນັກງານ ທລຍ ຈະເປັນຜູ້ຮັບຜິດຊອບສົ່ງແບບຟອມ ກສກ FR-form ໃຫ້ຄະນະ ກສກ ຢູ່ໃນຂັ້ນເມືອງ (ພະນັກງານ ທລຍ ຜູ້ເປັນສະມາຊິກ ກສກ) ແລະ ຈະເປັນຜູ້ສະໜອງທຸກໆຂໍ້ມູນທີ່ກ່ຽວຂ້ອງ ໃສ່ບົດລາຍງານປະຈຳເດືອນ ຂອງ ກສກ.

ໃນໂມງລັດຖະການ ພະແນກຕິດຕາມປະເມີນຜົນ ຈະຕອບຮັບສາຍດ່ວນໂທຟຼີ, ຮັບຄຳຄິດເຫັນຕ່າງໆຈາກອີເມລ ຜ່ານເວັບໄຊ ຂອງ ທລຍ ພ້ອມດຽວກັນ ກໍ່ໃດ້ຂໍ້ມູນຜູ້ສົ່ງຂ່າວ ແລະ ຜູ້ຮ້ອງທຸກ ກ່ຽວກັບຂໍ້ມູນຕ່າງໆທີ່ກ່ຽວພັນກັບການສະແດງຄຳຄິດຂອງພວກເຂົາເຈົ້າໂດຍກົງ. ໃນເວລານອກໂມງລັດຖະການ ຜູ້ສະແດງຄຳຄິດເຫັນ ແລະ ຮ້ອງທຸກ ສາມາດສະແດງຄຳຄິດເຫັນຜ່ານເຄື່ອງຕອບຮັບອໍໂຕເມຕິກ. ການສະແດງຄຳຄິດເຫັນຕ່າງໆ ຈະໄດ້ຖືກບັນທຶນໄວ້ຢູ່ໃນເຄື່ອງຕອບຮັບ ເພື່ອໃຫ້ພະແນກຕິດຕາມປະເມີນຜົນ ຫລື ພະແນກອື່ນໆທີ່ກ່ຽວຂ້ອງ ເພື່ອດຳເນີນການຕໍ່ໄປຕາມ ພາຍຫລັງ. ໃນທຸກໆກໍລະນີ ທີມງານຕິດຕາມປະເມີນຜົນຂັ້ນສູນກາງ ຈະໄດ້ຮັບຜິດຊອບໃນການຕື່ມແບບຟອມ ກສກ FR-form ແລະ ສົ່ງໃຫ້ພາກສ່ວນຕ່າງໆທີ່ກ່ຽວຂ້ອງ (ຄະນະ ກສກ ຢູ່ຂັ້ນ ບ້ານ, ຂັ້ນເມືອງ, ຂັ້ນແຂວງ ຫລື ຂັ້ນສູນກາງ) ສຳລັບເປັນຂໍ້ມູນ ຫລື ການຕອບຮັບອື່ນໆໃນຕໍ່ໜ້າ ລວມທັງການສືບສ່ວນຕ່າງໆ ຖ້າຫາກມີຄວາມຈຳເປັນ. ຜູ້ສະແດງຄຳຄິດເຫັນ ຫລື ຜູ້ຮ້ອງທຸກ ຍັງຈະໄດ້ຮັບການແນະນຳສາຍດ່ວນສະພາແຫ່ງຊາດ ເພື່ອເປັນທາງເລືອກອີກທາງໜຶ່ງໃນການສະແດງຄຳຄິດເຫັນ.

## 12.6 ການຕອບຮັບຄຳຄິດເຫັນ ແລະ ການຕິດຕາມ

ເພື່ອຕິດຕາມການຕອບຮັບຄຳຄິດເຫັນ ຜູ້ສະແດງຄຳຄິດເຫັນ ຜູ້ຮ້ອງຟ້ອງ (ຖ້າຫາກບໍ່ລະບຸຊື່) ຈະໄດ້ຮັບແຈ້ງວ່າໄດ້ຮັບຄຳຄິດເຫັນ ພາຍໃນ 1 ມື້ ຫາ 2 ອາທິດ ຫລັງຈາກທີ່ໄດ້ຮັບຄຳຄິດເຫັນ ຊຶ່ງຂື້ນກັບຊ່ອງທາງໃນການສະແດງຄຳຄິດເຫັນທີ່ນຳໃຊ້. ການຕອບຮັບຄຳຄິດເຫັນເບື້ອງຕົ້ນຄວນ: ມີການໃຫ້ລາຍລະອຽດທີ່ສຳຄັນ ຂອງການສະແດງຄຳເຫັນ ຕ້ອງໃຫ້ຂໍ້ມູນການຕິດຕໍ່ຢ່າງລະອຽດ ໂດຍສະເພາະແມ່ນລາຍຊື່ຜູ້ທີ່ຈະຕິດຕໍ່ ທີ່ມີສ່ວນຮັບຜິດຊອບຕໍ່ກັບກໍລະນີ ຂອງການສະແດງຄຳຄິດເຫັນ ແລະ ຕ້ອງໄດ້ແຈ້ງໃຫ້ຊາບວ່າຂະບວນການຈະໃຊ້ເວລາເທົ່າໃດໃນການແກ້ໄຂ. ຜູ້ທີ່ສະແດງ ຄຳຄິດເຫັນຕ້ອງໄດ້ຮັບແຈ້ງວ່າສະຖານະຂອງການແກ້ໄຂຄຳຄິດເຫັນຂອງເຂົາເຈົ້າ ຮອດຂັ້ນໃດແລ້ວ ເປັນແຕ່ລະໄລຍະ.

<u>**ຕາຕະລາງ 5: ກົນໄກການຕອບຮັບຄຳຄິດເຫັນ ແລະ ການຕິດຕາມ**</u>

| ຂັ້ນຕອນ | ຊ່ອງທາງສະແດງຄຳຄິດເຫັນ | ເວລາໃນການແກ້ໄຂ | ພະແນກຮັບຜິດຊອບ/ພາກສ່ວນ | ວິທີການກວດສອບເອກະສານ |
|---|---|---|---|---|
| ຂັ້ນຕອນ 1 - ຂັ້ນບ້ານ | ຄະນະ ກສກ ຂັ້ນບ້ານ ແລະ ທລຍ.<br><br>ສະຖານທີ່ເຂົ້າເຖິງໂດຍຜູ້ສະແດງ ຄຳຄິດເຫັນ ຮ້ອງຟ້ອງ ຜູ້ໄດ້ຮັບຜົນປະໂຫຍດ ຫລື PAPs (ກ່ອງສະແດງຄຳຄິດເຫັນ ຢູ່ກະດານຂ່າວ).<br><br>ສາຍດ່ວນໂທຟີ.<br><br>ກອງປະຊຸມຕ່າງໆ ຢູ່ໃນຂັ້ນບ້ານ ໃນແຕ່ລະຮອບວຽນ ຂອງໂຄງ ການ ຊຶ່ງອາດໃນຊ່ວງວາງແຜນ ຫລື ຈັດຕັ້ງປະຕິບັດ. | ຈະໄດ້ຮັບການແກ້ໄຂພາຍໃນ 1-3 ອາທິດ.<br><br>ກ່ອງຮັບຄຳເຫັນ ຈະເປີດທຸກໆເດືອນ. ຈະໄດ້ຮັບການແກ້ໄຂ ພາຍໃນ 1-3 ອາທິດ. ຜູ້ສະ ແດງຄຳຄິດເຫັນ ຜູ້ຮ້ອງຟ້ອງ ຜູ້ໄດ້ຮັບຜົນປະໂຫຍດ ຈະໄດ້ຮັບແຈ້ງຢ່າງເປັນປະຈຳ ກ່ຽວກັບຄວາມຄືບໜ້າ ຂອງຄຳຄິດເຫັນ ຂອງເຂົາເຈົ້າ ຢູ່ໃນທຸກກອງປະຊຸມ ຂອງ ທລຍ ຕະຫລອດຮອບວຽນຂອງໂຄງການ.<br><br>ສາມາດເຂົ້າເຖິງສາຍດ່ວນໂທຟີໄດ້ຕະຫລອດ 24 ຊົ່ວໂມງ. ຈະໄດ້ຮັບການແກ້ໄຂ ພາຍໃນ 1 ອາທິດ. ຜູ້ສະແດງຄຳຄິດເຫັນ ຜູ້ຮ້ອງຟ້ອງ ຜູ້ໄດ້ຮັບຜົນປະໂຫຍດ ຈະໄດ້ຮັບແຈ້ງຢ່າງເປັນປະຈຳ ກ່ຽວກັບຄວາມຄືບໜ້າຂອງຄຳຄິດເຫັນ ຂອງເຂົາເຈົ້າ ຢູ່ໃນແຕ່ລະເດືອນ.<br><br>ຢູ່ໃນກອງປະຊຸມທົ່ວໄປ ຄຳຄິດເຫັນຈະໄດ້ຮັບການແກ້ໄຂ ພາຍໃນ 1-3 ອາທິດ. ຜູ້ສະແດງຄຳຄິດເຫັນ ຜູ້ຮ້ອງ | ຄະນະ ກສກ ຢູ່ໃນຂັ້ນບ້ານ (ແນວໂຮມ ແລະ ນາຍບ້ານ). ຈະສົ່ງໄປຫາຂັ້ນຕໍ່ໄປຖ້າຫາກບໍ່ສາມາດ ແກ້ໄຂໄດ້ຢູ່ໃນຂັ້ນນີ້. | ຂຽນໃສ່ປື້ມສະແດງຄຳຄິດເຫັນ ແລະ ແກ້ໄຂບັນຫາ ຜ່ານຄະນະ ກສກ.<br><br>ໃນທຸກໆເດືອນຕ້ອງໄດ້ສົ່ງປື້ມດັ່ງກ່າວຫາ ຄະນະ ກສກ ຢູ່ໃນຂັ້ນເມືອງ ພ້ອມດ້ວຍຂໍ້ມູນທີ່ກ່ຽວຂ້ອງ ແລະ ຄວາມຄືບໜ້າຂອງການແກ້ໄຂ. |

| | | | | |
|---|---|---|---|---|
| | | ພ້ອງ ຜູ້ໄດ້ຮັບຜົນປະໂຫຍດ ຈະໄດ້ຮັບ ແຈ້ງຢ່າງເປັນປະຈຳກ່ຽວກັບຄວາມຄືບ ໜ້າຂອງຄຳຄິດເຫັນ ຂອງເຂົາເຈົ້າ ຢູ່ໃນ ທຸກກອງປະຊຸມ ຂອງ ທລຍ ຕະຫລອດ ຮອບວຽນຂອງໂຄງການ. | | |
| ຂັ້ນຕອນ 2 - ຂັ້ນເມືອງ | ຫ້ອງການ ທລຍ (ກ່ອງຮັບຄຳເຫັນຢູ່ ກະດານຂ່າວ ຂອງ ທລຍ).<br><br>ສາຍດ່ວນໂທພີ.<br><br>ກອງປະຊຸມຕ່າງໆ ຂັ້ນເມືອງ ທັງການ ວາງແຜນ ແລະ ຈັດ ຕັ້ງປະຕິບັດ ຢູ່ ໃນ ຮອງວຽນຂອງໂຄງ ການ.<br><br>ອີເມລສະເພາະ ແລະ ເວັບໄຊ. | ກ່ອງຮັບຄຳຄິດເຫັນ ແມ່ນເປີດທຸກໆ ເດືອນ ແລະ ຕອບຮັບພາຍໃນ 1 ອາທິດ. ຜູ້ສະແດງ ຄຳຄິດເຫັນ, ຜູ້ຮ້ອງ ພ້ອງ, ຜູ້ໄດ້ຮັບຜົນປະ ໂຫຍດ ຈະຖືກ ແຈ້ງຄວາມຄືບໜ້າຂອງການແກ້ໄຂຄຳ ຄິດເຫັນຂອງພວກເຂົາເຈົ້າຢ່າງເປັນປະ ຈຳ ໃນເວລາຈັດກອງປະຊຸມຕ່າງໆ ຂອງ ທລຍ ຢູ່ໃນແຕ່ລະຮອບວຽນ.<br><br>ສາຍດ່ວນໂທພີ ສາມາດເຂົ້າເຖິງໄດ້ ຕະ ຫລອດ 24 ຊົ່ວໂມງ ແລະ ຕອບຮັບ ພາຍໃນ 1 ອາທິດ. ຜູ້ຮ້ອງພ້ອງ, ຜູ້ໄດ້ ຮັບຜົນປະໂຫຍດ ຈະຖືກແຈ້ງຄວາມຄືບ ໜ້າຂອງການແກ້ໄຂຄຳ ຄິດເຫັນຂອງ ພວກເຂົາເຈົ້າຢ່າງເປັນປະຈຳ ໃນແຕ່ລະ ເດືອນ.<br><br>ຢູ່ໃນກອງປະຊຸມທົ່ວໄປ ຄຳຄິດເຫັນ ຈະ ໄດ້ ຮັບການແກ້ໄຂ ພາຍໃນ 1 ມື້ - 1 ອາທິດ. ຜູ້ສະແດງຄຳຄິດເຫັນ ຜູ້ຮ້ອງ ພ້ອງ ຜູ້ໄດ້ຮັບຜົນປະໂຫຍດ ຈະໄດ້ຮັບ ແຈ້ງຢ່າງເປັນປະຈຳ ກ່ຽວກັບຄວາມຄືບ ໜ້າຂອງຄຳຄິດເຫັນຂອງເຂົາເຈົ້າ ຢູ່ ກອງປະຊຸມຕ່າງໆ ຂອງ ທລຍ ຕະ ຫລອດຮອບວຽນຂອງໂຄງການ.<br><br>ອີເມລສະເພາະ ແລະ ເວັບໄຊ: ຄຳຄິດ ເຫັນ ຈະໄດ້ການຕອບຮັບພາຍໃນ 1 ມື້ - 1 ອາທິດ. ຜູ້ຮ້ອງພ້ອງ, ຜູ້ໄດ້ຮັບຜົນ ປະໂຫຍດ ຈະຖືກ ແຈ້ງຄວາມຄືບໜ້າ ຂອງການແກ້ໄຂຄຳຄິດ ເຫັນຂອງພວກ ເຂົາເຈົ້າຢ່າງເປັນປະຈຳ ໃນແຕ່ລະ ເດືອນ. | ຄະນະກຳມະ ການ ກສກ ຢູ່ຂັ້ນ ເມືອງ (ຜູ້ປະສານ ງານ ທລຍ).<br><br>ຈະສົ່ງຂຶ້ນຫາຂັ້ນຕໍ່ ໄປ ຖ້າຫາກບໍ່ ສາມາດ ແກ້ໄຂ ບັນຫາໄດ້ໃນຂັ້ນນີ້. | ຊຽນແບບຟອມ ຄຳຄິດເຫັນ ແລະ ການແກ້ ໄຂບັນຫາ ຜ່ານ ຄະນະກຳມະ ການ ກສກ ຂັ້ນ ເມືອງ.<br><br>ໃນທຸກໆເດືອນ ຕ້ອງໄດ້ສົ່ງປື້ມ ດັ່ງກ່າວຫາ ຄະນະ ກສກ ຢູ່ ໃນຂັ້ນແຂວງ ພ້ອມດ້ວຍຂໍ້ມູນ ທີ່ກ່ຽວຂ້ອງ ແລະ ຄວາມຄືບ ໜ້າຂອງການ ແກ້ໄຂ. |
| ຂັ້ນຕອນ 3 - ຂັ້ນແຂວງ | ຫ້ອງການ ທລຍ (ກ່ອງຮັບຄຳເຫັນຢູ່ ກະດານຂ່າວ ຂອງ ທລຍ). | ກ່ອງຮັບຄຳຄິດເຫັນແມ່ນເປີດທຸກໆ ເດືອນ ແລະ ຕອບຮັບພາຍໃນ 1 ອາທິດ. ຜູ້ສະແດງ ຄຳຄິດເຫັນ, ຜູ້ຮ້ອງ ພ້ອງ, ຜູ້ໄດ້ຮັບຜົນປະ ໂຫຍດ ຈະຖືກ | ຄະນະກຳມະການ ກສກ ຢູ່ຂັ້ນແຂວງ (ຜູ້ປະສານງານ ທລຍ). | ຊຽນແບບຟອມ ຄຳຄິດເຫັນ ແລະ ການແກ້ ໄຂບັນຫາ ຜ່ານ |

| | | | | |
|---|---|---|---|---|
| | ສາຍດ່ວນໂທຟຣີ.<br><br>ກອງປະຊຸມຕ່າງໆ ຂັ້ນແຂວງ ທັງການວາແຜນ ແລະ ຈັດຕັ້ງປະຕິບັດຢູ່ ໃນຮອງວຽນ ຂອງໂຄງການ.<br><br>ອີເມລສະເພາະ ແລະ ເວັບໄຊ. | ແຈ້ງຄວາມຄືບໜ້າຂອງການແກ້ໄຂຄຳຄິດເຫັນຂອງພວກເຂົາເຈົ້າຢ່າງເປັນປະຈຳ ໃນເວລາຈັດກອງປະຊຸມຕ່າງໆ ຂອງ ທລຍ ຢູ່ໃນແຕ່ລະຮອບວຽນ.<br><br>ສາຍດ່ວນໂທຟຣີ ສາມາດເຂົ້າເຖິງໄດ້ ຕະຫລອດ 24 ຊົ່ວໂມງ ແລະ ຕອບຮັບພາຍໃນ 1 ອາທິດ. ຜູ້ຮ້ອງຟ້ອງ, ຜູ້ໄດ້ຮັບຜົນປະໂຫຍດ ຈະຖືກແຈ້ງຄວາມຄືບໜ້າຂອງການແກ້ໄຂຄຳ ຄິດເຫັນຂອງພວກເຂົາເຈົ້າຢ່າງເປັນປະຈຳ ໃນແຕ່ລະເດືອນ.<br><br>ຢູ່ໃນກອງປະຊຸມທົ່ວໄປ ຄຳຄິດເຫັນ ຈະໄດ້ ຮັບການແກ້ໄຂ ພາຍໃນ 1 ມື້ - 1 ອາທິດ. ຜູ້ສະແດງຄຳຄິດເຫັນ ຜູ້ຮ້ອງຟ້ອງ ຜູ້ໄດ້ຮັບຜົນປະໂຫຍດ ຈະໄດ້ຮັບແຈ້ງຢ່າງເປັນປະຈຳ ກ່ຽວກັບຄວາມຄືບໜ້າຂອງຄຳຄິດເຫັນຂອງເຂົາເຈົ້າ ຢູ່ກອງປະຊຸມຕ່າງໆ ຂອງ ທລຍ ຕະຫລອດຮອບວຽນຂອງໂຄງການ.<br><br>ອີເມລສະເພາະ ແລະ ເວັບໄຊ: ຄຳຄິດເຫັນ ຈະໄດ້ການຕອບຮັບ ພາຍໃນ 1 ມື້ - 1 ອາທິດ. ຜູ້ຮ້ອງຟ້ອງ, ຜູ້ໄດ້ຮັບຜົນປະໂຫຍດ ຈະຖືກ ແຈ້ງຄວາມຄືບໜ້າຂອງການແກ້ໄຂຄຳຄິດເຫັນຂອງພວກເຂົາເຈົ້າຢ່າງເປັນປະຈຳ ໃນແຕ່ລະເດືອນ. | ຈະສົ່ງຂື້ນຫາຂັ້ນຕໍ່ໄປ ຖ້າຫາກບໍ່ສາມາດ ແກ້ໄຂບັນຫາໄດ້ໃນຂັ້ນນີ້. | ຄະນະກຳມະການ ກສກ ຂັ້ນແຂວງ.<br><br>ໃນທຸກໆເດືອນ ຕ້ອງໄດ້ສົ່ງປຶ້ມດັ່ງກ່າວ ຫາທີມງານບໍລິຫານ ທລຍ (ພະແນກຕິດຕາມ-ປະເມີນ ຜົນ) ພ້ອມດ້ວຍ ຂໍ້ມູນທີ່ກ່ຽວຂ້ອງ ແລະ ຄວາມຄືບໜ້າຂອງການແກ້ໄຂ. |
| ຂັ້ນຕອນ 4 - ຂັ້ນສູນກາງ | ສາຍດ່ວນໂທຟຣີ.<br><br>ກອງປະຊຸມຕ່າງໆ ຂັ້ນແຂວງ ທັງການວາແຜນ ແລະ ຈັດຕັ້ງປະຕິບັດຢູ່ ໃນຮອງວຽນ ຂອງໂຄງການ.<br><br>ອີເມລສະເພາະ ແລະ ເວັບໄຊ. | ສາຍດ່ວນໂທຟຣີສາມາດ ເຂົ້າເຖິງໄດ້ ຕະຫລອດ 24 ຊົ່ວໂມງ ແລະ ຕອບຮັບພາຍໃນ 1 ອາ ທິດ. ຜູ້ຮ້ອງຟ້ອງ, ຜູ້ໄດ້ຮັບຜົນປະໂຫຍດ ຈະຖືກແຈ້ງຄວາມຄືບໜ້າຂອງການແກ້ໄຂຄຳ ຄິດເຫັນຂອງພວກເຂົາເຈົ້າຢ່າງເປັນປະຈຳ ໃນແຕ່ລະເດືອນ.<br><br>ຢູ່ໃນກອງປະຊຸມທົ່ວໄປ ຄຳຄິດເຫັນ ຈະໄດ້ ຮັບການແກ້ໄຂພາຍໃນ 1 ມື້ - 1 ອາທິດ. ຜູ້ສະແດງຄຳຄິດເຫັນ ຜູ້ຮ້ອງຟ້ອງ ຜູ້ໄດ້ຮັບຜົນປະໂຫຍດ ຈະໄດ້ຮັບແຈ້ງຢ່າງເປັນປະຈຳກ່ຽວກັບຄວາມຄືບ | ພະແນກຕິດຕາມ-ປະເມີນຜົນ ຫ້ອງການ ທລຍ ຂັ້ນສູນກາງ. | ຊຽນແບບຟອມຄຳຄິດເຫັນ ແລະ ການແກ້ໄຂບັນຫາ ຜ່ານພະແນກຕິດຕາມ-ປະເມີນຜົນ ຫ້ອງການ ທລຍ ຂັ້ນສູນກາງ.<br><br>ໃນທຸກໆເດືອນ ຕ້ອງໄດ້ສົ່ງປຶ້ມດັ່ງກ່າວ ຫາທີມ |

| | | | | |
|---|---|---|---|---|
| | | ໜ້າຂອງຄຳຄິດເຫັນຂອງເຂົາເຈົ້າ ຢູ່ກອງປະຊຸມຕ່າງໆ ຂອງ ທລຍ ຕະຫລອດຮອບວຽນຂອງໂຄງການ.<br><br>ອີເມລສະເພາະ ແລະ ເວັບໄຊ: ຄຳຄິດເຫັນ ຈະໄດ້ການຕອບຮັບ ພາຍໃນ 1 ມື້ - 1 ອາ ທິດ. ຜູ້ຮ້ອງຟ້ອງ, ຜູ້ໄດ້ຮັບຜົນປະໂຫຍດ ຈະຖືກແຈ້ງຄວາມຄືບໜ້າຂອງການແກ້ໄຂຄຳຄິດ ເຫັນຂອງພວກເຂົາເຈົ້າຢ່າງເປັນປະຈຳ ໃນແຕ່ລະເດືອນ. | | ງານບໍລິຫານ ທລຍ (ພະແນກຕິດຕາມ-ປະເມີນ ຜົນ) ພ້ອມດ້ວຍ ຂໍ້ມູນທີ່ກ່ຽວຂ້ອງ ແລະ ຄວາມຄືບໜ້າຂອງການແກ້ໄຂ. |

## 12.7 ການຮັບຮອງ ແລະ ການປະຕິບັດ

ຄະນະກຳມະການ ກສກ ເປັນຜູ້ຮັບຜິດຊອບໃນການແກ້ໄຂທຸກໆກໍລະນີ ຈັດປະເພດຕາມການຕື່ມແບບຟອມ ກສກ ແລະ ຕັດສິນໃຈວ່າຈະປຶກສາກັບພາກສ່ວນໃດ ແລະ ການປະຕິບັດໃນຂັ້ນຕໍ່ໄປ. ເມື່ອກໍລະນີໃດນຶ່ງຖືກຮັບຮອງເພື່ອແກ້ໄຂ, ຄະນະກຳມະການ ກສກ ຢູ່ໃນຂັ້ນບ້ານ ຈະດຳເນີນການສືບສວນ, ປຶກສາຫາລືກັບຜູ້ທີ່ມີສ່ວນກ່ຽວຂ້ອງ ແລະ ພາກສ່ວນທີ່ຖືກຜົນກະທົບ. ທຸກໆຄຳຄິດເຫັນ ຈະເລີ່ມຕົ້ນແກ້ໄຂຢູ່ໃນຂັ້ນບ້ານກ່ອນ ຫລັງຈາກນັ້ນຈຶ່ງຈະສົ່ງຫາຂັ້ນຕໍ່ໄປ (ຂັ້ນເມືອງ) ສຳລັບການສືບສວນໃນຂັ້ນຕໍ່ໄປ. ຖ້າຫາກກໍລະນີຕ່າງໆບໍ່ສາມາດແກ້ໄຂໄດ້ຢູ່ໃນຂັ້ນເມືອງ, ກໍລະນີ ເລົ່ານັ້ນຈະຖືກສົ່ງໄປແກ້ໄຂຢູ່ໃນຂັ້ນແຂວງ.

ຄຳຄິດເຫັນອາດມີຫລາຍປະເພດ ຕໍ່ໄປນີ້ແມ່ນຕົວຢ່າງກໍລະນີຕ່າງໆທີ່ອາດຈະເກີດຂື້ນ ແລະ ຂັ້ນຕອນຕ່າງໆໃນການແກ້ໄຂ:

**ຕາຕະລາງ 6: ປະເພດຂອງການສະແດງຄຳຄິດເຫັນ**

| ປະເພດຂອງຄຳຄິດເຫັນ | ຂັ້ນຕອນໃນການແກ້ໄຂ |
|---|---|
| 1. ຄຳຖາມທົ່ວໄປ ກ່ຽວກັບແຜນ ງານ (ຕົວຢ່າງ: ບໍ່ມີຄວາມເຂົ້າໃຈຕໍ່ລະບຽບ ຫລັກການ ຂອງໂຄງການ). | ຄະນະກຳມະການ ກສກ ຢູ່ໃນທຸກຂັ້ນ ລວມທັງພະນັກງານ ທລຍ ມີສິດ ແລະ ຄວາມຮັບຜິດຊອບໃນການຕອບ ແລະ ໃຫ້ຂໍ້ມູນຊັດເຈນກ່ຽວກັບ ທລຍ ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ. ມັນສາມາດເຮັດໄດ້ໂດຍກົງ ຜ່ານສາຍດ່ວນໂທຟີ, ເວັບໄຊ ແລະ ອີເມລ ຫລືລະຫວ່າງຈັດກອງປະຊຸມທົ່ວໄປ ຂອງ ທລຍ ທີ່ຈັດຢູ່ຂັ້ນຕ່າງໆໃນລະຫວ່າງການຈັດຕັ້ງປະຕິບັດກິດຈະກຳໃນຮອບວຽນ ຂອງ ທລຍ.<br><br>ບາງກໍລະນີ ອາດຕ້ອງການການຈັດກອງປະຊຸມວິຊາການພິເສດ ເພື່ອສະໜອງຂໍ້ມູນກ່ຽວຂ້ອງໃຫ້ກັບຜູ້ສະແດງຄຳຄິດເຫັນ. |

| | |
|---|---|
| 2. ບໍ່ສາມາດຈັດຕັ້ງປະຕິບັດຕາມລະບຽບ ແລະ ຫລັກການຂອງໂຄງການໄດ້. | ຄະນະກຳມະການ ກສກ ຢູ່ໃນຂັ້ນທີ່ກ່ຽວຂ້ອງ (ຢູ່ໃນຂັ້ນທີ່ກ່ຽວກັບກໍລະນີ ນັ້ນໆ) ເປັນຜູ້ເກັບກຳຂໍ້ມູນ.<br><br>ຖ້າມີຄວາມຈຳເປັນ ຄະນະກຳມະການ ກສກ ຕ້ອງໄດ້ຈັດທີມງານເພື່ອກວດສອບຕົວຈິງ. ຫລັງຈາກທີ່ສັງລວມຂໍ້ມູນທີ່ໄດ້ລົງກວດສອບ, ຄະນະກຳມະການ ກສກ ອາດຈັດກອງປະຊຸມພາຍໃນ ເພື່ອແກ້ໄຂບັນຫາ ແລະ ໄກ່ເກ່ຍ ລະຫວ່າງ ພາກສ່ວນທີ່ກ່ຽວຂ້ອງ. ການຈັດການກວດສອບ ຄວນເຮັດບໍ່ໃຫ້ເກີນ 2 ອາທິດ ຫລັງຈາກທີ່ໄດ້ຮັບແບບຟອມສະແດງຄຳຄິດເຫັນ. ໃນກໍລະນີທີ່ບໍ່ສາມາດແກ້ໄຂໄດ້ໃນລະຫວ່າງການຈັດການກວດສອບ ຄະນະກຳມະການ ກສກ ແລະພາກສ່ວນທີ່ກ່ຽວຂ້ອງ ຕ້ອງໄດ້ມີການຕົກລົງເຫັນດີກັນໃນຂັ້ນຕອນຕໍ່ໄປ ແລະ ກຳນົດວັນ, ເວລາ ໃນການຈັດຕັ້ງປະຕິບັດຄັກແນ່. ຫລັງຈາກນັ້ນ ຂໍ້ມູນຈະໄດ້ຖືກບັນທຶກເຂົ້າໃນແບບຟອມການລາຍງານເພື່ອເປັນຂໍ້ ມູນໃນການຕິດຕາມໃນຂັ້ນຕໍ່ໄປ. |
| 3. ການແຊກແຊງທີ່ບໍ່ເໝາະສົມ ຈາກພາກສ່ວນ (ພາຍນອກ) ອື່ນ. | ຄະນະກຳມະການ ກສກ ຢູ່ໃນຂັ້ນຕ່າງໆ ເປັນຜູ້ສັງລວມຂໍ້ມູນ.<br><br>ຖ້າມີຄວາມຈຳເປັນ ຄະນະກຳມະການ ກສກ ຕ້ອງໄດ້ຈັດທີມງານເພື່ອກວດສອບຕົວຈິງ. ຫລັງຈາກທີ່ສັງລວມຂໍ້ມູນທີ່ໄດ້ລົງກວດສອບ, ຄະນະກຳມະການ ກສກ ອາດຈັດກອງປະຊຸມພາຍໃນ ເພື່ອແກ້ໄຂບັນຫາ ແລະ ໄກ່ເກ່ຍ ລະຫວ່າງ ພາກສ່ວນທີ່ກ່ຽວຂ້ອງ. ການຈັດການກວດສອບ ຄວນເຮັດບໍ່ໃຫ້ເກີນ 2 ອາທິດ ຫລັງຈາກທີ່ໄດ້ຮັບແບບຟອມສະແດງຄຳຄິດເຫັນ. ໃນກໍລະນີທີ່ບໍ່ສາມາດແກ້ໄຂໄດ້ໃນລະຫວ່າງການຈັດການກວດສອບ ຄະນະກຳມະການ ກສກ ແລະພາກສ່ວນທີ່ກ່ຽວຂ້ອງ ຕ້ອງໄດ້ມີການຕົກລົງເຫັນດີກັນ ໃນຂັ້ນຕອນຕໍ່ໄປ ແລະ ກຳນົດ ວັນ, ເວລາ ໃນການຈັດຕັ້ງປະຕິບັດຄັກແນ່. ຫລັງຈາກນັ້ນ ຂໍ້ມູນຈະໄດ້ຖືກບັນທຶກເຂົ້າໃນແບບຟອມການລາຍງານເພື່ອເປັນຂໍ້ມູນໃນການຕິດຕາມໃນຂັ້ນຕໍ່ໄປ. |
| 4. ການນຳໃຊ້ທຶນຜິດຈຸດປະສົງ | ຄະນະກຳມະການ ກສກ ຕ້ອງໄດ້ຈັດທີມງານ ເພື່ອກວດສອບຕົວຈິງ.<br><br>ຫລັງຈາກທີ່ສັງລວມຂໍ້ມູນທີ່ໄດ້ລົງກວດສອບ, ຄະນະກຳມະການ ກສກ ອາດຈັດກອງປະຊຸມພາຍໃນ ເພື່ອແກ້ໄຂບັນຫາ ແລະ ໄກ່ເກ່ຍ ລະຫວ່າງພາກ ສ່ວນທີ່ກ່ຽວຂ້ອງ. ການຈັດການກວດສອບ ຄວນເຮັດບໍ່ໃຫ້ເກີນ 2 ອາທິດ ຫລັງຈາກທີ່ໄດ້ຮັບແບບຟອມສະແດງຄຳຄິດເຫັນ. ໃນກໍລະນີທີ່ບໍ່ສາມາດແກ້ໄຂໄດ້ ໃນລະຫວ່າງ |

| | |
|---|---|
| | ການຈັດການກວດສອບ ຄະນະກຳມະການ ກສກ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕ້ອງໄດ້ມີການຕົກລົງເຫັນດີກັນ ໃນຂັ້ນຕອນຕໍ່ໄປ ແລະ ກຳນົດວັນ, ເວລາ ໃນການຈັດຕັ້ງປະຕິບັດຄັກແນ່. ຫລັງຈາກນັ້ນຂໍ້ມູນ ຈະໄດ້ຖືກບັນທຶກເຂົ້າໃນແບບຟອມການລາຍງານ ເພື່ອເປັນຂໍ້ມູນໃນການຕິດ ຕາມໃນຂັ້ນຕໍ່ໄປ. |
| 5. ບໍ່ມີຄວາມພຶງພໍໃຈຕໍ່ກັບໂຄງການຍ່ອຍທີ່ໄດ້ຮັບ (ລວມເຖິງບໍ່ພໍໃຈກັບການຕັດສິນໃຈຄັດເລືອກໂຄງການຍ່ອຍ). | ຄະນະກຳມະການ ກສກ ຢູ່ໃນຂັ້ນຕ່າງໆ ເປັນຜູ້ສັງລວມຂໍ້ມູນ.<br><br>ຖ້າມີຄວາມຈຳເປັນ ຄະນະກຳມະການ ກສກ ຕ້ອງໄດ້ຈັດທີມງານເພື່ອກວດສອບຕົວຈິງ. ຫລັງຈາກທີ່ສັງລວມຂໍ້ມູນທີ່ໄດ້ລົງກວດສອບ, ຄະນະກຳມະການ ກສກ ອາດຈັດກອງປະຊຸມພາຍໃນ ເພື່ອແກ້ໄຂບັນຫາ ແລະ ໄກ່ເກ່ຍ ລະຫວ່າງພາກສ່ວນທີ່ກ່ຽວຂ້ອງ. ການຈັດການກວດສອບ ຄວນເຮັດບໍ່ໃຫ້ເກີນ 2 ອາທິດ ຫລັງຈາກທີ່ໄດ້ຮັບແບບຟອມສະແດງຄຳຄິດເຫັນ. ໃນກໍລະນີທີ່ບໍ່ສາມາດແກ້ໄຂໄດ້ໃນລະຫວ່າງການຈັດການກວດສອບ ຄະນະກຳມະການ ກສກ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕ້ອງໄດ້ມີການຕົກລົງເຫັນດີກັນ ໃນຂັ້ນຕອນຕໍ່ໄປ ແລະ ກຳນົດ ວັນ, ເວລາ ໃນການຈັດຕັ້ງປະຕິບັດຄັກແນ່. ຫລັງຈາກນັ້ນ ຂໍ້ມູນຈະໄດ້ຖືກບັນທຶກເຂົ້າໃນແບບຟອມການລາຍງານ ເພື່ອເປັນຂໍ້ມູນໃນການຕິດຕາມໃນຂັ້ນຕໍ່ໄປ. |

### 12.8 ຕິດຕາມ ແລະ ການປະເມີນຜົນ

ຕິດຕາມແມ່ນອີງໃສ່ເພື່ອເກັບກຳ ແລະ ແກ້ໄຂ ສິ່ງທີ່ຊຸມຊົນຕ້ອງການ ຫລື ຮ້ອງຟ້ອງ ແລະ ເພື່ອພິຈາລະນາວ່າຂະບວນການແກ້ໄຂບັນຫາຕ່າງໆເລົ່ານັ້ນ ຜ່ານຂະບວນການໃດແດ່. ຖານຂໍ້ມູນຈະສ້າງຂື້ນສະເພາະ ເພື່ອປ້ອນຂໍ້ມູນຕ່າງໆ ສາມາດລາຍງານ ແລະ ຕິດຕາມການສະແດງຄຳຄິດເຫັນຕ່າງໆ.

ການປະເມີນຜົນ ແມ່ນອີງໃສ່ການວິໃຈຂໍ້ມູນການສະແດງຄຳຄິດເຫັນ ເພື່ອໃຫ້ນະໂຍບາຍ ແລະ/ຫລື ປັບປຸງແປງຂະບວນການ ເພື່ອຫລຸດຜ່ອນບັນຫາຕ່າງໆທີ່ຈະເກີດຂື້ນໃນອະນາຄົດ. ການວິເຄາະວິໃຈຂໍ້ມູນການສະແດງຄຳຄິດເຫັນ ຊ່ວຍໃນການປັບປຸງລະບົບຕ່າງໆຂອງໂຄງການ ເພື່ອເພີ່ມປະສິດທິພາບຂອງໂຄງການ. ດ້ວຍເຫດນີ້ ບົດລາຍງານຕ່າງໆກ່ຽວກັບຂໍ້ມູນຂອງການສະແດງຄຳຄິດເຫັນ ແລະ ການປັບປຸງແປງ (ຕົວຢ່າງ: ເວລາສະເລ່ຍທີ່ນຳໃຊ້ໃນການແກ້ໄຂຄຳຄິດເຫັນ, ເປີເຊັນຂອງຜູ້ສະແດງຄຳຄິດເຫັນທີ່ມີຄວາມພໍໃຈຕໍ່ການແກ້ໄຂຄຳຄິດເຫັນ, ຈຳນວນຄຳຄິດເຫັນທີ່ໄດ້ ຖືກແກ້ໄຂເວລາເຂົ້າຫາພາກສ່ວນກ່ຽວຂ້ອງທັນທີໂລດ)[17] ຈະໄດ້ຖືກສົ່ງຫາຄະນະ ກສກ ໃນແຕ່ລະເດືອນ. ທີມງານບໍລິຫານຕ້ອງໄດ້ເອົາໃຈໃສ່ຕິດຕາມ

[17] ລາຍງານຫາທີມງານບໍລິຫານ ລວມເຖິງຂໍ້ມູນ ກ່ຽວກັບຈຳນວນຄຳສະແດງຄຳຄິດເຫັນ ແລະ ຮ້ອງຟ້ອງທົ່ວໄປ, ຈຸດຫລໍ່ແຫລມ ຂອງຄຳຄິດເຫັນ ແລະ ຮ້ອງຟ້ອງ, ພູມສາດຂອງຄຳສະແດງຄຳຄິດເຫັນ ແລະ ຮ້ອງຟ້ອງ, ລັກສະນະຂອງຄຳຄິດເຫັນ ແລະ ຮ້ອງຟ້ອງ, ແລະ ອື່ນໆ.

ການແກ້ໄຂຄຳຄິດເຫັນ ແລະ ທຸກກໍລະນີທີ່ມີການປ່ຽນແປງ ກ່ຽວກັບຄຳຄິດເຫັນ ຢູ່ໃນກອງປະຊຸມທວນຄືນຂະບວນການຈັດຕັ້ງປະຕິບັດ. ການຈັດການກວດສອບອິດສະຫລະ ກ່ຽວກັບປະສິດທິຜົນ ແລະ ຄວາມໜ້າເຊື່ອຖືຂອງກົນໄກ ກສກ ຈະຕ້ອງໄດ້ຈັດຢູ່ໃນແຕ່ລະປີ ຊຶ່ງລວມທັງຜູ້ທີ່ໄດ້ນຳໃຊ້ຄຳຄິດເຫັນເລົ່ານັ້ນພ້ອມ.

## 12.9 ການຕອບສະໜອງ

ສຳລັບການເຮັດວຽກທີ່ຖືກຕ້ອງ ແລະ ໄດ້ຮັບຄວາມເຊື່ອຖືຈາກຊຸມຊົນ ຂອງລະບົບ ກສກ ແມ່ນຄວາມຍຸດຕິທຳ ແລະ ຄວາມຮັບຜິດຊອບຕໍ່ລະບົບດັ່ງກ່າວ ຊຶ່ງມັນມີຄວາມສຳຄັນທີ່ຈະຕ້ອງໄດ້ຕອບສະໜອງຂໍ້ມູນ ແລະ ເຜີຍແຜ່ຕໍ່ສິ່ງທີ່ຜູ້ສະແດງຄຳຄິດເຫັນ ແລະ ຮ້ອງຟ້ອງ ຢ່າງເປັນປະຈຳ[18]. ຕ້ອງໃຫ້ແນ່ໃຈວ່າໃນອະນາຄົດຈະມີການສະແດງຄຳຄິດເຫັນຕື່ມອີກ ແລະ ມັນຈະຊ່ວຍໃຫ້ຊຸມຊົນມີຄວາມໄວ້ວາງໃຈຕໍ່ ກສກ.

ສຳລັບທຸກກໍລະນີທີ່ໄດ້ຮັບ, ໄດ້ແກ້ໄຂ ແລະ ສະຖານະຂອງການໄກ່ເກ່ຍ ຕ້ອງໄດ້ລາຍງານຕໍ່ກັບຊຸມຊົນເພື່ອໃຫ້ແນ່ໃຈວ່າ ມີການສົນທະນາແລກປ່ຽນຢູ່ໃນກອງປະຊຸມຂັ້ນບ້ານ ແລະ ຂັ້ນກຸ່ມບ້ານ. ມັນມີຄວາມສຳຄັນທີ່ສຸດວ່າ ຜູ້ໃຫ້ຂໍ້ມູນ ບໍ່ໃຫ້ລະບຸຢູ່ໃນທີ່ສາທາລະນະ ເຖິງແມ່ນຈະຢູ່ໃນກໍລະນີທີ່ເຂົາຮູ້ວິທີການຄັດເລືອກເອົາຊາວບ້ານ (ຕົວຢ່າງ: ຄະນະກຳມະການ ກສກ ທີ່ໄດ້ຊ່ວຍໃນການໃຫ້ຫລັກຖານຢູ່ໃນແຕ່ລະກໍລະນີ) ເວັ້ນແຕ່ຈະມີການປະກາດຢ່າງສະໝັກໃຈຂອງຜູ້ໃຫ້ຂໍ້ມູນ ແລະ ຕັ້ງປະເດັນ.

## 12.10 ໂຄງຮ່າງການຈັດຕັ້ງ

<u>ຢູ່ຂັ້ນສູນກາງ</u>

ຫ້ອງການ ທລຍ ຂັ້ນສູນກາງ ມີໜ້າທີ່ຮັບຜິດຊອບຕໍ່:

- ການຕິດຕາມໜ້າວຽກ ກ່ຽວກັບວຽກງານຂອງຄະນະກຳມະການ ກສກ ຢູ່ໃນຂັ້ນຕ່າງໆ;
- ຕ້ອງໃຫ້ແນ່ໃຈວ່າ ຂໍ້ຄິດເຫັນຕ່າງໆມີການດຳເນີນການຈາກຄະນະກຳມະການ ກສກ ໂດຍໄວ ຢູ່ໃນຂັ້ນຕ່າງໆ;
- ການຮັບຄຳຄິດເຫັນຈາກລະບົບສາຍດ່ວນໂທຟີ, ຈາກເວັບໄຊ ຂອງ ທລຍ, ອີເມລ ແລະ ສົ່ງຄຳຄິດເຫັນເລົ່ານັ້ນ ຫາພາກສ່ວນກ່ຽວຂ້ອງ ຫລື ບຸກຄົນຮັບຜິດຊອບໂດຍກົງ ເພື່ອແກ້ໄຂ ຖ້າຫາກມີຄວາມຈຳເປັນ;
- ຕິດຕາມບັນຫາເລື້ອລັງທີ່ເກີດຂຶ້ນຢູ່ພາກສະໜາມ ຊຶ່ງອາດມີຄວາມຈຳເປັນຕ້ອງໄດ້ຮັບການແຊກແຊງຊ່ວຍເຫລືອຈາກຂັ້ນສູນກາງ;

[18] ຖ້າຫາກຄຳຄິດເຫັນບໍ່ອອກນາມໃຜ ການແກ້ໄຂ ແລະ ຕອບຮັບຄວນເຮັດຜ່ານກະດານຂ່າວກຸ່ມບ້ານ ຫລື ຢູ່ໃນກອງປະຊຸມສະຫລຸບງວດ. ຖ້າຫາກຂໍ້ມູນຫາກລະບຸລາຍລະອຽດຂອງຜູ້ສະແດງຄຳຄິດເຫັນ, ການແກ້ໄຂ ແລະ ຕອບຮັບ ຕ້ອງໄດ້ແຈ້ງໂດຍກົງຫາຜູ້ສະແດງຄຳຄິດເຫັນ ແລະ ຜູ້ມີສ່ວນກ່ຽວຂ້ອງ ພ້ອມທັງຕ້ອງໄດ້ຍິນຍອມຈາກເຂົາເຈົ້າ ແລະ ຂໍ້ມູນດັ່ງກ່າວນີ້ ຕ້ອງໄດ້ແຈ້ງໃຫ້ຊຸມຊົນຮັບຊາບ ເມື່ອມີໂອກາດເໝາະສົມ.

- ຮັກສາລະບົບຖານຂໍ້ມູນ ກ່ຽວກັບຂະບວນການສະແດງຄໍາຄິດເຫັນ ໂດຍອີງໃສ່ປັດໃຈຕ່າງໆຢູ່ພາກສະໜາມ;
- ປະເມີນ ແລະ ວິເຄາະທ່າອ່ຽງຂອງການສະແດງຄໍາຄິດເຫັນ ແລະ ວິທີການແກ້ໄຂຂອງມັນ;
- ສ້າງບົດລາຍງານສັງລວມໃຫ້ແກ່ທີມງານບໍລິຫານ (ບົດລາຍງານປະຈໍາເດືອນ);
- ກວດສອບໃຫ້ແນ່ໃຈວ່າ ຄະນະກໍາມະການ ກສກ ໄດ້ສະໜອງຂໍ້ມູນ ກ່ຽວກັບຄວາມຄືບໜ້າ ຂອງການແກ້ໄຂຄໍາຄິດເຫັນຢ່າງເປັນປະຈໍາ ຫລັງຈາກໄດ້ຮັບຄໍາຄິດເຫັນ ແລະ ຮ້ອງຟ້ອງ.

ຄະນະກໍາມະການຮັບຜິດຊອບກົນໄກສະແດງຄໍາຄິດເຫັນ ແລະ ແກ້ຂໍ້ຂັດແຍ່ງ (ຄະນະກໍາມະການ ກສກ) ຈະໄດ້ຮັບການສ້າງຕັ້ງຂຶ້ນ ເພື່ອແກ້ໄຂບັນຫາຕ່າງໆຢູ່ໃນຂັ້ນພື້ນຖານ. ຊຶ່ງຄະນະກໍາມະການ ທີ່ຖືກແຕ່ງຕັ້ງຈະປະກອບດ້ວຍ:

ຂັ້ນແຂວງ

ນອກຈາກຜູ້ປະສານງານ ທລຍ ຢູ່ໃນຂັ້ນແຂວງແລ້ວ ຄະນະກໍາມະການ ກສກ ຕ້ອງໄດ້ປະກອບມີພາກສ່ວນທີ່ກ່ຽວຂ້ອງດັ່ງນີ້:

i) ຮອງເຈົ້າແຂວງ;
ii) ຕົວແທນຈາກສະຫະພັນແມ່ຍິງ;
iii) ຕົວແທນຈາກຊາວໜຸ່ມ;
iv) ຕົວແທນຈາກແນວລາວ;
v) ຕົວແທນຈາກພະແນກ ກະສິກໍາ-ປ່າໄມ້ (ເປັນທາງເລືອກໄວ້);
vi) ຕົວແທນຈາກພະແນກ ສຶກສາ (ເປັນທາງເລືອກໄວ້);
vii) ຕົວແທນຈາກພະແນກ ສາທາ (ເປັນທາງເລືອກໄວ້);
viii) ຕົວແທນຈາກພະແນກ ຍທຂ (ເປັນທາງເລືອກໄວ້).

ຂັ້ນເມືອງ

ນອກຈາກຜູ້ປະສານງານ ທລຍ ຢູ່ໃນຂັ້ນເມືອງແລ້ວ ຄະນະກໍາມະການ ກສກ ຕ້ອງໄດ້ປະກອບມີພາກສ່ວນທີ່ກ່ຽວຂ້ອງດັ່ງນີ້:

i) ຮອງເຈົ້າເມືອງ;
ii) ຕົວແທນຈາກສະຫະພັນແມ່ຍິງ;
iii) ຕົວແທນຈາກຊາວໜຸ່ມ;
iv) ຕົວແທນຈາກແນວລາວ;
v) ຕົວແທນຈາກຫ້ອງການ ກະສິກໍາ-ປ່າໄມ້ (ເປັນທາງເລືອກໄວ້);
vi) ຕົວແທນຈາກຫ້ອງການ ສຶກສາ (ເປັນທາງເລືອກໄວ້);

vii) ຕົວແທນຈາກຫ້ອງການ ສາທາ (ເປັນທາງເລືອກໄວ້);

viii) ຕົວແທນຈາກຫ້ອງການ ຍທຂ (ເປັນທາງເລືອກໄວ້).

<u>ຂັ້ນບ້ານ</u>

ນອກຈາກຕົວແທນ 2 ທ່ານ ຂອງ ທລຍ (ຍິງ 1 ທ່ານ ແລະ ຊາຍ 1 ທ່ານ), ຄະນະກໍາມະການ ກສກ ຈະຕ້ອງໄດ້ປະ ກອບມີຄະນະກໍາມະການຈາກຂັ້ນບ້ານ ຊຶ່ງປະກອບດ້ວຍ:

i) ແນວໂຮມ;

ii) ນາຍບ້ານ;

iii) ສະຫະພັນແມ່ຍິງ;

iv) ຊາວໜຸ່ມ;

v) ຕໍາຫລວດບ້ານ;

vi) ທະຫານ;

vii) ຕົວແທນບ້ານ.